ຮູ້ຈັກປະເທດ
ໃນອາຊີຕາເວັນອອກສຽງໃຕ້

In Search of South East Asia
A Modern History

Revised Edition edited by David Joel Steinbery
1987

ພາກທີ 1: ໂລກ ໃນສະຕະວັດ ທີ 18

ໂດຍຄະນະນັກຂຽນ
David P. Chandler, William R. Roff, John.W. Smail,
David Joel Steinberg, Robert H. Taylor, Alexander Woodside David K. Wyatt

ຮູ້ຈັກປະເທດ

ໃນອາຊີຕາເວັນອອກສຽງໃຕ້

ພາກທີ I

ໂລກ ໃນສະຕະວັດ ທີ 18

ธู้จักปะเทดในอาซิตาเวันออกสยงใต้
In Search of South East Asia
สะบับธยบธยงใหม่ 1987 โดย เดวิด โจแอล สะเตนเบิก
ผาก ที่ 1 : โลก ในสะตะวัด ที่ 18

โดยคะนะนักธยน

David P. Chandler, William R. Roff, John.W. Smail, David Joel Steinberg,
Robert H. Taylor, Alexander Woodside, David K. Wyatt.
Revised Edition edited by David Joel Steinberg, 1987.

จัดพิมโดย

©University of Hawaii Press, 1987

ละนะโคงการ แป และจัดพิม

ดาธา ภันละยา

ดวงเดือน บุนยาวิง

ธองสาสะดาจาน สิมหมาย เปธมจิด

บุนทับ ผิงพิจิด

ละนะปันนาทิการ

ดาลา ภันละยา

ภิงเดือน เมดตะวิง

ผู่ฆ่อย บ.ภ.

ดวงใจ แปงมะนิวิง

ดวงแข บุนยาวิง

ติพิม จัดหน้า พิสูดอักสอน และออกแบบปก: บໍลิสัด ดอกเกด จัดพิมจำกัด

สะปับพาสาลาว จัดพิมโดย :

โคงการปกปักธักสา หนังสือใบลานลาว,

ห้สะหมุดแห่งชาด, วยงจัน, ส.ป.ป.ลาว. 2004

Lao Language Edition published by:
Preservation of Lao Palm Leaf Manuscript Programme
National Library, Vientiane, Lao PDR.

โดยการอะนุมัด ลิขะสิด จากสำนักพิม มะหาวิทะยาไล ธาวาย, ส. อะเมลิกา.

ฮุปะกำโดย มูนนิทิ โตโยต้า TOYOTA FOUNDATION

พิมที่	โธงพิม มันหาตุลาด, นะคอนหลวงวยงจัน, สิงหา 2004
หะบยนพิม:	125 พจ/06072004
จำนอน:	500 ติว

ຮູ້ຈັກປະເທດ

ໃນອາຊີຕາເວັນອອກສຽງໃຕ້

ພາກ ທີ I : ໂລກ ໃນສະຕະວັດ ທີ 18

ສະບັບປັບປຸງໃຫມ່ ໂດຍ ເດວິດ ໂຈລ ສະເຕນເບີກ

1987

In Search of South East Asia

A Modern History

Revised Edition edited by David Joel Steinberg 1987

ໂດຍຄະນະນັກຂຽນ

David P. Chandler
William R. Roff
John.W. Smail
David Joel Steinberg
Robert H. Taylor
Alexander Woodside
David K. Wyatt

ຄະນະໂຄງການ
ແປ ແລະຈັດພິມ

ດາຣາ ກັນລະຍາ
ດວງເດືອນ ບຸນຍາວົງ
ຣ.ສ. ສົມຫມາຍ ເປຣມຈິດ
ບຸນທັນ ພົງພິຈິດ

ຈັດພິມໂດຍ : ໂຄງການປົກປັກຮັກສາຫນັງສືໃບລານລາວ, ຫໍສະຫມຸດແຫ່ງຊາດ

ອຸປະກໍາໂດຍ: ມູນນິທິ ໂຕໂຢຕາ TOYOTA FOUNDATION

ສາລະບັນ

I *ຄຳນຳຜູ້ຈັດພິມ*

III *ຄຳນິຍົມ*

V *ຄຳນຳ ຄະນະຜູ່ແປ*

VIII *ຄຳນຳຜູ່ຂຽນ*

XI *ຄຳນຳ ໃນການຈັດພິມຄັ້ງທີສອງ*

i-xi ບົດນຳ

12 ບົດທີ 1: ໂລກຂອງຊາວນາ — *The Peasant World*

33 ບົດທີ 2: ປະຊາຊົນໄຮ້ສັນຊາດ — *Non-State Peoples*

41 ບົດທີ 3: ອົງການປົກຄອງ ແລະສັງຄົມຂັ້ນບ້ານ — *Authority and Village Society*

48 ບົດທີ 4: ອຳນາດຂັ້ນແຂວງ — *Provincial Powers*

60 ບົດທີ 5: ຊີວິດທາງສາສະໜາ ແລະການເປັນຜູ້ນຳ — *Religious life and Leadership*

80 ບົດທີ 6: ຊາວຄ້າຂາຍ ແລະຕະຫລາດ — *Traders and Markets*

99 ບົດທີ 7: ເຈົ້າຊີວິດເມືອງພຸດ — *The Buddhist Kings*

114 ບົດທີ 8: ເຈົ້າຈັກກະພັດວຽດນາມ — *The Vietnamese Emperor*

126 ບົດທີ 9: ສຸນລະຕານ ແຫ່ງ ມາລາຢູ — *The Malay Sultan*

136 ບົດທີ 10: ເຈົ້າຊີວິດ ຊະວາ — *The Javanese Kings*

149 ບົດທີ 11: ເຈົ້າແຂວງ ສະເປນ — *The Spanish Governors*

ຄຳນຳຂອງຜູ້ຈັດພິມ

ໂຄງການປົກປັກຮັກສາຫນັງສືໃບລານລາວ ເປັນໂຄງການຫນຶ່ງຂອງ *ຫໍສະຫມຸດແຫ່ງຊາດ* ແລະມີຫນ້າທີ່ປົກປັກຮັກສາຫນັງສືໃບລານ ທີ່ກະແຈກກະຈາຍຢູ່ຕາມ ວັດວາອາຣາມ ໃນຂອບເຂດທົ່ວປະເທດ ໃຫ້ຫລຸດພົ້ນອອກຈາກການສູນເສຍ. ນອກຈາກພາລະບົດບາດຕົ້ນຕໍນີ້ແລ້ວ, ໂຄງການຍັງມີຫນ້າທີ່ເລືອກ ເລື່ອງສາລະຫນ້າຮູ້ ທາງດ້ານປະຫວັດສາດ, ວັນນະຄະດີ, ສຸພາສິດ ຮີດຄອງປະເພນີ ທີ່ກ່ຽວກັບວິຖີຊີວິດ ຂອງຄົນລາວບູຮານ ນຳມາຊຳລະ ແລະຈັດພິມເຜີຍແຜ່ ຕໍ່ປວງຊົນໃນຮູບແບບເປັນ ປຶ້ມຄົ້ນຄວ້າ ຫລື ວາລະສານ.

ໂຄງການປົກປັກຮັກສາຫນັງສືໃບລານລາວ ຮູ້ສຶກພາກພູມໃຈ ທີ່ທາງສຳນັກພິມ *ມະຫາວິທະຍາໄລ ຮາວາຍ* (University of Hawaï Press) ໄດ້ໃຫ້ຄວາມໄວ້ວາງໃຈ ແລະເຊື່ອຫມັ້ນຕໍ່ຄວາມສາມາດຂອງ ທ່ານ ນາງ ດາລາ ກັນລະຍາ ກັບທີມງານ ແປປຶ້ມ "In Search of S.E.A: A Modern History" *ເຊິ່ງເປັນຜົນງານການຂຽນຂອງຄະນະນັກຂຽນຕາເວັນຕົກ ເຈັດທ່ານ ຄື: ຣັອຟ, ເຫເລີ, ໄວແອັດ, ແຊນດະເລີ, ວູດໄຊດ໌, ສເມລ, ສະແຕນເບີກ* ເຫລັ້ມນີ້ອອກເປັນພາສາລາວ ແລະຈັດພິມ ເພື່ອຮັບໃຊ້ສະຖາບັນຄົ້ນຄວ້າ, ການສຶກສາຊັ້ນສູງ, ມະຫາວິທະຍາໄລແຫ່ງຊາດ ແລະຫ້ອງສະຫມຸດທີ່ສຳຄັນໃນທົ່ວປະເທດ.

ການແປ ແລະພິມປຶ້ມກ່ຽວກັບ ປະຫວັດສາດ ວັດທະນະທຳ ຂອງປະເທດເພື່ອນບ້ານ ໃນອາຊີແລະປິຕຸພູມເຮົາເອງ ນັບວ່າມີຫນ້ອຍທີ່ສຸດ. ປຶ້ມເຫລັ້ມນີ້ ກໍເປັນນຶ່ງໃນນັ້ນ ຂ້າພະເຈົ້າໄດ້ອ່ານບົດ ແລະຄຳນຳເບື້ອງຕົ້ນຂອງປຶ້ມ ຊອກຮູ້ກ່ຽວກັບອາຊີອາຄະເນ ນີ້ແລ້ວ ຮູ້ສຶກວ່າ ມີຄວາມກະຕືລືລົ້ນ ຢາກຈະອ່ານຕໍ່ໄປເລື້ອຍໆ ເພາະເຫັນວ່າການຂຽນ ແລະການແປ

ເຊີງວັນນະຄະດີ ຮັກສາໄວ້ເຊິ່ງຄວາມງົດງາມອັນສູນຫອນຂອງພາສາ ໄດ້ຢ່າງເຕັມປ່ຽມ. ເຫັນວ່າ ຄະນະຜູ່ແປໄດ້ເຮັດວຽກຢ່າງຕັ້ງໜ້າ ແລະ ຮັບຜິດຊອບສູງ.

ໃນນາມຫໍສະໝຸດແຫ່ງຊາດ ຂອງ ສ.ປ.ປ ລາວ. ແລະໃນຖານະຜູ່ຮັບຜິດຊອບໂຄງການປົກປັກຮັກສາໜັງສືໃບລານລາວ ທີ່ໄດ້ຮັບມອບລິຂະສິດໃຫ້ແປຄັ້ງນີ້ ແລະໃນນາມໂຄງການສົ່ງເສີມການອ່ານແຫ່ງຊາດ ຂ້າພະເຈົ້າຖືວ່າຜົນງານແປເຫລັ້ມນີ້ ຈະກາຍເປັນພະລັງຕົ້ນຕໍ ສຳລັບກະຕຸ້ນ ໃຫ້ມີການແປເຫລັ້ມອື່ນໆຕໍ່ໄປ.

ສ້າງສັງຄົມການອ່ານ ຫລື ສ້າງວັດທະນະທຳມັກອ່ານ ມັກການຄົ້ນຄວ້າ ແມ່ນອຸດົມການອັນສູງສົ່ງຂອງຫໍສະໝຸດແຫ່ງຊາດ, ໃນນາມປະຊາຊົນລາວ ຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນຕໍ່ສຳນັກພິມ *ມະຫາວິທະຍາໄລ ຣາວາຍ* ທີ່ອະນຸຍາດໃຫ້ແປອອກເປັນພາສາລາວ ແລະຂໍສະແດງຄວາມຂອບໃຈອັນລົ້ນເຫລືອ ຕໍ່ ມູນນິທິໂຕໂຢຕາ (TOYOTA FOUNDATION) ທີ່ໄດ້ສະໜັບສະໜູນການພິມເຫຼ່ືອນີ້ດ້ວຍ.

ວຽງຈັນ, ວັນທີ 1 ມີຖຸນາ 2004

ກົງເດືອນ ເນດຕະວົງ

ຫົວໜ້າອຳນວຍການ ຫໍສະໝຸດແຫ່ງຊາດ

ຄຳນິຍົມ

ຂ້າພະເຈົ້າໄດ້ອ່ານບາງບົດໃນປຶ້ມ "In Search of S.E.A." ຫລື *ຮູ້ຈັກປະເທດໃນອາຊີຕາເວັນອອກສຽງໃຕ້* ຂຽນໂດຍຄະນັກຂຽນຕ່າງປະເທດ ທີ່ເປັນນັກປະຫວັດສາດ ອາວຸໂສຜູ່ມີຊື່ສຽງ ມີປະສົບການໃນການຄົ້ນຄວ້າ ທັງເປັນສາສະດາຈານສອນ ຢູ່ໃນມະຫາວິທະຍາໄລຕ່າງໆທີ່ *ອະເມລິກາ, ອົດສະຕາລີ, ອັງກິດ, ຮ່ອງກົງ...* ດ້ວຍຄວາມສົນໃຈ.

ສະພາບການຂາດເຂີນປຶ້ມອ່ານ ທີ່ເຈາະເລິກຫລາຍແງ່ມຸມ ຂອງປະຫວັດສາດປະເທດຕ່າງໆ ຂອງອາຊີອາຄະເນ ໃນພາສາລາວ ເຮັດໃຫ້ຂ້າພະເຈົ້າມີຄວາມຊົມຊື່ນ ແລະຍິນດີຢ່າງຍິ່ງທີ່ຈະເຫັນປຶ້ມດັ່ງຫົວນີ້ ໄດ້ຮັບການຈັດພິມອອກເປັນພາສາລາວ ຈຶ່ງຂໍຊົມເຊີຍຄະນະຈັດທຳຢ່າງຈິງໃຈ ທີ່ໄດ້ພະຍາຍາມເອົາສິ່ງທີ່ເປັນປະໂຫຍດ ເປັນຄວາມຮູ້ ມາໃຫ້ຜູ່ອ່ານລາວ. ຄູອາຈານ ອາດຈະນຳໃຊ້ຂໍ້ມູນເນື້ອເລື່ອງໃນປຶ້ມນີ້ ໄປປະກອບໃສ່ບົດສອນຂອງຕົນ ແລະນັກວິຊາການສາຍອື່ນ ກໍສາມາດຮຽນຮູ້ເລື່ອງລາວຂອງປະເທດ ໃນພາກພື້ນຫລາຍຂຶ້ນ.

ເວົ້າສະເພາະເນື້ອເລື່ອງ ແລະທັດສະນະຂອງນັກຂຽນ ທີ່ເປັນນັກປະຫວັດສາດ ໂດຍອາຊີບແລ້ວ ຂ້າພະເຈົ້າເຫັນວ່າ:

1. ມີທັດສະນະເປັນກາງ ແລະບໍ່ເນັ້ນໃສ່ບັນຫາການເມືອງ, ແຕ່ສຸມໃສ່ວິວັດທະນາການທາງ ດ້ານສັງຄົມ ແລະ ວັດທະນະທຳ ຂອງ ອາຊີອາຄະເນ.

2. ສະເພາະຄຳນຳ, ເຫັນວ່າມີເນື້ອໃນດີ ແລະເວົ້າຄວາມຈິງ ເຊັ່ນ(ໃນແຖວທີ 4 ຈາກເທິງ ໄດ້ເວົ້າວ່າ) "... When Europeans in the region first had the power and inclination to impose on others their technical skills and new world view." (ເມື່ອຊາວ*ຢູໂຣ*ທີ່ອາໄສຢູ່ໃນພາກພື້ນ ໄດ້ເຂົ້າມາມີອຳນາດ ແລະກຳນົດກົດເກນທາງດ້ານວິຊາການ ແລະທັດສະນະຂອງໂລກໃຫມ່ ໃຫ້ແກ່ຄົນອື່ນ) ເຫັນວ່າ ນີ້ແມ່ນທັດສະນະ ທີ່ກ້າວ

ໜ້າ. ໃນແຖວທີ 12 – 13 ໄດ້ເວົ້າ ວ່າ "Southeast Asians have been reduced to roles as mere bit players..." (ຊຶ່ງໄດ້ເຮັດໃຫ້ບົດບາດການສະແດງ ຂອງຊາວອາຊີຕາເວັນອອກ ສຽງໃຕ້ ຫລຸດລົງ ເຫລືອພຽງໜ້ອຍດຽວ) ນີ້ກໍເປັນການວິເຄາະທີ່ມີຄວາມຈິງ.

3. ຕໍ່ບົດ "The Peasant World" (ໂລກຂອງຊາວນາ) ເຫັນວ່າ ຄະນະຜູ້ຂຽນ ໄດ້ໃຫ້ຂໍ້ມູນ ທີ່ຫາອ່ານຍາກຫລາຍຈາກເອກະສານ ຫລື ໜັງສືອື່ນ, ເປັນການຄົ້ນຄວ້າ ລົງເລິກວ່າປະຊາຊາດ ໃນອາຊີອາຄະເນ ເມື່ອ 200 ກວ່າປີກ່ອນ ມີການດຳລົງຊີວິດ ແນວໃດ. ເປັນພາກທີ່ພາ ຜູ່ອ່ານກັບຄືນໄປເຂົ້າໃຈ ກ່ຽວກັບຊີວິດຈິງຂອງເຂົາເຈົ້າ.

4. ຕໍ່ບົດຊື່ "Non-State People" (ປະຊາຊົນນອກສັງກັດລັດ) ເຫັນວ່າ ເປັນບົດທີ່ໄດ້ ສຶກສາຄົ້ນຄວ້າ ແລະສະຫນອງຂໍ້ມູນທີ່ຊັດເຈນສົມຄວນ ກ່ຽວກັບຊົນຊາດຊົນ ເຜົ່າຕ່າງໆ ທີ່ຜູ່ຂຽນເວົ້າວ່າ ມີເກືອ 400 ກວ່າຊົນເຜົ່າ ຢູ່ໃນອາຊີອາຄະເນ. ໄດ້ມີການເວົ້າເຖິງຄົນລາວ ແລະບາງເນື້ອໃນກໍເປັນຜົນດີໂດຍກົງໃຫ້ແກ່ ສ.ປ.ປ.ລາວ. ເຮົາ ເຊັ່ນ ຢູ່ໜ້າ ix ທີ່ເວົ້າເຖິງ ສາຍພູຫລວງ ທີ່ແບ່ງປັນລະຫວ່າງ *ລາວ* ແລະ *ຫວຽດນາມ*, ເວົ້າເຖິງເບື້ອງ*ລາວ* ແມ່ນ ເຮືອນຮ້ານ ແລະເບື້ອງ *ຫວຽດນາມ* ແມ່ນມີເຮືອນຕິດກັບພື້ນດິນ ເປັນຕົ້ນ.

ຢ່າງໃດກໍດີ ການໄດ້ອ່ານປຶ້ມກ່ຽວກັບປະຫວັດສາດ ຂອງນາໆປະເທດ ຂຽນໂດຍ ນັກຂຽນທີ່ບໍ່ແມ່ນຄົນໃນຊາດ ຍ່ອມໃຫ້ທັດສະນະທີ່ອາດແຕກຕ່າງແດ່ ນັ້ນມັນຫມາຍຄວາມ ວ່າ ພວກເຮົາຈະໄດ້ຮັບຮູ້ນາໆທັດສະນະ ແລະອາດຈະເຂົ້າໃຈບັນຫາຕ່າງໆ ໄດ້ກວ້າງຂວາງ ແລະເລິກເຊິ່ງຍິ່ງຂຶ້ນ.

ຂ້າພະເຈົ້າຫວັງວ່າ ໃນອີກບໍ່ດົນຈະມີ ເຫລັ້ມ 2-3-4 ອອກມາຕໍ່ໆກັນ.

ວຽງຈັນ,ວັນທີ 20 ພຶດສະພາ 2004

ໄຊຍະການ ສີສຸວົງ

ຫົວໜ້າກົມອາຊຽນ ກະຊວງການຕ່າງປະເທດ

ຄຳນຳຂອງຄະນະຜູ້ແປ

ນັບແຕ່ 1989 ເປັນຕົ້ນມາ ຫລາຍພາກສ່ວນ ໃນວົງການສົ່ງເສີມການອ່ານ ການຂຽນຢູ່ ສ. ປ. ປ. ລາວ ໄດ້ຕື່ນຕົວກັນຢ່າງເປັນຂະບວນຟົດຟື້ນ ຈັດພິມເຜີຍແຜ່ ປຶ້ມອ່ານນອກລະບົບ ທີ່ເນັ້ນໃນດ້ານວັນນະຄະດີເກົ່າ ຮ່ວມສະໄຫມ ເລື່ອງແປ ແລະ ສະເພາະເດັກ. ຂ້າພະເຈົ້າແລະຫມູ່ຄະນະຫລາຍຄົນ ສັງເກດເຫັນວ່າ ປຶ້ມທີ່ຈະໃຫ້ຂໍ້ມູນຄວາມຮູ້ກ່ຽວກັບຄວາມເປັນມາຂອງຊາດຕ່າງໆ ອ້ອມຂ້າງຊາດລາວເຮົາ ທີ່ພິມເປັນພາສາລາວ ເກືອບວ່າບໍ່ມີເລີຍ. ໃນເມື່ອປະເທດເຮົາໄດ້ເຂົ້າເປັນສະມາຊິກ ຂອງ ກຸ່ມອາຊຽນ (ASEAN) ແລ້ວ ແນວນີ້ ເຍົາວະຊົນ ນັກສຶກສາ ຕະຫລອດເຖິງຜູ່ມີວຽກເຮັດກ່ຽວຂ້ອງກັບການພົວພັນຕິດຕໍ່ກັບປະເທດສະມາຊິກນຳກັນ ຄວນທີ່ຈະໄດ້ຮູ້ຈັກກັບຊາດຕ່າງໆ ໃນອາຊີຕາເວັນອອກສຽງໃຕ້ນີ້ ເພື່ອເສີມສ້າງຄວາມເຂົ້າໃຈ ອັນດີງາມ ລະຫວ່າງກັນແລະກັນ ເອີ້ນວ່າຮູ້ຈັກກັນດີຂຶ້ນ ເພື່ອການພົວພັນທີ່ງອກງາມ ຍິ່ງໆຂຶ້ນໄປ.

ການຮູ້ຈັກຜູ່ຄົນໃນຊາດນຶ່ງ ຫລື ປະເທດນຶ່ງນັ້ນ ຈຳເປັນຈະຕ້ອງຮູ້ທັງປັດຈຸບັນ ແລະ ອະດີດ ກໍຄືຄວາມເປັນມາຂອງປະເທດເພິ່ນ ຜ່ານຂໍ້ມູນທາງປະຫວັດສາດ. ມີແຕ່ອ່ານປຶ້ມທີ່ກ່າວເຖິງປະຫວັດສາດ ການຕໍ່ສູ້ເພື່ອຄວາມຢູ່ລອດ ຂອງປະຊາຊົນ ແລະ ວິຖີການດຳລົງຊີວິດ ການທຳມາຫາກິນ ຄວາມເຊື່ອຖື ແລະ ວັດທະນະທຳ ຂອງປະຊາຊາດ ຈຶ່ງຈະອຳນວຍໃຫ້ຄົນເຮົາ ເຂົ້າໃຈຊຶ່ງກັນແລະກັນ ແລະສາມາດສ້າງສຳພັນອັນຄວນມີລະຫວ່າງກັນ ນອກເໜືອໄປຈາກການພົວພັນທາງການທູດ ເສດຖະກິດ ແລະ ການທ່ອງທ່ຽວ.

ປຶ້ມ " ຮູ້ຈັກປະເທດໃນອາຊີຕາເວັນອອກສຽງໃຕ້ " (In Search of S. E. A.) ນີ້ ຈະຕອບສະໜອງສິ່ງຄວນຮູ້ ດັ່ງກ່າວມາຂ້າງຕົ້ນ ຢ່າງອຸດົມສົມບູນ. ປຶ້ມຫົວນີ້ ເມື່ອອ່ານໃນສະບັບພາສາອັງກິດ ກໍເປັນເນື້ອໃນອ່ານງ່າຍ ຊວນຕິດຕາມ ສຳນວນພາສາມ່ວນ ແລະ ເລິກເຊິ່ງ ເວົ້າເຖິງປະຊາຊົນຜູ່ອາໄສໃນດິນແດນພາກພື້ນນີ້ ຢ່າງລະອຽດ ເວົ້າເຖິງຜູ່ນຳຜູ່ປົກຄອງ ໃນຍຸກສະຕະວັດທີ 18 ຈົນຮອດລະຍະການຍາດແຍ່ງດິນແດນ ໂດຍມະຫາອຳນາດ

ນັກລ່າເມືອງຂົ້ນແບບເກ່ຳ ທີ່ພະຍາຍາມ ເຂ້ົ້າມາປັບປ່ຽນວິຖີຊີວິດ ແລະຄວາມເຊື່ອຖ ຮີດຄອງປະເພນີ ຂອງຊາວອາຊີອາຄະເນ ໂດຍຈຸດປະສົງທາງອຳນາດ ເສດຖະກິ ເປັນຕົ້ນຕໍ .

ເມື່ອໄດ້ອ່ານປຶ້ມຫົວນີ້ ຄັ້ງທຳອິດ ຂ້ຳພະເຈົ້ຳວ່ຳງບໍ່ລົງ ຢ່ຳກຕິດຕ່ຳມໄປບົດຕໍ່ບົ ຄືຈັ່ງວ່ຳ ໄດ້ເດີນທ່ຳງໄປແຕ່ລະປະເທດ. ເມື່ອອ່ຳນກ່ຽວກັບປະເທດທີ່ເຄີຍໄປແລ້ວ ເຊັ່ນ *ໄ ທ ອຽດນ ຳ ມ* ແລະ *ກ ຳ ປູ ເ ຈ ຍ* ກໍຮູ້ສຶກວ່ຳ ຮູ້ຈັກກັບຜູ່ຄົນໃນຊັ້ນຄົນຕ່ຳງໆດີຂົ້ນ ເຂ້ົ້ຳໃຈວ່ ດ້ວຍເຫດໃດຂະເຈ້ົ້ຳ ຈ່ຶງເປັນຄົນແບບນັ້ນ ຄຶດຈັ່ງຊັ້ນ ເຮັດໃຫ້ຮູ້ຈັກຜູ່ຄົນໃນປະເທດເພື່ອນບ້ຳ ເຮ ຳ ດີຂົ້ນ ເຂ້ົ້ຳໃຈແນວຄຶດ ວັດທະນະທ ຳ ແລະ ວ ຳ ດ ຳ ລ ົ ງຊີວິດ ຂະເຈ້ົ້ຳໄດ້ຫລ ຳ ຍກວ່ ທີ່ເຮ ຳ ເຫັນຈ ຳ ກສ ຳ ລ ະຄ ະ ດ ີ ໂ ຫ ລ ະ ພ ຳ ບ ແລະ ຂ ່ ຳ ວ ຄ ຳ ວ ໃ ນ ຫ ນ ້ ຳ ຫ ນ ັ ງ ສ ື ພ ິ ມ ປ ະ ຈ ຳ ວ ັ ນ .

ອ ່ ຳ ນ ແ ລ ້ ວ ຂ ້ ຳ ພ ະ ເ ຈ ົ ້ ຳ ຈ ່ ຶ ງ ລ ົ ງ ຄ ວ ຳ ມ ເ ຫ ັ ນ ວ ່ ຳ ນ ີ ້ ແ ມ ່ ນ ຂ ໍ ້ ມ ູ ນ ທ ີ ່ ທ ຸ ກ ຄ ົ ນ ຄ ວ ນ ອ ່ ຳ ນ . ມ ັ ນ ແ ມ ່ ນ ສ ິ ່ ງ ຈ ຳ ເ ປ ັ ນ ທ ີ ່ ພ ວ ກ ເ ຮ ົ ຳ ຈ ະ ຕ ້ ອ ງ ຮ ູ ້ ໄ ວ ້ ກ ຳ ນ ຈ ັ ກ ຄ ົ ນ ອ ື ່ ນ ໂ ດ ຍ ສ ະ ເ ພ ຳ ະ ຜ ູ ່ ທ ີ ່ ຢ ູ ່ ໃ ກ ້ ໆ ເ ຮ ຳ ໃ ກ ້ ປ ະ ເ ທ ດ ເ ຮ ຳ ເ ປ ັ ນ ກ ຳ ນ ເ ສ ີ ມ ສ ້ ຳ ງ ຄ ວ ຳ ມ ເ ຂ ້ ຳ ໃ ຈ ລ ະ ຫ ວ ່ ຳ ງ ຄ ົ ນ ກ ັ ບ ຄ ົ ນ ທ ີ ່ ຈ ະ ພ ຳ ໄ ປ ສ ູ ່ ສ ຳ ຍ ພ ົ ວ ພ ັ ນ ອ ັ ນ ດ ີ ໃ ນ ລ ະ ດ ັ ບ ສ ູ ງ ຂ ົ ້ ນ ໄ ປ ເ ລ ື ້ ອ ຍ ໆ .

ດ ້ ວ ຍ ເ ຫ ດ ນ ີ ້ ຂ ້ ຳ ພ ະ ເ ຈ ົ ້ ຳ ພ ້ ອ ມ ດ ້ ວ ຍ ຄ ະ ນ ະ ຈ ່ ຶ ງ ໄ ດ ້ ສ ູ ້ ຊ ົ ນ ແ ປ ປ ຶ ້ ມ ທ ີ ່ ມ ີ ຄ ວ ຳ ມ ຍ ຳ ວ ຍ ຮ ອ ດ 570 ໜ ້ ຳ ໃ ຊ ້ ເ ວ ລ ຳ ກ ວ ່ ຳ ສ ີ ່ ປ ີ ໃ ນ ກ ຳ ນ ແ ປ ຮ ຽ ບ ຮ ຽ ງ ແ ລ ະ ກ ວ ດ ແ ກ ້ ຄ ຶ ນ 3-4 ຕ ່ ຳ ວ ກ ່ ອ ນ ຈ ະ ໄ ດ ້ ເ ນ ື ້ ອ ໃ ນ ທ ີ ່ ເ ປ ັ ນ ພ ຳ ສ ຳ ລ ຳ ວ ອ ອ ກ ມ ຳ ຈ ັ ດ ພ ິ ມ ສ ູ ່ ສ ຳ ຍ ຕ ຳ ທ ່ ຳ ນ ຜ ູ ່ ອ ່ ຳ ນ . ຄ ະ ນ ະ ຈ ັ ດ ທ ຳ ໄ ດ ້ ຕ ົ ກ ລ ົ ງ ໃ ຈ ແ ບ ່ ງ ເ ປ ັ ນ 4 ເ ຫ ລ ັ ້ ມ ເ ພ ື ່ ອ ສ ະ ດ ວ ກ ໃ ນ ກ ຳ ນ ຈ ັ ບ ຖ ື ອ ່ ຳ ນ ໄ ດ ້ ງ ່ ຳ ຍ ດ ຳ ຍ . ກ ຳ ນ ຈ ັ ດ ພ ິ ມ ທ ັ ງ 4 ເ ຫ ລ ັ ້ ມ ນ ີ ້ ຈ ະ ຕ ່ ໍ ເ ນ ື ່ ອ ງ ກ ັ ນ ໄ ປ ຕ ະ ຫ ລ ອ ດ ປ ີ 2003 - 04 ນ ີ ້ ຄ ຳ ດ ວ ່ ຳ ຈ ະ ພ ິ ມ ສ ຳ ເ ລ ັ ດ ຄ ົ ບ ກ ້ ອ ນ .

ແ ນ ່ ນ ອ ນ ກ ຳ ນ ແ ປ ປ ຶ ້ ມ ທ ີ ່ ໃ ຫ ຍ ່ ແ ລ ະ ສ ຳ ຄ ັ ນ ຄ ື ແ ນ ວ ນ ີ ້ ແ ມ ່ ນ ຕ ້ ອ ງ ມ ີ ສ ິ ່ ງ ທ ີ ່ ບ ົ ກ ພ ່ ອ ງ ຢ ູ ່ ແ ດ ່ ເ ປ ັ ນ ທ ຳ ມ ະ ດ ຳ . ຄ ະ ນ ະ ພ ວ ກ ເ ຮ ົ ຳ ກ ໍ ໄ ດ ້ ສ ຸ ມ ໃ ສ ່ ສ ຸ ດ ຄ ວ ຳ ມ ສ ຳ ມ ຳ ດ ແ ລ ະ ເ ວ ລ ຳ ເ ທ ົ ່ ຳ ທ ີ ່ ມ ີ ເ ພ ື ່ ອ ໃ ຫ ້ ເ ນ ື ້ ອ ໄ ນ ຂ ອ ງ ປ ຶ ້ ມ ຍ ັ ງ ຄ ົ ງ ຮ ັ ກ ສ ຳ ຂ ໍ ້ ມ ູ ນ ເ ດ ີ ມ ຂ ອ ງ ນ ັ ກ ຂ ຽ ນ ທ ີ ່ ເ ປ ັ ນ ທ ັ ງ ນ ັ ກ ປ ະ ຫ ວ ັ ດ ສ ຳ ດ ແ ລ ະ ນ ັ ກ ມ ຳ ນ ຸ ດ ວ ິ ທ ະ ຍ ຳ . ພ ວ ກ ເ ຮ ົ ຳ ພ ະ ຍ ຳ ຍ ຳ ມ ຮ ູ ດ ເ ກ ົ ຳ ປ ະ ໂ ຫ ຍ ກ ສ ຳ ນ ວ ນ ໃ ຫ ້ ອ ່ ຳ ນ ເ ປ ັ ນ ພ ຳ ສ ຳ ລ ຳ ວ ທ ີ ่ ຄ ่ ອ ງ ຕ ົ ວ ແ ຕ ่ ກ ໍ ປ ຳ ສ ะ ຈ ຳ ກ ບ ่ ໍ ໄ ດ ้ ສ ຳ ນ ວ ນ ທ ີ ่ ຍ ັ ງ ເ ປ ັ ນ ແ ບ ບ ອ ັ ງ ກ ິ ດ ຢ ู ่ ແ ດ ่ ຍ ้ ອ ນ ວ ่ ຳ ບ ่ ຢ ຳ ກ ໃ ຫ ้ ເ ນ ื ้ ອ ໃ ນ ຂ ອ ງ ເ ພ ິ ่ ນ ຜ ິ ດ ພ ้ ຽ ນ ໄ ປ .

ຂໍ້ອຸທິດ ຄຸນປະໂຫຍດ ຈາກປຶ້ມຫົວນີ້ ແດ່ ບຸບພາຈານ ຜູ່ປະສິດປະສາດຄວາມຮູ້ ໃຫ້ແກ່ ພວກເຮົາຜູ່ເຮັດວຽກແປ ແລະ ກວດແກ້ ຕາມແບບອາສາສະໜັກ ທັງນີ້ກໍເພື່ອສ້າງ ບັນນະພິບພາສາລາວ ໃຫ້ອຸດົມຮັ່ງມີ. ຂໍສະແດງຄວາມຮູ້ບຸນຄຸນຢ່າງລົ້ນເຫລືອ ມາຍັງ *ມູນນິທິໂຕໂຢຕ້າ ແຫ່ງປະເທດຍີ່ປຸ່ນ* ຜູ່ອຸປະກຳທຶນຮອນ ໃນການຈັດພິມທັງ 4 ເຫລັ້ມ. ຂໍຂອບໃຈ ຕໍ່ສຳນັກພິມມະຫາວິທະຍາໄລ *ຮາວາຍ ສະຫະລັດອະເມລິກາ* ທີ່ອະນຸມັດລິຂະສິດ ໃນການພິມເປັນພາສາລາວ ຊຸດນີ້ ດ້ວຍຄວາມໃຈບຸນ.

ຂໍໃຫ້ມິດຕະພາບ ທີ່ງອກງາມ ຈົ່ງມີແກ່ຊາວອາຊີຕາເວັນອອກສຽງໃຕ້ ແລະ ຊາວໂລກ ດ້ວຍເກີດ.

ວຽງຈັນ ວັນທີ 5 ພຶດສະພາ 2004

ດາຣາ ວິຣະວົງສ໌ ກັນລະຍາ

ຕາງໜ້າຄະນະຜູ່ແປ

ຄຳນຳຂອງຜູ່ຂຽນ

ຢູ່ດອນນ້ອຍໆ ຊື່ *ມັກຕັນ* (Mactan) ປະເທດ*ຟິລິບປິນ* ມີອະນຸສາວະລີ ສ້າງຂຶ້ນໃນ ສະຕະວັດທີ 19 ໂດຍ*ຊາວສະເປນ* ເພື່ອສັນລະເສີນ ພຣະເປັນເຈົ້າ, ປະເທດ*ສະເປນ* ແລະ *ແຟດີນັງ ມາແຊນລັງ*. ໃນປີ 1941 ສະໄຫມທີ່ *ອະເມລິກາ* ເຂົ້າໄປຢູ່ *ຟິລິບປິນ* ເພິ່ນໄດ້ສ້າງ ຈາລຶກໃສ່ອະນຸສາວະລີ ກ່າວເຖິງການຈາກໄປຂອງ *ແຟດີນັງ ມາແຊນລັງ* ວ່າ : " *ນະທີ່ນີ້ ແຟດີນັງ ມາແຊນລັງ ໄດ້ເຖິງແກ່ມໍລະນະກຳ ໃນວັນທີ 27 ເມສາ 1521 ພາຍຫລັງ ໄດ້ຖືກບາດເຈັບ ໃນການສູ້ຮົບກັບ ທະຫານຂອງລາປູ ລາປູ, ຫົວໜ້າເຜົ່າຂອງ ດອນມັກຕັນ* (Mactan Island) ". ເຮືອສະເພົາ *ມາແຊນລັງ* ຊື່ *ວິກໂຕເຣຍ*, ໂດຍການບັນຊາຂອງ *ຮວນ ເຊບາ ສະຕຽນ ແອນກາໂນ* (Juan Sabastian Elcano) ເດີນທາງມາຈາກເຊບຸ ເມື່ອວັນທີ 1 ພຶດສະພາ 1521 ມາຈອດຢູ່ທ່າ *ຊານລູກາ ເດີບາຣັນເມດາ* ກໍເປັນການເດີນ ເຮືອຮອບໜ່ວຍໂລກເປັນຄັ້ງທຳອິດ. ອີກນຶ່ງທົດສະວັດຕໍ່ມາ ເມື່ອ*ຟິລິບປິນ** ໄດ້ ຮັ ບເອກະ ລາດແລ້ວ ໄດ້ສ້າງຈາລຶກຫລັກໃຫມ່ຂຶ້ນ ຊື່ວ່າ " *ລາປູ ລາປູ* " ຂຽນໄວ້ວ່າ : " *ນະທີ່ນີ້ ເມື່ອ ວັນທີ 27 ເມສາ 1521 ລາປູ ລາປູ ແລະ ທະຫານໄດ້ຂັບໄລ່ຜູ່ຮຸກຮານ ແລະ ຂ້າຜູ່ນຳ ຂອງພວກເຂົາ ແຟດີນັງ ມາແຊນລັງ. ດັ່ງນີ້ ລາປູ ລາປູ ແມ່ນຄົນຟິລິບປິນ ຜູ່ທຳອິດ ທີ່ໄດ້ລຸກຂຶ້ນ ຕໍ່ສູ້ ຕ້ານການຮຸກຮານຂອງຊາວຢູຣົບ.* "

ຕົວຢ່າງທີ່ຍົກຂຶ້ນມານີ້ ສະແດງໃຫ້ເຫັນຢ່າງຈະແຈ້ງວ່າ ນັກປະຫວັດສາດ ຕ້ອງພົບ ກັບສະຖານະການທີ່ຫຍຸ້ງຍາກພໍ່ພຽງໃດ. ການຕີລາຄາສະພາບການຕ່າງໆ ມັກແຕກຕ່າງ ກັນໄປຫລາຍ ລະຫວ່າງຄຳເວົ້າ ທີ່ຄືຈັ່ງວ່າ ຈະເປັນຂໍ້ມູນແທ້ ແຕ່ແລ້ວ ຜັດແມ່ນການຈັດ ວາງຂອງນັກປະຫວັດສາດ ເພື່ອຕີລາຄາເຫດການນຶ່ງ ໃນອະດີດ ໃຫ້ກັບກາຍເປັນສິ່ງທີ່ໜ້າ ສົງໄສ. ປຶ້ມຫົວນີ້ ນອນຢູ່ໃນຂໍ້ສະຫລຸບ ຂອງຜົນຈາກການຮ່ວມຄົ້ນຄວ້າ ແລະ ຂຽນຂອງ

---

* ຄົງຫມາຍເຖິງ ສິບປີ ຫລັງຈາກ 1941 (ຜູ່ແປ)

ຫລາຍຄົນ ທີ່ແລກປ່ຽນຂໍ້ຄຶດເຫັນກັນຢ່າງເລິກເຊິ່ງ ເພື່ອບັນທຶກເຫດການຂອງມວນມະນຸດ. ແຮກແຕ່ລະດູໃບໄມ້ຫລົ່ນ ປີ 1966, ພວກເຮົາໄດ້ເລີ່ມປະຊຸມປຶກສາຫາລື ກ່ຽວກັບໂຄງຮ່າງ ແລະ ກົກກຽງ ຂໍ້ສະຫລຸບ ຈາກການຄົ້ນຄວ້າ. ຮອດລະດູຮ້ອນ ປີ 1969 ພວກເຮົາມາພົບກັນ ອີກຄັ້ງນຶ່ງຢູ່ *ອານ ອາເບີ* ໃນການສຳມະນາ ປະຕິບັດການ ຂຽນປະຫວັດສາດຍຸກສະໄໝ ໃໝ່ຂອງອາຊີຕາເວັນອອກສຽງໃຕ້. ພວກເຮົາຂຽນໂຄງຮ່າງນຳກັນ, ແບ່ງອົງເຂດທີ່ຮັບຜິດ ຊອບຂຽນ ແລະ ຕິຊົມງານຂຽນຂອງກັນແລະກັນ ດ້ວຍຄວາມຫວັງອັນຫມັ້ນຄົງວ່າ ອາດ ຈະສາມາດຂຽນຫນ້າປະຫວັດສາດສະໄໝໃໝ່ຂອງອາຊີອາຄະເນ ແບບສັງເກດການຢ່າງ ລະອຽດໄດ້. ຢ່າງໃດກໍຕາມ ກໍບໍ່ອາດຫລີກຫລ່ຽງຂໍ້ບົກພ່ອງໄດ້ ດ້ວຍວ່າ ພວກເຮົາບາງຄົນກໍ ຂາດເອກະສານອ້າງອີງ ທັງເວລາກໍຫນ້ອຍ. ຕົວຢ່າງ ໃນກຸ່ມພວກເຮົາ ບໍ່ມີໃຜຊ່ຽວຊານ ກ່ຽວກັບປະຫວັດສາດ ປະເທດ *ພະມ້າ* ເລີຍ ແລະ ພວກເຮົາກໍບໍ່ອາດລະໄລປະເທດນີ້ໄດ້. ພວກເຮົາໄດ້ຕັ້ງປະຕິຫານໄວ້ແລ້ວວ່າ ການຮ່ວມກັນສຶກສາຄົ້ນຄວ້າ ກ່ຽວກັບອາຊີອາຄະເນ ທັງຫມົດເປັນເອກະພາບນັ້ນ ບໍ່ແມ່ນຍ້ອນວ່າ ມີສາຍຕາຂອງ ນັກປະຫວັດສາດປຽບທຽບ ຢູ່ແລ້ວ ແຕ່ຫາກ ມີຄຳພາສິດບົດນຶ່ງຂອງ ສາທາລະນະລັດ *ອິນໂດເນເຊຍ* ກ່າວໄວ້ວ່າ " *ມີຄວາມເປັນເອກະພາບ ຢູ່ໃນຄວາມແຕກຕ່າງນັ້ນ.* " ການທີ່ພວກເຮົາເລັ່ງໃສ່ອົງເຂດນີ້ ແບບລວມ ຊ່ອຍໃຫ້ສາມາດພົບຄວາມເລິກເຊິ່ງ ແລະ ແລວທາງແຫ່ງຄວາມເຂົ້າໃຈ ໃນ ສ່ວນຂອງອາຊີອາຄະເນເອງ. ເຖິງແມ່ນວ່າ ຕົກລົງໃຈແນວນີ້ແລ້ວ ໃນການສົນທະນາແລກ ປ່ຽນຄວາມຄຶດເຫັນ ກໍຍັງຕ້ອງກົກກຽງກັນ ອີກຫລາຍ.

ລາຍຊື່ບຸກຄົນ ທີ່ພວກເຮົາຢາກສະແດງຄວາມຂອບໃຈນັ້ນ ຫລາຍກວ່ານີ້ ຢ່າງ ຫນ້ອຍທີ່ສຸດກໍມີອີກຫົກເທົ່າ. ຄືຕ້ອງຂໍຂອບໃຈ ໄປທົ່ວທຸກແຈໂລກ ແຕ່ກໍຂໍຈາລຶກໄວ້ເປັນ ພິເສດ ສະເພາະສາສະດາຈານ *ເກລ ແມສ* ແລະ ຈອນ *ບູມສະຟຽນ* ແຫ່ງ ສູນຄົ້ນຄວ້າ ອາຊີ ຕາເວັນອອກສຽງໃຕ້ ທີ່ມະຫາວິທະຍາໄລ *ມິຊິແກນ* ທີ່ໄດ້ຊຸກຍູ້ ທຸກຂັ້ນຕອນຂອງໂຄງການນີ້. ປະການນຶ່ງ ກ້າປາສະຈາກ *ດຣ. ດາວິດ ປ໌ຟານເນີ* ແຫ່ງ *ມູນນິທິ ຝອດ* (Ford F.) ແລະ *ດຣ. ວິລຽມ ບຣານເລ* ແຫ່ງ *ມູນນິທິ ຣັອກເກີ ແຟລເລີ* ແລ້ວ ປຶ້ມເຫລັ້ມນີ້ ຄົງບໍ່ເກີດຂຶ້ນໄດ້; ພວກເຮົາຂໍສະແດງຄວາມຮູ້ບຸນຄຸນອັນລົ້ນເຫລືອ ຕໍ່ມູນນິທິທັງສອງ ແລະ ຕໍ່ທ່ານທັງສອງ

ທີ່ປະຕິບັດວຽກງານ ຢູ່ໃນມູນນິທິ ຢ່າງເຕັມຄວາມສາມາດ. ພວກເຮົາຂໍຂອບໃຈ ກອງທຶນ ແຫ່ງຊາດເພື່ອມະນຸດຊາດ (National Endowment for Human) ແລະສະຖາບັນ *ໂຮຣາສ ແຣກແຮມ* (Horace Rackham School) ແຫ່ງ ມະຫາວິທະຍາໄລ *ມິຊິແກນ* ທີ່ໄດ້ອະນຸມັດທຶນໃນການຄົ້ນຄວ້າເກັບກຳຂໍ້ມູນ. ສະເພາະແຜນທີ່ນັ້ນແມ່ນ *ທ່ານ ໂຣນານ ເອັດເກີຕັນ* (Ronald Edgerton) ເປັນຜູ້ກະກຽມຂໍ້ມູນ ແລະ ແຕ້ມໂດຍ *ນາງ ຄາເຣັນ ອີວິ* (Karen Ewing). ພວກເຮົາຍັງຕ້ອງ ຂອບໃຈບັນດານັກສຶກສາ ທີ່ມາຊ່ວຍ ໂດຍສະເພາະ *ສະຈ໊ວດ ກໍດອນ, ປາຕຼິເຊັຍ ເຮີເບີກ, ທີໂອດໍ ກູອສມັນ ແລະ ນໍມັນ ໂອເວັນ* ແຫ່ງ ມະຫາວິທະຍາໄລ *ມິຊິແກນ*. ຂໍຮູ້ບຸນຄຸນຢ່າງເລິກເຊິ່ງຕໍ່ *ໂຣນານ ເອັດເກີຕັນ* ທີ່ໄດ້ຊ່ວຍ ເຫລືອດ້ວຍຄວາມຈິງຈັງ ແລະ ການສະໜັບສະໜູນ ທຸກຂັ້ນຕອນຂອງໂຄງການ. ສຸດທ້າຍ ນີ້ ຕ້ອງຂໍອະໄພນຳ ບັນດາພັນລະຍາຂອງພວກເຮົາທັງຫ້າຄົນ, ລູກໆອີກ ແປດຄົນ ທີ່ຕ້ອງ ຜ່ານຜ່າການດຳລົງຊີວິດ ໃນທຸກລະດູຮ້ອນ ລະດູໃບໄມ້ຫລົ່ນ ແລະ ລະດູໜາວ ຕະຫລອດ ເວລາຫລາຍປີ.

Ann Arbor, Michigan
ກໍລະກົດ 1970

ຄຳນຳໃນການຈັດພິມຄັ້ງທີສອງ

ເມື່ອລົງມືເຮັດວຽກນຶ່ງເປັນເທື່ອທຳອິດນັ້ນ ເຮົາອາດຈະຕື່ນເຕັ້ນຫລາຍແດ່ ແຕ່ບາດແລ້ວ ກໍຄ່ອຍໆກັບກາຍມາເປັນຄວາມຊິນເຄີຍໄປເອງ. ເຈັດປີກ່ອນໜ້ານີ້ ການຂຽນປຶ້ມຫົວນີ້ ແມ່ນປະສົບການທີ່ຍິ່ງໃຫຍ່ຫລາຍ ສຳລັບພວກເຮົາ ແຕ່ເວລານີ້ ກໍຈຳເປັນຕ້ອງປັບປຸງໃຫ້ຂໍ້ມູນທັນເຫດການຂຶ້ນມາ : ການແລກປ່ຽນທັດສະນະ ແຮ່ງຕ້ອງເຂັ້ມຂຸ້ນກວ່າ, ຂໍ້ກົກຽງຕ້ອງມີຊີວິດຊີວາ ຕົວຈິງ ມີຄວາມເປັນເພື່ອນລົ້ງແກວ່ນບວກເຂົ້າມາ ແລ້ວຍັງມີຄວາມນັບຖືໃນວິຊາການຂອງກັນແລະກັນຕື່ມອີກ. ຍັງມີຫລາຍຂໍ້ທີ່ພວກເຮົາຂັດແຍ່ງກັນແຕ່ ປີ 1969 ແຕ່ແລ້ວກໍລົງທ້າຍນຳກັນວ່າ ເທື່ອນີ້ຈະຕ້ອງປັບປຸງຂໍ້ມູນໃຫ້ທັນເຫດການເທົ່ານັ້ນ. ສ່ວນຈຸດບົກບາງຕ່າງໆ ຍ່ອມມີຢູ່ ແຕ່ນີ້ກໍເປັນປຶ້ມທີ່ຂຽນໄດ້ດີທີ່ສຸດແລ້ວ ດີກວ່າຈະຂຽນຄົນດຽວ.

ໃນການກວດແກ້ຄືນ ເພື່ອພິມຄັ້ງທີ 2 ນີ້ ພວກເຮົາໄດ້ຕົກລົງໃຈ ຮັບເອົາຜູ່ຊ່ຽວຊານປະຫວັດສາດປະເທດ*ພະມ້າ*ເຂົ້າມາຮ່ວມ ເປັນກຸ່ມນຳກັນ. *ທ່ານ ໂຣເບີດ ເທເລີ* ຕັດສິນໃຈມາເຂົ້າກັບພວກເຮົາ; ໄດ້ຈັດໃຫ້ມີທຶນກ້ອນນ້ອຍນຶ່ງ ເພື່ອການເດີນທາງໄປເກັບກຳຂໍ້ມູນ ຈາກຄະນະກຳມະການຮ່ວມ ເພື່ອອາຊີຕາເວັນອອກສຽງໃຕ້ ຂອງສະຖາບັນຄົ້ນຄວ້າ ວິທະຍາສາດສັງຄົມ (SSRC) ແລະທຶນຈາກ American Council of Learned Societies ເພື່ອຈັດຕັ້ງກອງປະຊຸມ ຢູ່ Ithaca ເປັນເວລານຶ່ງອາທິດ ໃນເດືອນພຶດສະພາ 1986. ພວກເຮົາໄດ້ຂຽນຄືນໃຫມ່ນຳກັນ ເກືອບທັງຫມົດພາກທີ 5 ແລະຮຽບຮຽງບ່ອນອ້າງອີງຄືນໃຫມ່; *ທ່ານ ເທເລີ* ເປັນຜູ່ຂຽນບົດທີ່ກ່ຽວກັບ *ພະມ້າ* ; ພວກເຮົາກໍໄດ້ກວດກາແປງຄືນ ບົດທີ 1, 2, 5 ແລະ 8. ໂດຍອີງໃສ່ກອງປະຊຸມທີ່ *ອິທາກາ ທ່ານ ແຊມຄະເລີ* ແລະ *ເທເລີ* ໄດ້ຂຽນຄືນໃຫມ່ ບົດທີ 40, ສ່ວນ *ທ່ານ ໄວແອັຕ* ຂຽນຄືນບົດທີ 32. ພວກເຮົາຂໍຂອບໃຈຕໍ່ຄະນະກຳມະການຮ່ວມ ດ້ານອາຊີອາຄະເນ ແລະ ຜູ່ຢູ່ *ອິທາກາ* ທຸກຄົນ ທີ່ໄດ້ຊ່ອຍວຽກງານນີ້ ຈົນເປັນຮູບຮ່າງຂຶ້ນມາ ຂໍຂອບໃຈພາກວິຊາປະຫວັດສາດແຫ່ງມະຫາວິທະຍາໄລ

ຄໍແນລ, ທ່ານ ສະຕີຟ ໂຣເຈີ ແລະ ຈິຣະນັນ ປະເສີດກຸລ. ສ່ວນ ນາງ ດາມາຣິສ ເກີຊໂຣເຟີ ມະຫາວິທະຍາໄລຮາວາຍ ຊຶ່ງຊ່ອຍຈັດສົ່ນເອົາປຶ້ມສະບັບທີ 1 ເຂົ້າພິມ, ມາໃນຊຸດນີ້ ປຶ້ມຫົວ ນີ້ກໍຄົງບໍ່ເກີດ ກ້າຫາກນາງບໍ່ຊຸກຍູ້ ອົດທົນ ທັງໃຫ້ຄຳແນະນຳຕື່ມ.

ທີ່ເມືອງອິຫາກາ
ມັງກອນ 1987

ບົດນຳ

ຕະຫລອດເວລາສອງສະຕະວັດ ທີ່ຜ່ານມາ ຜົນຈາກກຳລັງຄວາມສາມາດຂອງ ມະນຸດ ທາງດ້ານວິວັດທະນາການ ວິທະຍາສາດ, ອຸດສະຫະກຳ ແລະການຕໍ່ສູ້ກູ້ຊາດ ໄດ້ເຮັດໃຫ້ສັງຄົມຂອງຊາວອາຊີຕາເວັນອອກສຽງໃຕ້ ມີການປ່ຽນແປງ ຢ່າງລ້ຳເລິກ ຂະ ບວນການປ່ຽນແປງດັ່ງກ່າວ ໄດ້ດຳເນີນຕໍ່ເນື່ອງກັນມາ ຢ່າງບໍ່ທ້ໍຖອຍນັບແຕ່ກາງສະຕະວັດ ທີ 18, ເມື່ອຊາວ *ຢູຣົບ* ທີ່ອາໄສຢູ່ໃນພາກພື້ນ ໄດ້ເຂົ້າມາມີອຳນາດແລະກຳນົດກົດເກນ ທາງດ້ານ ວິຊາການ ແລະທັດສະນະ ຂອງໂລກໃຫມ່ ໃຫ້ແກ່ຄົນອື່ນ. ແຕ່ວ່າ, ຂະບວນການ ທີ່ເຂັ້ມແຂງ ຂອງ*ຊາວຕາເວັນຕົກ* ດັ່ງກ່າວ ໃຊ້ການໄດ້ພຽງສ່ວນຫນຶ່ງ ໃນການເຊື່ອງຊ້ອນ ຄວາມເປັນມາ ຂອງປະຫວັດສາດທີ່ແທ້ຈິງຂອງ ຊາວອາຊີຕາເວັນອອກສຽງໃຕ້, ອັນນີ້ກໍ ຍ້ອນວ່າ ໄດ້ມີນັກປະຫວັດສາດຫລາຍທ່ານ ເກີດຄວາມສົນໃຈຈາກສິ່ງກະຕຸ້ນ ທີ່ມາຈາກ ພາຍນອກ ໃນການສູນຫາຍໄປ ຂອງການສຶກສາ ປະເພນີດັ້ງເດີມ ຂອງສະຖາບັນ ຊາວພື້ນ ເມືອງ. ຊາວຕ່າງດ້າວ ໄດ້ຍົກລະດັບຖານະຂອງເຂົາເຈົ້າຂຶ້ນ ໃຫ້ເປັນນັກສະແດງ ໃນເວທີທົ່ວ ໄປ ຂອງອາຊີຕາເວັນອອກສຽງໃຕ້ ເຊິ່ງໄດ້ເຮັດໃຫ້ບົດບາດການສະແດງ ຂອງ ຊາວອາຊີຕາ ເວັນອອກສຽງໃຕ້ ຫລຸດລົງເຫລືອພຽງຫນ້ອຍດຽວ, ແລະອ່ອນແອເກີນໄປ ຈົນໄດ້ປ່ອຍໃຫ້ ເຫັນແຕ່ຄວາມສະຫລາດສະຫລຽວ ຂອງຊາດສີວິໄລອື່ນໆ. ທີ່ຈິງແລ້ວ ຊາວອາຊີຕາເວັນ ອອກສຽງໃຕ້ ໄດ້ປະເຊີນກັບສິ່ງທີ່ທ້າທາຍໃນທຳນອງດຽວກັນນີ້ ໃນສະໄຫມກ່ອນຫນ້ານີ້ແລ້ວ ບາງທີໄດ້ມີການປະຕິສຳພັນກັບວັດທະນະທຳ ທີ່ຫລາກຫລາຍ ຈາກພາຍນອກ ມາເປັນເວ ລາອັນຍາວນານ ກວ່າຂົງເຂດອື່ນໃນໂລກ. ຈາກຂໍ້ໄດ້ປຽບຂອງ ຊາວອາຊີຕາເວັນອອກສຽງ ໃຕ້ດັ່ງກ່າວ, ສິ່ງທີ່ສຳຄັນຂອງປະຫວັດສາດ ໃນສອງສັດຕະວັດທີ່ ຜ່ານມາ ບໍ່ແມ່ນ *ຄວາມ ທັນສະໄຫມ* ແລະ *ການເປັນຕາເວັນຕົກ* ດັ່ງທີ່ມີການກຳນົດໄວ້ແລ້ວ. ແຕ່ຫາກແມ່ນຂະບວນ ການປ່ຽນແປງ ທາງດ້ານວັດທະນະທຳ ເຊິ່ງເຂົາເຈົ້າຕ້ອງໄດ້ຜ່ານ ການປັບຕົວເຂົ້າສູ່ສັງ ຄົມໃນສະພາບແວດລ້ອມ ແລະສະຖານະການທີ່ມີການປ່ຽນແປງນັ້ນ ຫລາຍກວ່າ.

ການປ່ຽນແປງທາງດ້ານສັງຄົມ ບໍ່ແມ່ນເກີດຂຶ້ນແບບນາມມະທຳ. ວິວັດທະນາ ການດ້ານຄຸນຄ່າ ແລະການກຳເນີດຂອງປະເພນີສັງຄົມ ແມ່ນຄວາມສະຫລັບສັບຊ້ອນແບບ ສັງລວມຈາກ ການສະແດງອອກ ແລະການຕັດສິນໃຈ ຂອງມະນຸດລາຍບຸກຄົນ. ການປ່ຽນ ແປງນັ້ນ ແມ່ນເກີດຂຶ້ນໃນຊຸມຊົນ ຍ້ອນປະຊາຊົນມີການປະຕິສຳພັນ ກັບຊຸມຊົນທີ່ຢູ່ອ້ອມຂ້າງ ພວກເຂົາ ເຊິ່ງບາງຄັ້ງກໍມີສະຕິຍັ້ງຄິດ ແລະ ບາງຄັ້ງກໍບໍ່ມີ ບາງຄັ້ງວິທີການແບບໃຫມ່ໆ ກໍໄດ້ຖືກປັບປຸງຂຶ້ນ ຍ້ອນມີການດຶງດູດ ດ້ວຍການໃຫ້ຮາງວັນຕອບແທນ ແຕ່ກໍມີບາງຄັ້ງ ທີ່ ປະຊາຊົນຖືກບັງຄັບໃຫ້ ຍອມຮັບເອົາການປ່ຽນແປງ ດ້ວຍຮູບການບັງຄັບ ທີ່ເລິກແລບແນບ ນຽນ. ການແຜ່ຂະຫຍາຍຂອງບັນດາແນວຄຶດ ແລະ ການພັດທະນາຂອງປະເພນີ ຄ່ອຍໆມີ ຄວາມກ້າວໜ້າຂຶ້ນ ເລີ່ມຕົ້ນຈາກການເຂົ້າຮ່ວມຂອງບຸກຄົນສຳຄັນ ແລະ ຈາກນັ້ນຄ່ອຍໆ ກະຈາຍກວ້າງອອກ ໄປສູ່ມະຫາຊົນ. ແຕ່ເນື່ອງຈາກຍາມໃດ ກໍມີຫລາຍທັດສະນະຄະຕິ, ແລະ ເນື່ອງຈາກຮູບແບບສັງຄົມ ຍາມໃດກໍມີການປ່ຽນແປງຢູ່ຕະຫລອດເວລາ, ສະນັ້ນ ຈຶ່ງບໍ່ ສາມາດຄາດຄະເນ ຄວາມເປັນອັນໜຶ່ງອັນດຽວກັນ ຂອງສັງຄົມທັງໝົດ. ຄຳວ່າ *"ໃຫມ່"* ແລະ *"ເກົ່າ"*, *"ຮີດຄອງປະເພນີ"* ແລະ *"ທັນສະໄຫມ"*, *"ຄົນຕ່າງດ້າວ"* ແລະ *"ທ້ອງຖິ່ນ"* ແມ່ນບໍ່ສາມາດຫົດແທນກັນໄດ້ ພຽງແຕ່ສືບເນື່ອງກັນ ໃນການດຳລົງຊີວິດຕົວຈິງ, ມະນຸດ ຈະປັບຕົວເຂົ້າກັບສະພາບແວດລ້ອມ ທີ່ອາໄສຢູ່ໂດຍທຳມະຊາດ ດ້ວຍການນຳໃຊ້ຄວາມຄຶດ ແລະ ປະເພນີທີ່ມີຢູ່ອ້ອມແອ້ມເຂົາເຈົ້າ ໃຫ້ເປັນປະໂຫຍດ. ຫນ້ອຍເທື່ອທີ່ພວກເຂົາ ຈະສັງ ເກດເຫັນຄວາມບໍ່ສອດຄ່ອງ ອັນທີ່ຄົນພາຍນອກເຫັນໄດ້ຈະແຈ້ງ. ສຳລັບ*ຊາວມຸດສະລິມ*ຈາກ ບ່ອນອື່ນໆ, ມີ *"ຄວາມເຊື່ອຖື ທີ່ປະຕິບັດກັນ ມາຕັ້ງແຕ່ເດີມ"* ຈາກການເຝິກຝົນຫລໍ່ຫລອມ ດ້ວຍຕົນເອງ ແລະ ຈາກປະເພນີຈະເຫັນວ່າ *ຊາວມາເລ ມຸດສະລິມ* ເບິ່ງຄືເປັນຄົນງ່າຍໆ ໂດຍທົ່ວໄປແລ້ວ *ຊາວມາເລ* ບໍ່ເຫັນວ່າ ຈະມີບັນຫາໃນການສະແດງຄວາມສັດທາ ຫລື ປະນີ ປະນອມ ຕາມຄວາມຕ້ອງການກັບວັດທະນະທຳ ແລະ ສັງຄົມອື່ນ ສະນັ້ນ, ທັດສະນະວິໄສນີ້ ຈຶ່ງເປັນການແລເຫັນທີ່ແຫລມຄົມ. *ຊາວອິນເດຍ, ອາຫລັບ, ຫລື ຈີນ* ຜູ່ເຫັນວັດທະນະທຳ ຂອງອາຊີຕາເວັນອອກສຽງໃຕ້ ປຽບສະເໝືອນດັ່ງ ການຂະຫຍາຍຕົວຂອງຄວາມສີວິໄລ

ຂອງພວກເຂົາເອງ ໄດ້ຕີຄວາມຫມາຍການປ່ຽນແປງຂອງປະເພນີທ້ອງຖິ່ນ ປຽບເຫມືອນ ດັ່ງການກະທຳທີ່ອອກນອກລະບົບຮີດຄອງອັນມີຄຸນຄ່າຂອງເຂົາເຈົ້າ. ເຊັ່ນດຽວກັນນີ້, ບັນ ດາຜູ່ສັງເກດການ *ຊາວຕາເວັນຕົກ* ທີ່ພວມຊອກຫາ ຄວາມຄ້າຍຄືຂອງຊາວອາຊີຕາເວັນ ອອກສຽງໃຕ້ ກັບເຂົາເຈົ້າ ເລີຍເຫັນວ່າ ມີການແບ່ງແຍກເຊື້ອຊາດ ແລະວັດທະນະທຳ ຢູ່ໃນອາຊີຕາເວັນອອກສຽງໃຕ້ ເປັນເວລາຕັ້ງດົນນານ. ຫນ້າທີ່ຂອງນັກປະຫວັດສາດ ຍິ່ງມີ ຄວາມຫຍຸ້ງຍາກຕື່ມ ໃນການຕັດສິນຄຸນຄ່າ ແລະຈິດໃຕ້ສຳນຶກ ທີ່ເປັນອະຄະຕິ ຕໍ່ສິ່ງມູນ ການດັ່ງກ່າວ. ປຶ້ມຫົວນີ້ມີຄວາມຫມາຍຫມັ້ນ ທີ່ຈະນຳສະເຫນີສັງຄົມ ໃນອາຊີຕາເວັນອອກ ສຽງໃຕ້ ໃຫ້ເປັນແຕ່ລະເຊື້ອຊາດ ແລະແຕ່ລະຂົງເຂດ ໃຫ້ເປັນລັກສະນະສະເພາະ ຂອງ ໃຜລາວ.

ການຕິດຕໍ່ພົວພັນ ທາງວັດທະນະທຳ ມີການປ່ຽນແປງທີ່ ເກີດຂຶ້ນເອງໂດຍທຳມະ ຊາດ. ໃນຂະບວນການກ່າຍທອດແລະຕີຄວາມຈຳຕ້ອງ ກວມເອົາທັງເງື່ອນໄຂ ຄຸນຄ່າ ແລະ ສະຖາບັນຂອງວັດທະນະທຳທ້ອງຖິ່ນ ຈະປ່ຽນຮູບ ໂຄງຮ່າງທີ່ເປັນນາມມະທຳ ແລະ ໂຄງ ສ້າງທີ່ເປັນລັກສະນະສະເພາະ. ບໍ່ວ່າຄວາມຫມາຍດັ້ງເດີມ ຂອງຄຳສັບ ຫລື ປະເພນີຈະເປັນ ແນວໃດກໍຕາມ ມັນຖືກບັງຄັບໃຫ້ມີການປ່ຽນແປງໄປຕາມຮູບການຈັດຕັ້ງໃຫມ່. ຍົກຕົວຢ່າງ, ຄຳວ່າ *"ປະຊາທິປະໄຕແບບຊີ້ນຳ"*, ສາມາດເປັນທີ່ເຂົ້າໃຈໄດ້ ກໍຕໍ່ເມື່ອບຸກຄົນຜູ່ນັ້ນ ມີຄວາມ ຊື່ນຊົມ ທ່ານ *ສຸກາໂນ* (Sukarno) ແລະ ຮູບແບບສັງຄົມຂອງ*ອິນໂດນີເຊຍ* ໃນຊຸມປີ ຄ.ສ 1950 ແລະ 1960, ເຊັ່ນດຽວກັບຮູບແບບປະຊາທິປະໄຕໃນ*ຕາເວັນຕົກ*. ອີກຕົວຢ່າງນຶ່ງທີ່ ຄ້າຍຄືກັນນີ້ ແມ່ນຄຳວ່າ *"ສັງຄົມນິຍົມແບບພຸດ"* ເຊິ່ງຄັ້ງນຶ່ງເຄີຍໃຊ້ໃນ *ພະມ້າ* ແລະ *ກຳປູ ເຈຍ*. ຕາມທັດສະນະຂອງອາຊີຕາເວັນອອກສຽງໃຕ້, ຄວາມເປັນຮູບແບບສະບັບດັ້ງເດີມ ບໍ່ມີ ຄວາມສຳຄັນເທົ່າຄວາມຫມາຍຢູ່ໃນທ້ອງຖິ່ນ ເຊັ່ນດຽວກັນ ຜູ່ຊາຍທີ່ເຄື່ອນໄຫວ ໃນອາຊີຕາ ເວັນອອກສຽງໃຕ້ ມີຕົ້ນກຳເນີດມາຈາກ *ຣ່ອງກົງ, ກັລກັດຕາ* (Calcutta) ຫລື *ອຳສະເຕີດຳ*

(Amsterdam) ນັ້ນບໍ່ສຳຄັນເລີຍ. ທະເລຍມລາວສາມາດປັບໂຕໃຫ້ເຂົ້າກັບສະພາບທ້ອງຖິ່ນ. ເຖິງແມ່ນວ່າ ພໍ່ຄ້າ *ຊາວຈີນ ສິງກະໂປ* ຈະມີການພົວພັນ ທາງທຸລະກິດກັບທາງ *ກວາງຕຸ້ງ* (Canton),ຜູ່ທີ່ເຄີຍບັນຊາກອງທັບເຮືອ *ຝຣັ່ງ* ໃນ *ຫວຽດນາມ* ເປັນພາກສ່ວນນຶ່ງ ໃນກິດຈະການຂອງຈັກກະພັດ ທີ່ມີສຳນັກງານໃຫຍ່ຢູ່ *ປາຣີສ* ພວກເຂົາກໍຕ້ອງປະພຶດຕົນ ເປັນຄົນໃນປະຫວັດສາດຂອງ ອາຊີຕາເວັນອອກສຽງໃຕ້.

ການປ່ຽນແປງວັດທະນະທຳ ບໍ່ແມ່ນການພັດທະນາແບບເສັ້ນຊື່ທີ່ງ່າຍດາຍ; ການປະຕິສຳພັນຂອງມະນຸດ ເກີດຂຶ້ນໂດຍຫລາຍເສັ້ນທາງ. ມັນບໍ່ແມ່ນການງ່າຍ ທີ່ຮູບແບບຮີດຄອງປະເພນີອັນໃຫມ່ຈະເຂົ້າແທນທີ່ ຮີດຄອງປະເພນີອັນເກົ່າ ທີ່ກໍ່ຕົວຂຶ້ນແລ້ວ. ຮູບແບບອັນໃຫມ່ນັ້ນ ຈະເປັນທີ່ຍອມຮັບໄດ້ກໍຕໍ່ເມື່ອວ່າ ມັນສາມາດ ກົມກືນເຂົ້າໃນໂຄງປະກອບສັງຄົມໄດ້ເປັນຢ່າງດີ ແລະ ກໍມີການຕໍ່ສູ້ແຂ່ງຂັນກັບຝ່າຍທີ່ຕໍ່ຕ້ານ. ລະດັບ ແລະ ລັກສະນະການປ່ຽນແປງ ຈະຖືກກຳນົດດ້ວຍ ປະເພນີອັນເຂັ້ມແຂງທີ່ມີຢູ່; ການຍອມຮັບຂອງສັງຄົມ ຕໍ່ແນວຄຶດໃຫມ່, ພະລັງ, ສະຕິປັນຍາ ໃນແບບສະບັບໃຫມ່ ໂດຍປະຊາຊົນ ດ້ານກາຍະພາບ ຜູ່ສືບທອດສິ່ງເຫລົ່ານັ້ນ ແລະການລົງຕົວລະຫວ່າງຄຸນຄ່າໃຫມ່ ແລະ ເກົ່າ. ມີບາງປະເພນີ ເບິ່ງຄືຖືກພັດທະນາ ແບບເສັ້ນທາງດຽວ ແຕ່ທັນໃດນັ້ນ ກໍແຕກແຍກອອກ ເປັນສາຂາ ບາງປະເພນີຊ້ຳຜັດເປື່ອຍເຍື່ອຍເສື່ອມໂຊມ ຫລືບໍ່ກໍມີການເຄື່ອນໄຫວຫນ້ອຍ ບາງປະເພນີມີຄຸນຄ່າ ກໍສະຫລາຍສູນຫາຍໄປຍ້ອນ ຖືກທັບກົມຊ່ວງເສັງ ສ່ວນປະເພນີອື່ນໆ ກໍສືບຕໍ່ພັດທະນາ ປ່ານກັບວ່າບໍ່ມີອຸປະສັກໃດໆ ແຕ່ສ່ວນຫລາຍປະເພນີ ແລະ ຄຸນຄ່າທີ່ເຂັ້ມແຂງ ມັກຈະຕົກເປັນເຍື່ອກ່ອນໃຜ.

ຂໍ້ສັງເກດກ່ຽວກັບສັງຄົມ ແລະການປ່ຽນແປງເຫລົ່ານີ້ ເປັນຄຳຕອບສຳຄັນອັນນຶ່ງ ໃຫ້ແກ່ ປະຫວັດສາດອາຊີຕາເວັນອອກສຽງໃຕ້ ສ່ວນມິຕິທີສອງ ແມ່ນກຳເນີດ ຈາກສະພາບແວດລ້ອມຂອງດ້ານພູມສາດ ແລະພູມອາກາດ. ຄວາມຜູກພັນລະຫວ່າງຜືນແຜ່ນດິນ ແລະຄົນ, ຄວາມສົມດູນ ຂອງລະບົບນິເວດວິທະຍາທົ່ວໄປ ແລະສ່ວນເຫລືອ ຈາກຂອບເຂດ

ກໍ່ຖືກຈັດເປັນບຸລິມະສິດໃນການດຳລົງຊີບ ຂອງຊາວອາຊີຕາເວັນອອກສຽງໃຕ້. ໃນສະໄຫມ ຜ່ານມາ, ສັງຄົມ ໃນອາຊີຕາເວັນອອກສຽງໃຕ້ ສ່ວນຫລາຍບໍ່ໄດ້ພົບຄວາມຫຍຸ້ງຍາກ ຍ້ອນບັນຫາພົນລະເມືອງລົ້ນ ຕ່າງກັບ*ຈີນ* ແລະ *ອິນເດຍ*. ປະຫວັດສາດ*ຈີນ* ແລະ *ອິນເດຍ* ໄດ້ດິ້ນຮົນໃນການສ້າງລະບົບສັງຄົມ ທີ່ສາມາດໃຫ້ຜະລິດຕະພາບສູງສຸດ ເພື່ອຫລຸດຜ່ອນ ຄວາມອຶດຫິວ. ຊາວອາຊີຕາເວັນອອກສຽງໃຕ້ ບໍ່ຕ້ອງຕໍ່ສູ້ກັບຄວາມອຶດຢາກພໍປານໃດ ໂດຍ ທຳມະດາ ຍົກເວັ້ນຢູ່*ເກາະ ຊະວາ* ແລະ ທາງ*ພາກເໜືອຂອງຫວຽດນາມ*.

ອາຊີຕາເວັນອອກສຽງໃຕ້ ຖືກຂະໜານນາມວ່າ ເປັນດິນແດນພາກໃຕ້ ຂອງ*ຈີນ* ແລະ ພາກຕາເວັນອອກຂອງ*ອິນເດຍ*. *ຊາວຈີນ* ແລະ *ຍີ່ປຸ່ນ*ຮູ້ກັນດີໃນນາມ*ທະເລໃຕ້* (*ນານ ຢາງ* ແລະ *ນາມໂປ Nanyang and Nampo*), ຄົນເອີ້ນເຂດນີ້ວ່າ *ອາຊີຕາເວັນອອກສຽງ ໃຕ້* ຫວ່າງໜ່ຶງມານີ້ເອງ. ໃນລະຍະສົງຄາມໂລກຄັ້ງ ທີ່ສອງ, ຄຳເວົ້ານີ້ຖືກໃຊ້ເປັນຊື່ເວທີ ຂອງສົງຄາມ ບັນຊາໂດຍ ເຈົ້າສັກດິນາ *ລຸຍ ມາວບາຕັນ (Louis Mountbatten)*, ແລະ ເປັນທີ່ຮູ້ຈັກຢ່າງກວ້າງຂວາງ ໃນລະຍະສົງຄາມ*ຫວຽດນາມ* ໃນຊຸມປີ ຄ.ສ. 1960 ຫາ1970. ມັນກວມເອົາປະເທດ ທີ່ມີຊື່ທາງດ້ານການເມືອງສະເພາະວ່າ: *ສາທາລະນະລັດ ສັງຄົມນິ ຍົມ ສະຫະພາບມຽນມ້າ, ຣາຊະອານາຈັກໄທ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ, ສາທາລະນະລັດ ປະຊາຊົນ ກຳປູເຈຍ, ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ, ສະມາພັນທະລັດ ມາເລເຊຍ, ຣາຊະອານາຈັກ ສຸລະຕານ ແຫ່ງ ບຣູໄນ, ສາທາລະນະລັດ ອິນໂດນີເຊຍ, ສິງກະໂປ* ແລະ *ຟີລິບປິນ*. ໄດ້ມີການຖົກຖຽງກັນ ໃນເລື່ອງການຂະຫຍາຍຄຳນິ ຍາມນີ້ ເພື່ອກວມເອົາປະເທດອື່ນໆ ຍ້ອນເຫດຜົນທາງສາສະໜາ, ຊົນເຜົ່າວິທະຍາ, ພາສາ ສາດ, ຫລື ແຜນພູມີພາກຂອງປະເທດ ໃຫ້ເປັນທີ່ແນ່ນອນ ເຊັ່ນ ປະເທດ *ໄຕ້ຫວັນ, ໄຫຫລຳ, ຫລື ສີລັງກາ* ຫລື ຕົກລົງກັນເປັນລາຍລັກອັກສອນ ແຕ່ກໍເປັນທີ່ຍອມຮັບໂດຍທົ່ວໄປ ຕາມ ທີ່ກ່າວມາແລ້ວ. ດັ່ງໄດ້ກຳນົດໄວ້, ອາຊີຕາເວັນອອກສຽງໃຕ້ ມີປະຊາກອນປະມານນຶ່ງ

ສ່ວນສາມຂອງນຶ່ງພັນລ້ານຄົນ ອາໄສຢູ່ເທິງດິນແດນ ທີ່ກວມເອົາເນື້ອທີ່ 1.5 *ລ້ານ ຕາໄມລ*ˊ (ເນື້ອທີ່ເປັນSquare mile ນ້ອຍກວ່າອະນຸທະວີປ*ອິນເດຍ*ຫນ້ອຍນຶ່ງ). ແຜ່ນດິນໃຫຍ່ຂອງ ອາຊີ ກວ່າເຄິ່ງນຶ່ງ ແລະສ່ວນທີ່ເຫລືອ ກໍແຕກອອກເປັນ ເກາະຄອນ ພັນໆແຫ່ງ ເຊັ່ນ ຫມູ່ ເກາະ *ອິນໂດນີເຊຍ* ແລະ *ຟີລິບປິນ* ແຕ່ວ່າ, ປະຊາກອນຫລາຍກວ່າເຄິ່ງ ຊໍ້າຜັດອາໄສຢູ່ ເທິງຫມູ່ເກາະດັ່ງກ່າວ.

ກ້າວ່າ ນັກທ່ອງທ່ຽວຄົນນຶ່ງ ໄດ້ເດີນທາງມາທົ່ວອາຊີຕາເວັນອອກສຽງໃຕ້ ຈາກ ສົ້ນນຶ່ງໄປຮອດອີກສົ້ນນຶ່ງ ຈະສັງເກດເຫັນໄດ້ເຖິງ ຄວາມຄ້າຍຄືກັນຂອງພືດພັນ ແລະ ສັດສະ ເພາະເຂດ, ດິນຟ້າອາກາດແລະການປູກຝັງຂອງມະນຸດ. ໃນຂະນະທີ່ພາສາແລະ ສະຖາປັດ ຕະຍະກໍາ ມີຄວາມແຕກຕ່າງກັນ ແຕ່ມີສິ່ງນຶ່ງທີ່ຍັງຄືກັນຢູ່ ນັ້ນຄືການເຮັດນາບ້ໍາຝົນ ແລະ ເຮັດໄຮ່ເລື່ອນທີ່ ເພື່ອການກະສິກໍາ ທີ່ຍັງປະຕິບັດຕາມຮູບແບບເດີມ ນັບແຕ່ *ພະມ້ໍາ* ຈົນຮອດ *ບາຫລີ*. ການທ່ອງທ່ຽວໃນແຜ່ນດິນໃຫຍ່ ບ່ວ່າຕາເວັນອອກ ຫລື ໃຕ້, ອາດຈະເລີ່ມຈາກປາກ ແມ່ນ້ໍາໄປຫາພູ ແລະ ສັນພູຊາຍຝັ່ງທະເລ ໄປຍັງແມ່ນ້ໍາຕາມຮ່ອມພູ ແລະ ຈາກນັ້ນ ກໍຂ້າມ ແມ່ນ້ໍາຕາມຮ່ອມພູ ແລະສັນພູເຂົ້າເປັນຕອນໆໄປ ຈົນກວ່າຈະຮອດປາກແມ່ນ້ໍາອີກຟາກ ເບື້ອງນຶ່ງ. ມີສິ່ງນຶ່ງທີ່ສັງເກດໄດ້ວ່າ ສັນພູທັງຫລາຍໄດ້ກືກນໍາມາເປັນຕົວກໍານົດຂອບເຂດ ທາງດ້ານການເມືອງ ແລະ ແມ່ນ້ໍາ ຕາມຮ່ອມພູ ແມ່ນເຂດດິນດີທີ່ມີຄວາມສີວິໄລ. ບ່ອນໃດ ທີ່ມີແຫລ່ງນ້ໍາອຸດົມສົມບູນ ບ່ອນນັ້ນກໍພົບການເຮັດນາ; ບ່ອນໃດທີ່ຂາດແຄນນ້ໍາ ບ່ອນນັ້ນກໍ ປະກົດວ່າມີການສ້າງຕັ້ງຊຸມຊົນຫນ້ອຍ ແລະ ການປູກຝັງກໍບໍ່ຫນາແຫນ້ນ. ຮູບແບບຄ້າຍຄື ກັນນີ້ ຈະພົບເຫັນໄດ້ ຕະຫລອດທົ່ວຫມູ່ເກາະ ຍິ່ງໄປກວ່ານັ້ນ, ຜູ່ທີ່ເຄີຍໄປມາແລ້ວ ຈະສັງ ເກດເຫັນເຖິງຄວາມສໍາຄັນຂອງ ລົມມໍລະສຸມ ຕໍ່ກັບການດໍາລົງຊີວິດຕາມລະດູການ ຂອງປະ ຊາຊົນ .

ອາຊີຕາເວັນອອກສຽງໃຕ້ນອນຢູ່ໃນເຂດຮ້ອນຊຸ່ມ ທັງສອງເບື້ອງຂອງເສັ້ນສູນສູດ. ສ່ວນຫລາຍແຖບເຂດຮ້ອນ ຈະຮັບຮູ້ກັນວ່າ ເປັນເຂດດິນທີ່ມີຄວາມສວຍງາມ ແລະ ອຸດົມສົມ

ບູນ ໂດຍຕະຫລອດ ທີ່ເຫັນໄດ້ແຈ້ງ ກໍຄືຄວາມອຸດົມສົມບູນຂອງເຄື່ອງປູກຂອງຝັ່ງ. ເຖິງວ່າ ຈະເປັນເຂດທີ່ມີດິນດີ ຍ້ອນການລະເບີດຂອງພູເຂົ້າໄຟ ເຊັ່ນ ຢູ່ ຊະວາ ແລະ ການທັບຖົມຂຶ້ນ ຂອງຊັ້ນດິນ ທີ່ນ້ຳພັດມາ ເຊັ່ນ ຕາມປາກແມ່ນ້ຳຂອງ ແຕ່ຫມາກຜົນທີ່ແທ້ຈິງ ໃນເຂດດັ່ງ ກາວ ແມນມາຈາກ ຂະບວນການຈະເລີນເຕີບໂຕຂອງພືດ ດ້ວຍການສັງເຄາະແສງ ແທນທີ່ ຈະມາຈາກ ທາດເຄມີໃນດິນ. ໃນຂົງເຂດນີ້ ຄວາມສົມບູນຂອງລະບົບນິເວດວິທະຍາ ຍັງບໍ່ ມີຄວາມຫມັ້ນຄົງ ໂດຍສະເພາະ ຢູ່ແຖບປ່າເຂດຮ້ອນ ທີ່ມີຝົນຕົກຫນັກ, ບ່ອນທີ່ປ່າໄມ້ໄດ້ຮັບ ອາຫານ ຈາກການເນົ່າເປື່ອຍຂອງພືດ ຢ່າງໄວວາ. ປ່າໄມ້ເປັນເຮືອນຮ້ອນ ເຊິ່ງເປັນບ່ອນ ເລັ່ງວົງຈອນ ຄວາມເປັນໄປທາງທຳມະຊາດ ໄດ້ເປັນຢ່າງດີ. ຊັ້ນຫນ້າດິນມີຄວາມຫນາ ພຽງຫນ້ອຍດຽວ, ແຕ່ຈະຊ່ອຍໃຫ້ວົງຈອນການ ເຕີບໂຕຂອງພືດພັນເລັ່ງໄວຂຶ້ນ ເພື່ອຮັກສາ ຄວາມສົມດູນ. ກ້າຫາກພືດທີ່ບໍ່ທັນໄດ້ປະສົມພັນ ຫາກຖືກຕັດ ຫລື ຖືກທຳລາຍ (ເຊັ່ນການໃຊ້ ຢາເຮັດໃຫ້ໃບຫລົ່ນ ໃນ *ຫວຽດນາມ*), ເວລາຝົນຕົກຫນັກດິນດູດຊຶມເອົານ້ຳບໍ່ຫມົດ; ເຮັດໃຫ້ ດິນເຄັມໂພດ ແລະກາຍເປັນດິນທີ່ແຫ້ງແລ້ງ.

ລະບົບນິເວດວິທະຍາທີ່ຜ່ອຍເຜາະ ຢູ່ໃນອາຊີຕາເວັນອອກສຽງໃຕ້ ບໍ່ເຫມາະສົມ ທີ່ ຈະມີປະຊາຊົນຢູ່ຢ່າງຫນາແຫນ້ນ. ມີແຕ່ບ່ອນທີ່ມີລະບົບນິເວດວິທະຍາ ທີ່ເກີດຈາກການທັບ ຖົມຂອງຊັ້ນດິນຕາມແຄມນ້ຳ ຈາກການພັດພາຂອງນ້ຳ ແລະດິນດີ ຈາກການລະເບີດພູ ເຂົ້າໄຟ ທີ່ກາຍມາເປັນສູນກາງ ທີ່ມີປະຊາກອນອາໄສຢູ່ຢ່າງແຫນ້ນຫນາ. ຝົນທີ່ຕົກຫນັກ ແລະດິນພູເຈື່ອນໄດ້ນຳເອົາດິນມະຫາສານ ແລະກາຍເປັນຝຸ່ນມາສູ່ແຄມແມ່ນ້ຳ ເຊັ່ນ *ແມ່ນ້ຳຂອງ, ແມ່ນ້ຳເຈົ້າພະຍາ, ແມ່ນ້ຳອິຣາວະດີ* (Irrawady) ແລະ *ແມ່ນ້ຳແດງ*. ຂະບວນການເຊັ່ນດຽວກັນນີ້ ກໍໄດ້ເກີດຂຶ້ນຕາມແມ່ນ້ຳທີ່ສັ້ນແຕ່ເລິກກວ່າ ໃນເຂດຫມູ່ເກາະ ບ່ອນໃດມີຄວາມຕ້ອງການ ຫລື ມີຊັບພະຍາກອນມະນຸດພຽງພໍ ກໍກົດດັນໃຫ້ປະຊາກອນ ຫລື ກຳມະກອນທີ່ດຸຫມັ່ນ ໄດ້ກຶກວ່າຈ້ຳ ໃຫ້ສ້າງຊົນລະປະທານຂະຫນາດໃຫຍ່ໃສ່ເນື້ອທີ່ ທີ່ເປັນ ຄວາມຫວັງໃນການເຮັດນາສອງລະດູ ແຕ່ກໍບໍ່ກຸ້ມກັບເຮື່ອແຮງທີ່ເສຽໄປ. ມີດິນໃນເຂດປາກ

ແມ່ນ້ຳ ຫລາຍໆແຫ່ງ ທີ່ບໍ່ສາມາດປູກຝັງໄດ້ ຈົນຕົກມາຮອດສະຕະວັດທີ 19, ເນື່ອງຈາກດິນເຫລົ່ານັ້ນ ບໍ່ສາມາດເອົາມານຳໃຊ້ ຖ້າບໍ່ມີລະບົບຊົນລະປະທານ ແລະເຕັກໂນໂລຊີອື່ນ ໆ ເຂົ້າມາຊ່ວຍ ຍົກຕົວຢ່າງ: ປາກແມ່ນ້ຳຂອງ ມີຄົນອາໄສຢ່າງບາງຕາ ຈົນກວ່າມາຮອດສະຕະວັດ ທີ 18, ແລະ ຄຳວ່າ *"ອູ່ເຂົ້າອູ່ນ້ຳ"* ຂອງເຂດປາກນ້ຳ *ພະມ້າ* ແລະ *ໄທ* ກຶກປະໃຫ້ເປົ່າຫວ່າງ ຈົນກວ່າມາຮອດ ສະຕະວັດທີ 18 ເມື່ອຄວາມຮຽກຮ້ອງຕ້ອງການໃນການຜະລິດເຂົ້າສູງຂຶ້ນ.

ລະບົບນິເວດວິທະຍາ ຂອງອາຊີຕາເວັນອອກສຽງໃຕ້ ມີບົດບາດສຳຄັນ ທາງດ້ານປະຫວັດສາດ, ໂດຍສະເພາະມັນມີອິດທິພົນ ຕໍ່ຄວາມສຳພັນລະຫວ່າງ ຄວາມຫນາແໜ້ນ ຂອງປະຊາຊົນ ທີ່ອາໄສຢູ່ໃນເຂດດິນດີ ແລະເຫມາະສົມ ແລະ ຜູ່ທີ່ອາໄສຢູ່ເຂດທີ່ບໍ່ມີຄວາມອຸດົມສົມບູນ. ຍ້ອນຄວາມແຕກຕ່າງຢ່າງຂາດຂັ້ນ ຂອງສອງເຂດ ຄື ເຂດຮາບພຽງ ທີ່ເຫມາະແກ່ການເຮັດນາ ແລະ ເຂດຫລັງຝັ່ງທະເລ ເຫມາະແກ່ການປູກຝັງແບບເຄື່ອນທີ່ ກາງ-ຈູດເຮັດໄຮ່, ຈຶ່ງປາກົດມີຄວາມແຕກຕ່າງກັນທາງດ້ານ ວັດທະນະທຳ ແລະ ສັງຄົມ. ການເຮັດນາໄດ້ເຮັດໃຫ້ມີປະຊາກອນເກີດຂຶ້ນ ຢ່າງຫນາແໜ້ນ ແລະສັງຄົມກໍຮັ່ງມີກວ່າບັນດາເຂດທີ່ບໍ່ເຮັດນາດຳ ກະສັດຜູ່ນິຍົມການກະສິກຳ ເຊັ່ນ *ພະມ້າ, ໄທ, ຫວຽດນາມ, ກຳປູເຈຍ* ແລະ *ຊະວາ* ມີອຳນາດແຜ່ກະຈາຍອອກຈາກເມືອງຫລວງ. ເມື່ອເດີນທາງອອກໄກ ຈາກສູນກາງເມືອງຫລາຍເທົ່າໃດ ອິດທິພົນໃນການປົກຄອງ ກໍຈະຫນ້ອຍລົງເທົ່ານັ້ນ. ກ່ອນສະຕະວັດທີ 19, ສັງຄົມຊາວນາ ບໍ່ຄ່ອຍໄດ້ສ້າງສູນຄວບຄຸມ ໃນເຂດທີ່ຫ່າງອອກໄປ. ເມື່ອໃດທີ່ມີຄວາມພະຍາຍາມ ທີ່ຈະຍຶດຄອງເອົາເຂດດິນທີ່ຕິດຕໍ່ກັນ, ເມື່ອນັ້ນ ຄວາມຂັດແຍ່ງດ້ານພູມສາດກໍເຄັ່ງຕຶງຂຶ້ນ, ຍ້ອນມີອຳນາດເທົ່າທຽມກັນ ຈຶ່ງເຮັດໃຫ້ເກີດໄພເຫລົ່ານີ້. ປະຊາຊົນເທິງເຂດພູດອຍ ທີ່ກຶກຄຸກຄາມ ມັກມາຂໍຄວາມຊ່ວຍເຫລືອ ຈາກຜູ່ທີ່ຢູ່ເຂດທົ່ງພຽງ, ຍ້ອນວ່າກຸ່ມຄົນທີ່ຢູ່ທີ່ເຂດພູດອຍ ສ່ວນຫລາຍມີຄວາມຜູກພັນທີ່ແໜ້ນແຟ້ນ ໄວ້ກັບບ້ານໃກ້ຄຽງ. ສັນຍາປ້ອງກັນຄວາມສະຫງົບສຸກຮ່ວມກັນ ກໍແມ່ນສ່ວນນຶ່ງຂອງປະເພນີ ສິ່ງເຄື່ອງບັນນາການເພື່ອຜູກຮັດຄວາມສຳພັນທີ່ດີ. ໃນບັນດາສັງຄົມຊາວນາມີແຕ່ *ກຳປູເຈຍ* ທີ່ບໍ່ມີເຂດກັ້ນການ

ປະທະ. ການແຜ່ຂະຫຍາຍ ຕຳແໜ່ງທີ່ຕັ້ງດັ່ງກ່າວ ລະຫວ່າງ *ສະຫຍາມ* ແລະ *ຫວຽດນາມ* ໃນທີ່ສຸດກໍ່ກໍ່ກຫຳລາຍລົງ ໂດຍຝ່າຍມີອຳນາດໃຫຍ່ກວ່າ.

ການກຳນົດເອົາເຂດແດນແຫ່ງຊາດ ຕາມແບບແນວຄຶດໃຫມ່ ຂອງ *ຊາວຕາເວັນຕົກ* ບໍ່ມີໃນອາຊີຕາເວັນອອກສຽງໃຕ້ ຈົນມາຮອດສະຕະວັດທີ 19, ແຜນທີ່ຂອງອາຊີຕາເວັນອອກສຽງໃຕ້ ໃນສະຕະວັດທີ 18 ບໍ່ມີຫຍັງຄ້າຍຄືກັບຢູ່ໃນແຜນທີ່ *ຢູຣົບ* ໃນ ຄ.ສ 1764, ຊຶ່ງມີ *ພະມ້າ* ແຕ່ *ສະຫຍາມ* ຢູ່ອີກສົ້ນນຶ່ງ ແລະ *ຫວຽດນາມ* ເປັນພາກສ່ວນທີ 3. ອາຊີຕາເວັນອອກສຽງໃຕ້ ບໍ່ຄ່ອຍໃຫ້ຄວາມສົນໃຈກ່ຽວກັບການກຳນົດດິນແດນ, ຍົກຕົວຢ່າງ: ຄວາມບໍ່ລົງຮອຍຂອງສົງຄາມ ລະຫວ່າງ *ຫວຽດນາມ* ແລະ *ລາວ* ໃນສະຕະວັດທີ 17, ມັນໄດ້ແກ້ໄຂເມື່ອ *ຈັກກະພັດ ເລ* (Le) ຂອງ*ຫວຽດນາມ* ແລະ *ເຈົ້າຊີວິດລາວ* ຕົກລົງກັນແບບງ່າຍດາຍວ່າ ໃຫ້ຜູ່ອາໄສເທິງຮ່ອມພູແມ່ນ້ຳຂອງ ທີ່ຢູ່ເຮືອນຮ້ານ ມີເສົາ ຈົ່ງຮັກພັກດີຕໍ່*ລາວ*, ສ່ວນຜູ່ທີ່ຢູ່ເຮືອນຈຸພື້ນດິນ ໃຫ້ຈົ່ງຮັກພັກດີຕໍ່ *ຫວຽດນາມ*. ມີແຕ່ຫວ່າງຫມໍ່ໆມານີ້ເທົ່ານັ້ນທີ່ ຜູ່ກຳອຳນາດດິນແດນທີ່ປົກຄອງກັນມາຕາມປະເພນີເກົ່າແກ່ ຫາກໍຫາທາງທີ່ຈະສ້າງແນວຄຶດທັນສະໄຫມໃຫ້ຄົນຂອງຕົນ ມີແນວຄຶດຊາດ ໃນການຢູ່ຮ່ວມກັນ ມັນຮຽກຮ້ອງໃຫ້ປະຊາຊົນ ທີ່ຢູ່ໃນເຂດແດນກຳນົດຂອງຊາດ ໃຫ້ມີຄວາມຈົ່ງຮັກພັກດີຕໍ່ກັນ.

ກຳລັງທາງດ້ານເຕັກໂນໂລຊີ ທີ່ກ້ຶກພັດທະນາໃນຕາເວັນຕົກ ໄດ້ກ້ຶກນຳມາໃຊ້ຄືນ ເພື່ອເຮັດໃຫ້ເກີດຄວາມສົມດູນຂອງລະບົບ ນິເວດວິທະຍາໃນອາຊີຕາເວັນອອກສຽງໃຕ້. ເກ້ືງ ແມ່ນວ່າບໍ່ພໍໃຈໃນຄວາມຫຍຸ້ງຍາກ ແລະອັນຕະລາຍຂອງເຂດຮ້ອນ ແຕ່ *ຊາວຕາເວັນຕົກ* ກໍ່ບໍ່ຢາກອອກຈາກເຂດນີ້, ຈຶ່ງໄດ້ໃຊ້ອຳນາດຂອງພວກເຂົ້າ ປ່ຽນແປງທຳມະຊາດ ການສ້າງອຳນາດແບບນີ້ ອ້າງວ່າ ແມ່ນຄວາມຫ່ວງໃຍ ແລະເປັນພາລະຫນ້າທີ່ ດັ່ງຄຳເວ້ົາຂອງ *ກິບປລິ້ງ* (Kipling) ທີ່ວ່າ *"ຢາກເຮັດໃຫ້ຄົນທຸກຍາກໄດ້ອິ່ມປາກອິ່ມທ້ອງ ແລະປິ່ນປົວຄວາມເຈັບໄຂ້ໃຫ້ເຂົ້າ"*. ຄວາມຫ່ວງໃຍຂອງບຸກຄົນຜູ່ມີມະນຸດສະທຳ ແລະໃຈບຸນສຸນທານເຫລົ່ານັ້ນ ມັນໄດ້ຫລອມເຂົ້າກັບຕັນຫາ ທາງເສດຖະກິດ. ໂຄງການລະບາຍນ້ຳ ໃນປາກນ້ຳ

ຂອງ *ພະມ້າ, ສະຫຍາມ ແລະ ຫວຽດນາມ* ໄດ້ເຮັດໃຫ້ນັກໃຈບຸນກາຍເປັນມະຫາເສດຖີ. ໃນເຂດ *ກລາງ* (Klang) ຂອງ *ແຊລາງກໍ* (Selangor), *ຊາວອັງກິດ* ໄດ້ປະສົບຄວາມສຳເລັດ ໃນການພະຍາຍາມ ກຳຈັດພະຍາດໄຂ້ຍຸງ ຊື່ວ່າ *ອາໂນເຜເລ* (Anopheles) ເພື່ອຫລຸດຜ່ອນອັດຕາການຕາຍ ຂອງກຳມະກອນຂີດຢາງ. ບໍ່ວ່າການປຸກລະດົມໃດໆກໍຕາມ ເຊັ່ນ ການຍ່ຳຍີສະພາບແວດລ້ອມ ໄດ້ເຮັດໃຫ້ຂໍ້ມູນເດີມປ່ຽນແປງໄປ ບໍ່ສະເພາະແຕ່ວົງຈອນຂອງ ພືດ ແລະ ສັດ ສະເພາະເຂດ ແຕ່ລວມເຖິງສະກຸຕິ ປະຊາກອນອີກດ້ວຍ. ທ່ານຫມໍ ແລະວິສະວະກອນ ທາງດ້ານສຸຂະອະນາໄມ ແມ່ນກຳລັງສຳຄັນນຶ່ງໃນການປ່ຽນແປງ ສະພາບແວດລ້ອມຂອງມະນຸດ. ການຄົມມະນາຄົມທີ່ທັນສະໄຫມ, ພືດເສດຖະກິດຊະນິດໃຫມ່ ແລະການຕິດຕໍ່ສື່ສານທີ່ໄວວາ ສິ່ງເຫລົ່ານີ້ ໄດ້ປ່ຽນແປງປະເພນີທີ່ມີຢູ່ ໃນອາຊີຕາເວັນອອກສຽງໃຕ້.

ສອງສະຕະວັດທີ່ຜ່ານມາ ໄດ້ສ້າງຊຸມຊົນທີ່ມີປະສົບການ ໃຫ້ແກ່ສັງຄົມ ຊາວຕາເວັນອອກສຽງໃຕ້. ພາສາ, ສາສະຫນາ, ຊົນຊາດຊົນເຜົ່າ ແລະການແບ່ງແຍກສັງຄົມ ໃນແຕ່ລະປະເທດ, ກ້າບໍ່ມີການພົວພັນກັນ ລະຫວ່າງກັນເອງແລ້ວ ກໍຄົງຈະເສື່ອມສູນໄປຫມົດສ້ຽງ. ບັດນີ້ ແຕ່ລະສັງຄົມຈຶ່ງທຳການຄົ້ນຄວ້າຊອກຫາວິທີທາງຮູບແບບໃຫມ່ ແລະກວ້າງອອກ ທັງນີ້ກໍເພື່ອສ້າງຄວາມສະຫງົບສຸກໃຫ້ແກ່ ສະກາບັນສັງຄົມ ຕໍ່ກັບສະພາບການທີ່ປ່ຽນແປງ. ເນື່ອງຈາກ ໄດ້ມີການເຂົ້າຮ່ວມ ໃນຫລາຍກັນແກ່ວ ຂອງອົງການໃຫມ່ໆ ແລະກິດຈະກຳຫລາຍຂຶ້ນ, ຈຶ່ງໄດ້ເຮັດໃຫ້ຄົນພົ້ນອອກຈາກຂອບເຂດຂັ້ນບ້ານ ຫລື ແຂວງ ໄປເຖິງລະດັບຊາດກວ້າງອອກ. ການສ້າງຄຸນຄ່າທາງສັງຄົມອັນໃຫມ່ນີ້ ກໍ່ໃຫ້ເກີດມີຄວາມເປັນອັນດຽວກັນ ຊຶ່ງຕ່າງຈາກຄວາມຈົງຮັກພັກດີແບບເກົ່າ ທີ່ເຄີຍມີມາ ການແບ່ງແຍກວັດທະນະທຳ, ສັງຄົມ ແລະປະເທດໃນເມື່ອກ່ອນ ສະຫລາຍຕົວໄປ ລັດທິຊາດນິຍົມໄດ້ຂະຫຍາຍຕົວ ຂຶ້ນ; ຄວາມສຳຄັນ ໃນການຈັດລຳດັບເຈົ້ານົກເຈົ້າເຫລົ່າ ເຊື້ອຊາດ ແລະພູມີສາດດັ້ງເດີມ ບາງປະເທດກໍເສື່ອມຄ່າ. ຂະບວນການພັດທະນາຊາດ ທົ່ວອາຊີຕາເວັນອອກສຽງໃຕ້ ມີທັງການຮັບຮອງເອົາການປົກຄອງໃຫມ່ ແລະ ການປະຕິຮູບການປົກຄອງ.

ບໍ່ວ່າຢູ່ຕາເວັນຕົກ ຫລື ຢູ່ອາຊີຕາເວັນອອກສຽງໃຕ້ ອາດສັບສົນໄດ້ງ່າຍວ່າ ຜົນສຸດທ້າຍແຫ່ງຂະບວນການປ່ຽນແປງ ຂອງພວກເຂົາເຈົ້າເປັນແນວໃດ. ການປ່ຽນແປງທາງດ້ານສັງຄົມ, ການເມືອງ ແລະ ວັດທະນະທຳ ທີ່ໄດ້ປະຕິຮູບ ອາຊີຕາເວັນອອກສຽງໃຕ້ ມາເປັນເວລາສອງສະຕະວັດ ມັນກຶກຝັງຕິດກັບຂະບວນການ ທີ່ຫາບົດສະຫລຸບບໍ່ໄດ້. ກ້ານະໂຍບາຍແບບເກົ່າ ເປີດທາງໃຫ້ແກ່ຄຳວ່າ *ຊາດ-ປະເທດ "ທັນສະໄໝ"*; ກ້າອຳນາດການປົກຄອງ *"ແບບເກົ່າ"* ກຶກປະຕິຮູບດ້ວຍຂໍ້ກຳນົດໃໝ່; ກ້າເສດຖະກິດນາຍທຶນສາກົນເຂົ້າແທນທີ່ ຫລື ປັບປຸງການພົວພັນທາງດ້ານສັງຄົມ ແລະ ການເມືອງ; ແລະ ກ້າຄວາມສັບສົນວຸ່ນວາຍ ຂອງການເມືອງໂລກມີທ່າທີ ເຮັດໃຫ້ການພົວພັນລະຫວ່າງ ປະເທດອາຊີຕາເວັນອອກ ບິດເບືອນໄປ, ອັນນີ້ກໍບໍ່ສາມາດກຳນົດໄດ້ວ່າ ຂະບວນການປ່ຽນແປງດັ່ງກ່າວນັ້ນ ໄດ້ມາຮອດທາງຕັນສ່ວນນຶ່ງແລ້ວບໍ່. ພວກເຮົາບໍ່ສາມາດໄປຮອດຈຸດ ທີ່ໃຫ້ຜົນສະຫລຸບວ່າ ສັງຄົມ ຫລື ປະເທດ ໃນປັດຈຸບັນ ມີຄວາມທັນສະໄໝເຕັມອິ່ມ, ເປັນເສດຖະກິດທຶນນິຍົມຢ່າງສົມບູນແບບ, ຫລືມີລະບົບກົດໝາຍທີ່ຍຸຕິທຳ. ຊາວອາຊີຕາເວັນອອກ ສືບຕໍ່ເລົ່າຂານ ແລະ ຄຳນຶງເຖິງ ເລື່ອງລາວໃນອະດີດຂອງພວກເຂົາ ຢ່າງສະໜ່ຳສະເໝີ, ຕໍ່ເນື່ອງໃສ່ກັບຄວາມເປັນຈິງ ຂອງພວກເຂົາໃນປັດຈຸບັນ, ເພື່ອໃຫ້ເກີດຄວາມເຂົ້າໃຈຕໍ່ກັບ ສະພາບປັດຈຸບັນ ແລະ ເພື່ອສ້າງອະນາຄົດ ໃຫ້ມີຄວາມສົມບູນ. ໃນການຊອກຮູ້ອະດີດຂອງອາຊີອາຄະເນ, ນັກປະຫວັດສາດພວກເຮົາຄໍປະກອບສ່ວນເພື່ອຄວາມສຳເລັດ ໃນການບັນລຸເປົ້າໝາຍອັນດຽວກັນ.

ຫ້າມຈຳໜ່າຍ

ຮູ້ຈັກປະເທດ
ໃນອາຊີຕາເວັນອອກສຽງໃຕ້

ພາກທີ I

ໂລກ ໃນສະຕະວັດ ທີ 18

ภົກເຄົ້າຂອງພາສາ ແລະການແຜ່ຂະຫຍາຍ ໃນເຂດອາຊີຕາເວັນອອກສຽງໃຕ້

LINGUSITIC FAMILIES and PREPONDERANT GROUPS of SOUTHEAST ASIA



Austro-Asiatic		Tibeto-Burman		Austronesian				Tai	
K	Khmer	B	Burman	A	Acehnese	M	Malay		
MO	Mon	C	Chin	BI	Bisayan	MD	Madurese	L	Lao
MU	Muong	KC	Kachin	BL	Balinese	MK	Makassarese	S	Shan
UMK	Upland Mon-Khmer (Sedang, Bahnar, Pear, Hre)	KR	Karen (Red Karen, White Karen)	BT	Batak	MI	Minangkabau	TY	Tai Yuan
				BU	Buginese	MO	Moro	T	Thai
V	Vietnamese			D	Dayak	SU	Sundanese	UT	Upland Tai (White Tai Red Tai, Black Tai, Striped Tai)
W	Wa			IB	Iban	Ta	Tagalog		
				IL	Ilocano	U	Upland Malay		
				J	Javanese				

ໂອສະໂຕ ເອເຊຽຕິກ	ທິເບດ - ພະມ້າ	ໂອສະໂຕເນເຊຽນ		ກຸ່ມໄຕ
ຂະແມ	ພະມ້າ	ອາເຈນີສ	ມາເລ	ລາວ
ມອນ	ຈິນ	ບີຊາຍັນ	ມາດູເຣສ	ຊານ
ມ້ຽ	ກະຊິ່ນ	ບາຫລີ	ມາກາສາຣິສ	ໄຕ ຍວນ
ມອນ-ຂະແມ ພູດອຍ	ກະຫລຽງ	ບາຕັກສ໌	ມິ້ງກັ້ງກະໂບ	ໄທ
(ເຊດ້ຽ, ບານາ, ເພຍ, ເຣ)	(ກະຫລຽງແດງ, ກະຫລຽງຂາວ)	ບູຈິນີສ	ໂມໂຣ	ໄຕ ພູດອຍ
ຫວຽດ		ດາຢັກ	ຊຸ້ນດານີສ	(ໄຕຂາວ, ໄຕແດງ,
ວ້າ		ອີບັນ	ຕາກາລອກ	ໄຕດຳ, ໄຕລາຍ)
		ອີໂລກາໂນ	ມາເລ ພູດອຍ	
		ຊະວາ		

ບົດທີ 1 : ໂລກຂອງຊາວນາ *(The Peasant world)*

ກ້າວ່າມັນເປັນຄືໃນນະວະນິຍາຍວິທະຍາສາດ ຄົນເຮົາມີລິດເດດ ກອຍກັບຄືນໄປຢູ່ອາຊີຕາເວັນອອກສຽງໃຕ້ ເມື່ອສະຕະວັດ ທີ 18 ໄດ້ ຄືຊິເປັນໄປບໍ່ໄດ້ວ່າ ພວກເຂົາເຫລົ່ານັ້ນ ໄດ້ເຂົ້າໄປຢູ່ໃນຫໍໂຮງ ທີ່ພວກນັກທ່ອງທ່ຽວ ພວມໄປຢ້ຽມຢາມກັນໃນທຸກວັນນີ້. ສິ່ງທີ່ຈະເປັນໄປໄດ້ຫລາຍກວ່າ ຄົງແມ່ນການຍ່າງເລາະຫລົ້ນໄປຕາມທາງຂີ້ຝຸ່ນ(ຫລືທາງເປັນຕົມໃນລະດູຝົນ) ມຸ່ງຫນ້າສູ່ທົ່ງສີຂຽວຫມົ່ນໆ ຕິດຂອບຟ້າ ຊຶ່ງອາດແມ່ນບ້ານໃກ້ໆບ້ານໃດບ້ານນຶ່ງ. ສອງຟາກທາງເປັນສີຂຽວມໍລະກົດ ລະຫວ່າງທາງພວກເຂົາອາດສວນທາງກັບຂະບວນກວຽນງົວຫລືກວຽນຄວາຍ ໃສ່ເຂົ້າເປືອກເຕັມ, ພວກແມ່ຕູ້ແມ່ນາຍເອົາຫມາກໄມ້ໄປຂາຍຕະຫລາດ ຫລື ພວກຊາຍຫນຸ່ມເອົາໄກ່ໃສ່ຍາງ ໄປຫາເລາະຕີ. ບໍ່ເທົ່ງ ທາງເສັ້ນນັ້ນ ກໍພາຜູ່ທຽວທາງລອດເຂົ້າກ້ອງຮົ່ມໄມ້ໃຫຍ່ທີ່ແຜ່ກິ່ງກ້ານສາຂາ ມີໃບດົກປົກຄຸມເຫນືອສຸມໄຜ່ກັບຫລັງຄາເຮືອນມຸງຫຍ້າ. ພວກເຂົາອາດແວ່ເຂົ້າກິນນ້ຳໃນສ້າງຂອງຊາວບ້ານເພື່ອບັນເທົາຄວາມຫິວ ແລະລ້າງເຊີຂີ້ຝຸ່ນເຫື່ອໄຄຕາມໃບຫນ້າອອກ. ໃນວາລະຕ່າງໆຕະຫລອດປີ ພວກເຂົາອາດຈະໄດ້ເຫັນສະມາຊິກທັງຫມົດຂອງຄອບຄົວ ເຮັດວຽກເປັນສິນໆຢູ່ທຸກບ່ອນ ເຊັ່ນເກັບກູ້ເຄື່ອງປູກ ຫລື ສີເຂົ້າ ຕຳເຂົ້າ ຫາປາ ຕ່ຳຫູກ ຕັດຫຍິບ ເຄື່ອງນຸ່ງຫົ່ມ ນັ່ງລົມກັນ ເລາະລົມສາວແລະແຕ່ງກິນ, ສ້ອມແປງເຄື່ອງໄມ້ ເຄື່ອງມືເຫລັກ ສູ່ຂວັນອອກກຳ ຫລື ເຮັດບຸນກິນຫານຫາຜູ່ຕາຍ, ເບິ່ງແຍງຄົນເຈັບປ່ວຍ ແລະບອກສອນລູກເລັກເດັກນ້ອຍຢູ່.

ຜູ່ອ່ານສະໄຫມໃຫມ່ ກໍຄືກັບນັກທ່ອງທ່ຽວເຫລົ່ານັ້ນ ຟ້າວເລັ່ງບາດຕີນໄປສູ່ນະຄອນແຫ່ງປະຫວັດສາດ ເຖິງແມ່ນວ່າ ອາຊີຕາເວັນອອກສຽງໃຕ້ ເມື່ອສະຕະວັດທີ 18 ຫລືເມື່ອຕົ້ນສະຕະວັດທີ 20 ເອງ ຍັງຂາດເຂີນ ບັນທຶກກ່ຽວກັບກິດຈະກຳວຽກງານຂອງຊາວບ້ານ ຊຶ່ງບໍ່ວ່າໃນສະໄຫມກ່ອນກໍຄືດຽວນີ້ ບັນທຶກເຫລົ່ານັ້ນ ຍັງຄົງມີຄວາມສຳຄັນຢູ່. ຊາວ*ຢູຣົບ*ທີ່ຜ່ານມາ ກັບນັກຈົດບັນທຶກປະຈຳວັນ ເກືອບບໍ່ເວົ້າຫຍັງກ່ຽວກັບຊີວິດຂອງຊາວນາ ເພາະວ່າຄົນທັງສອງປະເພດນີ້ ກຶເບົາຄວາມສຳຄັນຂອງພວກຊາວນາ ໂດຍເຫັນວ່າມັນເປັນອັນນຶ່ງອັນດຽວກັບ ຊີວິດປະຈຳວັນແລະການດຳເນີນວຽກງານອື່ນໆ ຂອງລັດ. ແຫລ່ງຂໍ້ມູນໃຫມ່ໆ ກໍໃຫ້ຂ່າວສານຫນ້ອຍຫລາຍ ບໍ່ທັນພຽງພໍເພື່ອກົມປ່ອງຫວ່າງໃຫຍ່ອັນນີ້ໄດ້. ເຖິງຢ່າງໃດກໍຕາມ ການນຳເອົາຫລັກຖານທາງປະຫວັດສາດ ທີ່

ກະຈັດກະຈາຍຢູ່ມາເຕີມຕໍ່ເຂົ້າກັນກໍດີ ແລະການໃຊ້ວິທີການທາງວິທະຍາສາດທັນສະໄຫມເພື່ອເບິ່ງຄືນຫລັງກໍດີ ເຮັດໃຫ້ເຮົາ ພໍສ້າງພາບລາງໆແບບກວ້າງໆ ຂອງຊີວິດຊາວນາໃນອາຊີຕາເວັນອອກສຽງໃຕ້ ເມື່ອສອງສະຕະວັດກ່ອນຂຶ້ນມາໄດ້.

ຊາວນາແມ່ນຊາວກະສິກອນ ໂດຍສະເພາະແລ້ວແມ່ນຜູ່ດຳລົງຊີວິດຢູ່ໃນສັງຄົມທີ່ກຶກຄວບຄຸມໂດຍຊົນຊັ້ນສູງ ໃນເມືອງຫລວງ ແລະເມືອງຂັ້ນຮອງລົງມາຂອງອານາຈັກເມື່ອກ່ອນຍຸກທັນສະໄຫມ ແລະໃນສະຕະວັດທີ່ຜ່ານມາ ຢູ່ໃນຂົງເຂດຊົນນະບົດ ທີ່ສັງຄົມພວມປ່ຽນແປງມາສູ່ຍຸກທັນສະໄຫມ ເຊັ່ນ ສັງຄົມອາຊີຕາເວັນອອກສຽງໃຕ້. ຕາມປົກກະຕິແລ້ວ ອານາຈັກທີ່ມີແຫລ່ງກະສິກຳຂະຫນາດໃຫຍ່ ໃນອາຊີຕາເວັນອອກສຽງໃຕ້ ເມື່ອ ສະຕະວັດທີ 18, ບໍ່ແມ່ນລັດການຄ້ານ້ອຍໆ ທີ່ເປັນເກາະດອນສ່ວນໃຫຍ່ ຂອງດິນແດນອາຊີຕາເວັນອອກສຽງໃຕ້ນີ້ ປະຊາຊົນພົນລະເມືອງສ່ວນໃຫຍ່ ເປັນຊາວນາເກືອ ເກົ້າສິບສ່ວນຮ້ອຍ (90%). ມາເຖິງປັດຈຸບັນ ຫລືອາດຈະໃນທ້າຍສະຕະວັດ ທີ 20 ນີ້ເຖິງວ່າ ປະຊາກອນໃນຕົວເມືອງ ໄດ້ເພີ່ມຂຶ້ນຢ່າງຫລວງຫລາຍກໍຕາມ ຊາວນາກໍຍັງປະກອບເປັນປະຊາຊົນຂອງພາກພື້ນນີ້ ຫລາຍກວ່າ 50 % ຢູ່.

ເກືອບທົ່ວທຸກແຫ່ງໃນອາຊີຕາເວັນອອກສຽງໃຕ້ ເມື່ອສອງສະຕະວັດກ່ອນ ຊາວນາທັງຍິງແລະຊາຍເຫລົ່ານີ້ ຕ່າງກໍຍຶດຫມັ້ນຢູ່ນຳສາສະຫນາໃຫຍ່ໆຂອງໂລກ ຄືກັນກັບຊົນຊັ້ນສູງໃນສັງຄົມຂອງພວກເຂົາ ເຖິງແມ່ນວ່າ ໄດ້ມີການປະສົມປະສານຄວາມເຊື່ອຖືແລະປະຕິບັດຕາມສາສະຫນາຜີອັນເກົ່າແກ່ຢູ່ກໍຕາມ. ມາຮອດສະຕະວັດທີ 20 ແລ້ວຊາວນາສ່ວນຫລວງຫລາຍກໍຍັງເປັນຜູ່ກຶກຫນັງສືຢູ່ ບໍ່ຄືກັບພວກເຊື້ອເຈົ້າແລະພວກຜູ່ນຳທາງສາສະຫນາ ທີ່ເປັນຜູ່ຮູ້ຫນັງສື ໃນສັງຄົມຂອງພວກເຂົາ.

ກະສິກອນນານ້ຳຝົນ (ນາດຳ)

ໃນແຜ່ນດິນໃຫຍ່ຂອງອາຊີຕາເວັນອອກສຽງໃຕ້ນີ້ ຄຳວ່າ *"ຊາວນາ"* ກັບ *"ກະສິກອນນານ້ຳຝົນ"* ມີຄວາມຫມາຍດຽວກັນ ແຕ່ສະພາບການຢູ່ໃນເກາະດອນບໍ່ທຳມະດາປານໃດ. ຢູ່*ຟີລິບປິນ* ພົນລະເມືອງໃນດອນ*ລູຊອນ* (Luzon) ສ່ວນໃຫຍ່ເປັນຊາວນາ ທີ່ເຮັດນາດຳ ແຕ່ຢູ່ທາງໃຕ້ຂອງຫມູ່ດອນ *ບິສາຍັນ* (Bisayan) ພວກເຂົາປູກເຂົ້າ ສາລີ ເປັນຕົ້ນຕໍ. ຢູ່ *ອິນໂດເນເຊຍ* ບໍ່ພຽງແຕ່ ພົນລະເມືອງຂອງກະສັດເຊື້ອສາຍ *ຊະວາ(ຊວາ), ບາຫລີ, ບູກິສ* ແລະ *ອະເຈ* (Javanese, Balinese, Bugis, Acehnese) ເທົ່ານັ້ນ ທີ່ເຮັດນາດຳ ແຕ່ປະຊາຊົນບັນດາເຜົ່າຕ່າງໆ ທີ່ບໍ່ທັນສັ່ງກັດລັດ(ບໍ່ມີສັນຊາດ) ຈຳນວນຫລວງຫລາຍກໍເຮັດຄືກັນ.

ໃນອາຊີຕາເວັນອອກສຽງໃຕ້ ຢູ່ໃສກໍຕາມ ທີ່ມີປະຊາກອນອ່າວແຫນ້ນຫນາແຕ່ ພວກເຂົາພາກັບເຝິ່ງພາເຕັກນິກ ກະສິກຳ ທີ່ຊັບຊ້ອນ ເພື່ອເຮັດນາດ້ວຍການຊົນລະປະທານ. ພວກຊາວນາໃຫ້ຄວາມສຳຄັນແກ່ທີ່ດິນຫນ້ອຍກວ່າ ນ້ຳຂຸ່ນໆໃນຫ້ວຍຮ່ອງ ຊຶ່ງໄຫລຜ່ານດິນລົງມາຈາກທຸກແຫ່ງຫົນ ແລະຈາກສະພາບນ້ຳກ້ອມ ທີ່ພັດພາເອົາຝຸ່ນດີໆ ຈາກຕົ້ນນ້ຳແຕ່ຈອມພູລົງມາໃຫ້ໃນລະດູຝົນທຸກໆປີ. ທົ່ງນາ ຫລື *ຊາວາບ* (Sawab) ແມ່ນອູ່ເກີດຂອງແນວປູກ ແລະ ແຫລ່ງນ້ຳ ທີ່ຈຳເປັນສຳລັບຫລໍ່ລ້ຽງພືດພັນ ດັ່ງນັ້ນ ຄວາມອຸດົມສົມບູນຂອງບ້ານເມືອງ ຈຶ່ງຂຶ້ນຢູ່ກັບປະລິມານນ້ຳ ພໍພຽງສຳລັບການຊົນລະປະທານ ລ້ຽງເຂົ້າໃນນາຫລາຍພັນທົ່ງ ທີ່ຢັ່ງຢາຍກະຈາຍຕາມທົ່ງຮາບ ແລະ ຫວ່າງ ຜູ. ທົ່ງນາກັບຮ່ອງເຫມືອງ ແມ່ນການລົງທຶນຮອບຂອງຊາວນາ ໄດ້ຫລາຍເຊັ່ນຄົນມາ ແລ້ວທີ່ຊາວນາເຫລົ່ານີ້ ກອກເຫື່ອເຫແຮງນຳໃຊ້ທຳມະຊາດ ຝັງຮາກເຫງົ້າຂອງພວກເຂົາລົງເລິກ ດ້ວຍການລົງທຶນໃສ່ດິນແລະນ້ຳເທົ່າໆກັນ.

ຊະນິດຂອງເຂົ້າທີ່ແຕກຕ່າງກັນໄປໃນແຕ່ລະທ້ອງກຸ່ນ ປະສົມແນວພັນກັນມາໄດ້ ຫລາຍສະຕະວັດ ເພື່ອໃຫ້ໄດ້ແນວພັນທີ່ຕ້ານທານພະຍາດແລະໃຫ້ຜົນຜະຫລິດສູງ ຕາມສະພາບດິນຟ້າອາກາດຂອງ ແຕ່ລະທ້ອງກຸ່ນ. ສະເພາະດິນຕາມສັນດອນ*ແມ່ນ້ຳແດງ* (Red River) ໃນ *ຫວຽດນາມ ພາກເຫນືອ* ບ່ອນດຽວ ກໍມີແນວພັນເຂົ້າຮອດສາມຮ້ອຍຊະນິດ ເປັນຢ່າງຫນ້ອຍ ແຕ່ລະຊະນິດ ມີຄຸນນະສົມບັດແບບສະເພາະຂອງມັນ ເຊິ່ງຊາວ

ນາເລືອກເຟັ້ນເອົາຢ່າງເຫມາະສົມ ກັບອາກາດທ້ອງຖິ່ນແລະປະລິມານນ້ຳຝົນ ໃນແຕ່ລະປີ. ເຖິງວ່າຈະຕົກຢູ່ພາຍໃຕ້ເງື່ອນໄຂ ການເຕີບໃຫຍ່ທີ່ຜັນປ່ຽນຢ່າງແຮງກໍຕາມ ຊາວນາທົ່ວທັງພາກພື້ນກໍສາມາດຄາດຫວັງວ່າຈະເກັບກ່ຽວເຂົ້າໄດ້ເຖິງ 800 ຫາ 1000 ລິດຕໍ່ເຮັກຕາ ດັ່ງນັ້ນ ເຖິງວ່າ ມີທີ່ດິນແຕ່ຕອນນ້ອຍໆ ຄອບຄົວນຶ່ງໆ ກໍສາມາດຢູ່ໄດ້ ແລະຕອບສະຫນອງ ຄວາມຕ້ອງການອັນພື້ນຖານໄດ້. ບ່ອນໃດມີການຍຶດຄອງທີ່ດິນຫລາຍ ແລະ ຜົນຜະລິດຕໍ່ຳ ຊາວນາກໍເຮັດນາປີລະສອງເທື່ອ ກ້າວ່າອາກາດຫລືຊົນລະປະທານ ອຳນວຍໃຫ້ ດັ່ງຢູ່ *ຫວຽດນາມ ພາກເຫນືອ*. ເຖິງຢ່າງໃດກໍຕາມ ໂດຍທົ່ວໄປແລ້ວ ຊາວນາສ່ວນຫລາຍປູກເຂົ້ຳ ປີລະເທື່ອເທົ່ານັ້ນ ເຊິ່ງຕາມປົກກະຕິ ກໍພຽງພໍສຳລັບລ້ຽງຄອບຄົວ ແລະກຸ້ມຄ່າພາສີ ທີ່ຕ້ອງເສຍເປັນເຂົ້ຳ ໃຫ້ກັບບ່ອນທີ່ມີການເສຍພາສີນາ.

ວົງຈອນການກະສິກຳ ຂອງການເຮັດນາດຳໃນແຕ່ລະບ່ອນແຕກຕ່າງກັນ ແມ່ນແຕ່ກຳນົດເວລາແຮກລົງມື ແລະລະຍະເວລາຝົນຈາກລົມມໍລະສຸມຕົກໃນແຕ່ລະປີກໍຕ່າງກັນ. ວິທີການເຮັດນາດຳແຕກຕ່າງກັນໄປຕາມທ້ອງຖິ່ນ ແລະອີງຕາມປະລິມານນ້ຳຝົນທີ່ລົມມໍລະສຸມຫອບມາຕົກໃນແຕ່ລະປີ. ໃນສະຕະວັດທີ 18, ສອງສະຕະວັດ ກ່ອນທີ່ປະຊາກອນໃນອາຊີຕາເວັນອອກສຽງໃຕ້ຈະເພີ່ມຫລາຍຂຶ້ນຢ່າງໄວ ຊາວນາທີ່ເຮັດນາດຳສ່ວນຫລາຍ ຄົງຫວ່ານແນວປູກໃສ່ໄຮ່ນາທີ່ກຽມໄວ້ແລ້ວຕັ້ງແຕ່ແຮກຝົນລົງ ແຕ່ຢູ່ບາງບ່ອນມີຂັ້ນຕອນພິເສດຕື່ມຂຶ້ນອີກ ຄືທຳອິດ ຕົກກ້າໃສ່ຕາກ້າກ່ອນ ແລ້ວຈຶ່ງຫລົກໄປດຳໃສ່ໄຮ່ນາໃຫຍ່ ມັນເປັນວຽກເພີ່ມ ທີ່ໃຫ້ຜົນຜະລິດຫລາຍກວ່າ ແລະມັນກໍໄດ້ກາຍເປັນວິທີການມາດຕະຖານສຳຄັນ ໃນອາຊີຕາເວັນອອກສຽງໃຕ້ເມື່ອສະຕະວັດທີ 20 ໄປແລ້ວ. ຂະນະທີ່ຕົ້ນເຂົ້ຳພວມແກ່ນັ້ນ ນ້ຳໃນຫ້ວຍຮ່ອງໃກ້ໆນາ ກໍຄ່ອຍໆບົກແຫ້ງລົງ ພວກຊາວນາຕ້ອງຄອຍລະວັງເບິ່ງແຍງຮ່ອງ ຄູເຫມືອງ ເພື່ອຮັບປະກັນວ່າຈະມີນ້ຳພຽງພໍສຳລັບຕົ້ນເຂົ້ຳທີ່ພວມເຕີບໃຫຍ່. ເມື່ອຮວງເຂົ້ຳແກ່ໃກ້ຈະສຸກດີແລ້ວ ພວກຊາວນາກໍພາກັນລະບາຍນ້ຳອອກ ເພາະເຂົ້ຳນາດຳນີ້ມີຈຸດພິເສດ ຄືຕ້ອງກ່ຽວຈາກພື້ນດິນແຫ້ງ ຄືກັບພືດອື່ນໆ. ລະດູເກັບກ່ຽວແມ່ນເວລາແຫ່ງຄວາມມ່ວນຊື່ນ ທຸກຄົນໃນຄອບຄົວລົງມາຄຽງບ່າຄຽງໄລ່ກັນ ທັງຂັບລຳເວົ້ຳຢອກໄຍກັນ ທ້າມກາງເມັດເຂົ້ຳທີ່ປິວຟົ້ງທົ່ວລານຕີເຂົ້ຳ. ໃນລະດູແລ້ງເດືອນຕໍ່ມາ ເມື່ອດິນທົ່ງນາແຫ້ງກະແດ້ງ ຊາວນາຈຶ່ງຕັດຕໍເຟືອງອອກ ຈາກນັ້ນກໍກຽມສ້ອມແປງອຸປະກອນເຄື່ອງໃຊ້ສຳລັບລະດູການຫນ້ຳ ຂະນະດຽວກັນໃນຍາມແລ້ງ

ແບບນີ້ກໍມັກຈະມີບຸນປະເພນີ ການເຮັດຮີດແປງຄອງທາງສາສະໜາຫລາຍຢ່າງ ເປັນຕົ້ນ ການກິນດອງ ການຫລິ້ນມ່ວນຕາມປະເພນີ.

ໃນການປູກແລະເກັບກ່ຽວເຂົ້ານີ້ ພວກຊາວນາໃຊ້ເຄື່ອງມືແບບງ່າຍໆ ສອງສາມຢ່າງເທົ່ານັ້ນ. ຢູ່ໃນພາກພື້ນ ທີ່ເຮັດນາປີລະເທື່ອ ເຕັກໂນໂລຊີທາງການກະສິກຳບໍ່ປານີດຫລາຍເທົ່າກັບ ຢູ່ເຂດທີ່ມີການຈັບຈອງຍຶດຄອງດິນຫລາຍ ເຊິ່ງໃນທີ່ນີ້ ເຄື່ອງມືອຸປະກອນມີຄວາມຊັບຊ້ອນຫລາຍກວ່າ. ໂດຍທົ່ວໄປ ໄຖຂອງເຂົາເຈົ້າ ເຮັດດ້ວຍໄມ້ບາງບ່ອນເຮັດສົບໄຖເຫລັກ ແລະມີກອຽນຫລືລໍ້ແກ່ສຳລັບຍົນເຄື່ອງປູກ. ບໍ່ວ່າຈະເບິ່ງໃນດ້ານເສດຖະກິດ ຮີດຄອງແລະອິດທິລິດຂອງທຳມະຊາດ ການເກັບກ່ຽວເຂົ້າ ມີຄວາມສຳຄັນເກີນກວ່າຈະເຮັດໄດ້ດ້ວຍ ກ່ຽວມືແບບງ່າຍໆພຽງອັນດຽວ. ທົ່ວພາກພື້ນນີ້ ຊາວນາໃຊ້ແຮງງານສັດລ້ຽງຫລາຍ ໂດຍສະເພາະສຳລັບໄຖດິນແລະສີເຂົ້າ ຫລື ໂມ້ແປ້ງ. ຄວາຍມີຢູ່ທົ່ວທຸກແຫ່ງ ແລະງົວກໍໃຊ້ກັນຫລາຍຄືກັນ. ຄອບຄົວຊາວນາສ່ວນຫລວງຫລາຍ ມີເຄື່ອງມືນວດເຂົ້າແບບງ່າຍໆ ແຕ່ໃຊ້ໄດ້ຜົນດີ ແລະຢູ່ຫລາຍບ່ອນ ມີໂມ້ຫີນທີ່ໃຊ້ແຮງຄົນ ແລະສັດ ຢູ່ບາງເຂດ ແມ່ຍິງກັບເດັກນ້ອຍ ໃຊ້ຄົກມື ທີ່ເຮັດດ້ວຍໄມ້ ຕຳເຂົ້າ ກິນໃນແຕ່ລະມື້. ໂມ້ຕີນກັບກົງຫັນນ້ຳ ທີ່ເຮັດດ້ວຍໄມ້ກັບອຸປະກອນອື່ນໆອີກຫລາຍແນວ ຜັນເອົານ້ຳຂຸ່ນໆຈາກຫ້ວຍຮ່ອງເຂົ້າໃສ່ນາ. ໃນ *ຫວຽດນາມພາກເໜືອ* ນັ້ນ ແມ່ນ້ຳແດງ (Red River) ຈະມີນ້ຳເຕັມຝັ່ງສະເໝີ ແລະການເຮັດນາສອງເທື່ອກໍໄດ້ກາຍເປັນຮີດຄອງອັນນຶ່ງ. ມາຮອດສະຕະວັດທີ 19 ກໍມີລະບົບຮ່ອງເໝືອງຍາວຢຽດຫລາຍພັນກິໂລແມັດແລ້ວ. ຊາວບ້ານໃນພາກເໜືອໃຊ້ຮ່ອງແລະທໍ່ເພື່ອສົ່ງນ້ຳເຂົ້ານາ ແລະຂຸດສະໄວ້ຫລາຍຫນ່ວຍ ເພື່ອເອົານ້ຳໄວ້ໃຊ້ໃນລະດູແລ້ງ. ເປັນເວລາຫລາຍສະຕະວັດມາແລ້ວ ທີ່ຊາວນາ *ບາຫລີ* (Balinese) ສ້າງລະບົບຕາຫນ່າງຮ່ອງຊົນລະປະທານທີ່ຊັບຊ້ອນ ບາງສ່ວນມຸດລອດດິນໄປ ເພື່ອນຳນ້ຳຈາກພູສູງລົງມາ ໃສ່ນາຂອງເຂົາເຈົ້າ; ສະມາຄົມ ຊົນລະປະທານຊາວນາມີສິດ ແລະ ຫນ້າທີ່ຄຸ້ມຄອງນ້ຳ ກວມໄປຮອດບ້ານຕ່າງໆທັງຫມົດ ທີ່ຕັ້ງຢູ່ຕາມຮ່ອງເໝືອງ ຜ່ານເນີນພູສູງ. ສະມາຄົມນີ້ເປັນນຶ່ງໃນຈຳນວນສະຖາບັນທີ່ສຳຄັນສຸດໃນລະບົບສັງຄົມທີ່ຊັບຊ້ອນບໍ່ທຳມະດາ ແຫ່ງ*ບາຫລີ*.

ເພື່ອສົມທົບໃສ່ອາຫານຫລັກເຊິ່ງແມ່ນເຂົ້າ ພວກຊາວນາປູກພືດຜັກ ຫມາກໄມ້ ລ້ຽງເປັດໄກ່ ແລະຫມູ (ຍົກເວັ້ນໃນເຂດຜູ່ນັບຖື*ອິສລາມ*) ແລະຕຶກແຫຫາປາບໍ່ສະເພາະແຕ່ໃນແມ່ນ້ຳລຳເຊເທົ່ານັ້ນ ແຕ່ຢູ່ໃນທົ່ງໄຮ່ ທົ່ງນາ ທຸກບ່ອນທີ່ນ້ຳກ້ອມເຖິງນຳ. ສັດປີກ

ແລະປາ ນັບວ່າ ມີຄວາມສຳຄັນຕໍ່ສຸຂະພາບຫລາຍ ຍ້ອນວ່າມັນໃຫ້ໂປຣຕີນ ເຊິ່ງກ້າບໍ່ ດັ່ງນັ້ນ ເຂົ້າເຈົ້າຕ້ອງໄດ້ໄປຊື້ຫາມາໄວ້ກິນຕະຫລອດປີ. ຕາມທຳມະດາແລ້ວ ຢູ່ທົ່ວພາກ ພື້ນອາຊີຕາເວັນອອກສຽງໃຕ້ນີ້ ຄຸ້ມບ້ານຊາວນາ ມີເສດຖະກິດເກືອບກຸ້ມຢູ່ກຸ້ມກິນເປັນ ສ່ວນໃຫຍ່ ມີສິນຄ້າບາງຢ່າງເທົ່ານັ້ນ ທີ່ຕ້ອງຊື້ຈາກພາຍນອກ ເຊັ່ນ ເກືອແລະຜ້າແພ. ຍິ່ງຄວາມຕ້ອງການໃນສິນຄ້າເຫລົ່ານີ້ສູງເທົ່າໃດ ການຄ້າຂາຍກັບພາຍນອກຂອງບ້ານ ກໍຍິ່ງຫລາຍຂຶ້ນເທົ່ານັ້ນ ແລະການຜະລິດເຂົ້າ ໃຫ້ເຫລືອພໍຈຳໜ່າຍແກ່ຕະຫລາດ ເຊັ່ນ ເຂົ້ານາແຊງ ຫລືເຄື່ອງຫັດຖະກຳ ກໍຍິ່ງມີຄວາມສຳຄັນຫລາຍຂຶ້ນ. ມີບາງຂົງເຂດ ເຊັ່ນ ໃນແຂວງທາງພາກກາງ-ໃຕ້ຂອງ*ຫວຽດນາມ* ເຂດປູກຝ້າຍ ຂອງ*ພະມ້າ*ພາກກາງແລະ ເຂດແຄມຊາຍທະເລ ຂອງໝູ່ເກາະອິນໂດເນເຊຍ ເທົ່ານັ້ນ ທີ່ກ໊ໄດ້ວ່າ ເປັນເຂດເສດຖະ ກິດການຕະຫລາດສຳຄັນ ຕໍ່ຊີວິດຊາວບ້ານ ກ່ອນສະຕະວັດທີ 19.

ເກືອບທົ່ວທຸກຂົງເຂດ ຂອງອາຊີຕາເວັນອອກສຽງໃຕ້ ດິນປູກຝັງທັງໝົດ ທີ່ ຊາວນາຊົມໃຊ້ ບໍ່ໄດ້ເປັນຂອງຊາວນາ ເຖິງແມ່ນວ່າ ພວກເຈົ້າປົກຄອງຫລືກະສັດ ໄດ້ ອ້າງກຳມະສິດເໜືອທີ່ດິນນັ້ນກໍຕາມ ຊຸມຊົນຊາວນາ ກໍມີສິດຮວມໃນຊັບສິນນັ້ນນຳ ແລະໃນຕົວຈິງ ກໍແມ່ນຊາວບ້ານນັ້ນເອງ ທີ່ເປັນຜູ່ມີສິດຊົມໃຊ້ຜືນດິນນັ້ນແທ້ໆ. ການ ອ້າງກຳມະສິດເຫລົ່ານີ້ ບໍ່ມີຫຍັງໃກ້ຄຽງກັບການກ໊ໍກຳມະສິດໃນຊັບສິນຂອງພວກຊາດ ຕາເວັນຕົກ. ເກືອບທົ່ວທຸກແຫ່ງ ຊາວນາໄດ້ຫາທາງເຮັດໃຫ້ຊັບພະຍາກອນ ທີ່ມີຢູ່ສຳລັບ ພວກຕົນນັ້ນ ໄດ້ຮັບການແບ່ງປັນ ເພື່ອຮັບໃຊ້ສ້າງຜົນປະໂຫຍດໃຫ້ແກ່ບຸກຄົນ ໂດຍສະ ເພາະ ແກ່ຄອບຄົວ ແລະລັດນຳແດ່. ຮູບແບບຂອງສິດ ໃນການຊົມໃຊ້ດິນ ທີ່ປົກປ້ອງ ຕົນເອງ ອອກຈາກການກົດດັນພາຍນອກຢ່າງເຂັ້ມແຂງນັ້ນ ມີຮາກຖານດີແລ້ວ ຢູ່ໃນກົດ ໝາຍບູຮານ ທີ່ປະຕິບັດກັນມາເປັນປະເພນີ. ໃນ *ຟີລິບປິນ* ພວກ*ສະເປນ* ໄດ້ປ່ຽນແປງ ຮູບແບບເກົ່າໆຂອງສິດຊົມໃຊ້ດິນ ມາເປັນແບບຂອງບຸກຄົນດຽວ ຄືໃນຂັ້ນຕົ້ນ ພວກເຂົ້າ ເຮັດໃຫ້ດິນທັງໝົດປອດເຈົ້າຂອງເສຍກ່ອນ ແລ້ວຍົກຖວາຍກະສັດ ໂດຍບໍ່ຈຳແນກວ່າ ດິນຕອນນັ້ນ ເປັນຂອງບຸກຄົນໃດບຸກຄົນນຶ່ງ ຫລື ຂອງຊຸມຊົນໃດນຶ່ງແລ້ວ. ດ້ວຍວິທີການນີ້ ຈຶ່ງເປັນການຈຳກັດຂອບເຂດທີ່ດິນຂອງບ້ານ ທີ່ຈະຕອບສະໜອງກັບຄວາມຕ້ອງການ ຂອງພົນລະເມືອງທີ່ຫລາຍຂຶ້ນ. ມາຮອດສະຕະວັດທີ 18 ຢູ່ *ຫວຽດນາມ* ຄວາມກົດດັນ ຢ່າງແຮງທີ່ເກີດຂຶ້ນຍ້ອນການທ້ອນໂຮມສະສົມທີ່ດິນ ໂດຍພວກພະນັກງານກັບເຈົ້າທີ່ດິນ

ເປັນເຫດໃຫ້ຊາວນາຈຳນວນຫລວງຫລາຍ ບໍ່ມີດິນເປັນຂອງຕົນເອງ. ການປ່ຽນແປງ ເຫລົ່ານີ້ ເປັນຕົວການສ້າງສະພາບເສດຖະກິດໃຫ້ຫຍຸ້ງຍາກຍິ່ງໆຂຶ້ນ, ເປັນການຜິກເວັ້ນ ອອກຈາກຮູບແບບເກົ່າໆ ທີ່ມີຢູ່ທົ່ວໄປ ເຊິ່ງໃນຮູບແບບນັ້ນ ຊາວນາສາມາດມອບດິນ ໃຫ້ລູກຂອງຕົນຄອບຄອງ ບໍ່ວ່າລູກຍິງ ຫລືລູກຊາຍ. ວິທີການຕາມປະເພນີເພື່ອຫລຸດ ຜ່ອນຄວາມກົດດັນທາງດ້ານປະຊາກອນຕໍ່ທີ່ດິນປູກຝັງ ໄດ້ຮັບການແກ້ໄຂ ດ້ວຍການບຸກ ເບີກປ່າດົງໃຫມ່. ໃນບ່ອນທີ່ມີບັນຫາແນວນີ້ ແມ່ນພວກຊາວນາຜູ່ຢາກໄດ້ຢາກມີເອງ ກັບພວກຢູ່ໃນການຈັດຕັ້ງຂອງລັດເອງ ເປັນຜູ່ລົງມືດຳເນີນການ.

ບ້ານຊາວນາ ໃນອາຊີຕາເວັນອອກສຽງໃຕ້ ມີຮູບຊົງສັນຖານຫລາຍແບບ ໃນ ບາງຂົງເຂດ ເຊັ່ນ ທາງພາກຕາເວັນອອກສຽງເໜືອຂອງປະເທດ*ໄທ* ແລະເຂດທົ່ງຣາບ ໃນ*ລາວ* ການຕັ້ງຖິ່ນຖານບ້ານເຮືອນເປັນໄປແບບກະຈັດກະຈາຍ ບ້ານນຶ່ງໆ ອາດປະ ກອບຂຶ້ນຈາກຕະກູນດຽວ ຄອບຄົວດຽວ ຫລືຂະຫຍາຍອອກຈາກເຊື້ອສາຍດຽວກັນ ເຊິ່ງ ໃນນັ້ນອາດມີຜູ່ໃດຜູ່ນຶ່ງ ໄປກ່ຽວດອງກັບຫົວໜ່ວຍທາງການເມືອງ ທີ່ສຳຄັນກວ່າ ແຕ່ ຫາກຢູ່ຫ່າງໄກຫລາຍເຕີບ. ບ້ານເກົ່າໆ (ຕັ້ງມາດົນແລ້ວ) ທີ່ມີປະຊາກອນຫນາແໜ້ນ ຕາມທົ່ງພຽງອາດມີລູກບ້ານ ລະຫວ່າງຫົກສິບຫານຶ່ງຮ້ອຍຄອບຄົວ ຈຸ້ມກັນຢູ່ບ່ອນດຽວ ຫລືຢັ່ງຍາວເປັນແຖວໄປຕາມສອງຝັ່ງຫ້ວຍ. ຢູ່ອ້ອມຮອບສູນກາງສຳຄັນບ່ອນນຶ່ງ ຈຸ້ມ ຕ່າງໆຂອງບ້ານ ຈຶ່ງແບ່ງແຍກກັນຢູ່ຢ່າງມີລະບຽບຈະແຈ້ງແລະແນ່ນອນ ຕາມບົດ ບາດ ແລະໜ້າທີ່ທາງສັງຄົມອັນແຕກຕ່າງກັນ. ຍັງມີບ້ານແບບອື່ນໆອີກ ທີ່ປະກອບ ດ້ວຍຫົວໜ່ວຍນ້ອຍໆຫລາຍຫົວໜ່ວຍ ຄືຫມົດບ້ານເປັນກຸ່ມເປັນກ້ອນດຽວ ເກີດຂຶ້ນເອງ ຫລືກ່ໍຕົວຂຶ້ນຈາກຫົວໜ່ວຍ ທີ່ອາດມີເອກະລັກທາງຄອບຄົວ ທາງເສດຖະກິດ ທາງສາ ສະໜາ ຫລືທາງການປົກຄອງແບບຕ່າງກັນ. ຕົວຢ່າງ ຫົວໜ່ວຍພື້ນຖານຊີວິດຊາວ ນາໃນ *ຟີລິບປິນ* ເອີ້ນ ວ່າ *ພູໂບລ* (Pueblo)* ປະກອບດ້ວຍ *"ບາຣ໌ໂອສ"* (Barrios) ຈຳນວນຫລາຍເຕີບ, ສ່ວນຢູ່*ຫວຽດນາມ* ເອີ້ນວ່າ *ຊາ* (Xa) ປະກອບດ້ວຍເຮືອນຕູບຈຳ ນວນຫລວງຫລາຍ. ຢູ່ລະຫວ່າງ ຄົວເຮືອນຂອງບ້ານກັບເຫດສະບານແຂວງ ອາດມີຫົວ ໜ່ວຍທາງສັງຄົມແລະການປົກຄອງ ຕັ້ງເປັນກັນແຖວກວ້າງຂວາງ ແລະອາດມີກຳລັງ

---

* ຊຶ່ງມາຈາກຊື່ອິນເດຍແດງເຜົ່າ *ພູໂບລ* (ຫມາຍເຫດຂອງ ຜູ່ແປ)

ບໍ່ມຊ້ອນໃດນຶ່ງ. ບ້ານ/ເມືອງໃນອາຊີຕາເວັນອອກສຽງໃຕ້ ແຕກຕ່າງກັນຫລາຍໃນເລື່ອງ ຂະຫນາດການຈັດຕັ້ງ ແລະຮູບຊົງດ້ານນອກ.

ເວັ້ນສະເພາະແຕ່ເຮືອນຊານ ກໍຕ່າງກັນຫລາຍຢູ່ແລ້ວ, ເກືອບທົ່ວທຸກແຫ່ງໃນ ອາຊີຕາເວັນອອກສຽງໃຕ້ (ຍົກເວັ້ນໃນຊະວາ *ບາຫລີ ລອມບອກ* Jawa, Bali, Lombok ແລະບ່ອນທີ່ຄົນ *ຫວຽດນາມ*ກັບຄົນ*ຈີນ*ອາໄສຢູ່ຫລາຍ) ເຮືອນຢູ່ ແມ່ນເຮືອນ ມີເສົາຕັ້ງ ສູງພໍ້ກ້ອມຫົວ(ລະຫວ່າງຫົກຟຸຕ) ຫລືກວ່ານັ້ນ. ຢ່າງໃດກໍຕາມ ຍັງມີຄວາມແຕກຕ່າງ ຢ່າງໃຫຍ່ຫລວງອີກລະຫວ່າງເຮືອນຢູ່ຂອງຊຸມຊົນໃນ *ມິນັງກາໂບ* (Minang kabau) ຢູ່ *ສຸມາຕຣາ* (Sumatra) ທີ່ສ້າງໄວ້ເພື່ອຮອງຮັບຄອບຄົວຂະຫຍາຍ ຕາມສາຍແມ່ ກັບ ເຮືອນຕູບໄມ້ໄຜ່ມຸງຫຍ້າ ຂອງຊາວ*ມາເລ*. ເຮືອນຢູ່ ເຊິ່ງເຮັດດ້ວຍວັດຖຸທ້ອງຖິ່ນ ເຊັ່ນ ໄມ້ສັກ ຫລືໄມ້ໄຜ່ ຫລືບາງເທື່ອມີແຜ່ນຫີນ ຮອງກົກເສົານັ້ນ ອາດເປັນແບບທຳມະດາໆ ຫລືແບບງົດງາມປານີດ. ອົງປະກອບອັນເດັ່ນທາງດ້ານສະຖາປັດ ແມ່ນຊຸ້ມປະຕູເຂົ້າ ດ້ານຫນ້າ, ພາຍໃນເຮືອນ ບໍ່ຄ່ອຍມີເຄື່ອງໃຊ້ປະເພດໂຕະຕັ່ງ ແຕ່ມີປ່ອງຢ້ຽມຫລາຍ ພຽງພໍສຳລັບໃຫ້ລົມລ່ວງ ຫລັງຄາເທິບ ເພື່ອໃຫ້ນ້ຳຝົນຍາມມໍລະສຸມໄຫລລົງໄວ.

ສະຖານທີ່ສາທາລະນະ(ເພື່ອສ່ວນໂຮມ) ຈຳນວນຫນ້ອຍນຶ່ງໃນບ້ານ ອາດແມ່ນ ຫມາກຜົນຂອງການອອກແຮງງານລວມຫມູ່ ຕະຫລອດລະຍະຫລາຍປີ ຫລືແມ່ນສັດທາ ຂອງອາດຍາເຈົ້ານາຍຜູ້ໃດຜູ້ນຶ່ງໃນທ້ອງຖິ່ນ ຫລື ຊາວນາຜູ້ຮັ່ງມີ. ມີແຕ່ຫົວຫນ່ວຍອ່າວ ໃຫຍ່ໃນບ້ານເທົ່ານັ້ນ ຈຶ່ງສາມາດສະຫນັບສະຫນູນການປຸກສ້າງອາຄານ ທາງສາສະ ຫນາທີ່ສຳຄັນໆ ເຊັ່ນ ສິມ ວັດ *ພູໂບລ* (Pueblos) ໃນ*ຟີລິບປິນ* ຫລື ຫໍໄຫວ້ ສຸເຫຣ່ຳ ປະ ຈຳບ້ານ ຂອງລັດ*ມາເລ* ຫລື ຂອງ*ຊະວາ*ຕາມຊາຍຝັ່ງພາກເຫນືອ (ສິ່ງເຫລົ່ານີ້ບໍ່ອາດ ກໍ່ສ້າງຂຶ້ນໄດ້ ຖ້າບໍ່ມີຊາວຫນຸ່ມຍິງຊາຍຢູ່ໃນຊຸມຊົນຢ່າງຫນ້ອຍ ສີ່ສິບຄົນຂຶ້ນເມືອ ຊ່ອຍ ກັນເຮັດ). ບ້ານຊາວ *ຫວຽດນາມ* ສ່ວນຫລາຍມີຮົ້ໄມ້ໄຜ່ຕີ້ອ້ອມ ສ່ວນບ້ານຂອງຊາວ*ໄທ ຂະເຫມນ* ຫລື *ພະມ້າ* ກໍມັກສ້າງວັດໄວ້ຮ່ວມກັນ. ສີໄມ້ລາຍມື ຂອງຊ່າງທ້ອງຖິ່ນ ຫລື ນາຍຊ່າງພະເນຈອນ ປະທັບຮ່ອງຮອຍໃສ່ສິ່ງກໍ່ສ້າງເຫລົ່ານີ້ ແລະເຫລືອລອດມາໃຫ້ເຮົາ ເຫັນ ຍ່ອມເປັນອະນຸສອນຢັ້ງຢືນຢ່າງນຶ່ງວ່າ ສິລະປະອັນສຳຄັນຂອງອາຊີຕາເວັນອອກ ສຽງໃຕ້ນັ້ນ ບໍ່ໄດ້ຕົກຂ້ອນທ້ອນໂຮມຢູ່ແຕ່ໃນເມືອງຫລວງເທົ່ານັ້ນ.

ຊາວບາ ພານປາ

ທົ່ວທັງພາກພື້ນອາຊີຕາເວັນອອກສຽງໃຕ້ນີ້ ທັງຫ້ວຍຮ່ອງ ໜອງ ນ້ຳທະເລ ສາບແລະທະເລຫລວງ ໄດ້ສະໜອງສິ່ງຈຳເປັນເພີ່ມເຕີມໃຫ້ແກ່ອາຫານສຳລັບຊາວບາ. ປາເຊິ່ງບາງເທື່ອອາດແມ່ນປາສົດ ແຕ່ສ່ວນໃຫຍ່ແມ່ນປາແຫ້ງຫລືປາຢ້ຳ ເປັນອາຫານຫລັກ ສຳລັບກິນກັບເຂົ້ຳ, ທ້ອງທະເລແຫ່ງອາຊີຕາເວັນອອກສຽງໃຕ້ ອຸດົມສົມບູນ ໄປດ້ວຍປານາໆຊະນິດ ເຖິງແມ່ນວ່າຊຸມຊົນຕາມແຄມຝັ່ງທະເລ ໄດ້ສຸມກຳລັງສ່ວນໃຫຍ່ ຂອງເຂົ້ຳ ໃສ່ການປະມົງກໍຕາມ ແຕ່ກໍມີບ້ານຊາວປະມົງ ຕາມຊາຍຝັ່ງທະເລແຫລມ *ມາລາຢູ* (Malay Peninsula) ແລະຊາຍຝັ່ງໝູ່ເກາະດອນ *ອິນໂດເນເຊຍ* ຈຳນວນນຶ່ງ ເທົ່ານັ້ນ ທີ່ພໍເອີ້ນໄດ້ວ່າມີການຈັດຕັ້ງທາງສັງຄົມ ແລະເສດຖະກິດ ເປັນຮູບແບບເດັ່ນ ຢ່າງຈະແຈ້ງໄດ້.

ບ້ານເຫລົ່ານີ້ເກືອບບໍ່ຮັ່ງມີເລີຍ ເຖິງວ່າຈະອີງໃສ່ມາດຕະຖານບ້ານຊາວນາກໍ ຕາມ ສ່ວນຫລາຍເປັນບ້ານນ້ອຍໆ ກະແຈກກະຈາຍເປັນຍ່ານໆຢູ່ຕາມຫາດຊາຍສີຂາວ ກ້ອງຮົ່ມພ້າວຫລືຮົ່ມຕົ້ນປາມ ຕົ້ນກາຊູຣິນາ ໃນບໍລິເວນມໍ່ໆກັບປາກນ້ຳ ຫລືລຳຫ້ວຍ. ບ້ານຊາວປະມົງແທ້ໆ ແມ່ນບ່ອນຕັ້ງເຮືອນຊານປະມານສິບກວ່າຫລັງ ເຮັດດ້ວຍໄມ້ໄຜ່ ພໍລອກໆ ຢັ່ງຢາຍໄປຕາມຫາດຊາຍ. ວິທີການຫາປາແຕກຕ່າງກັນໄປຕາມແຕ່ລະທ້ອງ ກຸ່ນທະເລ ແລະຊະນິດປາ ແຕ່ເຄື່ອງມື ເຄື່ອງໃຊ້ ແມ່ນອັນດຽວກັນ ຄືມີເບັດສາຍ ຜຽກ ໂປ໊ະ ມອງຍາວ ແໜ ເຮືອ ແລະ ອວນ. ເຖິງແມ່ນວ່າ ອຸປະກອນຫາປາສ່ວນຫລາຍ ເຮັດ ຂຶ້ນແບບງ່າຍໆດ້ວຍວັດຖຸດິບທີ່ມີຢູ່ພາຍໃນບ້ານກໍຕາມ ແຕ່ມັນກໍສະແດງໃຫ້ເຫັນວ່າ ມີ ການລົງທຶນຫລາຍເກີນກວ່າຊາວປະມົງຄົນນຶ່ງຄົນດຽວ ຫລືຄອບນຶ່ງຄອບຄົວດຽວ ຈະ ເຮັດໄດ້. ນອກຈາກນີ້ ວິທີຫາປາຫລາຍແບບ ກໍຕ້ອງອາໄສແຮງງານຫລາຍຄົນ ເຊັ່ນ ການແລ່ນເຮືອໃຫຍ່ ການສ້ອມແຊມອວນລາກມອງຂະໜາດໃຫຍ່... ຄວາມເປັນຈິງ ສອງຢ່າງໂຮມເຂົ້ຳກັນ ກາຍເປັນຄວາມຈຳເປັນ ເພື່ອເຕົ້ຳໂຮມ ເອົ້ຳຊັບພະຍາກອນ ແລະການເຮັດວຽກຮ່ວມກັນນີ້ ມັນໄດ້ນຳໄປເຖິງຮູບແບບການຮ່ວມມືກັນ ຢ່າງແປກປະ ຫລາດອັນນຶ່ງ ໃນລະດັບເສດຖະກິດບ້ານຂອງຊາວປະມົງ. ເຮົ້ຳອາດເຫັນຊາວປະມົງ ໃນ ບ້ານນຶ່ງ ນັ່ງລ້ອມເປັນວົງ ເຮັດວຽກຢ່າງເປັນອິສຣະ ແຕ່ລະວົງມີຫົວໜ້ຳຜູ່ນຶ່ງນຳ ພາແລະສັ່ງການ. ບາງເທື່ອຫົວໜ້ຳຜູ່ນີ້ ອາດໄດ້ຮັບຄັດເລືອກມາ ຍ້ອນວ່າ ເຂົ້ຳມີ

ຫ້ນຢູ່ໃນອຸປະກອນຫລາຍກວ່າຫມູ່ ແຕ່ບາງທີ ຍ້ອນວ່າເຂົ້າມີປະສົບການຊ່ຽວຊານໃນ ການຫາປາຫລາຍກວ່າຫມູ່ ສາມາດຄາດຄະເນ ຫລືຢັ່ງຮູ້ການເຄື່ອນຍ້າຍບ່ອນຢູ່ຂອງ ປາ ຫລືອາດດ້ວຍຄວາມສາມາດພິເສດ ໃນການທຳພິທີດ້ຳຜີລ້ຽງຜີໃຫ້ມາຊ່ອຍຫາປາ ໄດ້ດີ. ບັນຫາການຕະຫລາດ ກໍເຊັ່ນດຽວກັນ ຈຳນວນຜູ່ກຶ່ຫ້ນ ສະທ້ອນໃຫ້ເຫັນຄວາມຊັບ ຊ້ອນໃນການປະເມີນເວລາທີ່ທຸກຄົນອຸທິດໃສ່, ການລົງທຶນ ແລະຄວາມສາມາດທີ່ສຸມໃສ່ ນັ້ນ ກໍເປັນວິສາຫະກິດນຶ່ງ ທີ່ສະຫລັບຊັບຊ້ອນຄືກັນ.

ນາຍຊ່າງສີມື ແລະຊ່າງຫັດຖະກຳ ປະຈຳບ້ານ

ໂດຍທົ່ວໄປ ຊຸມຊົນຊາວນາ ທີ່ມີປະຊາກອນຫລາຍກວ່າພວກອື່ນນັ້ນມີສະມາຊິກ ທັ້ງທີ່ເປັນນາຍຊ່າງ ແລະຊ່າງຫັດຖະກຳ ຕະຫລອດຮອດຫມໍຜີ ຫມໍເຢົ້າ ຫມໍຈ້ຳ ຜູ່ປະ ກອບພິທີກຳຕ່າງໆ, ເຈົ້າສັດທາ ກັບຜູ່ຊ່ຽວຊານ ສາຂາຕ່າງໆເຫລົ່ານີ້ ເປັນຜູ່ຮັບຜິດ ຊອບແກ້ໄຂບັນຫາ ທີ່ອາດເກີດຂຶ້ນຍາມໃດຍາມນຶ່ງ. ພວກເຂົ້າອາດເປັນຊາວນາທຳມະ ດາໆ ແຕ່ບັນລຸຄວາມສາມາດພິເສດອັນໃດອັນນຶ່ງຈາກການສຶກສາຮ່ຳຮຽນ ຫລືຈາກ ການສືບທອດຈາກຄອບຄົວ. ໃນບ້ານນຶ່ງໆ ມັກຈະມີຫມໍໂຫນຜູ່ສາມາດບອກມື້ບອກຍາມ ແກ່ພວກຊາວນາວ່າເວລາໃດເຫມາະສົມສຳລັບລ້ຽງຜີຕາແຮກ ຫລືແມ່ນແຕ່ຊ່ອຍຊີ້ບອກ ພວກຜູ່ບ່າວໃນການເລືອກເມຍທີ່ເຫມາະສົມກັບຕົນ ຫລື ຜູ່ມີອາດແອວສະແດງຫນັງຕະ ລຸງ ເຊັ່ນພວກ *ດາລາງ* (Dalang) ຊາວ *ຊະວາ* ຫລື *ມາເລ* ທີ່ນຳເອົາເລື່ອງປະເພດ ສຽດສີສັງຄົມປະສົມເລິກລັບຫນ້າງຶດ ຫລື ເລື່ອງຕະຫລົກແບບຄາວໆ ມາຫລິ້ນເປັນປະ ຈຳ. ໃນກຸ່ມຄົນເຫລົ່ານີ້ ມີທັ້ງຜູ່ເປັນນາງທຮຸມ ຫມໍໂຫນ ແລະຫມໍຢາພື້ນເມືອງ. ບ້ານ ອື່ນໆກໍມີນາຍຊ່າງ ຜູ່ຊຳນານ ເຊັ່ນ: ບ້ານຊ່າງເຫລັກ ບ້ານຊ່າງໄມ້ ຫລືພວກແມ່ຍິງທີ່ ມີຊື່ສຽງໃນດ້ານຕ່ຳຫູກ ແລະຈັກສານ. ອຽກງານເຫລົ່ານີ້ ມັກເຮັດກັນແຕ່ໃນລະດູແລ້ງ ຫລັງຈາກສຳເລັດອຽກໄຮ່ການນາແລ້ວ ເທົ່ານັ້ນ.

ບາງບ້ານມີຄວາມຊ່ຽວຊານໃນເລື່ອງຫັດຖະກຳໃດນຶ່ງ ຫລືການຄ້າຂາຍແນວ ໃດແນວນຶ່ງ ນອກຈາກການກະສິກຳ. ບາງບ້ານຜະລິດເກືອໂດຍເຮັດນາເກືອ ຄືເປ່ັງເອົາ ນ້ຳທະເລເຂ້ົາໄປໄວ້ໃນໄຮ່ນາຕື້ນໆ ແລ້ວປ່ອຍໃຫ້ນ້ຳຕາກແດດເຫີຍແຫ້ງໄປເອງ. ບ້ານ ອື່ນໆ ຕີຫມໍ້ ປັ້ນໄຫ ເຮັດເຈ້ຍສາ ປັ້ນດິນຈີ່ ເຮັດຫມວກ ຄັນຣົ່ມ ຕ່ຳຫູກ ຫລືເຮັດເຄື່ອງເຮ້

ດ້ວຍແກ້ວຫີນ. ຢູ່*ບາຫລີ* ມີສອງສາມບ່ອນ ທີ່ຂະບວນການຜະລິດຫັດຖະກຳປະເພດໃດປະເພດນຶ່ງ ກາຍເປັນຊັບສິນສ່ວນບຸກຄົນ ດ້ວຍການສືບທອດກັນມາພາຍໃນກຸ່ມຊັ້ນຄົນໃດນຶ່ງ. ເຖິງວ່າ ການຈັດກຸ່ມຄອບຄົວ ແລະບ້ານ ປາກົດໃຫ້ເຫັນຢູ່ທົ່ວໆໄປກໍຕາມ ເຊັ່ນຢູ່*ຫວຽດນາມ* ແລະ*ປະເທດໄທ* ແຕ່ໂດຍທົ່ວໄປ ຍ້ອນມີວັດຖຸດິບຈຳກັດ ຈຶ່ງເກີດມີກົດເກນໃຫມ່ວ່າ ບ້ານນຶ່ງໆໃຫ້ເຮັດຫັດຖະກຳແຕ່ຢ່າງດຽວ. ຢູ່ *ຫວຽດນາມ* ບ້ານຫລາຍແຫ່ງພະຍາຍາມປິດລັບວິຊາຫັດຖະກຳ ແລະ ຫວງຄວາມຊຽວຊານໄວ້ໃຫ້ສະເພາະພັກພວກຕົນເອງ ດ້ວຍການເກືອດຫ້າມ ບໍ່ໃຫ້ແມ່ຍິງໃນບ້ານໄປແຕ່ງດອງກັບຊາຍຕ່າງບ້ານ ຫລືບໍ່ກໍປະຕິເສດກົງໆ ບໍ່ສິດສອນໃຫ້ຄົນພາຍນອກ. ຊ່າງສີມືເຊິ່ງເປັນຜູ່ສະດຸ້ງໄວຕໍ່ການບັງຄັບຄວບຄຸມ ຂອງທາງການຫລາຍກວ່າຄົນກຸ່ມອື່ນນັ້ນ ມັກອາໄສຕະຫລາດເປັນຕົ້ນຕໍ ຫລາຍກວ່າຄົນກຸ່ມອື່ນໆໃນບ້ານດຽວກັນ. ຄວາມຊຳນິຊຳນານຂອງພວກເຂົາ ເປັນທີ່ຍອມຮັບນັບຖືຈາກລັດ ສະນັ້ນ ພວກເຂົາຈຶ່ງໄດ້ຮັບການຍົກເວັ້ນ ບໍ່ໄດ້ອອກແຮງງານຕາມລະດູການ ແລະບໍ່ໄດ້ເສຍພາສີ ຄືພວກຊາວນາອື່ນໆ. ແຕ່ຢ່າງໃດກໍຕາມ ພວກເຂົາກໍຕ້ອງໄດ້ຈ່າຍພາສີຫນັກຢູ່ ແລະຕ້ອງສົ່ງຜົນຜະລິດໄປໃຫ້ວັງຫລວງ ໃນລາຄາກຳນົດຕາຍຕົວ ຫລືບໍ່ມີລາຄາຊ້ຳ. ການຂູດຮີດແຮງງານແບບຂ້ອຍຂ້າແນວນີ້ ອາດເປັນອຸປະສັກຕໍ່ການເຕີບໃຫຍ່ຂອງອຸດສາຫະກຳ ດ້ວຍວ່າ ມີການຈຳກັດຕະຫລາດແລະການກົດລາຄາ. ການທີ່ເຄື່ອງຫັດຖະກຳ ຂອງຊາວບ້ານ ຍັງຄົງຕົວຢູ່ໄດ້ເປັນຈຳນວນຫລາຍນັ້ນ ກໍຍ້ອນມີຄວາມຕ້ອງການທາງດ້ານ ການໃຊ້ສອຍພື້ນຖານ ທີ່ຕິດເປັນນິໄສຢູ່ແລ້ວຫລາຍກວ່າຄວາມປາຖະຫນາຢາກສືບທອດໃຫ້ກັນແລະກັນ ຕ່ຳໆໄປ ຫລືຍ້ອນວ່າ ມັນສ້າງຜົນກຳໄລໃນຖານະວ່າ ເປັນກິດຈະການທາງເສດຖະກິດອັນນຶ່ງ.

ຂ້ອຍຂ້າທຳມະດາ ແລະຂ້ອຍສິນໄຫມ

ໃນສະຕະວັດທີ 18 ມີລະບົບຂ້ອຍຂ້າ ຢູ່ເກືອບທົ່ວອາຊີຕາເວັນອອກສຽງໃຕ້ທັງຫມົດ ທີ່ພໍສາມາດຈັດແບ່ງອອກໄດ້ ດັ່ງນີ້: ຂ້ອຍຂ້າສືບທອດ, ຂ້ອຍຂ້າບໍ່ສືບທອດ, ຂ້ອຍຂ້າຊົ່ວຄາວ ແລະຂ້ອຍຂ້າຊົ່ວຊີວິດ. ຂ້ອຍຂ້າສືບທອດ ເປັນຂ້ອຍຂ້າທີ່ໄກ່ຊື້ຄືນບໍ່ໄດ້. ໂດຍທົ່ວໄປພວກນີ້ແມ່ນ ຊະເລີຍເສິກເກົ່າ, ນັກໂທດ ຫລື ພວກກະບົດ ຫລື ໄດ້ມາຈາກການໄປໂຫ່ຈັບເອົາຕາມພູດອຍ. ຢູ່ເທິງເກາະດອນຕ່າງໆ ທັງກົດຫມາຍ*ຄຣິຕຽບ* ແລະ

ອິສລາມ ເກືອດຫ້າມເອົາຜູ່ເຂົ້າສາສະຫນາແລ້ວມາເປັນຂ້ອຍຂ້າ ແຕ່ຍ້ອນວ່າ ມີການ ອະນຸຍາດໃຫ້ເອົາຄົນນອກສາສະຫນາມາເປັນຂ້ອຍໄດ້ ຈຶ່ງມີຂ້ອຍ *ມຸດສະລິມ* ຈຳນວນ ນຶ່ງ. ຢູ່ໃນ *ຟີລິບປິນ* ຂ້ອຍຂ້າທີ່ນັບຖື *ຄຣິຕ* (Christian) ຈາກ *ບິສາຍະ* (Bisayas) ມີຢູ່ທົ່ວເກາະດອນອັນກວ້າງໃຫຍ່ ແລະຂ້ອຍທີ່ນັບຖືຜີ ກໍມີຢູ່ໃນສັງຄົມລັດທຸກໆສັງຄົມ ເທິງເກາະດອນ ໃນນັ້ນ ຮວມທັງພວກ *ດັດຊ* (Dutch) ຢູ່*ອິນໂດເນເຊຍ*ນຳ. ໃນ *ພະມ້າ ກຳພູຊາ* ແລະ *ສະຫຍາມ* ຍັງມີຂ້ອຍວັດຈຳນວນນຶ່ງ ອາໄສຢູ່ໃນບ້ານ ຄືກັບຊາວບ້ານ ທົ່ວໄປ ແລະຕ້ອງສະຫລະຜົນຜະລິດ ທີ່ໄດ້ຈາກທີ່ດິນຕາມທີ່ກຳນົດໃຫ້ນັ້ນໃຫ້ແກ່ວັດ ເປັນ ການບຳລຸງວັດຂອງ*ຊາວພຸດ*. ໃນປະເທດ *ຫວຽດນາມ* ຄົນທີ່ກາຍເປັນຂ້ອຍຍ້ອນຖືກໂທດ ດ້ວຍການກ່ອອາຊະຍາກຳ ມັກຖືກສົ່ງໄປຢູ່ຄ້າຍທະຫານບໍລິເວນຊາຍແດນ ເພື່ອບຸກເບີກ ເນື້ອທີ່ປູກຝັ່ງໃຫມ່. ພວກເຂົາສາມາດກັບຄືນເປັນຊາວນາ ຢູ່ກັບບ່ອນທີ່ພວກເຂົາສ້າງ ຢູ່ທຳກິນໄດ້ ຫລັງຈາກພົ້ນໂທດແລ້ວ. ນອກຈາກຂ້ອຍທຳມະດາແລ້ວ ໃນ *ຊະວາ* (Java) ຍັງມີຊຸມຊົນ ຂ້ອຍຂ້ານອກຊົນຊັ້ນອີກຈຳນວນນຶ່ງ ເຊິ່ງມີຫນ້າທີ່ຮັບໃຊ້ລັດເຮັດວຽກພິ ເສດ ເຊັ່ນ ຝັ່ນເຊືອກ ເບິ່ງແຍງໄຟສັນຍານຢູ່ທ່າເຮືອ. ໂດຍທົ່ວໄປ ພວກເຂົາເປັນຄົນ ພາຍນອກໂດຍກຳເນີດ ຫລືຕົກຕ່ຳແໜ່ງທີ່ມີກຽດ ຍ້ອນການປະພຶດປະຕິບັດຕົນບໍ່ດີ. ຄົນ ຈຳພວກນີ້ບໍ່ມີຫລາຍ ແລະບໍ່ເຄີຍໄປຮັບຈ້າງເຮັດວຽກທາງນອກຈັກເທື່ອ ນອກຈາກໄປ ຮັບໃຊ້ຄອບຄົວພວກເຈົ້ານາຍ.

ໃນປາຍສະຕະວັດທີ 18 ການຕົກເປັນຂ້ອຍຂ້າ ດ້ວຍຫນີ້ສິນ ເປັນເລື່ອງມີຢູ່ທົ່ວໆ ໄປ ຫລາຍກວ່າການຕົກເປັນຂ້ອຍຂ້າໂດຍກົງຊ້ຳອີກ, ໂດຍສະເພາະໃນ *ສະຫຍາມ* ແລະ *ພະມ້າ* ບາງທີອາດຮວມທັງ *ມາລາຢູ* ນຳ, ໃນປະເທດເຫລົ່ານີ້ ເສດຖະກິດຊົນນະບົດ ຄ່ອຍໆຫັນມາເປັນເສດຖະກິດແບບເງິນຕາຫລາຍຂຶ້ນ. ຊາວນາຜູ່ຕົກຢູ່ໃນຄວາມຫຍຸ້ງ ຍາກທາງເສດຖະກິດ ເຊັ່ນຕ້ອງການເງິນສົດ ໄປແຕ່ງເມຍ ຫລືເພື່ອໄປໃຊ້ຫນີ້ ຍ້ອນເສຍ ພະນັນ ຈຶ່ງຕ້ອງໄປຂອກຍໍຄວາມຊ່ອຍເຫລືອ ນຳຄົນບ້ານໃກ້ເຮືອນຄຽງ ຫລືຫົວຫນ້າ ທ້ອງຖິ່ນ, ເຂົາອາດໄດ້ຮັບເງິນສົດ ຫລືສິ່ງຂອງ ພ້ອມກັບກຳນົດເວລາສົ່ງຄືນ, ຖ້າຫາກ ວ່າເຂົາບໍ່ສົ່ງຫນີ້ຫັນຕາມກຳນົດເວລາແລ້ວ ເຂົາເອງພ້ອມທັງຜູ່ເພິ່ງພາອາໄສຢູ່ນຳ ກໍ ຈະກາຍເປັນຂ້ອຍຂ້າສິນໄຫມໄປຈົນກວ່າຈະສາມາດຊຳລະຫນີ້ສິນນັ້ນໄດ້ຫມົດ. ໃນລະຍະ ທີ່ເປັນຫນີ້ຢູ່ນີ້ ເຂົາອາດຍັງຢູ່ໃນບ້ານ ແຕ່ຮັບໃຊ້ຫລືຜະລິດເຄື່ອງຂອງໃຫ້ເຈົ້າຫນີ້ ດ້ວຍ

ແນວທາງທີ່ສ້າງຜົນປະໂຫຍດໃຫ້ຕົນເອງແດ່ ຫລືບໍ່ ເຂົາອາດກຶກສິ່ງໄປຢູ່ນຳຄອບຄົວເຈົ້າຫນີ້ ແລະເຈົ້າຫນີ້ກໍຈະລ້ຽງດູໃຫ້ເຄື່ອງນຸ່ງຫົ່ມ ເຂົ້າປາອາຫານ ແລະການຄຸ້ມຄອງເປັນການຕອບແທນ. ດັ່ງນັ້ນ ການຊຳລະຫນີ້ຄືນຈຶ່ງເປັນເລື່ອງຍາກ. ຂ້ອຍສິນໄຫມຈຳນວນຫລາຍ ກາຍເປັນຂ້ອຍຜູກພັນຈົນຕະຫລອດຊີວິດດ້ວຍວິທີການນີ້. ສະຖາບັນຂ້ອຍຂ້າສິນໄຫມ ໄດ້ຮັບການພັດທະນາເປັນພິເສດ ໃນບ່ອນທີ່ຂາດເຂີນກຳລັງຄົນ. ມັນອຳນວຍໃຫ້ພວກເຈົ້າຫນີ້ ໄດ້ປຽບຫລາຍແນວ, ພວກເຂົາມີຄວາມຫມັ້ນໃຈ ໃນການມີແຮງງານລາຄາກຶກ ແລະກຳລັງຄົນສຳລັບເຮັດເສິກ ຫລື ໃນການສະແຫວງຫາອຳນາດທາງການເມືອງ. ຢ່າງໃດກໍຕາມ ຂ້ອຍສິນໄຫມ ອາດຈະໄດ້ຮັບຜົນປະໂຫຍດຢູ່ຄືກັນ. ໃນທາງທິດສະດີ ເຂົາອາດເປັນຄົນອິສຣະ ບໍ່ເປັນຂ້ອຍຂ້າໃຜ ແລະສະຖານະທາງສັງຄົມຂອງເຂົາ ກໍອາດດີຂຶ້ນ ຍ້ອນວ່າ ເຂົາມີສາຍພົວພັນກັບສະມາຊິກຊົນຊັ້ນປົກຄອງຜູ່ໃດຜູ່ນຶ່ງ. ໂດຍອາໄສສະຖາບັນນີ້ ເຂົາອາດໄດ້ຮັບການຄຸ້ມຄອງ, ມີເງື່ອນໄຂຊີວິດການເປັນຢູ່ດີຂຶ້ນ ໄດ້ໃກ້ຊິດກັບແຫລ່ງອຳນາດ ແລະໄດ້ຮັບການຍົກເວັ້ນຈາກການເຮັດວຽກຫນັກ ແລະຈາກການເສຍພາສີ ເຊິ່ງຜູ່ອື່ນໆ ໃນຖານະດຽວກັນ ຕ້ອງໄດ້ຈ່າຍ. ມີບາງກໍລະນີ ພວກຂ້ອຍຂ້າສິນໄຫມ ແລະຄອບຄົວ ໄດ້ຮັບການປະຕິບັດຕອບແບບບໍ່ດີ, ການໂຕນຫນີໄປຢູ່ຕາມພູຜາປ່າດົງເລິກໆ ກໍເປັນຫົນທາງນຶ່ງສຳລັບຜູ່ຕ້ອງການຍຸຕິຊີວິດຂ້ອຍຂ້າ ໃນທົ່ງພຽງ. ໂດຍທົ່ວໄປ ກົດຫມາຍປະເພນີ ໄດ້ບົ່ງຂໍ້ກຳນົດທີ່ຈະແຈ້ງ ສຳລັບຜູ່ເປັນນາຍໃຫ້ປະຕິບັດຕໍ່ຂ້ອຍຂ້າຂອງເຂົາ.

ຊາວນາຢູ່ນອກບ້ານ

ເກືອບທົ່ວທຸກບ່ອນ ຊາວນາທັງຊາຍແລະຍິງ ດຳລົງຊີວິດຢູ່ໃນບ້ານເຮືອນຂອງຕົນ ເຖິງຢ່າງນັ້ນກໍຕາມ ທົ່ວທຸກແຫ່ງໃນອາຊີຕາເວັນອອກສຽງໃຕ້ນີ້ ກໍຫາກມີທາງເລືອກ ທີ່ຝັງຮາກໄວ້ຢ່າງດີ ສຳລັບຊາວຫນຸ່ມນັກຜະຈົນໄພ ແລະພວກຫົວແຂງບໍ່ນັບຖືກົດລະບຽບຂອງບ້ານເມືອງ. ໃນຫລາຍກໍລະນີ ທາງເລືອກເຫລົ່ານີ້ ກໍເປັນທີ່ຍອມຮັບນັບຖືກັນ ຊາວຫນຸ່ມ *ມິນັ໋ງກະໂບ* (Minang Kabau) ເປັນນັກທ່ອງທະເລພະເນຈອນຄ້າຂາຍຢູ່ຕາມເສັ້ນທາງລະຫວ່າງເກາະ *ສຸມາຕຣາ* (Sumatra) ແລະ ຊ່ອງແຄບ (Straits) ຢູ່ ສອງສາມປີ ຈາກນັ້ນກໍກັບຄືນບ້ານ ພ້ອມດ້ວຍຊັບສິນ ແລະ ປະສົບການ.

ເມື່ອກັບມາແບບນີ້ ກໍໄດ້ຮັບຄວາມຊົ່ມເຊີຍຈາກຊາວບ້ານ ແລະບໍ່ດົນກໍສາມາດແຕ່ງ ເມຍ ຕັ້ງຫລັກປັກຖານໄດ້. ທຳນຽມປະຕິບັດຄ້າຍຄືກັນນີ້ ເປັນຢູ່ໃນທຸກຊົນເຜົ່າໃນເກາະ ຄອນ *ສຸມາຕຣາ* (Sumata), ໃນຫມູ່ຄົນ*ລາວ* ແລະ ທຸກແຫ່ງຫົນ. ຊາວ *ມຸດສະລິມ* (Muslims) ຜູ່ໃຈບຸນ ທ່ຽວໄປບ່ອນຕ່າງໆ ເພື່ອສະແຫວງຫານັກປາດອາຈານ*ອິສລາມ*. ນັກບວດຜູ່ມີຊື່ສຽງ ຊາວພຸດກໍເຊັ່ນດຽວກັນ ມັກເດີນທຸດົງເດີນປ່າໄປໄກໆ. ສັງຄົມແບບນີ້ ຂອງຊາວອາຊີຕາເວັນອອກສຽງໃຕ້ ກວມເອົາທັງສີລະປິນນັກດົນຕີ, ນອກຈາກນີ້ແລ້ວ ການສ້ອງສຸມກຳລັງເປັນກອງປຸ້ນ ກໍເປັນຫົນທາງເລືອກອີກເສັ້ນນຶ່ງ ທີ່ພົບເຫັນຢູ່ທົ່ວໆໄປ ໃນອາຊີຕາເວັນອອກສຽງໃຕ້ ສຳລັບຜູ່ຄົນທີ່ຕ້ອງອົບພະຍົບຫລົບໄພສົງຄາມ ຫລືເມື່ອມີ ຄວາມເດືອດຮ້ອນ ຫລື ພຽງແຕ່ບໍ່ສາມາດທົນຢູ່ ພາຍໃຕ້ກົດລະບຽບອັນເຂັ້ມງວດຂອງ ບ້ານ. ຂໍຍົກຕົວຢ່າງທີ່ ໂດ່ງດັງສອງກໍລະນີ ຄື ພວກນັກປຸ້ນ ຢູ່ *ຊະວາ* ທີ່ມີຊື່ເອີ້ນກັນວ່າ *ຈາໂກ* (Jago), ໃນ *ຟິລິບປິນ* ຊື່ວ່າ *ຕຸລິສານີສ* (Tulisanes). ພວກເຂົາມີການຈັດຕັ້ງ ເປັນກຸ່ມຢ່າງເປັນປົກກະຕິ ໂດຍມີທຳນຽມປະຕິບັດ ແລະວັດທະນະທຳຂອງ ກຸ່ມໂດຍສະ ເພາະ, ສ່ວນຫລາຍແລ້ວຫົວໜ້ານຳພາ ເປັນຜູ່ມີຊື່ສຽງທາງດ້ານເວດມົນຄາຖາອາຄົມ ແລະກ້າຫານ. ບາງຄັ້ງການຫາຍໂຕໄປຂອງພວກເຂົາ ກໍກາຍເປັນຕຳນານເລົ່າຂານກັນ ຕໍ່ໆມາ ແຕ່ສ່ວນໃຫຍ່ແລ້ວ ພວກເຂົາເປັນທີ່ກຽດຊັງ ແລະຢ້ານກົວຫລາຍກວ່າ.

ຊາວບ້ານອື່ນໆອີກຈຳນວນຫລວງຫລາຍ ອອກຈາກບ້ານໄປເປັນແຮງງານເກນ ໃຫ້ຫລວງ, ຢູ່ແຜ່ນດິນ *ຊະວາ* ເອີ້ນວ່າວຽກ*ກຸລີ* (Corvee) ໃນ*ມາເລເຊຍ* ເອີ້ນວ່າ *ເກຣະ* (Kerah) ໃນ *ຟິລິບປິນ* ວ່າ *ໂປໂລ* (Polo). ເວົ້າໂດຍທົ່ວໄປແລ້ວວຽກແນວນີ້ ມີຢູ່ສອງ ຮູບແບບຄື: ຮັບໃຊ້ເຈົ້ານົກເຈົ້າເຫລົ່າທ້ອງຖິ່ນແບບສ່ວນຕົວ ແລະຮັບໃຊ້ *"ທ່ານຜູ່ປົກ ຄອງ"* ຢ່າງບໍ່ເປັນການສ່ວນຕົວ. ຮູບແບບທີສອງ ຄົງຈະໄດ້ຮັບການພັດທະນາຢ່າງດີທີ່ ສຸດແລ້ວ ຢູ່ໃນລັດແຜ່ນດິນໃຫຍ່ ບ່ອນທີ່ຊົນຊັ້ນ *ອາຫມູດານ* (Ahmudan) ຂອງ *ພະມ້າ* ກັບຊົນຊັ້ນ*ໄພ່ຫລວງ* (Phrai Luang) ຂອງ *ສະຫຍາມ* ຖືກເກນໄປຮັບໃຊ້ເຈົ້າຊີວິດ ປີລະສາມຫລືສີ່ເດືອນ; ພວກເຂົາອາດຖືກເກນໄປຂຸດຄອງຮ່ອງເໝືອງ ຫລືຕິດຕາມກອງ ທະຫານ ທີ່ອອກໄປປະຕິບັດໜ້າທີ່ ໂດຍປະກົ້ມລູກເມຍໄວ້ເບື້ອງຫລັງ. ພວກເຂົາອາດ ຖືກລຸມໂຕໄວ້ ເປັນເວລາດົນນານ ໂດຍບຸກຄົນທີ່ພວກເຂົາບໍ່ຮູ້ຈັກ, ກ້າວ່າມີສຸຂະພາບດີ (ສ່ວນຫລາຍບໍ່ຄ່ອຍດີ) ການໄປເປັນແຮງງານເກນ ປະຈຳປີຂອງພວກເຂົາ ກໍອາດໃຫ້ໂອ

ภาดส่ຽงโຊภย่างใดย่างบึ่ง อาดจะได้เงิน หลือโຊภร้าย ก็ภอ่ิมเหงอ่ิมอู่ในเลื่อง ลอามธัภ, ย่างใดภ็ตาม ไพอันตะลายต่างๆ หลือสะพาบลอามเป้นยู่แบบบลาด บ่เกิง และภามปะติบัดตอบย่างป่าเกื่อน ภ้มักเธัดให้พวภผู่ชาย ที่ไปเธัดอຽภ ธับใช้ปะเพดนี้ พะยายามโตนหนิสะเหมิ, พวภเอ๋ามักอຽภธับใช้แบบส่วนติวยู่ เธือนอาดยาเจ้านายหลายภว่า. อຽภงานธับใช้แบบส่วนติอที่พวภอาภิ (Athi) ใน *พะม้า* และพวภ*ไพ่สิม* (Phraisom) ใน *สะหยาม* เช่ิงส่วนใหย่ต้องเธัดยู่ตะ หลอดปินั้น เป้นอຽภงานยู่ใภ้บ้านเธือนของพวภเอ๋า. พวภเอ๋าเธัดอຽภพายใต้ ภานบันชาของ หัวหน้าคินท้องกิ่น เช่ิงได้ธับมอบอำนาดให้ลวบคุมภานออภ แธงงานนี้ ในฦานะหน้าที่อันบึ่งของเอ๋า. เมื่อได้เธัดอຽภยู่ในบ้านเธือนของ อาดยาอ้าธาชะภาน ภับผู่ปิภลอง ทังได้ผิวพันใภ้ชิดภับนายผู่บึ่งผู่ดຽว หลือภับ ลอบคัวบึ่งลอบคัวดຽว มาหลายธุ่นคินเช่ินนั้น ชาวบาเหล่านี้ ภ้ธู้สึภว่าใภ้ชิด ผูภพัน ภับนายปะจำของติบ หลือ *มูบนาย* (Patron) หลายข้ึน. ชาวบาสาม้าด อาไสภานช่อยเหลือจาภ *"นาย"* หลือผู่คุมของเอ๋า เช่ินว่า ภ้าหาภว่า เอ๋า ไปมิละดิลอาม, หลือในทางปั้นภับ นายของเอ๋าภ็สาม้าดภางต่ภานสะหนับสะ หนุนของพวภเอ๋า เป้นภานตอบแทบ ในภ็ละนิ ที่เอ๋าไปเคื่อนไหวทางภาน เม้อง. ภ้าหาภว่า ธูบแบบแธงงานปะเพดนี้ ข้ึนยู่ภับบุภคิน โดยสะเพาะหลาย ภว่าข้ึนภับภานจัดแบ่ง ของสะฦาบันแล้อ ลอามธู้สึภปอดไพ หมั้นคิง ภ็มี หน้อยภว่า ภานไปเป้นแธงงานเภนย่างเป้นทางภานของลัด ถือมันได้ภายมา เป้นเลื่องของบุภคินหลายภว่า และเป้นสิ่งลาดละเมได้ สำลับผู่มีส่วนภ่ยวข้อง นำ. อຽภงานแบบนี้ ช่อยให้หมิดบ้านโธมภันเข้า เป้นหัวหน่วยภานเม้องใหย่ ภว่าเภ่าได้.

ในยามสิงลาม บิดบาดและลอามสำลับของแธงงานชาวบา ได้ป่ຽน แปงไปย่างเลิภเช่ิง, มิลัดยู่บ่เท่าใดลัด ในอาชิตาเวันออภสຽงใต้ ที่มิภองทะ หานปะจำภานเป้นจำนวนหลาย โดยภานเภนผิบละเม้อง มาเอ้าทะหาน ใน ยามที่ลัดต้องภาน. ปะเทด *หวຽดนาม* ยังธักสาละบิบภานเภนทะหานแบบ ก้าวหน้าไว้ได้ดิเป้นพิเสด เช่ิงแม่นแต่ในยามสะหงบ ภ็ยังธับใช้ยู่เกิงปิละสี่ เดือน หลือ หลายภว่านั้น ภ้าหาภมิลอามจำเป้น. ในขะนะที่ยู่ *หวຽดนาม* ภาน

ເຂົ້າຮັບໃຊ້ດຳເນີນຢູ່ພາຍໃຕ້ການຄວບຄຸມ ທີ່ບໍ່ມີລັກສະນະເປັນການສ່ວນຕົວ ຂອງນາຍທະຫານອາຊີບ ແຕ່ຢູ່ແຫ່ງອື່ນໆຂອງອາຊີຕາເວັນອອກສຽງໃຕ້ ກຳລັງຂອງກອງທັບກຶກລະດົມມາ ໂດຍຜ່ານລະບົບແຮງງານເກນຕາມທຳມະດາ ຄືພວກຜູ້ຊາຍອອກໄປເຮັດເສິກໃນຖານະທະຫານທ້ອງກິ່ນ ຫລືກອງທະຫານແຂວງ ພາຍໃຕ້ຫົວໜ້າແລະຜູ່ນຳຂອງຕົນເອງ ຕ້ອງເອົາເຂົ້າປາອາຫານ ອຸປະກອນແລະອາວຸດ ຂອງຕົນໄປເອງ ແລະມີບາງເທື່ອ ຮອດຕ້ອງຊື້ລູກປືນໃຊ້ເອງ. ເມື່ອພວກກຳອຳນາດ*ສະເປນ* ໃນ *ຟີລິບປິນ* ຕັ້ງກອງທະຫານ ຊາວ*ປຳປາກັ*ງ (Pampangan) ທີ່ມາຈາກດອນ*ລູຊອນ* (Luzon) ໄວ້ໃນບາງສ່ວນ ຂອງໝູ່ເກາະດອນ *ບິສາຍັນ* (Bisayan) ນັ້ນ ມັນແມ່ນການສວຍໃຊ້ການເປັນສັດຕູກັນ ລະຫວ່າງກຸ່ມພາສາ. ເຊັ່ນດຽວກັນກັບບ່ອນອື່ນໆ ໃນ ສະຕະວັດທີ 18 ສົງຄາມ ສາມາດນຳມາເຊິ່ງຄວາມບາດເຈັບລົ້ມຕາຍເປັນຈຳນວນມາກ ແລະ ນຳເອົາຄວາມທຸກຍາກ ອຶດຫີວ ຢ່າງຫລວງຫລາຍມາສູ່ຜົນລະເມືອງ. ໃນຂະນະທີ່ການສູ້ຮົບຫລືການສູ້ຮົບຊິ່ວຄາວ ສາມາດເກີດຂຶ້ນພາຍໃຕ້ຮູບແບບຈັດຕັ້ງ ເປັນກອງໂຈນຂະໜາດໃຫຍ່ນັ້ນ ມັນຊ້ຳເປີດໂອກາດໃຫ້ຊາວໜຸ່ມໄດ້ຮັບຮາງວັນ ແລະໄດ້ສ່ຽງໂຊກຕະຫລອດຮອດ ການກ້າວກະໂດດຂຶ້ນສູ່ຕຳແໜ່ງທາງສັງຄົມ ຫລັງຈາກໄດ້ສະແດງຄວາມສາມາດໃນສະໜາມຮົບແລ້ວ.

ໂຄງສ້າງສັງຄົມ

ຜູ່ທີ່ຢູ່ໃກ້ຊິດກັບຊາວນາອາຊີຕາເວັນອອກສຽງໃຕ້ ແມ່ນຍາດພີ່ນ້ອງຂອງພວກເຂົາເອງ ທີ່ເປັນເຊື້ອແນວດຽວກັນແດ່ ຫລືວ່າເປັນພີ່ນ້ອງຫ່າງໆໃນບ້ານດຽວກັນ. ເກືອບທົ່ວພາກພື້ນ ຄວາມສຳພັນສາຍແມ່ ມີຄວາມສຳຄັນເທົ່າກັບສາຍພໍ່ ເຖິງຈະຖືກໜີບດັນຍ້ອນຄວາມລຳອຽງນິຍົມສາຍພໍ່ ໃນກຸ່ມຜູ່ນັບຖື *ອິສລາມ*, ສາສະໜາ*ຄຣິ*ຕ ຂອງ*ສະເປນ* ແລະຫລັກສິນທຳຂອງ *ຂົງຈື* (Confucian ethics) ກໍຕາມ, ຮູບແບບການສືບມໍລະດົກຊີ້ໃຫ້ເຫັນວ່າ ການກືສຳຄັນທັງສອງສາຍ ແລະຖານະຕຳແໜ່ງອັນສູງສົ່ງຂອງແມ່ຍິງໂດຍທົ່ວໄປ ມັນແມ່ນປັດໄຈວັດທະນະທຳຂອງພະລັງ ແຫ່ງຄວາມອົດທົນ, ເນື່ອງຈາກວ່າ ບ້ານທົ່ວໆໄປ ປະກອບດ້ວຍຄອບຄົວຈຳນວນໜ້ອຍດຽວເທົ່ານັ້ນ ບ້ານເຫລົ່ານີ້ຈຶ່ງປິດລ້ອມຕົນເອງ ຫລື ຕິດຕໍ່ກັບບ້ານອື່ນໆໄດ້ ກໍແຕ່ດ້ວຍການແຕ່ງດອງເປັນຕົ້ນຕໍ.

ຄວາມເປັນຍາດພີ່ນ້ອງ ເຮັດໃຫ້ແຕ່ລະຄົນຊື່ສັດຕໍ່ກັນ ໃນຂັ້ນຕົ້ນ ແລະກຳນົດຕຳແໜ່ງ ຂອງແຕ່ລະຄົນ ໃນສັງຄົມບ້ານໄດ້.

ໃນບ້ານນຶ່ງໆ ມີຮູບແບບສາຍສຳພັນພາຍໃນຫລາຍແບບ ນອກເໜືອໄປຈາກ ຄວາມສຳພັນແບບຄອບຄົວ. ຄວາມສຳພັນລະຫວ່າງ ຜູ່ອຸປະກຳກັບຜູ່ອາໄສ ກໍ່ໃຫ້ເກີດ ຄວາມເຂົ້າໃຈເຊິ່ງກັນແລະກັນ ລະຫວ່າງຜູ່ຢູ່ສູງ ກັບຜູ່ຢູ່ຕ່ຳ ຕາມລຳດັບແບ່ງຊັ້ນທາງ ສັງຄົມ. ບຸກຄົນຊັ້ນຜູ່ນ້ອຍ ຫລືຜູ່ອາໄສ ໄດ້ຮັບການຄຸ້ມຄອງຊ່ອຍເຫລືອ ເປັນການຕອບ ແທນການສະໜັບສະໜູນ ການຮັບໃຊ້ແລະຄວາມເຄົາຣົບນັບຖື ທີ່ພວກເຂົາມີໃຫ້ແກ່ຜູ່ ເປັນນາຍ. ໃນປະເທດ *ສະຫຍາມ* ລະບົບນີ້ໄດ້ຂະຫຍາຍຕົວຫລາຍ, ຄວາມສຳພັນພາຍ ໃນເຫລ່ານີ້ເກີດຂຶ້ນທັງພາຍໃນໂຄງສ້າງແບບທາງການ ຂອງລະບົບຣາຊະການ ນັບແຕ່ ຂັ້ນບ້ານຂຶ້ນໄປ ແລະພາຍນອກ ນັບແຕ່ລຳດັບຊັ້ນການປົກຄອງແບບທາງການ ຜ່ານ ຄວາມສຳພັນແບບສ່ວນຕົວ. ຍ້ອນວ່າໄດ້ກາຍມາເປັນຜູ່ອາໄສເພິ່ງພາອ້າຣາຊະການ ຜູ່ ໃດຜູ່ນຶ່ງ ຊາວນາຈຶ່ງໄດ້ໃກ້ຊິດສະໜິດສະໜົມ ແລະຄ່ອຍໆລ້ຳເຄີຍກັບລະບົບກົດໝາຍ ແລະການປົກຄອງ ເຊິ່ງຕາມປົກກະຕິແລ້ວເປັນເລື່ອງ ທີ່ຢູ່ຫ່າງໄກຈາກພວກເຂົາຫລາຍ, ບາງເທື່ອເຂົາອາດໄດ້ຮັບຣາງວັນ ທີ່ສາມາດຮັບປະກັນຄວາມກ້າວໜ້າ ທາງສັງຄົມ ຂອງເຂົາໄດ້. ຈຸດປະສົງທີ່ຄ້າຍຄືກັນນີ້ ກໍ່ກໍໝູນໃຊ້ຢູ່ໃນທຸກຂົງເຂດວຽກງານທີ່ແຕກຕ່າງ ກັນຫລາຍ ໃນປະເທດ *ຟີລິບປິນ* ໂດຍຜ່ານລະບົບສາຍຍາດຕາມຣີດຄອງ ສົມທົບເຂົ້າ ກັບພິທີລ້າງບາບ ຂອງສາສະໜາ*ຄຣິຕ* ໃນໂອກາດ ທຳພິທີດັ່ງກ່າວ ມັນໄດ້ເກີດສາຍ ສຳພັນພິເສດ ລະຫວ່າງການເປັນພ່ຣັກ ກັບບຸກຄົນໃນຄອບຄົວ ທັງທີ່ຢູ່ພາຍໃນບ້ານ ແລະນອກບ້ານ ທັງຕາມສາຍຕັ້ງ ແລະສາຍຂວາງ ຂອງລຳດັບຊັ້ນທາງສັງຄົມ.

ຄ່ານິຍົມທາງສັງຄົມ

ຄ່ານິຍົມເດັ່ນໆບາງຢ່າງ ໃນສັງຄົມຊາວອາຊີຕາເວັນອອກສຽງໃຕ້ ປາກົດໃຫ້ ເຫັນຈະແຈ້ງ ຢູ່ໃນພາສາປາກເວົ້າຂອງພວກເຂົາ ເຊິ່ງບັນຈຸກ້ອຍຄຳ ຫມວດສັບພະນາມ ຊຶ່ງປັ້ນແຕ່ງເປັນຢ່າງດີ ເພື່ອເວົ້າສະແດງບອກຄວາມຫ່າງໄກ ແລະຄວາມສຳພັນທາງ ສັງຄົມ ລະຫວ່າງຜູ່ໃຫຍ່ກັບຜູ່ນ້ອຍ ລະຫວ່າງຜູ່ໃກ້ຊິດກັບຄົນແປກໜ້າ. ພາສາ ຊະວາ (Javanese) ຍັງຄົງຮັກສາຄຳສັບພື້ນເມືອງຍ່ອຍຕ່າງໆໄວ້ເປັນສ່ວນໃຫຍ່ ສຳລັບເວົ້າ

ກັບຜູ່ມີຖານະທາງສັງຄົມສູງກວ່າ, ກັບຄົນສະເໜມີກັນ ແລະກັບຜູ່ຕ່ຳຕ້ອຍກວ່າ ຕາມຂັ້ນ ແບ່ງທາງສັງຄົມ. ໃນກໍລະນີຂອງຄົນ *ຂະເໜມນ* ແລະ*ຄົນໄທ* ກໍຄືກັນ ເມື່ອເວລາເວົ້າ ກັບຄ້ຳຣາຊະການ ພວກຊາວນາເອີ້ນຕົນເອງດ້ວຍຄຳສັບພະນາມຈຳນວນນຶ່ງ ທີ່ເນັ້ນ ບອກຖານະອັນຕ່ຳຕ້ອຍຂອງຕົນ. ການຮັກສາຄວາມສຳພັນຕາມລຳດັບຊັ້ນເຫລົ່ານີ້ ເປັນ ເລື່ອງສຳຄັນສຳລັບ ສັງຄົມຊາວອາຊີຕາເວັນອອກສຽງໃຕ້. ສັງຄົມປະນາມ ບ່ຍອມຮັບ ຜູ່ກະທຳຜິດທີ່ຂາດຄວາມລະອາຍ ຜູ່ດື້ດ້ານອວດອົ່ງທະນົງໂຕ ຜູ່ອະກະຕັນຍູ ຫລືຫມິ່ນ ປະໝາດຄົນອື່ນ.

ຊີວິດຂອງຊາວນາເຕັມໄປດ້ວຍຄວາມສ່ຽງ. ອັດຕາການເສຍຊີວິດຂອງເດັກເກີດ ໃໝ່ສູງ ແລະອາຍຸຍືນໂດຍສະເລ່ຍກໍ່ຕ່ຳ. ເພື່ອຜ່ານຜ່າໄພຄຸກຄາມ ທີ່ບ່ອາດຄາດຄະ ເນຫລືກະຕວງໄດ້ນີ້, ການນັບຖືຜີສາງ ຈຶ່ງໃຫ້ຄຳອະທິບາຍ ກ່ຽວກັບເຫດການຮ້າຍ ຕ່າງໆ ທີ່ເກີດຂຶ້ນກັບຊີວິດປະຈຳວັນຂອງພວກຊາວນາທົ່ວໆໄປໃນອາຊີຕາເວັນອອກສຽງ ໃຕ້. ມັນສະແດງອອກ ໃນຮູບຂອງຄວາມເຊື່ອຖືວິນຍານ ຜີອາຮັກຈັກກະວານ, ຜີເຈົ້າ ກຸ່ນເຈົ້າຖານ ແລະບາງທີ ກໍແມ່ນວິນຍານຂອງບຸກຄົນໃດບຸກຄົນນຶ່ງ ທີ່ເຂົ້າມາແຊກ ແຊງຊີວິດມະນຸດ ຍ້ອນຄວາມດີ ຫລື ຄວາມເຈັບປ່ວຍ ທັງສາມາດຄວບຄຸມເຫດການ ເກືອບທັງຫມົດໃນຊີວິດມະນຸດໄດ້. ວິນຍານເຫລົ່ານີ້ ມີຊື່ເອີ້ນຕ່າງໆກັນ ໃນແຕ່ລະປະເທດ ຢູ່*ໄທ* ເອີ້ນວ່າ *"ຜີ"* (Phi) ຢູ່ *ພະມ້າ* ເອີ້ນວ່າ *"ນັດ"* (Nat) ແລະຢູ່ *ກຳພູຊາ* ເອີ້ນວ່າ *"ນັກ ຕາ"* (Nakta) ຫລື ຜີບັນພະບຸລຸດເຊິ່ງເຊື່ອກັນວ່າ ຕ້ອງມີຢູ່ທຸກຫົນທຸກແຫ່ງ ແລະຕ້ອງ ໄດ້ທຳພະລີກຳບູຊາ. ວິນຍານເຫລົ່ານັ້ນ ອາດຄ້າຍຄືກັບແມ່ມົດເຂົ້າສິງ ຢູ່ໃນຮ່າງກາຍ ຄົນ ແລະຂັບໄລ່ຫນີໄດ້, ຄວາມປະສົງຂອງວິນຍານ ສະແດງອອກໃຫ້ຮູ ດ້ວຍການລົ້ງ ຫຽມ, ມີຫລາຍວິທີການ ເຮັດເພື່ອຂັບໄລ່ການກຸກກວນຂອງວິນຍານ ຫລືກົ້ງກັນຂ້ານ ເພື່ອຮ້ອງຂໍຄວາມຊ່ອຍເຫລືອ.

ຮີດຄອງຕ່າງໆກ່ຽວກັບການປູກເຂົ້າ ທຸກຂັ້ນຕອນຂອງວົ້ງຈອນການກະສິກຳ ນັ້ນ ປະຕິບັດກັນ ໂດຍຮັບຮູ້ວ່າ ເມັດແນວປູກ ແລະດິນ ເຊິ່ງເປັນບ່ອນຈໍ່ເກີດຂອງພືດພັນ ນັ້ນ ມີວິນຍານ ຫລືອວັນຂອງເພິ່ນສິງສະຖິດຢູ່ ຈຳຕ້ອງໄດ້ໃຫ້ອອກໄປ ຫລືຂໍ່ອ່ອນຜັນໃຫ້ ເບົາບາງລົ້ງ ຫລືຕ້ອງດ້ຳລ້ຽງ ເພື່ອຂໍ່ໃຫ້ການເກັບກ່ຽວເຂົ້າ ເຊິ່ງເປັນຂອງກິນຫລັກ ມີ ຫມາກຜົນສູງ. ໃນປະເທດ*ມາເລເຊຍ* ຫມໍຜີຫມໍຈ້ຳ ປະຈຳບ້ານເປັນຜູ່ນຳພາຊາວບ້ານ

ເຮັດພິທີກໍາງພື້ນດິນ ກ່ອນລົງມືປູກ ແລະມີການເຮັດຮີດຄັບໄລ່ສິ່ງເຮັດຂວາງອອກໄປ ກ່ອນ ເພື່ອໃຫ້ມີຄວາມສະດວກປອດໄພ ໃນເວລາເຮັດວຽກ ຈາກນັ້ນ ຈຶ່ງແມ່ນພິທີສ້ອມ ແຊມເຄື່ອງໄມ້ເຄື່ອງມືທີ່ຈະໃຊ້ສັກດິນ ເຮັດຫລຸມຢອດເມັດພືດ. ວິທີການປູກ ກໍຕ້ອງ ເຮັດຕາມແບບທີ່ເຄີຍເຊື່ອຖືປະຕິບັດກັນມາແຕ່ເກົ່າ ຢ່າງບໍ່ໃຫ້ຜິດແຜກແຕກຕ່າງເລີຍ, ຫລັງຈາກພິທີນີ້ແລ້ວຈຶ່ງແມ່ນການດໍ້າຜີ ດ້ວຍເຄື່ອງບູຊາຕ່າງໆ ແລະສູດມົນ. ເມື່ອເຂົ້າ ແກ່ດີແລ້ວ ຈຶ່ງມາເກັບກ່ຽວ ດ້ວຍກ່ຽວມືດວງນ້ອຍໆຄົມໆ ທັງນີ້ ເພື່ອບໍ່ໃຫ້ຂວັນເຂົ້າແກ່ ຕົກໃຈບິນຫນີໄປ.

ຜີເຈົ້າຜີນາຍກັບຜີເຊື້ອສາຍ ມີຢູ່ຢ່າງຫລວງຫລາຍ, ສ່ວນໃຫຍ່ເປັນຜີບ້ານ. ໃນ *ຫວຽດນາມ* ເທວະດາຮັກສາບ້ານ ໄດ້ຮັບສານຕາຕັ້ງຈາກລາຊະວັງຫລວງຂອງຈັກກະ ພັດ. ຕົວຢ່າງ ແຜ່ນຈາລຶກເຊິ່ງເປັນຕົວແທນຂອງຜູ່ຕັ້ງບ້ານ ຫລື ນາຍທະຫານຜູ່ຂັບໄລ່ ພວກ *ຈີນ* ຜູ່ຮຸກຮານ ໃຫ້ແຕກພ່າຍຫນີໄປນັ້ນ ກຶກຮັກສາໄວ້ຢູ່ໃນສາລາລວມຂອງບ້ານ, ມັນເປັນສິ່ງກະຕຸ້ນເຕືອນໃຫ້ຊາວບ້ານສາມະຄີກັນ ແລະມີສ່ວນຮ່ວມ ຢູ່ໃນອະດີດຂອງ ບ້ານ. ການນັບຖືຜີເຊື້ອສາຍ ແລະຜີວີຣະຊົນ ຂະຫຍາຍຕົວອອກໃນລະດັບສູງຢູ່ໃນ*ຫວຽດ ນາມ* ພຽງແຕ່ງດຽວເທົ່ານັ້ນ ແລະມັນໄດ້ກາຍເປັນຊີວິດຈິດໃຈ ຂອງຊາວບ້ານໄປ. ຢູ່ທີ່ ສາລາລວມນີ້ ຂ່າວສານກ່ຽວກັບເຫດການສໍາຄັນທັງຫມົດຂອງບ້ານ ໄດ້ຮັບການຖ່າຍ ທອດ ໃຫ້ວິນຍານຂອງບັນພະບຸລຸດທັງຫລາຍຮັບຮູ້ນໍາ. ພາລະອັ້ນຕົ້ນຂອງພິທີດໍ້າຜີຮັກ ສາ ຜີເຊື້ອສາຍ ແລະການລະລໍາຕ່າງໆ ທີ່ສະແດງອອກດ້ວຍການປະຕິບັດຮີດຄອງຢ່າງ ເຄັ່ງຄັດນີ້ ແມ່ນແນໃສ່ຍໍໃຫ້ມີຄວາມຫມັ້ນຄົງ ຄວາມເຂັ້ມຢໍາຂອງສະຖານທີ່ ຄວາມຢູ່ ດີມີສຸກຂອງຄົນໃນຄອບຄົວຍາດພີ່ນ້ອງ ທີ່ມີຄວາມສໍາພັນກັນຕາມລໍາດັບຊັ້ນໃນສັງຄົມ.

ເຖິງວ່າການນັບຖືຜີ ມັກເຫລື່ອມຊ້ອນເຂົ້າກັບຄວາມເຊື່ອ ທີ່ເປັນຫລັກສາກົນ ຂອງສາສະຫນາໃຫຍ່ໆ ຄື *ສາສະຫນາພຸດ ສາສະຫນາຄຣິຕ ແລະອິສລາມ*, ປະເພ ນີການນັບຖືຜີເຫລົ່ານີ້ ກໍບໍ່ຖືກ ສາສະຫນາເຫລົ່ານັ້ນ ກືນກິນຫລືແທນບ່ອນໄດ້ເລີຍ. ບຸນ ປະເພນີ ການເຮັດຮີດຄອງ ແລະການສະເຫລີມສະຫລອງປະຈໍາປີ ຍັງຄົງເປັນເຫດການ ທີ່ສໍາຄັນ ໃນຊີວິດປະຈໍາວັນຂອງຊາວບ້ານໃນເຂດຊົນນະບົດ.

ภົດຫມາຍ

ຊີວິດທາງສາສະຫນາຂອງຊຸມຊົນ ທັງຂະຫຍາຍຕົວ ທັງເປັນສັນຍະລັກແຫ່ງ ຄວາມເປັນອັນນຶ່ງອັນດຽວກັນ ຂອງຊຸມຊົນ. ການທີ່ສະມາຊິກທັງຫມົດຂອງບ້ານ ຍິນ ຍອມປະຕິບັດກົດລະບຽບ ຕາມປະເພນີທ້ອງຖິ່ນ ໂດຍສະເພາະ ອັນທີ່ບົ່ງໄວ້ຢູ່ໃນກົດ ຫມາຍບູຮານນັ້ນ ເປັນຄວາມຈຳເປັນສຳລັບເຮັດໃຫ້ຊີວິດຊຸມຊົນດຳເນີນໄປຢ່າງມີຜົນສຳ ເລັດ ແລະມີຄວາມສາມາດທີ່ຈະຢູ່ຢ່າງສະຫງົບສຸກ. ທົ່ວທັງພາກພື້ນໄດ້ມີການຜັດທະ ນາປະມວນກົດຫມາຍຂຶ້ນໃຊ້. ກົດຫມາຍບາງມາດຕາ ກໍແມ່ນຜົນຜະລິດຂອງລະບົບຮາ ຊະການທັງຝ່າຍໂລກ ແລະຝ່າຍສາສະຫນາ(ທຳ) ເຊິ່ງບໍລິຫານ ໂດຍຜ່ານສານຫລວງ ຫລືຜ່ານພຶດຕິກຳ ກັບການຕັດສິນຂອງເຈົ້າເມືອງ ແລະຝ່າຍຕຸລາການ (ຕັດສິນຄວາມ). ຕົວຢ່າງ: ການຟ້ອງຮ້ອງ (ເປັນຄະດີ) ຢ່າງເປັນທາງການໃນທຳນອງນີ້ມັກຈະດຳເນີນ ກັນຢູ່ໃນບ່ອນ ທີ່ພວກຊາວນາໄປບໍ່ເຖິງ ແລະທັງອາດມີຄ່າໃຊ້ຈ່າຍສູງ, ຕ້ອງມີເຄື່ອງ ຝາກຂອງຕ້ອນແກ່ຜູ້ຕັດສິນ ແລະເອກະສານ ທີ່ຕ້ອງເຮັດເປັນລາຍລັກອັກສອນນັ້ນ ສ່ວນ ຫລາຍແລ້ວ ຄູ່ຟ້ອງຮ້ອງບໍ່ສາມາດອ່ານໄດ້ຊ້ຳ. ນອກຈາກຄວາມຫຍຸ້ງຍາກເຫລົ່ານີ້ ແລ້ວ ກໍບໍ່ມີໃຜຮັບປະກັນໄດ້ອີກວ່າ ຈະໄດ້ຮັບຜົນເປັນທີ່ພໍໃຈຫລືບໍ່, ເນື່ອງຈາກການຟ້ອງ ຮ້ອງເກືອບທັງຫມົດ ເປັນເລື່ອງ ທີ່ເກີດຂຶ້ນໃນທ້ອງຖິ່ນ ແລະກຶກພິຈາລະນາພໍປານ ວ່າ ແມ່ນຄະດີແຜ່ງຄະດີນຶ່ງ, ມັນຈຶ່ງເປັນເລື່ອງ ຂອງການຮັກສາສິດຜົນປະໂຫຍດຂອງ ສັງຄົມຊາວນາເອງ ທີ່ຈະຈັດການແກ້ບັນຫາການຜິດກຽງນີ້ ຢູ່ພາຍໃນບ້ານຂອງຕົນ ຫລາຍກວ່າຈະໄປໃຫ້ອຳນາດການປົກຄອງພາຍນອກ ເຂົ້າມາຈັດການແກ້ໄຂໃຫ້.

ຍ້ອນວ່າ ຊຸມຊົນບ້ານໂດຍທົ່ວໄປ ມີຄວາມຫມັ້ນຄົງຫລາຍກວ່າສານ ຫລືລະບົບ ຮາຊະການທັງຫລາຍຢູ່ແລ້ວ ຊາວອາຊີຕາເວັນອອກສຽງໃຕ້ ຈຶ່ງມີກົດເກນທີ່ຜ່ານການ ທົດສອບນຳໃຊ້ມາແລ້ວເປັນຢ່າງດີ ເພື່ອຢູ່ຮ່ວມກັນ ແລະ ມີວິທີການແກ້ໄຂຂອດຂັດແຍ່ງ ຕ່າງໆນັ້ນເອງ. ໃນໂລກຂອງຊາວ *ມາເລ* ແລະ *ອິນໂດເນເຊຍ* ລະບົບກົດຫມາຍບູຮານ ອັນນີ້ ເປັນທີ່ຮູ້ຈັກກັນດີໃນນາມ *"ອາດາຕ "* (Adat) ຄວາມຫມາຍດັ້ງເດີມຂອງ *"ອາດາຕ"* (Adat) ແມ່ນ *"ປະເພນີ"* ເຊິ່ງໄດ້ແກ່ການປະພຶດອັນກຶກຕ້ອງແລະເຫມາະສົມ ທີ່ຄວນເຮັດໃນຊີວິດປະຈຳວັນ ນັບແຕ່ມື້ເກີດເຖິງມື້ຮັບມໍລະດົກ. ເບິ່ງຕາມລັກສະນະແລ້ວ ມັນເປັນເລື່ອງຂອງທ້ອງຖິ່ນ ແລະການປ່ຽນແປງເລັກໆນ້ອຍໆໃນລາຍບຸກຄົນ ກໍເປັນ

ເລື່ອງຂອງກຽດສັກສີ ກັບຄວາມແປກຕ່າງຈາກຊຸມຊົນອື່ນທີ່ກ່ຽວຂ້ອງເທົ່ານັ້ນ. ເຖິງ ແມ່ນວ່າ ບາງເທື່ອມີການບັນທຶກປະມວນເອົາ *"ອາດາຕ"* (Adat) ທີ່ວ່ານັ້ນ ມາເປັນກົດ ຫມາຍແຜ່ງແລ້ວກໍຕາມ ລັກສະນະສໍາຄັນອັນນຶ່ງຂອງລະບົບ ກໍຄືວ່າ ໂດຍທົ່ວໄປແລ້ວ ມັນບໍ່ໄດ້ຖືກແຕ່ງໄວ້ ແລະນໍາມາໃຊ້ເປັນບ່ອນອີງໃນການຕັດສິນຄະດີ ແຕ່ຫາກຄົງຢູ່ໃນ ຄວາມຊົງຈໍາ ຂອງຜູ່ອາວຸໂສ ສະມາຊິກຊຸມຊົນຜູ່ມີຄວາມຮູ້ເທົ່ານັ້ນ. ເຖິງແມ່ນວ່າປະ ມວນກົດຫມາຍອັນລະອຽດນີ້ ມີຊື່ສຽງໂດ່ງດັງຫລາຍກວ່າຢູ່ໃນຣາຊະອານາຈັກບົນແຜ່ນ ດິນໃຫຍ່ກໍຕາມ ແຕ່ຢູ່ທີ່ນີ້ ກໍເຊັ່ນດຽວກັນ ກົດຫມາຍກໍຍັງເປັນເລື່ອງຂອງ ປະເພນີທ້ອງ ຖິ່ນ, ເປັນມາດຖານແຫ່ງຄວາມສະເຫມີພາບ ຄວາມຍຸຕິທໍາ ແລະເປັນກາຍະພາບລວມ ຂອງເຫດການ ທີ່ມີມາກ່ອນໃນທ້ອງຖິ່ນ ເຊິ່ງສາມາດໃຊ້ຈັດການກັບຂອດຂັດແຍ່ງ ໃນ ທ້ອງຖິ່ນ ແລະພາຍໃນຊຸມຊົນນັ້ນ ເກືອບທັງຫມົດໄດ້.

ຊີວິດໃນບ້ານ ກໍຄືກັບຊີວິດຊາວນາເທິງຫມູ່ເກາະດອນ ຈໍາຕ້ອງຫາແນວປ້ອງ ກັນ ການຮຸກຮານຈາກພາຍນອກ. ການຢູ່ໃກ້ຊິດກັນ ສໍາລັບຄົນຮຸ່ນຫລັງ ເຮັດໃຫ້ມີກຸ່ມ ກ້ອນອັນຫນຽວແໜ້ນ ລະຫວ່າງຜູ່ທີ່ອາໄສຢູ່ໃນບ້ານນັ້ນນໍາກັນ ຄືບ່ອນຝັງສາຍແຮ່ແຜ່ ສາຍບື ຂອງພວກເຂົາ ທົ່ງໄຮ່ທົ່ງນາ ບ່ອນຫາຢູ່ຫາກິນຂອງພວກເຂົາ ແລະປ່າຊ້າ ບ່ອນຝັງຜ່ແມ່ປູ່ຍ່າຕາຫວດ ທີ່ເປັນບັນພະບຸລຸດຂອງພວກເຂົາ. ຫາຍາກ ທີ່ແນວລໍ້ໃຈ ຈາກໃນເມືອງ ບ່ວ່າເມືອງນ້ອຍຫລືເມືອງໃຫຍ່ ຈະສາມາດດຶງແກ່ພວກເຂົາໃຫ້ຫນີອອກ ຈາກກິ່ນກາບບ້ານເກີດຂອງເຂົາໄປ. ຄວາມຫ່າງໄກກັນລະຫວ່າງຊາວນາກັບຜູ່ປົກຄອງ ຂອງເຂົາມີຫລາຍກວ່າ ລະຫວ່າງພວກເຂົາ ກັບຜີ ທີ່ສາມາດສໍາຜັດໄດ້ ແລະຫ້ອມ ລ້ອມເຂົາຢູ່ຕະຫລອດເວລາ ໃນຊີວິດປະຈໍາວັນ.

ບົດທີ 2 : ປະຊາຊົນໄຮ້ສັນຊາດ

ເມື່ອເບິ່ງອະດີດຄືນຫລັງໄປໄກໆ ອາຊີຕາເວັນອອກສຽງໃຕ້ກໍຄືກັບປັດຈຸບັນ ເຄີຍ ເປັນກຸ່ນກາບທີ່ດີ ສຳລັບຊົນຊາດຊົນເຜົ່າຜູ່ໄຮ້ສັນຊາດ ຫລາຍກວ່າບ່ອນອື່ນໆໃນໂລກ. ປະຊາຊົນເຫລົ່ານີ້ ຈັດແບ່ງອອກໄດ້ປະມານສີ່ຮ້ອຍກວ່າຈຸ ຫລື ກຸ່ມ ມີພາສາປາກເວົ້າ ຫລາກຫລາຍ ກະຈາຍຢູ່ທົ່ວບໍລິເວນອາຊີຕາເວັນອອກສຽງໃຕ້ ແລະເລິກເຂົ້າໄປໃນພາກ ພື້ນ ເຊິ່ງເປັນດິນແດນ*ຈີນ*ພາກຕາເວັນຕົກສຽງໃຕ້ໃນປັດຈຸບັນ. ເທິງແຜ່ນດິນໃຫຍ່ຂອງ ອາຊີຕາເວັນອອກສຽງໃຕ້ນີ້ ມີຊົນເຜົ່າຕ່າງໆ ດຳລົງຊີວິດຢູ່ຢ່າງຫລວງຫລາຍ ຕາມສັນ ພູອັນຍາວຢຽດ ແຕ່ເໜືອເກິ່ງໃຕ້ ທີ່ແບ່ງຂັ້ນເຂດທົ່ງພຽງ ຕາມລ່ອງແມ່ນ້ຳ ອັນເປັນທີ່ ຕັ້ງຂອງລັດຕ່າງໆ ຕະຫລອດຮອດເຂດພູພຽງພາຍໃນຂອງພາກພື້ນ. ດັ່ງນັ້ນ ໃນແຜ່ນ ດິນໃຫຍ່ ຊົນຊາດຊົນເຜົ່າຜູ່ໄຮ້ສັນຊາດເຫລົ່ານີ້ ຈຶ່ງຖືກເອີ້ນວ່າ ຊາວພູດອຍແດ່ ຫລື ຊາວບົນແດ່. ສ່ວນທີ່ຢູ່ໃນໝູ່ເກາະດອນ ຂອງອາຊີຕາເວັນອອກສຽງໃຕ້ ໂຮມທັງ ແຫລມ *ມາລາຢູ* (Malay Peninsula) ນຳນັ້ນ ຊົນຊາດຊົນເຜົ່າພວກນີ້ ມັກຕັ້ງທີ່ຢູ່ ອາໄສໃນພື້ນທີ່ ທີ່ມີລະດັບສູງກວ່ານ້ຳທະເລ ຫລາຍກວ່າໃນພື້ນທີ່ຕ່ຳ ແລະກໍມີຈຳນວນ ຫລາຍສົມຄວນ ຕັ້ງກຸ່ນກາບຢູ່ໃກ້ໆ ຫລືໃນລະດັບດຽວກັບນ້ຳທະເລ. ຢ່າງໃດກໍຕາມ ເກິ່ງແມ່ນວ່າ ຊົນຊາດຊົນເຜົ່າເຫລົ່ານີ້ ບາງຈຸໄດ້ຕັ້ງກຸ່ນກາບ ຢູ່ຕາມຊາຍຝັ່ງ ຫລືໃກ້ໆ ຊາຍຝັ່ງທະເລກໍດີ ພວກເຂົາກໍຍັງຖືກເອີ້ນວ່າ *ໄທດອນໃນ* ຢູ່ນັ້ນເອງ.

ບໍ່ວ່າຢູ່ເທິງແຜ່ນດິນໃຫຍ່ຫລືຢູ່ໃນເກາະດອນ ຊົນຊາດຊົນເຜົ່າກຸ່ມນ້ອຍ ຈຳນວນ ຫລາຍຮ້ອຍເຜົ່າເຫລົ່ານີ້ ແຕກຕ່າງກັບຊົນຊາດກຸ່ມໃຫຍ່ໃນສັງຄົມລັດ ທີ່ຢູ່ໃກ້ໆກັບພວກ ເຂົາ ໃນດ້ານຮູບແບບການດຳລົງຊີວິດພື້ນກຸ່ນກາບຫລາຍອັນ. ວ່າໄປແລ້ວ ຍັງມີຄົນໃນສັງ ຄົມໄຮ້ສັນຊາດອີກຢ່າງຫລວງຫລາຍ ແຕ່ສ່ວນໃຫຍ່ແລ້ວ ພວກເຂົາມີຈຳນວນພົນຫນ້ອຍ ກວ່າຄົນໃນສັງຄົມລັດຫລາຍ. ພວກເຂົາບໍ່ມີຂັ້ນໃດແບ່ງກັນແຖວສັງຄົມເປັນຫລາຍຊັ້ນ ຄື ກັບພວກຢູ່ໃນສັງຄົມລັດ ຄື ຈາກຊັ້ນຂ້ອຍຂ້າຂຶ້ນໄປ ຈົນຮອດກະສັດອົງສັກສິດ. ສ່ວນ ຫລາຍ ເຂົາເຈົ້າມີພຽງຫົວໜ້າບ້ານ ແລະ ຜູ່ອາວຸໂສຂອງບ້ານ ເທົ່ານັ້ນ. ບາງພວກ ບາງກຸ່ມ ອາດມີຫົວໜ້າ ທີ່ມີຊັ້ນທາງສັງຄົມສູງແດ່. ປະມານກ່ອນ ຄ.ສ. 1800 ເປັນ ຢ່າງໜ້ອຍ ມີຊົນຊາດຊົນເຜົ່າ ຈຳນວນໜ້ອຍດຽວເທົ່ານັ້ນ ທີ່ເຂົ້າເປັນສາວິກຂອງສາ

ສະຫນາໃດສາສະຫນານຶ່ງ ທີ່ສຳຄັນຂອງໂລກ ຢູ່ອາຊີຕາເວັນອອກສຽງໃຕ້ ແລະອີກຈຳ ນວນຫນ້ອຍນຶ່ງ ມີຮູບແບບພາສາຂຽນເປັນຂອງຕົນເອງ. ຍົກເວັ້ນຊົນເຜົ່ານ້ອຍບາງເຜົ່າ ຈຳນວນຫນ້ອຍນຶ່ງ ທີ່ຫາກິນດ້ວຍການໂຫ່ເນື້ອ ແລະຫາເຄື່ອງປ່າຂອງດົງ ເຊັ່ນພວກ *ນິກຣິໂຕສ* (Negritos) ໃນແຫລມ *ມາລາຢູ* ຫລືພວກ *ແອກຕ້າ* (Agta) ໃນ*ເກາະລູຊອນ* (Luzon) ພາກເຫນືອ, ພວກຊົນເຜົ່າຂະຫນາດກາງ ທີ່ໄຮ້ສັນຊາດ ແຕ່ຫາກເຮັດນາ ດຳ ໂດຍສະເພາະຢູ່ໃນ *ອິນໂດເນເຊຍ* ຕະຫລອດຮອດປະຊາຊົນຜູ່ໄຮ້ສັນຊາດອື່ນໆ ກໍພາ ກັນທຳມາຫາກິນ ດ້ວຍການເຮັດໄຮ່ເລື່ອນທີ່ ຫລາຍກວ່າການເຮັດນາດຳ ຄືກັບພວກທີ່ຢູ່ ໃນສັງຄົມລັດທັງຫລາຍ ໃນຍົງເຂດນັ້ນ.

ການຖາງປ່າຈູດເຜົາເພື່ອເຮັດໄຮ່ປູກເຂົ້າ ແມ່ນວິທີການເຮັດກະສິກຳແບບນຶ່ງ ໃນສອງວິທີການຕົ້ນຕໍ ທີ່ປະຕິບັດກັນມາເປັນເວລາດົນນານແລ້ວ, ຢູ່ໃນອາຊີຕາເວັນອອກ ສຽງໃຕ້ ໃກ້ໆກັບເຂດສູນສູດ ອີກວິທີນຶ່ງ ແມ່ນການເຮັດນາດຳ (ຫລືນານ້ຳຝົນ).

ໂດຍທົ່ວໄປແລ້ວ ເນື້ອດິນເຂດສູນສູດ ເປັນດິນບໍ່ງາມ ແລະຖ້ານຳໃຊ້ດົນໄປກໍ ຈະກາຍເປັນດິນແຂງ ສີແດງໆ ເອີ້ນວ່າດິນຫີນແຮ່ (Laterite) ເຊິ່ງໃຊ້ປະໂຫຍດຫຍັງ ບໍ່ໄດ້ເລີຍ. ຫລືບໍ່ດັ່ງນັ້ນ ມັນກໍຈະຄົງສະພາບເປັນທົ່ງຫຍ້າຮາກຫນຽວ ຊື່ວ່າ "*ອິມເພຣາ ຕາ*" (Imperata) ທີ່ເຫມາະແຕ່ຈະເປັນບ່ອນໂຫ່ສັດຂະຫນາດນ້ອຍເທົ່ານັ້ນ. ໃນປີນຶ່ງໆ ຝົນທີ່ມາຂ້ອນຕົກຢູ່ແຕ່ໃນລະຍະສອງສາມເດືອນ ຂອງລະດູມໍຣະສຸມນີ້ ຮຸນແຮງຫລາຍ ຈົນເຊາະດິນໃຫ້ເຈື່ອນຜັງໄປ.

ໄຮ່ນາດຳ ປົກປ້ອງດິນນາໄດ້ ດ້ວຍການຍັງນ້ຳໃນລະດູຝົນໄວ້ ສ່ວນນາຂັ້ນໃດ ທີ່ ຖືກນ້ຳຝົນລະດູມໍລະສຸມ ເຊາະເຈື່ອນຢ່າງຫນັກນັ້ນ ກໍຈະໄດ້ຮັບດິນນ້ຳເຊາະພ້ອມກັບຝຸ່ນ ທາດບຳລຸງລ້ຽງ ທີ່ໄຫລມາຈາກບ່ອນສູງ ເປັນການທົດແທນສ່ວນທີ່ສູນເສຍໄປ. ຍຸທະ ສາດຂອງການເຮັດໄຮ່ແບບຈູດເຜົານີ້ ເວົ້າໄດ້ວ່າ ມີປະສິດທິຜົນດີ ແຕ່ກໍເປັນເລື່ອງສັບ ສົນຫລາຍ. ກ່ອນຝົນຕົກຫລາຍເດືອນ, ວຽກງານທຳອິດທີ່ຈະຕ້ອງເຮັດ ແມ່ນການຖາງ ປ່າ ຕັດຕົ້ນໄມ້ ໃນບໍລິເວນ ທີ່ເລືອກເອົາເປັນບ່ອນເຮັດໄຮ່ສຳລັບປີຕໍ່ໄປ ຈາກນັ້ນຈຶ່ງເກັບ ທ້ອນກິ່ງໄມ້ໃບຫຍ້າ ທີ່ຕັດແລ້ວນັ້ນ ຕາກແດດໃຫ້ແຫ້ງ. ອັນດັບຕໍ່ມາ ແມ່ນຂັ້ນຕອນສຳ ຄັນທີ່ສຸດ ໃນວົງຈອນທັງຫມົດຂອງການເຮັດໄຮ່ ນັ້ນກໍຄືການປະຕິບັດຕາມຮີດຄອງ ຂອງ ສັງຄົມຊາວໄຮ່ ເຊັ່ນ ການເລືອກມື້ຈູດເຜົາກິ່ງໄມ້ໃບຫຍ້າທີ່ຕັດໄວ້ແລ້ວນັ້ນ. ກ້າຈູດໄວ້ ກ່ອນລົມມໍລະສຸມມາດົນໂພດ ການເຜົາໄຫມ້ອາດບໍ່ສົມບູນ ນັ້ນຫມາຍເຖິງການສູນເສຍ

ຂີ້ເກົ່າ ທີ່ເປັນຝຸ່ນດີໆນັ້ນໄປ, ກ້າເຍື້ອນເວລາຈູດໄປຈົນຮອດຍາມຝົນຕົກຫນັກນັ້ນ ກໍຜ່ປາບວ່າບ່ໄດ້ຈູດຊ້ຳ, ບ່ມີຂີ້ເກົ່າ ກໍແປວ່າ ມີແຕ່ຄວາມສູນເສຍ. ໄຮ່ທີ່ຈູດໄດ້ດີ ຜ່ກືກນ້ຳຝົນ ກໍຊຸ່ມຊື່ນຂຶ້ນທັນທີ ຜ່ດີກັບການລົງແນວປູກ ເຊັ່ນພວກແກ່ນກົ່ວຕ່າງໆ ຫມາກອຶ ຫມາກໂຕ່ນ ຫນ່ໍ້ກ້ວຍ ຫມາກເຜັດ ມັນດ້ຳ ຫົວເຜືອກ ຫົວມັນ ນາໆຊະນິດ ແລະສຳຄັນ ທີ່ສຸດ ຜືດທີ່ປູກກັນທົ່ວໆໄປກໍຄື *"ເຂົ້າໄຮ່"*. ລວມແລ້ວ ອາດມີຜືດພັນຊະນິດຕ່າງໆຮອດ ສິບຊາວຢ່າງ ປູກຢ່າຍໄປທົ່ວໄຮ່ ແລະເຕີບໃຫຍ່ຂຶ້ນເຫນືອຕໍ່ໄມ້ຂອນຕາຍ ກາງວົງລ້ອມ ປ່າດົງດິບຂະຫນາດນ້ອຍ ເບິ່ງບ່ຄືກັບຕົ້ນເຂົ້າໃນນາດຳທີ່ປູກເປັນກຸ້ນແກ່ວຈົບງາມກາງ ທົ່ງນາ. ຫລັງຈາກລົງແນວປູກແລ້ວ ກໍແມ່ນການເສຍຫຍ້າຂ້າຮຸ່ນ ລ້ອມຮົ້ວປ້ອງກັນ ຫມູປ່າ ໄລ່ນົກ ບ່ໃຫ້ມາຈິກກິນຮວງເຂົ້າ ແລະທ້າຍທີ່ສຸດ ກໍແມ່ນການເກັບກ່ຽວມາກິນ ໃນແຕ່ລະມື້ ເຊິ່ງອາດດຳເນີນຢູ່ຫລາຍເດືອນ.

ຜືດທີ່ງອກງາມທ້າມກາງອາກາດຮ້ອນຊຸ່ມນີ້ ຊ່ອຍປ້ອງກັນດິນ ບ່ໃຫ້ກືກເຊາະ ເຈື່ອນໄດ້ແດ່ເລັກນ້ອຍ, ຍົກເວັ້ນໃນບ່ອນທີ່ສູງຊັນຫລາຍ ສ່ວນຂີ້ເກົ່າກໍເປັນຕົວຮັບປະກັນ ຫມາກຜົນການເກັບກ່ຽວທີ່ດີໃນປີແຮກນີ້. ອາດປູກຝັງໃສ່ໄຮ່ເກົ່ານີ້ ໄດ້ອີກສອງ ຫລືສາມ ປີ ແຕ່ຜົນຜະລິດຈະຄ່ອຍໆຫລຸດຫນ້ອຍລົງຢ່າງເຫັນໄດ້ຄັກ ນັ້ນກືເປັນການບອກເຕືອນວ່າ ເຖິງເວລາຢຸດປູກໄດ້ແລ້ວ ໂດຍທົ່ວໄປຫລັງຈາກປູກໄດ້ສອງສາມປີແລ້ວ, ຊາວໄຮ່ກໍຈະ ຍ້າຍໄປກ່າງຟັນບ່ອນໃຫມ່ຢູ່ໃກ້ໆ ເລີ່ມດ້ວຍການຟັນຕົ້ນໄມ້ໃຫຍ່ລົງ ຈູດເຜົ່າຂອນໄມ້ແລະ ປູກຫວ່ານຜືດຜົນ ແນວປູກລົງຕາມຫວ່າງຂອນໄມ້ຕາຍ ຄືດັ່ງທີ່ເຄີຍເຮັດມາກ່ອນນັ້ນ ແລ້ວ. ໄຮ່ເກົ່າຮ້າງໄປ ຈົນເກີດເປັນປ່າເຫລົ່າຄືນ. ໃນອາຊີຕາເວັນອອກສຽງໃຕ້ນີ້ ມັນ ອາດໃຊ້ເວລາຮອດຊາວປີ ສຳລັບໄຮ່ເກົ່າບ່ອນນຶ່ງ ເພື່ອຟື້ນສະພາບກັບມາເປັນປ່າດົງໄດ້ ອີກ ເປັນຄັ້ງທີສອງ. ໃນລະຍະນີ້ ຊາວໄຮ່ກໍສືບຕໍ່ກ່າງປ່າເຮັດໄຮ່ໄປຫນ້າ ບ່ອນລະສອງ ສາມປີ ອ້ອມຮອບບ້ານ ຫມາຍຄວາມວ່າ ມັນກິນເວລາເທົ່າໆກັບຊີວິດຄົນຮຸ່ນນຶ່ງ ຄື ນັບຕັ້ງແຕ່ໄວເດັກເກີດໃຫມ່ ເຕີບໃຫຍ່ເປັນບ່າວສາວ ແລະສ້າງຄອບຄົວໄປ, ຕ່ໍຈາກນັ້ນ ພວກເຂົ້າກໍຈະຕ່າວຄືນກັບມາບ່ອນເກົ່າ ເຊິ່ງໃນຕອນນັ້ນ ປ່າກັບຄືນຢູ່ໃນສະພາບທີ່ຈະ ກືກກ່າງເປັນໄຮ່ ແລະຈູດເຜົ່າໄດ້ອີກແລ້ວ.

ວົງຈອນຂອງການປູກເຂົ້າໄຮ່ ມີອິດທິພົນຕໍ່ຊີວິດທາງສັງຄົມ ແລະຄ່ານິຍົມ ຂອງຜູ່ປະກອບອາຊີບນີ້ຫລາຍ ເພາະໃນແຕ່ລະປີ ບ້ານທີ່ເຮັດໄຮ່ຕ້ອງການທີ່ດິນທຳການ ຜະລິດຫລາຍກວ່າບ້ານທີ່ເຮັດນາດຳ ເກືອບສິບເທ່ົາ. ຄວາມຫນາແຫນ້ນ ຂອງປະຊາ

ກອນໃນເຂດປູກເຂົ້າໄຮ່ ຈະຕ່ຳກວ່າຢູ່ໃນເຂດເຮັດນາດຳຫລາຍ ເພາະວ່າພວກເຮັດໄຮ່ ບໍ່ຕ້ອງການຍ່າງແຕ່ບ້ານໄປໄຮ່ໄກເກີນໄປ ບ້ານທີ່ເຮັດໄຮ່ ມີປະຊາກອນໜ້ອຍ ບາງ ບ້ານ ອາດມີແຕ່ສອງສາມຮ້ອຍຄົນ ແລະບ້ານເຮືອນກໍຕັ້ງຢູ່ຫ່າງກັນ. ໂລກຂອງບ້ານ ນ້ອຍໆ ທີ່ຕ້ອງຫັນໜ້າເຂົ້າໃສ່ກັນແນວນີ້ ດຳເນີນຊີວິດຢູ່ດ້ວຍການ ກາງປ່າອັນກວ້າງ ໃຫຍ່ ຄົງຕົວຢູ່ໄດ້ໃນການະຊຸມຊົນນຶ່ງເທົ່າທຽມກັບໜູ ບໍ່ມີບ່ອນຫວ່າງສຳລັບກະສັດ, ໃຊ້ ພາສາຂຽນແຕ່ໜ້ອຍດຽວ ແລະນັບຖືຜີ ທີ່ມີຢູ່ທົ່ວໆໄປ ແລະເປັນທີ່ຄຸ້ນເຄີຍວິນອຽນຢູ່ກັບ ສິ່ງແວດລ້ອມ ເຊັ່ນ ຜີຂວັນເຂົ້າ ຜີຂວັນກ້າ ແລະຜີພໍ່ຜີແມ່. ສິ່ງເຫລົ່ານີ້ ດຳເນີນມາຈົນ ເຖິງເວລາ ກຳລັງແບບໃໝ່ ເຂົ້າມາເຖິງ ອາຊີຕາເວັນອອກສຽງໃຕ້ ໃນສະຕະວັດ ທີ 19 ນີ້ ເອງ.

ແຜນທີ່ທາງຊົນຊາດຊົນເຜົ່າ ຂອງອາຊີຕາເວັນອອກສຽງໃຕ້ໃນສະຕະວັດທີ 18 ມີຄວາມສັບສົນ ຕັດແຍກຍິບຍ່ອຍ ແລະມີຈຸດພິເສດເທົ່າໆກັບແຜນທີ່ທາງພູມສັນຖານ ລະອຽດຂອງມັນ. ເທິງເຂດພູດອຍ ແລະເຂດພູພຽງ ຂອງແຜ່ນດິນໃຫຍ່ ຊົນຊາດຊົນເຜົ່າ ສ່ວນຫລາຍ ກ່ຽວພັນກັນທາງດ້ານພາສາ ແລະດ້ານຊົນເຜົ່າ ກັບຄົນທີ່ຢູ່ໃນທົ່ງຣາບ ບາງກຸ່ມ. ພວກທີ່ເວົ້າພາສາໃກ້ຄຽງກັບພາສາ*ພະມ້າ* ມີກຸ່ມ *ກະຫລ່ຽງ* (Karen) ກັບ *ກະຊິ່ນ* (Kachin) ນອກນັ້ນ ຍັງມີພວກ*ໄຕ* (Tai) ຈຳນວນຫລວງຫລາຍ ທີ່ກ່ຽວພັນກັບ *ສະຫຍາມ ຊານ* (Shan) ແລະ*ລາວ* ກະແຈກກະຈາຍຢູ່ຕາມແຫລ່ງຕ່າງໆ ຕັ້ງແຕ່ *ອິນເດຍ* ຕາເວັນອອກສຽງເໜືອ ຂຶ້ນໄປເຖິງ *ຫວຽດນາມພາກເໜືອ* ແລະເລິກເຂົ້າໄປ ຮອດອານາບໍລິເວນອັນກວ້າງໃຫຍ່ຂອງ *ຈີນ* ກ້ຳຕາເວັນຕົກສຽງໃຕ້. ຕາມສັນພູປັນແດນ ລະຫວ່າງ *ຫວຽດນາມ* ກັບ *ລາວ* ແລະ*ກຳພູຊາ* ກໍມີຊົນຊາດຊົນເຜົ່າຕ່າງໆ ຢູ່ຢ່າງ ຫລວງຫລາຍ. ບາງພວກເວົ້າພາສາ *ຫວຽດນາມ* ແລະພາສາ *ໄຕ* ແລະພາສາອື່ນໆອີກ ທີ່ໃກ້ຄຽງ ກັບພາສາ *ຂະເໝນ* (Khmer) ຫລື ພາສາຕະກູນ *ອົດສໂຕຣເນຊຽນ* (Austronesian). ເມື່ອເວົ້າໃນແງ່ *ນິຣຸກຕິສາດ* (ພາສາສາດ) ແລ້ວ ສະຖານະການ ໃນໝູ່ເກາະດອນ ຂອງອາຊີຕາເວັນອອກສຽງໃຕ້ ເປັນເລື່ອງງ່າຍກວ່າ ຄື ຊົນເຜົ່າພວກ ນັ້ນ ເວົ້າພາສາຕະກູນ *ອົດສໂຕຣເນຊຽນ* (Austronesian) ຄືກັນຫມົດ ເກືອບບໍ່ມີຂໍ້ ຍົກເວັ້ນເລີຍ (ແລະ ເວົ້າກັນຢູ່ໃນໝູ່ເກາະດອນ *ໂປລີເນຊຽນ* Polynesian ໃນມະຫາ ສະໝຸດ *ປາຊິຟິກ* ແລະໝູ່ເກາະດອນ *ມາດາກາສກາຣ* ທາງຝັ່ງຕາເວັນອອກ

ອາຟຣິກາ ນຳ). ດັ່ງນັ້ນ ໃນຫມູ່ເກາະດອນເຫລົ່ານັ້ນ ທັງພວກຄົນມີສັນຊາດ ແລະພວກ ບໍ່ມີສັນຊາດ ປາກເວົ້າພາສາຕະກູນດຽວກັນ ເຖິງແມ່ນວ່າພາສາເຫລົ່ານັ້ນ ບໍ່ເປັນທີ່ ເຂົ້າໃຈກັນໄດ້ດີເທົ່າກັບພາສາ *ຝຣັ່ງ* ແລະ *ອິຕາລຽນ* ກໍຕາມ.

ພວກຊົນເຜົ່າບໍ່ມີສັນຊາດ ມີລັກສະນະການຈັດຕັ້ງທາງສັງຄົມ ຄ້າຍຄືກັບພວກ ມີສັນຊາດຫລາຍອັນ ບ້ານເຮືອນຂອງພວກເຂົາສາມສອດເຂົ້າກັນຕາມເຊື້ອສາຍ ແລະ ຕາມຄວາມສຳພັນແບບສ່ວນຕົວ ມັນເຕົ້າໂຮມເຂົ້າກັນເປັນກຸ່ມກ້ອນ ເຂັ້ມແຂງແລະເພິ່ງ ພາຕົນເອງໄດ້ ມັນເຮັດໃຫ້ພວກເຂົາຕັ້ງຫມັ້ນ ຢູ່ໃນສະພາບໂດດດ່ຽວຂອງພວກເຂົາໄດ້ ທັງເອື້ອຕໍ່ການກະສິກຳ ແລະການຄ້າຂາຍແບບຕ່າງໆຂອງພວກເຂົານຳ. ແຕ່ລະກຸ່ມ ມີ ຫົວຫນ້າ ແລະສ່ວນຫລາຍກໍມີຜູ່ຊຳນິຊຳນານ ດ້ານພິທີກຳການບະຜີ ເຊິ່ງກໍ່ວ່າເປັນ ສ່ວນສຳຄັນຢ່າງນຶ່ງຢູ່ໃນຊີວິດປະຈຳວັນຂອງເຂົາເຈົ້າ. ຄວາມຂອງອົງການຈັດຕັ້ງທາງ ສັງຄົມ ຂອງພວກບໍ່ມີສັນຊາດນີ້ ເບິ່ງຄືວ່າເປັນຫມາກຜົນຂອງການຈັດແບ່ງ ພາຍໃນ ຫລາຍກວ່າການຂະຫຍາຍຕົວມາຈາກພາຍນອກ, ຕົວຢ່າງ ການຕັ້ງກິ່ນຖານແບບກະ ແຈກກະຈາຍຂອງປະຊາຊົນ ຜູ່ເຮັດນາຂັ້ນໃດ ໄດ້ເຮັດໃຫ້ການຈັດຕັ້ງຂອງບ້ານ ທີ່ກິນ ເນື້ອທີ່ກວ້າງຂວາງນັ້ນ ຫຍຸ້ງຍາກຂຶ້ນ ເຖິງແມ່ນວ່າບໍ່ຄ່ອຍມີຂໍ້ມູນກ່ຽວກັບຄວາມສຳ ພັນລະຫວ່າງກຸ່ມປະຊາຊົນຜູ່ໄຮ້ສັນຊາດເຫລົ່ານີ້ ແຕ່ກໍຍັງມີຫລັກຖານ ທີ່ຊີ້ໃຫ້ເຫັນວ່າ ພວກເຂົາມີການພົວພັນຕິດຕໍ່ກັນຢູ່ ເຖິງຈະຢູ່ກັນເປັນຫມວດຫມູ່ນ້ອຍໆ ແລະຫ່າງໄກກັນ ກໍຕາມ. ການອົບພະຍົບ ການແຕ່ງດອງລະຫວ່າງກຸ່ມ, ການແລກປ່ຽນທາງການຄ້າ ໂຄງສ້າງທາງການເມືອງລະຫວ່າງກຸ່ມຕ່າງໆ, ຄ່ານິຍົມກັບລະບົບຄວາມເຊື່ອກ໊ືອັນດຽວ ກັນ ຕະຫລອດຮອດການສູ້ຮົບລະຫວ່າງກັນເອງຂອງພວກເຂົາ ທັງຫມົດນີ້ ສະແດງໃຫ້ ເຫັນວ່າ ສັງຄົມຂອງພວກເຂົາ ແມ່ນລະບົບສັງຄົມທີ່ມີຄວາມສຳພັນພາຍໃນຕໍ່ກັນ. ເຖິງ ຈະບໍ່ສາມາດບັນຍາຍເຖິງເຂົາເຈົ້າຢ່າງຈະແຈ້ງ ແລະເນັ້ນຍ້ຳໃຫ້ຫນັກແຫນ້ນໄປກວ່ານີ້ ໄດ້ ສິ່ງຊີ້ບອກ ທີ່ມີຢູ່ກ່ຽວກັບຄວາມສຳພັນລະຫວ່າງກຸ່ມ ແລະພາຍໃນກຸ່ມໃຫຍ່ ຢ່າງ ຫນ້ອຍກໍພໍໃຊ້ເປັນເຄື່ອງມື ສຳລັບບອກເຖິງລັກສະນະຂອງແຕ່ລະກຸ່ມວ່າ ແຕກຕ່າງກັນ ເປັນເນື້ອດຽວກັນ ແລະແຍກກັນຢູ່ແບບໃດແດ່. ການແຍກກັນຢູ່ ແລະການແຕກຫັກ ກັນໃນທາງການເມືອງ ມີຄວາມກ່ຽວພັນກັນ. ຕົວຢ່າງ ຊົນເຜົ່າ *ກະຫລ່ຽງ* (karen) ແລະ *ກຸ່ມໄຕ* (Tai) ຕ່າງຮູ້ດີ ເຖິງຄວາມແຕກຕ່າງອັນໂດດເດັ່ນຂອງຕົນ ແລະເອກະ

ລັກທົ່ວໄປຂອງຊົນເຜົ່າທີ່ໃຫຍ່ກວ່າ ເຊິ່ງເອີ້ນຕົນເອງວ່າ *"ໄຕຂາວ"* (White Tai) ແລະ *"ໄຕລາຍ"* (Striped Tai) ຫລື *"ກະຫລ່ຽງແດງ"* (Red Karen) ແລະ *"ກະຫລ່ຽງຂາວ"* (White Karen) ໂດຍຮັກສາວັດທະນະທຳອັນດຽວກັນໄວ້ໄດ້ ໃນຂະນະທີ່ພວກເຂົາຢູ່ຫ່າງໄກກັນ ທັງທາງດ້ານເສດຖະກິດ ແລະທາງການເມືອງ ເຊິ່ງກໍ່ຂຶ້ນກັບຫວ່າງພູ ແຫລ່ງຢູ່ອາໄສທີ່ກວ້າງໄກ ຂອງພວກເຂົາ.

ຕາມທັດສະນະຂອງພວກໄຮ້ສັນຊາດເຫລົ່ານີ້ ສັງຄົມລັດທີ່ໃຫຍ່ກວ່າ ແລະມີຮູບແບບການຈັດຕັ້ງ ໃນລະດັບສູງກວ່າຫລາຍນັ້ນ ແມ່ນຜູ້ສ້າງບັນຫາສະເໝີ. ປະຊາຊົນຜູ້ໄຮ້ສັນຊາດສ່ວນຫລວງຫລາຍ ຍິນດີແລກປ່ຽນຜົນຜະລິດພິເສດ ຂອງທ້ອງຖິ່ນເຊັ່ນ *"ຮັ່ງນົກແອ່ນ"* ສຳລັບເຮັດແກງຈືດ ລາຄາແພງ, ໄມ້ຫອມຊະນິດຕ່າງໆ, ເຄື່ອງປຸງແຕ່ງ ແລະຝິ່ນ ຊຶ່ງພວກຢູ່ແຜ່ນດິນໃຫຍ່ປູກເອງ ກັບສິນຄ້າທີ່ຜະລິດຍາກກວ່າຂອງລັດປະເທດໃກ້ຄຽງ ເຊັ່ນ ອາວຸດ ເຄື່ອງປັ້ນດິນເຜົາ ເກືອ ແລະສິນຄ້າອື່ນໆທີ່ຫາຍາກ ຫລື ຜະລິດເອງບໍ່ໄດ້. ດ້ວຍເຫດຜົນພາຍໃນຂອງພວກເຂົາເອງ ພວກເຂົາອາດຕ້ອງ ສະແຫວງຫາຄວາມໝັ້ນຄົງ ຈາກຄວາມສຳພັນທາງການເມືອງແບບພິເສດ ກັບລັດໃກ້ຄຽງໃດນຶ່ງ, ເຖິງແມ່ນວ່າ ມີການຕິດຕໍ່ປະເພດນີ້ຢູ່ເລື້ອຍໆກໍຕາມ ຍ້ອນວ່າລັດອື່ນໆບາງລັດ ມັກຖືກຍົ່ວຍຸ ແລະຄວາມສຳພັນດັ່ງກ່າວ ກັບລັດນ້ອຍໆ ກໍໝັ້ນຄົງດີກວ່າກັບອານາຈັກທີ່ໃຫຍ່ກວ່າ. ເຊັ່ນດຽວກັນ, ປະຊາຊົນຜູ້ໄຮ້ສັນຊາດເຫລົ່ານີ້ ມີສາຍສຳພັນ ທາງດ້ານສັງຄົມ ແລະວັດທະນະທຳທີ່ຍືດເຍື່ອ ແລະມີເງື່ອນສົ້ນລີ້ລັບກັບລັດທີ່ນ້ອຍກວ່າ ເຊັ່ນ ສາຍສຳພັນລະຫວ່າງ *ລັດກະຊິ່ນ* (kachin) ກັບລັດ *ສານ* (Shan) ໃນພາກຕາເວັນອອກຂອງ *ມ່ຽນມ້າ*ໃນປັດຈຸບັນ.

ເບິ່ງອີກແງ່ນຶ່ງ, ປະຊາຊົນຜູ້ໄຮ້ສັນຊາດເຫລົ່ານີ້ ບໍ່ໄວ້ເນື້ອເຊື່ອໃຈ ແລະຍັງກົວເກງລັດໃກ້ຄຽງ ທີ່ມີອຳນາດຫລາຍກວ່າຢູ່. ຈຸດນີ້ ເປັນຄວາມຈິງແທ້ ຢູ່ໃນຂົງເຂດແຜ່ນດິນໃຫຍ່ ຂອງອາຊີຕາເວັນອອກສຽງໃຕ້, ຢູ່ຕາມສາຍພູ ທີ່ຂັ້ນແບ່ງສາມລັດໃຫຍ່ ຄື: *ພະມ້າ, ສະຫຍາມ* ແລະ *ຫວຽດນາມ* ປະຊາຊົນຊາວພູດອຍ ທີ່ອາໄສຢູ່ທີ່ນັ້ນ ມັກຖືກຈັບຢູ່ສະເໝີ ເມື່ອເກີດການປະທະກັນ ເມື່ອກອງທັບແຫ່ງຊາດໃດນຶ່ງ ຍົກທັບເດີນທາງຜ່ານດິນແດນຂອງພວກເຂົາ ເພື່ອເກັບເກນເອົາເຂົ້າປາອາຫານ ຊາວໜຸ່ມອາສາ ແລະກຳລັງທະຫານກັບແຮງງານ ເພື່ອລຳລຽງສະບຽງ ກັບເຄື່ອງໃຊ້ອື່ນໆ. ສັງຄົມຂອງຜູ້ໄຮ້ສັນຊາດ ໃນອາຊີຕາເວັນອອກສຽງໃຕ້ ຈຳນວນຫລວງຫລາຍເຫລົ່ານີ້ ມີເລື່ອງໃຫ້ເວົ້າເຖິງ

ຫນ້ອຍກວ່າ ສັງຄົມລັດທີ່ໃຫຍ່ກວ່າໃນພາກພື້ນ ເຊັ່ນຢູ່ໃນ *ຊະວາ* ກັບ *ຟິລິບປິນ-ສະເປນ* ເຊິ່ງຢູ່ຫ່າງໄກກັນກວ່ານຶ່ງພັນໄມລ໌ ແລະມີປະຊາຊົນໄຮ້ສັນຊາດ ຈຳນວນຫນ້ອຍດຽວ ເທົ່ານັ້ນ ຢູ່ໃນລັດຂອງຕົນ. ເກາະດອນເຫລົ່ານີ້ ແຕກຕ່າງກັບແຜ່ນດິນໃຫຍ່ອີກ ຄື ມັນມີ ປະຊາຊົນໄຮ້ສັນຊາດ ເຮັດນາດຳ ທີ່ຢູ່ກັນເປັນສັງຄົມຂະຫນາດກາງ ຫລາຍກວ່າທີ່ ເປັນຢູ່ໃນແຜ່ນດິນໃຫຍ່ ເຊັ່ນພວກ *ມິນັງກະໂບ* (Minang kabau) ກັບພວກ *ບາຕັກສ* (Bataks)ໃນດອນ *ສຸມາຕຣາ* (Sumatra) ແລະພວກ " *ໂຕຣາຊັນ* " (Torajans) ໃນດອນ *ສຸລາເວສີ* (Sulawesi).

ຢ່າງໃດກໍຕາມ ບໍ່ວ່າຢູ່ເທິງແຜ່ນດິນໃຫຍ່ ຫລືເທິງເກາະດອນ, ສັງຄົມລັດທັງ ຫລາຍ ບາງທີ ເກືອບທັງຫມົດ ອາດມີຮອດຮ້ອຍ ທັງຂະຫນາດໃຫຍ່ ກາງແລະນ້ອຍນັ້ນ ເກືອບບໍ່ມີສັງຄົມໃດ ທີ່ຈະບໍ່ອອກໄປຂູດຮີດສັງຄົມຜູ່ບໍ່ມີສັນຊາດ ທີ່ຢູ່ໃກ້ຄຽງເຫລົ່ານັ້ນ. ພວກເຂົາບັງຄັບໃຫ້ມີຄວາມສຳພັນແບບສິ່ງສ່ວຍ ສ່ວນພວກບໍ່ມີສັນຊາດ ກໍຍອມຮັບກຳ ນະທາງການເມືອງທີ່ດ້ອຍກວ່າ ແລະສິ່ງສ່ວຍໃຫ້ເປັນລະຍະໆ ໃນຮູບຂອງສິນຄ້າມີຄ່າ, ນອກນີ້ ພວກເຂົາ ຍັງອອກກວາດລ້າງສັງຄົມທີ່ນ້ອຍກວ່າເລື້ອຍໆ ເພື່ອຈັບເອົາຄົນ ເຫລ່ານັ້ນ ມາຕື່ມຈຳນວນພົນລະເມືອງຂອງຕົນ, ພວກເຂົາ ສົ່ງກອງທັບຂ້າມດິນແດນ ຂອງຜູ່ອື່ນເມື່ອຕ້ອງການ ແລະຍ້ອນກຶຕົນເອງວ່າ ເປັນຊາວ*ພຸດ*, ເປັນຊາວ*ຄຣິຕ*, ເປັນ ສາວົກ*ຂົງຈື*, ເປັນຊາວ*ບາຫລີ ຮິນດູ-ພຸດ* ແລະຊາວ*ມຸສລິມ* ຈຶ່ງດູຫມິ່ນກຶຕ່ຳພວກໄຮ້ສັນ ຊາດວ່າ ເປັນມະນຸດເດີກດຳບັນ.

ຢ່າງໃດກໍຕາມ, ໃນຂະນະດຽວກັນນັ້ນ ພວກທີ່ມີກຳລັງເຫນືອກວ່າ ກໍຈຳຕ້ອງລະ ວັງ ບໍ່ກົດຂີ່ລັດໃກ້ຄຽງ ທີ່ນ້ອຍກວ່າຫລາຍນັ້ນ ຈົນເກີນໄປ ເພື່ອບໍ່ໃຫ້ການກະຈາຍສິນຄ້າ ລາຄາແພງຂາດຕອນໄປ. ຕົວຢ່າງ ຢູ່ໃນປະເທດ *ກຳພູຊາ*, ພວກ *ປະຫລ່ອງ* (Pear people)ໃນເຂດພູດອຍພາກຕາເວັນຕົກສຽງໃຕ້ ໄດ້ຮັບການຍົກເວັ້ນບໍ່ເສຽພາສີ ແລະ ແຮງງານເກນ ເພື່ອແລກກັບຫມາກແຫນ່ງ(Cardamon) ຈຳນວນນຶ່ງ ໃນແຕ່ລະປີ. ຫມາກແຫນ່ງ ເປັນສ່ວນປະກອບສຳລັບປຸງແຕ່ງຢາພື້ນເມືອງຈີນຊະນິດນຶ່ງ. ນອກຈາກ ຄວາມສຳຄັນໃນພາກປະຕິບັດຕົວຈິງແລ້ວ ຄົນສັງກັດລັດທັງຫລາຍ ຍັງຮັບຮູ້ຢ່າງເລິກ ເຊິ່ງ ກ່ຽວກັບບຸລິມະສິດທາງດ້ານຈິດໃຈຢູ່ໃນຄວາມເກົ່າແກ່ບູຮານຂອງປະຊາຊົນໄຮ້ສັນ ຊາດບ້ານໃກ້ເຮືອນຄຽງເຫລ່ານີ້ນຳ. ຊາວ *ຫວຽດນາມ* ຄົງໄດ້ແຕ່ບັນທຶກລາຍຊື່ຜູ່ເສຍ ສ່ວຍຂອງຕົນໄວ້ ຍ້ອນຮັບຮູ້ໃນຄວາມເປັນຜູ່ນຳທາງດ້ານຈິດໃຈ ຂອງຊົນເຜົ່າຈະຣາຍ

(Jarai) ໃນເລື່ອງການເປັນ *"ເຈົ້າແຫ່ງບາດານ"* (Water Haven) ແລະ *"ເຈົ້າແຫ່ງ ອັກຄີ"* (Fire Haven). ເບິ່ງແຕ່ຄວາມຊອບທຳ ໃນການສືບຣາຊະບັນລັງ ຂອງກະສັດ ແຫ່ງ *ຫລວງພຣະບາງ* ສ່ວນນຶ່ງ ກໍຍັງໄດ້ອາໄສຄວາມສຳພັນທາງດ້ານພິທີກຳຂອງ ພວກຂ້າ(ລາວເທິງ) ເຊິ່ງເປັນ ຊົນເຜົ່າ*ມອນຂະແມ*. ເມື່ອກ້າວເຂົ້າສູ່ສະຕະວັດທີ 20 ແລ້ວ ຄອບຄົວຊົນຊັ້ນສູງ ໃນ *ບັນຕາມ* (Bantam) ຢູ່ *ຊະວາ* ຕາເວັນຕົກ ຕ່າງກໍພາກ ພູມໃຈທີ່ຕົນເອງ ມີຄວາມໃກ້ຊິດຜູກພັນກັບພວກ *ບາດູຍ* (Badui) ເຊິ່ງເປັນກຸ່ມປູກເຂົ້າ ໄຮ່ນ້ອຍໆກຸ່ມນຶ່ງ ຢູ່ໃຈກາງດອນ ແລະພວກເຂົາກໍມັກເດີນປ່າໄປຢ້ຽມຢາມ ພວກ*ບາດູຍ* (Badui) ນີ້ສະເໝີ. ທ້ອງການປົກຄອງຂອງລັດ *ນິກຣິເສມບິລາມ* (Negri Sembilan) ໃນ *ມະລາຢູ* (Malay) ຍອມຮັບວ່າ ໃນການອ້າງກຳມະສິດເໜືອດິນແດນລັດນີ້ ພວກ ຕົນໄດ້ອາໄສການສ້າງພັນທະມິດ ດ້ວຍການແຕ່ງດອງ ກັບແມ່ຍິງຊົນຊາດຊົນເຜົ່າ ທີ່ອາ ໄສຢູ່ໃນປ່າເລິກດ້ານຫລັງ ບ້ານຂອງພວກເຂົານັ້ນເອງ.

ບົດທີ 3: ອົງການປົກຄອງ ແລະສັງຄົມຂັ້ນບ້ານ

ເມື່ອພິຈາລະນາແຕ່ລະກໍລະນີແລ້ວ ຈະເຫັນວ່າ ບ້ານຊາວນາ ກັບກຸ່ມພີ່ນ້ອງຊາວພູດອຍ ມີອັນຄ້າຍຄືກັນຫລາຍດ້ານ. ຢ່າງໃດກໍຕາມ ບ້ານປະຊາຊົນຕາມທົ່ງຮາບນັ້ນ ແມ່ນສ່ວນປະກອບໃນຂອບເຂດໜ້າວຽກ ທີ່ກວ້າງໃຫຍ່ກວ່າ, ໂດຍຕິດພັນກັບສາຍການຈັດຕັ້ງຂອງບ້ານ ແບບຜ່ານອຳນາດຂອງຂັ້ນນຳໃນທ້ອງຖິ່ນ ເຊິ່ງຂໍ້ກຸນແຈສຳຄັນອາດບໍ່ແມ່ນ ນາຍບ້ານພຽງຜູ້ດຽວ ແຕ່ມີຄົນອື່ນໆຮ່ວມຢູ່ນຳ.

ວິທີການເລືອກເອົານາຍບ້ານ ອາດສ່ອງແສງໃຫ້ເຫັນ ໂຄງຮ່າງຂອງອຳນາດ ແລະ ຄ່ານິຍົມຂອງບ້ານໄດ້ດີ ເທົ່າໆກັບຊີ້ບອກເຖິງຄວາມເປັນຫ່ວງເປັນໃຍຂອງລັດກະບານນຳ, ເມື່ອໃດຫາກຄົນພວກນີ້ ຖືກຕໍ່ຕ້ານຢ່າງແຂງຂັນ ສາຍສຳພັນລະຫວ່າງອົງການປົກຄອງສູນກາງ ກັບບ້ານກໍເຄັ່ງຕຶງຂຶ້ນ. ຕົວປ່ຽນແປງພື້ນຖານໃນຖານະຕຳແໜ່ງ ແລະ ໜ້າທີ່ຂອງນາຍບ້ານດັ່ງກ່າວ ຂຶ້ນກັບລະດັບທຽບຖານການແບ່ງແຍກທາງສັງຄົມ ຫລື ເສດຖະກິດພາຍໃນບ້ານ, ລະດັບທີ່ພວກຊາວນາ ຖືວ່າການຄວບຄຸມພາຍນອກເປັນເລື່ອງຂອງຄົນຕ່າງດ້າວ, ທ່າທີຂອງລັດກະບານ ທີ່ມີຕໍ່ບ້ານກັບຊາວນາ, ຊັ້ນຕຳແໜ່ງຝ່າຍບໍລິຫານ ຜ່ານການຄວບຄຸມຕົວຈິງ ແລະຄວາມຕ້ອງການ ເຊິ່ງອົງການປົກຄອງສູນກາງມີຕໍ່ສັງຄົມຂັ້ນບ້ານ. ຕົວຢ່າງທີ່ມີຢູ່ຢ່າງຈຳກັດຊຸດນຶ່ງ ເຊິ່ງເກັບກຳໄດ້ຈາກບ່ອນຕ່າງໆຂອງພາກພື້ນນີ້ ຊີ້ໃຫ້ເຫັນເຖິງຄວາມສຳພັນອັນແຕກຕ່າງບາງຢ່າງ ໃນການປະຕິບັດໜ້າທີ່ຂອງນາຍບ້ານ.

ຕາມປະເພນີແລ້ວ ຢູ່ໃນບ້ານຊາວ *ມາລາຢູ* ເຊິ່ງປະກອບດ້ວຍກຸ່ມຄົນທີ່ເປັນພີ່ນ້ອງກັນຈຸ້ມນຶ່ງຫລືຫລາຍຈຸ້ມ ຜູກພັນກັນດ້ວຍການແຕ່ງດອງ ລະຫວ່າງພາຍໃນພວກເຂົາ, ຕຳແໜ່ງຜູ້ປົກຄອງຂັ້ນຕົ້ນ ຕົກຢູ່ໃນມືຂອງນາຍບ້ານ (Penghulu) ເຊິ່ງຕາມທຳມະດາແລ້ວ ກໍມັກເປັນສະມາຊິກຂອງຄອບຄົວເຈົ້າກົກເຈົ້າເຫລົ່າ ແລະມັກໄດ້ຮັບຕຳແໜ່ງນີ້ ດ້ວຍການສືບທອດໂດຍກົງ. ເຖິງແມ່ນວ່າ ບາງເທື່ອບາງທີ ນາຍບ້ານອາດຈະມີຄວາມກ່ຽວຂ້ອງກັບເຈົ້າເມືອງ ຫລື ສະມາຊິກອື່ນໆຂອງຊົນຊັ້ນສູງຢູ່ແດ່ ແຕ່ໂດຍປົກກະຕິແລ້ວ ເຂົາກໍມາຈາກກຸ່ມຊົນຊາວນາ ຄືກັບຜູ້ອື່ນໆນັ້ນເອງ. ເຖິງແມ່ນວ່າ ການແຕ່ງຕັ້ງ ໄດ້ເຮັດໄປແບບສືບສາຍເລືອດ ເຂົາກໍມັກຈະໄດ້ຮັບການເຊື່ອຖື ສະແດງອອກໂດຍການໄດ້ຮັບເຄື່ອງບັນນາການຈາກຜູ້ປົກຄອງລັດ ເຊິ່ງເປັນຜູ້ອອກດຳລັດແຕ່ງຕັ້ງ ແລະ

ມອບຫມາຍອຳນາດຫນ້າທີ່ໃຫ້ແກ່ເຂົາ. ດຳລັດແຕ່ງຕັ້ງກັບການມອບຫມາຍ (ບາງເທື່ອ) ອາດມີເລື້ອຍໆ ເກີນກວ່າຄວາມຈຳເປັນຕົວຈິງ ອຳນາດຈາກພາຍນອກ ຕາມທີ່ບົ່ງໄວ້ໃນດຳລັດນັ້ນ ໄດ້ໃຫ້ອຳນາດປົກຄອງແກ່ນາຍບ້ານ ພຽງແຕ່ຫນ້ອຍດຽວເທົ່ານັ້ນ. ນອກຈາກນີ້ແລ້ວ ເຂົາກ່ອາໄສຄວາມເຄົາຣົບນັບຖື ແລະການແກ້ໄຂຄວາມຂັດແຍ່ງທາງສັງຄົມພຸ້ນເປັນສ່ວນໃຫຍ່. ດ້ວຍເຫດນີ້ ຈຶ່ງມັກພົບວ່າ ນາຍບ້ານ *ແປງກູລູ* ນັ້ນ ນອກຈາກຈະມາແຕ່ຄອບຄົວສຳຄັນຕາມປະເພນີຂອງບ້ານແລ້ວ ເຂົາຍັງຕ້ອງມີຊັບສິນວັດກຸຫລາຍກວ່າຜູ່ອື່ນໆໃນບ້ານອີກ ແລະບາງເທື່ອ ຍັງເປັນທີ່ຮັບຮູ້ກັນວ່າ ເຂົາເປັນຜູ່ມີອຳນາດພິເສດ ເປັນຄົນໃຈບຸນ ຫລື ປະສົບຄວາມສຳເລັດໃນການກະສິກຳ ລ້ຽງສັດ ເຊິ່ງກໍເປັນອຸກງານ ທີ່ຫມົດທຸກຜູ່ທຸກຄົນໃນບ້ານ ເຮັດຄືກັນ.

ນາຍບ້ານຊາວ *ມາລາຢູ* ເປັນຜູ່ມີຄວາມຮັບຜິດຊອບຮ່ວມກັບ ຜູ່ໃຫຍ່ຜູ່ອື່ນໆໃນບ້ານ ເພາະມັນອາດເປັນຈຸດອ່ອນໄດ້ ທີ່ຫ້ອງການບ້ານຈະຖືກເບິ່ງວ່າ ເປັນບ່ອນໃຊ້ອຳນາດຂອງບຸກຄົນນຶ່ງບຸກຄົນດຽວ ເພື່ອຮັກສາຄວາມສະຫງົບສຸກໃນບ້ານ ແລະການສົ່ງມອບຜູ່ກະທຳຜິດຮ້າຍແຮງ ໃຫ້ແກ່ເຈົ້າເມືອງ/ຕາແສງ ທັງນີ້ ເພື່ອປະຕິບັດຫນ້າທີ່ທາງກົດຫມາຍແດ່ ເພື່ອສະຫນອງແຮງງານເກນ ແລະບາງເທື່ອກໍຈັດຫາຜົນຜະລິດຈາກບ້ານ ເພື່ອຈັດສັນທີ່ດິນຫວ່າງເປົ່າ ແລະເພື່ອເປັນຫູເປັນຕາ ແລະບາງຄັ້ງກໍເປັນແຂນຂວາ ໃຫ້ຫົວຫນ້າ ຫລືອາດຍາເຈົ້ານາຍອື່ນໆ. ສະຫລຸບແລ້ວ ປະມວນກົດຫມາຍ *ມະລາກາ* (Malacca) ສະຕະວັດທີ 16 ໄດ້ ບັນຍັດໄວ້ວ່າ ນາຍບ້ານ (Pen ghulu)

ຕ້ອງເຝິກຝົນຕົນເອງໃຫ້ຊ່ຽວຊານ ໃນເລື່ອງຕ່າງໆ ຕ່ໄປນີ້ ຄື ອັນທີນຶ່ງ ກົດຫມາຍສາສະຫນາ (Hukum Shera), *ສອງ ຫລັກຄວາມຍຸຕິທຳຕາມທຳມະຊາດ* (Hukum Akl), *ສາມ ຫລັກຄວາມປະພຶດອັນຊອບທຳ* (Hukum Faal) *ແລະ ສີ່ ປະເພນີ ແລະ ກົດຫມາຍປະເພນີ* (Hukum Adat) *ກ້າປະຕິບັດໄດ້ດັ່ງນີ້ ພວກເຂົາຈຶ່ງຈະໄດ້ຊື່ວ່າ ເປັນຄົນຄັກແທ້.*

ຢູ່ໃນ *ຟິລິບປິນ* ລະບົບການຈັດຕັ້ງບ້ານແບບ *ມາເລ* ແທ້ໆ ໄດ້ກາຍເປັນພື້ນຖານໃຫ້ພວກ *ສະເປນ* ນຳໃຊ້ສ້າງກົດເກນໃນການປົກຄອງຂອງພວກເຂົາ. ສະໄຫມກ່ອນ *ສະເປນ* ມາປົກຄອງນັ້ນ ຜູ່ເປັນຫົວຫນ້າທີ່ຊື່ວ່າ *ດາໂຕ໊ະ* (Datu) ຍັງຄົງຢູ່ໃນຕຳແຫນ່ງຕໍ່

ມາ ແຕ່ມາປ່ຽນຊື່ໃຫມ່ເປັນ *"ນາຍບ້ານ"* (ຫົວໜ້າບ້ານ: Cabeza de barangay) ຄວາມຈົງຮັກພັກດີຂອງເຂົາ ຕໍ່ລະບອບລ່າເມືອງຂຶ້ນ ຊ່ອຍໃຫ້ເຂົາໄດ້ຮັບສິດພິເສດແລະຂໍ້ຮັບປະກັນຖານະຂອງເຂົາຫລາຍຂຶ້ນ. ຍ້ອນວ່າ ແຕ່ລະບ້ານກໍມີຄອບຄົວທີ່ເປັນຂໍກຸນແຈຢູ່ຫລາຍຄອບຄົວ ພວກເຈົ້າກົກເຈົ້າເຫລົ່າຈຶ່ງໄດ້ດັດແປງ ລະບົບການປົກຄອງຂອງ *ສະເປນ* ໃຫ້ເຂົ້າກັບຄວາມນິຍົມສູງສຸດຂອງຊຸມຊົນ ເຖິງແມ່ນວ່າແຕ່ເດີມມານັ້ນ ພໍ່ບ້ານຮັບຕຳແໜ່ງຕາມການສືບທອດທາງສາຍເລືອດກໍຕາມ ໃນບາງເທື່ອ ກໍອາດມີການປ່ຽນຜຽນກັນຮັບຕຳແໜ່ງນີ້ ລະຫວ່າງຄອບຄົວເຈົ້າກົກເຈົ້າເຫລົ່າ ທີ່ປະກອບເປັນຊົນຊັ້ນນຳຂອງບ້ານ ເຊິ່ງພວກຂ້າຣາຊະການຊັ້ນນ້ອຍໆລົງມາ ກໍໄດ້ຮັບເລືອກອອກມາຈາກຄົນກຸ່ມນີ້. ດ້ວຍຄວາມຮ່ວມມືຂອງນັກບວດ ຕຳແໜ່ງຮອງເຈົ້າເມືອງ (Gobernadorcillo) ກໍມີຄວາມສຳຄັນຫລາຍ ເພາະເຂົາເປັນຜູ່ຢູ່ເຄິ່ງກາງລະຫວ່າງຄົນຕ່າງປະເທດນາຍເໜືອຫົວເຂົາ ກັບພວກຊາວນາທີ່ຢູ່ຕ່ຳກວ່າເຂົາ. ໂດຍທົ່ວໄປແລ້ວ ຕຳແໜ່ງນີ້ ມັກເປັນຂອງພະນັກງານທ້ອງຖິ່ນ ຜູ່ມີຕຳແໜ່ງສູງສຸດໃນລະບົບຣາຊະການ *ສະເປນ* ທີ່ມີໜ້າທີ່ປົກຄອງຕາແສງນຶ່ງໆ (Pueblo) ເຊິ່ງປະກອບດ້ວຍຫລາຍບ້ານຫລື *ບາຣິໂອສ* (Barrios) ແລະຢ່າງໜ້ອຍ ໃນນັ້ນ ຕ້ອງມີຜູ່ເຖິງກະສຽນແລ້ວ 500 ຄົນ. ຄົນຜູ່ນີ້ມັກຈະມີສ່ວນກ່ຽວຂ້ອງຢ່າງເລິກເຊິ່ງ ກັບການຕໍ່ສູ້ຍັດແຍ່ງ ລະຫວ່າງເຈົ້າກົກເຈົ້າເຫລົ່າສະເໜມີ, ບຸລຸດຜູ່ນີ້ ຍັງມີພັນທະທາງການປົກຄອງ ກັບພວກເຈົ້ານາຍຂອງເຂົາອີກ. ເປັນທີ່ຄາດໜາຍວ່າ ເຂົາຕ້ອງຈັດສົ່ງຄ່າພາສີອາກອນ ສິນຄ້າ ແລະແຮງງານສຳລັບພາສີ *ໂປໂລ* (Polo) ແລະຍັງຕ້ອງເຮັດວຽກໃຫ້ລັດອີກຮ້ອຍແປດພັນແນວ ຕ້ອງຫາຄ່າຈ້າງໃຫ້ຕົນເອງ ສຳລັບການພະຍາຍາມເຮັດວຽກນີ້ນຳ. ຍ້ອນວ່າ ໂດຍພື້ນການແລ້ວ ຄວາມສຳພັນຂອງເຂົາ ກ່ຽວຂ້ອງກັບພວກຊາວນາໃນຂັ້ນລຸ່ມໂດຍກົງ ຄວາມຈຳເປັນຕ້ອງເກັບພາສີຕາມຈຳນວນ ທີ່ຕ້ອງການ ບວກໃສ່ກັບສ່ວນທີ່ຕ້ອງເອົາມາບຳລຸງຕົນເອງແລ້ວ ມັນກໍເລີຍເຮັດໃຫ້ຄວາມສຳພັນຂອງເຂົາກັບຊຸມຊົນເຄັ່ງຕຶງຢູ່ສະເໜມີ.

ມາເຖິງກາງສະຕະວັດ ທີ 18 ກຸ່ມຊົນຊັ້ນນາຍທາງເສດຖະກິດ ຢູ່ໃນສັງຄົມຊົນນະບົດຂອງ*ຟິລິບປິນ* ຂະຫຍາຍຕົວຢ່າງຕິດພັນຫນຽວແໜ້ນກັບພວກເຈົ້າກົກເຈົ້າເຫລົ່າຄົນພວກນີ້ ເອີ້ນຕາມພາສາທ້ອງຖິ່ນວ່າ *ກາຊິເຄວ* (Caciques) ໄດ້ຊັບສິນ ແລະອຳນາດ ຈາກການຍຶດຄອງທີ່ດິນ. ບາງຄົນກໍໄດ້ຮັບດິນມໍລະດົກ ສ່ວນອີກພວກນຶ່ງ ສ້າງຮັ່ງຄູນມີ ດ້ວຍການໃຫ້ຄົນຢືມເງິນແລະຮັບຈຳຕາດິນ. ຄົນພວກນີ້ສ່ວນຫລວງຫລາຍມາ

ຈາກຊົນຊັ້ນລູກຊອດ. ອິດທິພົນຂອງພວກ *ກາຊິເຄ*ˆ (Caciques) ຕ່ໂຄງສ້າງຂອງ ບ້ານ ມີຢ່າງຫລວງຫລາຍ ເນື່ອງຈາກວ່າ ພວກເຂົ້າມີບົດບາດສຳຄັນຫລາຍຂົ້ນເລື້ອຍໆ ຢູ່ໃນທຸກຮູບແບບການດຳລົງຊີວິດຂອງຊາວບ້ານ.

ໂດຍທົ່ວໄປແລ້ວ, ນາຍບ້ານໃນ *ພະມ້າ* ພາກກາງ ມັກໄດ້ຮັບຕຳແໜ່ງ ໂດຍ ການສືບທອດຈາກພໍ່ ຫລືບາງເທື່ອ ກໍຕາມສາຍແມ່ ຫລືດ້ວຍການແຕ່ງດອງ. ການເຂົ້າ ຮັບຕຳແໜ່ງນາຍບ້ານນັ້ນ ປາກົດວ່າ ສ່ອງແສງໃຫ້ເຫັນລະດັບຊັ້ນທາງສັງຄົມ ຂອງ ຄົນໃນບ້ານ ໂດຍອີງໃສ່ຊັບສິນ ແລະ *"ສິດ ທີ່ຈະໄດ້ປົກຄອງ"*. ຄວາມຫນັກແໜ້ນທະວີ ຂົ້ນ ດ້ວຍການຍຶດຄອງຕຳແໜ່ງ ຕິດຕໍ່ກັນເປັນເວລາຫລາຍຮຸ່ນຄົນ. ຣາຊະວົງຈະເປັນຜູ່ ຢັ້ງຢືນການແຕ່ງຕັ້ງ ນາຍບ້ານຂອງພວກເຂົ້າ ກໍຕໍ່ເມື່ອໄດ້ກວດກາເບິ່ງສິດໃນການສືບ ທອດຂອງຜູ່ກ່ຽວ ກັບເອກະສານຫລັກຖານ ທີ່ຂຽນໄວ້ໂດຍຜູ່ເປັນນາຍເໜືອເຂົ້າ ໃນ ທ້ອງກິ່ນທີ່ພວກເຂົ້າດຳລົງຊີວິດຢູ່. ຄວາມຮັບຜິດຊອບຂອງພວກເຂົ້າ ຫນັກໜ່ວງ ຫລາຍ ຍ້ອນວ່າລະບົບພາສີໃນຊົນນະບົດ *ພະມ້າ* ມີຄວາມສັບສົນຫຍຸ້ງເຫຍິງຫລາຍ ແລະການບໍລິຫານ ໃນເລື່ອງໃຫ້ຄວາມຍຸຕິທຳ ກໍເຕັມໄປດ້ວຍເລ່ຫລ່ຽມຄົດໂກງສະເໜີ. ເຖິງວ່າ ພວກເຂົ້າດຳລົງຊີວິດຢູ່ໃນບ້ານ ແຕ່ພວກເຂົ້າກໍຍັງມີຄວາມສຳພັນດ້ານວຽກ ງານ ກັບພວກຫົວໜ້າຢູ່ໃນເມືອງໃກ້ຄຽງຢ່າງປົກກະຕິຢູ່. ຍ້ອນວ່າ ຜູ່ທີ່ເປັນຫົວໜ້າ ເຫລ່ານີ້ ໄດ້ຮັບຕຳແໜ່ງແບບສືບທອດມາຄືກັນ, ດັ່ງນັ້ນ ຮູບແບບຄວາມສຳພັນທາງ ສ່ວນຕົວ ແລະ ທາງຄອບຄົວ ຈຶ່ງຕ້ອງໄດ້ຮັບການພັດທະນາຢ່າງດີ ຕະຫລອດເວລາທີ່ ຜ່ານມາ, ແລະ ແນ່ນອນວ່າ ການປະຕິບັດວຽກງານ ຢ່າງມີປະສິດທິພາບຂອງນາຍ ບ້ານ ໃນການເປັນຕົວແທນສິດຜົນປະໂຫຍດຂອງລູກບ້ານ ຕໍ່ໜ້າອຳນາດການປົກຄອງ ຂັ້ນສູງນັ້ນ ຈຶ່ງຕ້ອງຂົ້ນກັບຄວາມສາມາດ ອັນວ່ອງໄວຂອງເຂົ້າ ໃນການໝູນໃຊ້ຄວາມ ສຳພັນເຫລ່ານີ້.

ຫລັກການທຳນອງດຽວກັນນີ້ ໃຊ້ໄດ້ກັບບົດບາດແລະໜ້າທີ່ຂອງນາຍບ້ານ ໃນ ທຸກໆປະເທດອາຊີຕາເວັນອອກສຽງໃຕ້ແຜ່ນດິນໃຫຍ່ ທີ່ນັບຖືສາ*ສະໜາພຸດ*. ຢ່າງໃດກໍ ຕາມ ຢູ່ປະເທດ *ພະມ້າ* ພາກໃຕ້, *ໄທ, ລາວ* ແລະ *ຂະເໜມນ* ໂດຍທົ່ວໄປ ນາຍບ້ານໄດ້ ຮັບການຄັດເລືອກຢ່າງບໍ່ເປັນທາງການ ໃນບັນດາຜູ່ອາວຸໂສຂອງບ້ານ. ຄວາມມີອາວຸໂສ ຂອງພວກເຂົ້າເຮັດໃຫ້ພວກເຂົ້າໄດ້ຮັບຕຳແໜ່ງໂດຍອັດຕະໂນມັດ ແລະປະສົບການຂອງ ພວກເຂົ້າກໍມີນ້ຳໜັກໃນການຕັດສິນບັນຫາ. ຢ່າງໃດກໍຕາມ ໃນຖານະວ່າ ເປັນຜູ່ເກົ້າ

ຜູ່ແກ່ ທີ່ສະຫລາດສະຫລຽວ ພວກເຂົ້າຈຶ່ງໄດ້ຮັບວ່າຈ້າງເປັນທີ່ປຶກສາ ແລະເຊີນຊວນ ໃຫ້ເຂົ້າຮ່ວມກິດຈະກຳ ທີ່ອຳນາດສູນກາງ ຮຽກຮ້ອງໃຫ້ເຮັດ ແລະເພື່ອຊ່ວຍໄກ່ເກ່ຍປະ ນີປະນອມການຜິດກຽງຕ່າງໆ. ສິ່ງເຫລ່ົານີ້ ເປັນສ່ວນນຶ່ງຂອງ ລັກສະນະຄວາມເປັນຜູ່ ນຳ ທີ່ປະຕິບັດມາຕາມປະເພນີ ແລະໄດ້ຮັບການສ່ົງເສີມດ້ວຍຄ່ານິຍົມຂອງສັງຄົມບ້ານ ເຊ່ົາໃຫ້ຄວາມສຳຄັນສູງ ຕ່ໍການຫລີກເວ້ັນຄວາມຂັດແຍ່ງ. ວັນນະຄະດີ ທີ່ມີຊ່ື່ສຽງ ເຕັມ ໄປດ້ວຍນິທານ ກ່ຽວກັບພະຍາເມືອງ ວີຣະຊົນ ເຊ່ົາໃນປາງສົງຄາມ ໄດ້ກອບກູ້ບ້ານ ເມືອງໄວ້ ແລະ ທ້າວບ້ານນອກຄົນທຳມະດາທ່ີກ້າຫານ ສະຫລາດ ສາມາດຍາດໄຊຊະ ນະ ໄດ້ອຳນາດ ແລ້ວແຕ່ງດອງກັບລູກສາວຂອງພະຍາ ຫລືບ່ໍກ່ຍາດເອົາມະເຫສີຂອງ ພະຍາເອງ. ນາຍບ້ານ ບ່ໍແມ່ນຄົນເກ່ັງກ້າຄ ືພະເອກເຫລ່ົານັ້ນ ແຕ່ທັງລັດກ ະບານ ທັງ ບ້ານກ ່ຍອມຮັບນັບຖ ືບົດບາດສຳຄັນຂອງເຂ ົ້າ ໃນຖ ານະເປັນຜູ່ຢ ູ່ລະຫວ ່າງກ າງ ແຕ່ສ ິ່ງ ນ ີ້ກ ໍໄດ ້ເຮ ັດໃຫ ້ເຂ ົ້າ ເປ ັນຜ ູ່ຮ ັບເອ ົ້າເຄ າະກ ຳ ແບກຫ າບຄ ວາມອ າຄ າດບ າດໝ າງ ຈ າກ ທັງສອງຝ ່າຍຕ ະຫ ລອດມ າ.

ການເປັນຜ ່ນ ຳ ຫ ລ ື ຫ ົວໜ ້າບ ້ານໃນ *ຫ ວຽດນ າມ* ມ ີລ ັກສ ະນ ະດ ຽວກ ັບລ ະບ ົບທ ີ່ ເວ ົ້າມ າຂ ້າງເໜ ືອນ ັ້ນ. ບ ້ານຊ າວ *ຫ ວຽດນ າມ* ປ ົກຄ ອງໂດຍຫ ົວໜ ້າ (Xa truong) ເຊ ່ົາໄດ ້ຮ ັບເລ ືອກ ຈ າກລ ູກບ ້ານ. ເຖ ິງແ ມ ່ນວ ່າ ພ ວກຂ ຸນນ າງໃນບ ້ານ ຈ ະເປ ັນຜ ູ່ໄດ ້ຮ ັບ ເລ ືອກເປ ັນນ ายบ ้ານແ ລ ้ວກ ໍຕ ามม ี ท ่ า ร า ช ะ ว ั ง ก ็ ย ั ง ต ้ อ ง ใ ห ้ ก า น ร ั บ ร ู ้ พ ว ก เ อ ็ า ย ู ่ . ພ ວ ກ ເ ອ ົ ້ າ ຕ ້ ອ ງ ປ ະ ຕ ິ ບ ັ ດ ຕ າ ມ ຄ ຳ ສ ັ ່ ງ ຂ ອ ງ ທ າ ງ ຣ າ ຊ ະ ວ ັ ງ ແ ລ ະ ແ ນ ່ ນ ອ ນ ວ ່ າ ໃ ນ ນ ັ ້ ນ ຕ ້ ອ ງ ມ ີ ການເກ ັບພ າສ ີ ປ ะจ ำบ ้ານນ ำ. ພ ວ ກ ເ ອ ົ ້ າ ເ ຫ ລ ่ ົ າ ນ ั ้ น ເ ป ็ น ผ ู ่ ร ั บ ใ ช ้ ห ล า ย ก ว ่ า ที่ จ ะ เ ป ็ น ห ัว ห น ้ า ข อ ง ส ะ ผ า ข ุ น น า ง ป ะ จ ำ บ ้ า น (Hoi Dong Hao Muc) ເ ຊ ่ ົ າ ເ ป ็ น ผ ู ่ ม ี ອ ำ ນ า ด ນ ำ ผ า ที่ แ ท ้ จ ิ ง ຢ ู ่ ໃ ນ ບ ้ า น . ມ ิ ສ ุ ภ า ษ ิ ต *ห ว ຽ ด น า ม* ບ ิ ด ນ ึ ่ ง ເ ວ ้ า ว ่ า : *"ส ะ ม า ค ม บ ้ า น แ ม ่ น ส า ม บ ้ อ ย ๆ แ ห ่ ง น ึ ่ ง "* , ເ ຊ ่ ົ ງ ก ็ ง ก ั น ข ้ า ม ก ั บ ส า ม ใ ห ย ่ ໃ ນ ເ ม ื อ ง ห ล ว ง ข อ ง เ จ ้ า ຈ ักกะพ ัด. ອ ะ ด ิ ด ห ົ ว ห ม ้ า บ ้ า น ผ ู ่ อ า ว ุ โ ส ที่ ไ ด ้ ก ั บ ม า เ ป ็ น ข ุ น น า ง ห ล ั ง จ า ก อ อ ก ຈ ากอ ຽ ก ง า น แ ล ้ ว น ั ้ น ย ั ง เ ป ็ น ผ ู ่ ม ี ก ຽ ด ส ั ก ส ิ ໃ ນ ฐ า น ะ ข ุ น น า ง ผ ู ่ น ึ ่ ง ห ล า ย ก ว ่ า ส ะ ไ ห ม ที่ เ ข ้ า เ ป ็ น ห ัว ห น ้ า บ ้ า น อ ี ก .

ເ ป ็ น ห ย ั ง ຢ ู ่ *ห ว ຽ ด น า ม* ພ ວ ก ข ุ น น า ง จ ึ ่ ง ไ ด ้ เ ป ็ น ผ ู ่ น ำ ที่ แ ท ้ จ ิ ง ใ ນ ก า ร ป ก ครองบ ้ าน? เ ห ต ผ ล พ ื ้ น ฐ า น ก ็ ค ื อ ว ่ า พ ว ก เ ข ้ า บ ่ ไ ด ้ เ ร ั ด อ ง ก อ ั น ใ ด อ ั น น ึ ่ ง โ ด ย ส ะ เ พ า ะ ส ำ ล ั บ ธ า ช ะ ว ั ง ต า ม แ บ บ ท ี่ น า ย บ ้ า น เ ค ย เ ร ั ด . ฐ า น ะ ข อ ง พ ว ก เ ข ้ า บ ่ แ ม ่ น ฐ า น ะ ท ี่

ທາງການແຕ່ງຕັ້ງໃຫ້, ໃນຂະນະທີ່ນາຍບ້ານໃນຫນ້າທີ່ ເຮັດວຽກຮັບໃຊ້ຢູ່ ສີ່-ຫ້າ ປີ ຢ່າງບໍ່ໄດ້ຮັບຄ່າຈ້າງໃດໆ ພວກຂຸນນາງ ຊ້ຳສືບຕໍ່ຢູ່ໃນຕຳແຫນ່ງສະມາຊິກກາວອນຕະ ຫລອດຊີວິດ. ພວກອາດຍາເປັນກຸ່ມຄົນທີ່ມີລັກສະນະແຕກຕ່າງກັນ ອົງປະກອບຢູ່ໃນແຕ່ ລະບ້ານຜິດແຜກກັນ. ການມີແຕ່ຊັບສິນ, ໄວວຸທິ ແລະຄວາມສຳເລັດ ດ້ານການສຶກສາ ເທົ່ານັ້ນ ບໍ່ພຽງພໍທີ່ເຂົາຈະໄດ້ຮັບມອບອຳນາດອັນຊອບທຳໄດ້. ເຖິງແມ່ນວ່າ ມັນແມ່ນ ຄຸນນະສົມບັດອັນຕົ້ນຕໍກໍຕາມ. ຍົກຕົວຢ່າງ ເປັນການຍາກສຳລັບເຈົ້າທີ່ດິນ ຜູ້ກຶກຫນັງ ສືທີ່ຈະໄດ້ເປັນຂຸນນາງ. ໃນກຸ່ມພວກຂຸນນາງນຳກັນນັ້ນ ບຸກຄົນຜູ່ມີຖານະສູງສຸດ ເຊິ່ງ ມີຫນ້າທີ່ ເປັນປະທານກອງປະຊຸມຂອງພວກເຂົາ ອາດແມ່ນຊາວບ້ານຜູ່ນຶ່ງ ທີ່ມີລະດັບ ການສຶກສາດີ ຫລືເຄີຍມີຊັ້ນຕຳແຫນ່ງສູງທີ່ສຸດແລ້ວ ໃນຊີວິດທີ່ຜ່ານມາ ຫລືພຽງແຕ່ ອາດແມ່ນນາຍບ້ານອາວຸໂສ ທີ່ກິນບຳນານແລ້ວຜູ່ນຶ່ງກໍໄດ້.

ບໍ່ຄືຢູ່ໃນປະເທດ *ໄທ* ແລະ *ພະມ້າ*, ພວກຂຸນນາງຂັ້ນບ້ານຢູ່ *ຫວຽດນາມ* ບໍ່ໄດ້ ເປັນລູກນ້ອງຂອງຂ້າຣາຊະການໃນເມືອງ. ແມ່ນວ່າພວກເຂົາຮັບໃຊ້ຣາຊະວັງຢູ່ຫ່າງໄກ ຄືພວກເຂົາເຄີຍປະຕິບັດມາ ບໍ່ແມ່ນຍ້ອນວ່າ ການອຸປະກຳຂອງວັງ ໄດ້ຂະຫຍາຍໄປ ຮອດພວກເຂົາ ແຕ່ຫາກເປັນຍ້ອນວ່າ ໃນທາງທິດສະດີແລ້ວ ພວກເຂົາເປັນສ່ວນນຶ່ງ ຂອງລະບົບປົກຄອງເປີດກວ້າງ ອັນຊຸກດັນໃຫ້ພວກເຂົາຫັນໄປຫາລະບົບຣາຊະການ ທີ່ມີ ຢູ່ທົ່ວໄປໃນສັງຄົມ. ຫລາຍຄົນໃນຫມູ່ພວກເຂົາ ເປັນຫົວຫນ້າຄອບຄົວ ຮູ້ຫນັງສືອ່ານອອກ ຂຽນໄດ້ ທີ່ໄຝ່ຝັນຢາກໃຫ້ລູກຊາຍ ຫລານຊາຍ ສອບເສັງເຂົ້າເຮັດວຽກເປັນຂ້າຣາຊະ ການພົນລະເຮືອນໄດ້. ໃນສາຍຕາຂອງພວກເຂົາ ຊື່ສຽງອັນດີຂອງບ້ານ ຂຶ້ນກັບການມີ ຄວາມສຳພັນພາຍໃນກັບຣາຊະວັງ ເພາະຢ່າງຫນ້ອຍ ກຽດສັກສີຂອງບ້ານ ກໍກ່ຽວຂ້ອງ ໂດຍກົງກັບຈຳນວນຜູ່ສອບເສັງໄດ້ ໃນຕະຫລອດສະຕະວັດທີ່ຜ່ານມາ. ຄວາມສຳຄັນໃນ ເລື່ອງນີ້ ກໍຄືວ່າ ໃນເມື່ອຍັງບໍ່ມີຣາຊະວັງຕາມປະເພນີແຫ່ງໃດ ໃນອາຊີຕາເວັນອອກ ສຽງໃຕ້ ອອກຄຳສັ່ງຕ່ໍສື່ສານມວນຊົນ ຫລືລະບົບເລື່ອນຊັ້ນ ຫລື ກຳນົດເອກະລັກທາງສັງ ຄົມເສດຖະກິດໃດນຶ່ງ ໃຫ້ແກ່ມວນຊົນໃນຊົນນະບົດແລ້ວ, ຮູບແບບການເຂົ້າຮ່ວມຢ່າງ ຄອບງຳຢູ່ໃນສັງຄົມ ບໍ່ວ່າຈະຢູ່ໃກ້ກັບທາງດ້ານພູມສາດ ເຊັ່ນ ປະເທດ*ໄທ* ແລະ*ຫວຽດ ນາມ* ກໍນັບວ່າມີຄວາມສຳຄັນຂັ້ນເປັນຕາຍ ຕ່ປະຫວັດສາດ ຍຸກກ່ອນທັນສະໄຫມຂອງ ອົງເຂດນີ້ ເທ່າໆກັບການຂຶ້ນກັບຢ່າງຕາຍຕົວ ນຳການຈັດແບ່ງອັນແຂງກະດ້າງ ແລະ ການຄວບຄຸມການເລື່ອນຊັ້ນທາງສັງຄົມ.

ກໍລະນີ ຂອງ *ຫວຽດນາມ* ອະທິບາຍເຖິງຄວາມສຳຄັນຢັ້ນເປັນຕາຍ ຂອງການ ຍິນຍອມຮ່ວມກັນໃນຖານະວ່າ ເປັນທັງແຫລ່ງກຳເນີດ ແລະທາດແທ້ຂອງອຳນາດການ ປົກຄອງ. ບັນຫາທີ່ສຳຄັນໃນຊີວິດຊາວບ້ານຄືເລື່ອງສັງຄົມ ແລະເສດຖະກິດ ເຊິ່ງມີຜົນ ກະທົບຕໍ່ສະຖານະພາບ ຂອງສະມາຊິກແຕ່ລະຄົນຢູ່ໃນຊຸມຊົນ ໂດຍການຫລຸດຜ່ອນ ແລະ ແກ້ໄຂຄວາມຂັດແຍ່ງ ໂດຍການກຳນົດແຮງງານ ແລະພັນທະພາສີທີ່ຕ້ອງເສຍ ແລະ ໂດຍຈັດສັນການຊົມໃຊ້ທີ່ດິນ. ໃນທີ່ສຸດ ກົດໝາຍປະເພນີ ກໍຂຶ້ນກັບຄວາມພ້ອມພຽງ ແລະຍິນຍອມຂອງຊາວບ້ານ ທັງນີ້ ກໍເພື່ອຄວາມສຳເລັດ ໃນການດຳເນີນຊີວິດຂອງ ບ້ານເອງ. ໃນສັງຄົມ ທີ່ຍັງມີລະບົບຈັດແບ່ງຊົນຊັ້ນຢ່າງເຂັ້ມງວດນັ້ນ ຜົນປະໂຫຍດຂອງ ສ່ວນບຸກຄົນ ມີນ້ຳໜັກຕາມຖານະທາງສັງຄົມ ແລະເສດຖະກິດຂອງເຂົາ. ຍິ່ງມີຄວາມ ແຕກຕ່າງໃນເລື່ອງຖານະຫລາຍເທົ່າໃດ ມັນກໍຍິ່ງສຳຄັນຂຶ້ນ ສຳລັບໂຄງສ້າງອຳນາດ ຂອງບ້ານ ທີ່ມັນຈະເປັນຕົວແທນໃຫ້ເທົ່ານັ້ນ.

ບົດທີ 4 : ອຳນາດຂັ້ນແຂວງ

ການກ້າວຂຶ້ນສູ່ຕຳແໜ່ງທາງສັງຄົມແລະບໍລິຫານ ແຕ່ຂັ້ນບ້ານໄປເຖິງຣາຊະອັງຫລວງ ຫລື ໃນເມືອງຫລວງນັ້ນ ເກີດຂຶ້ນໃນຂັ້ນເມືອງຫລືສູນກາງເມືອງ ເຊິ່ງເປັນຄັ້ງທຳອິດ ທີ່ແຕ່ລະຄົນຈະໄດ້ປະເຊີນໜ້າກັບກະໂຕບຸກຄົນ ຜູ່ຮັບຜິດຊອບວຽກງານ ໃນຊີວິດປະຈຳວັນຂອງພວກເຂົາ ໂດຍອີງໃສ່ຄວາມສັດຊື່ເປັນພື້ນຖານ. ຄຳວ່າ *"ການເມືອງ"* ໃນພາສາ*ໄທ* ມີຄວາມໝາຍຕາມອັກສອນວ່າ *"ທຸລະກິດຂອງແຂວງ"*. ບ້ານທັງຫລາຍຈຳຕ້ອງຕິດຕໍ່ກັບເມືອງຕ່າງໆ ທີ່ຂຶ້ນກັບເຈົ້າແຂວງແລະພະນັກງານແຂວງ ຫລາຍກວ່າຕິດຕໍ່ໂດຍກົງກັບເຈົ້າຊີວິດ. ຕົວເມືອງເອກເອງ ຕິດຕໍ່ໂດຍກົງກັບທັງສອງສາຍການປົກຄອງຂັ້ນຕ່າງໆ ຄືແຕ່ເຈົ້າຊີວິດຫາຂັ້ນບ້ານ. ເສັ້ນສາຍແຫ່ງການປົກຄອງເຫລົ່ານີ້ ມາຄົບກັນຢູ່ຂັ້ນເມືອງ ອັນເປັນບ່ອນສັງລວມເອກະລັກທັງຫລາຍ ນັບແຕ່ລະດັບຊາດຫາທ້ອງຖິ່ນ ແມ່ນຢູ່ທີ່ນີ້ເອງ ທີ່ມັນຫລໍ່ຫລອມເຂົ້າກັນ ແລະດຳລົງຢູ່ຢ່າງແທ້ຈິງ. ຢ່າງໃດກໍຕາມ ເມືອງເອກຂອງແຂວງກັບເມືອງອື່ນໆ ກໍແຕກຕ່າງກັນຫລາຍ ໃນແຕ່ລະພາກຂອງອາຊີຕາເວັນອອກສຽງໃຕ້. ບາງແຫ່ງກໍເປັນພຽງບ້ານຂະໜາດໃຫຍ່ເທົ່ານັ້ນ ແຕ່ບາງບ່ອນກໍກວ້າງຂວາງ ພໍປານແມ່ນຣາຊະອັງຂອງພວກເຈົ້າ.

ລະບົບປົກຄອງພື້ນຖານທາງຣາຊະການ ມີຢູ່ຢ່າງໜ້ອຍສາມແບບ ຄື ແບບທີນຶ່ງ ແມ່ນລະບົບການປົກຄອງຂັ້ນແຂວງ ໃນປະເທດ *ພະມ້າ ສະຫຍາມ ກຳພູຊາ* ແລະ *ຊະວາ* ເຊິ່ງຕັ້ງຢູ່ບົນພື້ນຖານການຄວບຄຸມແຫລ່ງກຳລັງຄົນ ເປັນຕົ້ນຕໍ ຫລາຍກວ່າການຄວບຄຸມທີ່ດິນ. ເລື່ອງທີ່ທາງຣາຊະວັງກ່ຽວຂ້ອງນຳ ແມ່ນໜ້າທີ່ອັນປະກົມປະຖານຂອງ ອຳນາດການບໍລິຫານຂັ້ນແຂວງ ນັ້ນຄື ການຮີບໂຮມພາສີລາຍໄດ້ຈາກພວກຊາວນາ ກັບການລະດົມ ກຳລັງຊົນຊັ້ນຊາວນາ ມາເປັນແຮງງານຮັບໃຊ້ ແລະເຣັດເສິກ. ພວກເຈົ້າແຂວງໃນລັດແຜ່ນດິນໃຫຍ່ ໂດຍທົ່ວໄປ ມັກຖືກເອີ້ນວ່າ *"ກິນ"* ເມືອງ ເພາະສ່ວນໃຫຍ່ແລ້ວ ໃນລະຍະທີ່ພວກເຂົາປົກຄອງນີ້ ພວກເຂົາມັກສວຍໃຊ້ອຳນາດ ຢ່າງເກີນຂອບເຂດ ຄືດັ່ງນິທານພື້ນເມືອງຕ່າງໆໄດ້ວ່າໄວ້. ຢ່າງໃດກໍຕາມ ພວກຂ້າຣາຊະການຂັ້ນແຂວງ ກໍຕ້ອງໄດ້ໃຫ້ການຄຸ້ມຄອງ ແລະບໍລິການແກ່ຊາວນາ ເປັນການຕອບແທນຄືກັນ.

ໃນລະບົບການປົກຄອງແບບນີ້ ເຈົ້າແຂວງ ແລະເຈົ້າເມືອງໂດຍທົ່ວໄປຈະຕ້ອງມີຄຸນສົມບັດສຳຄັນຢູ່ສອງຢ່າງ ເພື່ອຮັບຕຳແໜ່ງນີ້. ອັນທີນຶ່ງ, ຍ້ອນວ່າ ພໍ່ ຫລືຍາດພີ່ນ້ອງ ຂອງພວກເຂົາ ເຄີຍຢູ່ໃນຕຳແໜ່ງນີ້ມາກ່ອນແລ້ວ ແລະ ຍ້ອນວ່າ ພວກລຸງ ອາວ ແລະຍາດພີ່ນ້ອງອື່ນໆ ກໍເປັນຂ້າຣາຊະການຊັ້ນນ້ອຍຢູ່ໃນແຂວງນີ້ແລ້ວ ພວກເຂົາຈຶ່ງມີຕາໜ່າງສາຍໃຍຄອບຄົວ ແລະກຸ່ມບໍລິວານອາໄສຈຳນວນນຶ່ງ ຫລື ລູກນ້ອງເຊິ່ງພວກເຂົາໄດ້ຮັບສືບທອດມາ ໃນນາມຜູ້ອຸປະກຳ. ຕຳແໜ່ງຂອງພວກເຂົາຕາມຊັ້ນສັງຄົມທ້ອງກິ່ນນີ້ ບໍ່ແມ່ນສິ່ງທີ່ທາງລັດກະບານກາງເບິ່ງຂ້າມໄດ້. ອັນທີສອງ, ດ້ວຍຄຸນງາມຄວາມດີຕາມກຳນະທາງສັງຄົມ, ຜ່ານການຝຶກຝົນເພື່ອຮັບພາລະ ທີ່ໄດ້ຮັບມອບໝາຍບັນດາລູກຫລານຜູ້ຊາຍ ຂອງຂ້າຣາຊະການຊັ້ນແຂວງກັບເມືອງ ຈຶ່ງຖືກຊັກຈູງເຂົ້າມາສູ່ວົງການບໍລິຫານ ຕັ້ງແຕ່ຍັງໜຸ່ມໆ ທັງທີ່ຍັງເປັນບ່າວນ້ອຍຢູ່ ກໍໄດ້ມີສ່ວນພົວພັນເຂົ້າໃນວຽກງານການປົກຄອງແລ້ວ. ໃນປະເທດ *ສະຫຍາມ* ແລະ*ກຳພູຊາ* ພວກເຂົາມັກໄດ້ມາເປັນເສນາຮັບໃຊ້ຢູ່ໃນຣາຊະວັງ (Court) ລະຍະນຶ່ງ ແລ້ວກໍກັບຄືນບ້ານເກີດ ເພື່ອປີນໄຕ່ຂຶ້ນສູ່ຕຳແໜ່ງບໍລິຫານ ເຊິ່ງກໍມັກຈະສຸດລົງດ້ວຍການໄປຮັບຕຳແໜ່ງສືບຕໍ່ພໍ່ຂອງພວກເຂົານັ້ນເອງ. ຢູ່ປະເທດ *ຊະວາ* ພວກເຂົາບໍ່ມັກໄປຢູ່ວັງ ທີ່ຢູ່ຫ່າງໄກ ແຕ່ໂດຍທົ່ວໄປມັກໄປຮັບໃຊ້ຢູ່ໃນບ້ານເຮືອນ ຂອງພໍ່ ຫລືລຸງ ຫລືພວກບໍລິວານຂອງພວກເພິ່ນຫລາຍກ່ອນ, ຢູ່ທີ່ນີ້ ພວກເຂົາມີໂອກາດໄດ້ຮຽນຮູ້ຮີດຄອງປະເພນີຂອງຄອບຄົວ ທັງໄດ້ຮັບຄວາມຮູ້ກ່ຽວກັບວຽກງານສຳລັບຊີວິດການເມືອງ. ບໍ່ຄືກັບ ຢູ່ *ຫວຽດນາມ*, ຢູ່ໃນສັງຄົມເຫລົ່ານີ້ ເກືອບທັງໝົດ ການຮຽນຮູ້ດ້ານວິຊາການ ໃນລະດັບເໜືອກວ່າການອ່ານອອກຂຽນໄດ້ ເປັນພຽງຄຸນສົມບັດນ້ອຍໆອັນນຶ່ງເທົ່ານັ້ນ ສຳລັບການກ້າວຂຶ້ນສູ່ຕຳແໜ່ງ ມັນບໍ່ສຳຄັນເທົ່າກັບປະສົບການຕົວຈິງ, ມາລະຍາດສັງຄົມ, ວິທີການໂອ້ລົມ, ການນຸ່ງຖື ແລະ ວາດທ່າວາງຕົວ ອັນເປັນເຄື່ອງຊີ້ບອກວ່າ ພວກເຂົາເປັນຄົນໃນຊົນຊັ້ນປົກຄອງ. ເຖິງຢ່າງນັ້ນກໍຕາມ ຢູ່ກ້າມກາງທ່ານສຸພາບບຸລຸດເຫລົ່ານີ້ ກໍຍັງມີແນວໃຫ້ຂັດແຍ່ງກັນຢ່າງຫລວງຫລາຍ ທັງນີ້ຍ້ອນວ່າລະບົບຖືແຮງ ລູກຊາຍກົກ ຍັງບໍ່ເປັນທີ່ຍອມຮັບນັບຖືກັນທົ່ວໄປເທື່ອ ແລະພວກຂ້າຣາຊະການ ກໍມັກມີເມຍຫລາຍຄົນ. ດັ່ງນັ້ນ ຄວາມບັງບຮຄລະຫວ່າງອ້າຍໆນ້ອງໆ ຈຶ່ງທະວີຄູນຂຶ້ນ ແລະການຊ່ວງເສັງເອົາຕຳແໜ່ງໃນຣາຊະການ ກັບການສືບມູນກໍເຄັ່ງຮ້ອນຂຶ້ນ.

ດ້ວຍເຫດນີ້, ອຳນາດຂອງລັດຢູ່ຂັ້ນແຂວງ ໃນປະເທດ *ພະມ້າ* *ສະຫຍາມ* ແລະ

ກຳພູຊາ ສ່ວນໃຫຍ່ຈຶ່ງເປັນອຳນາດລັດທີ່ສືບທອດກັນມາ ໂດຍຊົນຊັ້ນນຳຂອງແຂວງ ທີ່ມີຮາກຖານຫມັ້ນຫນຽວຢູ່ໃນແຂວງນັ້ນໆ. ທາດແທ້ການປົກຄອງຂອງພວກເຂົາ ເວົ້າຕາມຫລັກການແລ້ວ ໄດ້ຮັບການຊຸບຫລໍ່ເປັນຕົ້ນຕໍ ມາຈາກການວາງທ່າທີຂອງພວກເຂົາເອງ ທີ່ຊັກນຳພວກເຂົາເຂົ້າສູ່ສັງຄົມຊັ້ນແຂວງ ໂດຍອາໄສສາຍພົວພັນແບບຍາດພີ່ນ້ອງ ແລະ ການເພິ່ງພາກັນ ແບບບໍ່ເປັນທາງການ ຍ້ອນມີສາຍພົວພັນກັບບຸກຄົນໃນລະດັບສູງ ພວກເຂົາຈຶ່ງໄດ້ຮັບພິຈາລະນາວ່າ ເປັນສ່ວນນຶ່ງຂອງລະບົບຣາຊະການແຫ່ງລັດ. ສ່ວນຫລາຍແລ້ວ ຢູ່ໃນ *ພະມ້າ* ແລະໃນ *ຊະວາ* ຈະມີການຕິດຕໍ່ຢ່າງເປັນປົກກະຕິ ລະຫວ່າງແຂວງຕ່າງໆ ກັບຕົວເມືອງຫລວງ. ເຈົ້າແຂວງເຂົ້າໄປຢ້ຽມຢາມວັງຫລວງປີລະຫລາຍເທື່ອ ເພື່ອສະແດງຄວາມຈົງຮັກພັກດີ, ຈັດສົ່ງພາສີ ຫລື ເພື່ອເຂົ້າຮ່ວມລັດຖະພິທີຕ່າງໆ. ມີການສົ່ງຄຳສັ່ງ ແລະບົດລາຍງານໄປມາຫາກັນຢ່າງຫລວງຫລາຍ ແລະພວກຄ້າຣາຊະການໃນເມືອງຫລວງ ກໍຖືກສົ່ງອອກໄປກວດກາພາສີ ຫລືຂົ້ນບັນຊີແຮງງານ ຫລືເພື່ອໄປແຕ່ງຕັ້ງເຈົ້າແຂວງຄົນໃຫມ່. ເຈົ້າແຂວງກັບຄົນພາຍໃຕ້ບັນຊາຂອງເພິ່ນ ມີສ່ວນພົວພັນໃນການສົ່ງຂ່າວ ກ່ຽວກັບຄວາມຕ້ອງການຂອງເມືອງຫລວງລົງຫາບ້ານ ແລະພວກເຂົາກໍຊົມໃຊ້ລະບົບຣາຊະການອັນນີ້ ຂອງພວກເຂົາ ເພື່ອດຳເນີນການຄືກັນ. ມາຮອດສະຕະວັດທີ 18 ປະເທດ *ສະຫຍາມ* ກ້າວໄປເຖິງຈຸດພັດທະນາການປົກຄອງປະເທດ ທີ່ຄອບຄົວຊົນຊັ້ນປົກຄອງລະດັບແຂວງບາງຄອບຄົວ ໄດ້ຮັບບົດບາດທາງການເມືອງ ຈາກເມືອງຫລວງ ໂດຍອາໄສຄວາມສຳພັນດ້ານການເປັນດອງກັນ ແລະການເຂົ້າເປັນພັນທະມິດທາງການເມືອງ, ແຕ່ເບິ່ງລວມແລ້ວ ການພັດທະນາທີ່ວ່ານີ້ ກໍເປັນກໍລະນີພິເສດ. ການປົກຄອງລະດັບແຂວງໃນປະເທດເຫລົ່ານີ້ ເກືອບທັງຫມົດຍັງຄົງເປັນແບບ ຊົນນະບົດຫລ້າຫລັງຢູ່, ຄວາມສຳຄັນຂອງພວກເຂົາຂຶ້ນກັບຄວາມສາມາດຄອບຄຸມ ແລະຮູ້ລະດົມກຳລັງພົນຢູ່ໃນບ້ານຕ່າງໆພຸ້ນ.

ຊົນຊັ້ນນຳຂັ້ນແຂວງໃນ *ທວຣດນາມ* ແຕກຕ່າງກັບເພື່ອນຊາວພຸດອື່ນໆ ແລະຊາວ *ຊະວາ* ຢູ່ບ່ອນວ່າ ພວກເຂົາ ເປັນເຈົ້າທີ່ດິນ ມີເວລາຫວ່າງ ໄດ້ຮັບການສຶກສາມາແບບຮີດເດີມ. ຕາມທຳມະດາແລ້ວ ເຈົ້າທີ່ດິນ *ທວຣດນາມ* ຄົນໃດ ທີ່ບໍ່ຍອມໃຊ້ເວລາຫວ່າງ ສະແຫວງຫາຄວາມຮູ້ ຍົກລະດັບຕົນຂຶ້ນນັ້ນ ຈະບໍ່ໄດ້ຮັບການຍົກຍ້ອງໃຫ້ເຂົ້າເປັນສະມາຊິກຊົນຊັ້ນນຳ ເພາະວ່າ ເຂົາຜູ່ນັ້ນ ບໍ່ມີທາງວ່າຈະໄດ້ເຂົ້າຮັບຣາຊະການ ແລະທັງຈະບໍ່ສາມາດເປັນ ພໍ່ສື່ ຫລື ຕົວແທນ ຢູ່ລະຫວ່າງກາງ ຣາຊະວັງ ກັບຊຸມຊົນ

ທ້ອງກິ່ນຊ້ຳ. ກະໂຕລະບົບຣາຊະການລະດັບແຂວງເອງ ເຊິ່ງແມ່ນກຸ່ມຂ້າຣາຊະການ ທີ່ກືກສົ່ງມາປະຕິບັດຫນ້າທີ່ ຢູ່ຂັ້ນແຂວງນັ້ນ ກໍເປັນພຽງຜະແນກພິເສດອັນນຶ່ງ ຂອງກຸ່ມຊົນຊັ້ນນຳ ຂອງແຂວງທຳມະດາໆກຸ່ມນຶ່ງເທົ່ານັ້ນ. ໃນນັ້ນ ມີທັງທ່ານເຈົ້າແຂວງໃຫຍ່ ທ່ານຮອງເຈົ້າແຂວງ ຄະນະກຳມະການດ້ານການຄັງ ແລະຕຸລາການ, ຫົວຫນ້າຫ້ອງ ວ່າການແຂວງ ແລະພະນັກງານຕຸລາການຂັ້ນເມືອງ ທີ່ເຮັດວຽກໃຫ້ແຂວງ ເທດສະບານເມືອງ ແລະຕົວເມືອງທົ່ວໆໄປໃນທົ່ວປະເທດ. ຂ້າຣາຊະການຊັ້ນຜູ້ນ້ອຍ ກັບລູກນ້ອງ ເຮັດຫນ້າທີ່ຕິດຕໍ່ ລະຫວ່າງພະນັກງານຕຸລາການ ກັບປະຊາຊົນຊາວບ້ານສາມຫມື່ນຄົນ ໂດຍປະມານ ທີ່ຢູ່ພາຍໃຕ້ການປົກຄອງ ຂອງເຂົາ. ຄົນພວກນີ້ ມີເງິນເດືອນຫນ້ອຍ ແລະການສຶກສາກໍຕ່ຳ ຄວາມຜິດພາດຂອງພວກເຂົາ ສາມາດສ້າງຄວາມເສຍຫາຍໃຫ້ແກ່ລະບົບທັງຫມົດໄດ້ ນອກຈາກວ່າພວກເຂົາໄດ້ກືກຄວບຄຸມຢ່າງເຂັ້ມງວດເທົ່ານັ້ນ. ດັ່ງທີ່ *ພຣະເຈົ້າຈັກກະພັດເຈຍລອງ* (Gia-long Emperor) ເວົ້າໄວ້ໃນ ປີ1811 ວ່າ: *"ຜູ່ໃດຮັກງົວ ກໍຕ້ອງໄລ່ແມງວັນໃຫ້ມັນກ່ອນ, ເຊັ່ນດຽວກັນ ຜູ່ທີ່ຮັກປະຊາຊົນ ກໍຕ້ອງລົງໂທດ ພວກອາດຍາສິດໂຕປອມນັ້ນກ່ອນ. ນີ້ແມ່ນທິດສະດີນຶ່ງ ຂອງການປົກຄອງທີ່ດີ".*

ໃນຂະນະທີ່ຊົນຊັ້ນສູງຂັ້ນແຂວງຢູ່ *ຫວຽດນາມ* ທັງທີ່ຢູ່ພາຍໃນແລະນອກລະບົບຣາຊະການ ພາກັນຍູກ່ຳງສະເຫວີຍສຸກ ດ້ວຍຖານະອັນຫມັ້ນຄົງທາງເສດຖະກິດ ແລະສະຫມັກພັກພວກເຂົາ ກໍມັກມີໂຊກລາບຂຶ້ນໃນເວລາທີ່ ອຳນາດຂອງຣາຊະວົງປົກຄອງອ່ອນແອລົງ. ພວກເຂົາກໍຄືກັບ ພວກຄົນປະເພດດຽວກັນ ຢູ່ທົ່ວພາກພື້ນອາຊີຕາເວັນອອກສຽງໃຕ້ນັ້ນແລ້ວ ເມື່ອໃດພວກເຂົາຫາທາງອອກ ໂດຍອາໄສເສັ້ນສາຍອາດຍາສິດ ຂະນະທີ່ລາຊະວົງປົກຄອງ ພວມເສື່ອມອຳນາດລົງນັ້ນ ພວກເຂົາກໍຫັນຈຸດສຸມ ແຫ່ງຄວາມມັກໃຫຍ່ໄຝ່ສູງຂອງພວກເຂົາ ອອກຈາກຣາຊະວັງ ໄປສູ່ຄອບຄົວແລະຊາວບ້ານທ້ອງກິ່ນຂອງຕົນ, ດ້ວຍຄວາມຫມາຍຫມັ້ນເດັດດ່ຽວ ທີ່ຈະສ້າງຖານະໃນທ້ອງກິ່ນເທົ່າໆກັບເພື່ອເອົາໂຕລອດຈາກພາຍຸສົງຄາມ ທີ່ມາຈາກວັງຫລວງ ເຊິ່ງພວກເຂົາຄາດຄະເນໄວ້ແລ້ວ. ພວກເຂົາຈຶ່ງພະຍາຍາມທ້ອນໂຮມທີ່ດິນໄວ້ຫລາຍໆ ແລະບ່ລະໂອກາດທີ່ຈະເຮັດດັ່ງນັ້ນຈັກເທື່ອ ເມື່ອໃດອຳນາດຄວບຄຸມຂອງຣາຊະວັງ ຫາກອ່ອນແອລົງ. ທ່າອຽງຕ່າງໆ ໃນລະຍະສຸດທ້າຍຂອງຣາຊະວົງນຶ່ງໆ ເອື້ອອຳນວຍໃຫ້ຄອບຄົວຊົນຊັ້ນນຳ

ຂັ້ນແຂວງ ມີເວລາກວດກາຄືນ ສະພາບການຕົກຕ່ຳຢູ່ໃນວົງສັງຄົມ ຂອງພວກລູກຫລານຜູ່ຊາຍຂອງພວກເຂົາ. ວົງຈອນຂອງຣາຊະວົງເປັນສິ່ງປະສົມອັນແປກຕ່າງຢ່າງນຶ່ງ ລະຫວ່າງ ຄວາມແບ່ງແຍກທີ່ນັບມື້ ນັບທະວີຂຶ້ນ ກັບຄວາມໄຮ້ສະມັດຖະພາບຂອງອົງມົງກຸດ ຜູ່ບໍ່ໄດ້ຕໍ່ສູ້ເພື່ອຮັກສາຣາຊະບັນລັງຂອງຕົນ ແລະຄວາມພັກດີທີ່ມີເງື່ອນໄຂຕໍ່ຣາຊະບັນລັງຂອງຄອບຄົວຊົນຊັ້ນນຳໃນຂັ້ນແຂວງ. ຄວາມພັກດີອັນນີ້ ຂຶ້ນຢ່ກັບຄວາມສາມາດຂອງທາງຣາຊະວັງ ໃນອັນທີ່ຈະຮັບປະກັນຄວາມຫມັ້ນຄົງ ແລະຕອບສະຫນອງຄວາມມັກໃຫຍ່ໄຝ່ສູງ ໃນຖານະຕຳແຫນ່ງຣາຊະການ ໃຫ້ແກ່ຄອບຄົວ. ໃນລະດັບແຂວງນັ້ນ ການລົ້ງຄ້ອຍຂອງວົງຈອນຣາຊະວົງໃດນຶ່ງ ຫມາຍເຖິງການແບ່ງແຍກທາງເສດຖະກິດແບບຂາດຂັ້ນ ຂອງຊົນຊັ້ນໃນສັງຄົມ. ຜູ່ສະແຫວງຫາເອກະລາດ ເຊິ່ງເປັນຊົນຊັ້ນກາງໃນສັງຄົມ ເກືອບດັບສູນໄປຫມົດ ຂະນະດຽວກັນ ກໍມີການເຫນັງຕີງໄປສູ່ ສັງຄົມລະດັບສູງຂຶ້ນ (ພວກເຈົ້າທີ່ດິນ) ແລະທັງການເຄື່ອນເຫນັງຂອງຜູ່ຄົນຈຳນວນຫລາຍລົ້ງສູ່ສັງຄົມລະດັບຕ່ຳສຸດ ເຊັ່ນ ພວກບໍ່ມີດິນປູກຝັງ ຕ້ອງຂາຍແຮງງານໃຫ້ຜູ່ອື່ນ. ລັກສະນະການຈັບຈອງດິນ ຂອງອຳນາດຂັ້ນແຂວງນີ້ ແຕກຕ່າງກັນຢ່າງຂາດຂັ້ນ ກັບທ່າອຽງນິຍົມແຮງງານ ຂອງພວກຊົນຊັ້ນນຳຂັ້ນແຂວງ ໃນບັນດາປະເທດທາງຕາເວັນຕົກແລະພາກໃຕ້ *ທວຽດນາມ* ແຕ່ວ່າຈັ່ງຫວະ ການເສື່ອມຖອຍຂອງຣາຊະວົງ ກໍຍັງແມ່ນແບບດຽວກັນສຳລັບທັ້ງສອງຝ່າຍ.

ຮູບແບບການປົກຄອງຂັ້ນແຂວງ ຢ່າງເປັນທາງການ ອັນທີສາມ ໄດ້ແກ່ຮູບແບບຂອງ *ສະເປນ*ໃນປະທດ *ຟີລິບປິນ*. ໃນນັ້ນ ຕຳແຫນ່ງສູງສຸດໃນສັງຄົມແລະວົງການການເມືອງ ເປັນຂອງຄົນຕ່າງດ້າວຫມົດ. ຄົນພວກນີ້ ບໍ່ວ່າຈະເກີດຢູ່ໃນແຫລມ *ໄອບີຣຽນ* (Iberian Peninsula) ຫລືໃນ ຣາຊະອານາຈັກ (Creole) ກໍບໍ່ມັກໄດ້ຢູ່ໃນ *ຟີລິບປິນ* ຈົນຕະຫລອດຊີວິດດອກ ພວກເຂົາມາຢູ່ໃນຖານະຂ້າຣາຊະການ, ເປັນທະຫານສະແຫວງໂຊກ ແລະຜູ່ມາຮັບຕຳແຫນ່ງທາງການເມືອງ, ສ່ວນຫລາຍພວກເຂົາກໍ່ວ່າ ເກາະດອນເຫລົ່ານີ້ ເປັນກຸ່ນກັນດານ. ພວກເຂົາຂ້ອນກັນເຮັດວຽກບໍລິຫານ ຢູ່ໃນນະຄອນຫລວງ *ມະນີລາ* ຫລືບໍ່ ກໍຮັບຕຳແຫນ່ງເປັນເຈົ້າແຂວງ (Alcades-mayores). ຕຳແຫນ່ງຣາຊະການອັນນີ້ ໃຫ້ອຳນາດ ແລະໂອກາດແກ່ແຕ່ລະຄົນຢ່າງຫລວງຫລາຍ ທັງນີ້ ກໍ້ຍ້ອນຄວາມຫ່າງໄກທາງດ້ານພູມສາດ ລະຫວ່າງ ຫມູ່ດອນເຫລົ່ານັ້ນ, ເຖິງຈະມີລະບົບກົດ

ຫມາຍໃຊ້ຢ່າງກວ້າງຂວາງ ເພື່ອປ້ອງກັນບໍ່ໃຫ້ເຈົ້າແຂວງສວຍໃຊ້ອຳນາດເກີນໄປ ແຕ່ ພວກເຂົາກໍເກືອບບໍ່ເປັນມິດກັບປະຊາຊົນທ້ອງຖິ່ນເລີຍ ຍິ່ງໄປກວ່ານັ້ນ ຍ້ອນອັດຕາແລກ ປ່ຽນເງິນສູງ ກັບຂໍ້ເກືອດຫ້າມພິເສດ ບໍ່ໃຫ້ແຕ່ງດອງ ຫລືມີຂໍ້ຜູກພັນລະຍະຍາວຢູ່ໃນ ທ້ອງຖິ່ນ ກໍໄດ້ເຮັດໃຫ້ສະຖາບັນນີ້ ກາຍເປັນອົງກອນຕ່າງດ້າວແຫ່ງນຶ່ງໄປ. ຕາມປົກກະ ຕິແລ້ວ ທ່ານເຈົ້າແຂວງຜູ່ນຶ່ງໆ ມີຫນ້າທີ່ກ່ຽວຂ້ອງ ກັບເຫດການຕ່າງໆ ໃນກຸງ *ມະນິ ລາ*, ນະຄອນ *ເມັກຊິກໂກ* ຫລື ກຸງ *ມະດຣິດ* ຫລາຍກວ່າ ກັບປະຊາຊົນໃນແຂວງ ຂອງເຂົາຊໍ້າ. ຜົນທີ່ໄດ້ຮັບກໍຄື ເຂົາບໍ່ຮູ້ສຶກສະດຸ້ງສະເທືອນ ນຳຜົນປະໂຫຍດ ຂອງທ້ອງ ຖິ່ນເລີຍ.

ເວົ້າໂດຍລວມ ແລະເວົ້າສະເພາະຢູ່ *ຊະວາ* ກັບ *ຫວຽດນາມ*, ອຳນາດການ ປົກຄອງຂັ້ນແຂວງນັ້ນ ໄດ້ເຊື່ອມຊ້ອນເຂົ້າຢູ່ໃນລະບົບຈັດແບ່ງຊັ້ນທາງສັງຄົມ ແລະ ບໍລິຫານຂອງເມືອງຫລວງຢ່າງແນບນຽນ ກົງກັນຂ້າມກັບລະບົບ ທີ່ບໍ່ແມ່ນລະບົບຣາຊະ ການໃນລັດຕ່າງໆຂອງແຫລມ *ມະລາຢູ*, ໃນ *ອິນໂດເນເຊຍຕາເວັນຕົກ* ໃນ *ລັດສານ* ແລະ ໃນເມືອງຕ່າງໆຢູ່ *ລາວ*, ລະບົບດັ່ງກ່າວ ມີທ່າອຽງເປັນລະບົບຈັດແບ່ງຊົນຊັ້ນ ໄປຕາມທ້ອງຖິ່ນ ດ້ວຍການຜູກພັນແບບສິ່ງສ່ວຍໃຫ້ແກ່ເມືອງຫລວງ. ໃນລະບົບຂອງ *ມະລາຢູ* ນັ້ນ ອຳນຸນແຈໄປສູ່ການຈັດຕັ້ງທາງການເມືອງໃນລະດັບບ້ານ ແມ່ນເຈົ້າເມືອງ, ຄວາມຈິງແລ້ວ ຜູ່ປົກຄອງລັດ ກໍຄືຫົວຫນ້າໃນເມືອງຫລວງຂອງຕົນເອງນັ້ນແລ້ວ. ການ ໃຊ້ອຳນາດທັງຫມົດຂອງເຂົາພາຍໃນລັດ ມາຈາກການທີ່ ເຂົາໄດ້ຄວບຄຸມຫົວຫນ້າທ້ອງ ຖິ່ນຕ່າງໆ ທີ່ກະຈາຍໄປທົ່ວອົງເຂດ ທີ່ເຂົາປົກຄອງ. ຕຳແຫນ່ງຫນ້າທີ່ເຫລົ່ານີ້ ຕາມ ທາດແທ້ຂອງມັນແລ້ວ ເປັນການສືບທອດຕາມເຊື້ອສາຍ ເຖິງແມ່ນວ່າ ການແຕ່ງຕັ້ງ ແລະ ການຢູ່ໃນຕຳແຫນ່ງຕໍ່ໄປນັ້ນ ຢ່າງຫນ້ອຍ ເມື່ອເບິ່ງກັນໃນແງ່ທິດສະດີແລ້ວ ມັນຂຶ້ນ ຢູ່ກັບຄວາມພໍໃຈ ຂອງເຈົ້າປົກຄອງລັດພຸ້ນ, ພາຍໃຕ້ຄຳສັ່ງຂອງເຈົ້າຜູ່ປົກຄອງ ພວກ ຫົວຫນ້າ ກໍສິດໃນການຄວບຄຸມອົງເຂດໃດນຶ່ງຂອງລັດ ເຊິ່ງຕາມປົກກະຕິແລ້ວ ມັກຈະ ເປັນດິນຕາມລ່ອງແມ່ນ້ຳໃຫຍ່ຫລືສາຂາຂອງມັນ ຫລືບໍ່ກໍຕາມລ່ອງແມ່ນ້ຳສາຍນ້ອຍໆ ສາຍນຶ່ງ. ສິດທິເຫລົ່ານີ້ ກວມລວມເຖິງການເກັບພາສີ ແລະຄ່າທຳນຽມການຄ້າຕາມ ແມ່ນ້ຳ, ການໃຫ້ສຳປະທານ ແລະ ຜູກຂາດແລະສິດໃນການເກັບເອົາຜົນຜະລິດແລະ ແຮງງານ ຈາກປະຊາຊົນໃນທ້ອງຖິ່ນນັ້ນ. ຍ້ອນວ່າແມ່ນ້ຳເປັນເສັ້ນທາງສາຍສຳຄັນ

ສຳລັບການຍົນສິ່ງ ແລະ ຄົມມະນາຄົມ ຫົວໜ້າທ້ອງຖິ່ນຈຶ່ງມັກຕັ້ງຖິ່ນຖານ ຂອງຕົນ ໄວ້ບ່ອນຈຸດຍຸທະສາດ ທີ່ມີທ່າດີ ຕາມເສັ້ນທາງສາຍນ້ຳໃຫຍ່ ໃນອານາເຂດຂອງຕົນ ເພື່ອອຳນວຍ ຄວາມສະດວກທັງໃນເລື່ອງ ເກັບພາສີ ແລະການປ້ອງກັນສັດຕູ. ເຖິງແມ່ນ ວ່າສະຖານະຂອງ ເຈົ້າຜູ້ຄອງລັດ ຢູ່ບໍລິເວນປາກນ້ຳສຳຄັນ ເຮັດໃຫ້ເພີ່ນ ມີທ່າດີທາງ ເສດຖະກິດ ຫລາຍກວ່າພວກຫົວໜ້າທ້ອງຖິ່ນສະເໜມີໄປກໍຕາມ ພວກຫົວໜ້າທ້ອງຖິ່ນ ກໍເປັນເຈົ້າປົກຄອງຕົນເອງ ໃນອານາເຂດຂອງຕົນຢ່າງແທ້ຈິງ ແລະປົກປ້ອງອຳນາດ ນັ້ນໄວ້ເປັນຢ່າງດີ. ທ່າອຽງທີ່ຈະກໍ່ໃຫ້ເກີດການຂັດຂືນ ແລະແບ່ງແຍກ ຖືກຍັບຍັ້ງຊັ່ງຊາ ດ້ວຍການ ຍອມຮັບຄ່ານິຍົມ ແລະຄຸນນະທຳ ຂອງສະຖາບັນສຸລະຕ່ານວ່າ ເປັນກົນໄກ ທີ່ໃຊ້ໄດ້ໃນລະບົບທັງຫມົດ. ມັນເປັນທ່າແຮງຂອງພວກຫົວໜ້າທ້ອງຖິ່ນ ທີ່ຈະຄ້ຳຈຸນ *ສຸລະຕານ* (Sultal) ເຊິ່ງເປັນສັນຍະລັກຂອງລັດ ແລະ ເປັນບໍ່ເກີດແຫ່ງຄວາມຖືກຕ້ອງ ຕາມກົດຫມາຍໃນການປົກຄອງ, ໃນຖານະເປັນພື້ນຖານ ຕຳແໜ່ງຂອງພວກເຂົາ ແລະ ເປັນແຫລ່ງຣາງວັນ ຢູ່ໃນການປະຕິບັດໜ້າທີ່ ໃຫ້ແກ່ຣາຊະວົງ ແລະໃນຖານະເປັນທີ່ຕັ້ງ ຂອງໜ່ວຍການເມືອງອັນກວ້າງຂວາງກວ່າ ພ້ອມດ້ວຍທ່າດີທາງການຄ້າ ແລະການ ປ້ອງກັນສັດຕູ. ດັ່ງນັ້ນເຖິງແມ່ນວ່າ ອຳນາດອັນແທ້ຈິງຂອງເຈົ້າຜູ້ປົກຄອງລັດໃນທາງ ການເມືອງແລະເສດຖະກິດອາດຈະລຶ່ນອຳນາດຂອງຫົວໜ້າ ໃນທ້ອງຖິ່ນອາວຸໂສບາງ ຄົນແດ່ເລັກນ້ອຍກໍຕາມ ໃນກໍລະນີ ທີ່ບໍ່ທັນມີການຍອມຮັບໃນຕົວເຂົາໂດຍກົງນັ້ນ ກໍຍັງມີ ການຍອມຮັບໜ້າທີ່ຕຳແໜ່ງຂອງເຂົາໂດຍທົ່ວໄປ ໃນຖານະເປັນ ຫົວໜ້າຝ່າຍລັດ ຢ່າງເປັນທາງການ.

ພວກເປັນຫົວໜ້າ ໃນລັດ *ມະລາຢູ* ເກືອບທັງຫມົດ ນັບແຕ່ລັດ *ອະເຈ* (Aceh) ແລະ *ເກດະ* (Kedah) ເຖິງ *ຊູລູ* (Sulu) ເປັນສະມາຊິກຂອງຊົນຊັ້ນປົກຄອງ ທີ່ສືບເຊື້ອ ສາຍກັນຕໍ່ມາ ແລະຈັດເຂົ້າຢູ່ໃນກັບແກວ ລຳດັບຂັ້ນ ແຫ່ງໄອວຸທີ່ກຳນົດຖານະຕຳ ແໜ່ງ ແລະອິດທິພົນແບບທຽບຖານກັນ. ລຳດັບກັບແກວ ແລະກຽດຕິພູມທັງຫມົດ ຖືກຍຶດເອົາເປັນ ບ່ອນຮອງຮັບອຳນາດທີ່ເບິ່ງບໍ່ເຫັນ ເພື່ອລົງໂທດຜູ່ກະທຳຜິດຕາມອຳ ນາດຂອງກົດຫມາຍ. ຄວາມຄຶດຫລັກກ່ຽວກັບສະຖານະພາບ ອັນແຕກຕ່າງກັນ ກັບ ການສະແດງອອກຂອງມັນ ເປັນຜົນປະໂຫຍດທີ່ພວກຊົນຊັ້ນສູງຫົວເກົ່າໄດ້ຍຶດໝັ້ນມາ ດ້ວຍການສະແດງກິລິຍາແບ່ງແຍກ ໃສ່ພວກທີ່ບໍ່ມີສິດພິເສດໃດໆ ເພື່ອຈະເຂົ້າເປັນຊົນ ຊັ້ນສູງນຳພວກເຂົາ. ມັນເປັນໄປໄດ້ຍາກຫລາຍ ສຳລັບຄົນທຳມະດາຜູ່ນຶ່ງ ທີ່ຈະໂດດ

ຂ້າມສິ່ງຂວາງກັ້ນ ອອກຈາກຊົນຊັ້ນໄພ່ໄປໄດ້ ໂດຍສະເພາະຢ່າງຍິ່ງ ເມື່ອຢູ່ໃນລັດຕົນເອງ ເຊິ່ງຮາກເຫງົ້າ ແລະເບື້ອງຫລັງຂອງເຂົາເປັນທີ່ຮູ້ຈັກກັນດີແລ້ວ. ການແຕ່ງດອງກັບຄົນນອກຊົນຊັ້ນຂອງຕົນ ກໍ່ຖືເປັນຂໍ້ຍົກເວັ້ນອັນນຶ່ງ ເຖິງແມ່ນວ່າ ການໃຫ້ລູກແຕ່ງດອງກັບຄົນຈາກຄອບຄົວທີ່ມີຖານະຕຳແໜ່ງດີ ໄດ້ກາຍເປັນວິທີການອັນນຶ່ງ ທີ່ຢັ່ງຮາກດີແລ້ວ ຢູ່ພາຍໃນຊົນຊັ້ນຫົວໜ້າ ໂດຍເອື້ອໂອກາດໃຫ້ເຂົ້າໄປກ່ຽວຂ້ອງຢ່າງເນື່ອງນິດກັບຜູ່ຢູ່ໃນກັ້ນແຖວແລະມີອິດທິພົນ. ທ່າແຮງຕົ້ນຕໍ ຂອງກັ້ນແຖວຫົວໜ້າ ນອກຈາກຈະມາຈາກຄ່ານິຍົມອັນຝັງຊ້ອນຢູ່ໃນກຽດຕິພູມ ທີ່ໄດ້ຮັບມາແລ້ວນັ້ນ ມັນຍັງນອນຢູ່ໃນສິດທິຂອງຜູ່ກຳຕຳແໜ່ງ ກັບຍາດພີ່ນ້ອງຂອງເຂົາ ໃນເລື່ອງການມີສ່ວນຮ່ວມ ຢູ່ໃນແຫລ່ງຊັບພະຍາກອນຂອງລັດນຳອີກ. ພົ້ນຖານກັບເຄື່ອງໝາຍແຫ່ງອຳນາດໜ້າທີ່ ແມ່ນກຳລັງຄົນ ທີ່ຜູ່ເປັນຫົວໜ້າມີຄວາມສາມາດເຕົ້າໂຮມແລະຮັກສາໄວ້ໄດ້ ທັງທີ່ມາຈາກຍາດພີ່ນ້ອງຂອງຕົນ ແລະຈາກຊົນຊັ້ນຊາວນາ. ຄອບຄົວຂອງຫົວໜ້າ ໂດຍທົ່ວໄປ ປະກອບດ້ວຍ ຍາດພີ່ນ້ອງເຊິ່ງຊ່ອຍກັບປະຕິບັດໜ້າທີ່ອັນຈຳເປັນ ຄືການບໍລິຫານທີ່ດິນ ແລະເຮັດໜ້າທີ່ເປັນເລຂານຸການ ຫລື ນາຍບັນຊີ ແລະ ເກັບພາສີ ຫລືເຮັດການຄ້າ ແລະພວກທີ່ຮັບຈ້າງ ຫລືເປັນອາສາສະໝັກ ໄປຈັດຫາກຳລັງທະຫານມາປະຈຳການເຊັ່ນ ເກັບເກນເອົາພວກຄົນພານ ພວກຂ້າທາດສິນໄຫມ ແລະຂ້ອຍຂ້າທຳມະດາ.

ໃນເຂດຫົວເມືອງຂຶ້ນຂອງ*ລາວ* ກັບ *ລັດສານ ພະມ້າ*, ໃນ *ສະຫຍາມ* ພາກເໜືອ ກັບພາກຕາເວັນອອກສຽງເໜືອ ກັບປະເທດ*ລາວ* ກໍມີລະບົບຄ້າຍໆກັນ ຄືມີເຈົ້າຊີວິດ ເປັນປະມຸກຂອງລັດ ຫລາຍກວ່າການເປັນກະສັດ ເໜືອພວກຂ້າຣາຊະການທັງຫລາຍ ຫົວໜ່ວຍການເມືອງທີ່ເປັນອໍກຸນແຈແມ່ນ *"ເມືອງ"* ນັ້ນ ເປັນລັດປົກຄອງຕົນເອງເຄິ່ງນຶ່ງ ໂດຍມີເຊື້ອເຈົ້າ ເປັນຜູ່ປົກຄອງ ສືບຕໍ່ກັນມາ, ຄວາມສຳພັນຂອງເຈົ້າເມືອງ ເມືອງນຶ່ງກັບເມືອງໃກ້ຄຽງ ແລະກັບເຈົ້າຊີວິດທີ່ຢູ່ຫ່າງໄກ ໂດຍທົ່ວໄປສະແດງອອກດ້ວຍການ ສົ່ງເຄື່ອງບັນນາການປະຈຳປີໄປຖວາຍເພື່ອສະແດງອອກ ເຖິງຄວາມອ່ອນນ້ອມ, ບາງເທື່ອກໍມີການເຕົ້າໂຮມກັນເມື່ອມີເສິກ ທຸກຄົນເຫັນພ້ອມກັນໃນເລື່ອງ ຮ່ວມມືກັນຮັກສາຜົນປະໂຫຍດ ດ້ວຍການຂັບໄລ່ສັດຕູໄປ.

ເກືອບທົ່ວທຸກແຫ່ງ ຢູ່ອາຊີຕາເວັນອອກສຽງໃຕ້ ເມື່ອສະຕະວັດທີ 18 ທີ່ອຳນາດທາງການເມືອງ ແລະທາງເສດຖະກິດ ມີຄວາມໝາຍເປັນອັນດຽວກັນ ຄືມີຄວາມສຳຄັນເທົ່າກັນ ເພາະວ່າຊັບສົມບັດນັ້ນ ມັກຖືກຍຶດເອົາໂດຍກຳລັງບັງຄັບ ຂອງເຈົ້າປົກຄອງ

ຫລືພວກອາດຍາເຈົ້ານາຍຂອງເພິ່ນ ຍ້ອນວ່າກຳລັງຄົນ ມີຄວາມສຳຄັນກວ່າທີ່ດິນ ດັ່ງ ນັ້ນ ຊັບສົມບັດທີ່ແທ້ຈິງໃນລັດເກືອບທັງຫມົດ ຈຶ່ງນອນຢູ່ໃນສິດເຂົ້າຮັບບໍລິການ ແລະ ການຜະລິດຂອງຄົນອື່ນ ຍົກເວັ້ນເປັນພິເສດ ສຳລັບພວກເຈົ້າທີ່ດິນໃນ*ທວຽດນາມ* ແລະ *ຟີລິບປິນ.*

ໃນປະເທດ *ທວຽດນາມ* ລັດທິເຈົ້າທີ່ດິນ (Landlordism) ແຜ່ຂະຫຍາຍຢ່າງ ກ້ວາງຂວາງ ໃນແຂວງພາກໃຕ້ ແລະ ພາກກາງຕອນໃຕ້ ເຖິງແມ່ນວ່າຢູ່ທີ່ນັ້ນ ຄວາມ ກົດດັນດ້ານຈຳນວນປະຊາກອນ ເບົາບາງກວ່າຢູ່ພາກເໜືອ ຢ່າງເຫັນໄດ້ຊັກກໍຕາມ. ລັກສະນະຫນຽວແໜ້ນອັນນຶ່ງຂອງຊົນນະບົດ *ທວຽດນາມ* ແມ່ນການຕໍ່ສູ້ລະຫວ່າງເຈົ້າ ທີ່ດິນເອກະຊົນ ກັບອຸດົມການແບບກອມມູນຮວມໝູ່ ຂອງ *ທວຽດນາມບູຮານ* ໃນເລື່ອງ ຊັບສົມບັດລວມຂອງບ້ານ. ບ້ານໃນຖານະເປັນຊຸມຊົນ ຈະເປັນເຈົ້າຂອງທີ່ດິນສາທາລະ ນະ ຫລື ດິນຂອງລວມໝູ່ ເຊິ່ງມີຈຳນວນຫລາຍ ບໍ່ຕ່ຳກວ່າ 20% ຂອງດິນລັດທັງຫມົດ ແລະນັ້ນມັນຫມາຍເຖິງການຮັບປະກັນວ່າຈະບໍ່ມີຊາວນາທີ່ບໍ່ມີດິນ ອີກຕໍ່ໄປ. ດິນຕອນ ນຶ່ງໆກຶກແບ່ງປັນຫລາຍຫລົບຫລາຍຕ່າວ ໃຫ້ແກ່ສະມາຊິກຂອງບ້ານໂດຍອາດຍາໃຫຍ່ ໃນບ້ານ ເຊິ່ງມັກຈະຈັ່ງຕອນດີທີ່ສຸດໄວ້ໃຫ້ຕົນເອງ. ທ່າອຽງທີ່ປະຕິເສດບໍ່ໄດ້ຢ່າງນຶ່ງ ກໍຄື ການຂະຫຍາຍຕົວຂອງທຸລະກິດອະສັງຫາຣິມະຊັບເອກະຊົນ ທີ່ຍາດແບ່ງເອົາ ຈາກດິນ ສາທາລະນະເຫລົ່ານີ້ ເຊິ່ງໃນທາງທິດສະດີແລ້ວ ສາມາດມອບໃຫ້ເອກະຊົນເຊົ່າໄດ້ ກໍ ດ້ວຍສັນຍາເຊົ່າກັບຫລວງ ໃນລະຍະສາມປີເທົ່ານັ້ນ.

ການຂະຫຍາຍຕົວຄ້າຍຄືກັນນີ້ ໃນປະເທດ *ຟີລິບປິນ* ເກີດຈາກເງື່ອນໄຂແລະ ສາເຫດ ທີ່ແຕກຕ່າງກັນ. ຢູ່ *ຟີລິບປິນ* ນັ້ນ *ຄຣິຕຈັກກາໂຕລິກ*(ວັດກາໂຕລິກ) ປາກົດ ຕົວຂຶ້ນເປັນເຈົ້າທີ່ດິນລາຍໃຫຍ່ທີ່ສຸດ. ການຍຶດຈອງທີ່ດິນຂອງວັດ*ກາໂຕລິກ* ມັກມີຢູ່ຕາມ ເງື່ອນໄຂທາງພູມສາດ ແລະກໍບໍ່ມີສາສະຫນານິກາຍອື່ນໃດ ມີຫລາຍເທົ່າ. *ຄຣິຕຈັກ* ເຊິ່ງໄດ້ກາຍເປັນແຫລ່ງໃຫ້ຢືມເງິນ ທີ່ສຳຄັນສຳລັບຫົວເມືອງຂຶ້ນ ໂດຍຜ່ານອົງກອນ ການກຸສົນຂອງຕົນນີ້ ໄດ້ປ່ອຍເງິນໃຫ້ຢືມ ພ້ອມໆກັບໃຫ້ດິນ ເປັນທຶນສົມທົບຫລາຍເທົ່າ ກວ່າທີ່ ຜູ່ອຸປະກຳຢູ່ບ່ອນອື່ນໆ ໃຫ້ຢືມເງິນສົມທົບກັບ ແຮງງານ. ບັນຫາເລື່ອງຊົນຊັ້ນ ຊາວນາຂາດເຂີນດິນ ເຊິ່ງບໍ່ຄືກັບກໍລະນີ ຢູ່ໃນ*ທວຽດນາມ* ຈຶ່ງເປັນເລື່ອງໃຫມ່ຢູ່ໃນປະ ເທດນີ້. ໃນປາຍສະຕະວັດທີ 18, ລະບຽບການຕ່າງໆ ເລີ່ມໄຂທາງໃຫ້ ເອກະຊົນ ເຂົ້າບຸກ ເບີກ ແລະປັບປຸງທີ່ດິນ ຂອງວັດ*ກາໂຕລິກ*ແລ້ວ. ຄົນພວກນີ້ ມີຊື່ວ່າ: *ອິນຄວີລິນອສ*

(Inquilinos) ໄດ້ຮັບອະນຸມັດໃຫ້ປູກຢູ່ທຳກິນ ເທິງຜືນແຜ່ນດິນນັ້ນ ໃນລະຍະໃດນຶ່ງ ເປັນ ເວລາຫລາຍປີ ໂດຍບໍ່ຕ້ອງເສຍຄ່າເຊົ່າໃດໆ ແລະຫລັງຈາກນັ້ນ ລະບຽບການ ກໍບັ່ງໃຫ້ ເກັບຄ່າເຊົ່າ ເປັນວັດຖຸສິ່ງຂອງ. ໃນເວລາດຽວກັນ ພວກເຂົາກໍແບ່ງດິນເຄິ່ງນຶ່ງ ໄປໃຫ້ ພວກປູກຜັກເຊົ່າຕໍ່ ໂດຍເກັບຄ່າເຊົ່າປະມານ 50% ຂອງຜະລິດຜົນທັງຫມົດ. ພວກຊາວ ນາສ່ວນຫລາຍ ກາຍເປັນຜູ່ມີຫນີ້ສິນ ແລະ ລະບົບນີ້ ກໍຖືກສວຍໃຊ້ໄປໃນທາງຜິດໆ ເພາະພວກປູກຜັກ ຖືກບັງຄັບໃຫ້ເສຍຄ່າເຊົ່າຫລາຍຂຶ້ນເລື້ອຍໆ. ສະມາຊິກວັດ*ກາໂຕລິກ* ທີ່ຕ້ອງການຄ່າເຊົ່າ ສູງຂຶ້ນເລື້ອຍໆ ຈາກອະສັງຫາຣິມະຊັບເຫລົ່ານີ້ ເພື່ອໄປຊົ່ມໃຊ້ໃນ ວຽກງານເຜີຍແຜ່ສາສະຫນານັ້ນ ມັກເບິ່ງຂ້າມລັກສະນະການຂູດຮີດ ຂອງສະຖາບັນນີ້ ໄປສະເຫມີ ແລະບໍ່ເຫັນວ່າ ວິທີການແກ້ບັນຫາເສດຖະກິດຂອງຕົນນັ້ນ ໄດ້ສ້າງຄວາມມົວ ຫມອງໃຫ້ແກ່ອຳນາດຂອງພວກຕົນຢ່າງໃດ. ຕົວເມືອງໃນແຂວງ ແລະ ເມືອງທ່າເຮືອ ເຊິ່ງເປັນສູນກາງຂອງຫົວຫນ້າທ້ອງຖິ່ນ ແລະສະຖານີການຄ້າ ຕາມແຄມຝັ່ງແມ່ນ້ຳ ກໍເຮັດນຳຮອຍຂອງຣາຊະວັງ ຫລື ເມືອງໃຫຍ່ ທີ່ພວກເຂົາເຮັດວຽກຮັບໃຊ້ຢູ່. ມີຫນ້ອຍ ດຽວທີ່ຍັງຄົງຍຶດຖືກຽດສັກສີ ແລະປະເພນີ ຄືສະໄຫມທີ່ຍັງມີເອກະລາດຢູ່ ເຊັ່ນ ເມືອງ *ນະຄອນສີທຳມະຣາດ* ໃນພາກໃຕ້ ຂອງ *ສະຫຍາມ* ເຊິ່ງມີວັງຫລວງ ແລະລະບົບຣາຊະ ການ ເປັນຂອງຕົນເອງ ຕາມແບບຢ່າງ ສະໄຫມ *ອະຍຸທະຍາ*. ຢ່າງໃດກໍຕາມ ກໍຍັງ ມີອີກຫລາຍເມືອງ ທີ່ຕ້ອງການຜູ່ຊ່ຽວຊານ ແລະມີສີມື ເປັນຈຳນວນຫລາຍ ຄື ກັບ ເມືອງຫລວງ ເພື່ອເປັນຕົວແທນຢູ່ໃນອຳນາດການປົກຄອງ ທີ່ສູງກວ່າ ແລະເພື່ອໃຫ້ບໍ ລິການແກ່ວຽກງານບໍລິຫານຂອງເມືອງຫລວງ.

ການປົກຄອງຂັ້ນແຂວງ ຄືຢູ່ *ນະຄອນສີທຳມະຣາດ* ຖືໄດ້ວ່າ ເປັນການປົກຄອງ ທີ່ມີຄວາມສັບສົນຫຍຸ້ງຍາກຫລາຍ ຂ້າຣາຊະການໃນຕຳແຫນ່ງຕ່າງໆຢູ່ຫັ້ນ ມີຢູ່ 424 ຄົນ ໃນຂະນະທີ່ເມືອງອື່ນໆ ເຊິ່ງຢູ່ພາຍໃຕ້ການຄຸ້ມຄອງຂອງ *ນະຄອນສີທຳມະຣາດ* ເອງ ມີຫລາຍກວ່າຕັ້ງ 322 ຄົນ, ແຕ່ລະຄົນ ມີຖານະຕຳແຫນ່ງ ຫນ້າທີ່ ແລະຄວາມຮັບ ຜິດຊອບ ໂດຍສະເພາະ. ສ່ວນໃຫຍ່ແລ້ວ ຫນ້າທີ່ຂອງຂ້າຣາຊະການເຫລົ່ານັ້ນ ຖືກກຳ ນົດຢູ່ໃນຂອບເຂດວຽກງານບໍລິຫານແຄບໆ ເຊິ່ງກ່ຽວຂ້ອງກັບຫນ້າທີ່ຕ່າງໆ ເປັນຕົ້ນວ່າ ການຄວບຄຸມກວດກາແຮງງານເກນ, ການເກັບພາສີ, ອາກອນ ຄ່າທຳນຽມ ແລະການ ບໍລິຫານສານ. ນອກຈາກນັ້ນກໍມີພະນັກງານສະຫມຽນ ຜູ່ຄຸມຂ້ອຍທາດ ຜູ່ພິພາກສາ ຕຳຫລວດ ນາຍພາສີເກັບຄ່າທຳນຽມ ແລະຄ່າອາກອນ, ຄົນເຝົ້າແອບຊ້າງ ແລະຄວາມ

ຊ້າງ, ນາຍລ່າມປະຈຳທ່າເຮືອ, ນາຍບັນຊີ ແລະອື່ນໆອີກຫລວງຫລາຍ. ມີພວກຫມໍພາມໄວ້ສຳລັບເປີກສາຫາລື ກັບຜູ່ພິພາກສາໃນເລື່ອງກົດຫມາຍ ແລະເປີກສາ ກັບຫມໍຢາ ແລະ ຫມໍໂຫນ ເພື່ອຈະອອກຄຳສັ່ງໄປໃຫ້ພວກເຈົ້າຄອງກຳແພງ ກັບເມືອງຂອງເຂົາ. ເຈົ້າຄອງກຳແພງນະຄອນບາງຄົນ ມີຊື່ບັນທຶກໄວ້ໃນປະຫວັດສາດທີ່ຜ່ານມາ ເພາະມີຄຸນງາມຄວາມດີໃນການສົ່ງເສີມ ວຽກງານສິລະປະ ໂດຍສະເພາະແລ້ວແມ່ນ ການແຕ່ງກະວີແລະບົດລະຄອນ. ເມື່ອມີຂ້າຣາຊະການປະຈຳ, ຜູ່ຊ່ຽວຊານດ້ານວິຊາການ, ມີນາຍຊ່າງສິລະປະຫັດຖະກຳ ແລະຜູ່ຊຳນານທາງການສາສະຫນາ ມາຫ້ອມລ້ອມ ເປັນບໍລິວານຢ່າງຄົບກ້ວນແນວນີ້ ເຈົ້າຄອງກຳແພງ ກໍກັບເກີດເປັນຜູ່ຍິ່ງໃຫຍ່ ເກີນຖານະເປັນຜູ່ປົກຄອງອົງເຂດທຳມະດາໄປ ເຂົາກາຍເປັນສູນກາງຂອງ ຊີວິດວັດທະນະທຳ ໃຫ້ອານາເຂດອັນກວ້າງໃຫຍ່ ປິ່ນອ້ອມຢູ່.

ໃນ *ຊະວາ* ແລະ *ມາດຸຣາ* (Madura) ຂ້າຣາຊະການຊັ້ນແຂວງທີ່ສຳຄັນ ກັບພວກອາດຍາເຈົ້ານາຍທ້ອງຖິ່ນ ໄດ້ເປັນປະທານຕັດສິນຢູ່ສານ *ດາແລັມ* (Dalem) ເຊິ່ງເປັນສານນ້ອຍໆ ກ່າຍແບບຈາກສານຫລວງໃນ *ຊະວາ* ພາກກາງ. *ດາແລັມ* ປະກອບດ້ວຍອາຄານຫລາຍຫລັງ ມີກຳແພງອ້ອມ ໃນນັ້ນ ມີເຄຫາສະຖານ ຂອງທ່ານອາດຍາເຈົ້ານາຍ ກັບເມຍຫລວງຂອງເພິ່ນ, ມີເຮືອນຕ່າງຫາກ ສຳລັບເມຍອື່ນໆກັບລູກ ແລະຍາດພີ່ນ້ອງ, ມີຫ້ອງໂລ່ງໃຫຍ່ ສຳລັບປະຊຸມຂ້າຣາຊະການ ແລະ ສຳລັບສະແດງ ຫນັງຕະລຸງ ແລະການຟ້ອນລຳຕ່າງໆ, ມີໂຮງຄົວ ແລະຄອກມ້າ ກັບອາຄານອື່ນໆ ອີກຫລວງຫລາຍ ສຳລັບຄົນໃຊ້ ແລະຄົນລ້ຽງມ້າ. *ດາແລັມ* ກໍຄືກັບຣາຊະວັງ ເປັນສູນກາງແຫ່ງຈັກກະວານ, ໃນກໍລະນີນີ້ ກໍແມ່ນເຂດປົກຄອງ ຂອງທ່ານອາດຍາເຈົ້າແຂວງນັ້ນເອງ. ຢູ່ຕໍ່ຫນ້າ *ດາແລັມ* ທາງທິດເໜືອ ມີເດີ່ນຫຍ້າ ສີ່ຫລ່ຽມມົນທົນ ຊື່ວ່າ *ອາລຸນ-ອາລຸນ* (Alun-Alun) ກົກໄຣໃຫຍ່ຫລາຍຕົ້ນ ຂຶ້ນຢູ່ກາງເດີ່ນ ທາງແຈເດີ່ນອີກ ເບື້ອງນຶ່ງ ເປັນບ່ອນຕັ້ງ *ສຸເຫຣ່ຳ (ສົມຂອງ ອິສລາມ)* ບໍລິເວນອ້ອມຮອບສູນກາງນີ້ ຈຶ່ງເປັນທີ່ຕັ້ງຂອງເມືອງ ເຊິ່ງບໍ່ມີປະຊາກອນຢູ່ຫນາແໜ້ນພໍເທົ່າໃດ ໃນລະຍະນີ້ ແຕ່ເປັນບ່ອນຢູ່ເຕົ້າໂຮມທີ່ຢູ່ ຂອງປະຊາຊົນທັງຫມົດທີ່ບໍ່ເປັນຊາວນາໃນພາກພື້ນ (ຍົກເວັ້ນ ເຂດ *ຢູລາມາ* Ulama) ເບິ່ງໃນທາງໄສຍະສາດ *ດາແລັມ* (Dalem) ເປັນຈຸດສຸມທາງການເມືອງ ແລະທາງວັດທະນະທຳ ຂອງພາກພື້ນນັ້ນທັງຫມົດ ຍິ່ງໄປກວ່ານີ້ ໃນເຂດ *ຊູນດາມ* (Sudanese) ຂອງ *ຊະວາ* (Java) ຕາເວັນຕົກ ແລະ ຢູ່ *ມະດູຣາ* (Madura), *ດາແລັມ*

ເປັນສະກາບັນຕົ້ນຕໍ ໃຫ້ວັດທະນະທຳ *ຊະວາ* ແຜ່ກະຈາຍອອກສູ່ ຄົນທຳມະດາ ທີ່ຢູ່ບໍລິ ເວນຮອບນອກ.

ການປະພຶດປະຕິບັດຂອງເຈົ້າແຂວງ ແລະເຈົ້າເມືອງແຕ່ລະຄົນ ເປັນສິ່ງກຳນົດ ລັກສະນະການປົກຄອງຢູ່ຂັ້ນແຂວງ ເທົ່າໆກັບເປັນສິ່ງກຳນົດກຳລັງ ຫລືຄວາມອ່ອນແອ ຂອງສະກາບັນບໍລິຫານ. ອາດມີຜູ່ຂັດຄ້ານວ່າ ໃນອາຊີຕາເວັນອອກສຽງໃຕ້ ເມື່ອສະຕະ ວັດທີ 18 ນັ້ນ ມັນເຕັມໄປດ້ວຍການບໍລິຫານທີ່ຫລ້າຊ້າ ຫລື ຫລ່ອຍລາ ຫລື ທ່ວງແຕ່ ປະໂຫຍດຂອງຕົນ. ແນ່ນອນວ່າ ບໍ່ມີຄວາມສົນໃຈທ່ວງໃຍຜົນ້ອຍ ຕໍ່ບັນຫາຊາວນາຢູ່ໃນ ບ່ອນທີ່ຂາດເຂີນທີ່ດິນສຳລັບທຳມາຫາກິນ ເຊັ່ນ ຢູ່ *ຫວຽດນາມ* ແລະ *ຟິລິບປິນ* ເປັນຕົ້ນ ແລະໃນບ່ອນທີ່ແຮງງານ ກຳລັງຖືກຂູດຮີດຢ່າງແຮງ ເຊັ່ນ ໃນ *ພະມ້າ* ແລະ *ສະຫຍາມ*, ຫລື ໃນບ່ອນທີ່ການຕໍ່ສູ້ທາງການເມືອງ ໄດ້ດຶງເອົາລັດທັງຫມົດເຂົ້າສູ່ພາວະສົງຄາມ ຢ່າງທີ່ເປັນຢູ່ ໃນ *ກຳພູຊາ* ແລະ *ຊະວາ*. ຕຳລາທວາຍຄວາມຝັນ ຂອງ *ກຳພູຊາ* ໃນສະ ຕະວັດທີ 19 ສະບັບນຶ່ງກ່າວວ່າ ຖ້າໃຜຝັນເຫັນຄົນແຂນກຸດຂາຂາດ ເຂົາຈະໄດ້ເປັນເຈົ້າ ເມືອງ, ເພາະວ່າ ຄົນແຂນກຸດຂາຂາດນັ້ນ ເຮັດຫຍັງບໍ່ໄດ້ ນອກຈາກນັ່ງຢູ່ນອນກິນ ແລະ ໃນສະຕະວັດ ທີ18 ນັ້ນ ກໍບໍ່ທັນມີບ່ອນໃດ ອຶດຢູ່ອຶດກິນເລີຍ.

24/7 VII
ห้ามจำหน่าย

ບົດທີ 5: ຊີວິດທາງສາສະໜາ ແລະການເປັນຜູ່ນຳ

ໃນລະຍະເວລາອັນຍາວນານແຫ່ງປະຫວັດສາດນັ້ນ ດິນແດນອາຊີຕາເວັນອອກ ສຽງໃຕ້ໄດ້ຮູ້ຈັກສາສະໜາ ທຸກສາສະໜາຂອງໂລກ ແລະ ນັບຕັ້ງແຕ່ສະຕະວັດທີ 17 ມາແລ້ວ ສາສະໜາທັງສາມຄື *ພຸດ, ອິສລາມ* ແລະ *ຄຣິຕ* ໄດ້ເຂົ້າມາແຊກຊຶມຢູ່ ໃນຈິດໃຈ ຂອງປະຊາຊົນໃນພາກພື້ນນີ້ເກືອບທັງໝົດ. ເມື່ອປຽບທຽບກັນແລ້ວ ສາສະ ໜາທຸກສາສະໜາ *ຍົກເວັ້ນ ພຸທະສາສະໜາ ລັດທິມະຫາຍານ* (Mahayana Buddhism) ນັບວ່າເປັນສາສະໜາໃໝ່ ທີ່ເຂົ້າມາໃນພາກພື້ນນີ້. ສາສະໜາເຫລົ່ານັ້ນ ຕ່າງກໍສອນອັນດຽວກັນ ຄືການຫລຸດພົ້ນ ແລະວິຖີຊີວິດທາງສາສະໜາ ໃຫ້ແຕ່ລະ ຊຸມຊົນ ອັນໄດ້ເຮັດໃຫ້ຊຸມຊົນເຫລົ່ານັ້ນ ແຕກຕ່າງກັບຊຸມຊົນ ທີ່ນັບຖື*ສາສະໜາພາມ* (Brahmanical religion) ທັງທີ່ຢູ່ຫ່າງໄກແລະເລິກລັບ ອັນເປັນແບບສະເພາະຂອງ ອານາຈັກດັ້ງເດີມ ຂອງອາຊີຕາເວັນອອກສຽງໃຕ້. ຜົນກະທົບອັນສຳຄັນສຸດ ຂອງການ ປ່ຽນແປງ ທາງສາສະໜາຄັ້ງຍິ່ງໃຫຍ່ ແຕ່ສະຕະວັດ ທີ 13 ຫາສະຕະວັດ ທີ 17 ແມ່ນ ການສະຖາປະນາລະບົບສາສະໜາ ແລະລະບົບການແບ່ງຊັ້ນ ໃຫ້ເປັນສິ່ງເຊື່ອມຕໍ່ລະ ຫວ່າງບ້ານກັບຣາຊະວັງ ແລະກະຕຸກຊຸກຍູ້ການຕີບໃຫຍ່ແຜ່ກະຈາຍ ວັດທະນະທຳ ໃຫ້ ກາຍເປັນວັດທະນະທຳພື້ນເມືອງ ແລະຂອງມະຫາຊົນໄປ.

ພຣະພຸທສາສະໜາ ນິກາຍມະຫາຍານ (Mahayana Buddhism)

ພຣະພຸທະສາສະໜາມະຫາຍານ ເປັນ *ອຸຕຣະນິກາຍ* ຫລື *ນິກາຍຝ່າຍເໜືອ* ແຫ່ງ *ພຣະພຸດທະສາສະໜາ* ເຊິ່ງຕາມປະຫວັດສາດ ບອກວ່າໄດ້ແຜ່ຈາກປະເທດ*ອິນເດຍ* ໄປສູ່ *ເນປານ ຕິເບ ມົງໂກລີ ຈີນ ເກົາຫລີ ຍີ່ປຸ່ນ* ແລະ *ຫວຽດນາມ. ພຣະພຸທະສາສະ ໜານິກາຍເຖຣະວາດ*[*] (Theravada Buddhism) ເປັນນິກາຍຝ່າຍໃຕ້ ຫລື *"ທັກສິນ ນິກາຍ"* ແຜ່ຈາກປະເທດ*ອິນເດຍ* ໄປສູ່ *ສຣີລັງກາ ພະມ້າ ໄທ ກຳພູຊາ* ແລະ*ລາວ.* ຈາກ ນີ້ໄປ ຈະຂໍກ່າວເຖິງຄວາມແຕກຕ່າງບາງອັນ ລະຫວ່າງ ສາສະໜາທັງສອງນິກາຍ ຄື

---

[*] ນິກາຍເຖຣະວາດ ບາງເທື່ອ ກ່ວ່າ ***ຫີນະຍານ*** **(Hinayana)**

ພຸທະສະຫນາເຖຣະວາດ ກືຕາມ *ພຣະພຸທະວາຈາ* (Gautama Buddha) ຢ່າງເຄັ່ງ ຄັດ ບໍ່ຍອມປ່ຽນແປງແກ້ໄຂໃດໆ ແຕ່ *ພຣະພຸທະສາສະຫນາມະຫາຍານ* ຍິນຍອມໃຫ້ມີການ ຕີຄວາມຫມາຍຢ່າງກວ້າງຂວາງ ແລະເລືອກເຟັ້ນເອົາແຕ່ອັນຍອດຍິ່ງ. ຝ່າຍ*ເຖຣະວາດ* ກືວ່າ *ພຣະພຸທະອົງ*ເປັນສາສະດາແຫ່ງສາສະຫນາ ແລະກືວ່າ *ມະຫາຍານ* ເຊິ່ງນັບກື *ພຣະໂພທິສັດ* (Bodhisattar ໄດ້ແກ່ບຸກຄົນ ທັງທີ່ເປັນຄາຣະວາດ ຫລື ນັກບວດ ຜູ່ຈະ ຕ້ອງມາເກີດເປັນ*ພຣະພຸທະເຈົ້າ*ໃນອະນາຄົດ ແຕ່ດ້ວຍຄວາມເມດຕາ ຈຶ່ງຍອມຊ່ອຍຜູ່ ອື່ນໃຫ້ເຖິງນິພານເສຍກ່ອນ ແລ້ວຕົນເອງຈຶ່ງຈະເຂົ້າສູ່ນິພານໃນພາຍຫລັງ) ເປັນທີ່ເຄົາ ຣົບບູຊາ. ຜູ່ນັບກື *ພຣະພຸທະສາດສະຫນາ ນິກາຍເຖຣະວາດ* ປະຕິບັດທໍາມະ ເພື່ອ ໃຫ້ຕົນຫລຸດພົ້ນຢ່າງດຽວ ສ່ວນຜູ່ນັບກື *ມະຫາຍານ* ປະຕິບັດທໍາມະ ເພື່ອໃຫ້ຕົນເອງ ແລະຜູ່ອື່ນຫລຸດພົ້ນນໍາ. *ພຸທະສາດສະຫນາມະຫາຍານ* ໃຫ້ໂອກາດແກ່ຄາຣະວາດ ທັງ ຊາຍແລະຍິງ ສະແດງບົດບາດໃນຊຸມຊົນ ທີ່ນັບກືສາສະຫນາ ຫລາຍກວ່າຝ່າຍ *ເຖຣະວາດ* ເຊິ່ງແບ່ງແຍກພຣະສົງອອກຈາກຄາຣະວາດຢ່າງເດັດຂາດ. ພຣະສົງທີ່ນັບກື *ເຖຣະວາດ* ເຊັ່ນໃນ *ໄທ* ແລະ *ພະມ້າ* ຫົ່ມຜ້າຈີວອນສີເຫລືອງ ແລະອອກບິນທະບາດ ສ່ວນຝ່າຍ *ມະຫາຍານ* ໃນ *ຫວຽດນາມ* ຫົ່ມຜ້າຈີວອນສີນ້ໍາອ້ອຍ ແລະບ່ອອກບິນ ທະບາດ.

ເບິ່ງລວມແລ້ວ, ຮູບແບບວັດທະນະທໍາທີ່ *ຫວຽດນາມ* ຢືມມາຈາກ*ຈີນ* ນັ້ນ ມີ*ອິດທິພົນ*ປົກຄຸມ ເຫນືອ*ວິ*ວັດທະນາການຂອງ *ພຣະພຸທະສາສະຫນາ ມະຫາຍານ ຫວຽດນາມ* ເພາະວ່າ ຊາວ *ຫວຽດນາມ* ໂດຍທົ່ວໄປຢູ່ພາຍໃຕ້ອິດທິພົນ ວັດທະນະທໍາ *ຈີນ*, ພວກເຂົາຈຶ່ງມັກອ່ານຄໍາພີ *ພຸທະສະຫນາ* ແລະຄໍາສອນທາງສາສະຫນາ ທີ່ຂຽນ ເປັນພາສາ*ຈີນບູຮານ* ຫລາຍກວ່າອ່ານຄໍາພີ ທີ່ຂຽນເປັນ ພາສາ*ອິນເດຍ(ສັນສະກຣິດ)*. ຍິ່ງໄປກວ່ານັ້ນ *ພຸທະສາສະຫນາ* ໃນ *ຫວຽດນາມ* ຍັງສັບປົນເຂົ້າກັບ *ລັດທິເຕົ໋າ* (Taoism) ແລະຄໍາສອນຍິບຍ່ອຍ ທີ່ແຜ່ຫລາຍຂອງ*ລັດທິຂົງຈື* (Confucianism) ແລະຄົງຕົວຢູ່ເປັນ ອົງປະກອບນຶ່ງຂອງສາສະຫນາປະສົມ ເຊິ່ງຊາວ *ຫວຽດນາມ* ເອງ ເອີ້ນວ່າ *"ສາມ ສາສະຫນາ"* (Tamgiao). ໂລກທາງສາສະຫນາຂອງ *ຈີນ* ແລະ *ຫວຽດນາມ* ຊອນສັບທັບເຕັງກັນຫລາຍ ໃນສະຕະວັດ ທີ 18 ແລະ 19 ເຖິງຂັ້ນວ່າ *ພຣະ ສົງຈີນ* ຈາກ *ກວາງຕຸ້ງ* (Kouangtung) ແລະ *ຟູກຽນ* (Fukien) ສາມາດເດີນ ທາງໄປ *ຫວຽດນາມ* ແລະ ເຜີຍແຜ່ສາສະຫນາຢູ່ທີ່ນັ້ນ ຈົນມີຜູ່ຫັນມານັບກືເປັນຈໍານວນ

ຫລາຍ ແຕ່*ພຸທະສາສະໜາ* ໃນ *ຫວຽດນາມ* ກໍຫາກມີລັກສະນະທີ່ເປັນ "*ແບບອາຊີຕາ ເວັນອອກສຽງໃຕ້* "ຂອງຕົນຢູ່ຄືກັນ.

ຊາວພຸດ ໃນ *ຫວຽດນາມ* ເອງມັກເນັ້ນຍ້ຳວ່າ ໃນ*ພຸທະສາສະໜາແບບຈີນນັ້ນ* ການປະຕິບັດທຳມະ ທີ່ເປັນໄປໄດ້ສອງທາງ ຄື *ນຶ່ງ "ການເຂົ້າໄປມີສ່ວນຮ່ວມໃນກິດຈະ ກຳທາງໂລກ* "(Nhap the) *ແລະ ສອງ "ການເວັ້ນຈາກກິດຈະກຳທາງໂລກ ແບບ ນັກບວດ* "(Xuat the) ນັ້ນ ໄດ້ແຍກຂາດຈາກກັນຢ່າງຈະແຈ້ງ ດ້ວຍເຫັນວ່າທັງສອງ ທາງ ແມ່ນແບບທີ່ແຕກຕ່າງກັນ ຫລາຍກວ່າເປັນສິ່ງປະສົມປະສານ ຢ່າງມີຊີວິດຊີວາ. ອີກດ້ານນຶ່ງ *"ພຣະພຸທະສາສະໜາ ແບບ ຫວຽດນາມ ໄດ້ພະຍາຍາມຮວມເອົາສອງ ລັກສະນະນັ້ນເຂົ້າກັນ, ດັ່ງ ອົງຈັກກະພັດ ມິນ ມັ້ງ* (Minh Mang) *ກ່າວໄວ້, ຄືການ ມີສ່ວນຮ່ວມໃນກິດຈະກຳທາງໂລກ ແລະການເວັ້ນຈາກກິດຈະກຳທາງໂລກຂອງຄາຣະ ວາດ ທັງນີ້ເພື່ອສ້າງວິຖີຊີວິດແບບພິເສດ ສຳລັບຊາວພຸດ* "ເຊັ່ນວ່າ ພຣະເຈົ້າຈັກກະ ພັດເອງ ກໍສາມາດບວດເປັນພຣະໄດ້ ແລະນັກບວດເອງ ກໍສາມາດເປັນຜູ່ນຳທາງໂລກ ໃນປະເທດຂອງຕົນໄດ້. ໃນເລື່ອງນີ້, *ຊາວພຸດຫວຽດນາມ* ໄປໄກກວ່າເພື່ອນ*ຊາວພຸດ* ຈີນອີກ ຄືພວກເຂົາເຊື່ອວ່າ ຕາມທິດສະດີແລ້ວ ພວກເຂົາມີສິດໄດ້ຮັບອະນຸຍາດເຂົ້າໄປ ພົວພັນກັບຊີວິດໃນທັງສອງດ້ານ ຄື *"ປະສົບການທາງຈິດໃຈແບບສ່ວນຕົວ"* ແລະ *"ພຶດ ຕິກຳ ທາງດ້ານການເມືອງ* "ໂດຍວາງ ເລື່ອງທີສອງໄວ້ເໜືອເລື່ອງທີນຶ່ງ.

ເຖິງແມ່ນວ່າການສັງເຄາະແບບເອົາ *"ການມີສ່ວນຮ່ວມ"* ແລະ *"ການເວັ້ນຈາກ* " ມາເຂົ້າກັນ ກາຍເປັນສ່ວນສັງລວມອັນນຶ່ງ ຂອງແນວຄຶດການເມືອງ ແບບ*ຊາວພຸດ ຫວຽດນາມ* ກໍຕາມ ແຕ່ທັງສອງແບບນີ້ ກໍຍັງບໍ່ບັນລຸໄດ້ສົມປະສົງເທື່ອ ເມື່ອສະຖາບັນ *ພຸທະສາສະໜາ* ຕົກຕ່ຳລົງສຸດຂີດໃນສະຕະວັດ ທີ 18. ໃນສະໄໝນັ້ນ ຝ່າຍ *ຣາຊະວັງ ນິຍົມຂົງຈື* ກໍວາງສະຖາບັນ*ພຸທະສາສະໜາ* ບໍ່ແມ່ນໃນຖານະ ເປັນສັດຕູການເມືອງ ທີ່ມີການຈັດຕັ້ງສູງ ແຕ່ໃນຖານະ ເປັນອິດທິພົນທາງອຸດົມການຂອງບຸກຄົນ ທີ່ສາມາດ ມ້າງເພລະບຽບການອາດຍາສິດ ທີ່ສະຫລັບຊັບຊ້ອນ ຂອງຣາຊະວັງໄດ້. ນັກຂຽນຜູ່ຍິ່ງ ໃຫຍ່ທີ່ສຸດຄົນນຶ່ງແຫ່ງຍຸກນັ້ນ ຄື ທ່ານ *ຫງວຽນ ຢູ* (Ngnyen Du 1765-1820) ເຊິ່ງ ຕົກຢູ່ພາຍໃຕ້ອິດທິພົນຂອງ*ພຸທະສາສະໜາ* ໄດ້ປະກາດຢ່າງຈະແຈ້ງ ໃນບົດກະວີຂອງ ເພິ່ນ ບົດນຶ່ງຊື່ວ່າ *"ຈຽວຮ໋ຽ ກາ* "(Chieu hon ca *ຄຳສູດເອີ້ນຂວັນຄົນຕາຍ*) ວ່າ: *"ຢູ່ໃນສອງສະຫວັນນັ້ນ ຜູ່ເປັນໃຫຍ່ສຸດ ກັບຜູ່ຕ່ຳຕ້ອຍສຸດໃນໂລກນີ້ ກໍຖືກຈັດໃຫ້ນັ່ງຄືນຕາມ*

*ກັບແກ*ວ*ຂອ*ງ*ຕົ*ນ ". ໃນບົດກະວີນັ້ນ ເພິ່ນໄດ້ເຕືອນ ວິນຍານ ຂອງອະດີດຂ້າຣາຊະການ ບໍລິພານທັງຫລາຍ ທີ່ກຳລັງຈົນອຽນໄປມາວ່າ: " *ຍິ*ງ*ທ່*ານ*ຮັ*ງ*ມີ*ຫລ*າ*ຍ*ເທົ*່*າ*ໃດ *ທ*່*ານ*ກໍ *ຍິ*ງ*ແ*ບ*ກ*ຫ*າ*ບ*ຄ*ວ*າ*ມ*ເ*ຈັ*ບ*ແ*ຄ*ົ*ນ*ຫ*ນັ*ກ*ຫ*ນ*ໍ*ວ*ງ *ຫ*ລ*າ*ຍ*ເທົ*່*ານ*ັ*ນ... *ເ*ມ*ື*ອ*ແ*ບ*ກ*ຫ* າ*ບ*ຄ*ວ*າ*ມ*ເ*ຈັ*ບ *ແ*ຄ*ົ*ນ*ໄ*ອ*ຫ*ນ*ັ*ກ*ຫ*ນ*ໍ*ວ*ງ*ເ*ຊ*ັ*ນ*ນ*ັ*ນ *ທ*່*ານ*ຄ*ຶ*ດ*ຫ*ລ*ໍ*ວ*ົ*ວ*ົ*ວ*ົ

ຈັກກະພັດທາວຮຽນ. ພາຍໃນວົງການສົງເອງ ການຈັດຕັ້ງ ອ່ອນແອຫລາຍ ບໍ່ມີການແບ່ງຊັ້ນລຳດັບວັດ ເຊິ່ງຄຸ້ມຄອງໂດຍ ຄະນະສົງສູນກາງ ແລະໂດຍຣາຊະວົງ. ບໍ່ມີອົງການຈັດຕັ້ງ ຂອງ*ພຸທະສາສະໜາ*ຢູ່ໃນສັງຄົມທົ່ວໆໄປ ເພື່ອສູ້ຢັນກັບລະບົບ *ອາດຍາ ສິດຂົງຈຶ* (Confucian). ຄະນະສົງ *ຫວຽດນາມ* ໃນຕົ້ນຊຸມປີ ຄ.ສ. 1800 ມີຂະໜາດນ້ອຍຫລາຍ ເມື່ອປຽບໃສ່ກັບ ຄະນະສົງໃນປະເທດອື່ນໆ ທີ່ນັບຖື *ພຸທະສາສະໜາເຖຣະວາດ*. ຄຸນຄ່າຂອງລັດທິນິຍົມຄອບຄົວ ຕາມຄຳສອນ*ຂົງຈຶ* (Confucian) ກັບການກະຕັນຍູຮູ້ຄຸນພໍ່ແມ່ (ຄືຄວາມຕ້ອງການມີລູກຊາຍ ເພື່ອສືບເຊື້ອສາຍ ແລະ ການນັບຖືບັນພະບຸຣຸດ)ເຮັດໃຫ້ການເຂົ້າວັດ*ພຸດ* ບໍ່ເປັນທີ່ນິຍົມແຜ່ຫລາຍໃນໝູ່ປະຊາຊົນ *ຫວຽດນາມ* ຄືກັບໃນສັງຄົມ ປະເທດເພື່ອນບ້ານອື່ນໆ. ພວກແມ່ຍິງອາວຸໂສ ແມ່ໝ້າຍແມ່ຮ້າງ ທັງຫລາຍ ກໍມັກເຂົ້າໄປຮ່ວມສັງສັນ ກັບສະມາຄົມທີ່ສຳຄັນໆຂອງແມ່ຂາວຢູ່ວັດ ໃນທຸກໆບ້ານທີ່ມີວັດ. ພວກແມ່ຍິງເຫລົ່ານີ້ເຮັດວຽກເກັ່ງ ເຂົ້າໄຫວ້ພຣະ ສູດມົນ ຢ່າງໜ້ອຍກໍໃນທຸກໆ ວັນສິນດັບແລະມື້ເພັ້ງ, ເອົາເຂົ້າໄປເສຍເປັນຄ່າທຳນຽມໃຫ້ວັດ ແບບດຽວກັບພວກຜູ້ຊາຍໃນບ້ານ ທີ່ເອົາເຂົ້າໄປອອກເຮັດບຸນລວມຂອງບ້ານ. ໃນ *ຫວຽດນາມພາກເໜືອ* ຊີວິດທາງສາສະໜາຂັ້ນບ້ານ ມີທ່າທີວ່າຈະໜັ້ນຄົງ ແລະເຄັ່ງຄັດແບບທ້ອງຖິ່ນກວ່າຢູ່ *ຫວຽດນາມພາກໃຕ້*. ການໄປເອົາບຸນ ຕາມສາສະນະສະຖານຕ່າງໆ ຫລັງຈາກແລ້ວວຽກໄຮ່ການນາແລ້ວ ເປັນເອກະລັກນຶ່ງຂອງຊີວິດຊົນນະບົດ *ຫວຽດນາມ* ແຕ່ການໄປເອົາບຸນແບບນີ້ ເປັນທີ່ນິຍົມກັນເປັນພິເສດໃນພາກໃຕ້ ເຊັ່ນ ຢູ່ເຂດ *ກ່າເມົາ* (Ca Mau) ແລະ *ແຣກຢ່າ* (Rach Gia) ເຊິ່ງເປັນບ່ອນທີ່ມີວັດເກົ່າແກ່ຢູ່ພຽງໜ້ອຍດຽວ ບໍ່ພຽງພໍສຳລັບໃຫ້ບໍລິການອາຫານ ເຄື່ອງແກ້ບະບົນແກ່ຜູ່ມາໄຫວ້ ຫລື ໃນບ່ອນທີ່ພຣະສົງເອງ ບໍ່ທັນມີຊື່ສຽງພຽງພໍເທື່ອ.

ພຣະພຸທະສາສະໜານິກາຍເຖຣະວາດ (Theravada Buddhism)

ພຣະພຸທະສາສະໜານິກາຍເຖຣະວາດ (Theravada Buddhism) ແຜ່ຜາຍຈາກ *ສີລັງກາ* ຢ່າງໄວວາລະຫວ່າງ ສະຕະວັດທີ 11-15 ຜ່ານປະເທດຕ່າງໆ ເທິງແຜ່ນດິນໃຫຍ່ອາຊີຕາເວັນອອກສຽງໃຕ້ ຄືຈາກ *ພະມ້າ* ໄປສູ່ *ກຳພູຊາ* ແລະລາວ. ທຸກບ້ານມີວັດປະຈຳບ້ານ ແລະມີພຣະຢູ່ຈຳພັນສາ. ບ້ານນຶ່ງໆ ຈະບໍ່ເປັນບ້ານໄດ້ຢ່າງ

ສົມບູນ ກ້າບໍ່ມີວັດ ເຖິງແມ່ນວ່າ ວັດນັ້ນຈະມີພຽງສາລານ້ອຍໆ ສົມ ສຳລັບປະກອບພິ ທີບວດ ກັບພິທີກຳແລະກຸຕິຈັກຫລັງນຶ່ງ. ອ້ອມຮອບບໍລິເວນເຂດວັດຍັງມີ ອາຄານອື່ນໆ ແລະ ທາດໃສ່ກະດູກບັນພະບຸຣຸດຫລືບຸກຄົນສຳຄັນ ເຊິ່ງອາດສ້າງຂຶ້ນພາຍຫລັງ ແລະ ຕົ້ນໂພ ທີ່ປູກໄວ້ເປັນທີ່ລະນຶກ ຫາຕົ້ນໂພທີ່ *ພຣະພຸທະເຈົ້າ* ປະທັບນັ່ງສະແດງປະກົມ ມະເທດສະຫນາ[6] ວັດເປັນບ່ອນພັກເຊົາຂອງພຣະສົງ ຈຳນວນເລັກນ້ອຍ ເຊິ່ງນຸ່ງຫົ່ມຜ້າ ຈີວອນຍ້ອມສີແສດ ຫລື ສີເຫລືອງ ປະຕິຍາບຕົນ ທີ່ຈະໃຊ້ຊີວິດແບບທຸກຈົນ ປະຢັດ ກືສົນ ປະພຶດພົມມະຈັນ ແລະ ອຸທິດຊີວິດໃຫ້ແກ່ການສຶກສາຮ່ຳຮຽນພຣະທຳວິໄນ ແລະເຜີກສະ ມາທິ. ກິດຈະກຳຂອງສົງ ກືກຄວບຄຸມ ໂດຍສົນ 227 ຂໍ້, ເນື່ອງຈາກ ພຣະສົງກືກຫ້າມ ບໍ່ໃຫ້ຈັບບາຍເງິນຄຳ ແລະ ຕ້ອງອາໄສການບິນທະບາດລ້ຽງຊີວິດ ພຣະສົງ ຈຶ່ງເລີ່ມຕົ້ນ ກິດຈະກຳ ຂອງສົງໃນແຕ່ລະມື້ ດ້ວຍການອອກບິນທະບາດ ຜ່ານບ້ານ ທີ່ຊາວບ້ານຜູ່ ມີສັດທາ ອອກມາໃສ່ບາດ. ພຣະກັບຄືນມາສັນເຂົ້າຢູ່ວັດ ເຊິ່ງມີລູກສິດວັດ ແລະສັງກະລີ ແຕ່ງເຄື່ອງກິນໄວ້ເຄນ. ນອກຈາກຂອງກິນທີ່ໄດ້ຮັບຈາກສັດທາຊາວບ້ານແລ້ວ ຍັງມີພືດ ຜົນຈາກສວນ ແລະສິ່ງເລັກໆນ້ອຍໆ ທີ່ຊາວບ້ານຜູ່ຢາກເຮັດບຸນຫລາຍ ເອົາມາຖວາຍ ອີກ ແຕ່ເດັດຂາດຈະບໍ່ມີຂອງກິນ ທີ່ເປັນຊີ້ນເລີຍ.

ການເຂົ້າບວດ ໃນ *ສາສະຫນາພຸດ* ຢູ່ສົງຄົມລະດັບບ້ານ ໄຂ່ປ່ອງທາງ ແລະໃຫ້ ໂອກາດແກ່ຜູ່ຊາຍທັງຫມົດໄດ້ປະຕິບັດທຳມະ ສະແຫວງຫາຄວາມຮູ ແລະສະແດງພຣະ ທຳຄຳສອນ ແກ່ຊຸມຊົນໃນບ້ານ. ຫນ້າທີ່ຮອງລົງມາອີກອັນນຶ່ງ ຂອງວັດກັບພຣະສົງ ກໍ ແມ່ນການດຳລົງກຸານະ ເປັນແຫລ່ງບຸນໃຫ້ແກ່ຊຸມຊົນ ທີ່ຕ້ອງການເຮັດບຸນ ໂດຍສະ ເພາະຢ່າງຍິ່ງ ພວກແມ່ຍິງ ຜູ່ສາມາດຍົກລະດັບ ຄຸນນະທຳຂອງຕົນຂຶ້ນໄດ້ດີທີ່ສຸດ ແລະ ປາດກຸະຫນາຢ່າງແຮງກ້າ ທີ່ຈະໄດ້ເກີດເປັນຜູ່ຊາຍໃນຊາດຫນ້າ ຈຶ່ງເຮັດບຸນກວາຍເຂົ້າ ປາອາຫານແກ່ພຣະສົງເປັນປະຈຳ ຟັງເທດຟັງທຳ ແລະໃຫ້ລູກຊາຍ ເຂົ້າບວດເປັນ ພຣະ. ເວົ້າກັບຕາມພາສາຊາວບ້ານ ຫນ້າທີ່ສຳຄັນຂອງພຣະສົງ ແມ່ນການສັ່ງສອນ ເດັກນ້ອຍຜູ່ຊາຍແລະຜູ່ບ່າວທັງຫລາຍ ໃຫ້ຜໍຮູ້ຈັກອ່ານອອກຂຽນໄດ້ ກັບເຂົ້າໃຈຫລັກທຳ ມະຂອງສາສະຫນາ, ດ້ວຍເຫດຜົນອັນນີ້ ພວກຜູ່ຊາຍໃນປະເທດ *ສະຫຍາມ ພະມ້າ ລາວ* ແລະ *ກຳພູຊາ* ໃນສະຕະວັດທີ 18 ກວ່າເຄິ່ງນຶ່ງ ຈຶ່ງເປັນຜູ່ອ່ານອອກຂຽນເປັນຕາມ ຫນ້າທີ່. ຢ່າງຫນ້ອຍທີ່ສຸດ ກໍສາມາດອ່ານການກອນງ່າຍໆ ຂອງທ້ອງຖິ່ນໄດ້. ສຳລັບ

---

* ຄວາມຈິງ ແມ່ນບ່ອນພຣະອົງນັ່ງຕັດສະຮູ: ຜູ່ແປ

ຜູ່ມີເວລາຫລາຍ ຫລືມີປັນຍາຜິກໄຫວດີກວ່າຜູ່ອື່ນໆ ພຣະສົງກໍຈະກ່ຳຍທອດວິຊາລະດັບສູງໃຫ້ ບ່ແມ່ນແຕ່ວິຊາທາງສາສະຫນາຢ່າງດຽວ ແຕ່ຈະກວມເອົາທັງ ວິຊາສິລະປະສາດແລະ ວິທະຍາສາດ ກ່ຽວກັບອາຣະຍະທຳ *ອິນເດຍ* ເຊັ່ນ ວິຊາຄິດໄລ່ (ຄະນິດສາດ), ດາຣາສາດ ຈົນຮອດວິຊາການແຕ່ງການກອນ (ສັນທະລັກສະນະ) ແລະການແພດ. ຢ່າງໃດກໍດີການສິດສອນວິຊາລະດັບສູງເຫລ່ານີ້ ບ່ມັກແຜ່ລາມຫລາຍເທ່ົາໃດ. ໂດຍທົ່ວໄປແລ້ວ ວິຊາການເຫລ່ານີ້ ຈະມີສອນກັນຢູ່ແຕ່ໃນວັດຫລວງ ຫລື ວັດທີ່ອາດຍາເຈ້ົາ ນາຍອຸປະກຳຢູ່ໃນເມືອງໃຫຍ່ໆ ທີ່ສາມາດຮັບ ພຣະສົງໄດ້ຈຳນວນຫລາຍ, ສາມາດໃຫ້ເງິນເດືອນແກ່ຄູສອນຂອງລັດ ແລະໃຫ້ຣາງວັນແກ່ຄູສອນ ທີ່ຜ່ານການອົບຮົມພິເສດ ໂດຍມອບຕຳແໜ່ງ ຫລື ທຽບຊັ້ນສະມະນະສັກໃຫ້ ຢ່າງເປັນທາງການ. ຢ່າງໃດກໍຕາມ, ໃນທຸກໆລະດັບສັງຄົມ ວັດເປັນຄັງສາງເຕ້ົາໂຮມ ທຸກສິ່ງທຸກຢ່າງ ທີ່ປະຊາຊົນພົນລະເມືອງ (ຮວມທັງພຣະນຳ) ຍົກຍ້ອງ ແລະຕ້ອງການ ໃນທາງວິທະຍາສາດ ແລະສິລະປະສາດ. ສຳລັບບາງວັດ ທີ່ຫລົງອອກນອກແນວທາງເດີມນີ້ ການສຶກສາຮ່ຳຮຽນບາງຢ່າງ ຈະກ່ຽວຂ້ອງກັບການເຮັດພິທີເສຍເຄາະ ການທວາຍໂຊກຊາຕາ ຕີຄວາມຝັນ ແລະ ການເບ່ິງເລີກຍາມ ເພື່ອປະກອບພິທີກຳຕ່າງໆ.

ໃນສັງຄົມຂັ້ນບ້ານ ສະຖາບັນວັດ ແລະພຣະສົງ ປະກອບກັນເປັນແບບຢ່າງສິ່ງປະສົມອັນກົມກືນລະຫວ່າງ ການປະຕິບັດແລະຄວາມເຊ່ືອ ເຊ່ິງຍິ່ງໃຫຍ່ເໜືອຄວາມວິຕົກກັງວົນຂອງບ້ານ ແລະຄອຍນ້ຳວຈ່ອງຊາວບ້ານເຂ້ົາຫາກັນ ດ້ວຍຄວາມຜູກພັນຮັດແໜ້ນ ທີ່ເລິກເຊ່ິງກວ່າ ອັນທີ່ເກີດຈາກພາສາ ຫລືຣິດຄອງ ດ້ານການປູກຝັງອີກ. ເຈ້ົາອາວາດ ແລະພຣະໃນວັດປະຈຳບ້ານ ຂ້ຶນກັບອົງການຈັດຕ້ັງຝ່າຍສາສະຫນາ ເຊ່ິງຂະຫຍາຍຕົວ ຄຽງຄູ່ໄປກັບລະບົບການປົກຄອງຂອງລັດຖະບານ ຂ້ຶນໄປຈົນຮອດລະດັບເຈ້ົາແຜ່ນດິນ. ອົງການຈັດຕ້ັງສາສະຫນາເປັນປ່ອງທາງນ່ຶງ ທີ່ຈະກ່ຳຍທອດຂ້ໍມູນຂ່າວສານໄປມາຫາກັນ ທັງສອງທິດ ຄື ຂ້ຶນເທ່ິງ ແລະລົງລຸ່ມ ແລະເປັນພາຫະນະ ສຳລັບສ້ຳງຄວາມກ້ຳວໜ້ຳທາງສັງຄົມ ໃຫ້ແກ່ພຣະສົງທີ່ຢູ່ພາຍໃນການຈັດຕ້ັງນີ້. ມີຫລາຍເທ່ືອ ພຣະສົງໄດ້ເປັນຜູ່ນຳເອົາຄຳຮ້ອງທຸກ ຂອງຊາວບ້ານໄປຫາຜູ່ປົກຄອງຊ້ັນສູງກວ່າ ໂດຍບ່ຜ່ານຄະລ່ືຫັດຜູ່ປະສານງານ ແລະເຈ້ົາອາວາດ (ອາຈານໃຫຍ່) ວັດປະຈຳບ້ານ ກໍມັກຈະໄດ້ເປັນຜູ່ນຳທ່ີເຄ່ົາຣົບນັບຖ ຫລາຍຢູ່ໃນບ້ານ ບາງເທ່ືອ ກໍເປັນຜູ່ນຳທ່ີມີອຳນາດກວ່າກະໂຕນາຍບ້ານ ຜູ່ບ່ເຊ່ືອຟັງອາຈານໃຫຍ່ນັ້ນຊ້ຳອີກ. ພວກອ້າຍບ່າວຜູ່ມັກໃຫຍ່ໄຝ່

ສູງ ທີ່ພົບວ່າເສັ້ນທາງແຫ່ງຄວາມກ້າວໜ້າທາງສັງຄົມ ກຶກກີດກັນໂດຍກົດໝາຍ ແລະ ປະເພນີ ກໍສາມາດອາໄສການສຶກສາແລະການສົ່ງເສີມ ຈາກຝ່າຍສາສະໜາ ຜ່ານຜ່າອຸປະສັກທີ່ຂວາງຕັນຄວາມກ້າວໜ້າທາງສັງຄົມ ແລ້ວກ້າວສູ່ຕຳແໜ່ງໜ້າ ທີ່ໃນວົງການສາສະໜາໄດ້. ຍິ່ງໄປກວ່ານັ້ນ ກ້າວ່າພຣະສົງເຫລົ່ານັ້ນ ເຫັນວ່າຊີວິດຢູ່ໃນ ວັດ ຫນັກໜ່ວງກ່ວງດຶງເພິ່ນເກີນໄປ, ເພິ່ນກໍສາມາດ ສຶກອອກແລະ *"ເກີດໃຫມ່"* ໃນ ໂລກຄາຣະວາດ ໃນຖານະສູງກວ່າທີ່ເຄີຍມີມາແຕ່ກ່ອນບວດຊ້ຳອີກ.

ສົມມະນະສັກ (ການຈັດລຳດັບຊັ້ນ) ຂອງພຣະສົງ ສ່ວນຫລາຍ ມີຮູບແບບ ຈັດຕັ້ງ ໄປຕາມຂົງເຂດພື້ນທີ່ຂອງແຕ່ລະປະເທດ ທີ່ນັບຖື *ສາສະໜາພຸດ* ຍົກເວັ້ນພຣະ ສົງ ຝ່າຍວັດປ່າ(*ອະຣັນນິກາຍ*ᵕ ᵕ) ທີ່ມີຮູບແບບການຈັດຕັ້ງອີກແນວນຶ່ງ ຕ່າງ ຫາກ. ແຕ່ລະເມືອງ ແຕ່ລະແຂວງ ມີພຣະອາຈານໃຫຍ່ (ເຈົ້າອາວາດ ᵕᵕ) ຂອງຕົນ ເຊ ່ງຂຶ້ນກັບອຳນາດການປົກຄອງ ເຈົ້າຄະນະໃຫຍ່ກັບ ພຣະສົງຄະຣາດໃນ ເມືອງຫລວງ (ປະທານສົງ) ທີ່ໄດ້ຮັບມອບອຳນາດການຕັດສິນໃຈ ແລະອອກຄຳສັ່ງຈາກອຳນາດ ຝ່າຍພົນລະເມືອງ. ຄະນະສົງ*ພະມ້າ* ມີປະຫວັດການແຕກແຍກ ເປັນນິກາຍຕ່າງໆ ມາເປັນເວລາເຫິງນານ ອັນໄດ້ທຳລາຍຄວາມເປັນເອກະພາບ ແລະ ອຳນາດໃຫ້ ອ່ອນແອລົງ. ກົງກັນຂ້າມ ຄະນະສົງຢູ່ *ສະຫຍາມ* ກຶກດູແລ ຢ່າງເຂັ້ມງວດ ໂດຍເຈົ້າຊີ ວິດ ແລະໃນບາງສະໄໝ ພຣະທີ່ເປັນເຊື້ອເຈົ້າກໍໄດ້ຮັບຕຳແໜ່ງສູງ ຢູ່ໃນວົງການສົງ. ໃນປະເທດ *ສະຫຍາມ* ການອຸປະກຳຄ້ຳຊູວັດ ໂດຍພຣະຣາຊາ(ພຣະບໍຣົມຣາຊູປະກຳ) ເຊິ່ງມີຕິດຕໍ່ກັນມາ ເປັນເວລາເຫິງນານແລ້ວນັ້ນ ຂຶ້ນສູ່ລະດັບສູງສຸດໃນ ສະຕະວັດທີ 17. ລະບອບຣາຊາທິປະໄຕ ໃຫ້ການສະໜັບສະໜຸນການສຶກສາ ທາງສາສະໜາຢ່າງສຸດ ຂີດ ດ້ວຍການອຸປະກຳວັດຫລວງ ເຊິ່ງຕໍ່ມາໄດ້ກາຍເປັນມະຫາວິທະຍາໄລສາສະໜາ ແລະທາງໂລກຢ່າງສົມບູນ. ເປັນການຍາກ ສຳລັບພຣະສົງທີ່ເປັນຄູສອນລູກພວກເຈົ້ ານາຍແລະພະຣາຊະບຸດ ກັບຣາຊະຄຣູ (ພຣະອາຈານ ປະຈຳວັງ) ທີ່ຈະຢູ່ຢ່າງອິສຣະ ໂດຍບໍ່ເຂົ້າໄປຫຍຸ້ງກ່ຽວກັບການເມືອງ ທັງໆທີ່ມີພຣະທຳວິໄນເກືອດຫ້າມຢູ່. ເວົ້າລວມ ແລ້ວ, ວັນນະຄະດີພື້ນເມືອງ ແລະຕຳນານປະຫວັດສາດ ຊີ້ໃຫ້ເຫັນວ່າ ອຳນາດໃນຂັ້ນສຸດ ທ້າຍຂອງພວກເພິ່ນ ແມ່ນອິດທິພົນອັນແຂງຂັນ ທາງດ້ານສິລະທຳແນວນຶ່ງ. ພຣະສົງ ສາມາດ ແລະຄົງເຄີຍຊັກຈູງທາງສຽງປະຊາຊົນ ເພື່ອສະໜັບສະໜູນຫລື ຄັດຄ້ານ ພວກເຈົ້າຊີວິດ ກັບພວກຂ້າຣາຊະການ, ໃນລະຍະເຄິ່ງທ້າຍຂອງສະຕະວັດທີ 18 ນີ້

ພຣະສົງໃນປະເທດ *ສະຫຍາມ* ສະກາປະນາອົດທິພົນທາງສິລະທຳໄດ້ເຂັ້ມແຂງຫລາຍ ຈົນບໍ່ມີເຈົ້າຊີວິດອົງໃດຄອງບັນລັງຢູ່ໄດ້ ກ້າປາສະຈາກການຮັບຮູ້ຂອງຝ່າຍສົງ.

ໃນລະຫວ່າງສະຕະວັດທີ 14 ເຖິງ 18 ໄດ້ມີການພັດທະນາຄັ້ງສຳຄັນ ທາງ ດ້ານສະຕິປັນຍາ ແລະ ວິທີການຈັດຕັ້ງ ຢູ່ໃນຮູບແບບການດຳລົງຊີວິດ ຂອງ*ຊາວພຸດ* ໃນພາກພື້ນ ແຜ່ນດິນໃຫຍ່ອາຊີຕາເວັນອອກສຽງໃຕ້. ຕອນທີ່ໄດ້ແຜ່ລາມລົງມາເຖິງ ພາກພື້ນນີ້ໃຫມ່ໆ *ພຣະພຸທະສາສະໜາ* ບໍ່ພຽງແຕ່ຈຳຕ້ອງພໍໃຈ ຍອມຮັບເອົາລັດທິ ນັບຖືຜີສາງ ທີ່ມີຮາກຫມັ້ນຢູ່ກ່ອນແລ້ວ ທັງໃນຂັ້ນບ້ານ ເຖິງຣາຊະວັງ(ຢູ່ໃນຄຳກ່າວ ຂອງພິທີຖືນ້ຳສຳບານ ຂອງທຸກໆຣາຊະສຳນັກ ມີຄຳສາບແສ່ງ ໃຫ້ຜີລົງໂທດ ຜູ່ທີ່ບໍ່ຮັກ ສາຄຳສາບານ) ເທົ່ານັ້ນ, ແຕ່ຍັງຕ້ອງຍອມຮັບ ເອົາລັດທິພາມທັງໃນລະດັບຣາຊະວັງ ແລະໃນຂັ້ນປະຊາຊົນ *ສະຫຍາມ* ແລະ *ກຳພູຊາ*. ຕ່າງຈາກ*ສາສະໜາພຸດ* ປະເພນີ ຂອງ*ພາມ* (Brahmanism) ສະເໜີຄຳອະທິບາຍ ແລະຫວາຍເຫດການກ່ຽວກັບທຳ ມະຊາດ ແລະຊີວິດມະນຸດດ້ວຍຄວາມແນ່ນອນແລະ ມີ *"ວິທະຍາສາດ"*. ຕາບໃດ ທີ່*ສາສະ ໜາພຸທ*ບໍ່ສາມາດໃຫ້ຄຳຕອບແນ່ນອນໄດ້ ເມື່ອຖືກຖາມວ່າ ເວລາໃດຄວນເຄື່ອນທັບ ຫລື ຄວນຈັດພິທີແຕ່ງດອງແລ້ວ ຕາບນັ້ນ *ສາສະໜາພາມ* ກໍຍັງຈະມີຄວາມສຳຄັນ ຕໍ່ຊີ ວິດຂອງຊາວບ້ານເປັນອັນດັບນຶ່ງຢູ່. ດ້ວຍວ່າຢູ່ *ອິນເດຍ* ນັ້ນ ວິທະຍາສາດ ນັບມື້ນັບ ກາຍເປັນເລື່ອງຂອງທາງໂລກຫລາຍຂຶ້ນເປັນລຳດັບ ບວກໃສ່ຄວາມເຂັ້ມແຂງໃນການ ສຶກສາ *ພຸທະສາສະໜາ* ແລະການແຜ່ກະຈາຍແນວຄວາມຄຶດກ່ຽວກັບຈັກກະວານ ອັນ ສະຫລັບສັບຊ້ອນ ແລະອັນສຸດທ້າຍ ການທີ່ທາງການ ກັບມະຫາຊົນບໍ່ຍອມຮັບປະເພນີ ຮີດຄອງຂອງ*ພາມ*ນັ້ນ ໄດ້ເຮັດໃຫ້ ລັກສະນະອົງປະກອບຂອງ*ພາມ* ຢູ່ໃນການດຳລົງຊີວິດ ຂອງປະຊາຊົນສ່ວນຫລາຍ ໃນແຜ່ນດິນໃຫຍ່ ເສື່ອມກອຍລົງ. ການປ່ຽນແປງດ້ານຄຶ ກັນນີ້ ຍິ່ງມີຜົນກະທົບໃສ່ການນັບຖືຜີ ຢ່າງກວ້າງຂວາງກວ່າ ແລະຫລຸດຜ່ອນການນັບຖື ລັດທິນີ້ລົງໃນລະດັບຕ່ຳສຸດ ເຖິງຂັ້ນໃຫ້ເປັນຄວາມເຊື່ອຖືປະເພດນຶ່ງ ເພື່ອອະທິບາຍປາ ກົດການບາງຢ່າງ ທີ່ຢູ່ເໜືອເຫດຜົນ ຂອງສິລະທຳແລະວິທະຍາສາດ. ສະຖານທີ່ສຳ ຄັນຂອງ*ສາສະໜາຮິນດູ* (Hindu) *ພາມ* ເຊັ່ນ *ນະຄອນວັດ*(Angkor wat) ໃນ*ກຳພູຊາ* ແລະ ສະຖາປັນ*ພາມ*ກ່ຽວກັບແນວຄຶດເລື່ອງ *ເທວະຣາຊາ* (Devaraja) ຫລື *ເທບ ກະສັດ* (God-king) ນັ້ນ ກໍປະສົມກົມກືນກັນດີ ກັບຄຳສັບ ແລະການປະຕິບັດທາງ *ພຸທະສາສະໜາ* ໂດຍບໍ່ເຮັດໃຫ້ຮູ້ສຶກຂັດແຍ່ງ ສະແຫລງໃຈໃດໆເລີຍ ພໍປານຢາກບອກ

ໃຫ້ຮູ້ວ່າ *ພຣະພຸທະສາສະໜາ* ນີ້ ໄດ້ຕັ້ງໜັ້ນຢູ່ໃນອາຊີຕາເວັນອອກສຽງໃຕ້ແລ້ວ, ພຣະ ສົງຈາກປະເທດ *ສີລັງກາ* ເດີນທາງມາສືບສາສະໜາທີ່ *ປະເທດສະຫຍາມ* ແລະ *ພະມ້າ* ໃນສະຕະວັດທີ 18 ເພື່ອຮັບເອົາການອຸປະສົມບົດທີ່ຖືກຕ້ອງ ແລະຈົດກ່າຍເອົາ ຄຳພີພຣະໄຕປິດົກ ທີ່ບໍ່ມີແລ້ວ ໃນ *ສີລັງກາ* ດິນແດນທີ່ເປັນແຫລ່ງກຳເນີດ ແຫ່ງ*ພຸທະ ສາສະໜາເຖຣະວາດ* ໃນອາຊີຕາເວັນອອກສຽງໃຕ້.

ສາສະໜາອິສລາມ (Islam)

ໂລກຂອງຊາວ*ມຸສລິມ* ໃນອາຊີຕາເວັນອອກສຽງໃຕ້ ຂະຫຍາຍຕົວອອກລ້າຍຄືພະຈັນ ມື້ແຮມ ຄືເປັນຊົ່ງຮູບກ່ຽວ ມີຄວາມຍາວປະມານ 3,000 ໄມລ໌ ແຕ່ເໜືອສຸດຂອງດອນ *ສຸມາຕຣາ* (Samatra) ເຊິ່ງອາດແມ່ນບ່ອນທີ່ສາສະໜາ *ອິສລາມ* ແຜ່ເຂົ້າມາເຖິງ ເປັນບ່ອນທຳອິດ ກ່ອນທີ່ຈະກະຈາຍໄປສູ່ໝູ່ເກາະດອນອື່ນໆໃນປະເທດ *ຟີລິບປິນ* ພາກ ໃຕ້. ບ່ວ່າ *ສາສະໜາອິສລາມ* ຈະມາພ້ອມກັບການຄ້າ ຫລືບໍ່ກໍຕາມ(ຈຸດນີ້ ຍັງເປັນ ທີ່ຖົກຖຽງກັນຢູ່), *ສາສະໜາ ອິສລາມ* ກໍໄດ້ຄົງຕົວຢູ່ ຕິດແໜດກັບຝັ່ງທະເລ, ກັບເສັ້ນ ທາງຄົມມະນາຄົມທາງທະເລ ເຊິ່ງເຊື່ອມຕໍ່ໝູ່ເກາະດອນ ເມືອງທ່າກຳປັ່ນ ແລະລັດ ຕ່າງໆຕາມຊາຍຝັ່ງທະເລ. ເວົ້າໂດຍຫຍໍ້ ກໍຄືຕິດແໜດກັບປັດໄຈ ດ້ານພູມສາດແລະວັດ ທະນະທຳອັນຫລາກຫລາຍ ເຊິ່ງໃນພາສາ *ອິນໂດເນເຊຍ* ເອີ້ນວ່າ*ປ່າຊິເຊຍຣ໌* (Pasisir), ໂດຍມີຄວາມແຕກຕ່າງຢ່າງກົງກັນຂ້າມ ກັບ *ພຣະພຸທະສາສະໜາ* ທີ່ລາມເລິກເຂົ້າ ໄປໃນແຜ່ນດິນໃຫຍ່ຂອງພາກພື້ນ, *ສາສະໜາອິສລາມ* ຈັດຕັ້ງຂຶ້ນ ຢ່າງບໍ່ມີສາສະນະສະ ການ (ວັດ - ສົມ) ຕ່າງຈາກຂໍ້ສັງເກດຂອງ*ຊາວຢູຣົບ*ທີ່ຢືນຢັນວ່າ ມີສາສະໜາຕ້ອງມີ " *ໂປ*ປ໊ ແລະ *ຄຸນພໍ່* " (Popes and Priests) ແຕ່ *ອິສລາມ* ກໍມີສະຖາບັນ, ໂຄງສ້າງ ແລະຮູບແບບ ການຕິດຕໍ່ພົວພັນ ທີ່ຖັກສານຜູ່ນັບຖືສາສະໜາເຂົ້າກັນ ແລະ ໄປຕ້ຳ ໂຮມກັນຢູ່ແຜ່ນດິນ ຫົວໃຈ *ອິສລາມ* ໃນຕາເວັນອອກກາງ. ເດັ່ນກວ່າໜ່ໃນບັນດາເຫດ ການ ທີ່ກາວມານີ້ ອາດເປັນພຽງແຕ່ການເຄື່ອນໄຫວ ຂອງປະຊາຊົນເທົ່ານັ້ນ. ນັກເດີນ ທາງ*ຊາວອາຫລັບ* ເຊິ່ງສ່ວນໃຫຍ່ ເປັນພວກພໍ່ຄ້າ ແຕ່ກໍຮວມທັງນັກສອນສາສະໜາ ນຳນັ້ນ ໄດ້ກາຍເປັນເອກະລັກຂອງສັງຄົມເມືອງທ່າ ຂອງໝູ່ເກາະດອນຕ່າງໆ ມາເປັນ ເວລາຫລາຍສະຕະວັດ. ນັກເດີນທາງບາງຄົນ ໄດ້ຕັ້ງກຸ່ນກາມ ເປັນຫລັກແຫລ່ງ ບາງ

ຄົນເຮັດໜ້າທີ່ເປັນທີ່ປຶກສາທາງດ້ານສາສະໜາ ປະຈຳຣາຊະວັງຫໍໂຮງ ຂອງເຈົ້າປົກຄອງທ້ອງກຸ່ນ ຫລືບໍ່ກໍ ເຄື່ອນໄຫວໄປມາ ລະຫວ່າງບ້ານຕ່າງໆ ໃນຖານະເປັນຜູ່ສອນສາສະໜາ ຫລື ເປັນພຽງນັກບຸນ. ຊາວໜຸ່ມທັງຫລາຍ ພາກັນເດີນທາງໄປຫາຜູ່ສອນສາສະໜາປະເພດນີ້ ເປັນປະຈຳ ບໍ່ວ່າຈະເປັນ*ຊາວອາຫລັບ* ຫລືເປັນຄົນທ້ອງກຸ່ນ ເຮັດໃຫ້ເກີດຊຸມຊົນນັກປາດປັນຍາຊົນຂຶ້ນ ປິ່ນອ້ອມອາຈານສອນສາສະໜາເຫລົ່ານັ້ນ ເປັນທີ່ຮູ້ຈັກກັນ ໃນຊື່ຕ່າງໆວ່າ "*ປອນດອກ*" (Pon- dok) ໃນແຫລມ *ມະລາຢູ*, "*ລັງກາຣ໌* " (Langgar) ໃນເກາະ *ສຸມາຕຣາ*, ຫລື *ເປເສນເຕຣນ*" (Pesantren) ໃນ *ຊະວາ*. ໃນພາກອື່ນໆຂອງ *ຊະວາ* ເຊັ່ນ *ກະລັນຕັນ* (Kelantan) ແລະ "*ປັດຕານີ*" (Patani) ຫລື "*ດີມັກ*" (Demak) ໃນ *ຊະວາ*ຊາຍຝັ່ງກ້ຳເໜືອ ລ້ວນແຕ່ເປັນສຳນັກຂອງນັກປາດປັນຍາຊົນ ທາງສາສະໜາ ດັ່ງນັ້ນຈຶ່ງເປັນທີ່ດຶງດູດນັກຮຽນຮູ້ທັງໃກ້ແລະໄກ ທັງຕັ້ງຕົນເປັນຈຸດເຜີຍແຜ່ລັດທິສາສະໜາ *ອິສລາມ* ໃນຮູບແບບ ຄວາມສັດທາອັນແຮງກ້າຍ່າງນຶ່ງ. ສ່ວນ " *ປອນດອກ*" (Pondok) ກໍເປັນສູນກາງສຳລັບສະຖາບັນອື່ນໆ ທີ່ຜູກຮັດ*ອິສລາມ*ທັງພາຍໃນ ແລະພາຍນອກ ຄື *"ຊູຟີ ຕາເຣກັຕ*" (Sufi tarekat) ຫລືຄຳສອນກ່ຽວກັບ ການໃຊ້ເວດມົນ, ເຊິ່ງບາງຄັ້ງ ສະເໜີແນວທາງ ເຂົ້າເຖິງ*ພຣະເຈົ້າ* ດ້ວຍວິທີການສະທ້ານໃຈໄດ້ຫລາຍກວ່ານິກາຍອື່ນ ທີ່ເຄັ່ງຄັດເກີນໄປ. ນັກບວດພວກ *ຕາເຣກັຕ* 7ŧ₩ำาัะ8 ມີຢູ່ທົ່ວທຸກແຫ່ງຫົນ(ເຊິ່ງພວກ *ສັຕຕາ ຣິຢາ* Shattariyah) ກືວ່າ ເປັນສາຂາທີ່ມີຊື່ສຽງທີ່ສຸດ ໃນສະຕະວັດ ທີ 18 ນັ້ນ ບໍ່ຄ່ອຍມີການຈັດຕັ້ງດີປານໃດ ສ່ວນໃຫຍ່ປະກອບດ້ວຍຄົນ *ຊາຢາກ* (Shaykh) ເຊິ່ງອ້າງຕົນວ່າ ເປັນຄູສອນທຳມະດາໆ ແລະມີກຸ່ມຊາວບ້ານ ຫລື ສາວົກຂອງ "*ປອນດອກ*" (Pondok) ຮວມຢູ່ນຳ. ຄວາມຮັບຮູ້ວ່າຕົນສັງກັດຢູ່ໃນພວກ "*ຕາເຣກັຕ*" (Tarekat) ເຮັດໃຫ້ເກີດຄວາມຮູ້ສຶກວ່າເປັນສາມັນຊົນ ທີ່ສາສະໜາ*ອິສລາມ* ມອບໃຫ້. ຍັງມີຮູບແບບການເຄື່ອນໄຫວ ຢ່າງອື່ນອີກ ພາຍໃນອາຊີຕາເວັນອອກສຽງໃຕ້ ຄືການໄປເອົາບຸນທີ່*ເມືອງເມກະ* (Meca) ທີ່ ເອີ້ນກັນວ່າ *ພິທີ "ຮາຊ*" (Haj) ເຊິ່ງເປັນທັງການຟື້ນຟູອຸດົມການ ໃຫ້ແກ່ອົງກອນສາສະໜາ *ອິສລາມ* ທັງໃຫ້ຖານະບົດບາດ ແລະ ກຽດຕິຍົດອັນຍິ່ງໃຫຍ່ ແກ່ບຸກຄົນທີ່ໄປຮ່ວມໃນພິທີນີ້.

ພາຍໃນອົງການສາສະໜາ *ອິສລາມ* ຢູ່ອາຊີຕາເວັນອອກສຽງໃຕ້ນັ້ນ ເປັນເລື່ອງງ່າຍໃນການຈຳແນກ ຄວາມແຕກຕ່າງອັນຈະແຈ້ງ ລະຫວ່າງຮູບແບບພື້ນຖານສອງອັນ ໃນສາສະໜາ*ອິສລາມ* ເຊິ່ງບາງຄົນອາດເວົ້າວ່າ ແມ່ນສັດທາອັນແຮງກ້າ

ຫລາຍກວ່າ ຄືອັນທີ່ກ່ຽວກັບເຂດ *"ປາຊິເຊຍຣ์"* (Pasisir) ດັ່ງທີ່ໄດ້ເວົ້າມາແລ້ວ ກວມໄປເຖິງເຂດ *ມະລາຢູ* ແລະ ເກາະດອນຕ່າງໆ ກ້ຳຕາເວັນອອກ ແລະທີ່ພົບເຫັນໃນ *ຊະວາພາກກາງ*. ເບິ່ງລັກສະນະຄຳສອນແລ້ວ ຮູບແບບສາສະໜາ*ອິສລາມ*ໃນຊະວາ ມີລັກສະນະເປັນສິ່ງປະສົມທີ່ພິສະດານ ລະຫວ່າງອຸດົມການທ້ອງຖິ່ນ ກັບ *ສາສະໜາຮິນດູ* ແລະ *ພຸດ* ຫລາຍກວ່າການນັບຖື *ລັດທິຄາຖາອາຄົມ* ຫລື *ຊູຟີ* (Sufi) ເມື່ອເວົ້າເຖິງແບບທີ່ມີລັກສະນະພື້ນເມືອງກວ່າ ລັດທິນີ້ຖືກເອີ້ນວ່າ *"ອາບັນກັນ"* (Abangan) ສັບປົ່ງທີ່ຕ່າງຈາກຮູບສັບ *"ສັນຕຣິ "* (Santri) ເຊິ່ງໃຊ້ເອີ້ນລັກສະນະສະເພາະຢູ່ໃນເຂດ *"ປາຊິເຊຍຣ์"* (Pasisir). ລັດທິ *"ອາບັນກັນ"* ໄດ້ກືນກິນ *ສາສະໜາ ອິສລາມ* ພ້ອມທັງລັກສະນະບາງຢ່າງ ຂອງ*ສາສະໜາຮິນດູ, ພຸດ* ແລະ *ລັດທິຜີສາງ* ເຂົ້າເປັນລະບົບຄວາມເຊື່ອປົ່ງ ທີ່ຫລາກຫລາຍສັບສົນກວ່າ, ດ້ວຍເຫດວ່າ ພວກ *"ສັນຕຣິ"* (Santri) ເຊິ່ງປ່າວອ້າງວ່າຕົນເປັນ *ມຸດສະລິມ* ຢ່າງແນ່ແທ້ກວ່ານັ້ນ ໄດ້ປະພຶດຕາມຄຳສອນ ຂອງສາສະໜາ*ອິສລາມ*ຢ່າງເຄັ່ງຄັດກວ່າ. ເບິ່ງໃນດ້ານການຈັດຕັ້ງແລ້ວ, ອົງກອນເພື່ອບໍລິຫານ *ສາສະໜາອິສລາມ* ຂອງຊົນຊັ້ນປົກຄອງ ຜູ່ຢູ່ໃນລະບົບຣາຊະການຂອງ *ຊະວາພາກກາງ* ໄດ້ອາໄສຜູ່ທີ່ ໄດ້ຮັບການແຕ່ງຕັ້ງມາຈາກລະບົບບໍລິຫານ ຊຶ່ງຄ້າຍຄືກັບວ່າດຳເນີນໄປເພື່ອຊ່ວຍໃນການປົກຄອງທາງໂລກ ເຊັ່ນ ເປັນພະນັກງານປະຈຳ ສຸເຫຣ่ຳ ຫໍໃຫ້ ແລະ ສານສາສະໜາ ຄືເປັນຄະນະຂອງນັກບວດ (Priesthood) ໃນສາຍຕາຂອງນັກສັງເກດການ *ຊາວດັດຊ* ສະໄໝນັ້ນ. ພາຍໃນ *ຊະວາພາກກາງ* ຣ่ອງຣอยຂອງ *"ສັນຕຣິ"* (Santri) ຖືກທົດແທນໂດຍພວກ *ອຸລາມະ* (Ulama) ອິສຣะ ເຊິ່ງເປັນຄູສອນແລະ ຜູ່ເຜີຍແຜ່ສາສະໜາ ໃນຂັ້ນບ້ານ ໂດຍອາໄສ ຄວາມຮູ້ກ່ຽວກັບ *ອິສລາມ* ແລະ *ລັດທິນິຍົມເວດມົນ*ຂອງຕົນ ວ່າເປັນການເລີ่ມຕົ้ນ ໃນ *"ຕາເຣກັຕ"* (Tarekat) ແລະການອະທິບາຍວິຖີຊີວິດຂອງ *ອິສລາມ* ທັງພາຍໃນ ແລະພາຍນອກ. ພວກ *ອຸລາມະ* ອິສຣะ ດຳລົງຕົນຢູ່ເໜືອລັດກຸะບານ ແລะບາງເທື່ອ ກໍຕຳນິວິຈານລັດກຸะບານ ທີ่ບໍ่ເປັນ *ອິສລາມ* ສົມບູນໃນເວລາຫຍຸ້ງຍາກ ພວກເຂົາກໍ่ຕົວເປັນຈຸດລວມແຫ่ງອຳນາດ ສຳລັບຊາວນາຜ่ູບໍ่ພໍໃຈ.

ອິສລາມ ນິກາຍ ປາຊິເຊຍຣ์ (Pasisir Islam) ເປັນຕົວຢ่າງສะເພาะອັນນຶ่ງຢ่ູໃນລັດແຫລມ *ມะລายู* (Malay) ແລะ ດอม *ສุมาตรา* (Sumatra) ທີ่ເกือบจะบໍ่ມີหยังจักหน้อย ค้ายคืกับโคงส้างอำนาดของ *อิสลาม*. เป้นคอามจิงว่า อำนาดสักสิด ของเจ้าปักคองลัดเหล่านี้ กอมลอมเกิงคอามรับผิดชอบด้าน

ການປ້ອງກັນ ແລະການປົກຄອງສາສະໜາທີ່ດີ ແຕ່ໃນສາສະນະຈັກ ກໍຄືກັບໃນການຈັດຕັ້ງທາງການເມືອງ, ລັດເຫລົ່ານີ້ ຕັ້ງກະແຈກກະຈາຍຕາມຝັ່ງທະເລ ຂາດເຂີນທັງຊັບພະຍາກອນ ທັງແຮງຊັກດຶງທີ່ຈະຮວມສູນອຳນາດ ເຂົ້າເປັນອັນດຽວ. ຊົນຊັ້ນປົກຄອງບໍ່ເຄີຍຕັ້ງເປັນບັນຫາຢ່າງຈິງຈັງຈັກເທື່ອ ວ່າຊີວິດທາງສາສະໜາຂອງປະຊາຊົນເປັນແນວໃດແທ້ ແລະ ກໍບໍ່ກວດກາເບິ່ງຄືນເລີຍ. ດົນໆເຈົ້າປົກຄອງລັດ ແລະ ຫົວໜ້າແຕ່ລະຄົນ ກໍແຕ່ງຕັ້ງພະນັກງານສາສະໜາປະເພດຕ່າງໆຂຶ້ນ ນອກເໜືອຈາກພະນັກງານທີ່ຂຶ້ນກັບ *ສຸເຫຣ່າ*ຂອງພວກເຂົາເອງ ແຕ່ກໍບໍ່ມີຫຍັງເລີຍ ທີ່ໃກ້ຄຽງກັບອົງການທີ່ມີລະດັບຈັດຕັ້ງ ຫລື ການຄວບຄຸມທີ່ເປັນລະບົບ ໃນສະຖານະການເຊັ່ນນີ້, ອຳນາດທາງສາສະໜາມີທ່າວ່າຈະຕົກຢູ່ກັບ ສະມາຊິກສັງຄົມບ້ານ ຜູ່ທີ່ໄດ້ຮັບການຍອມຮັບວ່າເປັນຜູ່ເໝາະສົມ ໃຊ້ອຳນາດເປັນ ຕົວຢ່າງ *ອິຫມ່າມ* (Imam) ປະຈຳ*ສຸເຫຣ່ຳ* ແລະ ຄູສອນສາສະໜາ ຫລືທີ່ເອີ້ນວ່າ *ຄຸຣຸ ຕາເຣກັຕ* (Gurutarekat) ເພາະເປັນຜູ່ໃຈບຸນ ແລະຜູ່ຊອກຮູ້ຊອກຮຽນຢູ່ສະເໝີ ແລະ ບາງທີ ກໍອາດຍ້ອນວ່າ ເປັນຜູ່ເຄີຍໄປສະແຫວງບຸນຢູ່ *ນະຄອນເມກະ* (Mecca) ມາແລ້ວ. ສ່ວນພວກ *ອູລາມະ* (Ulama) ຢູ່ຕາມຊົນນະບົດນັ້ນ ກໍບໍ່ໄດ້ສ້າງຊົນຊັ້ນສັງຄົມນຶ່ງຂຶ້ນຕ່າງຫາກ. ເມື່ອບໍ່ມີສິ່ງອື່ນໃດ ນອກຈາກການຫລຸດຜ່ອນພາລະທາງສາສະໜາຂອງສ່ວນລວມແລ້ວ *ລັດມະລາຢູ* ທັງຫລາຍຈຶ່ງບໍ່ມີປະເພນີການຕໍ່ຕ້ານ ທີ່ຈະຈັດຕັ້ງເປັນສະຖາບັນ ລະຫວ່າງ *ອູລາມະ ອິສຣະ* ກັບລະບົບອາດຍາສິດທາງສາສະໜາ ອັນເປັນຈຸດເດັ່ນຂອງ *ຊະວາພາກກາງ*.

ສູນກາງ ຂອງຊີວິດທາງສາສະໜາຢູ່ຂັ້ນບ້ານ ແມ່ນ *ສຸເຫຣ່ຳ* (Surau) ສຳລັບກອງປະຊຸມໃຫຍ່ ຫລື *ສຸໂຣະ* ທີ່ນ້ອຍກວ່າບ່ອນທີ່ຊຸມຊົນມາເຕົ້າໂຮມກັນສູດມົນ ພົບພໍ້ກັນໃນຍາມກາງຄືນ ລະຫວ່າງການຈຳສິນອົດກິນ(ແລະເວລາອື່ນໆ) ເພື່ອມາອ່ານ *ພຣະຄຳພີ ກຸຣານ* (Kuran) ແລະເພື່ອການເຝິກແອບອື່ນໆ ທາງສາສະໜາ ທີ່ກ່ຽວຂ້ອງກັບລະບຽບ *ສຸຟີ* (Sufi). ສຳລັບຊາວໜຸ່ມ *ມາເລ ສຸເຫຣ່ຳ* ກໍ່ວ່າເປັນສະຖານທີ່ແຫ່ງດຽວສຳລັບການສຶກສາ, ເປັນບ່ອນທີ່ເດັກນ້ອຍຜູ່ຊາຍ ໄດ້ມາທ່ອງເລ່ຳ *ພຣະຄຳພີກຸຣານ* (Kuran) ແລະຮຽນຮູ້ແກ່ນແທ້ຂອງ *ສາສະໜາອິສລາມ*. ກ້າວ່າຊີວິດສາສະໜາ ໃນແຕ່ລະທ້ອງຖິ່ນ ຫາກແຕກຕ່າງກັນນັ້ນ ສ່ວນຫລວງຫລາຍ ກໍເປັນຍ້ອນຄວາມພິເສດຂອງບຸກຄົນໃດບຸກຄົນນຶ່ງ ພາຍໃນບ້ານນັ້ນເອງ ຍ້ອນແຮງສັດທາ ຫລື ຄວາມເຊື່ອໝັ້ນ

ໃນສິ່ງລີ້ລັບໃດນຶ່ງ ໄດ້ກ່າຍທອດຄວາມກະຕືລືລົ້ນ ຫລື ສັດທາອັນແຮງກ້າຂອງເຂົ້າອອກ ສູ່ຜູ່ອື່ນໆ, ບໍ່ໄດ້ມີການຈັດແບ່ງຊັ້ນ ຫລືລະບົບກົດດັນໃດນຶ່ງຈາກພາຍນອກເລີຍ.

ຕາມຫລັກການ *ສຸເຫຣ່ າ* (Surau) ສຳລັບການປະຊຸມບ້ານນັ້ນ ມີພະນັກ ງານປະຈຳຢູ່ ແຕ່ຫນ້ອຍດຽວເທົ່ານັ້ນ ແລະພວກເຂົ້າກໍໄດ້ຖືກຄັດເລືອກມາຈາກຊາວ ບ້ານເອງ. ຜູ່ເຮັດວຽກຕົ້ນຕໍແມ່ນ *ອິຫມ່ າມ* (Imam) ເຊິ່ງເປັນຜູ່ນຳພາສູດມົນ ຮັບຜິດ ຊອບດູແລ *ສຸເຫຣ່ າ* (Surau), ຈັດພິທີແຕ່ງດອງ ແລະຈົດບັນທຶກການຢ່າຮ້າງ ຕັດສິນ ຄວາມການຜິດກຽງ (ໂດຍມີເກົ້າແກ່ອາວຸໂສອື່ນໆ ຄອຍຊ່ອຍເຫລືອ) ທີ່ກ່ຽວກັບກົດ ຫມາຍສາສະຫນາ ຫລືການປະຕິບັດ ແລະບາງທີ ກໍເປັນທັງຄູປະຈຳບ້ານໄປນຳ. ພະນັກ ງານອີກພວກນຶ່ງ ແມ່ນ *ຄາຕິບ* (Khatib) ເຊິ່ງເປັນຜູ່ໃຫ້ຄຳຕັກເຕືອນ ທີ່ກະກຽມໄວ້ ແລ້ວ (ເປັນພາສາ*ອາຫລັບ*) ໃນເວລາສູດມົນວັນສຸກ ກັບພວກ *ໃບລັນ* (Bilal) ຜູ່ມີຫນ້າ ທີ່ເອີ້ນປະຊາຊົນມາສູດມົນ. ພວກພະນັກງານເຫລົ່ານີ້ ບາງຄົນກໍເຄີຍໄປສະແຫວງບຸນທີ່ *ນະຄອນເມກະ* (Mecca) ມາແລ້ວ ແຕ່ສ່ວນໃຫຍ່ ຈະຮູ້ແຕ່ສິ່ງທີ່ໄດ້ຮຽນມາຈາກ *ປອນດອກ* (Pondok) ໃນຊ່ວງລະຍະຫລາຍປີ ຫລື ຮຽນຢູ່ກັບບ້ານເອງ. ຄວາມຮູ້ເທົ່ານີ້ ບວກໃສ່ກັບການຮູ້ຈັກພາສາ*ອາຫລັບ*ອີກແດ່ເລັກນ້ອຍ ພຽງພໍທີ່ຈະໃຫ້ຄົນຍອມຮັບພວກ ເຂົ້າເປັນ *ອຸນລາມະ* (Ulama) ຜູ່ມີຖານະທຽບເທົ່າ ຜູ່ມີບຸນ *ມາເລ, ອິນໂດເນເຊຍ ແລະ ອາຫລັບ* ທີ່ທ່ອງທຽວໄປມາທົ່ວພາກພື້ນ ໄດ້ຮັບຄວາມເຄົາຣົບນັບຖື ແລະບາງຄັ້ງ ກໍໄດ້ ຮັບການຂາບໄຫວ້ ຍ້ອນມີກິລິຍາທ່າທີຄືນັກບຸນ (ບາງເທື່ອ ອາດຕ້ອງເວົ້າວ່າເປັນພັນ ທະມິດກັບພວກພໍ່ຄ້າອີກ) ແລະຍັງມີຄວາມສາມາດໃນການລົງທຶນ. ສິດອຳນາດ ທີ່ຜູ່ ນຳທາງສາສະຫນາຕາມປະເພນີຊົມໃຊ້ແບບນີ້ ດຶງດູດຄົນໄດ້ດີ ເພາະເຫັນຜົນທັນທີ, ແມ່ນເກີດຈາກ ກະໂຕຊຸມຊົນຊາວນາເອງ ເຊິ່ງໃນນັ້ນ *ອຸນລາມະ* (Ulama) ກໍເປັນສ່ວນ ນຶ່ງ ເຊິ່ງເລື່ອງນີ້ບໍ່ຄ່ອຍຖືກແຊກແຊງຈາກພາຍນອກ ຍົກເວັ້ນ ໃນກໍລະນີທີ່ຊົນຊັ້ນປົກ ຄອງ ເກີດຄວາມສົນໃຈ ທີ່ຈະສວຍໃຊ້.

ເຖິງຢ່າງໃດກໍດີ ເປັນທີ່ປາກົດຈະແຈ້ງວ່າ ມີຄວາມສຳພັນລະຫວ່າງອຳນາດ ທາງໂລກ ແລະຊີວິດທາງສາສະຫນາ ຂອງປະຊາຊົນ. ຄວາມຈິງ ການທີ່ຈະເວົ້າເຖິງ ອຳນາດທາງໂລກ ໃນຄວາມຫມາຍນີ້ ເປັນການບໍ່ເຫມາະສົມ ເພາະຄວາມສຳພັນລະ ຫວ່າງຜູ່ປົກຄອງ ກັບຜູ່ຖືກປົກຄອງ ປະຕິເສດການຈັດແບ່ງຊົນຊັ້ນແບບງ່າຍດາຍ ແລະ ແນ່ນອນວ່າຄວາມສຳພັນອັນນີ້ ກວມລວມເຖິງຄວາມສະຫງົບສຸກທາງດ້ານຈິດໃຈ ແລະ

ຄວາມອຸດົມສົມບູນທາງດ້ານວັດຖຸຂອງລັດ ໃນນາມເອກະພົບນຶ່ງ. ຢູ່ໃນ *ລັດມາເລ* ຫລາຍລັດ ໃນແຫລມ *ມະລາຢູ* ແລະເກາະ *ສຸມາຕຣາ* ຕາເວັນອອກ ບາງຄັ້ງ ກໍມີພະນັກງານຝ່າຍກົດຫມາຍ ປະຈຳລັດ (Kathi) ເຮັດວຽກແທນຜູ່ປົກຄອງຊຶ່ງໃນດ້ານທິດສະດີແລ້ວຢ່າງຫນ້ອຍ ກໍມີຫນ້າທີ່ເປັນຜູ່ດູແລ *ສຸເຫຣ່ຳ* ທັງຫມົດໃນລັດ. ໃນ *ລັດເປຣັກ* (Perak) ແລະອາດຈະຢູ່ບ່ອນອື່ນນຳອີກ ມີຕຳແຫນ່ງນຶ່ງ ກົງກັບຕຳແຫນ່ງ ຂອງ *ມຸຟຕີ* (Mufti) ປະຈຳລັດ ຫລື ທີ່ປຶກສາດ້ານກົດຫມາຍ, ຜູ່ຮັບຫນ້າທີ່ຢູ່ໃນນີ້ ແມ່ນນຶ່ງໃນແປດຫົວຫນ້າລັດໃຫຍ່ໆ ທີ່ສືບທອດມາຕາມປະເພນີ, ເລົ່າກັນວ່າ ເຂົ້າຜູ່ນີ້ ຮ່ວມກັບຣັດຊະທາຍາດແຫ່ງບັນລັງ ຊົມໃຊ້ກົດຫມາຍ ສາສະຫນາເຫນືອສາມັນຊົນ. ສ່ວນອົງຣັດຊະທາຍາດເປັນຜູ່ກຳອຳນາດສານເຫນືອຊົນຊັ້ນສູງ. ຄວາມປະສົມກົມກືນເຂົ້າກັນ ລະຫວ່າງອຳນາດສາສະຫນາ ກັບອຳນາດທາງການເມືອງ ຕາມປະເພນີ ທີ່ສະເຫນີໃນທີ່ນີ້ ເປັນລັກສະນະທົ່ວໄປ ໃນພາກພື້ນ ທັງທີ່ພວມກ່ຕົວ ຫລື ທີ່ເປັນໄປແລ້ວນັ້ນ ໃນກາລະຕ່ໍມາ ໄດ້ກາຍມາເປັນ ສິ່ງສຳຄັນໃນທາງການເມືອງ.

ສິ່ງທີ່ເວົ້າມາແຕ່ຕົ້ນທັງຫມົດນັ້ນ ແມ່ນຄວາມພະຍາຍາມ ທີ່ຢາກຊີ້ໃຫ້ເຫັນວ່າ *ສາສະຫນາອິສລາມ* ໃນສະຕະວັດ ທີ 18 ຢູ່ອາຊີຕາເວັນອອກສຽງໃຕ້ນີ້ ເປັນລະບົບນຶ່ງທີ່ຫມັ້ນຄົງ ແລະສະຫງົບ. ດັ່ງນັ້ນ ຈຶ່ງເປັນເລື່ອງສຳຄັນທີ່ຈະຍ້ຳວ່າ ນອກຈາກຄວາມເຄ່ັງຕຶງທີ່ເກີດຂຶ້ນ ລະຫວ່າງ *ຊາວຊະວາ* ກັບ*ຊາວອິສລາມ* ໃນ*ຊະວາ*ພາກກາງ, ລະຫວ່າງພະນັກງານສາສະຫນາ ກັບ *ອຸລາມະ* ຄູສອນສາສະຫນາອິສຣະ, ແລະລະຫວ່າງການເປັນຜູ່ນຳທາງໂລກຕາມປະເພນີ ກັບການສະແດງອຳນາດທາງສາສະຫນາ, ໃນເວລານັ້ນ *ອິສລາມ* ກໍຍັງຄົງເປັນສາສະຫນາ ທີ່ພວມຂະຫຍາຍຕົວຢູ່. ຕົວຢ່າງ ໃນດອນ *ບໍນຽວ* (Borneo) ແລະ *ສຸມາຕຣາ* (Sumatra) ແລະແມ່ນແຕ່ໃນ *ຊະວາ* (Java) ເອງ ສັງຄົມ *ອິສລາມ ນິກາຍປາຊີເຊຍຣ໌* (Pasisir Islamic) ໄດ້ກ່ໍຕັ້ງກຸ່ມຂອງຕົນຂຶ້ນກຸ່ມນຶ່ງ ຊຶ່ງໃນນັ້ນ ປະຊາຊົນຮູ້ຈັກແຕ່ລະບົບສາສະຫນາ ແບບພື້ນເມືອງ ແລະບ່ໍຮູ້ຫຍັງຫມົດກ່ຽວກັບ *ສາສະຫນາອິສລາມ* ຫລື ການຕ່ໍຕ້ານ ການຮວມກຸ່ມໃຫຍ່. ການແຜ່ກະຈາຍ*ສາສະຫນາອິສລາມ* ແມ່ນຂະບວນການນຶ່ງ ທີ່ຕ້ອງເລັ່ງຟ້າວຂຶ້ນ ແລະໄດ້ກາຍເປັນລະບົບສັບສົນຫຍຸ້ງເຫຍີງຫລາຍຂຶ້ນ ໃນປີຕ່ໆມາ.

ປະເທດສະເປນ ເອົາ *ຟີລິບປິນ* ເປັນຫົວເມືອງຂຶ້ນ ເພື່ອສະແດງເຖິງຄວາມຈົງຮັກພັກດີ ຕໍ່*ພຣະເຈົ້າ*. ຄວາມປາຖະໜາອັນແຮງກ້າທີ່ຈະເຮັດໃຫ້ໜູເກາະດອນກາຍເປັນ *"ແຫລ່ງສະແດງສັດທາ"* ໄດ້ຊຸບຍ້ອມສະກຸາບັນທັງຫລາຍ ຂອງ *ສະເປນ* ໃຫ້ເຕັມໄປດ້ວຍຄວາມອາທອນຮ້ອນໃຈ ຂອງຄະນະນັກບວດ *ຄຣິຕ*. ສຳລັບ *ສະກຸາບັນກະສັດ ສະເປນ* ຄວາມຮຸ່ງເຮືອງໃນຊາດນີ້ ແລະຊາດໜ້າຈະປະສົບພົບເຫັນໄດ້ ກໍແຕ່ດ້ວຍການສຳເລັດພາລະກິດທາງສາສະໜາ ແລະໃນທາງທິດສະດີ ກໍບໍ່ອາດຈະມີເປົ້າໝາຍຢ່າງອື່ນແຕກຕ່າງໄປໄດ້ ລະຫວ່າງໂລກທາງສາສະໜາ ແລະໂລກຊີວິດນັກບວດແລະຂ້າຣາຊະການ ຕ້ອງອຸທິດຕົນ ເພື່ອຮັບໃຊ້ກະສັດ ແລະ*ພຣະເຈົ້າ*. ຜົນຮັບສັງລວມ ເຮັດໃຫ້ມີການກ້າວກ່າຍໜ້າທີ່ວຽກງານກັນ. ອານານິຄົມ ຈະບໍ່ມີທາງ ແລະຈະບໍ່ສາມາດດຳລົງຄົງຕົວຢູ່ໄດ້ ໂດຍປາສະຈາກນັກບວດ ແລະເມື່ອໜົດຍຸກປົກຄອງຂອງ *ສະເປນ* ແລ້ວ ປະເທດນີ້ ກໍມີພາບພົດເປັນລະບົບ *ຄະນະສົງໂຣມັນຄາໂທລິກ* ລະບົບໜຶ່ງ. ນັກບວດ ເຊິ່ງແຕ່ເດີມ ມາເພື່ອເຜີຍແຜ່ສາສະໜາ ເປັນຄົນ*ສະເປນ*ພວກດຽວ ທີ່ປາຖະໜາດຳລົງຊີວິດຢູ່ຊົນນະບົດ ໄປຈົນຕະຫລອດຊີວິດ ນັກບວດເຫລົ່ານັ້ນ ໃຊ້ກົດໝາຍ *ສະເປນ* ແລະຫລໍ່ຫລອມຄ່ານິຍົມຂອງພວກຊາວນາ *ອິນດິໂອ* (Indio) ດ້ວຍວ່າ ຜົນຈາກການຕັດສິນໃຈແຕ່ຕົ້ນໆ ຂອງສະພານັກບວດ *ຊິນອດ* (Synod) ແຫ່ງ *ນະຄອນ ມະນີລາ* ໃນປີ ຄ.ສ. 1580 ນັ້ນ ໄດ້ເຮັດໃຫ້ນັກບວດຮຽນຮູ້ພາສາທ້ອງຖິ່ນ ແລະ ສັ່ງສອນດ້ວຍພາສາທ້ອງຖິ່ນທຳມະດາຫລາຍກວ່າ *ພາສາສະເປນ* ຍົກເວັ້ນ ຢູ່ໃຈກາງເມືອງ ທີ່ມີຜູ້ໃຊ້ພາສາ *ປາໂຕອິສ* (Patois) ທີ່ເອີ້ນວ່າ *ຊະບະກະໂນ* (Chabacano) ປາກເວົ້າ, ດ້ວຍວ່າຊາວ *ສະເປນ* ສ່ວນຫລາຍ ບໍ່ສາມາດສື່ສານກັບຊາວນາທ້ອງຖິ່ນ *ອິນດິໂອສ* (Indios) ໄດ້ນອກຈາກ ຈະອາໄສພວກນັກບວດ.

ສຳພັນທີ່ແທ້ຈິງ ລະຫວ່າງ ສາສະນະຈັກ ກັບອານາຈັກ ສະຫລັບຊັບຊ້ອນຫລາຍ ດ້ວຍພຣະຣາຊະໂອງການ ຂອງ *ພຣະສັນຕະປາປາ* ທີ່ປະກາດອອກເປັນລະຍະໆນັ້ນ ເຈົ້າຊີວິດ *ສະເປນ* ທຸກພຣະອົງ ໄດ້ຮັບສິດ ໃນການອຸປະກຳ ການເຜີຍແຜ່ສາສະໜາ ຂອງຄະນະ *ມິດຊັນນາຣີ* (Missionary) *ສະເປນ*. ເພື່ອເປັນການຕອບແທນເຈົ້າຊີວິດ ກໍຈະຕອບສະໜອງເລື່ອງການຍົນສົ່ງ, ພຣະຣາຊະທານເງິນເດືອນໃຫ້ແກ່ນັກບວດທຸກປີ ແລະຮັບປະກັນການອຸ້ມຊູສາສະນະຈັກ. ຄະນະສົງ ກາຍເປັນພະນັກງານຂອງ

ລັດກະບານ ທີ່ໄດ້ຮັບເງິນເດືອນປະຈຳ ແລະເຈົ້າຊີວິດ ກໍສາມາດເຂົ້າໄປຂັດຂວາງການ ຕັດສິນຄະດີ ຂອງຄະນະສົງ ດ້ວຍການຍິນຍອມຂອງຄະນະນັກບວດ ກ້າມັນໄປຂັດຜົນປະ ໂຫຍດຂອງຝ່າຍເຈົ້າຊີວິດ ການຍິນຍອມແບບນີ້ ຂະຫຍາຍກວ້າງອອກ ດ້ວຍການໃຫ້ ຄວາມຫມາຍຢ່າງເປັນທາງການ ໂດຍຄະນະລູກຂຸນຂອງ *ສະເປນ* ເຮັດໃຫ້ເຈົ້າຊີວິດ ມີພະນັກງານ ສອງປະເພດ ຄື ພະນັກງານທາງສາສະນະຈັກ ແລະພະນັກງານທາງ ອານາຈັກ, ໃນຂະນະທີ່ລະບົບນີ້ ຍັງຄົງໃຊ້ໄດ້ຢູ່ໃນລະຫວ່າງຍຸກທຳອິດ ທີ່ *ສະເປນ* ມາ ປົກຄອງ ມັນໄດ້ກາຍເປັນ ສິ່ງທີ່ຫນ້າຢ້ານກົວໄປ ຍ້ອນວ່າ ຜົນປະໂຫຍດຂອງ *ກຸງໂຣມ* (Rome) ແລະ *ກຸງມາດຣິດ* (Madrid) ເຕີບໃຫຍ່ ໄປຄົນລະທາງ. ຕົກມາເຖິງສະຕະວັດ 19 ການສົມທົບຜົນປະໂຫຍດ ທີ່ເຄີຍມີມາແຕ່ກ່ອນ ກໍຍຸຕິລົງ.

ຄວາມເຄັ່ງຕຶງ ລະຫວ່າງອານາຈັກ ແລະສາສະນະຈັກ ຮຸນແຮງຂຶ້ນອີກ ຍ້ອນ ການຕໍ່ສູ້ ລະຫວ່າງ ລະບົບແບ່ງຊັ້ນເຂດປົກຄອງ ຂອງເຈົ້າອາວາດ ກັບລະບຽບການ ທາງສາສະຫນາ. ໃນຂັ້ນທຳອິດ ຢູ່ *ປະເທດຟີລິບປິນ* ພວກນັກບວດ *ພຣະຟຼີອາຣ໌* (Friars) ໄດ້ຮັບສິດຈາກ *ພຣະສັນຕະປາປາ ອາດຣຽນ ທີ 6* (Pope Adrian VI) ຮັບເອົາຄົນທ້ອງຖິ່ນເຂົ້າໃນການປະກອບພິທີສາບານຕົນ ເຂົ້າເປັນ*ຄຣິຕສາວົກ* ແລະ ເຮັດໃຫ້ວັດພົ້ນຈາກການດູແລຂອງພວກເຈົ້າອາວາດທ້ອງຖິ່ນ. ເມື່ອເກີດຄວາມຂັດແຍ່ງ ກັບປະຊາຊົນຜູ່ເຂົ້າສາສະຫນາແລ້ວ, ເຈົ້າອາວາດປະຈຳເຂດປົກຄອງນຶ່ງໆ (ເອີ້ນຕາມ ພາສາທາງໂລກ) ຈະຕ້ອງໄດ້ຮັບວັດ ທີ່ຍັງບໍ່ທັນໄດ້ມອບຫມາຍໃຫ້ພຽງຢ່າງດຽວເທົ່ານັ້ນ ແລະກໍຍ້ອນວ່າ ທົ່ວທັງ *ຟີລິບປິນ* ນັ້ນ ຖືກແບ່ງອອກເປັນເຂດປົກຄອງຕ່າງໆ ດັ່ງນັ້ນ ຈຳນວນວັດທີ່ບໍ່ທັນໄດ້ມອບຫມາຍໃຫ້ ເຈົ້າອາວາດປະຈຳເຂດ (Bishop) ຈຶ່ງມີ ເຫລືອຢູ່ຫນ້ອຍດຽວ. ໃນແງ່ທິດສະດີ, ນັກບວດຈະຕ້ອງເປັນຜູ ລະດົມເອົາຄົນເຂົ້ານັບຖື ສາສະຫນາ ແລະປ່ຽນໂອນອຳນາດ ໄປໃຫ້ເຈົ້າອາວາດປະຈຳເຂດ, ສຳເລັດວຽກງານ ນີ້ແລ້ວ ກໍຍ້າຍໄປຢູ່ເຂດໃຫມ່. ຍິ່ງໄປກວ່ານີ້ ສະພາແຫ່ງ *ແທຼນ* (Trent) ກໍໄດ້ພະຍາ ຍາມຈຳກັດຂອບເຂດອິສຣະພາບ ຂອງນັກບວດໃນທົ່ວໂລກ ດ້ວຍການອອກກົດລະບຽບ ວ່າ *ເຈົ້າອາວາດປະຈຳເຂດ ບິຊອບ* (Bishop) ບໍ່ມີສິດໄປກວດກາວັດໃດໆໃນເຂດປົກ ຄອງຂອງຕົນ. ພວກເຈົ້າອາວາດຢືນຢັນວ່າ ພວກຕົນຕ້ອງມີສິດ ທີ່ຈະກວດກາແລະ ຄວບຄຸມກິດຈະການຂອງວັດ ແລະ ນັກບວດທັງຫມົດ ບໍ່ວ່າຈະເປັນນັກບວດທຳມະດາ

ຫລື ພຣະປະຈຳເຂດ ສ່ວນພວກນັກບວດ ກໍອ້າງເຫດຜົນຄືນວ່າ ພວກຕົນມີລະບົບແບ່ງ ຊັ້ນປົກຄອງ ຂຶ້ນກົງໄປຮອດ *ພຣະສັນຕະປາປາ* ແລ້ວ.

ສິ່ງທີ່ເຮັດໃຫ້ບັນຫາສັບສົນຂຶ້ນ ກໍຄື ພຣະມະຫາກະສັດ ຕ້ອງອາໄສນັກບວດ ໃນ ການປົກຄອງອານານິຄົມ ຍ້ອນວ່າ ໂດຍທົ່ວໄປ ຢູ່ແຜ່ນດິນທີ່ຫ່າງໄກຈາກຝັ່ງທະເລນີ້ ກໍມີແຕ່ *ສະເປນ* ພວກດຽວເທົ່ານັ້ນ ແລະ ພວກເຊື້ອເຈົ້າກໍຄົ້ນພົບວ່າ ມີແຕ່ພວກນັກບວດ ເທົ່ານັ້ນ ທີ່ປາກະຫນາຈະຢູ່ແລະຕາຍຢູ່ຫນີ້, ພຣະມະຫາກະສັດ ຈຶ່ງບໍ່ປາກະຫນາ ທີ່ ຈະແບ່ງແຍກ ນິກາຍຕ່າງໆ. ແຕ່ລະເທື່ອ ທີ່ພະນັກງານຂອງ *ບິຊອບ* ໃນ *ກົງມະນິລາ* ພະຍາຍາມບັງຄັບໃຊ້ສິດທິກວດກາ ນັກບວດ ກໍຂູ່ວ່າຈະລາອອກທັງຫມົດ. ໃນປີ 1751 ຫລັງຈາກໄດ້ພະຍາຍາມຢູ່ເກືອບສອງສະຕະວັດ ພະນັກງານຂອງ *ບິຊອບ* ເຮັດໄດ້ແຕ່ 142 ວັດເທົ່ານັ້ນ ໃນຈຳນວນທັງຫມົດ 569 ວັດ ອັນສຳຄັນກວ່ານີ້ ກໍຄື ພວກພະນັກ ງານເຫລົ່ານີ້ ກໍທຸກຈົນແລະມີຈຳນວນຫນ້ອຍ ເມື່ອທຽບກັບພວກນັກບວດ ຂອງຄະນະ ສົງຢູ່ສູນກາງ.

ນັກບວດຊາວພື້ນເມືອງ *ອິນດິໂອ* (Indio) ເປັນວິທີແກ້ບັນຫາທີ່ປະຈັກແຈ້ງ ສຳ ລັບພະນັກງານຂອງ *ບິຊອບ* (Bishop) ທີ່ບໍ່ສາມາດຍົບຍອາຍ ຄະນະສົງຂອງ *ບິຊອບ ສະເປນ* ໃຫ້ຜ່ານຜ່າຄວາມລຳບາກ ທີ່ເກີດຈາກການໂຍກຍ້າຍ ພະນັກງານຝ່າຍໂລກ ບາງຄົນ ເຫັນວ່າຄະນະສົງ ເປັນຝ່າຍໄດ້ປຽບ ໃນການແຕ່ງຕັ້ງ *ອິນດິໂອ* (Indio) ເພາະ ເປັນວິທີການຫລຸດຜ່ອນອຳນາດ ຂອງຝ່າຍສົງລົງ ພວກ *ພຣະຟຼີອາຣ໌* (Friars) ໄດ້ຍັດ ຂວາງການເຄື່ອນໄຫວນັ້ນຢ່າງຮຸນແຮງ ຕົວຢ່າງ ເຊັ່ນ *ເຟຣ໌ ກາສປາຣ໌ ເດ ເຊັນ ໂອກຸສ ຕິນ* (Fray Gaspar de san Augustin) ຮູ້ສຶກວ່າ *ພຣະອິນດິໂອ* (Indio) ທີ່ເຂົ້າມາ ບວດ ເຮັດໄປຢ່າງນັ້ນ ບໍ່ແມ່ນຍ້ອນວ່າ ເຂົາມີສັດທາ ຈູງໄປສູ່ສະພາບຊີວິດທີ່ດີກວ່າ ແຕ່ ເພາະມີທ່າເຫນືອກວ່າຢ່າງຫລວງຫລາຍ ແລະເກືອບບໍ່ມີຂອບເຂດໃດໆ ສຳລັບເຂົາ ກ້າ ຫາກວ່າ *ອິນດິໂອ* ຜູ້ນັ້ນ ເປັນຄົນສາມາດອອດເກັ່ງ ແລະ ເມີນເສີຍກັບເລື່ອງຍິບຍ່ອຍ ແລ້ວຈະເກີດຫຍັງຂຶ້ນ ເມື່ອເຂົາຂຶ້ນສູ່ ສະຖານະພາບທີ່ສູງສົ່ງ ຢ່າງນັ້ນ ? ການຕໍ່ຕ້ານ ຍັດຂວາງ ຂອງ *ພຣະຟຼີອາຣ໌* ມີຜົນກະທົບໃສ່ ການທະວີຈຳນວນ ຂອງ *ພຣະອິນດິໂອ* ເມື່ອປຽບໃສ່ຈຳນວນຂອງພຣະ ທີ່ຝຶກອົບຮົມມາໂດຍຄະນະສົງ ເພື່ອມາເຮັດຫນ້າທີ່ຜູ່ ຊ່ອຍ ດັ່ງນັ້ນ *ພຣະອິນດິໂອ* ຈຶ່ງມີຄວາມຮູ້ຈາກການສຶກສາ ພຽງແຕ່ເລັກນ້ອຍເທົ່ານັ້ນ

ຄືພໍແຕ່ສຳລັບປະຕິບັດໜ້າທີ່ຕ່ຳກວ່າ ແຕ່ບໍ່ພຽງພໍ ເພື່ອຈະກາຍເປັນຜູ່ມີຄວາມຮູ້ທາງ ສາສະໜາ.

ຄວາມຂັດແຍ່ງກັນລະຫວ່າງທາງໂລກກັບສາສະໜາ ຕັ້ງແຮກຂຶ້ນ ໃນຖານະ ເປັນການຕໍ່ສູ້ໃນດ້ານບໍລິຫານ ພາຍໃນອົງການສາສະໜາ ເຖິງຢ່າງໃດກໍດີ ບາງເທື່ອ ບາງທີ ມັນກໍລຸກລາມໄປເປັນຄວາມເຄັ່ງຕຶງລະຫວ່າງ *ພຣະຟຼີອາຣ໌* (Friars) ເຊິ່ງ ຍັງຄົງເປັນ*ຊາວສະເປນ* ເກືອບທັງໝົດ ເພາະຝ່າຍ *ພຣະບິຊອບ* ທີ່ບໍ່ແມ່ນຄົນຂາວ ພວມຕື່ມຈຳນວນຫລາຍຂຶ້ນ. ບັນຫານີ້ໄດ້ກາຍເປັນໜັດໄຟ ແຫ່ງລັດທິຮັກຊາດ ຂອງ *ຟີລິບປິນ* ໃນສະຕະວັດ ທີ 19. ເນື່ອງຈາກ ນັກບວດເປັນເຄື່ອງມືສຳຄັນ ຂອງລັດກະບານ, ການຕໍ່ສູ້ເພື່ອຄວາມສະເໝີພາບຂອງ *ພຣະອິນດິໂອ* (Indio) ຈຶ່ງໄດ້ລົ້ນຂ້າມເຂດຈຳກັດ ຂອງຄະນະສົງອອກໄປ. *ພຣະມະຫາກະສັດສະເປນ* ແລະ *ສາສະນະຈັກໂຣມັນຄາໂທລິກ* ກໍແຕກແຍກອອກຈາກກັນ ແຕ່ຍ້ອນທັງສອງ ເຄີຍສະໜິດຕິດພັນກັນມາແໜ້ນໜຽວ ການແຍກຈາກກັນຈຶ່ງບໍ່ງ່າຍດາຍເລີຍ.

ແນ່ນອນວ່າ ສາສະໜາສຳຄັນໃນໂລກ ເຊິ່ງໄດ້ຄອບຄອງຊີວິດທາງສາສະໜາ ຂອງຊາວອາຊີຕາເວັນອອກສຽງໃຕ້ ໄວ້ຢ່າງຈະແຈ້ງ ເມື່ອສະຕະວັດແລ້ວໆນັ້ນ ຄົນທ້ອງ ຖິ່ນ ບໍ່ໄດ້ຍອມຮັບເອົາໜົດທຸກຢ່າງທຸກແນວ ແຕ່ໄດ້ດັດປ່ຽນໄປຫລາຍຢ່າງ ເພື່ອໃຫ້ ເຂົ້າກັບຄວາມເຊື່ອດັ້ງເດີມທີ່ມີຢູ່ໃນທ້ອງຖິ່ນຂອງຕົນ ທີ່ຄວາມເຊື່ອເຫລົ່ານັ້ນ ຢັ່ງຮາກ ໄວ້ແລ້ວ. ໃນປະເທດ *ຟີລິບປິນ ສາສະໜາຄຣິຕ ນິກາຍຄາໂທລິກ* ໄດ້ຮັບການຮອງຮັບ ດ້ວຍຄວາມຊື່ນຊົມ ແຕ່ມີການຄັດຈ້ອນ ຈາກພວກຊາວນາທົ່ງຮາບ ເຊິ່ງມາຢູ່ໃຕ້ການ ປົກຄອງ ຂອງ *ສະເປນ* ເມື່ອສະຕະວັດ ທີ 16 ແລະ 17. *ລັດທິສາສະໜາອິນດູ* ຍຸກຕົ້ນໆ ຂອງ *ຊະວາ* ແລະບ່ອນອື່ນໆ ໃນ *ອິນໂດເນເຊຍ* ເຮັດໃຫ້ມີການຮັບເອົາ *ສາສະໜາ ອິສລາມ* ນິກາຍຕ່າງໆ ໄດ້ງ່າຍກວ່າການຮັບເອົາ *ສາສະໜາຄຣິຕ* ໃນຮູບແບບຕ່າງໆ ຕາມທີ່ບັດຍັດອອກເປັນກົດໝາຍ. ພິທີກຳ(ການບູຊາ) ແບບ*ພາມ* ຍັງມີຄວາມສຳຄັນ ຢູ່ໃນຣາຊະສຳນັກ *ສະຫຍາມ* ແລະ*ກຳພູຊາ* ມາເປັນເວລາເຫິງນານ ແມ່ນແຕ່ຫລັງ ຈາກ ທີ່ປະຊາຊົນ ກັບຜູ່ປົກຄອງລັດ ໄດ້ຫັນມານັບຖື *ພຸທະສາສະໜານິກາຍເຖຣະວາດ* ແລ້ວກໍຕາມ. ເມື່ອແຜ່ລາມເຂົ້າໄປເຖິງດິນແດນສາມຫລ່ຽມແມ່ນ້ຳຂອງ ໃນພາກໃຕ້ *ຫວຽດນາມ* ນັ້ນ *ພຣະພຸທະສາສະໜານິກາຍມະຫາຍານ* ຂອງ *ຫວຽດນາມເໜືອ* ໄດ້ ປະເຊີນໜ້າແລະຄ່ອຍໆຮວມຕົວເຂົ້າ ກັບ *ພຸທະສາສະໜາເຖຣະວາດ* ຂອງປະຊາຊົນ

ຊາວ *ກຳພູຊາ* ທີ່ຢູ່ຫັ້ນແລ້ວ.

ດ້ວຍມີຄວາມສຳຄັນເທົ່າໆກັນ ສາສະໜາໃຫຍ່ທັງສີ່ຂອງສະຕະວັດ ທີ່ຫາກໍ ຜ່ານໄປ ຢູ່ອາຊີຕາເວັນອອກສຽງໃຕ້ ໄດ້ເຮັດໃຫ້ ພື້ນຖານຄວາມເຊື່ອທາງສາສະໜາ ທີ່ຈ່ອງດຶງຈິດໃຈປະຊາຊົນຢູ່ແຕ່ເກົ່າອ່ອນແຮງລົງ. ການນັບຖືຜີ ອັນເປັນຄວາມເຊື່ອຖືທີ່ ສະຫລັບສັບຊ້ອນຫລາກຫລາຍ ໂດຍມີຈຸດສຸມຢູ່ນຳການດ້ຳວິນຍານ ຂອງຍາດພີ່ນ້ອງທີ່ ລ່ວງລັບໄປແລ້ວ ຮວມທັງບັນດາຜຶ້ດພັນ ສັດລ້ຽງ ທີ່ມີຄວາມສຳຄັນທາງເສດຖະກິດ ແລະລັກສະນະຂອງກິ່ນຖານນຳນັ້ນ ບັນຊາໂລກຂອງຊຸມຊົນຊາວນາ ທີ່ເຮັດນາຫ່ວານ ສ່ວນໃຫຍ່ອາໄສຢູ່. ພວກໝໍຜີເປັນຄົນພິເສດ ທີ່ມີພອນສະຫວັນ ໃນການສື່ສານກັບວິນ ຍານໄດ້ ເຮັດໃຫ້ຄອບຄົວທີ່ໄດ້ເຮັດຜິດຮີດ ຕິດຕໍ່ກັບວິນຍານບັນພະບຸຣຸດ ທີ່ພວມໂກດ ຮ້າຍ ແລະສາມາດບອກກ່າວເຖິງ ສິ່ງທີ່ຕ້ອງເອົາມາລ້ຽງດ້ຳຜີ ທີ່ເໝາະສົມ. ພວກ ເຂົ້ายັງສາມາດສື່ສານກັບວິນຍານ ຂອງເດັກນ້ອຍທີ່ເຈັບປ່ວຍ ແລະບອກວິທີການປິ່ນ ປົວແລະເປັນເຈົ້ າການ ໃນການປະກອບພິທີທາງການປູກຝັງ ແລະເຮັດຮີດຄອງອື່ນໆ. ຫລາຍຄົນມີເວດມົນ ແລະເປັນທັງໝໍໄລ່ຜີນຳ.

ແຕ່ມາຮອດປັດຈຸບັນ ການນັບຖືບູຊາຜີ ກໍຍັງມີຄວາມສຳຄັນໃນໝູ່ປະຊາຊົນ ສ່ວນໃຫຍ່ ຢູ່ໃນຫລາຍອານາຈັກຂອງພາກພື້ນ ທີ່ໂລກແຫ່ງສາສະໜາ ໄດ້ເຂົ້ ามาຕັ້ງ ໜັ້ນຢູ່ແລ້ວ. ທົ່ວທຸກແຫ່ງໃນອາຊີຕາເວັນອອກສຽງໃຕ້ ໃນຈິດໃຈຂອງຊາວນາ ແລະສະ ມາຊິກຂອງຊົນຊັ້ນສູງ *ສາສະໜາພຸດ ສາສະໜາອິສລາມ* ແລະ *ສາສະໜາຄຣິຕ* ໄດ້ປະສົມປົນເຂົ້ ากับการนับถือผีย่างกลมกลืน. ພຣະສົງຝ່າຍເຖຣະວາດ ໃນບ້ານຊົນນະ ບົດ ເຂດທົ່ງຣາບຂອງ *ພະມ້ า ສະຫຍາມ* ແລະ *ກຳພູຊາ* ໄດ້ໃຫ້ຄວາມຊ່ວຍເຫລືອຊາວ ບ້ານ ແບບດຽວກັນກັບພວກໝໍຜີ ໃນເຂດພູດອຍເຮັດ ໂດຍໃຫ້ຄວາມສຳຄັນ ອັນດັບນຶ່ງ ແກ່ພິທີກຳຫາງ *ສາສະໜາສະພຸດ* ຢູ່. *ນິກາຍເກບາຕິນາ* (Kebatinan) ຕ່າງໆ ຂອງ *ຊະວາ* ໃນສະຕະວັດທີ 20 ມີວິທີປະຕິບັດເປັນຂອງຕົນເອງ ໄດ້ນຳໄປສູ່ການ ກຳເນີດລັດ ທິເລີກລັບ *ສຸຟີ* ຄຽງຄູ່ກັບການນັບຖື ໂລກວິນຍານຂອງ *ຊະວາ* ເດີກດຳບັນ. *ພຣະພຸທະ ສາສະໜາແບບຮິນດູ* (Hindu-Buddhism) ໃນດອນ *ບາຫລີ* ເອງ ກໍໄດ້ປະສົມກົມກືນ ເຂົ້ ากับการนับถือผี ອັນລະອຽດສັບສົນເປັນຢ່າງດີ.

ບົດທີ 6: ຊາວຄ້າຂາຍ ແລະ ຕະຫລາດ

ໃນສະຕະວັດ ທີ 18 ບ້ານເປັນຫົວໜ່ວຍ ສັງຄົມອັນທຳອິດ ໃນຊີວິດຂອງ ປະຊາຊົນ ເຊັ່ນດຽວກັບທີ່ເປັນຢູ່ໃນປັດຈຸບັນ ໃນອາຊີຕາເວັນອອກສຽງໃຕ້. ບ້ານເຫລ່ານີ້ ມີການຕິດຕໍ່ກັບອົງກອນທີ່ສູງຂຶ້ນໄປ ທັງດ້ານການປົກຄອງແລະວັດທະນະທຳ ໂດຍຜ່ານ ນາຍບ້ານ ເຈົ້າແຂວງ ຫົວໜ້າ ແລະ ພຣະສົງຫລືນັກບວດ. ເຖິງຢ່າງໃດກໍດີ ນອກຈາກ ຄວາມສຳພັນເຫລ່ານີ້ແລ້ວ ບາງເທື່ອກໍຍັງມີຄວາມສຳພັນຍິ່ງໃຫຍ່ກວ່ານີ້ອີກ ຄືຄວາມ ສຳພັນທາງດ້ານເສດຖະກິດ ທີ່ອາດຂະຫຍາຍຕົວອອກໄປເຖິງ ຕະຫລາດທ້ອງຖິ່ນໃກ້ໆ ຫລືໄປຮອດທ່າເຮືອຊາຍຝັ່ງທະເລ, ຮອດເມືອງຫລວງ ຫລືແມ່ນແຕ່ຂ້າມທະເລໄປກໍໄດ້. ເປັນທຳມະດາທີ່ຈະເຫັນວ່າ ຄວາມສຳພັນທາງເສດຖະກິດ ເປັນການໄຫລວຽນຂອງ ເຄື່ອງອຸປະໂພກບໍລິໂພກ ຫລືເປັນຕາໜ່າງຕິດຕໍ່ທາງການຄ້າ, ການຄົ້ນຄວ້າເມື່ອຫມໍ່ໆ ນີ້ ໄດ້ໃຫ້ຂໍ້ມູນທີ່ເປັນປະໂຫຍດກ່ຽວກັບສິ່ງທີ່ກ່າວມາ. ຢ່າງໃດກໍດີ ຂໍ້ມູນເຫລ່ານີ້ ອາດ ຄ້າຍຄືວ່າເປັນຄວາມສຳພັນຂອງກຸ່ມຄົນແລະບຸກຄົນເອກະເທດ ໂດຍມີການແລກປ່ຽນ ສິນຄ້າແລະບໍລິການ ເປັນປັດໄຈສຳຄັນ ແລະເປັນເຫດຜົນສຳລັບກິດຈະກຳ ທີ່ມີລັກສະ ນະການເມືອງ ແນວໃດແນວນຶ່ງ.

ໃນຖານະເປັນຫນ່ວຍເສດຖະກິດນຶ່ງ, ຄວາມກັງວົນອັນທຳອິດຂອງບ້ານ ຈຶ່ງ ແມ່ນການຜະລິດກຸ້ມຕົນເອງໃນດ້ານທັນຍະພືດ ເຊິ່ງເປັນສິ່ງຈຳເປັນສຳລັບ ຊີວິດການ ເປັນຢູ່ຂອງບ້ານ. ຄວາມຕ້ອງການຂັ້ນຕ່ຳສຸດທາງດ້ານເສດຖະກິດ ກໍຄືຕ້ອງຜະລິດເຂົ້າ ໃຫ້ກຸ້ມກິນ. ເຖິງຢ່າງໃດກໍດີ ບໍ່ມີບ້ານໃດອກທີ່ຢູ່ໄດ້ດ້ວຍການຜະລິດແຕ່ເຂົ້າຢ່າງດຽວ ເພາະທຸກຊີວິດຕ້ອງການໂປຣຕີນຈາກ ສັດ ຜັກ ຫມາກໄມ້ ເຄື່ອງປຸງແຕ່ງອາຫານ ແລະເກືອ ເພື່ອໃຫ້ຂອງກິນທີ່ບໍລິໂພກໃນແຕ່ລະມື້ມີຄວາມກ້ຳເກິ່ງພໍດີ. ສິ່ງເຫລ່ານີ້ ເກືອບ ທັງຫມົດ ສາມາດຜະລິດໄດ້ໃນຖານະເປັນ ຜົນຜະລິດສຳຮອງ ແຕ່ກໍບໍ່ສະເຫມີໄປ ໃນເວ ລາຕ້ອງການ ຫລືຜະລິດໄດ້ຢ່າງມີປະສິດທິຜົນ ຫລືພໍຫາໄດ້ໃນທ້ອງຖິ່ນ ເຊັ່ນ ເກືອ ເປັນ ຕົ້ນ. ຍິ່ງໄປກວ່ານີ້ ຜົນຜະລິດຈາກໂຮງງານ ເຊັ່ນເຄື່ອງເຫລັກແລະເສື້ອຜ້າ ກໍຕ້ອງໄປ ຫາມາຈາກບ່ອນອື່ນ, ດັ່ງນັ້ນ ເພື່ອຄວາມສະດວກ ແລະ ດ້ວຍຄວາມຈຳເປັນ ພວກຊາວ ນາຈຳຕ້ອງຊອກຫາການຕະຫລາດທ້ອງຖິ່ນ ແລະການແລກປ່ຽນ ແບບບໍ່ເປັນທາງ

ภาบเพื่อให้ได้มาเຊິ่งสะบຽงอาหาบ ແລะເຄື່ອງໃຊ້ອື່ນໆທີ່ຈຳເປັນ ສຳລັບภาบ ดຳลົงชีวิด.

ตามคอามจิงแล้อ ทັ้งบ้านชาอปะมิง ทັ้งบ้านผะลิดหัดถะกำ บ่มิเอ้ำ ก้มกินลืกับหลายๆบ้านชาอบาในเขดผูดอย เอ้ำทັ้งหมิดจึ่งผะลิดเຄื่องใช้สอย ที่บ้านปูกเอ้ำต้องภาบ. ตามทำมะดาแล้อ บ้านชาอปะมิง เอ้ำปาไปแลกป่ຽบ เอ้ำเอ้ำ นำบ้านปูกเอ้ำที่ยู่ไกจากชายฝั่งทะเล, โดยอ็บเอ้ำปาสิดๆหลืปาแห้ง ภะปิ (ปาแดภ) ใส่เรืออึ้นไปตามสายน้ำ หลื เลาะตามชายฝั่ง ไปหาบ้านอื่นๆ หลืมุ่งหน้าสู่ตะหลาดปิภาะติ หลืตะหลาดรับสิ่ง. บ้านหัดถะกำ อาดจะใช้ ภอรุบง็อบันทุภเຄื่องจักสาบ หม้ไห หลื ผ้าแผ ไปอายตามช็บนะบ็ด หลืใส่ เรือยาอพาล่องไปตามละดูภาบ พายหลังภาบเกับก่ຽอ เมื่อถะหบินและหาง ย่างๆ ยังพ่ไปมาได้ และเอ้ำในเล้ำก่ยังมิหลายยู่. ในคุ้มตะหลาดของเมืองๆ ในเอลาล็งตะหลาดบ้าบ หลื ตะหลาดนัดปะจำปิ หลื ตะหลาดเสลิตามแคม หางๆ ชาอบาสามาดแลกไก่กับเຄื่องจักสานดิๆ หม้ไห เกือ หลื หมากผัด. ชิ้บ ง็อ หลือึ้นคอายเก้ำ, อาดนำไปอายเอ้ำเงิน ซื้คำไอ้ เป้นล่าดองแต่งเอ้ำลูกใพ้ หลือเป้นธางอับแภ่ยาแม่ยาบๆ. โดยสะเพาะในแผ่นดินใหย่นี้ มักจะเป้นภาบ ค้าละหว่างพอกแม่ยิง เຊິ่งม่อบนำภาบโอ้ลิมนิบหาว่าขอับกับ และจัดหาคู่ แต่งดองให้ลูกหลาบ. มันเป้นภาบค้าที่สำคับ แต่ว่ายดายย่างนึ่ง, ได้ธับคอาม ภะทิบแต่พຽงเลักน้อยจากลาคาทางภาบ และ ของสากับ หลือจากพาอะสิ่ง คามและคอามบ่มิสะเภยละพาบ. บ่มิบ้านใดที่จะยู่ได้ย่างบ่มิภาบค้าแบบนี้.

คຽงคู่กับภาบค้าที่แผ่ขะหยายนี้ ยังมิภาบค้าละหว่างทิ่งธาบกับ ผูดอยเขดในอิก. ภาบค้าขายแบบนี้ หน้าจะได้ธับภาบพัดทะบาให้ดิที่สุด ตะหลอดลอางยาอ ขอางชายฝั่งทะเล *หอรดบาม* บ่อบที่ ไม้จิง ไม้ไผ่ และถั่งจาก เขดผูดอย ก็กบำไปแลกป่ຽบกับ น้ำปา ปาแห้ง และ หมากบาอ จากเขดทิ่ง พຽง. โดยทั่อไป พอกยู่ผูดอยล็งมาค้าขายแลกป่ຽบแบอนี้ ยู่ในตะหลาดช็บ นะบ็ดทิ่งพຽง เຊິ่งล็งเป้นละยะหุกๆสามมื้ หาหลือสิบหามื้. ภาบค้าอาดจะสับ สิบหลายอึ้บ ติอย่าง เช่บ เมื่อพอก *ทะเร* (Hre people) ใบ *หอรดบามภาง* เอ้ำมารับบิดบาดเป้นพ่ค้าคิบภาง ละหว่าง คิบ *หอรดบาม* กับพอก *เขุดาง*

(Sedang) ແລະ *ບາໜາຣ* (Bahnar) ທີ່ຢູ່ຢ່າງໂດດດ່ຽວ ເຖິງວ່າ *ຊາວຫວຽດນາມ* ເອງຍັງຄົງເປັນພໍ່ຄ້າສັນຈອນຂາຍເຄື່ອງ ໂດຍສະເພາະເກືອໃຫ້ພວກພູດອຍຢູ່.

ເກືອ ເປັນສິນຄ້າສຳຄັນທີ່ສຸດ ໃນບັນດາສິນຄ້ານຳເຂົ້າສູ່ບ້ານເຂດໃນ ຄື ເປັນເຄື່ອງບໍລິໂພກຢ່າງນຶ່ງ ທີ່ຢູ່ເໜືອກວ່າ ກາຍເປັນສິນຄ້າແລກປ່ຽນຂອງ ທ້ອງຖິ່ນອ້ອຍຕ້ອຍ. ຍົກເວັ້ນໃນບາງບ່ອນ ທີ່ເກືອເປັນເຄື່ອງບໍລິໂພກເຂດຊາຍຝັ່ງ ຜະລິດແບບປ່ອຍໃຫ້ນ້ຳເຫີຍອອກຈາກ ຫມໍ້ກະທະຫມໍ້ຍໃຫຍ່ ເຊິ່ງເຮັດໄວ້ຕາມລຽບຝັ່ງທະເລເຊັ່ນຢູ່ໃນເກາະ *ມາດຸຣາ* (Madura) ນອກຝັ່ງຕາເວັນອອກ ຂອງ *ຊະວາ*. ເກືອແລະສິນຄ້ານຳເຂົ້າຢ່າງອື່ນ ກຶ່ງກນຳໄປຈຳຫນ່າຍໃຫ້ແກ່ບ້ານຕ່າງໆໃນໃຈກາງເກາະ ໂດຍພວກພໍ່ຄ້າຈາກເມືອງຊາຍຝັ່ງ. ເທິງເກາະ*ຊະວາ*, ພວກພໍ່ຄ້າ ຊາວ*ຊະວາ* ແລະ *ຊາວຈີນ* ຕາມຊາຍຝັ່ງ ເອົາສິນຄ້າໄປຂາຍຮອດ *ແມ່ນ້ຳໂຊໂລ* (Solo) ແລະ *ບຣັນຕາສ* (Brantas) ແລະແມ່ນ້ຳອື່ນໆ ໂດຍເອົາເກືອ ເຄື່ອງປັ້ນດິນເຜົາຈາກ*ຈີນ* ຜ້າແພແລະຝິ່ນໄປຂາຍ. ຢູ່ທີ່ນັ້ນແລະບ່ອນອື່ນໆ ພວກພໍ່ຄ້າພະເນຈອນ ແລະພໍ່ຄ້າຍ່ອຍ ຕັ້ງຕົ້ນອອກຈາກທ່າເຮືອ ພ້ອມດ້ວຍສິນຄ້າດັ່ງກ່າວ ເລາະທ່ຽວໄປຕາມເມືອງແລະບ້ານທີ່ຢູ່ໄກຕາຝັ່ງ ທຳການແລກປ່ຽນສິນຄ້າຊາຍຝັ່ງ ແລະນຳເຂົ້າຄືນສິນຄ້າປະເພດຂອງກິນສຳລັບຕົວເມືອງ ແລະສິນຄ້າອື່ນໆທີ່ເໝາະສຳລັບສົ່ງອອກ. ເວົ້າໂດຍລວມແລ້ວການຄ້າຂອງພວກເຂົາເຈົ້າ ຫຍຸ້ງຍາກທັງສ່ຽງໄພຫລາຍຢູ່. ພວກເຂົາຈະຕ້ອງເສຍພາສີສຳລັບຕະຫລາດທຸກລະດັບ ແລະຮ້ານຂາຍ ຮວມທັງຄ່າເຮືອຂ້າມຟາກ ຄ່າຂົວ ແລະ ຄ່າທຳນຽມຜ່ານແດນ, ນອກນີ້ຕາມລັດຊາຍຝັ່ງ ຍັງມີການເກັບພາສີຈາກພວກເຈົ້າເມືອງ ຫລືພະນັກງານຂ້າຣາຊະການນຳອີກ. ຕົວຢ່າງ *ເມືອງ ມາກຕະບັນ* (Martaban) ເມືອງແຄມຝັ່ງທະເລ*ພະມ້າ* ແລະ *ນະຄອນ ສີທຳມະຣາດ* (Nakhon Si Thammarat) ໃນ *ສະຫຍາມ* ພາກໃຕ້, ຕາມກະຫນົນແລະຕາມທາງນ້ຳ ກໍມີແຕ່ສະຖານີເກັບພາສີ ຜ່ານແດນ. ເຊັ່ນດຽວກັນຕາມລ່ອງ *ແມ່ນ້ຳໂຊໂລ* (Solo) ໃນ *ຊະວາ* ມີການບັນທຶກໄວ້ວ່າ ມີສະຖານີກວດເກັບພາສີມາຕັ້ງແຕ່ສະຕະວັດທີ 14, ຄ່າທຳນຽມ ທີ່ເກັບກັນນັ້ນສູງຫລາຍ ແລະສູງຂຶ້ນອີກຫລາຍໃນປາຍສະຕະວັດ ທີ 18 ຈົນເຖິງຂັ້ນເຮັດໃຫ້ການຄ້າຂາຍຢຸດຊະງັກໄປ.

ມີສິນຄ້າສຳຄັນປະເພດນຶ່ງ ທີ່ຜູ່ຜະລິດສົ່ງເຂົ້າມາຊື້ຂາຍກັນ ຢ່າງເກືອບບໍ່ໄດ້ຜິນກຳໄລ ຫລື ໄດ້ກໍພຽງແຕ່ຫນ້ອຍດຽວ. ສິນຄ້າເຫລົ່ານີ້ແມ່ນປະເພດທີ່ລັດຖະບານຍອມຮັບ ຫລືເປັນທີ່ຕ້ອງການຂອງລັດຖະບານ ໃນຖານະເປັນພາສີ ຫລືສ່ວນນຶ່ງຂອງພາສີ.

ເຖິງແມ່ນວ່າອັດຕາສ່ວນຕົ້ນຕໍຂອງສິນຄ້າ ປະເພດນີ້ຈະແມ່ນເຂົ້າ ແຕ່ກໍຫາກມີສິນຄ້າອື່ນໆຫລາຍແນວຮວມຢູ່ນຳ. ໃນປະເທດ *ສະຫຍາມ* ສິນຄ້າເຫລົ່ານີ້ ກຶກເກັບເກນເປັນການທົດແທນແຮງງານ ແລະບໍລິການ ໂດຍສະເພາະ ເມື່ອກະສັດຕ້ອງການຜົນຜະລິດ ແລະຜູ່ຜະລິດກໍຢູ່ຫ່າງໄກ ເຊັ່ນ *ຂີ້ເຈຍ* (Guano) ສຳລັບເຮັດ*ຫມໍ້ປືນ*, *ງາຊ້າງ*, *ເຂ*, *ຝາງແດງ* (Sappan), *ໄມ້ຫອມ* ແລະ*ຮັງນົກແອ່ນ* (ສຳລັບປຸງແຕ່ງອາຫານ*ຈີນ*). ຜະລິດພັນອື່ນໆ ເຂົ້າໄປສູ່ພຣະຄັງຫລວງ ໃນຖານະເປັນສ່ວນນຶ່ງ ຂອງຜະລິດພັນຊາວນາເຊິ່ງ ກຶກເກັບເກນເປັນພາສີ ເຊັ່ນ ພາສີນາ ພາສີສວນ ຕົ້ນໄມ້ ຫລືພາສີສວນຕະຫລາດ. ໃນບາງທ້ອງຖິ່ນ ເຂົ້າຫລືສິນຄ້າອື່ນໆອາດກຶກລັດຖະບານ ຮຽກຮ້ອງເອົາຈາກຊາວນາ ໃນລາຄາທີ່ກຳນົດຕາຍຕົວ ເຊັ່ນໃນກໍລະນີຂອງປະເທດ *ຟີລິບປິນ*, *ຊະວາຂອງດັດຊ* ແລະ ບາງສ່ວນຂອງ *ສະຫຍາມ*. ແມ່ນແຕ່ໃນກໍລະນີເຫລົ່ານີ້ ກໍຍັງມີການຈ່າຍກັນເປັນເງິນສົດ. ໃນບ່ອນອື່ນໆ ສິນຄ້າກຶກເກັບເກນ ແທນຄ່າພາສີ. ຕົວຢ່າງ ພວກເຈົ້າຊີວິດແຫ່ງ *ມາຕາຣາມ* (Mataram) ໃນ *ຊະວາ* ໄດ້ຈັດແບ່ງພາລະສະຫນອງເຄື່ອງຊົ່ມໃຊ້ອັນຈຳເປັນພາຍໃນວັງ ໃຫ້ແກ່ບ້ານຕ່າງໆ ເຊັ່ນໃຫ້ບ້ານນຶ່ງຈັດສົ່ງນ້ຳມັນຫມາກພ້າວ, ບ້ານນຶ່ງສົ່ງປາ, ບ້ານນຶ່ງສົ່ງເຂົ້າ ແລະອີກບ້ານນຶ່ງສົ່ງຫຍ້າລ້ຽງມ້າ. ພາລະຫນ້າທີ່ເຫລົ່ານີ້ ເປັນຄວາມສຳພັນອັນສະເພາະເຈາະຈົງ ລະຫວ່າງບຸກຄົນແລະມີລັກສະນະເສດຖະກິດ ໂດຍກົງ. ສິນຄ້າອຸປະໂພກບໍລິໂພກເຫລົ່ານີ້ກຶກສົ່ງ ໄປຍັງຂັ້ນເທິງ ໂດຍຜ່ານລະບົບແບ່ງຊັ້ນ ດ້ານບໍລິຫານແລະສັງຄົມ, ເຄື່ອງເຫລົ່ານີ້ຍັງກຶກເກັບເກນເປັນພາສີ ໂດຍພວກພະນັກງານລະຫວ່າງກາງ, ດ້ວຍເຫດນັ້ນ ຫລາຍກຸ່ມຫລາຍຄົນຈຶ່ງມີອັນພົວພັນກັນຍ້ອນການຈັດສົ່ງຕໍ່ຂຶ້ນໄປ, ແຕ່ລະກຸ່ມ ກໍອາດຂຶ້ນຕໍ່ກັນເປັນບາງຄັ້ງບາງຄາວ.

ສິນຄ້າທີ່ກ່າວມາຂ້າງເທິງນີ້ ບາງປະເພດ ກໍໄດ້ຮັບການຜະລິດຂຶ້ນ ຢ່າງເອົາໃຈໃສ່ ເພື່ອການສົ່ງອອກ ແລະໂດຍທົ່ວໄປ ມັກຖຶກທ້ອນໂຮມໄວ້ໂດຍຜ່ານອົງການບໍລິຫານ ແລະພາສີອາກອນແບບດຽວກັນ ແຕ່ຫາກວ່າ ເມື່ອມາຮອດສະຕະວັດທີ 18 ນີ້ ມັນໄດ້ຫລຸດຜ່ອນຈາກ ການເປັນຄວາມເຫີ່ນິຍົມອັນພິເສດສຸດ ແລະແບບສະເພາະບຸກຄົນລົງຫລາຍ. ໃນລະຫວ່າງນັ້ນ ການຜະລິດກະສິກຳ ເພື່ອຄ້າຂາຍ ໄດ້ແຮກກ່ຳຂຶ້ນຢູ່ໃນສອງທ້ອງຖິ່ນແລ້ວ. ໃນ *ຊະວາຕາເວັນຕົກ* ການຜະລິດນ້ຳຕານເພື່ອການຄ້າເລີ່ມຂຶ້ນເມື່ອສະຕະວັດ ທີ 17 ເມື່ອຜູ່ຮັບເຫມົາຊາວ*ຈີນ* ໄດ້ "*ສຳປະທານ*" ແຮງງານໃນບ້ານຫັງຫລາຍຈາກອຳນາດການປົກຄອງທ້ອງຖິ່ນ ແລ້ວເຮັດໃຫ້ພວກຊາວນາປູກອ້ອຍ, ຜູ່ຮັບ

ເຫມົາຊາວຈີນ ໄດ້ສ້າງໂຮງງານນ້ຳຕານຂະຫນາດນ້ອຍ ແລະ ສະກັດເອົານ້ຳຕານ ແລະສົ່ງອອກຜົນຜະລິດເກືອບທັງຫມົດ ໂດຍຜ່ານ *ບໍລິສັດອິນເດຍ ຕາເວັນອອກ* ຂອງ *ດັດຊ* (Dutch East India Company : VOC). ຢູ່ *ຫວຽດນາມ* ມີການຜະລິດ ນ້ຳຕານ ເພື່ອສົ່ງອອກໃນແຂວງຕ່າງໆ ເຊັ່ນ *ກວາງນາມ* (Quang Nam) ເຊິ່ງເປັນບ່ອນຕັ້ງ ສຳນັກງານ ກິດຈະການພາຍໃນຫລືພຣະຄັງຫລວງ ຂອງ*ເຈົ້າຈັກກະພັດ* ຮັບຊື້ນ້ຳຕານ ດ້ວຍວິທີປະຕິບັດແບບຂູດຮີດ ຊຶ່ງເປັນທີ່ຮັບຮູ້ກັນ ພາຍໃຕ້ຄຳກ່າວຂານມ່ວນໆຫູວ່າ *"ການຊື້ຂາຍ ອັນສອດຄ່ອງ"* ເພື່ອຮັບປະກັນການສົ່ງອອກ.

ພິເສດສຸດ, ສິນຄ້າສົ່ງອອກ ແມ່ນຜົນຜະລິດຈາກການຂຸດຄົ້ນແຮ່ທາດ ໃນພາກພື້ນນຳ ໂດຍສະເພາະແລ້ວ ແຮ່ກົ່ວ ຈາກ *ແຫລມມະລາຢູ* ແລະ ຄຳ ຈາກ *ດອນບໍນຽວ* (Borneo) ຕາເວັນຕົກ. ລາຍການສິນຄ້າທີ່ມີຄ່າສູງສຸດຈາກລັດ*ແຫລມມະລາຢູ* ແມ່ນ ຝຸ່ນແຮ່ກົ່ວ. ບັນທຶກ ຂອງ *ຊາວດັດຊ* ໃນສະຕະວັດທີ 17 ບັນຍາຍເຖິງພໍ່ຄ້າກຸ່ມໃຫຍ່ຂອງ *ສຸລະຕານລັດເກດາ* (Kedah) ນຳເອົາສິນຄ້າຂ້າມອ່າວ *ເບັງການ* ໄປຍັງຝັ່ງ *ໂຄໂຣ ມັນແດລ* (Coromandel), ໃນລະຫວ່າງສະຕະວັດນັ້ນ ແລະສະຕະວັດຕໍ່ມາ *ພວກດັດຊ* ໄດ້ພະຍາຍາມຢ່າງຫລວງຫລາຍ ເພື່ອຜູກຂາດການສົ່ງອອກກົ່ວຈາກ *ລັດເກດາ, ພູ ເກັດ ເປຣັກ ເຊລັງກໍ* ແລະ *ສຸງກຸຍ ອຸຈອງ* (Kedah, Phuket, Perak, Selangor, Sungei Ujong) ໂດຍການເຮັດສັນຍາກັບເຈົ້າຄອງລັດທ້ອງຖິ່ນ. ໃນປີ 1755 ການຜູກຂາດອັນນີ້ ໄດ້ແຜ່ຂະຫຍາຍອອກສູ່ດອນ *ບັງກາ* (Bangka) ນອກຊາຍຝັ່ງກ້ຳໃຕ້ຂອງ ດອນ*ສຸມາຕຣາ* ຫລັງຈາກມີການຄົ້ນພົບແຮ່ກົ່ວຢູ່ທີ່ນີ້ໃນສະຕະວັດ ທີ 17. ສ່ວນຫລາຍ ແລ້ວ *ຊາວມາເລ* ເປັນຜູ້ຂຸດຄົ້ນແຮ່ກົ່ວ ຢູ່ໃນແຫລມທີ່ຮູ້ກັນດີໃນທ່ວໂລກວ່າ ຊາວຈີນ ມາເລີ່ມຂຸດຄົ້ນ ແຕ່ກ່ອນປີ 1800 ແລ້ວກໍຕາມ. ອຸດສາຫະກຳຂຸດຄົ້ນແຮ່ ຖືກຄວບຄຸມ ໂດຍສະມາຊິກຄອບຄົວຜູ້ນຳໃນ*ລັດມາເລ* ທັງນີ້ ດ້ວຍການເປັນເຈົ້າຂອງບໍ່ແຮ່ໂດຍກົງ ຫລືການເກັບພາສີຈາກການຜະລິດແລະການສົ່ງອອກ. ການຂາດເຂີນແຮ່ກົ່ວ ໃນ*ປະເທດ ຈີນ* ເຮັດໃຫ້ເກີດແຮງກະຕຸ້ນການຄ້າແຮ່ກົ່ວຫລາຍຂຶ້ນໃນປີ 1780 ແລະລາຄາແຮ່ກໍຕົກ ຕ່ຳ ຈົນຮອດເວລາລ່ວງຂ້າມສະຕະວັດນັ້ນໄປ. ການຂຸດຄົ້ນບໍ່ຄຳຂອງ *ຊາວຈີນ* ໃນດອນ *ບໍນຽວ*ຕາເວັນຕົກ (Borneo) ກໍ່ແຮກຂຶ້ນໃນລະຫວ່າງກາງສະຕະວັດ. ວ່າກັນວ່າ ມີກຳ ມະກອນຊາວ*ຈີນ*ຕັ້ງຫລາຍຫມື່ນຄົນ, ແມ່ນແຕ່ມາຮອດສະຕະວັດທີ 18 ຍັງຖືວ່າ ນີ້ເປັນ ການຜະລິດເພື່ອ ການຄ້າ ໂດຍກຸ່ມບຸກຄົນອິສຣະທີ່ຢູ່ຕາມຊາຍແດນ ເຊິ່ງຈັດຕັ້ງເປັນກົງ

ສີ (Kongsi) ທຸລະກິດ ຫລືຊຸມຊົນຂອງຕົນເອງ ໂດຍຈ່າຍຜົນຜະລິດຂອງຕົນບາງສ່ວນ ເປັນຄ່າພາສີ ໃຫ້ແກ່ *ສຸລະຕານ* ລັດຊາຍຝັ່ງ. ໃນທຳນອງດຽວກັນ ຄວາມພະຍາຍາມ ຂອງ *ສະເປນ* ເພື່ອພັດທະນາການຂຸດຄົ້ນບໍ່ເຫລັກຢູ່ *ຟິລິບປິນ* ເມື່ອກາງສະຕະວັດແລ້ວ ກໍໄດ້ຖືກມອບຫມາຍໃຫ້ຜູ່ຮັບເຫມົາຄົນດຽວ ທີ່ໄດ້ນຳເອົາແຮງງານ*ຈີນ* ເຂົ້າມາເພື່ອ ວຽກງານນີ້ໂດຍສະເພາະ. ການພັດທະນາແນວນີ້ ຕັດແຍກສອງເສັ້ນທາງ ຄືແຍກແຮງ ງານທາງດ້ານເສດຖະກິດ ລະຫວ່າງຊາວພື້ນເມືອງ ແລະຊາວ*ຈີນ* ກັບນະໂຍບາຍການ ຜູກຂາດ ທີ່ມຸ່ງຫມາຍໃຫ້ການຂຸດຄົ້ນແຮ່ດຳເນີນຢູ່ພາຍໃຕ້ ການກວດກາອັນເຂັ້ມງວດ ໂດຍສະເພາະຢ່າງຍິ່ງໃນພື້ນທີ່ (ເຊັ່ນ *ພະມ້າ*) ທີ່ມີການຂຸດຄົ້ນໂລຫະ ແລະແກ້ວຫີນປະ ເສີດ.

ໂດຍທົ່ວໄປແລ້ວ ສິນຄ້າກະສິກຳແລະສິນຄ້ານຳເຂົ້າ ກັບຜົນຜະລິດແຮ່ທາດ ໃນ ທ້ອງກິ່ນ ເຂົ້າສູ່ຕະຫລາດ ແລະລະບົບການຄ້າໃນອາຊີຕາເວັນອອກສຽງໃຕ້ ຜ່ານການ ແລກປ່ຽນສິນຄ້າ ທາງສາຍຂວາງໂດຍກົງ ລະຫວ່າງຜູ່ຜະລິດແລະຜູ່ຊົມໃຊ້ ຫລືບໍ່ກໍ ຜ່ານສະຖາບັນບໍລິຫານຕາມສາຍຕັ້ງ, ມີຫນ້ອຍທີ່ຜ່ານການແລກປ່ຽນສິນຄ້າ ແບບໃຊ້ ເງິນຕາ ເຖິງແມ່ນວ່າ ບໍລິມາດສິນຄ້າ ທີ່ທຳການຊື້ຂາຍກັນຢູ່ພາຍໃນພາກພື້ນ ມີຢູ່ຢ່າງ ຫລວງຫລາຍກໍຕາມ ສິນຄ້າສ່ວນໃຫຍ່ ກໍຍັງຖືກນຳໄປຈຳຫນ່າຍຂາຍອອກຢູ່ໃນບ້ານ ຫລືໃນເມືອງທີ່ເປັນແຫລ່ງຄ້າຂາຍ ໂດຍພວກພໍ່ຄ້າສັນຈອນແລະພໍ່ຄ້າເອກະຊົນ ເຊິ່ງ ເດີນທາງເຂົ້າໄປໃນບ້ານທີ່ຫ່າງໄກສອກຫລີກ ແລະໂດຍພໍ່ຄ້າຊາວ*ມາເລ* ກັບ *ຊາວບູ ກິດສ* (Bugis) ທີ່ໄປຕາມເຂດເລາະຊາຍຝັ່ງ ຂົ້ນລ່ອງໄປຕາມຫ້ວຍນ້ຳລຳເຊ. ເມື່ອບໍ່ມີ ບັນທຶກເປັນລາຍລັກອັກສອນ ນັກປະຫວັດສາດເສດຖະກິດ ຈຶ່ງເຂົ້າບໍ່ເຖິງການຄ້າປະເພດ ນີ້ ເຊິ່ງຕາມທາດແທ້ຂອງມັນ ກໍເປັນຂະຫນາດນ້ອຍ ແລະເປັນຂອງທ້ອງກິ່ນ. ເມື່ອການ ຄ້າລະຫວ່າງປະເທດ ເຂົ້າມາສູ່ລະບົບເສດຖະກິດທ້ອງກິ່ນ ຈຶ່ງພໍແນມເຫັນຮູບແບບທີ່ ແຕກຕ່າງກັນຫລາຍຂົ້ນ. ໃນສະຖານະການແບບນີ້ ການຜູກຂາດທາງການຄ້າຂອງລັດ (ເຊັ່ນການຄ້າຂອງ *ອະຍຸທະຍາ* ເຊິ່ງອາໄສການຕະຫລາດສົ່ງອອກສິນຄ້າ ທີ່ໄດ້ມາຈາກ ການເກັບຄ່າສ່ວຍ ແລະ ຄ່າພາສີ) ແລະການຄ້າທາງທະເລຂະຫນາດໃຫຍ່ ຂອງ *ຊາວ ຈີນແລະຢູຣົບ* ຈຶ່ງໄດ້ຂະຫຍາຍຕົວ. ສິນຄ້າເຫລົ່ານີ້ ອາດຖືກຕີລາຄາຢ່າງເຫມາະສົມ ໃນຄວາມຫມາຍ ຂອງຕາຫນ່າງການຄ້າທີ່ຖືກກຳນົດໂດຍສະພາບພູມສາດ ເຊິ່ງກະທົບ ໄປທົ່ວທຸກແຫ່ງ ແຕ່ກໍມີຫນ້ອຍ ທີ່ຈະປົດບັງການຄ້າທ້ອງກິ່ນໄດ້.

ກ່ອນອື່ນໝົດ ໄດ້ເກີດມີລະບົບກອງເດີນທາງ ແບບຄາຣາວານໃນທ້ອງກຸ່ນ ເຂດພູດອຍເຂດຫ່າງໄກສອກຫລີກ ແລະພວກພໍ່ຄ້າສັນຈອນ. ເສັ້ນທາງສາຍກາວອນ ຂອງກອງເດີນທາງ ຕັດຜ່ານໃຈກາງແຜ່ນດິນໃຫຍ່ ອອກຈາກ*ພະມ້າ* ແລະ *ສະຫຍາມ* ກ້ຳເໜືອ ເຂົ້າໄປໃນ*ຫວຽດນາມ* ແລະ *ຈີນກ້ຳໃຕ້* ນຳເອົາສິນຄ້າຈຳພວກຝ້າຍຈາກ ເຂດພູດອຍ, ຢາດູດ, ເງິນແທ່ງ, ແລະ ເຄື່ອງປ່າຂອງດົງ ໂດຍຕ່າງໃສ່ຫລັງງົວ ມ້າ ຊ້າງ ໄປຍັງຕະຫລາດ ທີ່ລົງເປັນຍາມ ເພື່ອແລກປ່ຽນກັບມ້າ ເກືອ ແລະ ຜ້າໄຫມ. ໃນບັນດາຜູ່ເຮັດການຄ້າຂາຍປະເພດນີ້ ມີທັງ *ພໍ່ຄ້າຈີນ ພວກຊານ* (Shans) ແລະ *ຄົນໄຕ*. ໃນປະເທດ*ພະມ້າ* ສູນກາງຕົ້ນຕໍຂອງການຄ້າດັ່ງກ່າວ ແມ່ນ *ເມືອງພະໂມ* (Bhamo) ອັນເປັນບ່ອນ ທີ່ກອງເດີນທາງ*ຈີນ*ນຳເອົາເສື້ອຜ້າກັນຫນາວ ຜ້າໄຫມແລະ ເຄື່ອງໃຊ້ທອງແດງໄປແລກປ່ຽນກັບຝ້າຍ. ທາງດ້ານຕາເວັນອອກ ກໍມີການຄ້າທາງ ບົກ ຂະຫນາດສຳຄັນລະຫວ່າງ *ຫວຽດນາມ* ແລະ *ຈີນ*. ການຄ້າສ່ວນໃຫຍ່ກຶກຊີ້ນຳ ໃຫ້ເປັນໄປຕາມຄວາມຕ້ອງການຂອງ*ປະເທດຈີນ* ເພື່ອໃຫ້ໄດ້ເງິນຈາກ*ບໍ່ແຮ່ຫວຽດນາມ* ສຳລັບໄປຫົດແທນເງິນແທ່ງ ທີ່ໄຫລອອກນອກປະເທດ ເພາະການນຳເຂົ້າຝິ່ນ. ລະບົບ ການຄ້າ ທີ່ຈັດຕັ້ງໄວ້ຢ່າງດີເຫລົ່ານີ້ ເຮັດໃຫ້ເກີດຜົນກຳໄລຢ່າງມະຫາສານ ສຳລັບຣາ ຊະສຳນັກ *ພະມ້າ* ແລະ *ຫວຽດນາມ*.

ການຄ້າທາງທະເລ ຂອງອາຊີຕາເວັນອອກສຽງໃຕ້ ກັບ *ຈີນ* ເກີດຂຶ້ນພາຍໃນ ຂອບເຂດຫນ້າວຽກແບບເກົ່າ ຂອງການພົວພັນລະຫວ່າງຊາດ ເຊິ່ງມັກຈະອ້າງເຖິງວ່າ ເປັນລະບົບການສົ່ງສ່ວຍແບບ*ຈີນ*. ໃນທາງທິດສະດີ*ຈີນ* ກຶຕົວເອງວ່າເປັນໃຫຍ່ເໜືອລັດ ທັງປວງ ໃນອາຊີຕາເວັນອອກສຽງໃຕ້ ໂດຍໄດ້ຮັບການສະແດງຄວາມສະຫວາມິພັກ ຈາກລັດຕ່າງໆ ຕາມກຳນົດເວລາ ເຊິ່ງໃນລະຍະນັ້ນ ຫົວເມືອງປະເທດສະຣາສທັງ ຫລາຍ ຈະກວາຍເຄື່ອງບັນນາການ ທີ່ເປັນຜົນຜະລິດທ້ອງກຸ່ນ ແລະຈະໄດ້ຮັບສິນຄ້າ ທ້ອງກຸ່ນ ຈາກພຣະເຈົ້າຈັກກະພັດ ໃນມູນຄ່າເທົ່າທຽມກັນ ຫລືຫລາຍກວ່າ. ໃນແງ່ການ ປະຕິບັດ ລະບົບການສົ່ງສ່ວຍ ກໍເປັນລະບົບການຄ້າປົກກະຕິນຶ່ງຂອງທາງຣາຊະການ ທີ່ກຶກຕ້ອງຕາມກົດໝາຍ ແລະນັບແຕ່ຍຸກຕົ້ນໆມາແລ້ວ ມັນໄຂໂອກາດໃຫ້ແກ່ພາກເອ ກະຊົນເຮັດການຄ້າຄຽງຄູ່ມານຳ, ທຳອິດ ແມ່ນພໍ່ຄ້າຊາວອາຊີຕາເວັນອອກສຽງໃຕ້ ເອງ ແລະຕໍ່ມາແມ່ນພໍ່ຄ້າ*ຊາວຈີນ*. ມາເຖິງສະໄຫມ *ຣາຊະວົງ ມິ້ງ* (Ming dynasty

1368-1644) ภาบค้าฃอๅเฃาะฃิบเกือบหัๅหมิด เป้บฃอๅ*ฅิบจิบ* และจำบอบสิบค้า ภ์หลายภว่าเถื่อๅสิ่ๅส่อย และ เถื่อๅบับบาภาบ หัๅใบด้าบบ์ลิมาด และ มูบค่า.

หาๅภ้ำอาฃิตาเวับออภสรๅใต้บั้บ สิบค้าปะลิมาบหลอๅหลาย ที่ฃื้ฃาย กับยู่ใบละบ์บภาบค้า ภึภผูภฃาดโดย หาๅธาฃะสำบัภ. ต์อย่าๅ *เจ้ำฃีวิดสะหยาม* และ *ภำพูฃา* เฃิ่ๅธ์บโธมสิบค้าไว้ใบพธะถังหลอๅ ย่าๅหลอๅหลาย พายใต้ธูบภาบเถื่อๅเสยพาสิ หลื โดยภาบผูภฃาดตะหลาด ได้อาไสภาบค้า ต่าๅปะเหดกับ*จิบ* เพื่อส้าๅลายธับให้ได้หลายๆ. ฅิดไล่สะเล่ยแบบๆ่ายๆ ปะมาบบึ่ๅส่อบสี่ฃอๅลายได้ แห่ๅธาฃะสำบัภ *ฃะยุหะยา* มาจาภผิบภำไล ฃอๅภาบผูภฃาดหาๅภาบค้าฃอๅหลอๅ. *เจ้ำสุละตาบ* แห่ๅ *มาเล* ได้ฃายผิภไห และแธ่ภ่อใบธูบภาบคฐอกับนี้, และ ใบบ่อบที่ละบ์บดั่ๅภ่าอมีภาบพัดหะบาดีฃึ้บที่สุด เฃ่ับใบ *สะหยาม* ภ์ได้มีภาบส้าๅละบ์บอาดยาสิดที่เฃ้มๆอดฃึ้บ เพื่อด้ำเบิบภาบค้านี้, เภับภำธ์บโธมสิบค้าจาภแฃอๅต่าๅๆ ที่จะฃายได้ดีที่สุดใบตะหลาด *จิบ*, จัดหาและภักม้ธูบไว้ และจัดภาบให้ฃายยิภสิบค้าบ้ำเฃ้า โดยผ่าบป่อๅหาๅดฐอกับ. บาๅเที่อละบ์บภาบค้านี้ ภ์ภอมไปเภิๅภาบต่เธือสิบค้า และภาบแต่ๅตั้ๅพะบักๅาบปะจ้ำเธือบ้ำ เฃิ่ๅส่อบหลายภ์แม่บคิบ*จิบ* ที่อ์บพะยิบเฃ้ามา เพื่อตั้ๅภิ่บฦาบ ทำภาบค้ายู่พายใบปะเหด. ภาบด้ำลิๅคิๅต์อ ฃอๅอิๅภอบปะเพดบี้ ภายเป้บแหล่ๅภ้ำลังปะเพดบึ่ๅ ฃอๅลัดฦะบาบ *สะหยาม* เภิๅแม่บว่า ใบอั้บต้บ มับได้ภ่ใ้ห้เภิดผิบปะโหยดส่อบต์อ ใบภาบเธัดภาบค้ากับ*จิบ*เท่ำบั้บ และอ์ทิภาบผูภฃาดบี้ ภ์ยังบ่เป้บที่ยอมธับกับเที่อ ใบหมู่บักภาบค้า*ฃาวยูธ์บ*.

ตาหบ่าๅภาบค้าหาๅหะเล*จิบใต้* ฃะหยายภว้าๅ หัๅละอฐดที่ก้อบภว่า หมู่ใบพาภพื้บ. เส้บหาๅภะจายแต่ท่าเธือสำคับๆตามฃายฝั่ๅ หะเล*จิบ* แบ่ๅแยภไปสอๅทิด ฅิ: เส้บหาๅภ้ำตาเวับต์ภ มุ่ๅสู่ *หอฐดบาม สะหยาม* และ *มาเลเฃย* อิภเส้บบึ่ๅ ไปหาๅตาเวับออภ สู่หมู่ดอบ*ฟิลิบปิบ* และ *อิบดูเฃเฃย*. ธาฃะสำบัภ*จิบ* อาๅท่าเป้บป์ละปัภ ภับภาบฃะหยายต์อหาๅภาบค้าอับนี้ เบื่ๅๆจาภ

ວ່າ ຊ່າງຕໍ່ເຮືອກັບເຈົ້າຂອງເຮືອ*ຊາວຈີນ* ເປັນຜູ່ຜະລິດທີ່ແຂງແຮງ ແລະມີເອກະລາດ ຈົນທາງການບ່ສາມາດຄວບຄຸມໄດ້. ເຖິງແມ່ນວ່າທາງ *ຣາຊະສຳນັກຈີນ* ໄດ້ພະຍາ ຍາມເກືອດຫ້າມການຄ້າແບບນີ້ ຢູ່ສະເຫມີກໍຕາມ ທ່າເຮືອຈີນຕາມແຫລ່ງຕ່າງໆ ກໍຍັງ ຈະເລີນກ້າວໜ້າບ່ຢຸດຢ່ອນ ຕົວຢ່າງ ໃນປີ 1741 *ຣາຊະສຳນັກຈີນ* ໄດ້ເກືອດຫ້າມຄັ້ງ ໃຫຍ່ ເຮັດໃຫ້ຄົນຕົກວຽກເຮັດຫລາຍກວ່າ 500.000 ຄົນ ໃນຈີນພາກໃຕ້ ແຫ່ງດຽວ.

ຄຳວ່າ " *ຈັ໋ງ* (Junk)-*ສຳເພົາ* " ເປັນຄຳໃນພາສາອັງກິດ ທີ່ຊາວ *ມາເລ ເພ່ີ ອະມອຍ* (Amoy) ອອກສຽງຕາມຄຳສັບ*ຈີນ "ຊວນ"* (Ch'uan) ຜິດຜ້ຽນໄປຈາກຄຳ ເດີມວ່າ *"ຊຶ໋ນ"*(ເຮືອ-Ship) ນັ້ນ ກໍບ່ົ່ງບອກເຖິງທາດແທ້ວັດທະນະທຳ ປະສົມຫລາກ ຫລາຍຂອງການຄ້າຂາຍ ໃນພາກໃຕ້ຂອງ*ຈີນ* ແລ້ວ. ໃນ ປີ 1821 ຊາວ*ຈີນ*ອົບພະຍົບ ໃນປະເທດ*ສະຫຍາມ* ກຳກິດຈະການແລ່ນເຮືອ ທີ່ມີເຮືອເຖິງ 136 ລຳ ໃນນັ້ນ 82 ລຳ ສຳລັບເຮັດການຄ້າກັບ*ຈີນ* ແລະ ອີກ 34 ລຳ ສຳລັບເຮັດການຄ້າກັບ *ຫວຽດນາມ, ມະລາຢູ* ແລະ *ຊະວາ*. ໃນຂັ້ນຕົ້ນ ທ່າເຮືອ *ຫວຽດນາມ* ເຮັດການຄ້າກັບທ່າເຮືອ*ຈີນໃຕ້* ໂດຍສົ່ງເຮືອປະມານ 100 ລຳຂຶ້ນໄປທາງເໜືອ ໃນແຕ່ລະປີ ເຮືອສະເພົາຫລາຍລຳ ນຳ ສິນຄ້າໄປຂາຍ ໃຫ້ແກ່ເຮືອພວກ*ສະເປນ* ທີ່ *ກຸງມະນີລາ* ທີ່ຮັບເອົາສິນຄ້າ ໄປຂາຍຕໍ່ຢູ່ *ເມັກຊິກໂກ* ປີລະສອງເທື່ອ. ເຮືອສະເພົາເຫລ່ົານ້ີ້ມ*ີຊາວຈີນ* ເປັນລູກເຮືອ ເຊ່ົ່ງສ່ວນ ຫລາຍອາໄສຢູ່ໃນປະເທດຕ່າງດ້າວ ທ່ີ່ເຮືອແວ່ຈອດແລະໄດ້ຮັບຄ່າຈ້າງໂດຍທ່ົ່ວໄປ ດ້ວຍ ການໄດ້ຮັບອະນຸຍາດ ໃຫ້ນຳເຮືອສະເພົາ ທ່ີ່ມີສິນຄ້າເລັກໆນ້ອຍໆຂອງຕົນ ໄປຂາຍຢູ່ ທ່າເຮືອສຸດທາງ. ດ້ວຍເຫດນ້ີ້ ພວກເຂົາກໍກາຍເປັນຫຸ້ນສ່ວນນ້ອຍ ຂອງທຸລະກິດນັ້ນ ໄປໃນຕົວ.

ດ້ວຍການຂະຫຍາຍອອກໄປທັ່ງທາງກວ້າງແລະທາງຍາວ ຂອງທະເລ*ຈີນໃຕ້*, ການຄ້າແບບສະເພາະຕົວອັນນ້ີ້ຂອງ*ຈີນ* ກໍຍ່ິ່ງໃຫຍ່ໄພສານສົມຄວນ. ສິນຄ້າຂາອອກ ອັນສຳຄັນຂອງ*ຈີນ* ທ່ີ່ສົ່ງໄປຂາຍທາງໃຕ້ ແມ່ນເຄ່ືອງປະເພດສວຍງາມ ເຊ່ັ່ນແພໄຫມ ແລະ ເຄ່ືອງກະເບ້ືອງ. ທ່າເຮືອໃນອາຊ່ີຕາເວັນອອກສຽງໃຕ້ ອາໄສສິນຄ້າຂາເຂ້ົ້າປະ ເພດນ້ັ້ນ ແລະຕະຫລາດສົ່ງອອກ ສຳລັບສິນຄ້າອຸປະໂພກປະຈຳທ້ອງກ່ິ່ນຫລາຍຢ່າງ ນັບ ແຕ່ອາຫານຂ້ຶ້ນໄປ ເຊ່ັ່ນ ເຂ້ົ້າ ຈົນຮອດສິນຄ້າສວຍງາມ, ຢາປ່ິ່ນປົວແລະຢາບຳລຸງກຳ ລັງທາງການາລົມ ທ່ີ່ຊາວ*ຈີນ*ຕ້ອງການ, ເຄ່ືອງປ່າຂອງດົງແລະສິນຄ້າແປກໆ ເຊ່ັ່ນ ຮັງນົກແອ່ນ. ສຸດເສ້ັ້ນທາງພາກໃຕ້ຮວມທັ່ງຮ່ອງແຄບຜ່ານ *ມາລາກາ, ດອນບ່ົ່ນຮວ*

ແລະໂດຍສະເພາະ *ດອນຟິລິບປິນກ້ຳໃຕ້* ເປັນພາກພື້ນ ທີ່ການຄ້າຂາຍຫຍຸ້ງຍາກ ຍ້ອນ ວ່າມີທ່າເຮືອເລັກໆນ້ອຍໆ ແລະສິນຄ້າຍິບຍ່ອຍຫລາຍຊະນິດ ເຊິ່ງພໍ່ຄ້າດ່ຽວໆສາມາດ ຂົນສົ່ງໄປດ້ວຍເຮືອລຳນ້ອຍໆຂອງເຂົາ ເປັນຜົນໃຫ້ເກີດມີລະບົບການຄ້າ ຂະຫນາດ ນ້ອຍ ແລະສັບສົນຫລາຍຂຶ້ນ. ແຕ່ພໍມາເຖິງ ສະຕະວັດທີ 18 ຜ່ານການຄ້າ ທີ່ມີຄວາມ ຫລາກຫລາຍຂຶ້ນ ແລະແມ່ນແຕ່ການຄ້າຂອງມີທີສາມ ພໍ່ຄ້າຊາວ*ຈີນ*ໄດ້ສ້າງການຄ້າ ທີ່ມີຄວາມສຳຄັນຫລາຍ ໃນພາກພື້ນທະເລ*ຈີນໃຕ້* ເຊິ່ງທັງຫມົດນີ້ ແມ່ນແຕ່ຣາຊະສຳນັກ *ສະຫຍາມ* ແລະລັດກະບານ*ກຸງມະນີລາ* ຮວມທັງທ່າເຮືອຂະຫນາດນ້ອຍຈຳນວນຫລວງ ຫລາຍ (ການສົ່ງອອກໄຂ່ມຸກ ຂອງ*ດອນຊູລູ* ແລະການຄ້າໄມ້ຫອມຂອງ*ຕິມໍຕາເວັນອອກ* ເປັນຕົວຢ່າງ) ກໍໄດ້ອາໄສ ເປັນແຫລ່ງສ້າງລາຍຮັບຂອງຕົນ ໃນອັດຕາສ່ວນສູງສົມຄວນ.

ພາຍໃນຕາຫນ່າງການຄ້າໃນທະເລ*ຈີນໃຕ້* ພໍ່ຄ້າພວກອື່ນນອກເຫນືອໄປຈາກ *ຈີນ* ກໍຄ້າຂາຍກັນຢ່າງຫ້າວຫັນ. ພວກພໍ່ຄ້າຊາວ *ມາເລ, ຊູລູ* (Sulu), *ແລະ ບູກິດສ* (Bugis) ດຳເນີນການຄ້າຂອງເຂົາ ດ້ວຍເຮືອລຳນ້ອຍໆ *"ເປຣະຢູ"* (Perahu) ຢູ່ໃນທ້ອງ ກຸ່ນຂອງຕົນ ລະຫວ່າງເກາະດອນຕ່າງໆໃນພາກໃຕ້, ບາງຄັ້ງເຮືອສະເພົາ*ຫວຽດນາມ* ແລະ *ສະຫຍາມ* ໄດ້ນຳເອົາຮູບແບບການຄ້າຂອງ*ຈີນ*ມາເຜີຍແຜ່. ທັງພໍ່ຄ້າທ້ອງກຸ່ນ ແລະພໍ່ຄ້າທາງໄກດຳເນີນການ ເພື່ອຮວບຮວມ ແລະ ຂະຫຍາຍຕາຫນ່າງການຄ້ານີ້ ອອກໄປ. ຢູ່ບ່ອນສາມຈຸດຄົບຊາຍແດນທະເລ*ຈີນໃຕ້* ຄື *ມະນີລາ ປັດຕາເວຍ* ແລະຮ່ອງ ແຄບຜ່ານ *ມາລາກາ*, ຕາຫນ່າງນີ້ໄດ້ຜູກມັດເຂົ້າກັບລະບົບການຄ້າອື່ນແລ້ວ.

ເຫດຜົນອັນນຶ່ງສຳລັບພວກ*ສະເປນ* ທີ່ຕ້ອງການຄອບຄອງ *ຟິລິບປິນ* ກໍຄືເອົາ *ມະນີລາ* ເປັນສາງສິນຄ້າແບບທຳມະຊາດ ສຳລັບການຄ້າກັບ*ຈີນ*. ສິ່ງດຶງດູດໃຈຂອງ ຕະຫລາດ*ຈີນ* ແລະ ຄວາມສະດວກທີ່ອຳນວຍໃຫ້ເຮືອສະເພົາ*ຈີນ* ນຳເອົາສິນຄ້າມາສູ່ *ມະນີລາ* ໄດ້ເຮັດໃຫ້ *ມະນີລາ* ກາຍເປັນສະຖານີກາງທາງ ລະຫວ່າງ*ຈີນ* ກັບໂລກໃຫມ່. ເປັນຄວາມຈິງຢູ່ວ່າ ສິນຄ້າຈຳພວກເຄື່ອງເງິນແລະໄຫມ*ຈີນ* ຖືກຂົນສົ່ງໂດຍທາງເຮືອ ເປັນຈຳນວນຫລວງຫລາຍ ຈົນບໍ່ດົນບໍ່ນານ ກໍເຮັດໃຫ້ພວກພໍ່ຄ້າຢູ່*ສະເປນ* ບັງຄັບໃຫ້ລັດ ຖະບານ*ມາດຣິດ* (Madrid) ອາງມາດຕະການຈຳກັດມູນຄ່າ ແລະບໍລິມາດສິນຄ້າ ບັນຈຸໃສ່ເຮືອໃຫຍ່ມາຈາກ *ມະນີລາ* ໃນແຕ່ລະປີ. ການຄ້າຂາຍທາງເຮືອ ເຊິ່ງດຳເນີນ ມາກວ່າ 250 ປີ ຖືກຄວບຄຸມຢ່າງລະມັດລະວັງຫລາຍ ຈົນມັນໃຫ້ຫມາກຜົນພຽງພໍ ເພື່ອຮັກສາຖານະທາງການເງິນຂອງ*ມະນີລາ* ໄວ້ໄດ້ ແຕ່ບໍ່ຫລາຍພໍທີ່ມັນຈະເຮັດໃຫ້ອຸດ

ສາຫະກຳໃນ *ສະເປນ* ເອງຫລົ້ມຈົມໄດ້. ບ່ອນວາງສິນຄ້າໃນເຮືອໃຫຍ່ ຈັດແບ່ງອອກ ເປັນສອງສ່ວນ ຫລື *ປີແອດຊາ* (Piezas) ດ້ວຍຂະໜາດແນ່ນອນ ແລະ ຊຸມຊົນຊາວ *ສະເປນ* ໃນ *ມະນີລາ* ກໍລ້ຽງຊີວິດຢູ່ໄດ້ດ້ວຍເງິນລາຍໄດ້ ຈາກການຂາຍບ່ອນວາງສິນ ຄ້າໃຫ້ແກ່ຜູ້ແລ່ນເຮືອ. ສ່ວນທາງສາສະນະຈັກ ກໍຊົມໃຊ້ເງິນທຶນສ່ວນໃຫຍ່ ໃນການຊື້ສິນ ຄ້າ*ຈີນ*ໃສ່ເຮືອໃຫ້ເຕັມ ແລະຊ່ວຍເຫລືອຊຸມຊົນໃນຍາມຄັບຂັນ ສາສະນະຈັກໄດ້ດອກເບ້ຍ 30 ຫາ 50 ສ່ວນຮ້ອຍ ເມື່ອເຮືອສິນຄ້າກັບມາ. ດັ່ງນັ້ນເມື່ອເຮືອລຳໃດລຳນຶ່ງຖືກຈັບ ຫລື ເສຍໄປ, ອານານິຄົມທັງຫມົດ ກໍເກືອບວ່າຫລົ້ມຈົມໄປນຳ. ຕົວຢ່າງ ໃນປີ1743 ເມື່ອ ພົນເຮືອເອກ *ແອນສັນ* (Anson) *ຊາວອັງກິດ*ຈັບເຮືອ ຊື່ "*ນູສຕຣາ ຊິຍໍຣາ ເດ ໂຄວາ ດອນກາ*" (Nuestra Señora de Covadonga) ເຂົ້າກໍຍຶດເອົາເງິນແທ່ງມູນຄ່າປະ ມານ 1.5 ລ້ານ *ເປໂຊສ໌* (Pesos) ໄວ້.

ຜົນກະທົບຈາກການຄ້າທາງເຮືອໃຫຍ່ຂອງ*ສະເປນ* ຕໍ່ປະເທດ*ຟີລິບປິນ*ນັ້ນ ເປັນ ຫນ້າຜາງຫນ່າຍຫລາຍ. ທັງນີ້ດ້ວຍວ່າ ອານານິຄົມນັ້ນ ຂຶ້ນກັບປະເທດແມ່ຢ່າງຫນັກ ຫນ່ວງຢູ່ແລ້ວ ແລະໃນເມື່ອວ່າເຮືອສິນຄ້າໃຫຍ່ ໄດ້ດູດກືນເງິນທຶນທີ່ມີຢູ່ສ່ວນຫລວງ ຫລາຍໄປແລ້ວ ມັນຈຶ່ງເກືອບບໍ່ເຫລືອຫຍັງເລີຍ ສຳລັບການພັດທະນາພາຍໃນປະເທດ. ພໍເຖິງກາງສະຕະວັດ ທີ 18 ການວາງກົດລະບຽບທາງການຄ້າຢ່າງເຄັ່ງຄັດ ຂອງການ ຜູກຂາດເກືອບທັງຫມົດອັນນີ້ ໄດ້ກ່ວງດຶງການຂະຫຍາຍຕົວຂອງ ຮູບແບບການຄ້າກັບ ລັດອື່ນໆ ໃນອາຊີຕາເວັນອອກສຽງໃຕ້. ການທີ່ອານານິຄົມສາມາດເອົາໂຕລອດມາໄດ້ ຢ່າງງ່າຍດາຍນັ້ນ ຍ້ອນສະພາບໄຮ້ພະລັງ ມັນກໍເຮັດໃຫ້ພວກ *ສະເປນ* ຖືກໂດດດ່ຽວ ແລະບໍ່ເຂົ້າມາກ່ຽວຂ້ອງກັບການຄ້າອີກ ຍົກເວັ້ນພວກນັກບວດ. ລະບຽບເຂັ້ມງວດ ຕ່າງໆເອງ ໄດ້ເຮັດໃຫ້ການສໍ້ລາດບັງຫລວງແຜ່ລະບາດອອກ, ຍ້ອນວ່າ ກົດລະບຽບເປັນ ຮ້ອຍເປັນພັນຂໍ້ເຫລົ່ານັ້ນ ຖືກຕອບຮັບດ້ວຍການລະເມີດ ຫລາຍກວ່າການປະຕິບັດ. ການ ໄລ່ຄົນອອກຈາກວຽກງານເລື້ອຍໆ ຍ້ອນລະເມີດກົດລະບຽບນັ້ນ ສະແດງໃຫ້ເຫັນວ່າ ມີ ການສວຍໃຊ້ອຳນາດຢູ່ທົ່ວໆໄປ.

ການຄ້າຕາມຊາຍຝັ່ງແລະພາຍໃນເກາະດອນຢູ່ *ຟີລິບປິນ* ໂຮມທັງການຄ້າລະ ຫວ່າງ *ມະນີລາ* ກັບ*ລັດມຸດສະລິມ* ຂອງ*ສຸລະຕານ* ອື່ນໆທາງກ້ຳໃຕ້ ຕົກຢູ່ໃນກຳມືຂອງ ຊາວ*ຈີນ* ຫລື ລູກຊອດ*ຈີນ*. *ຊາວຈີນ* ຢູ່ໃນ*ປະເທດຟີລິບປິນ* ເອງ ກໍມີຄວາມສຳພັນກັບ ບໍລິສັດຕ່າງໆ ໃນ *ປະເທດຈີນ*, ພວກພໍ່ຄ້າເຫລົ່ານີ້ ນຳເຂົ້າສິນຄ້າຈາກ*ຈີນ ອິນເດຍ* ແລະ

ອາຊີຕາເວັນອອກສຽງໃຕ້ ໂດຍຜ່ານລະບົບການຄ້າທະເລ*ຈີນໃຕ້* ເພື່ອນຳໄປຍົນກ່າຍໃສ່ເຮືອໃຫຍ່ *ສະເປນ* ແລະຈຳຫນ່າຍຢູ່ໃນອານານິຄົມເອງນຳ. ໃນຂະນະດຽວກັນ ພວກເຂົາກໍສົ່ງອອກເງິນແທ່ງ ໂດຍຜ່ານຊ່ອງທາງດຽວກັນ ເຖິງແມ່ນວ່າຊຸມຊົນ*ສະເປນ* ໄດ້ອາໄສຜົນກຳໄລຈາກການຄ້າທາງເຮືອໃຫຍ່ ເປັນຕົ້ນຕໍກໍດີ ແຕ່ມີພໍ່ຄ້າຊາວຂາຍຄົນ*ສະເປນ* ພຽງຫນ້ອຍດຽວເທົ່ານັ້ນ ທີ່ອາໄສຢູ່ໃນ *ມະນິລາ*. ຄວາມກ່ຽວພັນທາງການເມືອງກັບຄະນະກຳມະການແບ່ງປັນຜົນປະໂຫຍດ, ການເຮັດຫນ້າທີ່ກວດກາບ່ອນວາງສິນຄ້າ ທີ່ມີຢູ່ໃນເຮືອ ໄດ້ພິສູດວ່າມີວິທີການຫາເງິນທີ່ມີປະສິດທິຜົນກວ່າ ການຄ້າໃນຕະຫລາດເປີດ. ພວກແມ່ຫມ້າຍ ກັບອົງການກຸສົນປະຈຳວັດ ມີສິດໂດຍທັນທີທີ່ຈະໄດ້ຮັບສ່ວນແບ່ງ ເຊິ່ງໃນແຕ່ລະປີ ພວກເຂົາໄດ້ຂາຍໃຫ້ພໍ່ຄ້າບໍ່ເທົ່າໃດຄົນ. ຈຳນວນພໍ່ຄ້າເຂົ້າຮ່ວມໃນຫຸ້ນເຮືອໃຫຍ່ ຫລຸດຜ່ອນລົງເປັນລຳດັບ ຍ້ອນກຳລັງເງິນ ແລະການໂຮມກຸ່ມພວກພໍ່ຄ້ານ້ອຍຕ້ອງອອກຈາກວົງການທຸລະກິດໄປຫມົດ. ມາເຖິງກາງສະຕະວັດ ທີ 18 ກໍບໍ່ມີລະບົບວິສາຫະກິດເສລີຂອງຜູ່ຮັບເຫມົາ ຫລືບໍລິສັດການຄ້າໃຫຍ່ເຫລືອຢູ່. ພໍ່ຄ້າຊາວ*ຈີນ*ໄດ້ເຂົ້າມາດຳເນີນການຄ້າທັ່ງຫມົດ ແລະ ແບ່ງຜົນກຳໄລໃຫ້ພວກ *ສະເປນ*.

ຕາຫນ່າງການຄ້າທີສອງມີສູນກາງຢູ່ເມືອງ *ບັດຕາເວຍຈາກາຣ໌ຕ້າ* (Batavia Jakarta) ອັນເປັນສຳນັກງານໃຫຍ່ຂອງບໍລິສັດ *ດັດຊ໌ອີສ ອິນເດຍ* (Vereenigte Oast-Indische Compagnie, VOC) ບໍລິສັດ ວີໂອຊີ (1602-1799) ເປັນວິສາຫະກິດທີ່ເຮັດການຄ້າຫລາຍດ້ານ ແລະຄອບຄຸມໄປໄກ ຄື ເປັນບໍລິສັດການຄ້າເທົ່າກັບເປັນລັດໆນຶ່ງນຳ. ບໍລິສັດດັ່ງກ່າວເປັນບັນພະບຸຣຸດ ຂອງ*ອິນໂດເນເຊຍ* ຍຸກໃຫມ່ ແລະເປັນເສົາຫລັກຂອງ *ລັດຄົນດັດຊ* ໃນສະຕະວັດທີ 17 ແລະ 18 ທັງຍັງ ເປັນຜູ່ກໍ່ຕັ້ງ *ອະຟຣິກກາໃຕ້* ຍຸກໃຫມ່ອີກ, ເປັນຜູ່ຊຸກຍູ້ຕົ້ນຕໍ ໃນປະຫວັດສາດຂອງ *ສີລັງກາ* ແລະເປັນຕົວແທນຂອງການເຄື່ອນໄຫວ ທີ່ສຳຄັນໃນປະຫວັດສາດປັນຍາຊົນ*ຍີ່ປຸ່ນ* ສະໄຫມແຣກຕົ້ນ. ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ນະຄອນ*ອຳສະເຕີດາມ* (Amsterdam) ອັນເປັນບ່ອນທີ່ ພວກຜູ່ອຳນວຍການໃຫຍ່ໄດ້ຮັບການຂະຫນານນາມວ່າ *"ສຸພາບບຸຣຸດສິບເຈັດທ່ານ"* (Heeren Seventien) ປະຕິບັດຫນ້າທີ່ຄວບຄຸມທົ່ວໄປ ທັງເລື່ອງການຄ້າແລະນະໂຍບາຍຂອງບໍລິສັດ, ສັ່ງສິນຄ້າສຳລັບຕະຫລາດພາຍໃນ, ສົ່ງສິນຄ້າອອກນອກ ອອກຄຳສັ່ງການໃຫ້ເຈົ້າຫນ້າທີ່ກັບກອງທະຫານປະຈຳຂະບວນເຮືອ ທີ່ເດີນທາງໄປ, ແລະແບ່ງປັນລາຍຮັບໃຫ້ຜູ່ຖືຫຸ້ນ, ເຖິງຢ່າງໃດກໍດີ, ບາງເທື່ອກິດຈະກຳທັ່ງຫລາຍຂອງສຳນັກງານໃຫຍ່ໃນ

ພາກຕາເວັນອອກ ເຊິ່ງມີສູນກາງຢູ່ທີ່ຫໍຜາສາດ ຂອງຂ້າຫລວງໃຫຍ່ເມືອງ*ບັດຕາເວຍ* (Batavia) ກໍຫາກເລີ່ມມີຊີວິດເປັນຂອງຕົນເອງນັບມື້ນັບຫລາຍຂຶ້ນ. ພວກຂ້າຫລວງໃຫຍ່ ໄດ້ຮັບການແຕ່ງຕັ້ງໂດຍ *"ສຸພາບບຸຣຸດ 17 ທ່ານ"*. ມັນແມ່ນສະພາບການຢ່າງນຶ່ງ ທີ່ສ້າງຄວາມຫມັ້ນຄົງທາງລະບົບອາດຍາສິດໃຫ້ແກ່ບໍລິສັດ *ວີໂອຊີ*, ເຊິ່ງຣາຊະອານາຈັກ ແລະອຳນາດທັງຫລາຍ ບໍ່ໄດ້ມີສ່ວນເຂົ້າໄປກ່ຽວຂ້ອງນຳ. ແຕ່ເມື່ອຢູ່ໃນເມືອງ *ບັດຕາເວຍ* ເຊິ່ງໃຊ້ເວລາແລ່ນເຮືອມາຈາກນະຄອນ*ອຳສະເຕີດາມ*ເກືອບເຄິ່ງປີ ແລະດ້ວຍອຳນາດອິສຣະ ຢ່າງຂາດຂັ້ນ ເຫນືອລູກຈ້າງບໍລິສັດທັງຫມົດ ທີ່ຢູ່ທາງຕາເວັນອອກຂອງແຫລມ *ກູ້ດໂຮ໊ບ* (Good Hope), ພວກເຂົາມີອິສຣະພາບຢ່າງແທ້ຈິງ. ພວກຂ້າຫລວງໃຫຍ່ເຫລົ່ານັ້ນ ແລະຜູ່ຢູ່ໃຕ້ບັງຄັບ ເຊັ່ນ ເຈົ້າຫນ້າທີ່ແລະພໍ່ຄ້າເອກະຊົນ ຂອງ ບໍລິສັດ *ອິດສ໌ອິນເດຍຂອງອັງກິດ*, ກັບຕັນໃຫຍ່ ແລະພວກນັກບວດ*ຟີລິບປິນ* ຂອງ *ສະເປນ* ພາກັນປັບປຸງຕົນເອງໃຫ້ເຂົ້າກັບ ໂລກແຫ່ງຄວາມຈິງ ອັນເປັນບ່ອນທີ່ພວກເຂົາພວມປະຕິບັດວຽກງານຢູ່ ໂດຍລຳພັງ, ກ້າມກາງອັນຕະລາຍ ແລະເຫດການປະຫວັດສາດຂອງພວກເຂົາເອງ.

ໃນສະຕະວັດທຳອິດ ທີ່ບໍລິສັດເກີດຂຶ້ນໃນໂລກ ມາຈົນເຖິງປະມານ ປີ 1700 ບໍລິສັດ *ວີໂອຊີ* ເຕີບໃຫຍ່ຂຶ້ນ ເປັນອານາຈັກການຄ້າແບບໃຫມ່ ດຳເນີນການຄ້າຫລາກຫລາຍຕະຫລອດຊາຍຝັ່ງມະຫາສະຫມຸດ *ອິນເດຍ* ແລະ *ທະເລຈີນ* ຈາກຕາຫນ່າງຂອງການປະຕິບັດການ *ຢູ່ເມືອງເຄັປທາວນ໌* (Cape- town), ໃນ*ອາຣະເບຍ*ແລະ *ເປີເຊຍ*, ຕາມຊາຍຝັ່ງ *ອິນເດຍ*, ໃນ*ພະມ້າ ສະຫຍາມ* ແລະ*ຫວຽດນາມ*, ເທິງດອນ *ຟໂມຊາ* (Formosa) ແລະຢູ່ເມືອງ*ນາງາ ຊາກິ ປະເທດຍີ່ປຸ່ນ*. ເຖິງຢ່າງໃດກໍດີ ນັບແຕ່ແຣກຕົ້ນມາ ທາງບໍລິສັດແນໃສ່ ສ້າງຜົນປະໂຫຍດເປັນຫລັກແລະກໍປະສົບຄວາມສຳເລັດຢ່າງຍິ່ງໃຫຍ່ໃນເຂດນ່ານນ້ຳຂອງຫມູ່ດອນ*ອິນໂດເນເຊຍ* ພວກພໍ່ຄ້າ*ຊາວດັດຊ* ກໍຄືກັບ*ຊາວຢູຣົບ*ທັງຫມົດຕ້ອງການຕົ້ນ*ການພູ* ແລະຫມາກ*ຈັນຫອມ* (Cloves and nutmeg), ພືດຫອມເຫລົ່ານີ້ ເກີດຢູ່ແຕ່ເທິງຫມູ່ດອນ*ໂມລຸກກັນ* (Moluccan) ເທົ່ານັ້ນ ພວກເຂົາຈຶ່ງພາກັນຫັນອຳນາດການແລ່ນເຮືອ ໄປສູ່ເກາະດອນເຫລົ່ານີ້. ພໍຕົກມາເຖິງລະຫວ່າງກາງສະຕະວັດ *ພວກດັດຊ* ກໍເຮັດໃຫ້*ສຸລະຕານ* ກາຍເປັນຄົນໃຕ້ບັງຄັບ, ພວກເຂົາທຳລາຍ ຫລືຂູດຮີດຊາວນາຂອງ *ສຸລະຕານ* ໃຫ້ຕົກເປັນຂ້າທາດ ແລ້ວຜູກຂາດການຜະລິດ ແລະການຄ້າພືດຫອມທີ່ມີຄ່າເຫລົ່ານີ້ຢ່າງຂາດຕົວ. ໃນຂະນະດຽວກັນ ການຜູກຂາດທາງການຄ້າ

ອັນນີ້ ໄດ້ຕັດຮອນສິ່ງທີ່ເຄີຍເປັນຈຸດສູນກາງ ທາງປະຫວັດສາດການຄ້າທີ່ມີຢູ່ໃນທະເລ *ຊະວາ* ແຕ່ *ດອນໂມລຸກກັສ* (Malaccas) ໄປຮອດເມືອງທ່າທັງຫລາຍຕາມຊາຍຝັ່ງ ທາງກ້ຳເໜືອ, ອອກຈາກນັ້ນຕໍ່ໄປສູ່ສາງສິນຄ້າໃຫຍ່ ຂອງ *ມາລະກາ* ແລະຕໍ່ໄປຈົນເຖິງ *ອິນເດຍ* ກາຍເປັນການຄ້າ ເຊິ່ງນຳເອົາຜ້າແພຕ່ຳຂອງ *ອິນເດຍ* ມາສູ່ດອນ *ຊະວາ* ແລະເອົາເຂົ້າຈາກ *ຊະວາ* ໄປສູ່ເກາະດອນແຫ່ງພືດຫອມ ແລະ*ມາລະກາ*, ແລ້ວເອົາເຄື່ອງພືດຫອມອອກສູ່ໂລກພາຍນອກ. ໃນປີ 1620 ລັດຕ່າງໆ ຕາມຊາຍຝັ່ງກ້ຳເໜືອ ຂອງ *ຊະວາ* ຖືກປາບລົງໂດຍລັດເກາະດອນ ຂອງ *ມາຕະຣຳ* (Mataram) ພວກພໍ່ຄ້າ *ຊະວາ* ເຊິ່ງເຄີຍເປັນໃຫຍ່ ເໜືອເສັ້ນທາງການຄ້າທັງຫມົດ ຖືກບໍລິສັດ*ວີໂອຊີ* ຂັບໄລ່ອອກຈາກວົງການທຸລະກິດ ຕໍ່ມາບໍລິສັດຍຶດ*ມາລະກາ*ໄດ້ ໃນປີ 1641 ບໍລະສັດນີ້ຂະຫຍາຍຄວາມຍິ່ງໃຫຍ່ ທາງການແລ່ນເຮືອອອກ ໃນລະຫວ່າງປີ 1660 ຫາ 1670, ຫລຸດຜ່ອນອຳນາດທາງການຄ້າອັນສຳຄັນ ຂອງ *ອິສລາມ* ເຊັ່ນ *ມາກາສສາຣ໌, ບັນຕັມ* ແລະ *ອະເຈ* (Makassar, Bantam, Aceh) ໃຫ້ກາຍເປັນພຽງເມືອງລູກແຫລ້ງ ແລະອອກສົນທິສັນຍາຈຳກັດສິດທາງການຄ້າ ຂອງພວກເຂົາຫລາຍຢ່າງ ທັງຈຳກັດສິດຂອງລັດນ້ອຍໆທັງຫລາຍ ຕາມເສັ້ນທາງທະເລ*ຊະວາ*ທັງຫມົດ. ບໍລິສັດບໍ່ສາມາດຜູກຂາດຜົນຜະລິດສຳຄັນ ທີ່ເຫລືອຢູ່ໃນພື້ນທີ່ນັ້ນສອງຢ່າງ ຄື ພິກໄທ ຈາກດອນ *ສຸມາຕຣາ* ແລະ *ບໍນຽວ* ກັບແຮ່ກົ່ວ ຈາກ *ແຫລມມາລາຢູ* ເພາະວ່າສິນຄ້າເຫລົ່ານີ້ມີກະຈາຍຢູ່ທົ່ວ ແລະຜູ່ຜະລິດກໍມີຫລາຍທັງແຂງຂັນວ່ອງໄວ, ທັງພວກພໍ່ຄ້າອື່ນໆ ເຊັ່ນ ພໍ່ຄ້າ*ຈີນ ອັງກິດ* ຍັງຄົງດຳເນີນທຸລະກິດຂະຫນາດໃຫຍ່ຂອງພວກເຂົາຢູ່ຕໍ່ໄປ ຫລືບໍລິສັດເອງ ບໍ່ສາມາດຜູກຂາດການຄ້າເຄື່ອງປ່າຂອງດົງ ແລະເຄື່ອງທະເລຊະນິດຕ່າງໆ ທີ່ມີຈຳນວນຫລວງຫລາຍມາຈາກຫມູ່ເກາະດອນໃນທະເລ*ຊະວາ*. ຊົນເຜົ່າ ທີ່ຢູ່ຕາມ ຫມູ່ເກາະດອນຕ່າງໆ ເຊັ່ນ ພວກ *ບູກິສ* (Bugis) ແລະ *ມາເລ* (Malay) ຍັງຄົງດຳເນີນການຄ້າຜະລິດຕະພັນເຫລົ່ານີ້ຢູ່. ເຖິງແນວໃດກໍດີ ຕົກມາເຖິງປາຍສະຕະວັດທີ 17 ບໍລິສັດ VOC ກໍກາຍເປັນບໍລິສັດ ທີ່ມີອຳນາດທາງການແລ່ນເຮືອທີ່ຍິ່ງໃຫຍ່ ຕັ້ງແຕ່ດອນ *ອະເຈ* (Aceg) ໄປຮອດດອນ *ໂມລຸກກັສ* (Moluccas), ເປັນເຈົ້າຄອບຄອງໃນເລື່ອງການຄ້າຢູ່ນ່ານນ້ຳເຫລົ່ານີ້, ສິ່ງອອກ*ການພູ*ແລະຫມາກ*ຈັນຫອມ* ທີ່ເປັນສິນຄ້າກຳໄລງາມທັງຫມົດ ແຕ່ຜູ່ດຽວ ແລະແຮ່ກົ່ວກັບພິກໄທປະມານເຄິ່ງນຶ່ງ ຫລືຫລາຍກວ່ານັ້ນ ພ້ອມດ້ວຍສິນຄ້າຢ່າງອື່ນໆ ອອກໄປຂາຍຍັງບ່ອນຕ່າງໆ.

ຈາກຈຸດສູງສຸດທາງການຄ້າໃນທ້າຍສະຕະວັດທີ 17 ອຳນາດການຄ້າທາງເຮືອ ຂອງ ບໍລິສັດ VOC ຕາມທະເລ*ຊະວາ* ແລະຮ່ອງແຄບ*ມາລະກາ* ກໍຄ່ອຍໆຕົກຕ່ຳລົງ ຢ່າງເນື່ອງນິດ ໃນຕະຫລອດສະຕະວັດທີ 18. ມີປັດໄຈສອງອັນທີ່ປາກົດແຈ້ງກວ່າໝູ່ ໃນບັນດາສາເຫດແຫ່ງການຕົກຕ່ຳອັນຍາວນານ ຂອງການຄ້າທາງທະເລນີ້. ອັນທີນຶ່ງ ຄືນັບແຕ່ປີ 1670 ເປັນຕົ້ນມາ ບໍລິສັດກໍ່ກົດດຶງເຂົ້າໄປຫຍຸ້ງກ່ຽວກັບກິດຈະການພາຍໃນ ຂອງ*ຊະວາ* ຫລາຍຈົນເຖິງກັບວ່າ ໃນ ປີ 1757, ຫລືອາດກ່ອນນັ້ນແດ່, ມັນໄດ້ກາຍເປັນ ພະຍາໃຫຍ່ເໜືອເກາະດອນທັງໝົດ ພ້ອມທັງປະຊາກອນຫລາຍລ້ານຄົນ ທີ່ອາໄສຢູ່ ດອນເຫລົ່ານັ້ນ. ການຂະຫຍາຍຕົວໃນລະຍະຍາວ ກາຍເປັນອັນຕະລາຍສຳລັບບໍລິສັດ ເຊິ່ງກໍຕົວຂຶ້ນມາເພື່ອກອບໂກຍຜົນປະໂຫຍດ ໃຫ້ຄະນະຜູ້ບໍລິຫານ17ຄົນຢູ່ໃນປະເທດແມ່ ພຸ້ນ, ແຕ່ຂ້າຫລວງໃຫຍ່ ແລະຜູ່ຢູ່ໃຕ້ບັງຄັບບັນຊາທັງຫລາຍເຫັນວ່າ ມັນທັງງ່າຍ ແລະ ທັງມີກຳໄລສຳລັບພວກເຂົາ ຫລາຍກວ່າທຸລະກິດຢ່າງອື່ນ ເຊັ່ນ ການອອກກວດກາເຮືອ ທີ່ແລ່ນໜ້າເບື່ອໜ່າຍ ແລະ ການຄ້າຜ່ານໝູ່ເກາະດອນຕ່າງໆ. ທ່າອຽງດັ່ງກ່າວ ແຂງແຮງຂຶ້ນ ຍ້ອນຄວາມຫ້າວຫັນອັນບໍ່ຢຸດບໍ່ຢ່ອນ ຂອງຊາວທະເລກັບພໍ່ຄ້າ*ຈີນ*ໃນ ພາກພື້ນນັ້ນ ແລະຍ້ອນການປະກົດຕົວຂຶ້ນມາຢ່າງໜັ້ນຄົງ ຂອງອຳນາດທາງເຮືອຂອງ *ອັງກິດ* ແລະກິດຈະກຳທາງການຄ້າຕະຫລອດສະຕະວັດນັ້ນ. ພໍມາເຖິງກາງສະຕະວັດ ທີ 18 ຂະບວນການອັນນີ້ໄດ້ກ້າວໜ້າໄປໄກຫລາຍແລະທາງບໍລິສັດ ກໍພວມກ້າວເດີນໄປ ດ້ວຍດີ ຕາມເສັ້ນທາງສູ່ການປ່ຽນຮູບໄປເປັນອຳນາດ ທາງອານາເຂດຫລາຍກວ່າ ອຳ ນາດທາງການເດີນເຮືອ ແລະໂລກການຄ້າຂອງເສັ້ນທາງ ໃນທະເລ*ຊະວາ* ພວມຫັນໄປ ສູ່ຮູບແບບທີ່ເປີດກວ້າງ ແລະມີຄວາມຫລາກຫລາຍ ກວ່າທີ່ທາງບໍລິສັດເຄີຍເຮັດມາ ໃນ ຕອນຕົ້ນຂອງສະຕະວັດ ທີ 17 ແລະກ່ອນໜ້ານັ້ນອີກ.

ໃນທີ່ສຸດຕາໜ່າງການຄ້າຂາຍ ກໍຂະຫຍາຍອອກໄປສູ່ ອາຊີຕາເວັນອອກສຽງ ໃຕ້ ຈາກທາງຕາເວັນຕົກ ເຊື່ອມຈອດທ່າເຮືອຕ່າງໆ ຢູ່ລະຫວ່າງ ເຄິ່ງແຜ່ນດິນ*ອິນເດຍ* ເຂົ້າກັບ ທ່າເຮືອອື່ນໆ ເທິງຝັ່ງຕາເວັນອອກ ຂອງອ່າວ*ເບັງກາ*ນ (Bengal) ໂດຍສະ ເພາະກັບທ່າເຮືອ *ພະມ້າ* ແຫ່ງດິນແດນສາມຫລ່ຽມ ປາກແມ່ນ້ຳ*ອິຣະວະດີ* (Irrawaddy), ທ່າເຮືອ *ສະຫຍາມ* ເທິງຄໍ່ກີ່ວແຫ່ງ*ແຫລມມາລາຢູ* ແລະທ່າເຮືອຕ່າງໆ ທີ່ຢັ່ງ ຢາຍກັນຢູ່ຕາມຝັ່ງຕາເວັນຕົກ ຂອງແຫລມນັ້ນ ແລະຝັ່ງກົງກັນຂ້າມຂອງດອນ *ສຸມາ ຕຣາ*. ການແລກປ່ຽນສິນຄ້ານີ້ ມີພົ້ນຖານມາແລ້ວຫລາຍຮ້ອຍປີ ຈົນວ່າທ່າເຮືອ*ມາເລ*

ແຫ່ງ*ມາລະກາ* ມີທ່າວ່າຈະຮັ່ງມີກວ່ານະຄອນ *ລອນດອນ* ຜຸ້ນ ສິນຄ້າຫລັກໆກໍແມ່ນ ເສື້ອຜ້າ ຈາກ *ອິນເດຍ*, ເຂົ້າແລະໄມ້ສັກ ຈາກ *ພະມ້າ*, ຜະລິດພັນທ້ອງກຸ່ນ ຂອງ *ອິນໂດ ເນເຊຍ* ຕາເວັນຕົກ ແລະ *ມາເລເຊຍ* ໂດຍສະເພາະແມ່ນ ພິກໄທ ແລະ ແຮ່ກ່ວ, ຜະລິດ ພັນຈຳພວກເຄື່ອງຫອມ ທີ່ໄດ້ຈາກບໍລິເວນຮ່ອງແຄບ *ມາລະກາ* ເລິກເຂົ້າໄປໃນປ່າ. ໃນ ການຄ້າອັນນີ້ ຄົນຫລາຍຊົນເຜົ່າແລະຫລາຍລັດ ໄດ້ເຂົ້າມາຊ່ວງເສັງກັນ ໂຮມທັງພໍ່ຄ້າ *ຢູຣົບ* ແລະ ບໍລິສັດການຄ້າຕ່າງໆ ເຊັ່ນ *ภูเจธาติส มุดสลิม* ແລະ *จูลฮัส* (Gujeratis, Muslims, Chulias) *จากอินเดย*, พໍ່ຄ້າຊາວ*เปิเซยและอาหลับ* ທີ່ມາເປັນບາງຄັ້ງ ຄາວ ແລະຢູ່ *ພະມ້າ* ມີພວກ *ອາຣມິນຽນ* (Armenians) ແລະ *ຊີຣຽນ* (Syrians) ແຕ່ເລັກນ້ອຍ.

ອົງປະກອບອັນດຽວທີ່ສຳຄັນສຸດໃນການຄ້າ ທີ່ອ່າວ*เบงกาล* ຄືບໍລິສັດ *ອິດສ ອິນເດຍ* ຂອງ *ອັງກິດ ອີໄອຊີ* (EIC) ເຊັ່ນດຽວກັບ ບໍລິສັດ ຂອງພວກ *ດັດຊ*, ບໍລິສັດ *ອີໄອຊີ* ເປັນວິສາຫະກິດການຄ້າເຄິ່ງລັດ ທີ່ຖືກສັ່ງການມາແຕ່*ຢູຣົບ*. ຕ່າງແຕ່ວ່າ ບໍລິສັດ *ອີໄອຊີ* ບໍ່ມີອານາເຂດບໍລິສັດ ໄວ້ໃນຄອບຄອງຢູ່ອາຊີຕາເວັນອອກສຽງໃຕ້ ເມື່ອກາງສະ ຕະວັດທີ 18 ແຕ່ມີຂໍ້ຍົກເວັ້ນດຽວ ຄື ເປັນດ່ານທີ່ຢູ່ນອກເສັ້ນທາງການຄ້າຢູ່ *ແບນกูเลน* (Benkulen) ເທິງຝັ່ງກ້ຳຕາເວັນຕົກ ຂອງ *ສຸมาตรา*. ຢ່າງໃດກໍດີ, ທ່າເຮືອຄ້າຂາຍ ສຳຄັນຂອງບໍລິສັດ*ອິນເดย* ແລະ ການຄ້າທີ່ຜັດທະນາແບບຊ້າໆກັບ*จีน* ກໍໄດ້ກະຕຸ້ນ ການຄ້າຢູ່ອ່າວ*เบงกาล* ໂດຍທົ່ວໄປ ແລະເຖິງແມ່ນວ່າ ບໍລິສັດ *ອີໄອຊີ* ໄດ້ເຮັດການຄ້າ ເລັກໆນ້ອຍໆກັບທ່າເຮືອ ໃນອາຊີຕາເວັນອອກສຽງໃຕ້ ພວກພໍ່ຄ້າເອກະຊົນ*ອັງกิด* ພໍ່ ຄ້າບ້ານນອກ ກໍຫາກທຳມາຄ້າຂາຍຢ່າງຫ້າວຫັນ ຢູ່ *ອ่าวเบงกาล*. ໃນເວລາທີ່ ກິດ ຈະກຳຂອງພວກເຂົາເກີດມີຄວາມສຳຄັນຂຶ້ນ ແລະຂະນະທີ່ການຄ້າກັບ*จีน* ຂອງບໍລິສັດ ເພີ່ມປະລິມານຂຶ້ນນັ້ນ ບໍລິສັດ*ອีไอซี* ກໍຄ່ອຍໆຖືກດຶງເຂົ້າມາມີບົດບາດທີ່ແຂງຂັນຫລາຍ ຂຶ້ນ ໃນອາຊີຕາເວັນອອກສຽງໃຕ້.

ໃນບັນດາກຸ່ມພໍ່ຄ້າ ທີ່ຄ້າຂາຍ ຢູ່ລະຫວ່າງປະເທດອາຊີຕາເວັນອອກສຽງໃຕ້ນີ້ ພວກທີ່ແຜ່ກະຈາຍ ແລະສຳຄັນຫລາຍທີ່ສຸດ ແມ່ນພວກພໍ່ຄ້າ*จีนฟากทะเล*. ມີຄວາມ ເຫັນຂັດແຍ່ງຢູ່ວ່າ ຄວາມຮຸ່ງເຮືອງທາງການຄ້າຂອງພວກເຂົາ ຂຶ້ນກັບການຈັດອົງ ກອນແບບຄອບຄົວຂະຫຍາຍ ແລະຕາຫນ່າງສາຍພີ່ນ້ອງ ເຮັດໃຫ້ພວກເຂົາມີແຫລ່ງທຶນ ຫລາຍກວ່າແຫລ່ງເງິນທຶນອື່ນໆ ທີ່ພໍ່ຄ້າອາຊີຕາເວັນອອກສຽງໃຕ້ສາມາດທ້ອນໂຮມໄດ້

ແລະໃນລະຫວ່າງພວກອາຊີຕາເວັນອອກສຽງໃຕ້ນຳກັນເອງນີ້ *ຫວຽດນາມ* ກໍມີລະບົບ ສາຍພີ່ນ້ອງ ທີ່ຄ້າຍຄືກັນ ແຕ່ປານນັ້ນກໍຍັງບໍ່ສາມາດຊ່ວງເສັ້ງຫຽບຄຽງໄດ້ ກັບພວກ *ພໍ່ຄ້າຈີນ ຟາກທະເລ* ຄວາມຈິງແລ້ວ ຄວາມເປັນເອກ ດ້ານການຄ້າຂອງ*ຈີນ* ຂຶ້ນຢູ່ກັບ ອົງປະກອບຢ່າງອື່ນອີກຫລາຍອັນ.

ເບິ່ງຄືວ່າ ປະຫວັດສາດເອງ ກໍເອົາໃຈຊ່ອຍພວກ*ພໍ່ຄ້າຈີນຟາກທະເລ* ເນື່ອງ ຈາກວ່າ ໂລກແຫ່ງການຄ້າອັນໄພສານຂອງ*ອານາຈັກຈີນ* ແຜ່ນດິນໃຫຍ່ທີ່ພວກເຂົາ ອອກມານັ້ນ ມີມາກ່ອນ ເສດຖະກິດຂອງອາຊີຕາເວັນອອກສຽງໃຕ້ ທັງໃນດ້ານການຂະ ຫຍາຍຕົວແລະຍັງລ້ຳຫນ້າກວ່າ ໃນດ້ານຂະຫນາດ ບໍລິມາດ ແລະຄວາມສັບຊ້ອນ. ຄວາມຈິງທີ່ວ່າ ພໍ່ຄ້າ*ຈີນຟາກທະເລ* ຍັງຮັກສາສາຍສຳພັນທາງດ້ານຄອບຄົວ ວັດທະ ນະທຳ ກັບຊຸມຊົນຊາວຄ້າຂາຍ ໃນ*ຈີນພາກໃຕ້* ທີ່ຮ່ວມບັນພະບຸຣຸດດຽວກັນມານັ້ນ ເຮັດ ໃຫ້ພໍ່ຄ້າ*ຈີນຟາກທະເລ* ຢູ່ໃນຖານະເປັນຄົນກາງ ຢ່າງບໍ່ມີໃຜທຽມທັນໄດ້ ລະຫວ່າງຕະ ຫລາດຢູ່ແຜ່ນດິນໃຫຍ່ບ້ານເກີດ ກັບຕະຫລາດໃນອາຊີຕາເວັນອອກສຽງໃຕ້, ພວກຊົນຊັ້ນ ນຳທາງການເມືອງ ໃນອາຊີຕາເວັນອອກສຽງໃຕ້ ພົບວ່າ ເປັນການເຫມາະສົມ ທີ່ຈະ ອະນຸຍາດໃຫ້ຄົນພາຍນອກມາຈັດການ ເລື່ອງການຄ້າສາກົນໃຫ້. ພວກພໍ່ຄ້າ*ຈີນ* ເຄື່ອນ ໄຫວເກັ່ງ ເປັນອິສຣະຈາກການອອກແຮງງານເກນ, ຕັ້ງກຸ່ນຖານຢູ່ຕາມນະໂຍບາຍຂອງ ລັດຖະບານ ແລະຕາມຄວາມພໍໃຈຂອງຕົນ ຢູ່ບໍລິເວນທ່າເຮືອ. ລັດຖະບານປະເທດ ຕ່າງໆໃນອາຊີຕາເວັນອອກສຽງໃຕ້ ເຫັນວ່າຄວນເຄັ່ງຄັດນຳປະຊາຊົນໃນເລື່ອງ ການ ຕິດຕໍ່ພົວພັນກັບຊາວຕ່າງຊາດ ຊຶ່ງນຳເອົາຄວາມຄຶດແປກໆເຂົ້າມາ, ຍ້ອນແນວນີ້ຈຶ່ງ ເປັນການແຍກປ່ຽວລາສະດອນ ອອກຈາກຂອບເຂດວຽກງານການຄ້າໄປນຳ.

ໂດຍທົ່ວໄປແລ້ວ ໃນສະຕະວັດ ທີ 18 ພໍ່ຄ້າຕ່າງແດນ ບໍ່ວ່າຈະແມ່ນ *ອາຫລັບ ອິນເດຍ* ຫລື *ຢູຣົບ* ສ່ວນຫລາຍເປັນພໍ່ຄ້າຜູ້ຫ້າວຫັນແລະເດີນທາງໄປໄກ ທົ່ວອາຊີຕາ ເວັນອອກສຽງໃຕ້. ຢ່າງໃດກໍດີ ເວົ້າຢ່າງນີ້ ກໍບໍ່ໄດ້ຂັດຄ້ານວ່າ ພວກເຂົາຍັງຄົງເປັນກ້າງ ຂວາງຄໍ ອຶນບໍ່ລົງຂອງສັງຄົມອາຊີຕາເວັນອອກສຽງໃຕ້ຄອກ. ກົງກັນຂ້າມ ຄວາມຈິງກໍ ຄືວ່າ, ມີຕົວຢ່າງຫລວງຫລາຍ ເມື່ອສະຕະວັດ ທີ 18 ທີ່ຊາວ*ຈີນ*ສາມາດແຊກຊຶມຜະສົມ ຜະສານເຂົ້າກັບສັງຄົມ*ໄທ ກຳພູຊາ* ແລະ *ຊະວາ* ໄດ້ເປັນຢ່າງດີ ຫລາຍກວ່າທີ່ພວກ ເຂົາຕ້ອງເຮັດ ໃນສະຕະວັດທີ 20 ຊ້ຳອີກ. ຄວາມຊຳນານ/ສີມື ຂອງຊຸມຊົນ*ຈີນ* ມີຄວາມ ສຳຄັນຕໍ່ຊີວິດເສດຖະກິດ ແລະ ທາງຣາຊະວັງ ຫລືລັດຖະບານກໍສວຍໂອກາດຍຶດ ຫລືກີດ

ກັນຄວາມຊຳນານບາງອັນ ທີ່ພວກເພິ່ນຂາດເຂີນນັ້ນໄປ. ໃນປະເທດ *ຟິລິບປິນ* ພວກລູກ ຊອດ*ຈີນ* ຍັງຄົງຮັກສາເອກະລັກ ຂອງຕົນໄວ້ໄດ້ດີກວ່າພວກຢູ່ໃນ *ສະຫຍາມ*ອີກ, ພວກ ເຂົາຄ່ອຍໆຫຍັບຍ້າຍເຂົ້າມາມີບົດບາດ ທາງການຮັບເຫມົາແລະການຄ້າ ທຸກໆຄັ້ງທີ່ ໂອກາດທາງເສດຖະກິດອຳນວຍໃຫ້.

ໃນກໍລະນີຂອງຊາວ*ອາຫລັບ* ທີ່ອາໄສຢູ່ທົ່ວໆໄປ ໃນຫມູ່ເກາະດອນນັ້ນ ເປັນໄປ ໃນທຳນອງດຽວກັນນີ້. ບໍ່ວ່າຈະເປັນພໍ່ຄ້າຫລືບໍ່ເປັນກໍຕາມ*ຊາວອາຫລັບ* ຕ້ອງເປັນຜູ້ຮັບ ຜິດຊອບໃນເລື່ອງເຜີຍແຜ່ *ສາສະຫນາອິສລາມ*, ແນ່ນອນວ່າ ພວກເຂົາເຮັດຫນ້າທີ່ສືບ ຕໍ່ສາຍພົວພັນ ລະຫວ່າງຊາວ*ອິສລາມ* ໃນອາຊີຕາເວັນອອກສຽງໃຕ້ ກັບດິນແດນໃຈ ກາງແຫ່ງ*ສັດທາ* ແລະພວກເຂົາກໍມີສະຖານະພາບທາງສາສະຫນາ ແລະເສດຖະກິດດີ ພໍທີ່ຈະອຳນວຍໃຫ້ພວກເຂົາ ເຂົ້າສັງຄົມໃນລະດັບສູງກວ່າພໍ່ຄ້າພື້ນເມືອງຊ້ຳອີກ. ຂໍ້ນີ້ ເປັນຄວາມຈິງ ຢູ່ໃນອາຊີຕາເວັນອອກສຽງໃຕ້ ຄົນພາຍນອກຫັ່ງຫລາຍ ສາມາດເຄື່ອນ ໄຫວ ທັງໃນດ້ານສັງຄົມ ແລະພູມສາດໄດ້ດີກວ່າ ປະຊາຊົນສ່ວນທ້ອງຖິ່ນເອງ ຜົນກະທົບ ຈາກວິວັດທະນາການນີ້ ມີຄືອົງກອນທາງເສດຖະກິດ, ການຄ້າ, ວິຊາຊີບ ແລະຄວາມ ສຳເລັດທັ່ງຫລາຍທີ່ເກີດຂຶ້ນ ຄຽງຄູ່ກັບສັງຄົມ ອາຊີຕາເວັນອອກສຽງໃຕ້ນີ້ ອາດຖືກ ຫມຸນໃຊ້ ໃຫ້ເຂົ້າກັບສັງຄົມທ້ອງຖິ່ນ ແບບປະສົມກົມກືນໄດ້.

ແມ່ນແຕ່ໃນລະດັບເສດຖະກິດ *ຊາວຕາເວັນຕົກ* ກໍເປັນຕົວເດັ່ນ ຢູ່ເທິງເວທີອາຊີ ຕາເວັນອອກສຽງໃຕ້ເມື່ອສະຕະວັດ ທີ 18 ຍົກເວັ້ນໃນປະເທດ*ຟິລິບປິນ* ແລະບາງບ່ອນໃນ ຫມູ່ດອນ *ອິດສ໌ອິນດີສ* (East Indies) ທີ່ພວກ*ດັດຊ*ປົກຄອງ. ການຄ້າທີ່ພວກຕາເວັນ ຕົກດຳເນີນການ ແລະກໍ່ຕັ້ງຂຶ້ນມານັ້ນ ໄດ້ຂະຫຍາຍສາຂາອອກໄປຢ່າງກວ້າງຂວາງ ແຕ່ກໍບໍ່ແມ່ນການຄ້າ *ຢູຣົບ* ທັ່ງຫມົດດອກ ຄວາມຈິງມັນຍັງໄດ້ອາໄສພໍ່ຄ້າ*ຊາວອາຊີ*ຢູ່ ຄືກັນກັບການຄ້າທາງເຮືອ ຂອງ*ສະເປນ* ໃນ *ຟິລິບປິນ* ກ້າຊາວນາໃນບ້ານທີ່ຢູ່ໃຈກາງ ດອນຈະຊື້ ຫລືແລກປ່ຽນສິນຄ້າກັບຜ້າແພ*ອິນເດຍ* ທີ່ນຳເຂົ້າມາສູ່ທ້ອງຖິ່ນໂດຍພວກພໍ່ ຄ້າ*ດັດຊ* ຫລື *ອັງກິດ*ນັ້ນ, ພໍ່ຄ້າທ້ອງຖິ່ນ ເປັນຜູ້ປະຕິບັດການ ໃນລັກສະນະດຽວກັນກັບທີ່ ພໍ່ຄ້າຊາວ*ອິນເດຍ*ຫລື*ອາຫລັບ* ຮຸ່ນກ່ອນເຄີຍເຮັດມາ. ຢູ່ນອກ *ຟິລິບປິນ* ແລະ*ຊະວາ* ຕາເວັນຕົກ ພວກ*ພໍ່ຄ້າອາຊີ* ຫ້າວຫັນຂັນແຂງ ຫລາຍກວ່າ*ພໍ່ຄ້າຢູຣົບ*, ແລະອິດທິພົນ ທາງວັດທະນະທຳແລະທາງການເມືອງຂອງ*ພໍ່ຄ້າອາຫລັບ* ຫລື *ມາເລ* ຫລື *ຫວຽດ ນາມ* ມີຄວາມສຳຄັນຫລາຍກວ່າອິດທິພົນຂອງຊາວຕາເວັນຕົກ ຢ່າງປຽບໃສ່ກັນບໍ່ໄດ້.

ເຖິງຢ່າງໃດກໍດີ ພໍເຖິງກາງສະຕະວັດ ປາກົດວ່າການຂະຫຍາຍຕົວທາງການຄ້າ ແລະ ທາງການເມືອງຂອງຊາວ*ຢູຣົບ* ເລີ່ມດຶງດູດຄວາມສົນໃຈຂອງຊາວ*ຢູຣົບ* ໄປສູ່ພາກພື້ນ ນັ້ນ ແລະເລີ່ມສ້າງເງື່ອນໄຂອັນອຳນວຍໃຫ້ແກ່ ການນຳເຂົ້າອຳນາດທາງການເມືອງ ຂອງພວກ*ຢູຣົບ*ເອງ ໃນເມື່ອຄວາມໄຝ່ສູງຂອງພວກ*ຢູຣົບ* ຂະຫຍາຍອອກສູ່ໂລກແລະ ເມື່ອການພັດທະນາ ທາງອຸດສາຫະກຳໃນ*ຢູຣົບ* ໄດ້ສ້າງເງິນກອງທຶນຂຶ້ນມາ ແລະຕ້ອງ ການວັດຖຸດິບຈາກອາຊີຕາເວັນອອກສຽງໃຕ້ນັ້ນ ຮູບແບບການຄ້າເກົ່າໆ ໃນອາຊີຕາ ເວັນອອກສຽງໃຕ້ ກໍຖືກສັ່ນສະເທືອນ ດ້ວຍຄວາມສັບສົນທາງການເມືອງແບບໃຫມ່, ກໍ ບໍ່ແມ່ນວ່າ ໃນສະຕະວັດ ທີ 18 ຈະພ້ອມກັນບາດຽວຫມົດທຸກລັດໃນອາຊີຕາເວັນອອກ ສຽງໃຕ້ ເພື່ອຜະເຊີນຫນ້າກັບປາກົດການໃຫມ່ໆ ອັນເປັນການທ້າທາຍບໍ່ພຽງແຕ່ທາງ ວັດທະນະທຳ ແລະ ເຕັກໂນໂລຊີເທົ່ານັ້ນ ຍັງແມ່ນການເມືອງແລະເສດຖະກິດນຳອີກ ເຊິ່ງເຮັດໃຫ້ຣາຊະອານາຈັກ ຂອງ *ພຸທະສາສະຫນາ* ກັບຂອງ *ສຸລະຕານ ມຸດສະລິມ* ທັງຫລາຍ ກາຍເປັນພຽງຫົວເມືອງ ດ່ານຮັກສາອານານິຄົມ ໃຫ້ແກ່ *ສະເປນ* ກັບ *ເນເທີ ແລນ* ເທົ່ານັ້ນ.

ບົດທີ 7 : ເຈົ້າຊີວິດ ເມືອງພຸດ

ເຈົ້າຊີວິດ ທີ່ນັບຖື*ພຸທະສາສະຫນາ*ນິກາຍ*ເຖຣະວາດ* (Theravada Buddhist) ໃນອາຊີຕາເວັນອອກສຽງໃຕ້ ແມ່ນຫມາກຜົນຂອງຄວາມປັ່ນປ່ວນທາງການເມືອງ ແລະ ການປ່ຽນແປງທາງວັດທະນະທຳ ມາແຕ່ລະລະຍະ ຕິດຕາມດ້ວຍຄວາມຫລົ້ມຈົມ ຂອງ ມະຫາອານາຈັກ ທີ່ຢູ່ພາຍໃຕ້ວັດທະນະທຳ*ອິນເດຍ* ຍຸກກ່ອນໆ ເມື່ອ *ພຸທະສາສະຫນາ* ແຜ່ເຂົ້າມາສູ່ພາກພື້ນນີ້ ແຕ່ສະຕະວັດທີ 11 ຫາ 15. ໃນບັນດາເຈົ້າຊີວິດເຫລົ່ານັ້ນ ຜູ່ ເດັ່ນດັງກວ່າຫມູ່ ນັບແຕ່ບໍລິເວນຊາຍແດນປະເທດ*ຈີນ* ກ້ຳຕາເວັນຕົກສຽງໃຕ້ ໄປເຖິງ ຄໍກີ່ວ ແຫ່ງ *ແຫລມມາລາຢູ* ແມ່ນເຈົ້າຊີວິດ *ພະມ້າ* ແຫ່ງເມືອງ *ອັງວະ* (Ava) ໃນ *ພະມ້າພາກກາງ*, ເຈົ້າຊີວິດແຫ່ງ *ພະນົມເປັນ* (Phnom Penh) ໃນ*ກຳພູຊາ* ແລະເຈົ້າຊີ ວິດ *ອະຍຸທະຍາ* (Ayudhya) ທີ່ຢູ່ເຫນືອ *ບາງກອກ* ໃນປັດຈຸບັນ.

ຈາກອານາຈັກເຫລົ່ານີ້ ພຣະປາຣະມີອັນຍິ່ງໃຫຍ່ ແລະ ພຣະຣາຊະອຳນາດ ທາງການທະຫຼ,ນ ໄດ້ແຜ່ອອກໄປເຖິງເມືອງຕ່າງໆ ແລະຄ່ອຍໆອ່ອນແຮງລົງ ເມື່ອ ຫ່າງໄກອອກໄປຈາກນະຄອນຫລວງ ຈົນບໍ່ສາມາດ ຮັບປະກັນຄວາມຊື່ສັດຈົງຮັກພັກດີ ຂອງຫົວເມືອງໄກໆເຫລົ່ານີ້ ຫລື ຈົນວ່າ ໄປຕຳກັບອຳນາດ ຂອງເມືອງໃດເມືອງນຶ່ງ ໃນບໍ ລິເວນໃກ້ຄຽງນັ້ນ. ໃນເຂດທີ່ມີປະຊາກອນອາໄສຢູ່ຫນ້ອຍ ຕາມບໍລິເວນຊາຍແດນ ແມ່ນ ທີ່ຕັ້ງ ຂອງ *ເມືອງພຸດ* ທີ່ອ່າວນ້ອຍກວ່າ ເຊັ່ນ *ເມືອງສານ* (Shan) ແລະ *ເມືອງລາວ* ໃນພາກຕາເວັນອອກສຽງເຫນືອ ຂອງ *ພະມ້າ*, ທາງພາກເຫນືອ ແລະຕາເວັນອອກສຽງ ເຫນືອຂອງ *ໄທ* ແລະ *ລາວ*. ອຳນາດ ແລະອິສຣະພາບ ຂອງເມືອງນ້ອຍໆກຸ່ມທີສອງນີ້ ຮຸ່ງເຮືອງຂຶ້ນແລະເສື່ອມລົງ ໃນຈັງຫວະເວລາກົງກັນຂ້າມ ກັບຄວາມເຂັ້ມແຂງແຫ່ງຣາ ຊະອານາຈັກ *ອັງວະ* ແລະ *ອະຍຸທະຍາ*.

ສະຖາບັນກະສັດ ໄດ້ສະແດງບົດບາດທີ່ສຳຄັນຢ່າງນຶ່ງ ໃນອາຊີຕາເວັນອອກ ສຽງໃຕ້ ທີ່ນັບຖື *ພຸທະສາສະຫນາ ເຖຣະວາດ* ດ້ວຍການຈັດໃຫ້ມີລະບົບອຳນາດທາງ ສັງຄົມແລະການເມືອງ ເຊິ່ງທັບເຕັງກັນ ແລະຢູ່ເຫນືອຄຸນຄ່າຂອງ *ສາສະຫນາພຸດ*. ທິດ ສະດີຂອງ *ອິນເດຍ* ແລະຂອງ *ສາສະຫນາພຸດ* ກ່ຽວກັບ ເຊື້ອສາຍກະສັດ ສົມບອກ ເຂົ້າກັບຮູບແບບການເມືອງທ້ອງຖິ່ນ ແລະດ້ວຍເຕັກນິກບາງຢ່າງ ເຊັ່ນ ສ້າງສຳພັນທະ ໄມຕີ ໂດຍການສົ່ງເຄື່ອງຣາຊະບັນນາການ ແລະດອກໄມ້ເງິນ ດອກໄມ້ຄຳ ໄປໃຫ້ເມືອງ

ຫລວງ ເຊິ່ງຄາດວ່າ ໄດ້ແບບຢ່າງມາແຕ່*ຈີນ* ນັ້ນ ໄດ້ສ້າງສະຖາບັນ ທີ່ມີລັກສະນະພິເສດຢ່າງນຶ່ງ ໃນອາຊີຕາເວັນອອກສຽງໃຕ້. ເຖິງແມ່ນວ່າ ເຈົ້າຊີວິດ*ລາວ* ເປັນທີ່ຍອມຮັບຂອງເຈົ້າຊີວິດ*ພະມ້າ*, ມັນກໍຍັງມີຄວາມແຕກຕ່າງກັນຢ່າງຈະແຈ້ງຫລາຍຢ່າງ ແຕ່ປະເທດນຶ່ງຫາປະເທດນຶ່ງ ອັນສະທ້ອນເຖິງ ປະສົບການທາງປະຫວັດສາດ ຂອງແຕ່ລະປະເທດ.

ປະເພນີ *ຮິນດູ-ພຸດ* ກ່ຽວກັບການເປັນເຊື້ອສາຍເຈົ້າ ເຊິ່ງກຶ່ງນຳເຂົ້າໄປສູ່ອາຊີຕາເວັນອອກສຽງໃຕ້ ໃນສະຕະວັດ ທີ 7 ນັ້ນ ເຫັນວ່າ ເຈົ້າຊີວິດ ເປັນຜູ່ມີບຸນບາຣະມີ ຫລື *ກຳມະ* (Karma) ທີ່ຜູກພັນພຣະທາຊຸະອານາຈັກເຂົ້າກັບຈັກກະວານ ເປັນຜູ່ມີພອນສະຫວັນໃນໂຕພຣະອົງເອງ ແລະໂດຍຖານະຕຳແຫນ່ງຂອງພຣະອົງ ໃນເລື່ອງສ້າງຄວາມສຳພັນກັບໂລກທິບ ດ້ວຍການເຮັດໃຫ້ຮ່າງກາຍ ແລະການກະທຳຂອງພຣະອົງ ກາຍເປັນເລື່ອງສັກສິດຢູ່ທີ່ນັ້ນ. ອົງຄະມົນຕີ ຂອງເຈົ້າຊີວິດ ເປັນຜູ່ຫາເລີກງາມຍາມດີ ເພື່ອຈັດຕັ້ງພິທີລ້ຽງຜີຕາແຣກ (ແຣກນາຂວັນ) ເປັນປະຈຳທຸກໆປີ ເຈົ້າຊີວິດ ຊົ່ງເປັນອົງອຸປະຖຳ *ພຣະພຸທະສາສະໜາ* ແລະ ສິລະປະຫັ່ງຫລາຍ. ວັນນະຄະດີ *ອິນເດຍ* ແລະ *ພຸທະສາສະໜາ* ໄດ້ສະແດງຣາຊະທຳ ສຳລັບເຈົ້າຊີວິດ ແລະໄພ່ຟ້າ ປະຊາຊົນຂອງພຣະອົງເຊັ່ນດຽວກັບທີ່ ວິຣະບຸລຸດ ໃນມະຫາກາບ *ພຣະລັກພຣະຣາມ* ຂອງ *ອິນເດຍ* ເຊິ່ງໄຊຊະນະອັນມີກຽດແລະຍິ່ງໃຫຍ່ຂອງພຣະອົງ ເໜືອມານຮ້າຍຫັ່ງຫລາຍ ເປັນສັນຍະລັກ ແຫ່ງພຶດຕິກຳອັນປະເສີດ ສຳລັບເຊື້ອສາຍກະສັດ.

ດ້ວຍການກຳນົດຕົວຕົນ ຂອງໄພ່ຟ້າປະຊາຊົນ ໃຫ້ເປັນພຽງ " *ຂີ້ຝຸ່ນກ້ອງພື້ນພຣະບາດ(ຕີນ ຂອງເຈົ້າຊີວິດ)* " ຫລື *"ຂ້າຮັບໃຊ້ ແຫ່ງພຣະອົງ* " ຄຳຣາຊາສັບ ທີ່ຊົມໃຊ້ປະກອບພຶດຕິກຳ ຂອງເຈົ້າຊີວິດ ຈຶ່ງເຮັດໃຫ້ພຣະອົງ ຢູ່ຫ່າງເຫີນຈາກຄົນອື່ນໆ. ໂດຍຊົ່ງພຳນັກພັກເຊົາ ຢູ່ແຕ່ພາຍໃນຣົ້ວກຳແພງຫໍໂຮງ ເຈົ້າຊີວິດແຫ່ງ*ເມືອງພຸດ* ມັກພົບວ່າ ອິດທິພົນ ຂອງພຣະອົງ ເພື່ອຈັດການກັບເຫດການອ້ອມຮອບຕົນເອງນັ້ນ ມີຂອບເຂດຈຳກັດ, ໃນຫລາຍກໍລະນີ ບັນທຶກປະຫວັດສາດທີ່ແຕ່ງຂຶ້ນ ໃນຣາຊະວັງ ເວົ້າຍົກຍໍປັ້ນຄວາມມີປະສິດທິພາບ ແລະຄວາມສຳຄັນຂອງເຈົ້າຊີວິດ. ພາຍໃນພຣະຣາຊະວັງ ການປະພຶດປະຕິບັດ ຂອງພຣະອົງ ກຶ່ງກຳນົດໂດຍ ອົງຄະມຸນຕີ *ພາມ* ແລະພຣະຣາຊະໂອງການ ຄວາມຄຶດຄວາມເຫັນຂອງພຣະອົງ ກໍເກີດຈາກການທີ່ ພຣະອົງໄດ້ໂອ້ລົມກັບຜູ່ໃກ້

ຊິດຮັກແພງ. ເຊັ່ນ ໃນ *ພະມ້າ* ເຈົ້າຊີວິດ ນຸ່ງເຄື່ອງກຽດຕິຍົດ ຫນັກກວ່າ 50 ປອນ* ຮັດແຫນ້ນໄວ້ ປະຕິບັດຮາຊະກິດ ຕາມຂໍ້ມູນທີ່ມີຜູ່ສົ່ງຕ່ໆກັນມາ ເຊິ່ງມັກຜິດພາດເລື້ອຍໆ ທັງກໍຖືກບີບດ້ວຍກົດເກນພິທີການ ທາງໂຫຣາສາດ ແລະປະເພນີເກົ່າ, ເຈົ້າຊີວິດ ແຫ່ງ *ເມືອງພຸດ* ໃນອາຊີຕາເວັນອອກສຽງໃຕ້ ສະໄຫມສະຕະວັດ ທີ 18 ຈຶ່ງຢູ່ໃນສະຖານະພາບຄືນັກໂທດ. ເນື່ອງຈາກວ່າ ປະຊາຊົນ ມັກຖືເຈົ້າຊີວິດເປັນຄື *ເທວະດາ* ເປັນ *ພຣະໂພທິສັດ ອົງນຶ່ງ(ຜູ່ຈະມາເກີດ ເປັນພຣະພຸທະເຈົ້າ ໃນ ຊາດຕໍ່ໄປ)*, ເຈົ້າຊີວິດ ໃນ *ເມືອງພຸດ*ທັງຫລາຍ ຈຶ່ງມັກປະກາດຕົນເອງວ່າ *ເປັນເທວະດາ* ຫລື *ເປັນເທວະຣາຊາ*. ເຫດການແນວນີ້ ເກີດຂຶ້ນແລ້ວສອງເທື່ອໃນ *ສະຫຍາມ* ແລະ *ພະມ້າ* ເມື່ອສະຕະວັດ ທີ 18 ຄື ພຣະເຈົ້າແຜ່ນດິນຖືກໂຄ່ນລົ້ມອອກຈາກບັນລັງ ຍ້ອນຄວາມເຊື່ອແບບຜິດໆອັນນີ້.

ພຣະຣາຊະວັງ ເປັນຈອມຍອດ ແຫ່ງຣາຊະອານາຈັກ ການປຸກສ້າງຣາຊະວັງ ເຮັດຕາມແບບ ສັນຍະລັກ ແຫ່ງລະບົບ *ຈັກກະວານຣິບດູ*. ເຈົ້າຊີວິດ ເປັນສູນໂຮມຈິດໃຈ ສຳລັບສັງຄົມ ເຊິ່ງມີການຈັດຕັ້ງທາງສັງຄົມ ທາງການເມືອງ ແລະທາງພາສາ ຕາມລຳດັບຊັ້ນປົກຄອງ, ດ້ວຍການດຳລົງຄົງຕົວຂອງມັນ ໄດ້ເຮັດໃຫ້ພູມປັນຍາ ກັບຄວາມຍືນຍົງຂອງການຈັດຕັ້ງປະເພດນີ້ ກາຍເປັນສິ່ງຖືກຕ້ອງ.

ເມືອງອັງວະ (Ava)

ອັງວະ ເປັນອານາຈັກຣັດຊະທາຍາດ ແຫ່ງ *ມະຫາອານາຈັກພຸກາມ*(Pagam). ໃນລະຫວ່າງສະຕະວັດ ທີ 10 ແລະ 13 ເຈົ້າຊີວິດແຫ່ງ *ພຸກາມ* ໄດ້ຊົງຮິບໂຮມດິນແດນຕ່າງໆ ເຂົ້າກັນ ເຊິ່ງຕໍ່ມາໄດ້ກາຍເປັນແກນແຂງຂອງ *ພະມ້າ* ສະໄຫມໃຫມ່ ໃນ*ລັດພຸດ*ບ່ອນດຣອ ເຊິ່ງຈັດຕັ້ງຂຶ້ນ ຕາມແນວຄຶດວັດທະນະທຳແບບທຳມະດາ ແລະປົກຄອງຜ່ານລະບົບ ຍຸກກ່ອນລະບົບຣາຊະການ ທີ່ມີໂຄງຮ່າງແບບຫລົມໆ ໂດຍອີງໃສ່ກຳລັງເສດຖະກິດ ຂອງການໃຊ້ຊົນລະປະທານ ການປູກເຂົ້າໃນຮ່ອມ*ພູ ກີວສີ* (Kyaukse). ຣາຊະວົງຕ່ໆມາ ໄດ້ດຳເນີນຕາມແບບລະບົບນີ້. ສາຍສຳພັນທາງການບໍລິຫານ ແລະທາງ

---

* 1 ປອນ ເທົ່າກັບ 0,454 ກິໂລກຼາມ(OXFORD Advanced Learner's DICTIONARY)

ภาบเมืองๆ ที่สำคัน ອັบเปັบธาภภาบ ขอๆคอาบสามัภคิ และคอาบหมั้บค้ๆ ขอๆ *เมืองอังวะ* มิลักสะบะเปັบละบับ ผู่อุปะกำา-ภับผู่ธับภาบอุปะกำา โดยสะเพาะแล้อ แม่บคอาบสำพับละหว่าๆ เจ้าแขอๆปะจำแขอๆต่าๆๆ ภับเจ้าชิอิด. ภอๆหับปะจำภาบ ขอๆเมืองอังวะ ตั้งยู่อ้อมเมืองหลวๆ, กำลังคับและแหล่ๆ ผาสิอาภอบ ขอๆธาซุะอาบาจักบั้บ ผระเจ้าชิอิด จัดแบ่งให้เปับหบ้าที่ ขอๆ ผระธาซุะโอธ์ด ข้าธาซุะภาบ และผระยาดติอิๆหัๆหลาย ขอๆผระอิๆ เอิ้บว่า *ม้ธอสา*(Myo-sa), ภาบที่ผอภเอิาเอ้า *"ภิบ"* เมืองๆ บั้บ ภ้อบอ่า แขอๆเหล่ำ บั้บ ส้าๆลายธับให้แภ่ผอภเอิา. ผระบ์ธัมมะอิๆสา ที่ยู่ใบเมืองหลวๆ มอบอำ บาด ให้แภ่ผะบักๆาบห้อๆกุ่บขอๆติบ ใบแขอๆต่าๆๆ สำลับผิบตอบแหบ ภ์ถื ผาสิอาภอบ และแธๆๆาบ ที่ธธุภธ้อๆเอิาจาภปะซาชิบห้อๆกุ่บ.

หบ้าที่สำคับขอๆ *ลัดภะบาบอังวะ* แม่บ ภาบธักสาคอาบสะหง์บ และ บำลุๆ *ผระพุทะสาสะหบา* โดยผ่าบภาบปะสาบๆาบ ขอๆภาบใช้กำลังคับ และภาบเภับผาสิ. ละบับภาบปักคอๆขอๆลัด มิสูบภาๆยู่สะผาลัดภะมุบติ เชิ่ๆ ใช้อำบาดบ่ลิหาบ และตุลาภาบ แหบผระเจ้าชิอิด บ่มิภาบภะทำาอับใดขอๆ ลัด มิผิบใช้ได้ ก้าบ่มิภาบยอมธับ และจิดทะบธุบบำสะผา *ธลูโดอ* (Hlutdaw) เสบาบ่ดิ หัๆสี่ (Wun-gyi) แต่ละคับมิขอบเขดภาบปะติบัดๆาบที่แตภต่าๆภับ แต่มักเตังซ้อบภับสะเหมิ. เสบาบ่ดิเหล่ำบั้บ มิละบะข้าธาซุะภาบ ซ่อยปะติบัด วธุภหลายคับ ถื ผู่สิ่ๆข่าวสาบ สะหมธุบ, ผู่ป่าวปะภาด, ผู่กำภับธาซุะพิหิ ผู่สำ หลอด และผู่ขึ้บทะบธุบภาบภิบบ้ำสาบาบ. บอภจาภผอภผู่ชาย ที่ธับผิดชอบ วธุภหลวๆ ภาบภวดภาภาบเงิบขอๆลัด ภืภยิภให้เปับหบ้าที่ขอๆเจ้าชิอิด โดย ผ่าบสะผาอิๆละมุบติ (Bye-daik) เชิ่ๆปะภอบด้วย เสบาบ่ดิ ผายใบสี่คับ (Atwin-wun) ภิดจะภาบผายใบอังหลวๆ ก์ติภยู่ใบกำมือขอๆเสบาบ่ดิหัๆสี่คับ บี้ และผอภเอิา ก์ผ่ใจภับสะผาบอับบี้ขอๆติบดิ และบาๆเหื่อ ก์ยังมิภาบสวยใช้ อำบาดเหบือภว่าผอภสะผา *ธลูโดอ*(Hlutdaw) บั้บซ้ำอิภ. เหิๆแบอใดก์ดิ ยัๆ มิข้าธาซุะภาบอื่บอิภ เปับจำบวบหลาย ที่ปะติบัดหบ้าที่ย่าๆเปับเอภะลาด บ่ ข็บภับเสบาบ่ดิหัๆสองผอภบี้ และยังได้ธับ ผระธาซุะอะบุยาด ให้เอ้าเฝ้าโดย ภิๆ เมื่อมิอธุภๆาบสำคับ เชุ่บว่า ภิมทะหาบขอๆภองหับปะจำ และ ทะหาบธับ

ໃຊ້ ເຊິ່ງໃຫ້ກຳລັງທາງທະຫານແກ່ພຣະເຈົ້າຊີວິດ ແລະ ຫນ່ວຍງານສອດແນມຂອງເຈົ້າຊີວິດ ທີ່ຕິດຕາມກວດກາ ການປະຕິບັດວຽກຂອງຫນ່ວຍງານອື່ນໆ.

ໃນປະເທດ*ພະມ້າ* ກໍຄືກັບປະເທດອື່ນໆ ທີ່ນັບ*ຖືພຸທະສາສະຫນາ* ໃນອາຊີຕາເວັນອອກສຽງໃຕ້ ກົດມົນທຽນບານ ທີ່ໃຊ້ເປັນຫລັກເກນ ໃນການສືບຣາຊະສົມບັດນັ້ນ ນຳໃຊ້ປະຕິບັດບໍ່ໄດ້ງ່າຍໆສະເຫມີໄປ, ເພາະມີຜູ່ໄຝ່ຝັນ ຢາກຂຶ້ນຄອງຣາຊະສົມບັດ ຢ່າງຫລວງຫລາຍ. ການທີ່ເຈົ້າຊີວິດ ມີມະເຫສີຫລາຍອົງ ກໍເຮັດໃຫ້ປະເພນີ ການໃຫ້ລູກຊາຍກົກເປັນຜູ່ສືບບັນລັງ ກາຍເປັນເລື່ອງຫຍຸ້ງຍາກຂຶ້ນນຳ. ຍ້ອນວ່າ ລະບົບ (Myo-sa) ໄດ້ສ້າງຄວາມສຳພັນອັນຫນັກແຫນ້ນ ລະຫວ່າງພຣະຣາຊະກຸມານທັງຫລາຍ ແລະບຸກຄົນຊັ້ນຕ່າງໆ ໃນລະບົບຂ້າຣາຊະການ ຢູ່ເມືອງຫລວງ ກັບຫົວເມືອງນ້ອຍ, ລະບຽບການເມືອງ ຈຶ່ງປ່ຽນແປງໄປຕາມການແບ່ງອຳນາດ ເມື່ອເຈົ້າຊີວິດ ສ້ຽງພຣະຊົນ. ອຳນາດຫນ້າທີ່ຂອງເຈົ້າຊີວິດ ທີ່ຂຶ້ນຄອງຣາຊະສົມບັດແທນ ມັກຖືກຮຸກຮານ ໃຫ້ອ່ອນກຳລັງລົງ ດ້ວຍແຜນການຂອງຝ່າຍສັດຕູ ເຊິ່ງກໍແມ່ນ ຍາດພີ່ນ້ອງ ເຊັ່ນ ພວກລຸງ(ພຣະປິຕຸດສາ) ແລະອ້າຍ(ພຣະເຊດຖາ). ພວກເສນາບໍດີ ຄູ່ຕໍ່ສູ້ໃນສະພາ *ຮລູໂດ* (Hlutdaw) ແລະ ສະພາອົງຄະມົນຕີ (Bye-daik) ກັບນາຍທະຫານ ພ້ອມທັງແຫລ່ງກຳລັງພົນຂອງເຂົາເອງ ຕະຫລອດທັງພວກເຈົ້າຊາຍ ທີ່ຕິດຕໍ່ໂດຍກົງ ກັບພວກຂຸນນາງ ແລະຂ້າຣາຊະການ ໄດ້ສ້າງທ່າອຽງ ຢາກແບ່ງແຍກ ຕໍ່ຕ້ານ ການຄວບຄຸມ ຂອງຝ່າຍອານາຈັກສູນກາງ ໃນເມື່ອໂຍບາຍ ຂອງຣາຊະສຳນັກ ໄດ້ແກ່ດຶງເຈົ້າຊີວິດຈົນຂາດຄວາມເອົາໃຈໃສ່ ຫ່ວງໃຍ ໃນວຽກງານຫລວງອັນສຳຄັນ.

ນັບແຕ່ອານາຈັກ *ພຸກາມ* (Pagam) ຫລົ້ມຈົມລົງ ໃນປີ 1289 ມາເຖິງສະຕະວັດ ທີ 16 ດິນແດນ ເຊິ່ງບັດນີ້ ເອີ້ນວ່າ *ພະມ້າ* ກຶກສູນກາງການເມືອງຕ່າງໆ ຊ່ວງຊິງແບ່ງປັນກັນ ແຕ່ລະສູນກາງໄດ້ເປັນໂຕແທນ ໃຫ້ແກ່ຮູບແບບລັດ*ຊາວພຸດ* ທີ່ກໍ່ເກີດຂຶ້ນຢູ່ເມືອງ *ພຸກາມ* ແຕ່ຫາກໃຊ້ພາສາປາກເວົ້າແຕກຕ່າງກັນ. ພວກທີ່ຢູ່ເຂດພາກໃຕ້ເວົ້າ*ພາສາມອນ* ຄ້າຍຄືກັບ ພວກຢູ່*ກຳພູຊາ* ຫລື *ຂະເຫມນ* ມີສູນກາງ ຢູ່ ເມືອງ*ພະໂຄ* (Pegu), ເຈົ້າຊີວິດອົງປົກຄອງເມືອງນີ້ ບ່ຍອມເຂົ້າກັບເມືອງທີ່ໃຫຍ່ກວ່າ ເຊິ່ງຕັ້ງຢູ່ດ້ານເຫນືອ ມາຈົນຮອດ ສະຕະວັດ ທີ 16. ນັບເປັນເວລາດົນ ເກືອ 300 ປີ ຫລັງຈາກອານາຈັກ *ພຸກາມ* ຫລົ້ມຈົມ, *ປະເທດພະມ້າ* ພາກເຫນືອ ປົກຄອງໂດຍ ເຈົ້າເຊື້ອສາຍ*ໄຕ*ຫລາຍອົງ ຈາກເຂດພູພຽງ *ລັດສານ* ທີ່ຢູ່ຕິດໆກັນ, ເຊິ່ງເຈົ້າປົກຄອງພວກນີ້ ບ່ເຄີຍ

ສາມາດຜາບແພ້ ກອງກຳລັງທ້ອງຖິ່ນ ມາຈົນເຖິງສະໄໝ *ພຣະເຈົ້າຕະເບງຊະເວຕີ* (Tabinshwehti) ເຈົ້າຊີວິດເມືອງ*ຕອງອູ* (Toungoo) ທີ່ເຮັດເສິກແພ້ ຜາບໄດ້ທັງ ກ້ຳເໜືອ ແລະກ້ຳໃຕ້ ໃນລະຫວ່າງປີ 1539 ແລະ 1555.

ເຖິງຢ່າງໃດກໍດີ ອານາຈັກແຫ່ງຣາຊະວົງ *ຕອງອູ* (Toungoo) ແຕ່ເກົ່າມາ ກໍບໍ່ໄດ້ຫມັ້ນຄົງພໍເທົ່າໃດ *ພຣະເຈົ້າຕະເບງຊະເວຕີ* ແລະເຈົ້າຊີວິດອົງຕໍ່ໆມາ ບໍ່ສາມາດ ສ້າງລະບົບບໍລິຫານ ທີ່ເຂັ້ມແຂງພຽງພໍ ເພື່ອຢຸດຍັ້ງ ພວກທີ່ມີທ່າອຽງ ຢາກແບ່ງແຍກ ດິນແດນ ເຊິ່ງກຶກຕຶ່ມຫມໍ້ຕຶ່ມເຈຍຂຶ້ນ ຍ້ອນຂໍ້ພິພາດ ທາງດ້ານຜົນປະໂຫຍດ ແລະການ ຍາດແຍ່ງ ລະຫວ່າງເຊື້ອສາຍຕ່າງກັນ. ດັ່ງນັ້ນ ພວກເຂົາຈຶ່ງໄດ້ສະຖາປະນາ ເມືອງສູນ ກາງແຫ່ງໃຫມ່ຂຶ້ນ ເມືອງນຶ່ງ ທາງກ້ຳເໜືອຂອງ ເມືອງ *ອັງວະ* (Ava) ໃກ້ກັບອູ່ເຂົ້າ ອູ່ນ້ຳ ແຫ່ງເຂດ *ກົວສີ* (Kyaukse) ເຊິ່ງເປັນຫົວໃຈທາງເສດຖະກິດ ຂອງ *ອານາຈັກ ພຸກາມ* (Pegam). ທັງໆທີ່ຕັ້ງຢູ່ເທິງແຜ່ນດິນໃຫຍ່ ດ້ານໃນແທ້ໆ ແຕ່ອານາຈັກ *ອັງວະ* ກໍໄດ້ຄ້າຂາຍທາງທະເລ ຢ່າງຫລວງຫລາຍ ໂດຍຜ່ານອ່າວ*ເບງກາມ* (Bengal) ເຂົ້າ ໄປສູ່*ຈີນ* ທາງກ້ຳເໜືອ. *ຣາຊະວົງຕອງອູ* ທີ່ຟື້ນຟູຄືນໃຫມ່ ແລະ ກຳການກວດກາມາ ແຕ່ຕົ້ນໆສະຕະວັດທີ 17 ສືບຕໍ່ຄອງບັນລັງມາຮອດ 150 ປີ ໄດ້ສວຍໃຊ້ທ່າແຮງຈາກ ແຫລ່ງຄ້າຂາຍເຫລົ່ານີ້ ທັງນີ້ ເພື່ອສ້າງລະບຽບການປົກຄອງອັນລະອຽດກ໋ວນ ແລະ ມີປະສິດທິພາບກວ່າເກົ່າ. ເມື່ອໄດ້ຮັບຮູ້ວ່າ ມີແຕ່ກຳລັງທະຫານຢ່າງດຽວ ບໍ່ສາມາດ ເຮັດໃຫ້ລະບອບການເມືອງຍັ່ງຍືນໄດ້. ຣາຊະວົງ *ຕອງອູ* ໄດ້ເພີ່ມຄວາມພະຍາຍາມຂຶ້ນ ຢ່າງຫລວງຫລາຍ ເລັ່ງໃສ່ການປະຕິຮູບ ແຕ່ມາເຖິງ ປີ 1752 ອຳນາດສູນກາງ ກໍໄດ້ ຍອມຈຳນົນ ໃຫ້ແກ່ກອງກຳລັງຝ່າຍແບ່ງແຍກ ແລະ ຈາກນັ້ນ *ລາຊະວົງຕອງອູ* ກໍເຖິງ ແກ່ອະວະສານ.

ເມືອງ ອະຍຸທະຍາ

ອານາຈັກ *ອະຍຸທະຍາ* ສ້າງຕັ້ງຂຶ້ນເປັນເມືອງຂະໜາດນ້ອຍແຫ່ງນຶ່ງ ຕາມ ຮອບເຂດນອກຂອງ*ອານາຈັກຂອມ* ເຊິ່ງມີສູນກາງຢູ່ທີ່ *ນະຄອນວັດ*. ພາຍໃນນຶ່ງສະ ຕະວັດ *ອະຍຸທະຍາ* ໄດ້ຫລຸດຜ່ອນອຳນາດສັດຕູ ກ້ຳຕາເວັນອອກຂອງຕົນ ໃຫ້ເຫລືອເປັນ ພຽງເງົາແຫ່ງອະດີດ ພ້ອມໆທັງຂະຫຍາຍອຳນາດອອກໄປທົ່ວທຸກທິດ. ພຣະເຈົ້າຊີວິດ

ອະຍຸທະຍາ ຢືມແບບຢ່າງຫລາຍອັນມາຈາກ *ກຳພູຊາ* ເພື່ອແຜ່ພຣະກຽດສັກສີ ອັນ ວິເສດ ແລະອຳນາດ ຂອງ ວົງກະສັດອອກໄປ, ເພື່ອເຮັດໃຫ້ມັນກາຍເປັນສັນຍະລັກ ທີ່ມີອິດທິລິດ ຢ່າງຫນ້ອຍ ກໍໃຫ້ເກີດຄວາມສະທ້ານຢ້ານກົວ ກ້າບໍ່ເຄົາຣົບຢຳແຢງ ສຳ ລັບປະຊາຊົນຫລາຍວັດທະນະທຳ ຫລາຍເຊື້ອຊາດ ທີ່ຕົກຢູ່ພາຍໃຕ້ການປົກຄອງກວດ ກາຂອງພຣະອົງ. ສະຖາບັນການປົກຄອງ ແລະ ສະຖາບັນການເມືອງ ຂອງ *ອະຍຸທະ ຍາ* ຄ້າຍຄືກັບ ຂອງ*ພະມ້າ* ຫລາຍດ້ານ.

ອະຍຸທະຍາ ຢູ່ຫ່າງຈາກທະເລ ພຽງ 55 ໄມລ໌ ເທົ່ານັ້ນ ແລະເຊື່ອມຈອດກັບທະ ເລໂດຍ*ແມ່ນ້ຳເຈົ້າພະຍາ*. *ອະຍຸທະຍາ* ເຄີຍເປັນຕົວເມືອງ ບ່ອນພຳນັກອາໄສຂອງຜູ່ ຄົນຫລາຍເຊື້ອຊາດ ແລະຫລາກຫລາຍຄວາມຄຶດ. ນັບຕັ້ງແຕ່ກ່ໍຕັ້ງມາ ມີພ່ໍຄ້າຈາກປະ ເທດ*ຈີນ* ແລະຕາເວັນອອກຈຳນວນຫລາຍ ມາຄ້າຂາຍ ຢູ່ *ອະຍຸທະຍາ* ແລະການຕິດຕໍ່ ຄ້າຂາຍກັບແດນໄກ ໄດ້ດຳເນີນມາໂດຍດີ ຕະຫລອດເວລາ 400 ປີ ແຫ່ງການຄົງຕົວຢູ່ ຂອງອານາຈັກນີ້. ກະສັດ ແຫ່ງ*ອະຍຸທະຍາ* ກ໊ືວ່າຕົນເອງ ມີບົດບາດສຳຄັນ ຢູ່ໃນການ ພົວພັນລະຫວ່າງປະເທດ. ຕົວຢ່າງ ໃນປີ 1593, ກະສັດ *ນະເຣສວນ* ໄດ້ອາສາຂຸ່ຍ *ມະ ຫາອານາຈັກຈີນ* ໂຈມຕີ *ຍີ່ປຸ່ນ* ແລະໃນປີ 1680, *ພະນາຣາຍ* ກໍເກີດມີຄວາມສົນໃຈ ໃນ ແນວຄວາມຄຶດ ແລະຄວາມຮູ້ວິຊາການຕ່າງໆ ຂອງ *ຢູຣົບ* ຈົນເຖິງຂັ້ນ ແຕ່ງໃຫ້ນັກ ສ່ຽງໂຊກຄົນ *ກຣີກ* ຊື່ *ຄອນ ສະເຕັນຕິນ ຟອນຄອນ* (Constantina Phaulkon) ເປັນນາຍຍົກລັດຖະມຸນຕີ (ແທນ ຫລານຊາຍ ຂອງຄົນອົບພະຍົບ ເປີເຊຍຄົນນຶ່ງ). *ໄທ* ໄດ້ສົ່ງເຄື່ອງບັນນາການ ໄປຖວາຍແດ່ *ພຣະເຈົ້າຈັກກະພັດຈີນ* ເຖິງວ່າ ບໍ່ເຄີຍຖ໊ືກບີບຄັ້ນ ຈາກສຳພັນທະໄມຕີ ອັນທີ່ພວກເຂົາ ບໍ່ຄ່ອຍມີໂອກາດຈັດການປ່ຽນແປງ ໃຫ້ເປັນແນວ ອື່ນໄດ້ຈັກເທື່ອກໍຕາມ.

ເຊັ່ນດຽວກັນກັບ ຢູ່ເມືອງ *ອັງວະ* ຣາຊະສຳນັກ ແຫ່ງ *ອະຍຸທະຍາ* ເປັນສູນກາງ ແຫ່ງຊີວິດທາງວັດທະນະທຳ ຂອງອານາຈັກ. ນອກຈາກລະບົບຣາຊະການ ອັນມີລັກສະ ນະສະເພາະຂອງຕົນແລ້ວ ຣາຊະສຳນັກ *ສະຫຍາມ* ຍັງບຳລຸງຄ້ຳຈຸນ ພວກນາຍຊ່າງ ສີມືສິລະປິນ ນັກສະແດງ ຜູ່ເຮັດໃຫ້ເມືອງຫລວງ ໄດ້ຮັບການປະດັບປະດາເອ້ຢ້ອງ ໄປ ດ້ວຍໄມ້ຄວັດ ພຣະພຸທະຮູບ ເຈດີ ສິ່ງກ່ໍສ້າງ ແລະການສຶບອາຍຸ ການລະຄອນ ແລະ ການຫລິ້ນເສບດົນຕີ. ບ່ວ່າ ນັກກະວີ ແລະນັກຟ້ອນເກ່ັງຈະຢູ່ໃສ ເມ່ືອຮູ້ ເຂົ້າກໍໄປ

ນຳເອົາມາຢູ່ ໃນວັງ ຫລື ໃຫ້ມາຢູ່ເຮືອນເຈົ້ານາຍ ເຊິ່ງກໍເກີດມີຄວາມທະນົງໃຈ ທີ່ໄດ້ຕ້ອນຮັບນັກຂຽນ ແລະ ຄະນະນັກສະແດງ. *ພຣະພຸທະສາສະໜາ* ຮຸ່ງເຮືອງ ພາຍໃຕ້ການອຸປະກຳ ຄ້ຳຊູ ຂອງຣາຊະວັງ, ວັດຈຳນວນຫລາຍຮ້ອຍ ທັງທີ່ຢູ່ໃນເມືອງ ແລະ ຢູ່ໃກ້ຕົວເມືອງຫລວງ ເປັນໃຈກາງຕົ້ນຕໍ ສຳລັບການສຶກສາຮ່ຳຮຽນ ທັງທາງໂລກ ແລະ ທາງທຳ. ການຮຽນໜັງສື ແລະ ບົດອັນນະກຳ ຈາກເມືອງຫລວງ ໄດ້ແຜ່ລາມອອກ ໄປສູ່ຫົວເມືອງຕ່າງໆເຖິງຂັ້ນບ້ານ, ນັ້ນສະແດງວ່າ ຢ່າງໜ້ອຍ ໃນສະຕະວັດທີ 18 ນີ້ ວັດທະນະທຳ ແລະ ພາສາ ຂອງພຣະຣາຊະອານາຈັກ ພວມເປັນເອກະພາບກັນຫລາຍຂຶ້ນ.

ຣາຊະອານາຈັກ ໄທ ຢູ່ໃນການບໍລິຫານຂອງຕະກູນເຈົ້ານາຍ ທີ່ສືບທອດກັນມາ ແບບເຄິ່ງໆກາງໆ ໂດຍມີຈຸ້ມເຈື້ອນ້ອຍໆຈຸ້ມນຶ່ງ ເຮັດໜ້າທີ່ຄວບຄຸມຫລາຍຂຶ້ນເລື້ອຍໆ. ໜ້າທີ່ຂອງລັດຖະບານ ຂ້ອນກັນຢູ່ ນຳຄະນະຂ້າຣາຊະການຂັ້ນສູງ ຄື ເສນາບໍດີ 6 ຄົນ ທີ່ເປັນລັດຖະມຸນຕີ ຂອງປະເທດ. ເຖິງແມ່ນວ່າ ລະບົບບໍລິຫານ ທີ່ວາງໄວ້ໃນສະຕະວັດທີ 15 ກຳນົດໃຫ້ລັດຖະມຸນຕີແຕ່ລະຄົນ ປະຕິບັດໜ້າທີ່ສະເພາະຂອງຕົນ ທົ່ວຣາຊະອານາຈັກ ເມື່ອສະຕະວັດ ທີ 18 ນັ້ນ, ລັດຖະມຸນຕີ 4 ຄົນ ໃນຈຳນວນທັງໝົດ 6 ຄົນ ໄດ້ຮັບຜິດຊອບ ແລ່ນຊ້ານວຽກງານໃນທຸກໆກະຊວງ ໂດຍເຮັດໜ້າທີ່ ຂອງລັດຖະບານໝົດທຸກຢ່າງ ໃນທ້ອງກຸ່ນໃດນຶ່ງ ເຊັ່ນ *ກະຊວງປ້ອງກັນປະເທດ* ຢູ່ທາງທິດໃຕ້ ແລະທິດຕາເວັນຕົກ, ກະຊວງພາຍໃນ ທາງທິດເໜືອ ແລະຕາເວັນອອກ, *ກະຊວງການຄັງ* ຕາມຫົວເມືອງຕ່າງໆ ຢູ່ປາກອ່າວ*ສະຫຍາມ* ແລະ *ກຣົມເມືອງ* ຢູ່ຕາມຫົວເມືອງຕ່າງໆ ອ້ອມເມືອງຫລວງ. ແຕ່ລະກະຊວງມີໜ້າທີ່ເກັບພາສີ ບໍລິຫານວຽກງານຢູ່ສານ, ກໍ່ສ້າງສະຖານທີ່ສາທາລະນະຕ່າງໆ ແລະພະຍາຍາມຮັກສາຄວາມສະຫງົບຮຽບຮ້ອຍ, ໂດຍໃຫ້ແຕ່ລະກະຊວງ ຮັກສາຮ່ອງຮອຍໜ້າທີ່ເຄົ້າເດີມຂອງຕົນໄວ້ຢູ່, ທະຫານອາຊີບ ກັບທະຫານຮັບຈ້າງ ຍັງຢູ່ນຳກະຊວງປ້ອງກັນປະເທດ, ກະຊວງພາຍໃນ ບຳລຸງລ້ຽງກອງທັບຊ້າງ ແລະກົມພົນລະເຮືອນຕ່າງໆ ທີ່ມີໜ້າທີ່ສະເພາະ, ກະຊວງການຄັງ ຍັງຄົງເປັນນາຍຄັງໃຫ້ແກ່ຣາຊະວັງ ແລະດຳເນີນການຄ້າຂາຍກັບຕ່າງປະເທດ ແລະການພົວພັນຕ່າງປະເທດ ແລະ*ກຣົມເມືອງ* ເຮັດໜ້າທີ່ຮັກສາຄວາມສະຫງົບຮຽບຮ້ອຍ ໃນເມືອງຫລວງ, ກະຊວງທີ່ດິນ(ກົມນາ) ແລະ*ກຣົມວັງ* ເປັນກະຊວງທີ່ມີວຽກງານເບົາບາງກວ່າໝູ່ ໃນການປະຕິບັດໜ້າທີ່ສະເພາະ

ການບໍລິຫານແບບໂຮມສູນ ຖືວ່າແມ່ນຄວາມສຳເລັດຢ່າງນຶ່ງ ໃນ *ອະຍຸທະຍາ* ການບໍລິຫານແບບນີ້ ກາຍເປັນແບບຢ່າງນຳໄປປະຕິບັດ ຢູ່ໃນຫົວເມືອງຕ່າງໆ ຕາມບໍລິເວນລ່ອງນ້ຳ *ເຈົ້າພະຍາ* ເພື່ອຮັບປະກັນຄວາມຫມັ້ນຄົງ ໃຫ້ແກ່ຣາຊະອານາຈັກ. ເພື່ອຕ້ານຢັນການບຸກຮຸກ ຂອງ *ພະມ້າ* ແລະ *ກຳພູຊາ* ເຈົ້າຊີວິດ ທີ່ຂຶ້ນຄອງຣາຊະສົມບັດຕໍ່ໆມາ ເຫັນວ່າ ຈຳເປັນຕ້ອງເສີມກຳລັງໃສ່ການຄວບຄຸມ ຫົວເມືອງໃກ້ຄຽງ ໃຫ້ເຄັ່ງຄັດຫລາຍຂຶ້ນ ແລະຈຳເປັນຕ້ອງຫາແຫລ່ງກຳລັງຄົນໄວ້ຕື່ມ. ຢູ່ບ່ອນໄກອອກໄປກວ່ານັ້ນ ໃນຂັ້ນຕົ້ນ ກໍແມ່ນຢູ່ໃນແຫລມ*ສະຫຍາມ* ກ່ອນ ແລະ ໃນແຂວງກ້ຳຕາເວັນອອກສຽງໃຕ້ ທີ່ຕິດກັບ *ກຳພູຊາ* ກໍຄືກັນ ການຂະຫຍາຍການຄວບຄຸມຂອງສູນກາງ ເຫນືອການບໍລິຫານຂັ້ນແຂວງ ສອດຄ່ອງກັບຄວາມສຳຄັນ ທີ່ກຳລັງມີຫລາຍຂຶ້ນ ຂອງພາກພື້ນເຫລົ່ານັ້ນ ຕໍ່ການຄ້າລະຫວ່າງປະເທດ. ຍົກຕົວຢ່າງໃນລະຫວ່າງສະຕະວັດ ທີ 17 ເມື່ອຄວາມສຳຄັນທາງເສດຖະກິດ ແລະການຂະຫຍາຍໂຕທາງການຄ້າລະຫວ່າງປະເທດ ໃນພາກພື້ນນີ້ທະວີຂຶ້ນ, ຣາຊະວົງ ແລະຈຸ້ມເຈົ້ອ ທີ່ປົກຄອງທ້ອງຖິ່ນໃນແຂວງພາກໃຕ້ - *ນະຄອນສີທຳມະຣາດ ພັດທະລຸງ* ແລະ *ສົງຂລາ* ກໍຖືກປົດອອກ ແລະມີຂ້າຫລວງສົ່ງຈາກ*ອະຍຸທະຍາ* ມາຢູ່ແທນ.

ຣາຊະສຳນັກ*ອະຍຸທະຍາ* ມີຄວາມຫມັ້ນຄົງພໍສົມຄວນເມື່ອສະຕະວັດ ທີ 17-18, ທັງນີ້ ໂດຍພື້ນຖານແລ້ວ ແມ່ນຍ້ອນຄວາມສຳພັນອັນດີ ລະຫວ່າງເຈົ້າຊີວິດ ກັບພວກຂຸນນາງຂອງພຣະອົງ. ການທີ່ *ສະຫຍາມ* ເຮັດໃຫ້ຄວາມສຳພັນໂດຍກົງ ລະຫວ່າງພວກເຈົ້າ ກັບພວກຂຸນນາງ ຫລຸດຫນ້ອຍລົງຢ່າງສຸດຂີດນັ້ນ ມັນຍ່ອມຫລຸດຜ່ອນຄວາມຮ້ອນຮຸ່ມ ທາງການເມືອງລົງໄດ້ຢ່າງບໍ່ຕ້ອງສົງໄສ ເຊັ່ນກັນ. ການຊ່ວງເສັ້ຽຍາດຊິງກັນຂຶ້ນຄອງບັນລັງ ເຊິ່ງຕາມທຳມະດາແລ້ວ ກ່ຽວຂ້ອງກັບຄົນບໍ່ພໍເທົ່າໃດຄົນ ແລະເກືອບບໍ່ເຮັດໃຫ້ມີການຂ້າຟັນ ຜູ່ເສຍໄຊເລີຍ. ເຫດການທຳນອງນີ້ ເກີດຂຶ້ນເປັນບາງຄັ້ງຄາວຢູ່ໃນ *ພະມ້າ*. ຄວາມຂັດແຍ່ງດ້ານການເມືອງ ຢູ່ໃນ *ສະຫຍາມ* ໄດ້ສະທ້ອນໃຫ້ເຫັນ ການຍາດແຍ່ງອຳນາດ ລະຫວ່າງຈຸ້ມເຈົ້ອຂຸນນາງຜູ່ໃຫຍ່ນຳກັນເອງ ຫລາຍກວ່າການຍາດແຍ່ງລະຫວ່າງ ພວກເຊື້ອເຈົ້າ ກັບການຕໍ່ສູ້ພາຍໃນ. ພວກຂຸນນາງ ແມ່ນກະໂຕປັດໃຈຕົ້ນຕໍ ຂອງການສືບທອດຢູ່ໃນລະບົບ, ຄອບຄົວຈຸ້ມເຈົ້ອນຶ່ງ ສືບທອດຕຳແຫນ່ງກັນມາໄດ້ຮອດເຈັດເຊັ່ນຄົນ ດ້ວຍວ່າ ມີສະມາຊິກຜູ່ນຶ່ງຂອງຄອບຄົວ ໄດ້ເປັນເສນາບໍດີ. ພວກຂຸນນາງພ້ອມພຽງກັນອະພິເສກ ເຈົ້າຊີວິດ ຂຶ້ນປົກຄອງແຜ່ນດິນ ແລະຮັກສາພຣະອົງໄວ້

ໃນຣາຊະບັນລັງ, ເຈົ້າຊີວິດຊົງໄວ້ເຊິ່ງພຣະຣາຊະອຳນາດ ໂດຍການຕັ້ງແຕ່ງບຸກຄົນທຳ ມະດາເຂົ້າຮັບໜ້າທີ່ ດ້ວຍຄວາມຮອບຄອບ ທັງນີ້ ເພື່ອກ່ວງດຶງການຍາດຊິງອຳນາດ ລະຫວ່າງຄອບຄົວພວກຂຸນນາງ ຫລືໂດຍການນຳເອົາຄົນທາງນອກເຂົ້າມາ ເພື່ອຊ່ວງ ເສັງກັບພວກເຂົາ. ກົດລະບຽບຂອງພວກເຊື້ອເຈົ້າ ເປັນວຽກງານອັນແນບນຽນ ສຳລັບ ຜົນປະໂຫຍດອັນສູງຄ່າໃນພາຍໜ້າ, ຜູ່ທີ່ຂາດປະສົບການ ມີແຕ່ຄວາມມັກໃຫຍ່ໄຝສູງ ບໍ່ຄວນເຂົ້າໄປຫຍຸ້ງກ່ຽວງ່າຍໆ ເພາະວ່າ ກ້າຕົກເປັນຝ່າຍເສຍໄຊແລ້ວ ເຂົາກໍມີແຕ່ ຖືກຍັດໄກ່ຜ້ານວມ ແລະທຸບຕີດ້ວຍຄ້ອນໄມ້ຈັນ ຈົນຕາຍ.

ນັບແຕ່ສະຕະວັດ ທີ 16 ເປັນຕົ້ນມາ ຣາຊະສຳນັກ *ສະຫຍາມ* ແລະຣາຊະສຳ ນັກ *ພະມ້າ* ຕ່າງກໍມີວຫຍຸ້ງຢູ່ນຳພາລະໜ້າທີ່ຂອງຕົນ ທັງສອງຕ່າງເປັນສັດຕູຄູ່ອາ ຄາດກັນໃນເລື່ອງສົງຄາມ ເປັນເວລາດົນເຖິງສາມສະຕະວັດ ບາງລະຍະ ກໍຢູ່ກັນຢ່າງ ສະຫງົບ, ເຈົ້າຊີວິດ ແຕ່ລະອົງລ້ວນແຕ່ ຫວງແຜ່ງກຽດສັກສີຂອງຕົນ ແລະ ເອົາໃຈໃສ່ ແຕ່ເລື່ອງ ສ້າງຊື່ສຽງໃຫ້ຊ່າລື ໃນດ້ານການຍຶດຄອງອານາຈັກອັນກວ້າງໃຫຍ່, ເຫດ ການຜຶດຕິກຳ ແລະທ່າທີໃດໆ ໃນຣາຊະສຳນັກ ທີ່ສະແດງອອກວ່າ ພວມອ່ອນແອ ອາດພາໃຫ້ພວກຫົວເມືອງທາງນອກ ແລະ ຫົວເມືອງຂຶ້ນທັງຫລາຍ ເອົາໃຈອອກຫ່າງ ຈົນເຖິງຂັ້ນວ່າ ມະຫາອານາຈັກນັ້ນ ສາມາດຫລົ້ມຈົມລົງໄດ້. ພຣະເຈົ້າຊີວິດ ຈຶ່ງເອົາໃຈ ຫົວເມືອງຂຶ້ນ ດ້ວຍສັນຍາໃຫ້ຄວາມຄຸ້ມຄອງປົກປ້ອງ ຈາກການຮຸກຮານຂອງຜູ່ອື່ນ ເພື່ອເປັນການຕອບແທນ, ເຈົ້າຊີວິດ ກໍຮຽກຮ້ອງເອົາຄວາມຈົງຮັກພັກດີ ແລະການຊ່ວຍ ເຫລືອ ຕະຫລອດທັງສິ່ງຂອງ ອັນເປັນເຄື່ອງໝາຍແຫ່ງຄວາມອ່ອນນ້ອມ ເຊັ່ນ ດອກໄມ້ ເງິນ ດອກໄມ້ຄຳ ເຊິ່ງທາງ *ອະຍຸທະຍາ* ໄດ້ຮັບຢ່າງເປັນປົກກະຕິ ຈາກ *ສຸລະຕານ* ແຫ່ງ *ມາເລ* ໃນ *ແຫລມມາລາຢູ* ແລະ ຫົວເມືອງ*ລາວ*ທັງຫລາຍ ທາງກ້ຳເໜືອ ແລະຕາ ເວັນອອກສຽງເໜືອ*. ສຳລັບເຈົ້າປົກຄອງເມືອງ ອັນດັບຮອງໆລົງມາແບບນີ້ ມັນເປັນ ໂລກທີ່ສັບຊ້ອນຜ່ສົມຄວນ. ພວກເຂົາຈຳຕ້ອງພິຈາລະນາຄວາມເຂັ້ມແຂງ ຂອງເມືອງ ໃກ້ຄຽງທັງຫມົດ ຢ່າງຮອບຄອບ, ຕ້ອງເອົາໃຈໃສ່ສຸດຂີດ ຫລີກເວັ້ນ ການສ້າງຄວາມ ຄຽດແຄ້ນ ໃຫ້ແກ່ສັດຕູຜູ່ອັນຕະລາຍ ແລະມິດສະຫາຍຜູ່ມີປະໂຫຍດ. ຕາມທຳມະດາ ແລ້ວ ກໍເກີດມີສິ່ງທີ່ *ໄທສະຫຍາມ* ເອີ້ນວ່າ *"ນົກສອງຫົວ"* ນັ້ນ ຢູ່ສະເໝີ ໃນ *ຫົວເມືອງ*

---

* ເປັນທີ່ເຂົ້າໃຈວ່າ ນັບແຕ່ກາງສະຕະວັດທີ 18 ເປັນຕົ້ນມາ ຣາຊະອານາຈັກ *ລ້ານຊ້າງ* ໄດ້ຕົກເປັນ ປະເທດຣາສ ຂອງ *ສະຫຍາມ* ແລ້ວ.(ຜູ່ແປ)

ลาว ลัดสาม ก้ำเหนือ ใน *ฉหลมมาลายู* หลื *ใน ก๋ำพูชา* ถึกาบที่ ลัดเหล่ำนั้น ต้องหันไปหาหัวสองทิดสองทาว เสยส่วยให้หัวสองเมืองใก้ลยงนั้นเอง.

ผะบิมเป้น

ในสะตะวัดที 17 และ 18 กาบอะหยายเอดแดบ ของ *สะหยาม* และ *หวยดบาม* ไปหางตาเอับออกและใต้ มิผิบให้ดิบแดบที่อู่พายใต้กาบลอบลุม ของ *ก๋ำพูชา* หลุดลิงย่างหลองหลาย, แรงบิบลั้บ จากเมืองใก้ลยง เชื่องส่วบ ใหย่แม่บ กาบหลุดจำบอบแหล่งลายรับ ผาสิอากอบ เรัดให้ธาอะสำบัก *ก๋ำพูชา* สูบเสยอำบาดไป. ติกมาธอดกางสะตะวัด ที 18 ธาอะสำบัก *ก๋ำพูชา* มิอะหบาดบ้อยลิง แต่กแยกกับ และเป้บสะกาบับที่อ่อบเผย, หัวเมืองของ *ก๋ำพูชา* และไผ่พิบของเมืองเหล่ำนั้บ กึกแก่ดึงเอ้ำไปหยุ้งก่อกับกาบเมืองหังเพื่อลวามยู่ลอดของบุกลิบ และของธาอะวิง. เพื่อให้ติบเองยู่ลอด หลื เพื่อโล่บลิ้มอิกฝ่ายบึ่ง พวกเชื้อเจ้ำ หลื ละบะข้ำธาอะกาบ ที่แตกแยกออกไป จึ่งต้องอิบอวายหากาบสะหบับสะหบูบทุกเที่อ ที่มิโอกาด โดยสะเพาะย่างยิ่ง จาก *อะยุทะยา* และจาก *เมืองเหว้*, จากหัวหน้าชิบชาดชิบเผ่าในอิงเอดบ่ำ. กาบจ่ายให้แก่หัวเมืองใก้ลยง มิล่าแผงมะหาสาบ ในธูบของดิบแดบ ล่าส่วย เถื่องบับบากาบ และกาบสูบเสยอิสธะพาบ และปะลิมาบหบื้สิบ หากาบ เมืองที่ เจ้ำชีวิดใหม่แต่ละอิงก่ำไว้ ในละยะพะยายามก้าวขึ้นสู่ธาอะบับลัง เชื่องส่วบหลายมักเรัดให้ปะสิดทิพาบ ในกาบลองธาด ของพระอิงหล่วย เป้ยลิง. ย้อบว่า เอดน้ำแดบดิบของ *ก๋ำพูชา* และกำลังผิบ สำลับเรัดเสิก และ กาบผะลิดหลุดหบ้อยลิง, หากเลือกที่เหลืออยู่ สำลับธาอะสำบัก และพวกที่ แตกออกไป เชื่องก็พอมสะแหวงหาหิบหาว เพื่อโล่บลิ้มฝ่ายกิงกับข้าม ก็เป้บ เชุ่บดรอกับ. เชื้อสายเจ้ำ จาก *หวยดบาม* หลื *สะหยาม* อาดได้ขึ้บลองบับลัง ใบ *ก๋ำพูชา* หุ้มล้อมโดยที่ปึกสา ที่เมืองอุปะก๋ำ ของพระอิงเองหามาให้ บางเพื่อ คู่สัดตู ของเจ้ำชีวิด ได้รับแรงขุกยู้ จากลวามรักชาด โดยที่บ่มิหาว

ເລືອກອື່ນໃດ ກໍອາດຮັບເອົາການສະໜັບສະໜູນ ຈາກຝ່າຍມີກຳລັງ ທີ່ບໍ່ມີສ່ວນຮັບຜິດຊອບໃດໆ ກັບການຂຶ້ນຄອງຣາຊະບັນລັງ ຂອງເຂົ້າຊໍ້າ.

ຈຳເປັນຕ້ອງສຶກສາ ເລື່ອງຣາຊະສຳນັກ *ກຳພູຊາ* ໃນສະຕະວັດ ທີ 18 ໂດຍອີງໃສ່ພື້ນຖານເບື້ອງຫລັງອັນນີ້ ຢ່າງໜັກແໜ້ນ. ຢູ່ໃນຣາຊະວັງ ການມ່ວນຊື່ນຫລິ້ນກິນໄດ້ຫລຸດໜ້ອຍຖອຍລົງກວ່າແຕ່ກ່ອນ. ເມື່ອຖືກຕັດຂາດທາງອອກສູ່ທະເລ ຍ້ອນກອງໂຈນ *ຊາວຈີນ-ຫວຽດນາມ* ທີ່ຄວບຄຸມຝັ່ງທະເລ ກັບ ຊາວ *ຫວຽດນາມ* ເຊິ່ງອົບພະຍົບເຂົ້າມາຢູ່ດິນແດນ ເຂດສາມຫລ່ຽມແມ່ນ້ຳຂອງ ເຊິ່ງແຕ່ກ່ອນ ເປັນຂອງ*ກຳພູຊາ*, ຣາຊະສຳນັກ ຈຶ່ງຖືກຕັດຂາດໂດດດ່ຽວຈາກພາຍນອກ ແລະຈາກຜົນປະໂຫຍດທີ່ຈະໄດ້ຈາກການຄ້າຂາຍຕ່າງປະເທດ ທີ່ພວມຂະຫຍາຍໂຕ.

ດັ່ງທີ່ເຄີຍເປັນມາ, ລາຍຮັບຂອງເຈົ້າຊີວິດ 10 % ໄດ້ຈາກພາສີກະສິກຳ ຮ່ວມທັງການຜູກຂາດການຄ້າ ທັງຂາອອກ ຂາເຂົ້າ ແລະການຄວບຄຸມການຜະຫລິດສິນຄ້າພາຍໃນ ເຊັ່ນ ໄມ້ທ່ອນ ປາແຫ້ງ ແລະໜັງສັດ. ນອກນີ້ ເຈົ້າຊີວິດ ຍັງໄດ້ຮັບເງິນຄ່າປັບໃໝ ຈຳນວນ 1/3 ຂອງມູນຄ່າທັງໝົດ ອີກ 1/3 ໃຫ້ຜູ່ພິພາກສາ (ສ່ວນເຫລືອ ໃຫ້ຜູ່ເສຍຄະດີ) ການຊົມໃຊ້ເງິນ ຂອງທາງຣາຊະວັງ ບໍ່ໜັກໜ່ວງ ຍ້ອນວ່າ ທັງສິນຄ້າ ແລະການບໍລິການ ທີ່ທາງວັງສັ່ງເຂົ້າມານັ້ນ ເກືອບບໍ່ໄດ້ເສຍຄ່າໃຊ້ຈ່າຍໃດໆ.

ໃນລະຍະຫລັງໆ ຂອງສະຕະວັດ ທີ 17 ເຈົ້າຊີວິດ *ກຳພູຊາ* ອົງນຶ່ງ ເສກສົມລົດກັບເຈົ້າຍິງ *ມາລາຢູ* ແລະ ໄດ້ຮັບການຂະໜານນາມໃໝ່ວ່າ *ອິບຣາຮິມ* (Ibrahim) ແລ້ວຫັນໄປນັບຖືສາສະໜາ *ອິສລາມ*. ເມື່ອຖືກ ພຣະຣາຊະນັດດາ(ຫລານຊາຍ) ຄາຕະກຳແລ້ວ ພຣະອົງມາມີຊື່ສຽງປາກົດຢູ່ໃນອັນນະຄະດີ *ກຳພູຊາ* ຮຸ່ນຫລັງວ່າ " *ເປັນກະສັດ ຜູ່ປະລະສາສະໜາ* ". ໃນອີກກໍລະນີນຶ່ງ ເຊິ່ງບໍ່ເປັນທີ່ຮູ້ຈັກແພ່ຫລາຍເທົ່າໃດແມ່ນ ກໍລະນີ ຂອງ ເຈົ້າຊາຍ ອົງນຶ່ງ ໃນຊຸມປີ 1740 ຖືກຊັກດຶງໃຫ້ຫັນມານັບຖື ສາສະໜາ *ຄຣິຕ ນິກາຍ ຄາໂທລິກ* ແບບລັບໆ ໂດຍຄະນະ*ມິດຊັນນາຣີ* ທີ່ເປັນພຣະສະຫາຍຂອງພຣະອົງເອງ. ເຫດການແຕ່ລະຢ່າງ ເປັນເລື່ອງຄາດຄຶດບໍ່ເຖິງວ່າ ຈະເປັນໄປໄດ້ໃນຣາຊະສຳນັກ ທີ່ນັບຖື *ພຸທະສາສະໜາ*ຢ່າງໜັ້ນຄົງ ແຕ່ສອງກໍລະນີນີ້ ບົ່ງບອກວ່າ ມີຄວາມໂຍະຍານແນວໃດແນວນຶ່ງ ຫລືບໍ່ ກໍແມ່ນຄວາມເຄັ່ງຕຶງ ເຊິ່ງເປັນລັກສະນະປະຈຳ ຂອງຣາຊະສຳນັກ *ກຳພູຊາ* ຕະຫລອດລະຍະນີ້.

ເອກະສານທາງກົດໝາຍ ຂອງ *ກຳພູຊາ* ສະໄໝສະຕະວັດທີ 18 ບົ່ງບອກວ່າ ການໂຍະຍານນັ້ນ ເກີດຈາກກະໂຕເຈົ້າຊີວິດເອງ, ດັ່ງໄດ້ເວົ້າເຖິງໃນຫລາຍໆກໍລະນີ ແລ້ວວ່າ ຄວາມເຂັ້ມງວດທາງກາມັນດອນສັກ ເຮັດໃຫ້ຄວາມສຳພັນ ລະຫວ່າງປະຊາຊົນທຳມະດາ ກັບສະມາຊິກຄອບຄົວພວກເຊື້ອເຈົ້າ ບໍ່ໝັ້ນຫນຽວ ຈົນຂາດສະບັ້ນໄປ. ກໍລະນີນຶ່ງ ເລົ່າວ່າ ມີກະສັດອົງນຶ່ງ ສະເດັດອອກໂຫ່ເນື້ອ ພຣະອົງຫລົງທາງ ຕົກເຂົ້າໄປໃນທົ່ງນາແຫ່ງນຶ່ງ ແລະເກີດຜິດກຽງກັບຄົນລ້ຽງຄວາຍ. ຝ່າຍຊາຍລ້ຽງຄວາຍ ບໍ່ຈີ່ເຈົ້າຊີວິດ ຈຶ່ງເວົ້າກຽງຄືນ ດ້ວຍຄວາມໂມໂຫ ໂດຍໃຊ້ສັບພະນາມ ແທນພຣະອົງວ່າ *"ມຶງ"*. ຕໍ່ມາ ເມື່ອພຣະອົງຊົງເລົ່າເລື່ອງນີ້ ໃຫ້ແກ່ບັນດາເສນາບໍດີ ທີ່ຕິດຕາມພຣະອົງ ອອກໄປໂຫ່ເນື້ອ ໂດຍຂີ່ງົວໃສ່ອານໄປນັ້ນ ພຣະອົງຊົງເວົ້າອວດອ້າງວ່າ ການທີ່ພຣະອົງ ບໍ່ຂ້າຊາຍລ້ຽງຄວາຍ ທັງທີ່ຄົນຜູ່ນັ້ນ ສະແດງທ່າທີ ບໍ່ເໝາະສົມໃສ່ພຣະອົງ ມັນເປັນການພິສູດເຖິງ ບຸນບາຣະມີອັນຍິ່ງໃຫຍ່ ຕາມກົດເກນ *ແຫ່ງກຳມະ* (Karma). ບັນດາເສນາບໍດີ ຂອງພຣະອົງ ບໍ່ເຫັນດີນຳ. ຄວາມໝາຍຂອງເລື່ອງນີ້ ກໍຄື ພວກເສນາບໍດີ ບອກພຣະອົງວ່າ ຍ້ອນເຈົ້າຊີວິດ ສະເດັດອອກໄປເຮັດວຽກນອກວັງໜ້ອຍໂພດ ເພາະມີແຕ່ຢູ່ໃນວັງເທົ່ານັ້ນ ທີ່ຄົນຕ້ອງຮັກສາມາລະຍາດ.

ເຖິງແນວໃດກໍດີ ຈຳເປັນຕ້ອງເນັ້ນວ່າ ຕາມຄວາມຄຶດເຫັນຂອງຝ່າຍຊາວນາ ນັ້ນ, ໜ້າທີ່ອັນດັບນຶ່ງ ຂອງເຈົ້າຊີວິດ *ກຳພູຊາ* ແມ່ນການສະແດງອອກເຖິງນ້ຳໃຈອັນສູງສົ່ງໃນເລື່ອງສິນທຳ ໃຫ້ເໝາະສົມກັບການເປັນເຈົ້າ ດັ່ງທີ່ປາກົດຢູ່ໃນບົດຟ້ອນ ແລະ ນິທານວັນນະຄະດີພື້ນເມືອງທັງຫລາຍ. ອັນທີສອງ, ເຈົ້າຊີວິດຕ້ອງເປັນປະທານ ຂອງບຸນລ້ຽງຜີປະຈຳປີ ກ່ອນການລົງມືເຮັດນາ. ໃນລະຫວ່າງລະດູບານໃໝ່ ແຕ່ລະປີ ເຊັ່ນ ຢູ່ໃນ *ອະຍຸທະຍາ* ແລະ *ອັງວະ*, ພຣະອົງ ເປັນຜູ່ປະກອບພິທີໄຖນາ ຢູ່ເດີ່ນສະໜາມຫລວງ ອັນເປັນການຕັ້ງແຮກວົງຈອບ ແຫ່ງການເຮັດນາ ໃນທົ່ວຣາຊະອານາຈັກ. ໃນເດືອນພະຈິກ ເຈົ້າຊີວິດຊົງປະກອບພິທີ ອັນເປັນເຄື່ອງໝາຍວ່າ ລະດູຝົນ ສ້ຽງສຸດລົງແລ້ວ. ການອຸປະກຳຄ້ຳຊູ *ພຸທະສາສະໜາ* ແລະການເຮັດບຸນກິນທານ ຢ່າງມະຫາສານຂອງພຣະອົງ ກໍເປັນອີກ *"ຮູບພາບ"* ນຶ່ງ ຂອງກະສັດ ໃນສາຍຕາຂອງປະຊາຊົນ. ເມື່ອເກີດວິກິດການ ເຊັ່ນ ເກີດອຶດເຂົ້າ ຫລື ການຮຸກຮານ ຈາກພາຍນອກ, ຊາວບ້ານກໍພາກັນສ້າງ ພຣະຣາຊະວັງດິນຊາຍຂຶ້ນ ທັງນີ້ ເພື່ອໃຫ້ພວກເຂົາເອງ ສາມາດຕິດຕໍ່ພົວພັນກັບ ສະຫວັນ ໂລກດິນ ແລະໂລກບາດານ ເຊິ່ງພຣະເຈົ້າຊີວິດ ຖືແລຄຸ້ມຄອງຢູ່.

ໂລກຂອງ ເມືອງລາວ ແລະ ເມືອງສານ (ໄຕໃຫຍ່)

ເມື່ອປຽບທຽບກັບເມືອງໃກ້ຄຽງແລ້ວ, ດິນແດນຕາມຫວ່າງພູ ຂອງຫົວເມືອງ *ຊາວພຸດລາວ* ແລະ *ສານ* ທີ່ອໍລິເວນກ້ຳເໜືອ ຂອງແຜ່ນດິນໃຫຍ່ ອາຊີຕາເວັນອອກ ສຽງໃຕ້ນັ້ນ ນັບວ່າເປັນເມືອງນ້ອຍໆ ປະຊາກອນໜ້ອຍດຽວ ຍ່ອມເຍົາ ທັງຊັບສິນ ແລະກຳລັງອຳນາດ. ເມືອງເຫລົ່ານັ້ນ ຕິດຕໍ່ກັນແບບສ່ວນຕົວ ແຕ່ຫວ່າງພູບ່ອນນຶ່ງ ຫາອີກບ່ອນນຶ່ງ, ໄດ້ຮັບການກະທົບກະເທືອນແຕ່ໜ້ອຍດຽວ ຈາກລັດທິນິຍົມເຄື່ອງ ໝາຍປະຈຳເມືອງ ຄືກັນກັບເມືອງອື່ນໆ ທີ່ຮັບອິດທິພົນ*ອິນເດຍ*ຢ່າງໜັກໜ່ວງ ໃນ ກ້ຳໃຕ້. *ພວກສານ ແລະ ຊຽງໃໝ່* ມີຄວາມພູມໃຈ ໃນ *ພຣະພຸທະສາສະໜາ* ຂອງ ຕົນທີ່ເຄັ່ງຄັດກວ່າ ແລະສະແດງທ່າທີໜຶ່ນປະໝາດ ຣາຊະສຳນັກ *ອະຍຸທະຍາ* ທີ່ນັບ ຖື *ພາມ*; ຢ່າງໃດກໍດີ *" ກະໂຕ ສິ່ງສັກສິດ ອັນເປັນສັນຍະລັກປະຈຳ ຂອງພວກເຂົາເອງ ກໍກືກກືນເຂົ້າກັບທ້ອງຖິ່ນ ແລະ ມີປະສິດທິພົນໜ້ອຍໃນທາງການເມືອງ "*.

ຮູບແບບການຈັດຕັ້ງ ທາງການເມືອງ ແລະການປົກຄອງ ແບບທຳມະດາ ທີ່ ສຸດ ໃນເມືອງກ້ຳເໜືອ ເຫລົ່ານັ້ນ ອີງໃສ່ຄະນະບຸກຄົນ ຫລືຫົວໜ້າທັງ 5 **ຄື**ຕຳແໜ່ງ ສູງສຸດ ໄດ້ແກ່ຜູ່ປົກຄອງເມືອງ ເອີ້ນວ່າ *"ເຈົ້າເມືອງ"* ຫລື *"ເຈົ້າຊີວິດ"*. **ເຈົ້າ**ເມືອງທັງ 5 ແຕ່ລະຄົນມີອານາຈັກ ຄືເມືອງ ຫລື ຄອບຄົວ ທີ່ແຍກເປັນຂອງຕົນຕ່າງຫາກ ເຊິ່ງ ຕອບສະໜອງພວກເຂົາ ດ້ວຍພາສີອາກອນ ຜົນຜະລິດ ແລະແຮງງານຮັບໃຊ້, ເຈົ້ຳ ເມືອງແຕ່ລະຄົນ ຍັງມີລະບົບບໍລິຫານ ເປັນແບບຂອງຕົນຕ່າງຫາກ ເພື່ອຈັດການກັບ ເລື່ອງເຫລົ່ານີ້. ລະບົບທີ່ມີລັກສະນະເປັນແບບສ່ວນຕົວຢ່າງສູງນີ້ ໃຊ້ໄດ້ສະດວກດີ ຕາມ ເຂດຮ່ອມພູຜານ້ອຍໆ ທີ່ມີປະຊາຊົນໜ້ອຍດຽວ ດ້ວຍການປັບປຸງ ຄວາມສຳພັນແບບ ສ່ວນຕົວ ມາເປັນການກຳນົດຂອບເຂດວຽກນັ້ນ ເປັນທັງການປົກຄອງ ຕາມຊັ້ນທາງສັງ ຄົມ ເທົ່າໆກັບການແບ່ງຂັ້ນບໍລິຫານ.

ເມືອງອັງວະ ແລະ ອະຍຸທະຍາ ໄດ້ດຳເນີນນະໂຍບາຍຕ່າງໆ ໃນການປະຕິບັດ ກັບ *ເມືອງລາວ ແລະ ເມືອງສານ* ທີ່ຢູ່ໃກ້ຄຽງ. *ອັງວະ* ຈັດວາງກອງທະຫານ ພ້ອມທັງ ພະນັກງານ ເພື່ອໃຫ້ຄຳເປີກສາ ແກ່ພວກເຈົ້າປົກຄອງທ້ອງຖິ່ນ ຢູ່ໃນ *ເມືອງສານ* ມາດົນ ກວ່າ 150 ປີ. ດ້ວຍວິທີການນີ້ ມັນເຮັດໃຫ້ພວກເຂົາເຊື່ອໝັ້ນ ໃນການກວດກາສາຍສືບ ທອດ ແລະຊ່ວຍໃຫ້ໝັ້ນໃຈວ່າ ຫົວເມືອງເຫລົ່ານັ້ນ ບໍ່ເຕົ້າໂຮມກຳລັງກັນ ເພື່ອເປັນປໍລະ

ປັກກັບຣາຊະສຳນັກ ອີກດ້ານນຶ່ງ ທາງ *ອະຍຸທະຍາ* ເອງ ກໍຄອຍລະມັດລະວັງ ເປັນຢ່າງ ດີ ໃນເລື່ອງການປະຕິບັດກັບເມືອງໃກ້ຄຽງດ້ານເໜືອ ເພາະຢ້ານຄວາມອອດເກັ່ງມັກ ໃຫຍ່ ຂອງ *ພະມ້າ* ເໜືອພື້ນທີ່ນັ້ນ. *ອະຍຸທະຍາ* ເລັ່ງລັດໃຫ້ *ເມືອງລາວ* ຮວມກັນເປັນ ປຶກແຜ່ນ ພາຍໃຕ້ການນຳພາຂອງຫົວໜ້າຄົນ*ລາວ*ເອງ ແລະ ໂດຍທົ່ວໄປກໍຈັດການກັບ ຫົວເມືອງເຫລົ່ານັ້ນ ດ້ວຍວິທີການທາງການທູດຫລາຍກວ່າ.

ໃນເຄິ່ງຕົ້ນ ຂອງສະຕະວັດ ທີ 18 ທັງ *ອັງວະ* ທັງ *ອະຍຸທະຍາ* ມີວຸ່ນວາຍ ຢູ່ ກັບແຕ່ນະໂຍບາຍ ຂອງຣາຊະສຳນັກ ແລະກິດຈະການພາຍໃນ ຈົນບໍ່ໄດ້ໃຫ້ຄວາມສົນໃຈ ຕໍ່ປະເທດສະຣາສຂອງຕົນ. *ອັງວະ* ຜະເຊີນໜ້າກັບການກວາດລ້າງຢ່າງໜັກ ຈາກ *ມະນີປຸຣະ* ທາງຊາຍແດນ ກ້ຳຕາເວັນຕົກສຽງເໜືອ ແລະການຂະບົດ ຂອງ *ພວກມອນ* ກ້ຳໃຕ້. ເມື່ອແນ່ໃຈວ່າ *ພະມ້າ* ບໍ່ເປັນໄພຄຸກຄາມ ຕໍ່ຄວາມໝັ້ນຄົງ ອີກຕໍ່ໄປແລ້ວ ເຈົ້າຊີ ວິດ*ອະຍຸທະຍາ* ກໍສາມາດ ຫາທາງຫລຸດຜ່ອນຄວາມພະຍາຍາມ ເພື່ອຄົງຄວາມສຳ ພັນອັນດີ ກັບ *ເມືອງສາມ* ແລະ *ລາວ*. ຜົນກະທົບຈາກການກອບກຳລັງທັງສອງ ປາກົດ ໃຫ້ເຫັນໃນທັນທີ ຄື *ຊຽງໃຫມ່* ແຂວງເມືອງຂຶ້ນ ຕໍ່ຕ້ານ ອ້ຳຫລວງ *ພະມ້າ* ໃນປີ 1728 ແລະ ບໍ່ດົນ ກໍເຂົ້າເປັນພັນທະມິດ ກັບ *ເມືອງພະໂຄ* ທີ່ຂັດຂືນຄືກັນ. ຣາຊະອານາຈັກ *ລ້ານຊ້າງ* ບູຣານ ໃນ *ເມືອງລາວ* ເກີດແຕກແຍກກັນ ເມື່ອ *ພຣະເຈົ້າສຸຣິຍະວົງສາ* ສະ ເດັດສະຫວັນນະຄົດ ໂດຍບໍ່ມີຜູ້ສືບຣາຊະສົມບັດ ໃນປີ 1689 ແລະ ແບ່ງອອກເປັນສາມ ອານາຈັກນ້ອຍໆ ແຕ່ລະອານາຈັກ ມີເຈົ້າປົກຄອງ ເຊິ່ງຕ່າງກໍອ້າງສິດຢູ່ໄກໆ ໃນການ ຂຶ້ນຄອງບັນລັງ ເຊັ່ນ ຢູ່ *ຫລວງພຣະບາງ ວຽງຈັນ* ແລະ *ຈຳປາສັກ*. ຍິ່ງໄປກວ່ານັ້ນ ແມ່ນແຕ່ ພາຍໃນອານາເຂດຂອງເມືອງເຫລົ່ານີ້ ຫົວເມືອງນ້ອຍໆໃນເມືອງ ແລະແຂວງ ກໍຍັງພາກັນຕໍ່ຕ້ານອຳນາດການປົກຄອງ ຂອງເຈົ້ານາຍຕົນເອງຢູ່ ຕົວຢ່າງ ການສູ້ຣົບ ແບບກອງໂຈນ ຢູ່ *ລຳພູນ ລຳປາງ* ແລະ *ຊຽງໃຫມ່*. ໃນເມື່ອຍັງບໍ່ມີກົດໝາຍ ທີ່ເຂັ້ມ ແຂງ ຈຶ່ງອາດມີຜູ້ຫວງຫາວ ສືບຣາຊະບັນລັງ ຫລື ກຸ່ມເມືອງ ທີ່ຢູ່ນອກກຸ່ມຈຸ້ມເຈື້ອເຊື້ອ ສາຍ. ໃນສະຖານະການອັນຊັບຊ້ອນຫຍຸ້ງຍາກ ເຊັ່ນນີ້ ອະນາຄົດ ແລະຄວາມຕັ້ງໃຈ ຂອງ *ອັງວະ* ກັບ *ອະຍຸທະຍາ* ເອງກໍຍັງບໍ່ມີອັນແນ່ນອນ ຈຶ່ງຍັງບໍ່ທັນມີ ລະບຽບການ ໃຫມ່ໆອັນໃດ ທີ່ຈະນຳໃຊ້ໄດ້ ຈົນກວ່າ ກະສັດຜູ້ຍິ່ງໃຫຍ່ຈະສາມາດກຳນົດ ແລະ ມີພຣະ ບັນຊາ ລະບົບສິ່ງສ່ວຍ ໃຫ້ມີຄວາມສຳຄັນຫລາຍຂຶ້ນ ທັງຕໍ່*ຫົວເມືອງລາວ* ແລະ *ຫົວ ເມືອງສາມ*.

ບົດທີ 8 : ເຈົ້າຈັກກະພັດ ຫວຽດນາມ

ກ້າຫາກລັກສະນະເດັ່ນອັນນຶ່ງ ຂອງປະຫວັດສາດກ່ອນສະໄໝໃໝ່ ແຫ່ງແຜ່ນດິນໃຫຍ່ອາຊີຕາເວັນອອກສຽງໃຕ້ ແມ່ນຄວາມອຸດົມສົມບູນທາງວັດທະນະທຳຢ່າງນຶ່ງ ແຫ່ງລັດທິສົມບູຮະນາຍາສິດທິຣາດ (ເຈົ້າຊີວິດ ມີສິດເດັດຂາດ) ແລ້ວ, ເຈົ້າແຜ່ນດິນ *ຫວຽດນາມ* ກໍຢືນຢູ່ໃນບ່ອນກົງກັນຂ້າມ ເຈົ້າອື່ນໆ ຄື ຈາກ *ເຈົ້າຊີວິດອັງກະ* ແລະ *ອະຍຸທະຍາ*. ທິດສະດີການເມືອງ ທີ່ *ຫວຽດນາມ* ນຳເຂົ້າ ແລະພະຍາຍາມຫມູນໃຊ້ ຢູ່ໃນພາກພື້ນ ກືກຳເນີດຢູ່ *ຈີນ* ບໍ່ແມ່ນຢູ່ *ອິນເດຍ*.

ປັດຈຸບັນ ປະຊາຊົນ *ຫວຽດນາມ* ຄົ້ນສືບຫາຕົນເອງ ໄປຮອດການຜະສົມປົນເຂົ້າກັນເອງຂອງຊົນເຜົ່າຕ່າງໆ 15 ເຜົ່າ ເຊິ່ງມີຊື່ຮູ້ຈັກກັນວ່າ *"ຫລາກຫວຽດ"* (Lae Viet) ທີ່ອາໄສຢູ່ໃນ *ຫວຽດນາມພາກເໜືອ* ນັບແຕ່ຕອນຕົ້ນໆຂອງຍຸກທອງສຳລິດ. ຫົວໜ້າຊົນເຜົ່າເຫລົ່ານີ້ ໄດ້ສ້າງອານາຈັກ *" ວັນລັງ "* (Van lang) ເຊິ່ງປາກົດວ່າ ໄດ້ຫລົ້ມຈົມໄປໃນສັຕະວັດທີ 3 ກ່ອນ ຄ.ສ. ຜຸ້ນ ແຕ່ຄົງບໍ່ກ່ອນ ທີ່ຈະໄດ້ສ້າງປະເພນີການປົກຄອງຊາວນາອິສຣະ ຕາມລ່ອງ *ແມ່ນ້ຳແດງ*. ການຮັບວັດທະນະທຳ*ຈີນ* ໃນລະຍະເວລາຈຳກັດ ແຕ່ຫາກມີຄວາມຫມາຍຂອງຊາວ *ຫວຽດນາມ* ຕັ້ງແຮກຂຶ້ນ ໃນລະຫວ່າງທີ່ *ຈັກກະພັດຈີນ* ປົກຄອງ *ຫວຽດນາມພາກເໜືອ* ຫລາຍກວ່າ 1000 ພັນປີ ຄື ນັບແຕ່ສະຕະວັດ ທີ 2 ກ່ອນ ຄ.ສ. ເຖິງ ສະຕະວັດທີ 10 ຫລັງ ຄ.ສ. ໃນລະຍະ 10 ສະຕະວັດນັ້ນ ລະບົບຄຳສອນທາງຈະລິຍະທຳ ແລະ ທາງການເມືອງ ທີ່ເຮົາເອີ້ນວ່າ *ລັດທິຂົງຈື* (Conficianism) ເຊິ່ງອີງໃສ່ ຄຳສອນຂອງ *ຂົງຈື* ນັກປັດຊະຍາ*ຈີນ* (Conficius, 551-479 ກ່ອນ ຄ.ສ.) ທີ່ແຜ່ລາມເຂົ້າສູ່ບັນດານັກປາດ *ຫວຽດນາມ* ຊົນຊັ້ນສູງ. ນັກສຶກສາ *ຫວຽດນາມ* ບາງຄົນ ຈົນໄດ້ເປັນຕົວແທນແຫ່ງ *" ລັດໃນອາລັກຂາພາກໃຕ້ ອັນສະຫງົບສຸກ"* ຫລື *"ອັນນາມ"*, ຢູ່ ໃນໂຮງຮຽນແຫ່ງນຶ່ງ ໃນເມືອງຫລວງຂອງ*ຈີນ* ເອງ.

ຫວຽດນາມ ແຍກຕົວອອກຈາກການປົກຄອງຂອງ*ຈີນ* ໃນ ສະຕະວັດທີ 10, ພໍເຖິງສະຕະວັດທີ 11 ຣາຊະວົງ *ຫວຽດນາມ* ທຳອິດ ຄື *ຣາຊະວົງລີ* (Ly dynasty, 1010–1225) ໄດ້ສະຖາປະນາເມືອງ ຂຶ້ນເປັນອານາຈັກ ເອີ້ນວ່າ *"ຫວຽດນາມໃຫຍ"*. *"ຫວຽດນາມໃຫຍ "* (ຫລື *ດາຍຫວຽດ*) ນີ້ ມີເມືອງຫລວງຊື່ວ່າ " *ກັ້ງລອງ* " (Thang-long) ບ່ອນຕັ້ງ *ນະຄອນ ຣາໂນຍ* ໃນປັດຈຸບັນ, ມີລະບົບສອບເສັງເຂົ້າຮັບຣາຊະການ

ພົນລະເຮືອນ ເປັນແບບຂອງຕົນເອງ (1075 ຫລັງ ຄ.ສ.) ເຊິ່ງອີງໃສ່ ຄຳສອນ *ລັດທິ ຂົງຈື້* ນັບມື້ຫລາຍຂຶ້ນ ແລະມີວິທະຍາໄລແຫ່ງຊາດຂອງຕົນເອງ ສຳລັບຝຶກອົບຮົມນັກ ປັດຊະຍາ *ຂົງຈື້* (ຄ.ສ 1076). ຣາຊະວົງໃຫຍ່ 2 ຣາຊະວົງ ຕໍ່ຈາກ *ຣາຊະວົງລີ* (Ly dynasty)*ຣາຊະວົງ ເຈີ່ນ* (Tran dynasty), 1225-1400 ແລະ *ຣາຊະວົງ ເລ* (La dynasty), 1427- 1788) ໄດ້ສົ່ງເສີມປະເພນີ ຮີດຄອງຂອງ *ຣາຊະວົງລີ* (Ly dynasty) ດ້ວຍການສ້າງອານາຈັກ *ຫວຽດນາມ* ຕາມຫລັກການ ຂອງຄຳສອນ *ຂົງຈື້* ດ້ວຍຄວາມ ຕັ້ງໃຈ ອັນເດັດດ່ຽວ ດັ່ງທີ່ໄດ້ເຮັດມາແລ້ວ ແຕ່ບໍ່ແມ່ນເພື່ອສ້າງຄວາມເສຍຫາຍ ໃຫ້ແກ່ ເອກະລາດຂອງ *ຫວຽດນາມ* ດັ່ງທີ່ ເຈົ້າປົກຄອງນ້ອຍໆອົງນຶ່ງຂອງ *ຫວຽດນາມ* ໃນສະ ຕະວັດ ທີ 14 ໄດ້ເວົ້າແທນເຈົ້າປົກຄອງອົງສຳຄັນໆ ແຕ່ກ່ອນວ່າ :

" ທາງເໜືອ (ຈີນ)-ພາກໃຕ້(ຫວຽດນາມ) ມີຮີດຄອງປະເພນີຕ່າງກັນ, ການ ກ່າຍແບບ ຈີນ ແບບບໍ່ມືນຫູມືນຕາ ອາດກໍ່ໃຫ້ເກີດຄວາມອຸ່ນອາຍໄດ້ ".

ລັດທິ *ຂົງຈື້* ສອນວ່າ ຄອບຄົວ ແລະໂຄດເຊື້ອ ເປັນພື້ນຖານສຳຄັນ ຂອງຊີວິດ ແລະແນວຄວາມຄຶດນີ້ໄດ້ສິດສອນ ຊາວ *ຫວຽດນາມ* ຫລາຍກວ່າຢູ່ໃນປະເທດອື່ນໃດ ໃນ ອາຊີຕາເວັນອອກສຽງໃຕ້. ໃນທາງທິດສະດີ ພວກພີ່ນ້ອງ ສາຍພໍ່ ບໍ່ສາມາດແຕ່ງດອງ ກັນໄດ້. (ມີການແຕ່ງດອງກັນສະເພາະແຕ່ໃນວົງເຊື້ອເຈົ້າດຽວກັນ ໃນຍຸກສະໄໝຂອງ *ຣາຊະວົງ ເຈີ່ນ*, ພວກເຮົາ ຈະເຫັນໄດ້ວ່າ ອິດທິພົນ ຂອງລັດທິ *ຂົງຈື້* ໃນ *ຫວຽດນາມ* ສະໄໝກາງ ກໍຫລຸດຜ່ອນລົງແດ່ແລ້ວ) ຊາວ *ຫວຽດນາມ* ບູຊາ ບັນພະບຸຣຸດຂອງຕົນ ດ້ວຍທູບ ພູ, ສູດມົນ ແລະຂາບໄຫວ້ ເມື່ອຄົບຮອບມື້ຕາຍ ຂອງບັນພະບຸຣຸດ ແລະໂອກາດ ອື່ນໆຂອງຄອບຄົວ. ລັດທິນັບຖືຜີບັນພະບຸຣຸດ(ພໍ່ແມ່) ມີຈຸດໝາຍ ເຮັດໃຫ້ຄອບຄົວສາ ມັກຄີກັນ ເປັນກຸ່ມກ້ອນຕະຫລອດໄປ ແລະເພື່ອຈະຈັດໃຫ້ແຕ່ລະຄອບຄົວ ມີຫ້ອງມ້ຽນ ຮູບພາບຕົວຢ່າງອັນດີ ຂອງບັນພະບຸຣຸດ ເຊິ່ງຄວາມຊົງຈຳ ກ່ຽວກັບພວກເພິ່ນອາດຊ່ວຍ ໃຫ້ພວກຍັງຢູ່ ມີການປະພຶດ ປະຕິບັດ ທີ່ດີຂຶ້ນ.

ເນື້ອໃນສຳຄັນ ທາງການເມືອງ ຂອງການປະພຶດແບບ *ຂົງຈື້* ທີ່ເຈົ້າປົກຄອງ *ຫວຽດນາມ* ຕ້ອງການໃຫ້ປະຊາຊົນຂອງຕົນປະຕິບັດນຳ ໃນສະຕະວັດ ທີ 18 ກໍ໋ກເປີດ ເຜີຍອອກຢູ່ໃນປຶ້ມ ຊື່ *" ກົດ 47 ຂໍ້ ສຳລັບສອນ ແລະ ປັບປ່ຽນ ປະຊາຊົນ "* ເຊິ່ງ *ຣາຊະ ສຳນັກ ເລ* ພິມອອກ ໃນປີ 1663 ແລະພິມອອກຕື່ມ ໃນປີ 1760. ຣາຊະສຳນັກ ອອກຄຳ ສັ່ງ ໃຫ້ຂ້າຣາຊະການທ້ອງຖິ່ນ ອະທິບາຍກົດເຫລົ່ານີ້ ໃຫ້ແກ່ປະຊາຊົນຊາວບ້ານ ຍິງ

ຊາຍ ທີ່ບໍ່ຮູ້ຫຍັງ. ກົດນັ້ນ ສະເຫນີໃຫ້ຄອບຄົວເບິ່ງແຍງຄົນໃນຄອບຄົວຂອງຕົນ ດ້ວຍ ການເອົາຕົນເອງ ເປັນແບບຢ່າງ ໃຫ້ພວກລູກເຮັດນຳ ແລະຕ້ອງບອກສອນລູກ ກ່ຽວກັບ ຈະຣິຍະທຳ ອັນເຫມາະສົມທີ່ຕ້ອງປະຕິບັດ ຕັ້ງແຕ່ເຊົ້າເທົ້າຄ່ຳ ດັ່ງນັ້ນ ລະບຽບສັງຄົມ ຈຶ່ງຂຶ້ນຢູ່ກັບການປັບປ່ຽນ ເງື່ອນໄຂ ທາງອຸດົມການ ທີ່ຝັງແໜ້ນ ຫລາຍກວ່າກົດ ຫມາຍຂອງລັດ ທີ່ໃຊ້ບໍລິຫານປະເທດ. ພໍ່ກັບແມ່ເປັນແນວໜ້າ ໃນການປ້ອງກັນອຳ ນາດໜ້າທີ່ ທາງການເມືອງ ແລະ ທາງການສຶກສາ, ລູກກະຕັນຍູ ຕ້ອງຫລີກເວັ້ນ ການອອກຊື່ ຜູ່ເປັນພໍ່ແມ່ ໃນສະຖານທີ່ສາທາລະນະ ເພາະນັ້ນຫມາຍເຖິງການສະແດງ ຄວາມເຄົາຣົບ ຕໍ່ພວກເພິ່ນ, ບໍ່ຫນ້າແປກໃຈດອກວ່າ ການສະແດງຄວາມກະຕັນຍູຕໍ່ພໍ່ ແມ່ ເປັນເນື້ອໃນຂອງກົດຂໍ້ທີສອງ ເຊິ່ງເປັນຄຸນນະທຳ ຄຳສອນ ອັນສູງສຸດ ຂອງ *ລັດທິ ຂົງຈື* ບໍ່ແມ່ນຄຳສອນທຳມະດາໆ ທີ່ພົບເຫັນກັນທົ່ວໄປ ໃນອາຊີຕາເວັນອອກສຽງໃຕ້. ຄຸນນະທຳຂໍ້ນີ້ ສອນໃຫ້ລູກເບິ່ງແຍງພໍ່ແມ່ ຍາມເກົ້າແກ່ ແລະ ເມື່ອພໍ່ແມ່ຕາຍໄປແລ້ວ ກໍຍັງຕ້ອງເຮັດບຸນອຸທິດໃຫ້ອີກ ສະເຫມີ. ກົດຂໍ້ທີ 3 ແລະ 9 ສອນໃຫ້ນ້ອງຊາຍ ນັບຖື ອ້າຍ ແລະ ເຖິງແມ່ນວ່າ ນ້ອງຊາຍ ຈະມີຖານະຮັ່ງມີກວ່າ ກໍບໍ່ໃຫ້ຖືຕົນເທົ່າທຽມອ້າຍ ແລະນັ້ນ ຫມາຍເຖິງວ່າ ຕ້ອງບໍ່ລະເມີດ ລະບົບການນັບຖື ຜູ່ອາວຸໂສ ຂອງຄອບຄົວ. ຈຸດ ສຳຄັນໃນນີ້ ກໍແມ່ນຄວາມສຳພັນ ທີ່ບໍ່ເປັນທາງການ ລະຫວ່າງ ອ້າຍແລະນ້ອງຊາຍ ອາດເຄັ່ງຕຶງຂຶ້ນໄດ້ ໃນຍາມໃດຍາມນຶ່ງ ເພາະໃນສັງຄົມ ທີ່ຍຶດຕິດກັບຊັບສົມບັດ ທາງ ວັດຖຸນີ້ ບໍ່ໄດ້ມີຄຳສອນຢ່າງເປັນທາງການ ກ່ຽວກັບການນັບຖືລູກຊາຍກົກ. ກົດຂໍ້ ທີ 4, 11, 12 ແລະ 13 ກ່າວເຖິງ ຖານະອັນຕ່ຳຕ້ອຍ ຂອງ ເມຍ ໃນສັງຄົມ ທີ່ນັບຖື ຜີ້ນ້ອງ ຝ່າຍພໍ່ ເປັນສຳຄັນ ອັນເປັນສັງຄົມທີ່ ຍິງສາວທີ່ແຕ່ງດອງແລ້ວ ບໍ່ພຽງແຕ່ເຂົ້າໄປຢູ່ນຳ ຄອບຄົວຜົວເທົ່ານັ້ນ ແຕ່ຍັງມີພັນທະຕ້ອງປະຕິບັດຕາມຮີດຄອງຕໍ່ ພໍ່ແມ່ ຂອງຜົວ ເວລາ ເພິ່ນລົ້ມຫາຍຕາຍຈາກຫລາຍກວ່າ ທີ່ຕ້ອງເຮັດສຳລັບ ພໍ່ແມ່ ຕົນເອງ ຊ້ຳອີກ. *ຣາຊະ ວົງເລ* ໄດ້ບັງຄັບໃຫ້ເມຍເຊື່ອຟັງຜົວ, ໃຫ້ຄອງໂຕ ຢູ່ເປັນໂສດ ຫລື ໝ້າຍ ໄປຕະຫລອດຊີ ວິດ ຫລັງຈາກຜົວຕາຍປະ ແລະ ໃຫ້ຮັກລູກເມຍນ້ອຍ ຂອງຜົວ ຄືກັບ ລູກຂອງຕົນເອງ. ກົດເກນເຫລົ່ານີ້ ເກືອບທັງຫມົດ ເປັນການຕີຄວາມຫມາຍຂອງ "*ພັນທະ 3 ປະການ* "ຄື ເສນາບໍ່ດີ ຕ້ອງຈົ່ງຮັກພັກດີຕໍ່ກະສັດ, ລູກ ຕ້ອງເຊື່ອຟັງ ພໍ່ແມ່, ເມຍ ຕ້ອງຍິນຍອມຜົວ. ພັນທະ 3 ຂໍ້ນີ້ ເປັນຮີດປະຕິບັດອັນເຄັ່ງຄັດ ທາງສັງຄົມຂອງ *ຫວຽດນາມ* ເກົ່າ ໃນຍຸກຫລັງ.

ແຕ່ໜ້າທີ່ ຂອງເຈົ້າຈັກກະພັດ ເກືອບບໍ່ມີການເວົ້າເຖິງເລີຍ ໃນກົດລະບຽບ 47 ຂໍ້ຂອງ *ຣາຊະວົງເລ*, ທັງນີ້ ຍ້ອນວ່າ ເລື່ອງແຕ່ງແບບສຸຂະທັດນິຍົມ ທີ່ເປັນພື້ນຖານ ຮັບຮອງອຳນາດ ຂອງຈັກກະພັດ ເວົ້າວ່າ ພຣະອົງເປັນຜູ່ມີສິນທຳສູງສຸດ ທີ່ສັ່ງສອນຄົນ ອື່ນໄດ້. ສະຫວັນບັນຊາພຣະອົງ ໃຫ້ພຣະອົງ ລົງມາຈັດຕັ້ງ ແລະສັ່ງສອນວາງລະບຽບ ຫລັກການທາງການເມືອງ ແລະສັງຄົມ ຢ່າງກົມກືນ, ທັງນີ້ ໂດຍສົມມຸດວ່າ ມັນແມ່ນ ເງົາສະທ້ອນ ຂອງແຜນຜັງແຫ່ງຈັກກະວານ ອັນຍິ່ງໃຫຍ່ແຫ່ງນຶ່ງ. ໃນນາມເປັນ "*ພຣະ ໂອຣົດ ແຫ່ງ ສະຫວັນ*" ພຣະເຈົ້າຈັກກະພັດ *ຫວຽດນາມ* ເປັນທີ່ເຄົາຣົບນັບຖື ຫນ້ອຍ ກວ່າ *ເທວະກະສັດ ແຫ່ງ ອິນເດຍ*. ກ້າເກີດມີ ອາຕະໄພ ຫລື ຄວາມພິນາດໃດນຶ່ງ ທີ່ສະ ເນືອນເຖິງ ຊີວິດການເປັນຢູ່ຂອງຊາວນາ ໂດຍສີມືມະນຸດແລ້ວ ພຣະເຈົ້າຈັກກະພັດ ກໍ ຜະເຊີນກັບອັນຕະລາຍໂລດ ຍ້ອນວ່າ ພວກຄົນຜູ່ມັກໃຫຍ່ໄຝ່ສູງທັງຫລາຍ ຈະຟ້າວປ່າວ ປະກາດວ່າ ນັ້ນແມ່ນຍ້ອນ ພຣະອົງ ບໍ່ຕັ້ງຢູ່ໃນຣາຊະທຳ, ຍ້ອນແນວນີ້ "*ສະຫວັນຈຶ່ງລົງ ໂທດ*" ເຖິງແມ່ນວ່າ ເຈົ້າປົກຄອງ*ຫວຽດນາມ* ຜູ່ໄດ້ຮັບການຍົກຍ້ອງຫລາຍທີ່ສຸດ ເຊັ່ນ ອົງຜູ່ກໍ່ຕັ້ງ *ຣາຊະວົງ ເລ* (Le dynasty) ກໍຊົງເຊື່ອວ່າ ພຣະອົງ ຕ້ອງໄດ້ແຕ່ງຕັ້ງເອົາ ຊ້າຣາຊະການຈາກກະກຸນຕ່ຳຕ້ອຍສຸດ ມາເປັນຜູ່ກວດການ, ຄືເປັນຜູ່ຮ້ອງທຸກພິເສດ ທີ່ ໄດ້ຮັບໜ້າທີ່ ຕຳນິຕິຊົມເຈົ້າປົກຄອງ (ແລະພະນັກງານຜູ່ອື່ນໆ), ກ້າພາສີ ຂອງຣາຊະ ສຳນັກເພີ່ມຂຶ້ນຫລາຍເກີນໄປ ຫລືວ່າ ທາງຣາຊະສຳນັກລະເມີດ *"ກົດໝາຍບູຮານ"*. ດ້ວຍກືວ່າ ຕົນເປັນນັກປາດອາຈານ ຫລາຍກວ່າເທວະດາ, ຈັກກະພັດຈຶ່ງພະຍາຍາມ ນຳພາລັດກຸະບານຂອງພຣະອົງ ປະຕິບັດຕາມກົດເກນ ໃຫ້ຫລາຍທີ່ສຸດເທົ່າທີ່ ພຣະອົງ ຈະເຮັດໄດ້ ດ້ວຍອຸດົມຄະຕິ ທີ່ສະແດງອອກໃນຄຳສອນອັນດີ ຂອງ *ຂົງຈື* ແລະ ໃນການ ປະພຶດເຊັ່ນນັ້ນ ພຣະອົງໄດ້ຊົງຮັກສາ ຂະບວນການທັງສອງໄວ້ໄດ້ ຄື ການບໍລິຫານ ແລະການສຶກສາອົບຮົມສິນທຳ. ຄືກັນກັບລະບົບການເມືອງ ຢູ່ອາຊີຕາເວັນອອກສຽງໃຕ້ ອື່ນໆ ຄວາມຫມັ້ນຄົງ ມີຄ່າຫລາຍກວ່າ ອິສຣະພາບ. ແມ່ນແຕ່ພວກອ້າຍນ້ອງ *ຕະກຸນ ໄຕເຊີນ* (Tayson brother) ຜູ່ຣິບໂຮມຂະບົດຊາວນາໄດ້ຫລາຍທີ່ສຸດ ເທົ່າທີ່ *ຫວຽດ ນາມ*ຍກ່ອນສະໄຫມໃຫມ່ ເຄີຍພົບພໍ້ມາ, ພວກເຂົາປະກາດຂຶ້ນ ຕັ້ງແຕ່ທຳອິດໂລດວ່າ ພວກເຂົາ ມີຈຸດປະສົງ ຢາກເອົາ *ຫວຽດນາມ* ອອກຈາກ *"ຄວາມອຸ່ນວາຍສັບສົນ"* ມາສູ່ *"ຄວາມເປັນລະບຽບ"* ດ້ວຍສັນຕິວິທີ ອັນຍິ່ງໃຫຍ່ ເຊິ່ງອາດຈະປັບປ່ຽນຍຸກຄຳ ແຫ່ງ ເຈົ້າປົກຄອງນັກປາດ ໃນອະດີດອັນກວ້ງໄກ.

ໃນດ້ານການປະຕິບັດ ທິດສະດີອັນຈົບງາມ ເຊິ່ງເຈົ້າຊີວິດ *ຫວຽດນາມ* ນຳເອົາ ຈາກ*ຈີນ* ບໍ່ໄດ້ເຮັດໃຫ້ການຕໍ່ສູ້ ຫລືການລະເມີດ ແລະປ່ຽນແປງທິດສະດີນັ້ນ ໝົດໄປ, ເຈົ້າຈັກກະພັດ *ຣາຊະວົງ ເລ* ຊົງສະເຫວີຍອຳນາດ ທີ່ແທ້ຈິງ ພຽງແຕ່ ສະຕະວັດດຽວ ເທົ່ານັ້ນ ລຸນຫລັງປີ ຄ.ສ. 1527 ແລ້ວ ຣັດສະໜີ ຂອງພຣະເຈົ້າກະພັດຣາຊະວົງນີ້ ກໍ ຖືກຣັດສະໜີ ຂອງຣາຊະວົງນ້ອຍໆລະດັບທ້ອງຖິ່ນ ຫລາຍຣາຊະວົງ ບົດບັງໄປ ແລະ ຍາດແຍ່ງແບ່ງເອົາອຳນາດ ຂອງ *ຣາຊະ ວົງເລ* ແຕ່ກໍບໍ່ສາມາດຍົກຍ້າຍ ພຣະຣາຊະ ວັງ*ຈັກກະພັດເລ* ໄປບ່ອນອື່ນໄດ້ ຢ່າງຖາວອນ. ດັ່ງນັ້ນ ໃນສະຕະວັດ ທີ 18 ຈັກກະພັດ *ຣາຊະວົງເລ* ຈຶ່ງຍັງຄົງຕົວຢູ່ຕໍ່ມາ ແລະຢືນຢັດຢູ່ດ້ວຍກຽດສັກສີ ອັນແຂງແກ່ນ. ແຕ່ໃນ ຕົວຈິງ ພວກເພິ່ນບໍ່ໄດ້ປົກຄອງ *ຫວຽດນາມ* ດອກ ແຕ່ແມ່ນພວກຂຸນນາງ *ຕະກຸນ ຕຣິນ* (Trinh lords) ຜຸ້ນຕ່າງຫາກ ທີ່ດູແລພາກເໜືອ ແລະ ຂຸນນາງ *ຕະກຸນຫງວຽນ* (Nguyen) ໃນສ່ວນທີ່ເປັນ *ຫວຽດນາມພາກກາງ* ປັດຈຸບັນພວກຂຸນນາງ *ຕະກຸນ ຕຣິນ* ແລະ *ຫງວຽນ* ໄດ້ສ້າງຫົ້ງຣາຊະສຳນັກ ສຳລັບພວກເຂົາເອງ ແລະຫົ້ງວຽກບໍລິການ ພົນລະເຮືອນນຳ. ພວກເຂົາຕໍ່ສູ້ກັນເອງຢ່າງບໍ່ຢຸດບໍ່ເຊົາ ເປັນເວລາດົນນານ ເພື່ອຍາດ ແຍ່ງສິດເດັດຂາດ ໃນການປົກຄອງ *ຫວຽດນາມ*. ຄວາມປະລາໄຊ ຂອງຣາຊະວົງໃດນຶ່ງ ທີ່ຢາກບັງຄັບໃຫ້ *ຫວຽດນາມ* ເປັນເອກະພາບໃນທາງການເມືອງ ແບບໃຫ້ທຸກຝ່າຍພໍໃຈ ລະຫວ່າງປີ 1528 - 1802 ນັ້ນ ມັນໄດ້ເຮັດໃຫ້ ຕະຫລອດສະຕະວັດ ທີ 18 ນັ້ນ ເຕັມໄປ ດ້ວຍວິກິດການຍາດແຍ່ງແບ່ງອຳນາດ. ເປັນຫຍັງໂຊກຊາຕາ ແຫ່ງໂຄງສ້າງແບບ *ຈັກກະພັດຈີນ* ຈຶ່ງເຮັດໃຫ້ *ຫວຽດນາມ* ເກີດຄວາມແຕກແຍກກັນເຊັ່ນນັ້ນ ? ມີເຫດຜົນ ບາງຢ່າງ ກ່ຽວກັບໂຄງສ້າງ ຍົກເວັ້ນ ໃນ *ຫວຽດນາມພາກໃຕ້* ນັບແຕ່ປາຍປີ 1700 ມາ, *ຫວຽດນາມ* ບໍ່ໄດ້ມີຊົນຊັ້ນ ເຈົ້າທີ່ດິນໃຫຍ່ອີກ, ຄືກັນກັບໃນ*ຈີນ* ເຊິ່ງຜົນປະໂຫຍດ ຮວມຂອງສະມາຊິກຊົນຊັ້ນ ເຈົ້າທີ່ດິນ ຢູ່ສູງກວ່າ ຜົນປະໂຫຍດຂອງທ້ອງຖິ່ນທັງຫມົດ ຈົນເຖິງຂັ້ນວ່າ ພວກເຂົາອາດສະໜັບສະໜຸນ ແລະໃຫ້ເງິນຊ່ວຍເຫລືອແກ່ ຣາຊະສຳ ນັກຈັກກະພັດ ເຊິ່ງຊົງມີອຳນາດ ຕໍ່ເນື່ອງຍິ່ງໃຫຍ່ກວ່າ. ແຕ່ກໍຫາກມີ ອົງປະກອບທາງ ວັດທະນະທຳຢູ່ ເຊັ່ນ ການຕອບໂຕ້ຄວາມໜ້າໄຫວ້ ຫລອກລວງ ຢູ່ໃນວົງການເມືອງ ເຊື່ອງຊ້ອນຢູ່ໃນທຸກສິ່ງທຸກຢ່າງ ນັບແຕ່ ບົດວັນນະຄະດີ ຂອງທາງຣາຊະວັງ ເຖິງນິທານ ຕະຫລົກ ຂອງປະຊາຊົນ ມີນັກກະວີ ຜູ່ບໍ່ປະສົງອອກຊື່ຫລາຍຄົນ ເກີດທ່າອຽງຊາດນິຍົມ ແຮງ ເຖິງຂັ້ນກ້າເປີດເຜີຍ ຄວາມລັບຂອງພວກເຈົ້າປົກຄອງ ທີ່ຄົນທັງຫລາຍຍົກຍ້ອງ

ເຊັ່ນ ຈັກກະພັດຍິ່ງໃຫຍ່ອົງນຶ່ງ ໃນ *ຣາຊະວົງ ເລ* ໂດຍພັນລະນາ ເຖິງພວກເພິ່ນແບບໃຊ້ ສັນຍະລັກສາມັນ ຫນ້າດູຕົນ ເຊັ່ນ ໃຫ້ເປັນ ໂຕຄັນຄາກ ທີ່ມີຫນັງເປັນຕຸ່ມຂີ້ຫູດປູດເປົ່າ ແຕ່ຫາກສະຫລາດສະຫລຽວດີ.

ພຣະເຈົ້າຈັກກະພັດ *ຫວຽດນາມ* ແລະພວກ *ຂຸນນາງ ຕຣິນ* ກັບ *ຫງວຽນ* ເປັນ ປະມຸກຂອງລັດຖະບານ ທີ່ເປັນລະບົບຂ້າຣາຊະການຫລາຍກວ່າ ທີ່ເຄີບພົບເຫັນຢູ່ບ່ອນ ອື່ນໆ ໃນພາກພື້ນອາຊີຕາເວັນອອກສຽງໃຕ້, ຢ່າງຫນ້ອຍກໍໃນແງ່ທິດສະດີ. ມີການແບ່ງ ຄວາມຊໍານານ ຕາມຫນ້າທີ່ສະເພາະ ເຊັ່ນວ່າ ກະຊວງຫັງ 6 ຂອງລັດຖະບານ ໂດຍ ທົ່ວໄປ ຮູ້ຈັກໃນນາມ ຄະນະກໍາມະການ ຫັງ 6 (Luc bo) ເຊິ່ງແບ່ງຫນ້າທີ່ຕ່າງໆ ໄປຕາມລໍາດັບ ເຊັ່ນ ການແຕ່ງຕັ້ງຂ້າຣາຊະການ ເລື່ອງເກັບພາສີ ແລະການຈັດການ ດ້ານການເງິນ ຂອງລັດຖະບານ, ການບໍລິຫານໂຮງຮຽນ ການສອບເສັງ ແລະ ຄວາມ ສໍາພັນ ກັບຕ່າງປະເທດ, ຫັງຫມົດ ກືວ່າເປັນ " *ພິທີກໍາ* ", ການບັນຊາການກອງທະຫານ, ການບໍລິຫານຄວາມຍຸຕິທໍາ ແລະການກໍ່ສ້າງພຣະຣາຊະວັງ, ກໍາແພງເມືອງ ຖະຫນົນ ແລະ ຝາຍຂັງນ້ໍາ. ນອກນີ້ ລັດຖະບານນີ້ ຍັງໄດ້ຫລຸດຕໍາແຫນ່ງຂ້າຣາຊະການ ທີ່ເຫັນ ວ່າ ບໍ່ມີຄວາມສາມາດ ໃນຂະນະຜ່ານການທົດສອບເປັນລະຍະ ເກືອດຫ້າມບໍ່ໃຫ້ຂ້າຣາ ຊະການ ເຮັດວຽກໃນພື້ນທີ່ ບ້ານເກີດຂອງຕົນ ດ້ວຍເຫດຜົນທີ່ວ່າ ພວກເຂົາບໍ່ສາມາດ ເປັນນັກບໍລິຫານ ທີ່ຄຶດເຜື່ອຄົນອື່ນໄດ້ ໃນທ້ອງຖິ່ນ ທີ່ຕົນເອງເປັນເຈົ້າຂອງຊັບສິນຢູ່, ລະ ບົບນີ້ດໍາເນີນການ ໂດຍອີງໃສ່ປຶ້ມຄູ່ມືແນະນໍາ ແລະວິທີການເຮັດວຽກ ທີ່ພິມເຜີຍແຜ່, ຢູ່ *ຫວຽດນາມ* ມີການພິມ ດ້ວຍລະບົບແທ່ນພິມໄມ້ ຄືກັບ*ຈີນ* ມາຕັ້ງແຕ່ ສະຕະວັດ ທີ 15. ຍິ່ງກວ່າສິ່ງອື່ນໃດ ລັດຖະບານ ຍັງປະກອບດ້ວຍ ກຸ່ມຂ້າຣາຊະການ ທີ່ເປັນນັກປາດອາ ຈານມີຄວາມສໍານຶກພິເສດ ກຽວກັບຖານະ ເຊິ່ງພວກຕາເວັນຕົກ ມັກເອີ້ນວ່າ *"ແມນດາ ຣິນ"*. ພວກຂ້າຣາຊະການນັກປາດ ໄດ້ຮັບການຄັດເລືອກ ຜ່ານການສອບເສັງ ດ້ານການ ຂຽນ ບໍ່ແມ່ນພວກຂຸນນາງ ທີ່ສືບເຊື້ອສາຍມາຕາມປະເພນີ.

ໃນສະຕະວັດ ທີ 18 ການສອບເສັງ ຄົງໄດ້ເຮັດເປັນສອງລະດັບ ຄື ສອບເສັງ ດ້ານຄຸນວຸທິ ສໍາລັບທ້ອງຖິ່ນ ໂດຍຈັດຂຶ້ນທຸກໆສາມປີ ແລະ ອັນສໍາຄັນກວ່າ ແມ່ນການ ສອບເສັງ ທີ່ທາງຣາຊະສໍານັກ ຂອງ *ຂຸນນາງ ຕຣິນ* ແລະ *ຫງວຽນ* ຈັດຕັ້ງເອງ. ພວກນັກຮຽນ *ຫວຽດນາມ* ມີເຄື່ອງມື ເຊັ່ນ ຟອຍແຕ້ມຮູບ ແລະເຈ້ຍ ແລ້ວໄປເຕົ້າໂຮມ ກັນຢູ່ຜາມນ້ອຍໆ ເພື່ອສອບເສັງ, ພວກເຂົາ ອາດຕ້ອງຜ່ານການທົດລອງ ຫລາຍຂັ້ນ

ตอบ ເຊິ່ງມີທັງ ການແຕ່ງການກອບເປັນພາສາ *ຈີນບູຮານ* ຫລື ຕອບຄຳຖາມກ່ຽວກັບ ນະໂຍບາຍ *"ການເມືອງ ແລະ ວຽກງານບໍລິຫານລັດ ໃນສະໄໝກ່ອນ"*. ພາຍໃຕ້ພວກ *ຂຸນນາງຫງວຽນ* ພວກນັກຮຽນ ທີ່ຜ່ານການສອບເສັງ ພຽງແຕ່ຂັ້ນນຶ່ງ ກໍໄດ້ຮັບການ ຍົກເວັ້ນຈາກການອອກແຮງງານເກນ ເປັນເວລາ 5 ປີ ແຕ່ພວກເຂົາ ຈະບໍ່ໄດ້ຮັບຕຳ ແໜ່ງສູງ ໃນລັດຖະບານ ນອກຈາກວ່າ ຈະສອບເສັງໄດ້ຫມົດ. ຄວາມໄຝ່ຝັນອັນສູງສຸດ ຂອງຜູ່ຊາຍ *ຫວຽດນາມ* ທີ່ອ່ານອອກຂຽນໄດ້ກໍແມ່ນ ໄດ້ເປັນສະມາຊິກ ຂອງຊົນຊັ້ນ *"ແມນດາຣິນ"* ນ້ອຍໆກຸ່ມນຶ່ງ ທີ່ມີສິດພິເສດ (ໃນຕົ້ນປີ 1700 ມີ ຂ້າຣາຊະການ ພົນ ລະເຮືອນ ປະມານ 3,500 ຄົນ ໃນ *ຫວຽດນາມເໜືອ*). ການສອບເສັງໄດ້ ຖືວ່າໄດ້ຮັບ *"ມະຫາປະລິນຍາບັດ"*; ຂະນະທີ່ການແຕ່ງດອງເປັນຄອບຄົວ ຖືວ່າ ແມ່ນ *"ອະນຸປະລິນຍາ ບັດ"*. ໃນບ້ານທົ່ວໆໄປ ພວກທີ່ມີປະລິນຍາບັດ ໄດ້ຮັບການຍົກເວັ້ນ ຈາກການອອກແຮງ ງານເກນ ພ້ອມກັນກໍ່ຕັ້ງສະມາຄົມ *"ວັດທະນະທຳ ແບບດັ້ງເດີມ* (Tu van)*"* ຂຶ້ນ, ສະມາ ຄົມແບບນີ້ ຈັດທຳພະລີກຳ ດ້ຳຜີ ເປັນລະຍະ ຢູ່ຫໍໄຫວ້ *ຍົ່ງຈຶ* ນ້ອຍໆ ແລະ ຄຸ້ມຄອງ *"ການສຶກສາ ຂອງທົ່ງນາ"* ເຊິ່ງຜູ່ເກັບກ່ຽວຜົນລະປູກ ໄດ້ຈ່າຍຄ່າຈ້າງຄູປະຈຳບ້ານ ຫລື ສຳລັບການຮຽນ ຂອງພວກເດັກນ້ອຍທຸກຈົນ ໃນບ້ານ, ເຖິງວ່າ ຄ່າໃຊ້ຈ່າຍສຳລັບ ການສຶກສາ ຂອງພວກ *ແມນດາຣິນ* ເອງ ຍັງແພງເກີນໄປ ສຳລັບພວກຊາວນາທົ່ວໆ ໄປກໍຕາມ. ລຸນຫລັງ ປີ 1750 ຣາຊະສຳນັກພາກເໜືອ ທີ່ເປັນເສືອຫີວ ໄດ້ຂາຍສິດການ ເຂົ້າສອບເສັງ ແລະອະນຸຍາດ ໃຫ້ນັກສຶກສາ ຜູ່ຮັ່ງມີ ຈ້າງນັກກ່າຍ ຂຽນບົດສອບເສັງ ໃຫ້, ແຕ່ການກະທຳແບບໃຊ້ອຳນາດແນວນີ້ ກໍບໍ່ໄດ້ຫລຸດຜ່ອນກຽດສັກສີຂອງບ້ານລົງ ໃນເລື່ອງມີຜູ່ຊະນະເລີດ ໃນການສອບເສັງຢູ່ໃນບ້ານ. ຊີວິດ ແລະຄວາມສຳເລັດ ຂອງ ພວກ *ແມນດາຣິນ* ແຊກຊຶມເຂົ້າຝັງຢູ່ໃນຈິນຕະນາການ ຊາວ *ຫວຽດນາມ*. ນັກກະວີຍຸກ ກາງ ໄດ້ຂຽນປຽບທຽບ ຂ້າຣາຊະການນັກປາດໄວ້ ແບບຕ່າງໆນາໆ ເຊັ່ນວ່າ ພວກ ເຂົາຄືກັບ ຕົ້ນຫມາກ (ເຊິ່ງໃຫ້ຮົ່ມເງົາແກ່ຜູ່ອື່ນ ແລະ ບໍ່ໂຄ່ນຣາກເຫງົ້າລົງງ່າຍໆ)ແດ່, ຄື ຫມາກໂມແດ່ (ເຊິ່ງເຊື່ອກັນວ່າ ຄວາມແດງພາຍໃນຂອງມັນ ຫມາຍເຖິງຄວາມຊື່ ສັດ) ແລະ ວ່າ ຄື ຕົ້ນໂພແດ່ (ມີຄົນຂາບໄຫວ້ ຢູ່ເກືອບທົ່ວທຸກບ້ານ ໃນນີ້ຫມາຍເຖິງ ນັກປາດອາຈານຂີ້ທຸກ ທີ່ບໍ່ໄດ້ຕຳແໜ່ງສຳຄັນ ແຕ່ສອນຢູ່ຕາມໂຮງຮຽນໃນບ້ານ ທັງ ບັນຊາ ສະມາຄົມນ້ອຍໆ ຂອງພວກລູກສິດ). ໃນສະຕະວັດ ທີ 18 ຊາວ *ແມນດາຣິນ ຫວຽດນາມ* ແຕ່ລະຄົນ ຖືວ່າ ຕົນເອງດຳເນີນຊີວິດ ຢ່າງມີກຽດສັກສີ ແຕ່ອາພັບ ແບບ

ท่านย๋างจี้ ເຊິ່ງນັກກະວີຜູ່ຍິ່ງໃຫຍ່ ຫລື ບິດາແຫ່ງກະວີ *ຫວຽດນາມ* ຄື ທ່ານ *ຫງວຽນ ງຽມ* (Nguyen Nghiem) ເອງປະຕິບັດມາແລ້ວ.

ເຖິງແມ່ນວ່າ ພວກເຂົາ ໄດ້ຢືມເອົາວັດທະນະທຳ ມາຈາກ*ຈີນ* ກໍຕາມ ຣາຊະວັງ *ຫວຽດນາມ* ແລະຊົນຊັ້ນ *ແມນດາຣິນ* ຂອງພວກເຂົາ ກໍຍັງຄົງຮັກສາວິນຍານຂອງ *ຫວຽດນາມ* ໄວ້ຢູ່. ດັ່ງຕົວຢ່າງນຶ່ງ ໃນບັນດາ ປະມວນກົດໝາຍ ຂອງ *ຫວຽດນາມ* ກ່ອນສະໄໝໃໝ່, ປະມວນກົດໝາຍທັງໝົດ ອັນຍິ່ງໃຫຍ່ທີ່ສຸດ ເຊິ່ງໃຊ້ກັນຢູ່ ໃນສະຕະວັດ ທີ 16, 17 ແລະ 18 ໄດ້ຮັບອິດທິພົນ ຈາກປະມວນກົດໝາຍ*ຈີນ* ແຕ່ໄດ້ປະຕິບັດ ຕໍ່ພວກແມ່ຍິງ ດີກວ່າປະມວນກົດໝາຍ*ຈີນ* ຄືມັນສອດຄ່ອງກັບຮີດຄອງປະເພນີ ຂອງສັງຄົມ ອາຊີຕາເວັນອອກສຽງໃຕ້ ບ່ອນເຊິ່ງໂອກາດທີ່ແມ່ຍິງ ຈະໄດ້ເປັນນັກການເມືອງ ຫລື ນັກຂຽນຜູ່ສຳຄັນ ມີຫນ້ອຍຫລາຍ. ປະມວນກົດໝາຍ ຂອງ *ຣາຊະສຳນັກ ເລ* ອະນຸຍາດໃຫ້ລູກສາວສືບມູນ ຂອງຄອບຄົວ ໄດ້ເກືອບເທົ່າໆກັບລູກຊາຍ, ປະມວນກົດໝາຍ ຢືນຢັນວ່າ ຊັບສິນ ທາງຝ່າຍແມ່ ຕ້ອງຖືກຈັດແບ່ງ ບົນພື້ນຖານ ແຫ່ງຄວາມສະເໜີພາບ ລະຫວ່າງລູກທັງໝົດ ແທນທີ່ຈະເອົາໂຮມເຂົ້າກັບຊັບສິນຂອງພໍ່, ຫລັກກົດໝາຍ ແນວນີ້ ບໍ່ມີຢູ່ ໃນ *ປະເທດຈີນ*.

ລັດທິຂົງຈື ເຊິ່ງມີຄວາມສຳຄັນ ເທົ່າກັບ ລັດທິມະນຸດສະນິຍົມ ແລະການສະແຫວງຫາຄວາມຮູ້ຈາກຕຳລາ ໄດ້ຊ່ອຍໃຫ້ *ຫວຽດນາມ* ມີຊົນຊັ້ນນັກປາດ ຜູ່ຍຶດຕິດຢູ່ກັບປະຫວັດສາດ, ພວກເຂົາເປັນສະມາຊິກ ຜູ່ມີຈິດໃຈໜາຍໜັ້ນ ຮັກສາຄວາມຊົງຈຳອັນໂຫດຮ້າຍ ກ່ຽວກັບເຫດການທີ່*ຈີນ* ແຊກຊຶມເຂົ້າ*ຫວຽດນາມ*ໃນອະດີດ ຢ່າງລືມບໍ່ໄດ້. ການແຊກຊຶມທັງໝົດ ລົ້ມເຫລວລົງ ພາຍຫລັງ ສະຕະວັດ ທີ 10. ມີຄັ້ງນຶ່ງ ເຊິ່ງ ລົ້ມເຫລວກວ່າໝູ່ ສົມຄວນບັນທຶກໄວ້ ແມ່ນການພະຍາຍາມ ຂອງ *ຣາຊະວົງ ມິ້ງ* (Ming dynasty) ໃນການຮື້ຟື້ນ "*ດິນແດນອານາມ ໃນອາລັກຂາເກົ່າ* "ໂດຍການໃຊ້ ກຳລັງທະຫານເຂົ້າຍຶດຄອງ *ຫວຽດນາມພາກເໜືອ* ລະຫວ່າງ ປີ 1407 ຫາ 1427. *ເລເຫລີຍ* (Le Loi) ຜູ່ສະຖາປະນາຣາ*ຊະວົງເລ* ອົງສຳຄັນສຸດ ໄດ້ນຳພາຂະບວນການ ຕໍ່ຕ້ານ ຂອງ *ຫວຽດນາມ* ຕີກອງທັບ*ຈີນ* ໃຫ້ແຕກພ່າຍກຸ່ອຍໄປ ຢ່າງພິລະອາດຫານ ແລະຂັບໄລ່*ຈີນ* ໃຫ້ອອກນອກປະເທດໄປ. ໃນສະຕະວັດ ທີ 18, ນັກປາດ ແລະນັກປະຫວັດສາດ ທີ່ຫາຜູ່ທຽມຄຽງໄດ້ຍາກ ໃນ *ຫວຽດນາມ* ຄື ທ່ານ *ເລກຸຍດົນ* (Le Quy Don) ບໍ່ໄດ້ສອນແຕ *ລັດທິຂົງຈື* ແບບ *ຫວຽດນາມ* ອິສຣະ ດ້ວຍຄວາມສຳນຶກຮູ້ຕົນເອງເທົ່ານັ້ນ

ແຕ່ຫາກໄດ້ສອນເລື່ອງ ຄວາມຊົ່ວຮ້າຍ ຂອງ *ຈັກກະພັດນິຍົມຈີນ* ເມື່ອຄັ້ງອະດີດນຳ. ຜົນງານອັນຍອດຍ້ຽມຢ່າງນຶ່ງ ຂອງເພິ່ນ ທີ່ຂຽນຂຶ້ນ ໃນປີ 1776 ແມ່ນ *"ປະຫວັດສາດ ຂອງພູມສະຖານ ຫວຽດນາມພາກກາງ"* ເຊິ່ງມີຄວາມລະອຽດລະອໍ ເກີ່ງຂັ້ນພັນລະນາ ຮອດ ປາຊະນິດຕ່າງໆທີ່ລ່ອງລອຍຢູ່ໃນ *ແມ່ນ້ຳຫອມ* (Perfume river) ແຫ່ງ *ເມືອງ ເຫວ້*. ທ່ານ *ເລກຸຍດັນ* ໄດ້ເວົ້າຫວນຄືນເຖິງ ຄວາມທຸກຍາກ ທີ່ເກີດຈາກການປົກຄອງ *ຫວຽດນາມ* ໃນລະຍະສັ້ນໆ ຂອງ *ຣາຊະວົງມິ້ງ* ເຊັ່ນ: ການສໍ້ລາດບັງຫລວງ ຂອງ ພວກຂ້າຣາຊະການ*ຈີນ*, ການແຊກແຊງແບບຫນ້າຍີ້ດຽດ ເຂົ້າໃນຊີວິດຊາວນາ, ການ ປຸ້ນສະດົມ ເອົາແຫລ່ງຕົກຫອຍມຸກ, ພູຜາປ່າດົງ ທີ່ກຶກທຳລາຍຂຸດຄົ້ນເອົາຄຳ, ການປຸ້ນ ຍຶດເອົາງາຊ້າງ ແລະເຄື່ອງຫອມປຸງແຕ່ງອາຫານ, ການຫລອກລວງ ແລະການກັກຂັງ ປັນຍາຊົນ *ຫວຽດນາມ* ແລະການທີ່ປະຊາຊົນ *ຫວຽດນາມ* ພ້ອມໃຈກັນກຽດຊັງ.

ອັນເປັນຕາຫົວກໍແມ່ນວ່າ ພໍມາເຖິງຂ້ອນເຄິ່ງກາງສະຕະວັດ ທີ 18, *ຫວຽດ ນາມ* ເອງ ໄດ້ກາຍມາເປັນເຈົ້າອຳນາດ ແຜ່ອານາເຂດ ໂດຍການໂຄບແຫ້ ປະຊາ ຊາດບ້ານໃກ້ເຮືອນຄຽງ ເຊັ່ນ *ລາວ ແລະ ຂະເໝນ* ເຊິ່ງຫາງ ຣາຊະສຳນັກ *ຫວຽດ ນາມ* ຖືວ່າ ເປັນພວກຢູ່ນອກວົງຄວາມຈະເລີນຂອງ *ລັດທິຂົງຈື*. ການຕໍ່ສູ້ອັນຍືດເຍື້ອ ຢູ່ໃນ *ຫວຽດນາມພາກກາງ* ລະຫວ່າງ *ຫວຽດນາມ* ກັບ ປະຊາຊາດ*ຈາມ* ຜູ່ຢູ່ກ້ອງອິດ ທິພົນ*ອິນເດຍ* ຍຸຕິລົງ ພ້ອມໆກັບການທຳລາຍ *ອານາຈັກຈາມ* ໃນປີ 1697. ປະຊາ ຊາດ*ຈາມ* ໄດ້ກາຍເປັນຊົນເຜົ່າຊັ້ນຕ່ຳສຸດຂອງ *ຫວຽດນາມ* ເຊິ່ງພວມຂະຫຍາຍອານາ ເຂດອອກຢ່າງກວ້າງຂວາງ. ພວກ *ຂຸນນາງ ຫງວຽນ* ກັບສາວົກ ໃນນັ້ນມີທັງພວກ *ຄົນຈີນອົບພະຍົບ* ທີ່ໄດ້ແຕກຫນີມາແຕ່ *ຈີນ*ແຜ່ນດິນໃຫຍ່ ມາຢູ່ດິນແດນທີ່ເປັນ *ຫວຽດ ນາມພາກໃຕ້* ໃນທຸກວັນນີ້ ລະຫວ່າງປີ1679-1708 ໃນຖານະທີ່ເປັນພວກ *"ຈົງຮັກພັກດີ ຕໍ່ ຣາຊະວົງມິ້ງ"*, ພວກເຂົາບໍ່ສາມາດຍອມຮັບ ເອົາການຫລົ້ມຈົມຂອງຣາຊະວົງນັ້ນ ຢູ່ໃນດິນແດນບ້ານເກີດຂອງຕົນເອງ ບັດນີ້ ໄດ້ຜາກັນກອຍຫນີໄກໄປເລື້ອຍໆ. ມາເຖິງ ປະມານ ປີ 1760 ພວກ *ຈີນອົບພະຍົບ* ເຫລົ່ານີ້ ໄດ້ກືນເອົາດິນແດນຫົກແຂວງ ໃນເຂດ *ສາມຫລ່ຽມປາກ ແມ່ນ້ຳຂອງ* ຈາກ *ກຳພູຊາ* ເຊິ່ງພວມຕົກຢູ່ໃນສະພາວະອັດຕະຄັດ. ດິນແດນສ່ວນນີ້ ເປັນທີ່ຮູ້ຈັກກັນດີ ຂອງ ພວກ *ຝຣັ່ງ* ໃນນາມ *ໂກແຊງຊີນ*, ປຶ້ມຣຽນປະ ຫວັດສາດ ຂອງ *ຫວຽດນາມ* ໃນປັດຈຸບັນ ພັນລະນາເຖິງການກ້າວບຸກລົງທາງໃຕ້ຄັ້ງ ນັ້ນວ່າ ເປັນ *"ພາລະກິດ ເປີດກ້ວາງ ດິນແດນແປນເປົ່າແຫ່ງນຶ່ງ"*.

ຕໍ່ມາ ຜູ່ປົກຄອງ *ຫວຽດນາມ* ບໍ່ສາມາດຄວບຄຸມຊາວນາ ຜູ່ຍຶດຄອງທີ່ດິນ ນ້ອຍໆ ແລະ ພວກເຊົ່ານາ ເຊິ່ງປະກອບດ້ວຍປະຊາກອນ *ຫວຽດນາມ* ເອງ ເປັນສ່ວນ ໃຫຍ່ໄວ້ໄດ້. ຊີວິດຂອງພວກເຂົາ ຈົມດິ່ງລົງສູ່ຄວາມທຸກຍາກລຳບາກ ເຖິງຂັ້ນອັນຕະ ລາຍ ເຊິ່ງສາເຫດສ່ວນນຶ່ງ ມາຈາກການເກນແຮງງານ ແລະ ພາສີ ທີ່ພວກ *ຂຸນນາງ ຕຣິນ* ແລະ *ທາວຽນ* ຂູດຮີດຈາກພວກເຂົາ ໃນລະຍະເວລາອັນເຍີ້ນຍາວ ທີ່ພວກເຂົາສູ້ ຢັນກັນ. ໃນກຸ່ມຂະບົດ ຫລາຍພວກທີ່ໄຝ່ຝັນຢາກສະເໜີ ໃຫ້ມີການປ່ຽນແປງ ຮູບແບບ ການເມືອງ, ກຸ່ມສຳຄັນກວ່າໝູ່ ແມ່ນພວກສາມອ້າຍນ້ອງ ເຊິ່ງເປັນທີ່ຮູ້ຈັກກັນດີ ຕາມ ຊື່ບ້ານເກີດຂອງພວກເຂົາ ຢູ່ໃຕ້ *ຫວຽດນາມ* ພາກກາງ ນັ້ນຄື ພວກ " *ອ້າຍນ້ອງ ໄຕ ເຊີນ* ". ພວກເຂົາລົງມືຕໍ່ຕ້ານໃນປີ 1771. ໂດຍການໂຄສະນາ ກ່ຽວກັບຄວາມສະເໜີ ພາບລະຫວ່າງຄົນຮັ່ງກັບຄົນທຸກ, *ສາມອ້າຍນ້ອງ ໄຕເຊີນ* ໄດ້ຈັດແບ່ງແຈກຢາຍ ຊັບ ສິນ(ຂອງກິນແລະເງິນ) ຂອງພວກ *ແມນດາຣິນ* ຄູ່ສັດຕູ ຂອງພວກຊາວນາ ທັງຈູດເຜົາ ບັນຊີພາສີ ຂອງ ລັດກະບານ, ພວກນັກເຜີຍແຜ່ ສາສະໜາ *ຟຣານຊິສການ ສະເປນ* ຜູ່ໄດ້ເຫັນເຫດການ ບັນທຶກໄວ້ວ່າ : ປະຊາຊົນ*ຫວຽດນາມ* ໄດ້ຕ້ອນຮັບ *ສາມອ້າຍນ້ອງ ໄຕເຊີນ* ຟໍປານວ່າ ພວກເຂົາເປັນ *"ຂຸນໂຈນໃຈພຣະ"*. ນອກນີ້ ພວກເຂົາຍັງເປັນນັກຮົບ ຜູ່ສະຫລຽວສະຫລາດ, ຫລາຍເທື່ອຫລາຍທີ ເມື່ອເຕົ້າໂຮມກອງທະຫານ ທີ່ປະກອບດ້ວຍ ທັງຊາວນາ ພໍ່ຄ້າງົວຄວາຍ, ສະໜມຽນຊັ້ນນ້ອຍ, ພວກຊາວ*ຈາມ*, ພວກ *ຄົນຈີນ*, ຊາວ ພູດອຍ *ເຊດັ້ງ*, ແລະ ແມ່ນແຕ່ພວກນັກປາດອາຈານໄດ້ແລ້ວ ພວກເຂົາກໍນຳພາກອງ ທະຫານນີ້ ຈັດການປັດກວາດບ້ານຕໍ່ບ້ານໃຫ້ກ້ຽງແປນ ຟໍປານວ່າ ມັນແມ່ນການຊຳ ລະໂທດກຳ ທີ່ຄ້າງຄາມາດົນແລ້ວຢ່າງນຶ່ງ, ພ້ອມທັງມ້າງເພລະບົບການເມືອງເກົ່າ ໃຫ້ ມຸ່ນກະຈອນໄປ. ຂະນະດຽວກັນກັບທີ່ *ຣາຊະວົງ ເລ* ກັບ *ຕຣິນ* ພວມລົງຄ້ອຍຢູ່ແລ້ວ ສະ ມາຊິກຄົນນຶ່ງ ຜູ່ສະຫລາດກວ່າໝູ່ ໃນສາມອ້າຍນ້ອງ ໄດ້ປະກາດຕົນ ຂຶ້ນເປັນຈັກກະ ຟັດ *ກວາງຈຸງ* ໃນ ເດືອນທັນວາ ຄ.ສ. 1788 ແລ້ວ *ຈັກກະພັດ ກວາງຈຸງ* ກໍດຳເນີນການ ໂຈມຕີແລະຜາບແພ້ ກອງທັບໃຫຍ່ ທີ່ *ຈັກກະພັດຈີນ* ສົ່ງລົງໄປໃນ *ຫວຽດນາມພາກ ເໜືອ* ເພື່ອຈັດການຄວາມອຸ່ນອາຍ ແລະປາບປາມພວກຕໍ່ຕ້ານພຣະອົງ.

ບຸຣຸດພິດສະດານຜູ່ນີ້ ຊາວ *ຫວຽດນາມ* ບາງຄົນ ຍັງກ່າວຂານເຖິງ ດ້ວຍ ຄວາມຕື່ນເຕັ້ນບໍ່ເລີກບໍ່ແລ້ວ ກ່ຽວກັບລັກສະນະທ່າທາງຂອງເພິ່ນນັ້ນ. ລັກສະນະພົ້ນ ເດັ່ນ ແຫ່ງສະຕະວັດ ຂອງຂະບວນການຕໍ່ຕ້ານຍັດຢຶນ ຂອງ-ຕວນາໄດ້ພຸ່ງຂຶ້ນ ເຖິງ

ຂີດສູງສຸດ ແລະ ອາວະສານລົງ. ເບິ່ງຄືວ່າ ມັນສະຫມອງ ອັນເຕັມໄປດ້ວຍພິກໄຫວ ວ່ອງ ໄວ ຂອງ *ກວາງຈຸງ* ໄດ້ຄາດຫວັງເຖິງ ການສ້າງ *ຣາຊະອານາຈັກຫວຽດນາມ* ແບບ ໃຫມ່. ພຣະອົງ ຈັດການປົກຄອງ ແບບອາໄສພວກທະຫານເປັນຫລັກໃຫຍ່ ແຕ່ກໍໄດ້ຟື້ນຟູ ນາມມະຍົດ ຕຳແຫນ່ງຕ່າງໆ ແບບບູຮານ*ຂອງຈີນ* ສະໄຫມນັກປາດ *ຂົງຈື* ຍັງມີຊີວິດຢູ່, ແລະພວກທີ່ປຶກສາ ນັກຝັນລອຍລົມ ຂອງ ພຣະອົງ ກໍໄດ້ເລັ່ງລັດໃຫ້ພຣະອົງ ທົດລອງ ນຳໃຊ້ລະບົບ ລັດຖະບານຂຸນນາງແບບເກົ່າ ໂດຍອີງໃສ່ ພວກຍາດພີ່ນ້ອງຂີ້ສ້ ຫລາຍ ກວ່າພວກຄ້າຣາຊະການ ດ້ວຍເຫດຜົນ ທີ່ວ່າ ນີ້ເປັນແນວທາງນຶ່ງ ທີ່ເຈົ້າ*ຊີວົກຈີນ* ສະ ໄຫມບູຮານ ໄດ້ນຳໃຊ້ມາແລ້ວຢ່າງມີຜົນສຳເລັດ ເພື່ອຈັດການກັບ ຄວາມອຸ່ນວາຍທາງ ການເມືອງ. *ຈັກກະພັດ ກວາງຈຸງ* ຍັງໄດ້ພະຍາຍາມບັງຄັບ ໃຫ້ຊາວນາ *ຫວຽດນາມ* ທັງຫມົດ ຖືບັດປະຈຳໂຕ ທີ່ມີຄຳຂວັນພິມຕິດໃສ່ວ່າ " *ຄວາມເຊື່ອຫມັ້ນອັນຍິ່ງໃຫຍ່ ຕໍ່ ມະຫາອານາຈັກ* ". ເປັນສິ່ງຈະແຈ້ງວ່າ ຄຳຂວັນນີ້ ໃຊ້ປຸກລະດົມການເຄື່ອນໄຫວຂອງ ມວນຊົນ ເພື່ອບຸກເຂົ້າພາກໃຕ້ຂອງ*ຈີນ* ແລະເປັນການສ້າງພາກພື້ນການເມືອງ ແຫລ່ງ ນຶ່ງ ຄືນໃຫມ່ ພາຍໃຕ້ປາລະມີ ຂອງ *ໄຕເຊີນ*. ເບິ່ງແລ້ວ ເປັນຫນ້າແປກປະຫລາດຢູ່ ເສັ້ນແບ່ງຊາຍແດນທາງການເມືອງ ເຊິ່ງ ສະຕະວັດທີ 20 ຍຶດຖືເອົາເປັນຫລັກນັ້ນ ໃນ ສະໄຫມສະຕະວັດ ທີ 18 ຊ້ຳບໍ່ເປັນທີ່ຍອມຮັບກັນເລີຍ ໃນອາຊີຕາເວັນອອກສຽງໃຕ້; ແລະເກືອບວ່າມີກອງທະຫານ *ຫວຽດນາມ* ຂະຫນາດໃຫຍ່ ເທົ່າກັບກອງທັບ *ແມນຈູ* ທີ່ຕີ ຍຶດເອົາ*ຈີນ* ໄດ້ ໃນສະຕະວັດກ່ອນ. *ກວາງຈຸງ* ຜູ່ເຊິ່ງ ໄດ້ເຂົ້າເປັນພັນທະມິດກັບສະ ມາຄົມລັບ ພາຍໃນ*ຈີນ* ຢ່າງຈິງຈັງນັ້ນ, ຝັນເຖິງການສ້າງຄວາມເປັນເອກະພາບຂອງ "*ອານາຈັກຫວຽດນາມໃຕ້* " (Nam Viet) ຄືດັ່ງທີ່ເຄີຍເປັນມາ ໃນສະໄຫມສະຕະວັດ ທີສອງ ກ່ອນ ຄ.ສ. ເຊິ່ງໃນນັ້ນກວມເອົາທັງ *ກວາງຕຸ້ງ* ແລະ *ກວາງສີ* ຕະຫລອດທັງ *ຫວຽດນາມພາກເຫນືອ* ເຂົ້ານຳ, ອານາຈັກດັ່ງກ່າວ ຍັງໄດ້ພະຍາຍາມຂະຫຍາຍດິນ ແດນ ເພື່ອຕ້ານຢັນສູ້ກັບການເຕົ້າໂຮມຢ່າງຖາວອນ ຂອງສິ່ງທີ່ກາຍເປັນ *ມະຫາຈັກກະ ພັດຈີນ* ອັນຍິ່ງໃຫຍ່ ໃນເວລາຕໍ່ມາ. ຈະມີຫຍັງເກີດຂຶ້ນແດ່ ກັບນັກບຸກເບີກທາງການ ເມືອງ ແລະນັກການທະຫານ ຊາ*ວຫວຽດນາມ* ຄົນນີ້ ທີ່ມີນິໄສໃຈຄໍ ໃກ້ຄຽງກັບ *ມະຫາ ຈັກກະພັດ ນາໂປລຽນ* ກ້າວ່າ ເພິ່ນບໍ່ຕາຍລົງໄປກ່ອນ ຢ່າງກະທັນຫັນ ໃນປີ ຄ.ສ. 1792, ບໍ່ມີໃຜຮູ້ໄດ້. *ກວາງຈຸງ* ຈາກໄປ ເຫລືອໄວ້ແຕ່ຄວາມຊົງຈຳ ທີ່ຍັງກະຕຸ້ນຈິດໃຈຊາວ *ຫວຽດນາມ*ບາງຄົນ ແມ່ນແຕ່ໃນປັດຈຸບັນ. ແຕ່ ພຣະອົງເສຍໄຊ ທີ່ບໍ່ໄດ້ໃຫ້ກຳເນີດຣາຊະ

ວົງໃຫມ່ທີ່ເຂັ້ມແຂງ ໃຫ້ປະຊາຊົນ *ຫວຽດນາມ* ຄືດັ່ງທີ່ເກີດຂຶ້ນຫວ່າງມໍ່ໆນີ້ ຢູ່ໃນ *ພະມ້າ* ແລະ *ສະຫຍາມ.*

ບົດທີ 9 : ສຸລະຕານ ແຫ່ງ ມາລາຢູ

ໃນຂະນະທີ່ລັດຕ່າງໆ ໃນແຜ່ນດິນໃຫຍ່ອາຊີຕາເວັນອອກສຽງໃຕ້ ໄດ້ເປັນທີ່ຮັບຮູ້ກັນມາ ແຕ່ສະຕະວັດທີ 18 ເທົ້າເກິ່ງທຸກວັນນີ້ ລັດອື່ນໆທີ່ເປັນເກາະດອນໃນອາຊີຕາເວັນອອກສຽງໃຕ້ (ຮວມທັງ*ແຫລມມາລາຢູ* ທີ່ໂຮມຢູ່ໃນຫມູ່ເກາະດອນທັງຫລາຍ) ຊ້ຳບໍ່ເປັນຄືກັນ. *ຟີລິບປິນ* ຫົວເມືອງຂຶ້ນຂອງ*ສະເປນ* ໃນສະຕະວັດທີ 18 ໄດ້ຂະຫຍາຍອາ ນາເຂດອອກໄປແຕ່ເລັກນ້ອຍ ນັ້ນແມ່ນກົກເຄົ້າ ຂອງປະເທດ*ຟີລິບປິນ* ປັດຈຸບັນ, ແຕ່ເມື່ອ 200 ປີກ່ອນນີ້ ບໍ່ໄດ້ມີສິ່ງໃດຄືກັບທີ່ມີຢູ່ໃນ*ມາເລເຊຍ* ຫລື *ອິນໂດເນເຊຍ* ດຽວນີ້ເລີຍ. ແຕ່ ຕາມແລວໂຄ້ງໃຫຍ່ ຂອງຫມູ່ເກາະດອນທັງຫລາຍນັ້ນ ໄດ້ມີສັງຄົມ ແລະໂຄງສ້າງການ ເມືອງຫລາກຫລາຍຮູບແບບ ຢ່າງຫນ້າອັດສະຈັນ. ຍົກຕົວຢ່າງ ມີສັງຄົມຂະຫນາດ ນ້ອຍໆ ບໍ່ສັງກັດລັດ ຈຳນວນນັບບໍ່ຖ້ວນ ຂອງພວກນາຍພານລ່າເນື້ອກັບຊາວໄຮ່ ເຊິ່ງ ສ່ວນຫລາຍພົບເຫັນຢູ່ໃນສ່ວນເລິກຂອງຫມູ່ເກາະດອນ ທົ່ວໆໄປ. ສ່ວນວ່າໃນສາຍຕໍ່ລະ ຫວ່າງເກາະດອນກ້ຳຕາເວັນອອກຂອງ*ຊຸມາ*ນັ້ນ ກໍມີສອງດອນໃຫຍ່ ທີ່ເຫລືອລອດມາ ຈາກຍຸກປະຫວັດສາດຕອນຕົ້ນໆຄື *ດອນບາຫລີ* ເຊິ່ງເປັນເຊື້ອສາຍສຸດທ້າຍແຫ່ງຍຸກສະ ໄຫມ *ລັດຮິນດູ-ພຸດ*ໃນອາຊີຕາເວັນອອກສຽງໃຕ້ ແລະ *ດອນຕິມໍ*ຣ໌ ຂອງ*ປໍຕູເກດ* ອັນປະ ກອບດ້ວຍຊຸມຊົນນ້ອຍໆ *ແມສຕິໂຊກາໂຕລິກ* ຊຶ່ງເປັນເອກະລາດ ຈາກ*ກຸ*ງ*ລິດສະບອນ* ຢ່າງທະນົງອົງອາດເທົ່າໆກັບ ທີ່ມັນເປັນກໍລະນີຍົກເວັ້ນກໍລະນີນຶ່ງ ທ້າມກາງປະເທດ *ອິສລາມ* ກັບປະເທດບໍ່ມີສາສະຫນາທີ່ຢູ່ໃກ້ຄຽງອື່ນໆ. ນອກຈາກນີ້ຍັງມີອຳນາດທີ່ເກືອບ ຜິດປົກກະຕິອີກຄື ບໍລິສັດພວກ*ດັດຊ* ກັບ*ອິສອິນເດຍ*ຂອງ*ອັງກິດ*. ເບິ່ງຄືວ່າເປັນລັດແນວ ນຶ່ງ ແຕ່ຫາກມີແຕ່ພໍ່ຄ້າໃຊ້ອາວຸດ ເຊິ່ງແຜ່ອິດທິພົນທາງການເມືອງ ໄປຕາມເສັ້ນທາງ ຄົມມະນາຄົມທາງນ້ຳແລະຕາມທ່າເຮືອ ເກືອບທັງຫມົດໃນຫມູ່ເກາະດອນ. ຍັງມີສັງຄົມ ຂະຫນາດໃຫຍ່ ແລະມີວັດທະນະທຳ ເປັນເນື້ອດຽວກັນອີກສອງແຫ່ງ ເຊິ່ງມີພົນລະເມືອງ ຫນາແຫນ້ນ ຢູ່ເກາະດອນ ເຊັ່ນ ພວກ*ຟີລິບປິນກາໂຕລິກ* ພາຍໃຕ້ການປົກຄອງຂອງ *ສະເປນ* ແລະ *ຊຸ*ະ*ອາ* ເຊິ່ງເມື່ອກາງສະຕະວັດ ທີ 18 ນັ້ນ ສ່ວນໃຫຍ່ຍັງກືກ ບໍລິສັດພວກ *ດັດຊ* ຄວບຄຸມຢູ່.

ເບິ່ງແບບລວມໆ ສິ່ງສຸດທ້າຍ ທີ່ເປັນເອກະລັກເດັ່ນສຸດຂອງອາຊີຕາເວັນອອກ ສຽງໃຕ້ ກໍແມ່ນລັດຂອງ *ສຸລະຕານມາລາຢູ-ມຸສະລິມ* ແລະການເປັນຫົວຫນ້າ ຕາມ

ຊາຍຝັ່ງທະເລ ແລະແມ່ນ້ຳສາຍຕ່າງໆ. ສັງຄົມ*ມຸດສະລິມ* ແລະລັດຕ່າງໆ ໃນໝູ່ເກາະ ດອນແຕກຕ່າງກັນຫລາຍ ໃນລະຫວ່າງພວກດຽວກັນ ແຕ່ *ຊະວາ* ເປັນອີກກໍລະນີນຶ່ງ ຕ່າງຫາກ ເພາະລັດ*ສຸລະຕານ* ຕາມຊາຍຝັ່ງຂອງ*ຊະວາ* ນັ້ນ ເຄີຍຖືກຄອບຄອງມາແຕ່ ສະຕະວັດທີ 17 ພຸ້ນແລ້ວ. ປະຊາຊົນທີ່ເຮັດນາດຳ ຂອງ *ບູກິສ* ແລະ *ມາກາສາຣິສ* (Bugis and Makassarese)ໃນດອນ *ຊີລິເບສ* ຕາເວັນຕົກສຽງໃຕ້ແລະໃຈກາງແຜ່ນ ດິນ*ມິນັງກາໂບ* (Minangkabau) ໃນດອນ*ສຸມາຕຣາ*ພາກກາງຕາເວັນຕົກ ກໍມີຄວາມ ແຕກຕ່າງກັນໃນບາງດ້ານ. ແຕ່ເຖິງແມ່ນວ່າສັງຄົມທັງສອງນີ້ ມີຮູບແບບນະໂຍບາຍ ການເມືອງ*ມຸດສະລິມ-ມາລາຢູ* ອັນດຽວກັນ ເຊິ່ງແມ່ນອັນທີ່ແຜ່ຫລາຍໃນທົ່ວໝູ່ດອນ ກ້ຳຕາເວັນອອກ ເຖິງດອນ *ມິນດາເນົາ* ໝູ່*ດອນຊູລູ* ແລະບາງເກາະດອນ ທາງຕາ ເວັນອອກຂອງ*ບາຫລີ* ແລະສັງຄົມສອງຮູບແບບນີ້ ກໍໄດ້ຂ້ອນໂຮມກັນຢູ່ຢ່າງຫນາແໜ້ນ ກວ່າ ໃນໝູ່ດອນກ້ຳຕາເວັນຕົກຕາມຊາຍຝັ່ງຂອງແຫລມ*ມາລາຢູ* *ສຸມາຕຣາ* *ດອນບໍ ນຽວ* ແລະເທິງເກາະດອນເລັກໆນ້ອຍໆໃນບໍລິເວນໃກ້ຄຽງ. ເພື່ອໃຫ້ສະດວກອາດເອີ້ນ ໝູ່ເກາະດອນທາງຕາເວັນຕົກວ່າ ໂລກ*ມາລາຢູ* ກໍໄດ້ເຄີຍເປັນເຮືອນຮັງໃນແງ່ປະຫວັດ ສາດ ຂອງຮູບແບບສັງຄົມ *ມຸດສະລິມ-ມາລາຢູ*, ມາຮອດກາງສະຕະວັດ ທີ 18 ລັດ ຕ່າງໆ ຂອງໂລກ *ມຸດສະລິມ* ເຫລົ່ານີ້ ກໍຍັງເປັນຕົວຢ່າງອັນດີເລີດ ຂອງປະເພນີນີ້ຢູ່.

ໂລກຂອງຊາວ*ມາເລ* ສ່ວນຫລາຍເປັນດິນແດນທີ່ບໍ່ສະດວກ ສຳລັບເຂົ້າໄປຕັ້ງ ຖິ່ນຖານຂອງມະນຸດພໍເທົ່າໃດ, ພື້ນທີ່ໃກ້ເສັ້ນສູນສູດປົກຄຸມໄປດ້ວຍ ປ່າດົງດິບເຂດຮ້ອນ ຊຸ່ມ ສ່ວນຫລາຍເປັນພູຜາສູງ ອ້ອມຮອບໄປດ້ວຍຫນອງບຶງ ຕົ້ນໂກງກາງ, ຫນ້າດິນຖືກ ແຜດເຜົາ ແລະເຊິ່ລ້າງດ້ວຍຝົນຫ່າແຮງ ພື້ນທີ່ນັ້ນຈຶ່ງບໍ່ເປັນທີ່ດຶງດູດໃຈໃຫ້ຜູ່ຄົນເຂົ້າໄປ ຢູ່ພໍເທົ່າໃດ. ມີແຕ່ ແມ່ນ້ຳ ເທົ່ານັ້ນ ທີ່ເຈາະຫມີ້ນຕັດຊາຍຝັ່ງເຂົ້າໄປເລິກໆ ແລະເຮັດ ໃຫ້ເກີດບ່ອນເປັນຕາຢູ່ອາໄສໄດ້ ຫາກໃຊ້ເຕັກໂນໂລຊີທີ່ພໍມີຢູ່ນັ້ນ ເພື່ອຂະຫຍາຍສັງຄົມ ອັນສັບສົນ. ການເຄື່ອນໄຫວຂ້າມປະເທດເປັນໄປໄດ້ຍາກ ດັ່ງນັ້ນ ຈຶ່ງບໍ່ມີເສັ້ນທາງຄົມມະ ນາຄົມເລີຍ ຍົກເວັ້ນໃນບໍລິເວນທີ່ຂຶ້ນໄປຮອດກົກນ້ຳ ເຊິ່ງມັກເປັນລະບົບແມ່ນ້ຳອິສຣະຫລື ໃນບໍລິເວນທາງແລ່ນເຮືອຕາມຊາຍຝັ່ງ.

ສະຖານະການເຫລົ່ານີ້ ໄດ້ກຳນົດຮູບແບບໂຄງສ້າງທາງສັງຄົມ ການເມືອງ ແລະ ເສດຖະກິດ ເຊິ່ງພັດທະນາຂຶ້ນໃນໂລກ*ມາລາຢູ*. ພວກເຂົາເປັນສັງຄົມປາກນ້ຳ ເຊິ່ງ ສ່ວນໃຫຍ່ມີສູນກາງຢູ່ເມືອງທ່າ ທີ່ຕັ້ງຢູ່ໃກ້ປາກແມ່ນ້ຳ ທີ່ປ່ອງລົງທະເລ. ການຕັ້ງເມືອງ

ໃສ່ບ່ອນແບບນີ້ ກໍເພື່ອຄວບຄຸມກວດກາສິ່ງທີ່ລ່ອງລົງມາ ແລະເພື່ອໃຫ້ມີສ່ວນຮ່ວມ ໃນ ສິ່ງຜ່ານໄປຜ່ານມາ. ອຳນາດທາງການເມືອງ, ລັດຫລື *"ນິຄິຣິ"* ທີ່ຢູ່ປາກແມ່ນ້ຳ ພະຍາ ຍາມສະເໜີ ທີ່ຈະສະຖາປະນາ ອຳນາດຂອງຕົນໃຫ້ພຽງພໍ ເພື່ອຄວບຄຸມປະຊາຊົນ ທີ່ຢູ່ເໜືອນ້ຳຂຶ້ນໄປ ແລະພວກທີ່ຢູ່ທາງໃນ ທັງນີ້ເພື່ອຮັບປະກັນ ການລະບາຍຜົນຜະລິດ ທີ່ສາມາດເກັບພາສີຫລືຂາຍໄດ້. ໃນເວລາດຽວກັນ ລັດດັ່ງກ່າວຍັງເຂົ້າໄປແຊກແຊງໃນ ການຍາດແຍ່ງອຳນາດ ທີ່ເລິກແລບ ກັບລັດ *"ນິຄິຣິ"* ປາກແມ່ນ້ຳອື່ນໆໃນຂົງເຂດນັ້ນ ເພື່ອສ້າງທ່າເໜືອກວ່າຢູ່ໃນການຄ້າລະຫວ່າງປະເທດ ທັງນີ້ ກໍເພື່ອເພີ່ມທະວີ ຫລື ຮັກ ສາໄວ້ເຊິ່ງຄວາມຮັ່ງມີຂອງລັດ. ເບິ່ງຄືວ່າ ຊາຍແດນຂອງລັດບໍ່ມີຄວາມແນ່ນອນ ແລະ ບໍ່ສຳຄັນພໍເທົ່າໃດ ເພາະສິ່ງທີ່ຖືວ່າສຳຄັນກວ່າ ແມ່ນການຄວບຄຸມການສັນຈອນທາງ ນ້ຳ ບໍ່ແມ່ນທາງບົກ. ຂະໜາດຂອງອົງການຈັດຕັ້ງທາງການເມືອງ ທີ່ກິດຈະກຳເຫລົ່ານີ້ ອະນຸຍາດ ຫລື ຮຽກຮ້ອງໃຫ້ເຮັດຍັງຄົງມີຂະໜາດນ້ອຍຢູ່ ເມື່ອປຽບໃສ່ກັບອົງການ ຂອງລັດ ໃນເຂດສາມຫລ່ຽມໃຫຍ່ປາກນ້ຳແລະ*ລັດຊາວນາ* ເທິງແຜ່ນດິນໃຫຍ່ ກັບໃນ *ຊະວາພາກກາງ*. ເຖິງແມ່ນວ່າໃນບາງຄັ້ງບາງຄາວໄດ້ມີການເຕົ້າໂຮມອຳນາດ ເຊັ່ນ ລະບົບປະເທດ ໃນອາລັກຂາ ລະບົບລັດຫົວໜ້າ ມີອຳນາດເໜືອລັດອື່ນ, ລະບົບຂຶ້ນ ຕໍ່ກັນ ແລະ ການເປັນພັນທະມິດ ແລະແມ່ນແຕ່ການເປັນເຈົ້າອານາຈັກແຫ່ງການຄ້າ ລະບົບຕ່າງໆເຫລົ່ານີ້ມີຈຸດອ່ອນແລະບໍ່ຍືນຍົງ ເພາະວ່າປັດໄຈ ທີ່ເຮັດໃຫ້ມັນເກີດຂຶ້ນ ໄດ້ນັ້ນ ແມ່ນມາຈາກ ເລ່ຫລ່ຽມການເມືອງ, ການຫລົ້ນພັກພວກພາຍໃນຣາຊະວົງ(ເຊັ່ນ ສົ່ງລູກຫລານໄປປົກຄອງເມືອງຕ່າງໆ), ໃຫ້ສັນຍາແບບມີຜົນປະໂຫຍດ ທາງການຄ້າ ຢ່າງທັນທີທັນໃດ, ລະຍະການເປັນຜູ່ນຳ ທີ່ມີປະສິດທິຜົນກວ່າ ຫລື ອຳນາດທາງການ ທະຫານ ດ້ວຍປັດໄຈແບບນີ້ ລັດແບບໃດກໍສາມາດເກີດຂຶ້ນໄດ້.

ຢູ່ຈຸດສູງສຸດໃນໂຄງສ້າງທາງການເມືອງຂອງ*ນິຄິຣິ* ແມ່ນ *ສຸລະຕານ*; ເຖິງ ແມ່ນວ່າ ກິດຕິສັບສ່ວນຕົວ ທີ່ມາຈາກຣາກເຫງົ້າ *ອິສລາມ ຕູຣະກີ* ຄຳນີ້ ບໍ່ເປັນທີ່ນິຍົມ ໃຊ້ກັນຫລາຍໃນສະຕະວັດ ທີ 18 ເທົ່າກັບຄຳ *"ຢັງດີ ເປີຕວນ"* ທີ່ເປັນສັບ*ມາເລ*ໃຊ້ ໃນພິທີການ (ທ່ານຜູ່ເປັນເຈົ້າ)ເຊິ່ງຕໍ່ມາຫຍໍ້ເປັນ *"ຢຳຕວນ"* ຊຶ່ງ ຫລືບໍ່ເທົ່າກັບກິຕິສັບ ສະເພາະຊົນຊັ້ນນຳ ທີ່ແຜງມາຈາກພາສາ*ອິນເດຍ* ວ່າ *ຣາຊາ* ນັ້ນ ກໍຕາມ. ບົດບາດ ຂອງ *"ຢຳຕວນ"* ອັນທຳອິດ ແລະສຳຄັນທີ່ສຸດແມ່ນການສະແດງຄວາມເປັນເອກະພາບ ໃນສັນຍະລັກຂອງລັດ ແລະເພື່ອຮັກສາຄວາມສະຫງົບຮຽບຮ້ອຍ ແລະຄວາມຄົບກ້ວນ

ສົມບູນຂອງຜືນແຜ່ນດິນ ໃນກະໂຕຂອງ *"ຢຳຕອນ"*ເອງ ປະກອບດ້ວຍ *"ດູລັດ"* ທັງສອງ ຄື ອຳນາດອັນເລິກລັບ ທີ່ກ່າຍທອດມາຕາມເຊື້ອສາຍຂອງສະເພາະຜູ່ເປັນກະສັດເທົ່ານັ້ນ ແລະ *"ກູສາ"* ການມີອຳນາດສູງສຸດລະຍະຊົ່ວຄາວ. ແສງປະກາຍແຫ່ງຄວາມສັກກາລະ ທີ່ໂອບຫຸ້ມເພິ່ນໄວ້ ສະແດງອອກດ້ວຍກົນໄກລະອຽດກີ່ກ້ອນ ໃນເວລາປະກອບພິທີກຳ ແລະການສະແດງຄວາມເຊື່ອ ເຊິ່ງມີຄວາມສຳຄັນຢ່າງແທ້ຈິງ ເຖິງແມ່ນວ່າ ໃນບາງຄັ້ງ ມັນຍັງບໍ່ໄດ້ເປັນຕົວແທນແຫ່ງການເຕົ້າໂຮມອຳນາດບໍລິຫານ ຫລືພະລັງທີ່ກົງກັນກໍຕາມ.

ບັນທຶກກ່ຽວກັບການແຕ່ງຕັ້ງຜູ່ປົກຄອງ ທີ່ຍັງພໍມີໃຫ້ສຶກສາ ເຮັດໃຫ້ເຫັນຈະແຈ້ງເຖິງຄວາມສຳຄັນອັນສັກສິດ ແລະອຳນາດເລິກລັບຂອງຕຳແໜ່ງ ຣາຊະການ. ການສືບທອດຕຳແໜ່ງຈຳກັດຢູ່ກັບເຊື້ອສາຍເຈົ້າຊີວິດ ເຊິ່ງສ່ວນຫລາຍເປັນຝ່າຍຊາຍ ໂດຍມີການຢັ້ງຢືນຂັ້ນສຸດທ້າຍ ຈາກພວກຫົວໜ້າໃຫຍ່. ການຂຶ້ນສູ່ບັນລັງຂອງຜູ່ປົກຄອງປະກອບດ້ວຍພິທີຫົດສົງດ້ວຍນ້ຳມົນ ອັນເປັນເຄື່ອງໝາຍບອກ ການຍົກຖານະກັນແຖວສູງຂຶ້ນກວ່າຍາດພີ່ນ້ອງ ແລະສ້າງລັກສະນະສ່ວນບຸກຄົນໃໝ່ ທີ່ຍິ່ງໃຫຍ່ກວ່າ. ຕໍ່ຈາກນັ້ນ ເຂົາກໍໄດ້ຮັບການປະດັບປະດາດ້ວຍເຄື່ອງຊົ່ງກຽດຕິຍົດ ອັນເປັນສັນຍະລັກແຫ່ງຕຳແໜ່ງ ນັບແຕ່ເຄື່ອງໃຊ້ປະຈຳຕົວ ທີ່ເປັນສັນຍະລັກ ຄື ອາວຸດ ກອງ ແລະເສື້ອຜ້າແບບພິເສດ ຈົນເຖິງການຈ້ຳປະຈຳແຜ່ນດິນ ແລະເຄື່ອງໃຊ້ໃນພິທີອື່ນໆ. ທັງຫມົດນີ້ລ້ວນແຕ່ເສີມສົ່ງຄຸນນະສົມບັດ ອິດທິລິດພິສະດານ ຂອງເຈົ້າຊີວິດຂຶ້ນ, ພວກອ້າລາຊະການອາວຸໂສຂອງ *ສຸເຫຣ່ຳວັງຫລວງ* ອ່ານ*ພະຄັມພີກຸຣະອານ* ວ່າ :

"ໂອ! ພວກເຮົາແຕ່ງຕັ້ງທ່ານເຈົ້າອຸປະຣາດແຫ່ງໂລກມະນຸດ" ເພື່ອກຳຫນົດໝາຍຕຳແໜ່ງຂອງຜູ່ປົກຄອງ ວ່າເປັນຜູ້ປ້ອງກັນ ແລະຕັດສິນຂອງສາສະຫນາ*ອິສລາມ*. ເປັນອັນວ່າພວກຫົວໜ້າ ໄດ້ມາໂຮມປະຊຸມກັນ ເພື່ອຈັດຕັ້ງພິທີສະແດງຄວາມເຄົາຣົບຕໍ່ເຈົ້າຊີວິດ ເປັນລະຍະໆ ຕະຫລອດເວລາຣາຊະການຂອງພຣະອົງ ທ້າມກາງ ມະຫາສັນນິບາດ ທີ່ຈັດຕັ້ງຂຶ້ນເພື່ອຈຸດປະສົງນີ້ ໂດຍສະເພາະ. ຮູບແບບການປະຕິບັດ ຕໍ່ຜູ່ປົກຄອງອັນເປັນທີ່ຍອມຮັບກັນທົ່ວໄປມີລັກສະນະດັ່ງນີ້ ຄື ການເຂົ້າຂາບໄຫວ້ລາຍງານແລະການເຂົ້າເຝົ້າ ຕ້ອງປະຕິບັດໃຫ້ຖືກລະບຽບດ້ວຍຄວາມເຄົາຣົບ ແລະຕ້ອງນັບຖືພຣະຣາຊໂອງການຢ່າງເຄັ່ງຄັດ.

ໃນໂລກຂອງ*ມາລາຢູ* ເມື່ອສະຕະວັດທີ 18 ເຖິງວ່າ ຮູບແບບການດຳລົງຊີວິດ ຂອງພຣະຣາຊາ ໃນເມືອງຕາມແຄມຝັ່ງແມ່ນ້ຳຈະມີລັກສະນະຮັ່ງມີ ສະດວກສະບາຍ ເມື່ອທຽບໃສ່ກັບປະຊາຊົນທົ່ວໄປ ແຕ່ກໍ່ຍັງຕ່ຳຕ້ອຍຢູ່ ເມື່ອທຽບໃສ່ກັບການດຳລົງຊີວິດ ຂອງພວກເຈົ້າຜູ່ປົກຄອງ ໃນລັດກະສິກຳທີ່ກວ້າງໃຫຍ່ໃນອາຊີຕາເວັນອອກສຽງໃຕ້. ເຖິງ ແມ່ນວ່າ ມີການກໍ່ສ້າງດ້ວຍຫີນຢູ່ແດ່ກໍຕາມ ແຕ່ *ພຣະຣາຊະວັງ* ຫລື *ອິສຕະບະ* ສ່ວນ ໃຫຍ່ ກໍ່ສ້າງດ້ວຍໄມ້ ແລະໃຊ້ໃບຈາກມຸງຫລັງຄາ ຕັ້ງຢູ່ພາຍໃນຮົ້ວໄມ້ໄຜ່ ຫລືບໍ່ດັ່ງນັ້ນ ກໍມີຕູບຫລາຍຫລັງ ແລະອາຄານຕ່າງໆ ວາງຢາຍຢູ່ຮອບນອກສຳລັບເປັນທີ່ຢູ່ອາໄສ ຂອງສະມາຊິກແລະຄົນຮັບໃຊ້ໃນໂຮງຫລວງ, ບໍລິເວນຫໍໂຮງ ເຊິ່ງຕາມທຳມະດາ ບໍ່ ກວ້າງໃຫຍ່ກວ່າສອງເຮັກຕາ* ຕັ້ງຢູ່ໃກ້ຝັ່ງແມ່ນ້ຳ ຄອຍຄວບຄຸມການເຄື່ອນໄຫວທັງ ຫມົດ ຕາມເສັ້ນທາງຄົມມະນາຄົມທາງນ້ຳທີ່ສຳຄັນ. ໃນບັນຍາກາດເຢັນໆຂອງຍາມ ເຊົ້າ ແລະຍາມຄ້ອຍຄ່ຳ ມັກມີຜາບຄວາມສົນລະອົນອຸ່ນອາຍຕ່າງໆ. ສູນກາງຊີວິດ ປະ ຊາຊົນໃນ *ອິສຕະບາ* ແມ່ນ *ບາເລ* ຫລື *ຫໍປະຊຸມຫລວງ* (ເຊິ່ງບາງເທື່ອ ກໍແຍກມາ ເປັນຫລັງນຶ່ງຕ່າງຫາກ) ຊຶ່ງກໍ່ວ່າ ເປັນບ່ອນທີ່ເຈົ້າປົກຄອງ ອອກມາສັ່ງວຽກງານທຸກມື້ ຫລື ເປັນບາງຄັ້ງຄາວ, ໃນຫໍນີ້ ມີບັນລັງຕັ້ງຢູ່ກາງຫ້ອງ ປະດັບດ້ວຍຜ້າມ່ານສີເຫລືອງ ສຳລັບເຈົ້າຊີວິດ ຕໍ່ໜ້າບັນລັງ ມີຕັ່ງຍາວເຕ້ຍໆຕັ້ງໄວ້ສຳລັບເສນາອາມາດ ຫລື ຂ້າຣາ ຊະການຜູ່ໃຫຍ່ ເວລາເຂົ້າມາເຝົ້າເຈົ້າຊີວິດ.

ສັງຄົມຊາວ*ມາເລ* ມີການແບ່ງຊັ້ນຢ່າງຈະແຈ້ງ. ຢູ່ຈອມສູງສຸດຂອງ ສັງຄົມ ແນ່ນອນວ່າແມ່ນພວກເຊື້ອສາຍຂອງເຈົ້າຊີວິດນັ້ນເອງ, ມີຫລາຍຈຸ້ມຫລາຍສາຍ ໂດຍ ສະເພາະການມີເມຍຫລາຍຄົນ ໄດ້ເຮັດໃຫ້ມີການຍາດແຍ່ງຂຶ້ນຄອງຣາຊະສົມບັດເທື່ອ ລະຫລາຍຄົນ. ໃນລະດັບຕ່ຳລົງມາ ຈຶ່ງແມ່ນພວກທີ່ບໍ່ເປັນເຊື້ອເຈົ້າ ຫລື ຂຸນນາງ ເຊິ່ງ ກໍອ້າງໃນນາມສິດພິເສດ ໃນຖານະວ່າສືບທອດມາຈາກຄອບຄົວທີ່ເຄີຍໄດ້ຮັບສິດມາ ຈົນ ເປັນປະເພນີ ເພື່ອເຂົ້າຮັບຕຳແໜ່ງຫລືໜ້າທີ່ສຳຄັນ ພ້ອມດ້ວຍການມີສິດຊົມໃຊ້ຊັບ ສິນຂອງລັດນຳ. ສ່ວນຫລວງຫລາຍແລ້ວ ອັນທີ່ເປັນເສົາຄ້ຳຂອງລັດນັ້ນ ກໍແມ່ນຄົນມາ ຈາກຊົນຊັ້ນນີ້ເອງ, ດ້ວຍວ່າ ຈຳນວນຕຳແໜ່ງວຽກງານ ໃຫ້ພວກເຊື້ອເຈົ້ານັ້ນ ມີຈຳ ກັດເທົ່າກັບຈຳນວນຜູ່ສະໜັກເທົ່ານັ້ນ. ມີອີ*ງສຸລະຕານ* ເທົ່ານັ້ນ ທີ່ມີທຸກສິ່ງທຸກຢ່າງ

---

* ສອງເຮັກຕາ ເທົ່າກັບ 20,000 m^2(ຕາແມັດ)

ທີ່ປະກອບໄປດ້ວຍສິ່ງອຳນວຍຄວາມສະດວກ ຄ້າຍຄືກັບສິ່ງທີ່ມີຢູ່ໃນລະບົບຣາຊະການ ອັນຄົບກ້ວນນຶ່ງໆ ເຖິງແມ່ນວ່າ ຕຳແໜ່ງຕາມກຽດຕິຍົດ ເຊິ່ງອີງໃສ່ລະບົບທີ່ນຳໃຊ້ ກັນໃນສະຕະວັດ ທີ 15 ຢູ່ *ມາລະກາ* ຍັງຄົງຕົວຢູ່ກໍຕາມ. ຜົນຮັບອັນດຽວ ກໍຄືການຈັດ ແບ່ງຊັ້ນທາງສັງຄົມ ມັກຂຶ້ນກັບພວກເຊື້ອສາຍຂຸນນາງ ຫລື ສ່ວນພົວພັນນຳພວກເຂົາ ຫລາຍກວ່າຂຶ້ນກັບຕຳແໜ່ງບໍລິຫານອັນແທ້ຈິງ. ໃນລະຍະເກີດຄວາມຂັດແຍ່ງທາງສັງ ຄົມນັ້ນ ພວກຂຸນນາງຕາມຮີດ ແຕ່ໄຮ້ກຳນະຕຳແໜ່ງນີ້, ເຖິງວ່າຖືກເກືອດກັນອອກ ຫ່າງຈາກບ່ອຳນາດແລ້ວ ກໍຍັງອາດສາມາດສະເໜີສະໜອງ ແຫລ່ງສະໜັບສະໜູນ ໃຫ້ແກ່ຜູ້ບໍ່ພໍໃຈຢູ່ ດັ່ງທີ່ສະມາຊິກຣາຊວົງບາງຄົນຜູ້ຂັດຂ້ອງແຮງ ໄດ້ເຮັດມາແລ້ວ.

ຢ່າງໃດກໍຕາມ ໃນນັ້ນ ກໍຍັງມີຣັດຖະມຸນຕີແລະນັກບໍລິຫານຫລາຍຄົນຢູ່. ຮູບ ແບບຮ່ວມກັນອັນນຶ່ງ ຄື ຢູ່ເທິງຂັ້ນສູງສຸດນັ້ນ ມີຂ້າຣາຊະການຕົ້ນຕໍຂອງລັດ ຢູ່ ສາມ ຫາ ສີ່ ຄົນ(ຈຳນວນນີ້ ແມ່ນປະຕິບັດຕາມ ຫລັກທິດສະດີ ຈັກກະວານວິທະຍາ ຂອງ *ຮິນດູ*) ທີ່ເອີ້ນກັນວ່າ *ມົນຕຣີ* (ອັກຄະມຸນຕຣີ ຫລື ຣັດຖະມຸນຕີ ຜູ່ທີນຶ່ງ), *ເບນດາຮະຣາ* ຫລື *ມົນຕຣີການຄັງ, ລັກສະມະນາ* ຫລື *ຜູ່ບັນຊາການ* ທະຫານສູງສຸດ(ຫລື ຕາມຄຳ ສັບ ແມ່ນ ຈອມພົນ) ,ແລະ ຫລືຜູ່ຕັດສິນ(ຜູ່ພິພາກສາ) ເຊິ່ງບາງຄັ້ງກໍເປັນຜູ່ໃຫຍ່ໃນ ເລື່ອງສາສະໜາພຸ. ຕ່ຳລົງໄປກວ່ານີ້ ບາງຄັ້ງ ກໍມີຕຳແໜ່ງຫລຸດລົ່ນກັນແດ່ເລັກ ນ້ອຍ ເຊິ່ງອາດແມ່ນພວກເຈົ້າໜ້າທີ່ພາສີ ຫລືພວກເກັບພັນທະຢູ່ຕາມທ່າເຮືອ ແລະ *ຊາບັນຣ໌ດາຣ໌* (Shahbandar) ເຊິ່ງມີໜ້າທີ່ເປັນຜູ່ຕິດຕ່ໍລະຫວ່າງ *ສຸລະຕານ* ກັບພ່ໍຄ້າ ຕ່າງປະເທດໂດຍສະເພາະ. ພະນັກງານເຫລົ່ານີ້ ເຄີຍຮັບໃຊ້ຢູ່ໃນໂຮງຫລວງ (Istana) ຫລື ຢ່າງໜ້ອຍ ກໍເຄີຍຢູ່ໃນກະໂຕເມືອງທ່າເຮືອມາແລ້ວ. ນອກຈາກນີ້ ຍັງມີເຈົ້າເມືອງ ຫລື ເຈົ້າຄອງເຂດແຄ້ວນ ທີ່ໄດ້ຮັບມອບອຳນາດຈາກຜູ່ປົກຄອງລັດ ໃຫ້ຄຸ້ມຄອງເຂດ ທີ່ ກຳນົດໄວ້ໃຫ້ວັງຫລວງ *ເນເກຣ* (Negeri) ເຊ່ັນ : ສາຂາແມ່ນ້ຳໃຫຍ່ສາຍນຶ່ງ ຫລື ແມ່ນ້ຳອື່ນ ທີ່ເລາະລຽບໄປຕາມແຄມຝັ່ງໄກໆ. ພວກເຈົ້າເມືອງ ໄດ້ຮັບແຕ່ງຕັ້ງໃຫ້ເກັບ ພາສີອາກອນ ໃນເຂດທີ່ພວກເຂົາຄຸ້ມຄອງ ແລະເປັນອິສຣະຈາກເມືອງຫລວງ. ເຖິງຢ່າງ ໃດກໍດີ ອາດເວົ້າໄດ້ວ່າ ໂດຍທ່ົວໄປແລ້ວ ພວກເຂົາມີສ່ວນຮ່ວມໃນການບໍລິຫານລັດ ແລະ ຕຳແໜ່ງຂອງພວກເຂົາ ມັກເຮັດໃຫ້ພວກເຂົາໄດ້ເປັນທີ່ປຶກສາແລະໄດ້ເຂົ້າຮ່ວມໃນການ ເຈລະຈາເລື່ອງສຳຄັນ ກ່ຽວກັບຄວາມສຳພັນ ກັບຕ່າງປະເທດ ຫລື ທາງການຄ້າ ເລ້ືອຍໆ. ເຖິງແມ່ນວ່າທຸລະກິດຈຳນວນນຶ່ງທີ່ເກີດຂຶ້ນໃນໂຮງຫລວງຂອງ *ສຸລະຕານ*

ອາດກ່ຽວຂ້ອງກັບດິນແດນວົງນອກ ຂອງ*ເນເກຣ*ິ, ເຫດການລະຫວ່າງລັດເອງ, ນະໂຍ ບາຍທາງການຄ້າ ຫລືອຽກງານອັນຍິ່ງໃຫຍ່ອື່ນໆ ເຊິ່ງສ່ວນຫລາຍ ເປັນກິດຈະການ ທ້ອງກິ່ນ ຫລືເລື່ອງພາຍໃນ ທີ່ເກີດຂຶ້ນໃນແຕ່ລະມື້ແຕ່ລະວັນ ດ້ວຍເຫດວ່າ *ທ່ານ ຍັມ ຕວນ* (Yam Tuan) ນັ້ນ ໄດ້ເປັນກໍພຽງຫົວໜ້າຂັ້ນເມືອງເທົ່ານັ້ນ ຕາມຄວາມໝາຍ ອັນແທ້ຈິງ ເຖິງວ່າແມ່ນອັນດັບນຶ່ງຂອງບັນດາບຸກຄົນ ທີ່ມີຖານະເທົ່າທຽມກັນກໍຕາມ. ເພິ່ນເສຍສະຫລະເວລາສ່ວນໃຫຍ່ຂອງເພິ່ນ ໃຫ້ແກ່ການບໍລິຫານ ວັດຂອງບ້ານຕົນເອງ, ຕັດສິນຄະດີອຸທອນ ແລະຄະດີກາຕ່າງໆ, ຈັດການອອກໃບອະນຸຍາດ ການຜູກຂາດຫລືໃຫ້ ສຳປະທານໃໝ່ ກ່ຽວກັບສິດການຫາປາ ຫລືການຂຸດຄົ້ນບໍ່ແຮ່ ຫລືການສະແດງໜັງ ຕະລຸງ ແລະການລະຫລິ້ນຢ່າງອື່ນໆ, ຮັບຮູ້ເອົາຂ່າວສານ ກ່ຽວກັບການຜະລິດ ພືດພັນ ທັນຍາຫານ, ເກັບພາສີການຄ້າທາງນ້ຳ ແລະຕັ້ງຕົວເປັນຜູ້ຕັດສິນເລື່ອງເລັກໆນ້ອຍໆ ທີ່ມີສ່ວນກ່ຽວຂ້ອງກັບທັງຫມົດນີ້. ລາຍຮັບຂອງເຂົາມັ້ນ ໂດຍທົ່ວໄປແລ້ວ ພຽງພໍແຕ່ສຳ ລັບໃຊ້ຈ່າຍຊື້ອຸປະກອນເຄື່ອງໃຊ້ໃນການບໍລິຫານ ທີ່ບົ່ງໄວ້ຢູ່ນີ້, ເພື່ອບຳລຸງກຳລັງທະ ຫານບາງເຂດ ແລະເພື່ອຊ່ອຍເຫລືອຄອບຄົວເຊື້ອເຈົ້າ ກັບພວກບໍລິວານຮັບໃຊ້ຂອງ ພວກເຂົາ ເທົ່ານັ້ນ.

ໃນລະບົບການເມືອງ ປັດໄຈຄວາມອ່ອນແອແນວນີ້ ຈົນກໍ່ໃຫ້ເກີດຄວາມບໍ່ເຊື່ອ ໝັ້ນ ພ້ອມທີ່ຈະມີການປ່ຽນແປງຢ່າງໄວວາ. ຍາມໃດ ກໍມີຄົນປະເພດເສດເຫລືອຂອງ ຊົນຊັ້ນ ຜູ້ເກີດມາຢ່າງສູງສັກ ໃນ*ເນເກຣ*ິ ແລ້ວກໍ່ວ່າຕົນເອງຖືກຕັດຂາດຈາກສິ່ງທີ່ຕົນຈະ ໄດ້ ຫລື ຢ່າງຫນ້ອຍກໍແມ່ນສິ່ງທີ່ເຫັນວ່າ ພວກຕົນກັບລູກນ້ອງຄວນໄດ້ຮັບ ດ້ວຍເຫດ ຜົນອັນໃດອັນນຶ່ງ ຫລືຫລາຍໆອັນບວກໃສ່ຄວາມພະຍາຍາມອີກແດ່ເລັກນ້ອຍ. ການຮ່ວມ ມືກັບຄົນປະເພດນີ້ ແມ່ນວິທີການມາຕະຖານຢ່າງນຶ່ງ ພາຍໃຕ້ຮູບການສາຍສຳພັນລະ ຫວ່າງລັດ ເພື່ອທຳລາຍໂຄ່ນລົ້ມປະເທດໃກ້ຄຽງໃດນຶ່ງ. ໂດຍສະເພາະແລ້ວ ເລື່ອງແບບ ນີ້ ບາງທີ ໄດ້ຖືກພວກກຳອຳນາດ*ຢູຣ໊ບ* ສວຍໃຊ້ ເຊິ່ງຕາມຄວາມນິຍາມແລ້ວ ມັນໄດ້ ຕັດຄຸນສົມບັດ ສຳລັບການເຂົ້າຍາດແຍ່ງອຳນາດ ຕາມປະເພນີໄປ. ນອກຈາກນີ້ ການ ສະຫນັບສະຫນູນ ທາງການເງິນຈາກສູນກາງ ສ່ວນຫລາຍມັກນຳໄປໃຊ້ບຳລຸງຄອບຄົວ ເຈົ້າຊີວິດ ແລະກຳລັງທະຫານບາງປະເພດ ກໍບໍ່ພຽງພໍ ສຳລັບໃຫ້ສະສົມເປັນທຶນທ້ອນໄວ້ ເພື່ອສູ້ກັບຄວາມປັ່ນຮັດອັນຍືດເຍື້ອ. ດັ່ງນັ້ນ ການມີເອກະລາດແບບທຽບການຂອງ ເມືອງຕ່າງໆ ຈຶ່ງພາໄປເຖິງ ຄວາມໄຮ້ສະເຖຍລະພາບຢ່າງເປັນປະຈຳຢູ່ໃນລັດທັງຫມົດ.

ພວກກຳອຳນາດ*ຢູຣົບ* ຄືພວກ *ປອກຕຸເກດ* ໃນສະຕະວັດທີ 16, ສຳຄັນທີ່ສຸດ ແມ່ນພວກ*ດັດຊ*ໃນສະຕະວັດທີ 17 ແລະ *ອັງກິດ* ໃນເຄິ່ງທ້າຍສະຕະວັດທີ 18, ສາມາດ ສວຍໃຊ້ຄວາມອ່ອນແອຂອງລະບົບການປົກຄອງ ຂອງ*ຊາວມາເລ*ແຕ່ລະລັດ ແລະສາ ມາດໂຄ່ນລົ້ມ ລະບົບທີ່ຕົນເອງໄດ້ມີສ່ວນກໍ່ຕັ້ງຂຶ້ນມາ. ນັກປະຫວັດສາດຮຸ່ນໃຫມ່ ໄດ້ກົກ ກຽງກັນດ້ວຍເຫດຜົນວ່າ ມະຫາອຳນາດ*ຢູຣົບ*ໃນລະຍະຕົ້ນໆ ຂອງການເຂົ້າມາມີບົດ ບາດ ຢູ່ໃນຕາຫນ່າງການຄ້າທາງທະເລແຫ່ງອາຊີຕາເວັນອອກສຽງໃຕ້ ໄດ້ປະຕິບັດ ການດ້ວຍຮູບແບບ ແລະຂະຫນາດທີ່ບໍ່ແຕກຕ່າງ ຈາກອັນທີ່ປະຕິບັດຢູ່ໃນປະເທດອາຊີ ທັງຫລາຍ ບໍ່ໄດ້ປ່ຽນແປງລະບົບຫຍັງຫລາຍ ຫລື ບໍ່ໄດ້ກໍ່ໃຫ້ເກີດຜົນກະທົບ ຕໍ່ຊີວິດຂອງ ຜູ່ອື່ນໆ.

ຢ່າງໃດກໍດີ ໃນເມື່ອຜົນແຫ່ງການຮຸກຮານເຫລົ່ານີ້ ສະສົມມາຮອດສະຕະວັດ ທີ 18 ມັນໄດ້ກາຍເປັນເລື່ອງຍາກ ທີ່ຈະຢືນຢັນຄວາມເຫັນນີ້ດ້ວຍຄວາມຫມັ້ນໃຈ ແບບດຽວ ກັນ ແລະໃນຈຸດນັ້ນ ໄດ້ກໍ່ໃຫ້ເກີດການກົກກຽງກັນຫລາຍ. ການກົກກຽງກັນ ໄດ້ເນັ້ນ ໃສ່ເລື່ອງທີ່ປະລິບົດ ຄື ໂຄງຮ່າງແລະກຳລັງເຄື່ອນເຫນັງອັນແທ້ຈິງນັ້ນໄດ້ປ່ຽນໄປແລ້ວ ຫລື ພໍພຽງແຕ່ ໄດ້ເປັນຜູ່ເຂົ້າຮ່ວມລ້ວນໆ. ກ່ຽວກັບຜູ່ເຂົ້າຮ່ວມນັ້ນ ບໍ່ມີຂໍ້ສົງໄສເລີຍ ຍົກ ຕົວຢ່າງ ເມື່ອບໍລິສັດ *ດັດຊ ອິດສ໌ ອິນເດຍ* (Dutch East India) ຕັ້ງຕົນເອງຂຶ້ນເປັນຕົວ ແທນບໍລິສັດ*ມາກາດສາຣ໌* (Makassar) ໃນທະເລພາກຕາເວັນອອກ ແລະເຂົ້າແທນ ບ່ອນ *ອະເຈ* (Aceh) ໃນເລື່ອງທ່າເຮືອພິກໄຫ ແຫ່ງເອບ*ສຸມາຕຣາ*. ມັນເປັນການສະ ແດງແບບດຽວກັນອ້ອຍຕ້ອຍ ໂດຍໃຊ້ນັກສະແດງໃຫມ່ເຂົ້າຫລິ້ນບາງບົດ ຄືກັບຄະນະສະ ແດງຫນັງຕະລຸງ *ວາຢາງກູລິດ ອິນໂດເນເຊຍ* ທີ່ໄດ້ນຳເອົາຕົວລະຄອນໃຫມ່ມາຕື່ມສອງ ຫລື ສາມຄົນ ແລະເນັ້ນໃສ່ການປ່ຽນແປງເລັກນ້ອຍ ພາຍຫລັງການເຂົ້າມາ ຂອງ *ອິສລາມ* ຊັ້ນບໍ?, ຫລືຫາກວ່າ ໂຄງເລື່ອງທັງຫມົດໄດ້ປ່ຽນໄປ ກົ້ມໃຫ້ນັກສະແດງ ຢູ່ໃນ ຄວາມສັບສົນແລ້ວແຕ່ລະຄົນກໍພະຍາຍາມຂຽນບົດສະແດງຂອງຕົນເອງ ຊັ້ນບໍ ? ກ້າ ເອົາຕາມຄວາມຫມາຍຂອງກໍລະນີທີສອງກໍອາດຈະດີ.

ໂດຍສະເພາະແລ້ວ ມັນສາມາດຖືກຍົກຄ້ານໄດ້ວ່າ ການເຂົ້າມາມີຫນ້າ ຂອງ ມະຫາອຳນາດ*ຢູຣົບ* ເຊິ່ງມີກຳລັງອາວຸດນັບມື້ນັບຫລາຍກວ່າ ແລະພິເສດສຸດ ໄດ້ອີງໃສ່ ການຮຽກຮ້ອງສູງ ໃນສັນຍາທາງການຄ້າຈາກຝ່າຍອ່ອນແອກວ່າ ການບັງຄັບເອົາສິນ ຄ້າສຳຄັນໄປມ້ຽນໄວ້ໃນຄັງສາງຂອງຕົນເອງ ແລະການຕັດແຍກລັດຫົວເມືອງຂຶ້ນທັງ

ຫລາຍອອກໄປ, ນັ້ນມັນມີສ່ວນເຮັດໃຫ້ຫົວໜ່ວຍການເມືອງຂະໜາດໃຫຍ່ ໃນໂລກຂອງ *ມາເລ* ແຕກສະຫລາຍລົງ ແລະທັງມີສ່ວນເຮັດໃຫ້ເກີດແຕກຫັກເປັນລັດອ່ອນແອກວ່າ ເກົ່າ ຕະຫລອດທັງກາຍເປັນກອງໂຈນປຸ້ນສະດົມນຳ. ການສູນເສຍທາງການຄ້າ ແລະ ຜາສີອາກອນໃຫ້ແກ່ຜູ່ປົກຄອງ ແລະ ຫົວໜ້າລັດ *ມາລາຢູ* ຕາມແຄມຝັ່ງນ້ຳ ເຮັດໃຫ້ ການຄ້າແລະລາຍຮັບຈາກຜາສີອາກອນຫລຸດໜ້ອຍລົງ ຫລື ສູນເສຍການຄວບຄຸມ ດ້ານການເມືອງໄປນຳ ແມ່ນແຕ່ພາຍໃນ*ເນເກຣິ ນະຄອນລັດ* (Negeri) ຫລືລະຫວ່າງ ນະຄອນ ຕໍ່ຫົວເມືອງຂຶ້ນຂອງມັນເອງ. ເປັນຄວາມຈິງວ່າ ໃນສະຕະວັດທີ 18 ນີ້ ພະລັງ ແຫ່ງອະສະກຽນລະພາບ ອັນມີຕົວແທນເປັນພວກອ້າງສິດ, ຝ່າຍຕໍ່ຕ້ານ, ນັກສວຍໂອ ກາດ ແລະພວກນັກຕົ້ມຫັ້ງຫລາຍນີ້ ໄດ້ລົງມືຢ່າງເປັນອິສຣະຫລາຍ ແລະເຫິງນານກວ່າ ເທົ່າທີ່ເຄີຍໄດ້ຮັບມາຕາມປະເພນີ. ຫມາກຜົນອັນນຶ່ງ ກໍຄືຄວາມສຳເລັດ ຂອງຜູ່ເຂົ້າມາ ກ່ຽວຂ້ອງ ເພື່ອຜົນປະໂຫຍດຂອງຕົນເອງ, ພວກນັກສ່ຽງໂຊກ ຫລື ຜູ່ບຸກຮຸກດ້ວຍກຳລັງ ເຊັ່ນ *ຣາຊາ ເກຊຶນລ* ຢູ່ *ສີຢັກ*, ພວກ*ບູກິດສ* ຢູ່ລັດ *ເສລັງກໍຣ* ຫລື *ໄຊຢິດ ອັບດູລຣາ ມານ* ຢູ່ *ປອນຕິຢັກ* ເຊິ່ງຕັ້ງໂຕເປັນໃຫຍ່ ພາຍໃນເຂດແດນ ແຫ່ງລັດ*ມາລາຢູ* ອານາ ຈັກແຫ່ງການຄ້າ ເຊິ່ງມີຣາກຖານຫມັ້ນຄົງມາກ່ອນແລ້ວ. ຄຳຕອບອີກອັນນຶ່ງ ແມ່ນ ການອຸບັດຂຶ້ນຢ່າງຫລວງຫລາຍ ຂອງສິ່ງທີ່ເອີ້ນວ່າ ການປຸ້ນສະດົມທາງທະເລ ຄືດັ່ງທີ່ *ໂຄລສ໌ວິດຊ໌* (Clausewitz) ໄດ້ນິຍາມໄວ້ວ່າ ສົງຄາມ ເປັນວິທີຂະຫຍາຍການພົວພັນ ທາງການທູດແບບນຶ່ງ, ມັນອາດຖືກເບິ່ງຄືກັບວ່າເປັນ ການສືບຕ່ອຽກງານການຄ້າ ໂດຍວິທີການຢ່າງອື່ນ, ມັນແມ່ນວັນເວລາອັນຮຸ່ງເຮືອງສຸດຂີດ ຂອງຊຸມຊົນນັກປຸ້ນນອກ ກົດໝາຍ ເຊັ່ນ ພວກ *ບາລັງກວິນກວີ* ແລະ *ຢານູນ* (Ilanun) ໃນ *ດອນມິນດານາວ* ແລະ*ຊູລູ*. ການປຸ້ນຕາມໂອກາດອຳນວຍ ໄດ້ກາຍມາເປັນວິທີຊອກຢູ່ຫາກິນ ຂອງພວກ ຫົວໜ້າ*ມາເລ*ຫລາຍຄົນ ເຊິ່ງບໍ່ສາມາດລ້ຽງດູຕົນເອງ ແລະໃຫ້ການຄຸ້ມຄອງລູກນ້ອງ ດ້ວຍວິທີການອັນເໝາະສົມກວ່າອີກຕໍ່ໄປ.

ຈັ່ງຊັ້ນແລ້ວ ແຜນທີ່*ມາລາຢູ*ໃນໝູ່ເກາະດອນຕາເວັນຕົກ ຈະມີລັກສະນະຢ່າງ ໃດ ເມື່ອລ່ວງເຂົ້າສູ່ປາຍສະຕະວັດ ທີ 18 ? ຢູ່ເໜືອສຸດຂອງດອນ *ສຸມາຕຣາ* ແມ່ນ ເມືອງ *ອະເຈ* ເຊິ່ງບັນລຸເຖິງຄວາມຍິ່ງໃຫຍ່ສຸດຂີດ ໃນຕົ້ນສະຕະວັດ ທີ 17 ພາຍໃຕ້ *ສຸລະ ຕານ ອິສກາມດາຣ໌ມຸດາ* (Sultan Iskandar Muda) ໄດ້ເລີ່ມເສື່ອມກອຍລົງຕັ້ງແຕ່ ນັ້ນມາ. ການທີ່ເປັນເຊັ່ນນີ້ ກໍຍ້ອນວ່າ ສ່ວນນຶ່ງມາຈາກການມີເຈົ້າປົກຄອງເປັນແມ່ຍິງ

ແດ່ (ມັນເປັນເຫດການ ທີ່ໄຂໂອກາດ ໃຫ້ພວກຫົວໜ້າອານາເຂດຕ່າງໆທີ່ຄຶດຢາກແຍກ ເປັນເອກະລາດ ສາມາດດຳເນີນການຢ່າງເສລີ) ແຕ່ຄວາມບີບຄັ້ນ ຈາກ *ພວກດັດຊ* ທີ່ສັ່ງການມາຈາກ ກຸງທີ່ຕັ້ງຂຶ້ນໃໝ່ ໃນ *ມາລະກາ* (ຍຶດມາຈາກ *ປັຕຸເກດສ໌* ເມື່ອປີ 1641) ໄດ້ປີບໃຫ້ຂະບວນການອັນນີ້ ເສື່ອມຖອຍລົງຢ່າງຫລວງຫລາຍ.

ບົດທີ 10: ເຈົ້າຊີວິດ ຊະວາ

ປະເພນີການເມືອງ ຂອງ *ຊະວາ* ກໍຄືກັບຂອງ *ພະມ້າ ໄທ* ແລະ *ຂະເຫມນ* ເລີ່ມແຕ່ຍຸກ *ຮິນດູ-ພຸດ* ສະໄຫມ 1000 ປີ ທຳອິດ ຂອງ *ຄຣິຕຕະສັກກະຣາດ* ເປັນຕົ້ນ ມາ. ເມື່ອນຳເອົາແນວຄຶດທາງການເມືອງ-ສາສະຫນາ ແບບ *ອິນເດຍ* ເຂົ້າມານັ້ນ ມັນ ໄດ້ສະຫນອງຂອບເຂດວຽກງານແນວໃຫມ່ ແລະກ້ວາງຂວາງກວ່າເກົ່າໃຫ້ ໃນນັ້ນ ຊີວິດ ທາງການເມືອງ ໃນອາຊີຕາເວັນອອກ ສາມາດຂະຫຍາຍຕົວອອກໄດ້. ແຕ່ສະຕະວັດ ທີ 8 ຫາ ທີ 14 ອານາຈັກຫັ້ງຫລາຍ ໃນ *ຊະວາ* ພາກກາງ ແລະ *ຊະວາ* ຕາເວັນອອກ ສະແດງຕົວອອກດ້ວຍຮູບແບບຄ້າຍຄືກັນ ກັບທີ່ບັນດາອານາຈັກອື່ນໆ ຮ່ວມສະໄຫມດຽວ ກັນ ຊົມໃຊ້ຢູ່ໃນແຜ່ນດິນໃຫຍ່. ຣາຊະອານາຈັກ ປຽບດັ່ງເປັນຕົວແທນແຫ່ງຈັກກະວານ ເທິງພື້ນໂລກ ແລະຍ້ອນແນວນີ້ ເຈົ້າຊີວິດເອງ ກໍເປັນຄື *ພຣະສິວະ ພຣະວິສະນຸ* ຫລື *ພຣະ ພຸທະເຈົ້າ* ອະວະຕານລົງມາ(ກັບຊາດມາເກີດ) ໂດຍມີພວກຊົນຊັ້ນນັກບວດ ແລະຄະນະ ເສນາບໍດີ ຄອຍຮັບໃຊ້ ແລະຂາບໄຫວ້ ຢູ່ຕໍ່ຫນ້າພຣະອົງ ດ້ວຍຄວາມນັບຖື.

ຢ່າງໃດກໍຕາມ, ປະຫວັດສາດການເມືອງຂອງ *ຊະວາ* ແລະ ເມືອງອື່ນໆຢູ່ແຜ່ນ ດິນໃຫຍ່ສະໄຫມດຽວກັນ ໄດ້ພົບກັບທາງໂຄ້ງທີ່ແຕກຕ່າງກັນໃນເລື່ອງ *" ການປະຕິວັດ ສາສະຫນາ "* ໃນສະຕະວັດ ທີ 13 ແລະລຸນຫລັງນັ້ນມາ. ເຈົ້າຊີວິດ ເທິງແຜ່ນດິນໃຫຍ່ ໄດ້ປັບປ່ຽນຕົນເອງເຂົ້າກັບ *ພະພຸທະສາສະຫນາ ນິກາຍເຖຣະວາດ* ຢ່າງງ່າຍດາຍ. *ພຸທະສາສະຫນາ* ນິກາຍນີ້ ແຕກຂະແຫນງມາຈາກປະເພນີ *ອິນເດຍ* ທີ່ຜູ່ຄົນໃນພາກ ພື້ນລ້ຶງເຄີຍດີຢູ່ແລ້ວ ແລະຮູບແບບຊີວິດທາງການເມືອງ ກໍຍັງຄົງດຳເນີນຕໍ່ໄປ ຕາມທີ່ ເຄີຍເປັນມາກ່ອນ. ກົງກັນຂ້ານ ຢູ່ດອນ*ຊະວາ* ລັດ *ຮິນດູ-ພຸດ* ທີ່ຍິ່ງໃຫຍ່ ລັດສຸດທ້າຍ ຄືລັດ *ມັດຊະປາຫິດ* (Majapahit) ໄດ້ເຊື່ອມລົງຢ່າງໄວວາ ໃນລະຫວ່າງປີ 1400 ແລະ ໃນເວລາ 2 ສະຕະວັດ ຕໍ່ມາ, ເຫດການທາງການເມືອງຂອງດອນ *ຊະວາ* ກຶ່ກລອບຄອງ ໂດຍ *ລັດ ອິສລາມ* ນ້ອຍໆ ຫລາຍລັດຕິດຕໍ່ກັນ ທີ່ທຳການຄ້າຂາຍຢັ່ງຢາຍຕາມຊາຍ ຝັ່ງທະເລ ດ້ານເຫນືອ ແຕ່ເມືອງ *ສຸຣາບາຢັນ* ເຖິງ *ບັນຕຳ*. ໃນດ້ານເສດຖະກິດ ການຂະ ຫຍາຍຕົວແນວນີ້ ໄດ້ສະທ້ອນໃຫ້ເຫັນຄວາມສຳຄັນຂອງການຄ້າແບບໃຫມ່ ຕາມທະເລ *ຊະວາ* ລະຫວ່າງເມືອງ *ມາລະກາ* ແລະ ບັນດາເກາະດອນ ແຫ່ງເຄື່ອງຫອມ, ມັນແມ່ນ ການຄ້າ ທີ່ພໍ່ຄ້າ*ຊະວາ* ຈອງເປັນເຈົ້າ. ໃນດ້ານສາສະຫນາ ຊາວ *ຊະວາ* ທາງຝັ່ງທະເລ

ດ້ານເໜືອ ຄື ພວກເຊື້ອເຈ້ົ້າ ພວກພ່ໍຄ້ໍາ ແລະຊາວນາ ໄດ້ຫັນມານັບຖືສາສະໜາ *ອິສລາມ* ພ້ອມໆກັບ ພ່ໍຄ້ໍາຊາວຂາຍອື່ນໆ ຕາມເສັ້ນທາງການຄ້ໍາ. ໃນດ້ານການເມືອງ ພວກ *ຊະວາ* ຕາມຊາຍຝັ່ງທະເລດ້ານເໜືອ ຄືພວກ *ປາຊິເຊຍ* (Pasisir) ໄດ້ຫັນໄປ ຜະເຊີນກັບດ້ານນອກ ແລະ ພວກເຊື້ອສາຍ *ສຸລະຕານ*ຂອງພວກເຂົ້ໍາ ກໍຫັນໄປສົມທົບ ກັບຊຸມຊົນໃນລັດ *ອິສລາມ* ນ້ອຍໆ ທີ່ເຮັດການຄ້ໍາ ກະຈາຍໄປທົ່ວເກາະດອນ.

ແຕ່ ໃນຂະນະທີ່ການຄ້ໍາແລະສາສະໜາ *ອິສລາມ* ຮັບໜ້ໍາທີ່ເຕ້ໍາໂຮມປະຊາ ຊາດ ທີ່ກະແຈກກະຈາຍກັນຢູ່ໃນທົ່ວດອນນັ້ນ, ກໍາລັງຂອງພວກເຂົ້ໍາຜັດແບ່ງແຍກກັນຢູ່ ເທິງ *ຊະວາ*, ຍ້ອນມີຊາວນາຈໍານວນຫລວງຫລາຍ ເປັນພື້ນຖານ ທີ່ຍັງຮັກສາຮີດຄອງ ປະເພນີ ອັນເຂັ້ມແຂງຂອງພວກເຂົ້ໍາ. ໃນລະຍະນີ້ ພວກ *ປາຊິເຊຍ* ຜູ່ຫັນໜ້ໍາອອກໄປ ທາງນອກ ໄດ້ກອບໂຕອອກຈາກພື້ນທີ່ປູກຝັງເບື້ອງໃນ ເຊິ່ງເປັນດິນແດນຂອງຜູ່ຮຽກ ຮ້ອງເອົ້ໍາຄວາມຍິ່ງໃຫຍ່ ຂອງ *ມັດຊະປາຫິດ* ອັນໄດ້ຍຶດເຍືອມາເຖິງ ຕົ້ນສະຕະວັດ ທີ 16 ແລະບ່ອນທີ່ ຮີດຄອງປະເພນີ *ຮິນດູ-ພຸດ* ເກືອບບ່ໍຖືກກະທົບກະເທືອນເລີຍ. ຢູ່ໃນກະໂຕ ພວກ*ປາຊິເຊຍ* ເອງ ການນໍາເອົ້ໍາສາສະໜາ*ອິສລາມ*ເຂ້ົ້າມາ ໄດ້ເປັນຂະບວນສ້ໍາງສິ່ງ ທີ່ຕ້ອງກາຍມາເປັນຄວາມເຄັ່ງຕຶງຍຶດເຍືອ ຢູ່ໃນວັດທະນະທໍາ *ຊະວາ*. ຄວາມຂັດແຍ່ງ ທີ່ບ່ີມສຸກຢູ່ໃນແນວທາງນີ້ ຖືກພັນລະນາໄວ້ຢ່ໍາງງົດງາມທີ່ສຸດ ຢູ່ໃນນິທານພື້ນສືບ ທີ່ ກ່ຽວພັນກັບ ວິຊາຫາກິນ ຂອງພວກ *ວາລີ ທັງເກ້ົ້າ* (Nine Wali) ຕົວລະຄອນປະ ຫວັດສາດ ທີ່ມີຊື່ສຽງ ໃນຖານະເປັນຜູ່ນໍາເອົ້ໍາ *ສາສະໜາອິສລາມ* ມາສູ່ ດອນ *ຊະວາ* ແລະເປັນຜູ່ກ່ໍຕັ້ງ *ລັດປາຊິເຊຍ* ທັ້ງຫລາຍ. ເມື່ອຫຍ້ໍເຂົ້ໍາຫາເນ້ື້ອເລື່ອງພື້ນຖານ ພື້ນສືບ ເຫລ່ໍານັ້ນ ໄດ້ເຜີຍແບວຮຽງາມໃຈກາງອັນນ່ຶງ ນັ້ນຄື ຄວາມພະຍາຍາມເພື່ອປະນີປະ ນອມ *ອິສລາມ* ເຂ້ົ້າກັບ *ລັດທິນິຍົມຊະວາ*. ດັ່ງນັ້ນ ພວກ *ວາລີ ທັງ 9* ຈ່ຶງໄດ້ຮັບຄວາມ ເຊ່ືອຖ່ືວ່າ ບ່ໍພຽງແຕ່ໄດ້ເປັນຜູ່ນໍາເອົ້ໍາ *ອິສລາມ* ເຂ້ົ້າມາເທ່ົ້ານັ້ນ ແຕ່ຍັງນໍາເອົ້ໍາການ ສະແດງໜັງຕະລຸງ " *ວາຢາງ ກຸລິດ* " (Wayang Kulit) ເຊິ່ງເປັນສິ່ງດີເດ່ັນອັນນ່ຶງ ໃນຢູ່ວັດທະນະທໍາ ຍຸກກ່ອນ *ອິສລາມ-ຊະວາ* ເຂ້ົ້າມານໍາ.

ການດຸ່ນດ່ຽງອໍານາດ ລະຫວ່ໍາງ ບໍລິເວນແຄມຝັ່ງທະເລ ກັບໃຈກາງເກາະ ເຄ່ືອງໄປທັນທ ເມ່ືອຕົ້ນ ສະຕະວັດ ທ 17 ເມ່ືອຣາຊະວົງໃໝ່ ຊ່ື *ມາຕະຣໍາ* (Mata-ram) ມ ສູນກາງ ຢູ່ໃກ້ໆດອນ *ຢອກຢາກາຕາ* (Yogyakarta) ໃນປັດຈຸບັນ ໄດ້ຍຶດຄອງ ເອົ້ໍາ *ຊະວາ* ທັ້ງຫມົດ. ແຕ່ຣາຊະວົງ *ມາຕະຣໍາ* ບ່ໍພຽງແຕ່ລຶບລ້ໍາງຮູບແບບຂອງ *ປາຊ*ິ

ເຊຍ ຢ່າງດຽວ. ດ້ວຍການປຸກລະດົມເພື່ອທຳລາຍ ຫລາຍເທື່ອຫລາຍທີນັ້ນ, *ສຸລະຕານ ອາກຸງ* (Sultan Agungr 1613-1645) ໄດ້ຟື້ນຟູເອກະພາບທາງການເມືອງ ຂອງ *ຊະ ວາ* ຂຶ້ນອີກ, ໂດຍທຳລາຍລັດ *ສຸລະຕານ* ທັງຫລາຍ ທາງຝັ່ງກ້ຳເໜືອ ທີ່ຄົງຕົວເປັນ ເອກະລາດຢູ່ນັ້ນ ໃຫ້ຫມົດໄປຕະຫລອດການ, ແລະດ້ວຍການຊ່ອຍເຫລືອ ຂອງ *ພວກດັດຊ* (ducht), ພຣະອົງໄດ້ລົງໂທດ ຊົນຊັ້ນພໍ່ຄ້າ*ຊະວາ* ເຊິ່ງຄັ້ງນຶ່ງ ເຄີຍຮຸ່ງ ເຮືອງມາແລ້ວ ໃຫ້ຈົມຢູ່ໃນຄວາມມືດມົນຫລາຍສະຕະວັດ ຢູ່ໃນເຂດໂດດດ່ຽວຕັດຂາດ ກັບຊີວິດແບບຊາວ*ຊະວາ*. ແຕ່ມັນກໍແມ່ນ ໃນສະໄຫມ ຂອງ *ສຸລະຕານ ອາກຸງ* ນີ້ຄືກັນ ທີ່ *ປາຊີເຊຍ ອິສລາມ* ໄດ້ຢັ່ງຮາກຝັງເລິກ ຢ່າງກຸາວອນຢູ່ເບື້ອງໃນ ຂອງ ເກາະດອນຊະ ວາ. *ສຸລະຕານ ອາກຸງ* ເອງ ກໍເປັນ *ມຸດສະລິມ* ຜູ່ເຄັ່ງຄັດ ທີ່ສະແຫວງຫາ ການຍອມຮັບ ຕຳແຫນ່ງ *"ສຸລະຕານ"* ຢູ່ *ນະຄອນ ເມກະ*, ພຣະອົງ ໄດ້ພົບປະເປັນປະຈຳ ກັບ *ອຸລາມະ* (Ulamma) ແລະຕັ້ງສານໃຫມ່ຂຶ້ນ ໂດຍຊົມໃຊ້ກົດຫມາຍ *ອິສລາມ*.

ກ້ຳໂຈະບົດບາດ ຂອງ ບໍລິສັດ *ດັດຊ ອິດສ໌ ອິນເດຍ* (Dutch East India Company:DEIC) ແລ້ວ ຈະເຫັນໂຄງສ້າງທາງການເມືອງຂອງ *ຊະວາ* ສະໄຫມ *ມາຕະຣຳ* ເລີ່ມຂຶ້ນ ແລະເວົ້າຕາມທິດສະດີ ມັນກໍສ້ຽງສຸດລົງພ້ອມໆກັບ ເຈົ້າຊີວິດນັ້ນ ເອງ. ນັບຕັ້ງແຕ່ *ມາຕະຣຳ* ໄດ້ເປັນ *ລັດອິສລາມ*, ເຈົ້າຊີວິດ ບໍ່ໄດ້ເປັນເທວະຣາຊາ ຄືດັ່ງທີ່ເຄີຍເປັນມາແຕ່ກ່ອນແລ້ວ, ຢ່າງໃດກໍດີ ເຈົ້າຊີວິດ ກໍຍັງເປັນຜູ່ສັກສິດ. ຜູ່ຄົນຈື່ຈຳ ພຣະອົງໄດ້ ຍ້ອນ *ວາຍຸ* (Wahyu) ຫລື ແສງສະຫວ່າງ ທີ່ສ່ອງລົງມາໃສ່ພຣະອົງ ຫລື ພຸ່ງອອກຈາກພຣະເນດຂອງພຣະອົງ ແລະ ເມື່ອໃດແສງນັ້ນອ່ອນແຮງລົງ ຜູ່ຄົນກໍຮູ້ວ່າ ວັນເວລາແຫ່ງການເປັນກະສັດຂອງພຣະອົງ ໃກ້ເຖິງຈຸດອະວະສານແລ້ວ. ຕົວຢ່າງ ເຈົ້າ ຊີວິດ ແຫ່ງ *ຊະວາ* ບາງອົງ ໄດ້ຮັບສົມຍານາມວ່າ : ເຈົ້າຊີວິດ ຕ້ອງແມ່ນຜູ່ທີ່ໂອບອຸ້ມ ໂລກທັງໂລກ ໄວ້ເທິງຕັກຂອງພຣະອົງໄດ້ (Hamengku Buwono) ແລະ ເປັນເສົາສະ ເໜມນຄ້ຳໂລກ (Paku Buwono). ເປັນດັ່ງນີ້, ໜ້າທີ່ຂອງເຈົ້າຊີວິດ ແມ່ນການຮັກສາ ຄວາມເປັນລະບຽບຮຽບຮ້ອຍ ຕາມທຳມະຊາດ ຂອງ ຣາຊະອານາຈັກໄວ້ ທັງກອມກຸ້ມ ແລະໄກ່ເກ່ຍ ຫາກເກີດເລື່ອງກະທົບກະເທືອນໃດໆ, ຈັ່ງຊັ້ນ ຈຸລະຈັກກະວານ ຈຶ່ງສະທ້ອນ ຄວາມກົມກືນແຫ່ງຈັກກະວານອອກມາໄດ້, ດ້ວຍເຫດນີ້ເອງ ປະຕິທິນ ຂອງ *ສຸລະຕານ ອາກຸງ* ໃນປີ 1633 ຈຶ່ງໄດ້ແກ້ບັນຫາຄວາມເຄັ່ງຕຶງ ລະຫວ່າງປະຕິທິນເກ່ົາຕາມປະ ເພນີ ສອງຢ່າງຕ່າງກັນ ຄື ແບບ *ຊະວາ - ຮິນດູ*, ກັບແບບ *ອິສລາມ* ດ້ວຍການປະສົມ

ປະສານທັງສອງອັນເຂົ້າກັນ ເປັນປະຕິທິນໃຫມ່ອັນກົມກືນ. ໃນທາງທິດສະດີ, ບໍ່ຈຳເປັນ ຈະເວົ້າວ່າ ບໍ່ອາດມີຂອບເຂດຈຳກັດໃດໆສຳລັບ ພຣະຣາຊະອຳນາດ ແລະ ສິດທິຂອງ ເຈົ້າຊີວິດ.

ອານາຈັກ ທີ່ເຈົ້າຊີວິດ *ມາຕະຣຳ* ປົກຄອງນັ້ນ ບໍ່ມີພົມແດນ ເພິ່ນກືວ່າ ເປັນ ຮູບວົງມົນສີ່ວົງ ທີ່ມີຈຸດໃຈກາງອັນດຽວກັນ ຂະຫຍາຍອອກຢ່າງບໍ່ມີຂອບເຂດ ບ່ອນຈຸດ ໃຈກາງ ເອີ້ນວ່າ *ນິຄະຣະ* (*ນະຄະຣະ* ຫລືນະຄອນ Negara) ຄຳສັນສະກຣິດ ເຊິ່ງ ຫມາຍເຖິງ ທັງ " *ອານາຈັກ ແລະ ເມືອງ* " ຄື ເມືອງທີ່ ຣາຊະວັງຫລວງຕັ້ງຢູ່. ເຈົ້າ ຊີວິດ ສິ່ງຣັດສະຫມີແຫ່ງອິດທິພົນຂອງພຣະອົງອອກໄປຈາກ *"ຣຽວັງ"* ເປັນອີກຊື່ນຶ່ງ ຂອງ ເມືອງຫລື *ກຣາໂຕນ* (Kraton) ຫລື ພຣະຣາຊະວັງ ກືກຍ້າຍໄປພຸ້ນໄປພື້ຣອດ ສາມເທື່ອ ກ່ອນເກີດການແບ່ງແຍກອານາຈັກ ໃນປີ 1775, ແລ້ວມາຢູ່ເຂດທີ່ເປັນເມືອງ *ຢອກຢາ ກາຕາ* ໃນປັດຈຸບັນ ເຖິງຊຸມປີ 1670 ແລະຫລັງຈາກນັ້ນ ກໍຍ້າຍໄປຢູ່ໃກ້ *ສຸຣະກະຕາ ໃຫມ່* (Modern Surakatar – Solo) ບໍ່ວ່າ ຈະຍ້າຍໄປຢູ່ໃສ *ກຣາໂຕນ* ກໍຄືກັບທີ່ພົບ ເຫັນຢູ່ໃນເມືອງນັບກື *ພຸທະສາສະຫນາ ນິກາຍເຖຣະວາດ* ທົ່ວໆໄປ ມັນເປັນສູນໂຮມ ທີ່ເລິກແລບສະຫລັບສັບຊ້ອນ ກວ້າງໃຫຍ່ ປະກອບດ້ວຍອາຄານແລະເດີ່ນສີ່ແຈສາກ ມີ ກຳແພງແລະ ຄູນ້ຳອ້ອມ ອັນສະແດງເຖິງລັກສະນະສັກສິດ, ສິ່ງກໍ່ສ້າງທັງ ຫລາຍ ຫັນຫນ້າໄປຫາທິດທັງສີ່ຕາມເຂັມທິດ. ພາຍໃນ ມີເຈົ້າຊີວິດ ພ້ອມດ້ວຍພຣະມະເຫສີເອກ ແລະມະເຫສີຣອງ, ຂ້າຣາຊະການ, ນັກຟ້ອນປະຈຳວັງ, ພວກສາວສະຫນົມບໍລິວານ ແລະພວກຂ້າຮັບໃຊ້ ອີກຈຳນວນຫລວງຫລາຍ, ຢູ່ນອກກຳແພງຂອງ *ນິຄະຣະ* ເປັນອີກ ສ່ວນນຶ່ງຂອງອານາຈັກ ຄືເປັນ *ນິຄະຣະ* ໃນຄວາມຫມາຍທົ່ວໄປ ວົງມົນກັດມາ ເອີ້ນວ່າ *"ນິຄະຣະ ອາກຸງ"* (Negara Agung) ເປັນເຂດໃຈກາງ ໃນສະຕະວັດ ທີ 17 ປະກອບ ດ້ວຍເຂດໃກ້ທີ່ສຸດ ຄື *ຢອກຢາກາຕາ-ສຸຣະກາກຕາ* ໃນ ສະຕະວັດ ທີ 18 ໄດ້ຂະ ຫຍາຍເຂດກວ້າງໃຫຍ່ອອກຫລາຍ. ຕໍ່ມາເປັນເຂດທີ່ເອີ້ນວ່າ " *ມັນຈະ ນິຄະຣະ* (Manca Negara) ຄືແຂວງທີ່ຢູ່ວົງມົນນອກ ໃນລະຍະຂະຫຍາຍໂຕ ເມື່ອສະຕະວັດ ທີ 17 ກວມ ເຖິງດິນແດນ *ຊະວາ* ສ່ວນເຫລືອທັງຫມົດ ຍົກເວັ້ນແຫລມຕາເວັນຕົກກັບແຫລມຕາເວັນ ອອກ. ສຸດທ້າຍ ແມ່ນເຂດທີ່ຊື່ວ່າ " *ຕານະ ຊາບຣັງ* " (Tanah Sabrang) ຄືແຜ່ນດິນຢູ່ ຟາກທະເລອີກເບື້ອງນຶ່ງ ເຊິ່ງປະກອບດ້ວຍເມືອງທີ່ຫ່າງໄກ ເຊັ່ນ *ປາເລັມບັງ* (Palem-Bang) ແລະ *ບັນຊາມາຊິນ* (Banjarmasin) ເຊິ່ງກໍຍອມຮັບ ໃນຄວາມເປັນໃຫຍ່ຂອງ

ເຈ້ົາຊີວິດແຫ່ງ *ມາຕະຣຳ* ແລະສິ່ງເຄື່ອງບັນນາການມາໃຫ້. ເບິ່ງໃນແງ່ນີ້ ບ່ວ່າດ້ານ ທິດສະດີ ແລະພາກປະຕິບັດ, ຢ່າງຫນ້ອຍ ການເມືອງຂອງ *ມາຕະຣຳ* ກໍສອດຄ່ອງເຂ້ົາ ກັນດີ. ອຳນາດຂອງເຈ້ົາຊີວິດ ທີ່ເປັ່ງຂ້າມກຳແພງອອກໄປນັ້ນ ຍິ່ງໄປໄກເທ່ົາໃດ ມັນກໍ ຍິ່ງອ່ອນແຮງລົງເທ່ົານັ້ນ ຈົນໃນທີ່ສຸດ ກໍເຈືອຈາງວາຍມອດລົງ ໃນບ່ອນໃດບ່ອນນຶ່ງ ລະ ຫວ່າງຫມູ່ເກາະດອນຕ່າງໆ. ວົງມົນ ອິດທິພົນ ທີ່ມີຈຸດໃຈກາງຮ່ວມກັນນີ້ ຍັງໄດ້ກີ໋ກປົກ ຄອງ ດ້ວຍຫລັກການຕ່າງກັນນາອກ.

ໃນການປົກຄອງອານາຈັກນີ້ ພວກເຈ້ົາຊີວິດ *ມາຕະຣຳ* ໂດຍທົ່ວໄປ ບ່ໃຊ້ສະມາ ຊິກເຊ້ືອເຈ້ົານຳກັນ, ນະໂຍບາຍ ຂອງພວກເພ່ິນແມ່ນ ຍຶດຈ່ອງພວກເຂົ້າເຫລ່ົານັ້ນໄວ້ໃນ ວົງ, ໃຫ້ຢູ່ຫ່າງເທ່ົາທ່ີຈະຫ່າງໄດ້ ໃຫ້ມີຄວາມຄຶດເປັນກາງ ແລະພໍໃຈ. ຢູ່ບາງເຂດ ຂອງ *"ມັນຈະ ນິຄະຣະ"* ໂດຍສະເພາະແລ້ວ ໃນອະດີດ ເມືອງຫ່າງໄກສອກຫລີກແຕ່ກ່ອນ ກັບ ໃນເຂດພູສູງ *ຊຸນດານ* (Sundanese) ຂອງ *ຊະວາ* ກ້ົາຕາເວັນຕົກ, ເຈ້ົາຊີວິດໄດ້ຊັບ ຊ້ອນເອົາພວກເຈ້ົາປົກຄອງທ້ອງຖ່ິນ ທ່ີສືບທອດກັນມາຕາມສາຍເລືອດ ເຂ້ົາຢູ່ໃນການ ບໍລິຫານຂອງລັດ. ກ້ົາບ່ເຮັດແນວນ້ີ ພວກເພ່ິນກໍປົກຄອງ ໂດຍຜ່ານພວກຂ້ົາຣາຊະການ ຄ ື ພວກຄົນທ່ີ ໃນພາກປະຕິບັດກໍເປັນເອກະລາດ ແຕ່ແທ້ຈິງແລ້ວ ກໍຄ ື ພວກຂ້ົາຮັບໃຊ້ ຂອງເຈ້ົາຊີວິດນັ້ນເອງ. ກະໂຕຂະບວນການ ແລະ ແມ່ນແຕ່ໂຄງຮ່າງທາງການ ຂອງ ການບໍລິຫານນ້ີ ຍັງບ່ທັນເປັນທ່ີເຂ້ົາໃຈກັນດີຢ່າງເຕັມປ່ຽມ ແຕ່ຫລັກການທ່ົວໄປຂອງ ມັນ ກໍພໍແນມເຫັນເປັນຮູບຢູ່. ເພ່ືອຄວາມສະດວກ ມັນປະກອບດ້ວຍສອງພາກສຳຄັນ ຄ ື : ຂ້ົາຣາຊະການ ທ່ີພັກເຊ ົ່ າຢູ່ໃນຣາຊະວັງ ປະກອບເປັນຝ່າຍບໍລິຫານສູນກາງ ກັບພວກ ຂ້ົາຣາຊະການນອກວັງ ຢູ່ໃນ *ມັນຈະນິຄະຣະ*. ໂຄງຮ່າງການບໍລິຫານສູນກາງມີຄວາມ ສັບຊ້ອນເປັນພ ິ ເສດ ລະບົບການບໍລິຫານ ກ ີ ໋ກເອ ້ ຍ ້ ອງດ ້ ວຍຕ ຳ ແໜ ່ ງ ແລະ ຍ ົ ດກ ົ ດາບັນ ດາສັກ ຈ ຳ ນວນຫລວງຫລາຍ ເຊ ັ ່ ນວ ່ າ ຕ ຳ ແໜ ່ ງ *ປະຕ ິ* (Patih) ຄ ື ອ ັ ກຄະເສນາບ ໍ ດ ີ ເຊ ິ ່ ງຍ ້ ອນຄ ຶ ນຫລ ັ ງ ຫ າສະໄຫມ *ມັ ດ ຊ ະປ າ ຫ ິ ດ* (Majapahit) ຫ ລ ື ກ ່ ອນຍ ຸ ກນ ັ ້ ນອ ິ ກ. ນອກນ ້ ຍ ັ ງມ ິ ລ ັ ກສ ະ ນ ະ ສ ັ ກ ສ ິ ດ ຫ ລ ື ຫ າງໄສຍ ະ ສ າ ດ ຕ ົ ວ ຢ ່ າ ງ ເຊ ັ ່ ນ ມ ິ ຫ ົ ວ ໜ ້ າ *ເ ວ ທ ະ ນ າ* 4 ຄ ົ ນ (Wedana) ຢ ູ ່ ພ າ ຍ ໃ ຕ ້ *ປ ະ ຕ ິ* (ຊ ້ າ ຍ 2 ຂ ວ າ 2) ແ ລ ະ ຍ ັ ງ ມ ິ *ເ ວ ທ ະ ນ າ* ນ ້ ອ ຍ ໆ ຫ ລ າ ຍ ກ ວ ່ າ ອ ີ ກ ສ ອ ງ ເ ທ ົ ່ າ ເ ມ ື ່ ອ ບ ວ ກ ເ ຂ ້ ົ າ ກ ັ ບ ອ ິ ກ *ປ ະ ຕ ິ* 4 ຄ ົ ນ ນ ັ ້ ນ ແ ລ ້ ວ ກ ໍ ກ າ ຍ ເ ປ ັ ນ ຈ ຸ 5 ຄ ົ ນ ເ ຊ ິ ່ ງ ມ ີ ໃ ຫ ້ ເ ຫ ັ ນ ຢ ູ ່ ທ ົ ່ ວ ໄ ປ ໃ ນ ໂ ຄ ງ ຮ ່ າ ງ ຂ ອ ງ ລ ັ ດ ທ ົ ່ ວ ທ ັ ງ ອ າ ຊ ີ ຕ າ ເ ວ ັ ນ ອ ອ ກ ສ ຽ ງ ໃ ຕ ້ ພ າ ຍ ໃ ຕ ້ ອ ັ ດ ທ ະ ນ ະ ທ ຳ *ອ ິ ນ ເ ດ ຍ* ເ ຊ ິ ່ ງ ເ ປ ັ ນ ໂ ຕ ແ ທ ນ ສ ູ ນ ກ າ ງ ແ ລ ະ ທ ິ ດ ທ ັ ງ ສ ີ ່ . ຫ ນ ້ າ ທ ີ ່ ຮ ັ ກ

ງານຂອງຂ້າຣາຊະການເຫລົ່ານີ້ ກົງກັນຂ້າມກັບໂຄງຮ່າງ ບໍ່ເຈາະຈົງຕາຍໂຕ ຄືເຂດໃນຄວາມຮັບຜິດຊອບ ແລະຄວາມສຳຄັນ ທີ່ກ່ຽວຂ້ອງຂອງແຕ່ລະຄົນ ເບິ່ງຄືວ່າຈະອີງໃສ່ ຄວາມສຳພັນສ່ວນຕົວ ຂອງແຕ່ລະຄົນ ກັບເຈົ້າຊີວິດ ຫລື ກຳລັງຂອງພວກເຂົາ ໃນວົງມົນ ຂອງ ພຣະຣາຊະວັງ ຫລາຍກວ່າອີງໃສ່ຕຳແໜ່ງສະເພາະ ທີ່ພວກເຂົາ ຈອງຍຶດຢູ່. ໃນ *ມາຕະຣຳ* ໂຄງຮ່າງແບບທາງການ ເປັນຄວາມງາມທາງການເມືອງ ຫລາຍ ເທົ່າໆກັບຕາລາງການຈັດຕັ້ງ, ຢ່າງໃດກໍດີ ຮູບແບບທີ່ເໝາະສົມຍ່ອມເປັນສິ່ງ ຈຳເປັນສຳລັບການດຳເນີນງານຢ່າງເໝາະສົມ ຂອງຈັກກະວານນ້ອຍ. ໃນເວລາດຽວ ກັນ ການບໍລິຫານການເມືອງທີ່ດີກໍຕ້ອງເປັນໄປ ຕາມຄວາມສຳພັນສ່ວນຕົວ.

ຂ້າຣາຊະການ ຂອງພາກສ່ວນບໍລິຫານ ສູນກາງ ດຳເນີນທຸລະກິດສ່ວນຕົວໃຫ້ ເຈົ້າຊີວິດ ໃນພຣະຣາຊະວັງ *(ກຣາຕອນ)* ທີ່ມີປະຊາກອນຢູ່ຫນາແໜ້ນ ແລະໃນ *ນິກະຣະອາກຸງ* ກໍເຮັດໃນນາມ ເຈົ້າຊີວິດ ເພື່ອຈັດການກັບແຂວງ ທີ່ຢູ່ຫ່າງໄກອອກໄປ (Manca negara). ສ່ວນວ່າ ຂ້າຣາຊະການ ທີ່ຢູ່ພາຍນອກຣາຊະວັງ ມີຫນ້າທີ່ດູແລ ເຂດທ້ອງຖິ່ນທີ່ຕົນປົກຄອງຢູ່. ເຖິງແມ່ນວ່າ ຢູ່ພາຍໃຕ້ເຈົ້າຊີວິດ ຜູ່ເຂັ້ມແຂງ ຄື *ສຸລະຕານ ອາກຸງ* ແລະ *ອາມັງກຸຣັດ ທີ 1* (Amangkurat I), ພຣະຣາຊະວັງ ຕິດຕາມເບິ່ງ ພວກເຂົາດ້ວຍຄວາມອິດສາ ແລະເມື່ອລະບຽບວິໄນ ບໍ່ເຄັ່ງຄັດ ພວກເຂົາກໍມີອິສຣະໃນ ການປົກຄອງຕົນເອງຢ່າງຫລວງຫລາຍ. ມີຫລາຍຄົນເປັນຜູ່ປົກຄອງ ຢູ່ໃນເຂດທີ່ເຄີຍ ເປັນເຂດແດນ ທຳມະຊາດ ປະຫວັດສາດ ເກົ່າແກ່ ແລະ ທຸກຄົນກໍມີຫໍໂຮງ *(ດາແລມ)* ເປັນຂອງຕົນເອງ. ບາງເທື່ອຜ່ຳມພ່ຳດີ ບາງເທື່ອເປັນຫໍໂຮງນ້ອຍໆ ບາງເທື່ອກໍໃຫຍ່. ເຂດແດນພື້ນທີ່ຂອງພວກເຂົາ ແຕກຕ່າງກັນຫລາຍ ໃນເລື່ອງຂະຫນາດໃຫຍ່ນ້ອຍ, ຄວາມສຳຄັນແລະປະຫວັດສາດ, ດັ່ງນັ້ນ ພວກຂ້າຣາຊະການເຫລົ່ານັ້ນ ຈຶ່ງໄດ້ຮັບຕຳ ແໜ່ງແຕກຕ່າງກັນ ໃນລະດັບຊັ້ນຂ້າຣາຊະການ ໃນ *ມາຕະຣຳ* ແຕ່ມັນກໍສະດວກ ທີ່ຈະເອີ້ນພວກເຂົາທັງຫມົດວ່າ *ຜູປະຕິ* (Bupati) ເຊິ່ງເປັນຊື່ຕຳແໜ່ງທົ່ວໄປ ໃນເວ ລາຕໍ່ມາ ເມື່ອຕົກຢູ່ພາຍໃຕ້ອິດທິພົນ ພວກ *ດັດຊ.* ເບິ່ງໂດຍທົ່ວໄປແລ້ວ, ຂ້າຣາຊະການ ພວກນີ້ ມີລັກສະນະຄ້າຍຄືກັບເຈົ້າປົກຄອງທ້ອງຖິ່ນ ທີ່ສືບທອດກັນມາຕາມປະເພນີ ໃນ ເຂດ *ມັນຈະນະຄະຣະ* ຊຶ່ງເວລານັ້ນ ຊັ້ນຕຳແໜ່ງ ກໍມັກກາຍເປັນການສືບທອດຕໍ່ໆກັນ.

ລະບົບພາສີ ທີ່ຮອງຮັບການປົກຄອງນີ້ ເປັນທີ່ເຂົ້າໃຈດີຂຶ້ນກວ່າເກົ່າ. *"ລະບົບ ພາສີ"* ອາດໄປຜິດທິດທາງໄດ້ ເພາະວ່າ ມີຊ່ອງຫວ່າງໃຫ້ເກັບພາສີເປັນເງິນຕາ. ພາສີ

ບາງຢ່າງ ໂດຍສະເພາະ ຜ້າສີທ່າເຮືອ ຜ້າສີແມ່ນ້ຳ ແລະເງິນຄ່າຜ່ານທາງ ກັບເງິນ ຄ່າຫົວຊາວນາ ຕາມປົກກະຕິ ເກັບເປັນເງິນສົດ ແຕ່ *ຂະອາ* ໃນສະໄໝ *ມາຕະຣຳ* ມີເງິນສົດໜ້ອຍໜ້ອຍໂພດ ແລະບໍ່ມີລະບົບເງິນຕາ ເປັນຂອງຕົນເອງ(ທົ່ວໄປໃຊ້ເງິນ ຫລຽນໂດລາຂອງ *ສະເປນ* ກັບຫລຽນທອງແດງຂອງ *ຈີນ*) ດັ່ງນັ້ນ ຜ້າສີສ່ວນຫລາຍຈຶ່ງ ເປັນຜ້າສີ ປະເພດສິ່ງຂອງ(ຜະລິດພັນ ສຳລັບຜູ້ບໍລິໂພກ ເຊັ່ນ ອາຫານ ສຳລັບຄົນຊັ້ນສູງ ທີ່ບໍ່ແມ່ນຊາວນາ ແລະຜະລິດພັນ ສຳລັບການຄ້າ ເຊັ່ນ ພິກໄທ ກັບ ເຂົ້າສານ ແລະ ຜ້າສີ ໃນຮູບ ແຮງງານ(ເປັນແຮງງານເກນ ໄປສ້າງກຸະໜິນ ຫລື ຫໍໂຮງ ຫລື *ດາເລັມ* ແຫ່ງໃໝ່, ວຽກຮັບໃຊ້ສ່ວນຕົວຂອງເຈົ້າຊີວິດ ກັບຂ້າຣາຊະການຂອງເພິ່ນ ແລະຜ້າສີ ທະຫານ).

ລະບົບຜ້າສີ ສະທ້ອນໃຫ້ເຫັນຮູບແບບ ທີ່ມີສູນກາງຂອງອານາຈັກ ຢ່າງຈະ ແຈ້ງ. ອັນທີນຶ່ງ : ຢູ່ສູນກາງ ເຈົ້າຊີວິດ ດຶງດູດອາຫານ ແລະແຮງງານ ມາໄວ້ສຳລັບ ພຣະອົງເອງ ແລະສະມາຊິກ ທີ່ເພິ່ງພາອາໄສຢູ່ໃນຣາຊະວັງ ອັນກວ້າງໃຫຍ່ຂອງພຣະ ອົງ, ສ່ວນນຶ່ງຂອງອາຫານ ແລະແຮງງານ ແມ່ນຜະລິດພັນຈາກດິນຫລວງ ເຊິ່ງຈ່າຍ ຜ້າສີ ມາໃຫ້ແກ່ເຈົ້າຊີວິດໂດຍກົງ ແລະບາງສ່ວນ ມາໂດຍທາງອ້ອມ ດັ່ງທີ່ຈະບັນຍາຍ ໄວ້ລຸ່ມນີ້. ອັນທີສອງ : ພວກເຊື້ອສາຍເຈົ້າຊີວິດທີ່ເຫລືອຢູ່ ກັບພວກຂ້າຣາຊະການຝ່າຍ ບໍລິຫານສູນກາງ ໄດ້ຮັບພຣະຣາຊະທານເບ້ຍລ້ຽງ(ປັດໃຈລ້ຽງຊີບ) ນັ້ນກໍຄື ສິດໃນການ ເກັບຮິບເອົາຜົນຜະລິດ ຫລືແຮງງານຈຳນວນນຶ່ງ ທີ່ຕ້ອງສົ່ງໃຫ້ເຈົ້າຊີວິດ ໃນນາມຜ້າສີ. ນອກເໜືອຈາກເງິນຄ່າຜ່ານທາງແລ້ວ, ເບ້ຍລ້ຽງ(ປັດໃຈລ້ຽງຊີວິດ) ສ່ວນໃຫຍ່ໄດ້ຮັບ ການຄຶດໄລ່ເປັນຫົວໜ່ວຍ *ຄະຄາທ* (Cacah : ຈຳນວນຫົວໜ້າຄອບຄົວ) ບັນຊີຫລາຍ ອັນຍັງເຫລືອລອດມາໃຫ້ເຫັນວ່າ ຢູ່ບ່ອນໃດມີ *ຄະຄາທ* (ຫົວໜ້າຄອບຄົວ) ຫລາຍເທົ່າ ໃດ ທີ່ກຶມມອບໝາຍໃຫ້ແກ່ບັນດາເຈົ້ານາຍ ຫລື ທ້າວຂຸນ. ເບ້ຍລ້ຽງສ່ວນໃຫຍ່ ມີຢູ່ໃນ *ເນກະຣະ ອາກຸງ*. ຜູ່ເຈົ້າຂອງເບ້ຍລ້ຽງ ຣຽກຮ້ອງເອົາພູດແບ່ງຂອງຕົນ ໂດຍການແຕ່ງ ຕັ້ງຕົວແທນປະຈຳທ້ອງຖິ່ນ ເປັນຄົນ*ຊະວາ* ຫລື ໃນບາງຄັ້ງ *ຄົນຈີນ ເບ ແກນ* (Bekel) ຫລື ເຈົ້າເມືອງຜູ່ເກັບຜ້າສີຊາວນາ ມີໜ້າທີ່ເກັບຜ້າສີ ແລ້ວຈັດສົ່ງໃຫ້ເຈົ້ານາຍ ຫລັງ ຈາກຫັກພູດຂອງຕົນໄວ້ແລ້ວ. ອັນທີສາມ: ພວກຂ້າຣາຊະການ ຫລືພວກຂຸນນາງທ້ອງ ຖິ່ນ ໃນເຂດແຂວງຫ່າງໄກ *(ມັນຈະນິກະຣາ)* ເກັບທ້ອນໂຮມຜ້າສີຂອງພວກເຂົ້າໄວ້ ແລ້ວເອົາພູດທີ່ແບ່ງໄວ້ໄປສົ່ງຣາຊະວັງ ປີລະເທື່ອ, ເມື່ອພວກເຂົ້າມາຮ່ວມໃນພິທີສະ

ຫລອງວັນ *ກາຣາຒບກ ມູລູດ* (Garebeg Maulud) ພຣະຣາຊະສົມພົບ (ວັນເກີດ ຂອງ *ພຣະສາສະດາມູຮາຫມັດ*) ແລະມາສະແດງຄວາມຄາຣະວະ. ຢູ່ພາຍໃນອານາເຂດ ຂອງພວກເຂົາມີ້ ພວກຂ້າຣາຊະການ ຫລື ພວກຂຸນນາງທ້ອງກິ່ນ ໄດ້ຮັບເບ້ຍລ້ຽງ ສຳລັບໄປຊ່ອຍເຫລືອຍາດພີ່ນ້ອງ ກັບຂ້າຣາຊະການຊັ້ນຜູ່ນ້ອຍ ທີ່ເຮັດວຽກກັບພວກ ເຂົາ. ອັນທີສີ່ ຫລື ອັນສຸດທ້າຍ: ຫົວເມືອງຂຶ້ນຟາກທະເລ ກໍມີອິສຣະເປັນເຈົ້າຕົນເອງ ຢ່າງສົມບູນ ໃນເລື່ອງເກັບພາສີ ແລະ ຜ່ພຽງແຕ່ດົນໆເທື່ອນຶ່ງ ຈຶ່ງຈັດສົ່ງມາໃຫ້ ເກົ່ງ ບໍ່ເປັນປົກກະຕິກໍຕາມ.

ເຈົ້າຊີວິດ ກັບເຈົ້າປົກຄອງທ້ອງກິ່ນ ໃນແຂວງຫ່າງໄກສອກຫລີກ (*ມັນຈະນິຄະ ຣະ*) ສືບທອດຕຳແໜ່ງຕາມສາຍເລືອດ ສ່ວນຂ້າຣາຊະການ ທີ່ເປັນຄົນສາມັນທົ່ວໄປ ກັບພວກລູກໆ ຕາມຫລັກການ ບໍ່ຄ່ອຍໄດ້ຮັບຕຳແໜ່ງແຕ່ງຕັ້ງຈາກເຈົ້າຊີວິດ ຊຶ່ງກໍບໍ່ ຕ່າງຫຍັງກັບພວກລູກຂອງຊາວນາ ແຕ່ຢ່າງໃດ. ແຕ່ກໍມີຕຳແໜ່ງຂ້າຣາຊະການ ບາງ ຕຳແໜ່ງ ໂດຍສະເພາະ ຢູ່ໃນແຂວງຫ່າງໄກສອກຫລີກ, ມີທ່າອຽງວ່າ ອາດກາຍເປັນ ເລື່ອງສືບທອດພາຍໃນຄອບຄົວ ຄືກັນ. ບໍ່ວ່າໃນກໍລະນີໃດ ເກົ່ງແມ່ນວ່າ ພວກເຂົາບໍ່ໄດ້ ສືບທອດແທນຜູ່ເປັນພໍ່ ໃນບາງຕຳແໜ່ງ ພວກລູກຂ້າຣາຊະການ ເກືອບທັງຫມົດ ກໍຍັງ ຄົງສະພາບຢູ່ໃນຊົນຊັ້ນຂ້າຣາຊະການ ທີ່ເອີ້ນກັນວ່າ *ປຣິຍາຢິ* (Priyayi). ສັງຄົມ *ຊະ ວາ* ມີລັກສະນະທີ່ເປັນລະບົບຂ້າຣາຊະການຈະແຈ້ງຫລາຍ ແລະມີຄວາມແຕກຕ່າງກັນ ທາງດ້ານຊົນຊັ້ນ ຢ່າງຂາດຂັ້ນ ລະຫວ່າງຊາວນາ ກັບຊົນຊັ້ນສູງ (*ປຣິຍາຢິ* ຣວມ ທັງຄອບຄົວ ທີ່ສືບທອດມໍລະດົກຂັ້ນເທິງຂຶ້ນໄປ).

ຢູ່ທົ່ວ*ຊະວາ* ພວກ *ປຣິຍາຢິ* ມີຮູບແບບວັດທະນະທຳ ເຂັ້ມແຂງ ຄື ກັນກັບພວກ ເຊື້ອເຈົ້າແລະຂຸນນາງທ້ອງກິ່ນ ທີ່ສືບທອດກັນມາ. ວັດທະນະທຳ ຂອງພວກ *ປຣິຍາຢິ* ມີ ລັກສະນະສະຖ້ຽໄອ ຕ່ຄວາມແຕກຕ່າງທາງສະຖານະພາບ ແລະ ສະແດງອອກມາໃນ ປະມວນ ກິລິຍາລະຍາດອັນຄ່ຽມຄົມແບບຜູ່ດີ, ເກົ່ງຢ່າງໃດກໍດີ ມາລະຍາດອັນເໝາະ ສົມນັ້ນ ມີຄວາມຫມາຍຫລາຍກວ່າກາຫມາຍບອກຖານະໃນສັງຄົມ, ມັນສະແດງອອກ ເກົ່ງ ຄວາມບໍລິສຸດພາຍໃນ ແລະຄຸນສົມບັດດ້ານຈິດໃຈ. ພວກ *ປຣິຍາຢິ* ເປັນຜູ່ບໍລິສຸດ (ມີສົມບັດຜູ່ດີສາມາດອົດກັ້ນຄວາມຮູ້ສຶກ ແລະ ປັບປ່ຽນຕົນເອງໃຫ້ເຂົ້າເກົ່ງພຣະເຈົ້າ) ສ່ວນພວກ *ວົ່ງ ຊິລິກ* (Wong Cilik) ມີລັກສະນະ *ກະຊາຣ໌* (ເວົ້າໂກກ, ຕື່ນເຕັ້ນ ແລະ ສະຫລາດວ່າສັດ ພຽງຫນ້ອຍດຽວ). ຄຽງຄູ່ກັບ ມາລະຍາດນີ້ ວັດທະນະທຳ ພວກ

ປຣິຍາຍິ ກໍມີຈະລິຍະທຳຂຸນນາງ ທີ່ເຂັ້ມງວດ ຄື ຄວາມຊື່ສັດ ຕໍ່ເຈົ້ານາຍຂອງຕົນ, ການຖືກຽດສັກສີ ຢ່າງແຮງ ແລະການເສຍສະຫລະໃນສະໜາມຮົບ. ໃນສະໄໜມການ ປົກຄອງ ຂອງ *ມາຕະຣຳ* ພວກ *ປຣິຍາຍິ* ຂີ່ມ້າອອກສູ່ສະໜາມຮົບ ແລະ ມີການຝຶກ ແອບສູ້ຮົບເປັນປະຈຳ ທຸກອາທິດ ຢູ່ໃນເຂດພຣະຣາຊະວັງ ແລະຫໍໂຮງຕ່າງໆ. ວັດທະນະ ທຳ *ປຣິຍາຍິ* ປາກົດໃຫ້ເຫັນຢ່າງເຕັມຂີດ ຢູ່ໃນການຫລົ້ນໜັງຕະລຸງ ຄັງສາງອັນ ກວ້າງໃຫຍ່ ຂອງການສຶກສາທາງສາສະໜາ ແລະການສອນສິລະທຳ ຕະຫລອດຈົນ ສິລປະຊັ້ນສູງ ແລະ ມະໂຫລະສົບທົ່ວໄປ. ເລື່ອງທີ່ສະແດງນັ້ນ ພັດທະນາມາຈາກວັນນະ ຄະດີ ຊັ້ນຍອດ ຂອງ *ອິນເດຍ* ຄື ເລື່ອງ *ມະຫາພາຣະຕະ* ແລະ *ພຣະລັກພຣະຣາມ (ຣາມະກຽນ)* ເຮັດໃຫ້ຈະຣິຍາທຳຂຸນນາງ ແລະການປະພຶດຕົວຂອງ ຜູ້ບໍລິສຸດກ້າວເຖິງ ຈຸດສູງສຸດ ແລະເປັນແບບຢ່າງໃຫ້ແກ່ພວກ *ປຣິຍາຍິ* ໜຸ່ມ, ໃຫ້ໂອກາດພວກເຂົາ ໄດ້ ເລືອກຮັບເອົາແບບຢ່າງ ເພື່ອນຳໄປປະຕິບັດເອງ.

ໃນທັດສະນະທົ່ວໄປ ກ່ຽວກັບ *ຊະວາ* ສະໄໜມ *ມາຕະຣຳ* ມັນມີລັກສະນະເດັ່ນຢູ່ ສອງຢ່າງ ຄື: ອັນທີ 1 ແມ່ນເສດຖະກິດແບບງ່າຍດາຍ ໃຊ້ແຮງງານຫລາຍ ແລະຄຸ ໜມັ່ນ ໂດຍທີ່ເກືອບທັງໜົດ ຕັ້ງຢູ່ບົນພື້ນຖານປະກົມປະຖານທີ່ສຸດ ນັ້ນຄືແຮງງານຊາວ ນາແບບຫຍາບໆ, ມີເງິນສົດ ໄຫລວຽນໜ້ອຍນຶ່ງ. ການຂົນສົ່ງ ຍັງຢູ່ໃນລະດັບຕ່ຳ ມີ ຖະໜົນ 2-3 ເສັ້ນ ດີກວ່າທາງຍ່າງດົນ, ມີແມ່ນ້ຳສາຍສັ້ນໆ ຕິດຕໍ່ກັບທຸກໆເສັ້ນທາງ ແລະເຊື່ອມຕໍ່ກັນໄດ້ ກໍດ້ວຍແຕ່ ທະເລ *ຊະວາ* ຢ່າງດຽວ. ໃນຄວາມເປັນຈິງ ແລະ ໃນ ຄວາມໝາຍອັນຈຳກັດທີ່ສຸດ, ຈຶ່ງພໍເວົ້າວ່າ ນັ້ນແມ່ນ ເສດຖະກິດ*ຊະວາ*, ມັນມີເສດຖະ ກິດໃນລະດັບທ້ອງຖິ່ນ ໃນບ້ານເປັນພັນໆແຫ່ງ ແລະໃນບາງລະດັບ ຢູ່ໃນເຂດແບ່ງປັນ ຕາມທຳມະຊາດ. *ປຣິຍາຍິ* ແຕ່ລະຄົນ ມີສິ່ງທີ່ພໍເອີ້ນໄດ້ວ່າ ເສດຖະກິດສ່ວນຕົວ ຂອງ ເຂົາເອງແດ່, ແຕ່ລະຄົນຕ້ອງເບິ່ງແຍງ ຄວາມຕ້ອງການທາງເສດຖະກິດດ້ວຍຕົນເອງ ໂດຍອາໄສວິທີການຂອງຕົນເອງ ຄື ຊັບສິນພຣະຣາຊະທານ(ເບ້ຍລ້ຽງ) ແລະ *ບິເກລ* ຂອງຕົນ, ເງິນຄ່າຜ່ານທາງ ຕາມລ່ອງແມ່ນ້ຳ *ໂຊໂລ*. ທັງເສດຖະກິດທ້ອງຖິ່ນ ແລະ ຂອງສ່ວນບຸກຄົນ ທັງໜົດນີ້ ມີຄວາມຜູກພັນກັບເສດຖະກິດ ຂອງທົ່ວພຣະຣາຊະອານາ ຈັກ ພຽງແຕ່ຫລົມໆ ແລະບໍ່ຍັ່ງຍືນ.

ສິ່ງທີ່ວາງເຕັ້ງຢູ່ເທິງກອງປະສົມເສດຖະກິດທ້ອງຖິ່ນ ແລະຂອງສັງຄົມນັ້ນແມ່ນ ຮູບແບບທາງການເມືອງ ແລະວັດທະນະທຳ ທີ່ສອດຄ່ອງຢ່າງເປັນເລີດ ກັບຄວາມ

ຕ້ອງການອັນແຮງກ້າໃນການສ້າງລະບົບນຶ່ງດຽວ ກວມທົ່ວ *ຊະວາ*. ເຈົ້າຊີວິດ ມີພາຫະ ນະຄວບຄຸມເສດຖະກິດ ພຽງແຕ່ໜ້ອຍດຽວ, ພຣະອົງ ບໍ່ສາມາດຢຸດຈ່າຍເງິນເດືອນ ໃຫ້ ພວກອ້າຣາຊະການ ຢູ່ໃນ *ມັນຈະນິຄະຣະ* ໄດ້ ເພາະວ່າ ຂະເຈົ້າບໍ່ມີລາຍໄດ້ຈາກອັນ ອື່ນເລີຍ. ພຣະອົງສາມາດ ໃຊ້ກຳລັງທາງທະຫານໄດ້ ກໍແຕ່ເມື່ອ ພວກອ້າຣາຊະບໍລິ ພານເຂົ້າມາເຝົ້າຢູ່ວັງ ເພື່ອນຳເອົາເງິນພາສີ ຈາກຊາວນາມາກວາຍ, ເພາະວ່າ ພຣະ ອົງເອງ ມີບໍລິສັດ ເປັນຂອງຕົນເອງ ແຕ່ພຽງໜ້ອຍດຽວເທົ່ານັ້ນ. *ຊະວາ* ໃນຖານະ ເປັນເອກະພົບການເມືອງໜ່ວຍນຶ່ງ ຕັ້ງຕົວຢູ່ບົນພື້ນຖານສາມຢ່າງ ຄື: ນຶ່ງ ມີພາສາ ແລະ ວັດທະນະທຳຮ່ວມກັນ, ມີຕຳນານພື້ນສືບການເມືອງເລື່ອງນຶ່ງ ເຊິ່ງເປັນທີ່ຍອມ ຮັບກັນທົ່ວໄປ ເພາະວ່າ ມັນຕັ້ງຢູ່ເທິງພື້ນຖານ ແລະສະແດງອອກເຊິ່ງຄວາມເຊື່ອໃນສາ ສະໜາອັນດຽວກັນ, ແລະນັບຖືຄ່ານິຍົມຂອງຊົນຊັ້ນ *ປຣິຍາຢິ* ອັນດຽວກັນ ທົ່ວ *ຊະວາ*. ເນື່ອງຈາກ ວົງກະສັດ *ມາຕະຣຳ* ກຳເນີດຂຶ້ນພາຍໃຕ້ *ອົງສຸລະຕານ ອາກຸງ* ເມື່ອຕົ້ນສະ ຕະວັດ ທີ 17 ແລະສ້າງອຳນາດເປັນປຶກແຜ່ນແໜ້ນໜາຮອໄດ້ພາຍໃຕ້ *ສຸລະຕານ ອາມັງກຸດ ທີ 1* ກາງສະຕະວັດດຽວກັນ, ອົງປະກອບທັງສາມຢ່າງນີ້ ຈຶ່ງລົບລ້າງຮອຍ ໜຍິບຕິດຕໍ່ເຂົ້າກັນລະຫວ່າງເກາະດອນຕ່າງໆໄປໜົດ. *ມາຕະຣຳ* ໃນເວລານັ້ນ ເປັນຣາ ຊະວົງ ທີ່ເຂັ້ມແຂງທີ່ສຸດ ໃນປະຫວັດສາດ*ຊະວາ* ແລະ *ຊະວາ* ກໍເປັນໜ່ວຍການເມືອງ ທີ່ມີປະສິດທິພາບໜ່ວຍນຶ່ງ.

ເມື່ອມີຄວາມຮຸ່ງເຮືອງ ຂອງຣາຊະວົງ ກໍຍ່ອມມີການເສື່ອມຖອຍຂອງຣາຊະ ວົງ. ໂດຍຜ່ານການບອກເລົ່າຕ່ໆມາ ຂອງພວກ *ປຣິຍາຢິ* ແລະນິທານພື້ນເມືອງ *ຊະວາ*, ສິ່ງທີ່ກອງທັບ ຂອງ *ສຸລະຕານ ອາກຸງ* ກັບພວກ *ວາຍຸ* (Wahyu) ຂອງພຣະອົງ ສາມາດສ້າງປັ້ນຂຶ້ນມາໄດ້ນັ້ນ ສາມາດຖືກມ້າງທະລາຍລົງໄດ້ ໂດຍກອງທັບອື່ນ ກັບ ພວກລູກນ້ອງ *ວາຍຸ* ອື່ນໆ ແລະ ຍ້ອນຄວາມໄຮ້ສະມັດຖະນະ ໃນການດູແລຄຸ້ມຄອງເສດ ຖະກິດ*ຊະວາ* ເໜືອດິນແດນອັນກວ້າງໃຫຍ່ນັ້ນເອງ. ໃນປີ 1672 ພູໄຟ *ເມຣາປີ* ລະເບີດ ແລະບໍ່ດົນ ກໍມີການປາກົດຕົວ ຂອງ *ດາວທາງ* ເກີດໄພແຫ້ງແລ້ງໃຫຍ່ ທັງໜົດນີ້ ຄື ກັບວ່າ ເປັນລາງຮ້າຍບອກເຖິງການຈາກໄປ ຂອງຍຸກ *ພວກວາຍຸ* ແຫ່ງ *ອາມັງກຸດ*. ການຂະບົດກໍ່ຕົວແລະລະເບີດຂຶ້ນ, ຂັບໄລ່ *ອາມັງກຸດ* ອອກຈາກພຣະຣາຊະວັງ ໜີໄປ ສ້ຽງພຣະຊົນ ຢູ່ແດນເບລະເທດ. ບໍ່ດົນຈຶ່ງມີການແຕ່ງຕັ້ງ ອົງຣັດຊະທາຍາດຂຶ້ນຕາມ ກົດໝາຍ ຂະໜານນາມວ່າ *ອາມັງກຸຣັດ ທີ 2* ແລ້ວຝືນແຜ່ນດິນຕ່ອນເລັກຕ່ອນນ້ອຍ

ຕາມແຜນທີ່ການເມືອງ ກໍ່ຖືກທ້ອນໂຮມເຂົ້າກັບຢ່າງເໝາະສົມ, ຜູ່ທໍ່ລະຍົດຄົນນຶ່ງ ຖືກ ຂ້າຕາຍ, ອີກຄົນນຶ່ງ ມາໄດ້ຮັບຄວາມຄາຣະວະ ຢູ່ທີ່ ພຣະຣາຊະວັງ, ຜູ່ບຸກຮຸກດິນແດນ *ມາດຸຣິສ* ກັບດິນແດນ *ມາກາສາຣິສ* ຖືກສົ່ງຄືນບ້ານເກົ່າ ສ່ວນພວກ *ດັດຊ* ໄດ້ຮັບຣາງ ວັນ ເພາະໄດ້ຊ່ວຍເຫລືອ ໂດຍການເໜມືາສຳປະທານເສດກຸະກິດ ແລະທີ່ດິນຕ່ອນເລັກ ຕ່ອນນ້ອຍ ຂອງ *ມັນຈະນິຄະຣະ*. ແຕ່ມັນເປັນໄປບໍ່ໄດ້ດົນ, ແມ່ນແຕ່ການໂຍກຍ້າຍ ພຣະ ຣາຊະວັງ *ກຣາຕອນ* ໄປຢູ່ບ່ອນທີ່ເປັນມຸງຄຸນກວ່າ ກໍ່ຍັງຊ່ວຍຫຍັງບໍ່ໄດ້. ຣາຊະວົງ *ມາ ຕະຣຳ* ແຕກສະຫລາຍລົງ ແລະ *ຊະວາ* ກໍ່ຕົກເຂົ້າສູ່ຍຸກອັດຕະຄັດ ເຊິ່ງຍືດເຍື້ອ ຢູ່ເກືອບ ຮ້ອນສະຕະວັດນຶ່ງ ຈາກນັ້ນ ຈຶ່ງສ້ຽງສຸດລົງ ດ້ວຍການແຕກສະຫລາຍຂອງອານາຈັກ ເປັນຫລາຍສ່ວນ ແລະການຂຶ້ນເປັນໃຫຍ່ ຂອງ *ບັດຕາເວຍ* ເໜືອດອນທັງຫມົດ.

ບໍລິສັດ *ດັດຊ ອິດສ໌ ອິນເດຍ* ໄດ້ສ້າງຕັ້ງສຳນັກງານໃຫຍ່ ຟາກຝັ່ງທະເລ ຂອງ ຕົນຂຶ້ນ ຢູ່ເມືອງ *ບັດຕາເວຍ* ໃນປີ 1619, ແຕ່ *ບັດຕາເວຍ* ຍັງຄົງອາໄສ *ຊະວາ* ຢູ່ຕໍ່ມາ ອີກດົນເຕີບ, ໃນນາມເປັນເມືອງທ່າເຮືອ ແລະເຂດດິນຣາບພຽງບໍ່ເທົ່າໃດໄມລ໌ ໃຫ້ຊາວ *ຈີນ* ປູກພືດຜັກແລະອ້ອຍ ເພື່ອສົ່ງອອກ. ຜົນປະໂຫຍດ ຂອງບໍລິສັດແມ່ນ ເຄື່ອງຫອມໃນ ດອນ *ໂມລຸກັດສ໌* ແລະ ການຄ້າໃນໝູ່ເກາະດອນທັງຫມົດ. *ບັດຕາເວຍ* ພໍ່ແຕ່ເອົາໂຕ ລອດຈາກການທຳລາຍລ້າງ ດ້ວຍສີມືຂອງ *ສຸລະຕານ ອາກຸງ* ໃນ ປີ 1628 ແລະ 1629 ແລະ ຈາກທັດສະນະ ຂອງພຣະອົງ ມັນກໍ່ເປັນພຽງ ລັດ *ປະຊິເຊຍ* ແຫ່ງນຶ່ງ ທີ່ຕ້ອງ ຍຶດເອົາໄວ້ຄືນ. ນັບເປັນເວລາເຄິ່ງສະຕະວັດ ທີ່ *ບັດຕາເວຍ* ວິຕົກນຳເລື່ອງກຳລັງຂອງ *ມາຕະຣຳ* ຈຶ່ງໄດ້ຈັດສົ່ງຄະນະທູດ ນຳເອົາເຄື່ອງບັນນາການໄປໃຫ້ ທັງຂໍ້ຊື້ເຂົ້ານຳ.

ໃນລະຫວ່າງຊຸມປີ 1670 ເມື່ອການຂະບົດຕໍ່ຕ້ານ *ອາມັງກຸຣັດ ທີ 1* ເລີ່ມນຳ ຄວາມເສື່ອມກ່ອຍມາໃຫ້ ແກ່ ຣາຊະວົງ *ມາຕະຣຳ*, ບໍລິສັດ *ວີ ໂອ ຊີ (VOC)* ໄດ້ປະສົບ ຄວາມສຳເລັດສູງສຸດ ໃນຖານະ ເປັນອຳນາດທາງທະເລ ແລະການຄ້າ ໃນໝູ່ເກາະ ດອນຕ່າງໆ. ບໍລິສັດ *ວີໂອຊີ* ບໍ່ພຽງແຕ່ ສົນໃຈໃນ *ຊະວາ* ເທົ່ານັ້ນ ແຕ່ຍັງຕ້ອງການຂະ ຫຍາຍປ່ອງຫວ່າງຂອງອຳນາດ ທັງນີ້ ເພື່ອປົກປ້ອງດິນແດນດ້ານຂ້າງ ດ້ວຍມີທ່າດີ ທາງດ້ານເສດກຸະກິດຂອງຕົນ. ພວກ *ດັດຊ* ບໍ່ແມ່ນພວກດຽວ ທີ່ຖືກດຶງເຂົ້າມາສູ່ກິດຈະ ການຂອງ *ຊະວາ* ຕາມທິດທາງນີ້, ຕະຫລອດເວລາ 75 ປີ ຕໍ່ມາ ບໍ່ແມ່ນແຕ່ພວກ *ມາດູເຣສ* ກັບ *ມາກັດສາເຣສ* ເທົ່ານັ້ນ, ພວກ *ຈີນ-ຊະວາ* ແລະ *ບາຫລີ* ກໍ່ໄດ້ສະແດງບົດ

ບາດ ອັນສຳຄັນຂອງຕົນ ໃນສົງຄາມ ພາຍຫລັງການຫລົ້ມສະຫລາຍ ຂອງ ອາຊະວົງ *ມາຕະຣຳ* ທັງຫມົດ ເປັນຜູ່ເຂົ້າຮ່ວມ ໃນຂະບວນການ ທາງປະຫວັດສາດຂອງ *ຊຸະວາ*.

ໃນປີ 1757 ລະບົບການເມືອງໃຫມ່ ຂອງ *ຊຸະວາ* ໄດ້ພົ້ນໂຜ່ຂຶ້ນ ມັນແມ່ນລະບົບ ນຶ່ງ ທີ່ເຫລືອລອດມາ ກວ່າເຄິ່ງສະຕະວັດ ໂດຍບໍ່ກືກດັດແປງ ນັ້ນກໍຄື ຢ່າງຫນ້ອຍ ໂຄງຮ່າງທາງການເມືອງຂອງມັນບໍ່ໄດ້ກືກປ່ຽນແປງຫຍັງຫລາຍ ມາຈົນເກືງ 1945. ອານາຈັກ *ມາຕະຣຳ* ແບ່ງອອກເປັນສາມສຳນັກ ຄື ສອງສຳນັກໃຫຍ່ *ປາກູ ບູໂວໂຍ* (Paku Buwono) ຂອງ *ສູຣາກາຕາ* ກັບ *ຣາເມັງກຸ ບູໂວໂນ* ຂອງ *ໂຍກຢາກາກຕາ* ແລະ ສຳນັກນ້ອຍ ຄື *ມັງກູ ນິຄະຣາ* ຂອງ *ສຸຣາກະຕາ*. ດ້ວຍອານາເຂດ ແລະມີພົ້ນທີ່ ສຳລັບເປັນບ່ອນຫາລ້ຽງຊີບ ໂຮມເຂົ້າເປັນອັນດຽວກັນ, ພວກເຂົາປົກຄອງ *ນິຄະຣະ* ເກົ່າ ຂອງ *ອາກຸງ* ແລະ ແຜ່ນດິນສ່ວນຢູ່ເບື້ອງໃນ ຂອງແຂວງຫ່າງໄກ (*ມັນຈະນິຄະຣະ*) ຄື ແຫລມຍາວສີ່ຫລ່ຽມ ຕາມຊາຍຝັ່ງທະເລ *ຊຸະວາ* ກ້ຳໃຕ້. ພ້ອມໆກັບພວກ *ສຸລະຕານ* ແຫ່ງ*ບັນຕຳ*, ສຳນັກທັງສາມນີ້ ລ້ວນແຕ່ເປັນເມືອງຂຶ້ນ ຂອງ *ວີໂອຊີ*, ໂດຍຍັງຄົງຄວາມ ເປັນເຈົ້າຕົນເອງ ສ່ວນໃຫຍ່ໄວ້ໄດ້ ໃນເລື່ອງກິດຈະການພາຍໃນຂອງຕົນຢູ່ ແຕ່ຫາກຜູກ ຕິດຢູ່ກັບ *ບັດຕາເວຍ* ດ້ວຍສົນທິສັນຍາ ແລະ ກັບພວກ*ປາຕີ* ທີ່ແຕ່ງຕັ້ງໂດຍ *ພວກດັດຊ* ແລະດ້ວຍລະບົບການຂຶ້ນກັບແບບນຶ່ງຢູ່. ດິນແດນ *ຊຸະວາ* ສ່ວນທີ່ເຫລືອ ເປັນຮູບຊົງກົ່ງ ໂຄ້ງ ກວມຫົວເມືອງຕ່າງໆ ຂອງ *ມາຕະຣຳ* ຈຶ່ງເປັນຂອງ ບໍລິສັດ *ວີໂອຊີ* ປົກຄອງໂດຍ ພວກ *ບູປາຕີ* ຄື ພວກຂຸນນາງຊ້ຳຣາຊະການ ໃນດິນແດນ ຂອງພວກເຂົາເອງ. ຄືກັນກັບ ບັນພະບຸຣຸດຂອງພວກ *ບູປາຕີ* ແຫ່ງຫົວເມືອງຫ່າງໄກຂອງ *ມາຕະຣຳ* ວົງວຽນແຫ່ງ ການກຳເນີດອານາຈັກໄດ້ຫັນປີ້ນຄືນ ບັດນີ້ *ບັດຕາເວຍ* ຕາມລຽບຝັ່ງທະເລ ກາຍເປັນ ສູນກາງ, ສ່ວນພວກ *ພູປະຕີ* ບັດນີ້ ຫັນມາປະເຊີນກັບຕາເວັນຕົກ ກັບທິດເໜືອ ສ່ວນ ພວກເຈົ້າປົກຄອງ *ມາຕະຣຳ* ບັດນີ້ກໍກາຍເປັນຫົວເມືອງຂຶ້ນດ້ານນອກ ແຕ່ໂຄງຮ່າງ ທາງການເມືອງ ທີ່ສຳຄັນຂອງ*ຊຸະວາ* ກໍເກືອບບໍ່ໄດ້ປ່ຽນແປງຫຍັງເລີຍ. ໃນດ້ານສັງຄົມ ເກືງວ່າມີຖານະຕ່ຳກວ່າຊົນຊັ້ນນຳຜູ່ມີໄຊ *ກຸ່ມນ້ອຍຊາວດັດຊ* ພວກ *ປຣິຍາຍີ* ກໍຍັງເປັນ ຂຸນນາງ ຢູ່ເໜືອພວກ *ອັງ ຊິລິກ*, ຜູ່ກຳເສດກະກິດທ້ອງກິ່ນອັນຫລາກຫລາຍ ກໍຍັງຈັດ ສົ່ງເຄື່ອງສ່ວຍ ໂດຍຜ່ານວິທີທາງການເມືອງໄປໃຫ້ສູນກາງ ທີ່ຢູ່ຫ່າງໄກ ແຕ່ໂລບມາກ ນັ້ນຢູ່. **ເອກະສານ** *ຊຸະວາ* ສະໄຫມສະຕະວັດ ທີ 18 ສະບັບນຶ່ງ ບໍ່ໄດ້ກ່າວເກືງການຕິດຕໍ່ ກັບພາຍນອກ ຂອງບໍລິສັດ ແຕ່ກໍຫາກກ່າວເກືງການປົບບັງຄັບຕາມປະເພນີ *ຊຸະວາ*

ແມ່ນອະທິບາຍກ່ຽວກັບເລື່ອງນີ້ ໄດ້ດີ, ເຊັ່ນ ປະໂຫຍກທີ່ວ່າ: "*ຈ້ຽກຸ໋ງ*" (Jan Coen ຂ້າ ຫລວງໃຫຍ່ ຜູ່ກໍ່ຕັ້ງ *ບັດຕາເວຍ*) ແມ່ນລູກຊາຍຂອງຄົນຕ່າງດ້າວກັບເຈົ້າຍິງ ແຫ່ງ *ຊະ ວາ* ຕາເວັນຕົກ ຜູ່ເຊິ່ງມີຊາຕາກຳ ໃຫ້ມາກຶ*ພາ*ອອກລູກເປັນເຈົ້າຊີວິດ. ດັ່ງນັ້ນ ຣາຊະ ວົງປົກຄອງ *ຊະວາ* ທີ່ກຶກຕ້ອງຕາມກົດໝາຍ ຈຶ່ງຕ້ອງມາຈາກ ເຈົ້າຍິງອົງນີ້ເທົ່ານັ້ນ.

ບົດທີ 11 : ທ່ານເຈົ້າແຂວງ ສະເປນ

ປາກົດວ່າ ເຈົ້າແຂວງ ແລະ ຜູ່ບັນຊາການທະຫານຂອງ *ຟີລິບປິນ* ໄດ້ເປັນຜູ່ປົກຄອງທີ່ມີອຳນາດຫລາຍທີ່ສຸດພວກນຶ່ງ ໃນອາຊີຕາເວັນອອກສຽງໃຕ້. ດ້ວຍຕຳແໜ່ງໜ້າທີ່ຂອງເຂົາ ພາຍໃນເຂດກຳແພງເມືອງ*ມະນີລາ* ອັນແໜ້ນໜາ ເຂົາເປັນຜູ່ບັນຊາການສູງສຸດ, ໄດ້ເປັນຜູ່ຕາງໜ້າ ພຣະເນດພຣະກັນຂອງ ເຈົ້າຊີວິດ ແລະເປັນຮອງອົງອຸປະກຳ ແຫ່ງ *ຄຣິຕສາສະນະຈັກ ໂຣມັນຄາໂຕລິກ*. ເນື່ອງຈາກການຕິດຕໍ່ທຸກຢ່າງລະຫວ່າງ *ຟີລິບປິນ* ກັບ *ສະເປນ* ດຳເນີນຜ່ານ *ເມັກຊິກໂກ*, ເຈົ້າແຂວງຈຶ່ງຖືກໂດດດ່ຽວຕັດຂາດຈາກໜ່ວຍ ດ້ວຍເວລາແລະ ສະຖານທີ່. ຍ້ອນວ່າ ຄຳສັ່ງແລະການແຕ່ງຕັ້ງແທນທັງໝົດ ຕ້ອງລໍ້ຖ້າໃຫ້ເຮືອຍົນສິ່ງສິນຄ້າ ຈາກ *ເມັກຊິກໂກ* ມາຮອດ, ກວ່າຄຳສັ່ງຈາກຣາຊະວັງ ຈະເດີນທາງມາຮອດ *ມະນີລາ* ກໍອາດເປັນເວລາເກືອບປີ. ຖ້າຫາກວ່າເຈົ້າແຂວງຄົນໃດ ມັກຮຽກຮ້ອງຄຳສັ່ງທີ່ແຈ່ມແຈ້ງແດ່ ເຂົາກໍສາມາດຫລີກລ່ຽງ ບໍ່ປະຕິບັດຕາມຄຳແນະນຳ ທີ່ເຂົາບໍ່ມັກນັ້ນໄດ້. ຢ່າງໃດກໍດີ ເຖິງມີລັກສະນະເດັ່ນ ມີຖານະຕຳແໜ່ງ ເປັນຫົວໜ້າຝ່າຍພົນລະເຮືອນ ຝ່າຍທະຫານ ແລະການປົກຄອງຝ່າຍສາສະນະຈັກກໍຕາມ ອຳນາດຂອງເຈົ້າແຂວງ ກໍເປັນໄດ້ແຕ່ພຽງສ້ຽວນຶ່ງ ຂອງອຳນາດອັນແທ້ຈິງທີ່ເຂົາຄວນມີເທົ່ານັ້ນ.

ອັນທີນຶ່ງ, ຖານະຕຳແໜ່ງເຈົ້າແຂວງ ບໍ່ມີຄວາມໝັ້ນຄົງ ທັງໝົດຂຶ້ນກັບຄວາມເພິງພໍໃຈ ຂອງກະສັດພຣະອົງດຽວ. ເນື່ອງຈາກວ່າ ມັນເປັນຕຳແໜ່ງພາຍໃຕ້ການອຸປະກຳຂອງເຈົ້າຊີວິດ ພຣະອົງຈຶ່ງຊົງແຕ່ງຕັ້ງ ເອົາແຕ່ມິດສະຫາຍຂອງພຣະອົງ ກັບຜູ່ສະໜັບສະໜູນພຣະອົງ ຫລາຍກວ່າຄົນອື່ນທີ່ອຸທິດຕົນໃຫ້ວຽກງານ. ກໍເປັນທີ່ເຂົ້າໃຈກັນດີຢູ່ວ່າ ທ່ານເຈົ້າແຂວງເອງ ກໍຕ້ອງມີຜົນປະໂຫຍດເປັນການສ່ວນຕົວແດ່ ທະແນມວ່າ ເພິ່ນບໍ່ກອບໂກຍຈົນໂພດເຫລືອ. ລະບົບທັງໝົດ ຖືກກຳໜົດໄວ້ແລ້ວວ່າ ການລະເມີດເປັນແນວໃດ: ກ່ອນທີ່ເຈົ້າແຂວງຜູ່ນຶ່ງ ຈະອອກຈາກຕຳແໜ່ງໄປ ເພິ່ນຕ້ອງຜ່ານການກວດກາຢ່າງເປັນທາງການ ຫລື ທີ່ເອີ້ນກັນວ່າ *ເຣຊິເດັນເຊຍ* ກ່ອນ (Residencia). ການໃຫ້ສິນຈ້າງຈອບອອຍ ເປັນພະຍາດຊຳເຮື້ອຢ່າງນຶ່ງປະຈຳລະບົບ ແລະ ພະນັກງານແຕ່ລະຄົນທີ່ໜົດໜ້າທີ່ ກໍຮູ້ດີວ່າ ເຂົາຕ້ອງຊົມໃຊ້ຜົນກຳໄລຂອງຕົນໄປ ຫລາຍເທົ່າໃດ ເພື່ອຊື້ຈ້າງ ຖາງທາງອອກໄປ. ອັນທີສອງ, ໂຄງຮ່າງດ້ານບໍລິຫານ

ຂອງອານານິຄົມ ເຮັດໃຫ້ທ່ານເຈົ້າແຂວງ ຕ້ອງໄດ້ຕໍ່ສູ້ຊ່ວງຊິງກັບພວກຜູ່ຮອງ ຂອງ ຕົນເອງ ຢູ່ໃນ *ຣາຊະສະພາ* (Royal Council: Audiencia). ລະບົບອ້າຣາຊະການ ໂດຍທົ່ວໄປ ບໍ່ສອດຄ່ອງ ແລະ ຫລາຍເທື່ອກໍເປັນປະຕິປັກກັບ ເຈົ້າແຂວງຢ່າງເປີດແຝນ. ຍ້ອນວ່າ ໃນຈຳນວນອ້າຣາຊະການຊັ້ນນ້ອຍ ທີ່ມາຢູ່ *ຟິລິບປິນ* ເພື່ອສະແຫວງໂຊກ ລາບນັ້ນ ມີຫນ້ອຍຄົນທີ່ສົນໃຈຕໍ່ຄຳສັ່ງຈາກ *ມະນີລາ*. ທ່ານເຈົ້າແຂວງໃຫຍ່ ປະຈຳ ແຂວງ ເຊິ່ງທົ່ວໄປ ເອີ້ນວ່າ *ອານ ກາແດສ ມາຍ໋ຣ* (Alcades-Mayores) ໄດ້ສະກຳ ປະນາດິນແດນປົກຄອງຕົນເອງ ເກືອບສົມບູນ ເຊິ່ງມັກກະແຈກກະຈາຍຢູ່ຕາມເກາະ ດອນຕ່າງໆ ຫລື ໃນເຂດຫ່າງໄກສອກຫລີກ. ອັນທີສາມ, ຄວາມກັງວົນ ຂອງ *ສະເປນ* ອັນຕົ້ນຕໍ ຢູ່ໃນອານານິຄົມ ແມ່ນການຄ້າທາງເຮືອໃຫຍ່. *ກຸງມະນີລາ* ເຊິ່ງເປັນຄັງສາງ ນັ້ນ ເປັນໂຕເກາະຫ້ອຍ ຄອຍດູດດຶງເອົາສິນຄ້າ ຈາກດິນແດນສ່ວນໃນ ທີ່ຕົນຕ້ອງການ ໄວ້ ແຕ່ໂດຍພື້ນຖານແລ້ວ ບໍ່ໄດ້ມີຄວາມສົນໃຈແມ່ນແຕ່ຫນ້ອຍດຽວ ຕໍ່ການພັດທະນາ ປະຊາຊົນຊາວພື້ນເມືອງ. ສາຍສຳພັນອັນດຽວທີ່ມີຢູ່ ລະຫວ່າງຊຸມຊົນນ້ອຍໆ ໃນເມືອງຢູ່ *ມະນີລາ* ກັບ ມະຫາຊົນຊາວນາ ແມ່ນ *ອັກຄຣິຕຈັກ*. ດັ່ງນັ້ນ ເຈົ້າແຂວງ ຈຶ່ງຕ້ອງຂຶ້ນກັບ ຄະນະສົງ ປະຈຳເຂດ. ເຖິງແມ່ນວ່າ ເຈົ້າແຂວງເອງ ເປັນເຖິງຮອງອົງອຸປະຖຳ *ອັກຄຣິຕ* ເພິ່ນກໍບໍ່ສາມາດຄວບຄຸມ ໃຫ້ເກີດມີຄວາມຈົງຮັກພັກດີ ໄດ້ຢ່າງອັດຕະໂນມັດ. ເພິ່ນເອງ ກໍມີຖານະບໍ່ປົກກະຕິຢູ່ແລ້ວ ໃນເລື່ອງຣຽກຮ້ອງເອົາການສະຫນັບສະຫນູນ ຈາກທາງວັດ ເພື່ອປົກຄອງດອນໃຫຍ່ທັງຫມົດ. ເບິ່ງຄືວ່າ ຂອບເຂດອຳນາດຂອງເພິ່ນ ຕ້ອງເປັນທີ່ຈັບ ໃຈ *ກຸງມາດຣິດ* ຫລາຍກວ່າ ຜູ່ຢູ່ *ມະນີລາ* ເຖິງຢ່າງໃດກໍດີ ຍ້ອນວ່າເພິ່ນຄາດຄະເນ ໄດ້ວ່າ ລະຍະກິນຕຳແຫນ່ງຂອງຕົນນັ້ນມັກຈະສັ້ນແຄ່ ເປົ້າຫມາຍຂອງເພິ່ນຈຶ່ງແມ່ນ ການມີຊີວິດລອດ ຢູ່ໃນດິນແດນເຂດຮ້ອນຊຸ່ມນີ້, ກັບຄືນບ້ານເກີດພ້ອມດ້ວຍຊັບສິນເງິນ ຄຳ ແລະ ມີຖານະເປັນຜູ່ສືບທອດລະບົບຢ່າງຖືກຕ້ອງຕາມກົດຫມາຍ, ດັ່ງນັ້ນ ເຂົາຈຶ່ງ ບໍ່ອະນາທອນຮ້ອນໃຈ ນຳຂໍ້ກຳນົດກົດເກນເຫລົ່ານີ້ ພໍເທົ່າໃດ.

ຢ່າງໃດກໍຕາມ ຜູ່ຄົນເຫລົ່ານີ້ ບໍ່ໄດ້ຊົ່ວຮ້າຍເປັນຍັກມານໄປຫມົດດອກ. ພວກ ເຂົາແນມບໍ່ເຫັນຄວາມຂັດແຍ່ງໃດໆ ລະຫວ່າງຄວາມຂີ້ຕົກມັກໄດ້ ໃນແຕ່ລະໂຕຄົນ ກັບ ຫນ້າທີ່ທາງການ. ພວກເຂົາຈົງຮັກພັກດີຕໍ່ກະສັດ ແລະອຸທິດຕົນ ເພື່ອການເຜີຍແຜ່ ຄວາມສັດທາໃນສາສະຫນາ. ສິ່ງສຳຄັນ ແມ່ນເລື່ອງທີ່ວ່າ ຕຳແຫນ່ງວຽກງານໄດ້ກຳ ຫນົດພຶດຕິກຳ ຂອງພວກເຂົາເອງ ແລະແມ່ນແຕ່ຜູ່ທີ່ໄດ້ຊື່ວ່າ ເປັນເຈົ້າແຂວງຜູ່ສະ

ຫລາດສະຫລຽວທີ່ສຸດ ກໍຍັງຍິນຍອມຮັບເອົາລະບົບ ຢ່າງບໍ່ມີຄວາມລັ່ງເລໃດໆ. ຢ່າງໃດ ກໍດີ ຍຸທະສາດຂອງພວກເຂົາ ໃນການສືບທອດລະບົບໄວ້ນັ້ນ ກໍບໍ່ໄດ້ກຳນົດໃຫ້ ມີການ ປ່ຽນແປງສະເໜີໄປ. ຄວາມເວົ້ານຶ່ງ ທີ່ມັກກ່າວອ້າງເຖິງ ຢູ່ໃນການຂຽນປະຫວັດສາດ *ຟີລິບປິນ* ແມ່ນຂໍ້ຄວາມທີ່ວ່າ ອານານິຄົມເປັນຫລ່ອຍເປ້ຍມາຕັ້ງແຕ່ຕົ້ນສະຕະວັດທີ 17 ຈົນຮອດສະໄໝຣາຊະວົງ*ບວກບອງ* ເຈົ້າຊີວິດຊື່ *ຄາຣໂລສ ທີ ສາມ* (Bourbon king, Carlos III) ໃນປີ 1759, ແລະເມື່ອ *ອັງກິດ* ໄດ້ເຂົ້າມາຍຶດຄອງ *ມະນີລາ* ໃນສາມປີ ຕໍ່ມາ. ໃນຄວາມເປັນຈິງ ມັນມີຄວາມເນົ່າເໜັນຢູ່ແລ້ວ ພາຍໃຕ້ໜ້ານ້ຳ ທີ່ເບິ່ງ ຄືວ່າສະຫງົບຮຽບຮ້ອຍນັ້ນ ແທ້ແລ້ວ ເຈົ້າແຂວງ*ຟີລິບປິນ* ຫລາຍຄົນ ເຮັດຄືວ່າ ເປັນຜູ້ ສົນໃຈຫ່ວງໃຍຫລາຍກວ່າໝູ່ ໃນເລື່ອງຮັກສາສະຖານະການໄວ້ໃຫ້ດີ ແຕ່ທີ່ຈິງແລ້ວ ແມ່ນກະໂຕຜູ້ຊຸກຍູ້ການປ່ຽນແປງ. ຄວາມກົດດັນຂອງເຫດການ ບັງຄັບໃຫ້ພວກເຂົາ ຕັດສິນໃຈ ຈົນມີຜົນກະທົບແບບທີ່ບໍ່ໄດ້ຄາດໝາຍໄວ້. ຕົວຢ່າງ ຖ້າຫາກພິຈາລະນາບັນ ຫາຂອງ ທ່ານເຈົ້າແຂວງ *ດອນ ເປໂດຣ ມານູແອລ ດິ ອາຣັນເດຍ* (Governor Don Pedro Manuel de Arandia) ພວກເຮົາສາມາດເຫັນຂະບວນການນັ້ນ ຢ່າງຈະແຈ້ງ.

ຢ່າງນ້ອຍ ຄວາມອ່ອນແອທາງການທະຫານ ກໍເປັນສິ່ງທີ່ບໍ່ຫນ້າໃຫ້ອະໄພ ເນື່ອງຈາກມັນທຳລາຍອານານິຄົມ ດັ່ງນັ້ນ *ອາຣັນເດຍ* ກໍຄືກັບເຈົ້າແຂວງຄົນກ່ອນໆ ໄດ້ພະຍາຍາມຈັດຕັ້ງກອງທະຫານ ອາສາສະໝັກຄົນໃໝ່ ເພີ່ມເງິນເດືອນໃຫ້ກອງທະ ຫານ ເພື່ອຫລຸດຜ່ອນຈຳນວນບຸກຄົນ ຜູ່ເໜັນເງິນໜ້າດຳ ເໜັນຄຳໜ້າເສົ້າລົງ, ຈັດ ຕັ້ງກົມທະຫານປະຈຳຣາຊະສຳນັກ ແລະຕັ້ງກອງພົນປືນນ້ອຍປືນໃຫຍ່ 4 ກອງພົນ ແລະ ໂຮງຮຽນທະຫານປືນໃຫຍ່ຂຶ້ນນຶ່ງແຫ່ງ. ເພີ່ນຈັດຕັ້ງໂຮງຮຽນທະຫານປືນໃຫຍ່ຄືນໃໝ່. *ອາຣັນເດຍ* ຍັງໄດ້ປະຕິຮູບການຄ້າກ່ຳປັ່ນໃຫຍ່ ຂອງ *ສະເປນ*, ເນື່ອງຈາກວ່າ ຂະບວນ ການຄ້າ ອັນເປັນເສັ້ນເລືອດຊີວິດຂອງຊຸມຊົນ *ສະເປນ* ນີ້ ເຕັມໄປດ້ວຍການສໍ້ໂກງ. ເພີ່ນ ແຕ່ງຕັ້ງກຳມະການຂຶ້ນຄະນະນຶ່ງ ປະກອບດ້ວຍພົນລະເມືອງ ຜູ່ມີຊື່ສຽງມາແຕ່ *ມະນີລາ* ເພື່ອເບິ່ງແຍງການເລືອກເຟັ້ນ ແລະການຕີລາຄາສິນຄ້າ. ເມື່ອຄະນະກຳມະການ ກຶ໊ກ ຈັບໄດ້ວ່າ ຫມຸນໃຊ້ຕຳແໜ່ງ ເພື່ອກອບໂກຍຜົນປະໂຫຍດເຂົ້າຕົນ ເພີ່ນກໍກວດກາຢ່າງ ເຂັ້ມງວດ ແລະຕັ້ງຂະບວນການໃຫມ່ອີກ. ຄວາມພະຍາຍາມຂອງເພີ່ນ ຍັງມີລັກສະນະ ແບບຮີດເດີມ ສະນັ້ນ ຈຶ່ງບໍ່ມີປະສິດທິຜົນພໍເທົ່າໃດ .

ຄວາມພະຍາຍາມແບບຮີດເດີມຂອງເພີ່ນ ເພື່ອທັບມ້າງອິດທິພົນ ທາງເສດຖະກິດຂອງ*ຈີນ* ໂດຍການຍັບໄລ່ຄົນ*ຈີນ* ທີ່ບໍ່ນັບຖືສາສະໜາ*ຄຣິຕ*ອອກໄປ ໄດ້ສົ່ງຜົນສະທ້ອນຢ່າງເລິກເຊິ່ງ. *ອາຣັນເດຍ* ບໍ່ແນມເຫັນໄດ້ລ່ວງໜ້າວ່າ ການທີ່ເພີ່ນຍັບໄລ່ຊາວ*ຈີນ*ອອກໄປ ຈະມີຜົນສະທ້ອນຍືດເຍື້ອ ໃສ່ການພັດທະນາ *ຟີລິບປິນ* ໃນສອງສະຕະວັດຕໍ່ມາ. ໂດຍບໍ່ເຈດຕະນາ, ເພີ່ນໃຫ້ໂອກາດ ແກ່ການຂະຫຍາຍໂຕ ຂອງຊຸມຊົນລູກຊອດ*ຈີນ* ເຊິ່ງໃນເວລານັ້ນ ຖືກບົດບັງໄວ້ ໂດຍກະໂຕ *ຊາວຈີນ* ເອງ. ໂດຍສະເພາະແລ້ວ *ອາຣັນເດຍ* ໄດ້ອອກຄຳສັ່ງໃຫ້ *ຊາວຈີນ* ໃນ *ມະນິລາ* ທີ່ຍັງບໍ່ເຂົ້າສາສະໜາ ຄືນໄປຕັ້ງໂຮມກັນຢູ່ໃນເຂດກຳຫນົດໃໝ່ (Parian) ແລ້ວຈຶ່ງສົ່ງກັບຄືນປະເທດເດີມ. ໃນຄວາມພະຍາຍາມຂອງເພີ່ນ ເພື່ອຫລຸດຜ່ອນການຄອບງຳດ້ານການຄ້າຂາຍຂອງ*ຈີນ* ລົງນັ້ນ ເພີ່ນຍັງໄດ້ອອກຄຳສັ່ງ ໃຫ້ຊາວ*ຈີນຄຣິຕ* ຜູ່ຍັງຕົກຄ້າງຢູ່ນັ້ນ ເຮັດນາແທນການຄ້າ. ເພີ່ນຄາດວ່າຈະກົ່ມປ່ອງຫວ່າງ ທາງເສດຖະກິດພາຍໃນປະເທດ ໂດຍອາໄສບໍລິສັດກັກສິນຄ້າ ຮ່ວມທຶນກັບ*ສະເປນ* ບໍລິສັດນຶ່ງ. ພາຍໃນປີດຽວ ບໍລິສັດກໍ່ກອບໂຕ ອອກຈາກທຸຣະກິດ ແລະ ໂດຍອາໄສການຊື້ຈ້າງຈອບອອຍຂອງ*ຄົນຈີນ* ບວກໃສ່ຄວາມຕ້ອງການຂອງຊາວ*ສະເປນ, ຊາວຈີນ* ຄ່ອຍໆກັບຄືນມາຍຶດຄອງຖານະຕຳແໜ່ງເດີມ ຂອງພວກເຂົາໄດ້ສ່ວນໃຄສ່ວນນຶ່ງ. ທ່ານ*ອາຣັນເດຍ* ບໍ່ແມ່ນເຈົ້າແຂວງຜູ່ທຳອິດ ຫລືຜູ່ສຸດທ້າຍ ທີ່ຍັບໄລ່*ຊາວຈີນ* ອອກໄປ. ຢ່າງໃດກໍດີ ການເຮັດໃຫ້ພວກຫົວແຂງ ຫັນມາເຂົ້າສາສະໜານຳ ແລະໂດຍຍັບໄລ່ເຂົາໄປນັ້ນ ເພີ່ນໄດ້ບັງຄັບໃຊ້ນະໂຍບາຍຫລັກ ຂອງ *ສະເປນ* ວ່າດ້ວຍການຈຳແນກບຸກຄົນຕ່າງດ້າວ ໂດຍອາໄສເຫດຜົນທາງສາສະໜາ ແລະດ້ວຍເຫດນີ້ ມັນຈຶ່ງຊຸກຍູ້ການຂະຫຍາຍຕົວ ຂອງຊຸມຊົນລູກຊອດ*ຈີນ*.

ໃນຂະນະທີ່ການແຕ່ງດອງລະຫວ່າງພວກຄົນ *ສະເປນ* ເອງ ເຊິ່ງທົ່ວໄປແມ່ນພວກ *ລູກຊອດ* (Creoles)ຈາກໂລກໃໝ່ ກັບແມ່ຍິງຊາວບ້ານ *(ອິນດຽດສ* Indias) ສ້າງໃຫ້ເກີດຊຸມຊົນລູກຊອດ (Mestizo) ນ້ອຍໆຂຶ້ນ, ກຸ່ມຄົນພວກນີ້ສ່ວນໃຫຍ່ ແມ່ນລູກຫລານ ຂອງພໍ່*ຈີນ* ກັບແມ່ທີ່ເປັນຍິງຊາວບ້ານ. ລູກຊອດ*ຈີນ* ມີສິດຕາມກົດໝາຍ ແລະ ການເມືອງ ຢ່າງຈະແຈ້ງ ທັງມີຖານະທາງສັງຄົມທີ່ຖືວ່າ ນັບມື້ນັບດີຂຶ້ນ. ການຄົງຢູ່ຂອງຄົນພວກນີ້ ອຳນວຍໃຫ້ຊາວ*ສະເປນ* ເອົາຜົນປະໂຫຍດທາງເສດຖະກິດ ປະສົມກົມກືນເຂົ້າກັບຄວາມເຊື່ອທາງສາສະໜາ ແລະ ຄວາມໜັ້ນຄົງທາງການເມືອງໄດ້ເປັນຢ່າງດີ. *ຊາວສະເປນ* ຕ້ອງການຄົນເຫລົ່ານີ້ ເພື່ອໃຫ້*ມະນິລາ* ຄົງຕົວຢູ່ຕໍ່ໄປ, ສາສະ

ນະຈັກ ຍິນດີຕ້ອນຮັບພວກເຂົາ ຍ້ອນວ່າ ມັນສົມຄວນໃຫ້ພວກເຂົາ ເຂົ້າຮັບການລ້າງ ບາບ ແລະ ພິທີສຳບານຕົນເຂົ້າສາສະໜາ. ໃນທາງປັ້ນກັນ ກໍມີແຮງດຶງດູດເອົາ *ຊາວ ຈີນ* ເຂົ້າຫາສາສະໜາ*ຄຣິຕ* ເພື່ອພວກເຂົາຈະໄດ້ຢູ່ໃນອານານິຄົມຕໍ່ໄປ. ເຖິງຂະ ໜາດວ່າ ກ້າຊາຍ*ຈີນ*ຜູ່ນຶ່ງມີເມຍຢູ່*ເມືອງຈີນ*ແລ້ວ ຢາກກັບຄືນໄປຕາຍຢູ່ພຸ້ນ ຜໍ່ໄດ້ປະ ເຮືອນໄປ ເຂົາກໍປະກິ້ມລູກເຕົ້າ ທີ່ເປັນລູກຊອດ ໄວ້ເບື້ອງຫລັງ, ເດັກນ້ອຍພວກນີ້ ໄດ້ຮັບ ການລ້ຽງດູ ເຕີບໃຫຍ່ ທ້າມກາງຄວາມເຊື່ອ ສັດທາທາງສາສະໜາ ຂອງຜູ່ເປັນແມ່ *ຊາວອິນເດຍ*. ໃນທາງວັດທະນະທຳ ພວກເຂົາເຫລ່ານີ້ ເຊື່ອມຊ້ອນເຂົ້າກັບຊຸມຊົນ ເຄື່ອນໄຫວໄປມາຢ່າງມີອິສຣະເສລີ, ທຳມາຄ້າຂາຍຢ່າງສະດວກສະບາຍ ແລະສ້າງວັດ ທະນະທຳສຳຮອງຂອງຕົນຂຶ້ນມາ ເຊິ່ງບໍ່ເປັນແບບ*ຈີນ*ອ້ອຍຕ້ອຍ ແລະ ກໍບໍ່ເປັນແບບ *ອິນເດຍ*ອ້ອຍຕ້ອຍ. ພວກລູກຊອດ*ຈີນ* ມີຄຸ້ມຂອງຕົນເອງຢູ່ *ມະນີລາ* ຄື *ບິນອນໂດ* (Binondo) ແລະພວກເຂົາໄດ້ກາຍມາເປັນອົງປະກອບຊົງພະລັງກຸ່ມນຶ່ງ ຢູ່ໃນສັງຄົມ. ໃນຍຸກຂອງ*ອາຣັບເດຍ*, ພວກເຂົາປະກອບເປັນປະມານ 5% ຂອງພົນລະມືອງທັງຫມົດ ເຖິງວ່າ ຢູ່ໃນອົງເຂດ*ມະນີລາ* ພວກເຂົາ ມີສ່ວນປະກອບສູງກວ່ານີ້ກໍຕາມ.

ຄວາມພະຍາຍາມ ຂອງ *ອາຣັບເດຍ* ເພື່ອປະຕິຮູບ ການຄ້າກຳປັ່ນໃຫຍ່ຂອງ *ສະເປນ* ແລະເພື່ອຕັດອຳນາດຂອງ *ຊາວຈີນ* ໃນ *ມະນີລາ* ເກີດຂຶ້ນໃນທັນທີ ຕາມຄວາມ ຕ້ອງການຂອງເຂົາເອງ ເພື່ອເພີ່ມພາສີອາກອນ ຂອງລັດຖະບານ. ຄວາມທຸກຍາກຂອງ ອານານິຄົມ ທີ່ພວມທະວີແຮງຂຶ້ນ ບໍ່ພຽງແຕ່ຂັດຂວາງການເຮັດວຽກງານ ຂອງລັດຖະ ບານເທົ່ານັ້ນ ແຕ່ຫາກຈຳກັດໂອກາດສ່ວນຕົວ ສຳລັບ *ອາຣັບເດຍ* ເອງ ແລະຊຸມຊົນ *ສະເປນ* ທັງຫມົດນຳ. ອານານິຄົມ ອາໄສເງິນສະໜັບສະໜູນປະຈຳປີ ທີ່ສົ່ງມາຈາກ *ເມັກຊິກໂ* ເນື່ອງຈາກວ່າ ອານານິຄົມ ບໍ່ມີແຫລ່ງພາສີອາກອນ ທີ່ສຳຄັນຫລາຍໄປ ກວ່າການຄ້າທາງເຮືອກັບພາສີ ທີ່ເກັບຈາກ *ພວກອິນດິໂອ* (Indio). ເມື່ອຂາດລະບົບ ຣາຊະການ ທີ່ມີປະສິດທິພາບ ເຊິ່ງຈຳເປັນສຳລັບການເກັບພາສີແບບນັ້ນ ທັງບໍ່ສາມາດ ເກັບເອົາພາສີໄດ້ຢ່າງຖືກຕ້ອງ ນຳແຫລ່ງລາຍຮັບຕົ້ນຕໍອັນນຶ່ງຂອງຕົນນັ້ນ, ການຄ້າ ທາງກ່ຳປັ່ນໃຫຍ່ ຈຶ່ງຈຳຕ້ອງປະຕິບັດການຕາມແບບ ຫາພໍ້ກຸ້ມປາກກຸ້ມທ້ອງໄປກ່ອນ ຄວາມທຸກຍາກຊ້ຳເຮື້ອ ຢູ່ໃນພາກສ່ວນສາທາລະນະອັນນີ້ອາດສືບຕໍ່ເປັນໄປອີກດົນ ຕາບ ໃດທີ່ອານານິຄົມ ຍັງຄົງໃຊ້ຫລັກປະຕິບັດເຂັ້ມງວດ ກັບພໍ່ຄ້າຊາວຂາຍເຮືອກ່ຳປັ່ນໃຫຍ່ຢູ່. ຄືກັບທີ່ເຄີຍເປັນ ກັບຜູ່ຢູ່ໃນຕຳແໜ່ງນີ້ມາກ່ອນເຂົາແລ້ວ, ສຳລັບ *ອາຣັບເດຍ*, ເປັນທີ່

ຈະແຈ້ງວ່າ ຈຳຕ້ອງພັດທະນາເສັ້ນທາງການຄ້າໃຫມ່ ຫລືບໍ່ ກໍແມ່ນນຳໃຊ້ ການພັດທະນາພາຍໃນແບບໃດແບບນຶ່ງ ໃຫ້ເກີດດອກອອກຜົນ. ຄວາມພະຍາຍາມ ເພື່ອພັດທະນາການຂຸດຄົ້ນບໍ່ເຫລັກ ໄດ້ຊ່ວງເສັງກັບຜົນປະໂຫຍດ ອັນນັບມື້ນັບຫລາຍຂຶ້ນ ຂອງຜົນຜະລິດກະສິກຳ ໂດຍສະເພາະ ພິກໄທ, ຫມາກແໜ່ງ, ຄາມ ແລະ ຢາດດ ດ້ວຍຄວາມພະຍາຍາມ ຢາກເຮັດໃຫ້ມີຜົນສຳເລັດເທົ່າໆກັບ *ວີໂອຊີ* (V.O.C.) ໃນຫມູ່ເກາະດອນຕ່າງໆ ທາງພາກໃຕ້. ແຜນວຽກຄົບຊຸດໆນຶ່ງ ກຶ່ງນຳອອກມາໃຊ້ ປ້ອງກັນຮູບແບບການປະຕິຮູບ ເພື່ອຫັນປ່ຽນອານານິຄົມ ໃຫ້ໄປດຳເນີນການແບບສ້າງຜົນກຳໄລ.

ພາວະສົງຄາມອັນຍືດເຍື້ອ ກັບພວກ *ສຸລະຕານມຸສະລິມ* (Moro) ໃນ *ມິນດານາວ ກັບ ຊູລູ* ເຮັດໃຫ້ລັດກະບານ ຕ້ອງແບກຫາບຄ່າໃຊ້ຈ່າຍອັນລົ້ນເຫລືອ ສິ່ງຜົນໃຫ້ການພັດທະນາເສດກະກິດຢຸດສະງັກ ເນື່ອງຈາກວ່າ ຫມູ່ເກາະດອນ *ບີສາຍັນ ແລະ ມິນດາເນົາ* ເປັນພາກພື້ນ ບ່ອນທີ່ຈຳຕ້ອງ ດຳເນີນໂຄງການພັດທະນາຫລາຍຢ່າງ. ຕົວຢ່າງ ໃນການປາບປາມ *ພວກມຸສະລິມ* ໃນປີ 1754, ຜູ່ຄົນຫລາຍພັນກຶ່ງກ້າຕາຍ, ການກວາດລ້າງລາມໄປເຖິງຊາຍຝັ່ງ *ລູຊອນ ບີສາຍັນ* ເຮັດໃຫ້ຜູ່ຄົນອີກຫລາຍພັນ ຕົກເປັນຂ້ອຍຂ້າ ແລະ ບີບໃຫ້ *ອາຣັບເດຍ* ຕ້ອງເພີ່ມຄວາມເອົາໃຈໃສ່ເປັນພິເສດ ຕໍ່ການຄຸກຄາມຄັ້ງນີ້. ເພິ່ນໄດ້ຈັດຕັ້ງກອງທັບຄືນໃຫມ່, ປັບປຸງກຳລັງປະຈຳການຂອງ*ສະເປນ* ຢູ່ *ຊຳບວງກາ* (Zamboanga) ແລະ ບ່ອນອື່ນໆ, ປ່ຽນແປງຄຳສັ່ງ ແລະອັນສຳຄັນທີ່ສຸດ ເພິ່ນໄດ້ພະຍາຍາມ ສ້າງສັນຕິພາບ ໂດຍອາໄສວິທີການທາງການທູດ.

ຈຸດໃຈກາງຂອງບັນຫາ ກ່ຽວກັບ *ໂມໂຣ* ຂອງ *ອາຣັບເດຍ* ແມ່ນ *ສຸລະຕານ* ແຫ່ງ *ຊູລູ* ຜູ່ຊື່ *ໂມຮຳມັດ ອາລີ ມຸດດິນ ທີ 1* (Muhammad Alimuddin I, 1735-1773). ພາຍຫລັງຂຶ້ນຄອງຣາດໄດ້ບໍ່ດົນ ພຣະອົງ ກໍເຂົ້າຮ່ວມສັນຍາສັນຕິພາບ ກັບ *ສະເປນ* ຊຶ່ງໃນນັ້ນ ບັນດາຫົວຂໍ້ຕ່າງໆ ມີທັງການໃຫ້ຄວາມຊ່ວຍເຫລືອແກ່ອີກຝ່າຍນຶ່ງ ໃນກໍລະນີ ທີ່ຝ່າຍນີ້ກຶ່ງກໂຈມຕີ. ການໃຫ້ຄຳຫມັ້ນສັນຍາອັນນີ້ ຂອງ *ສະເປນ* ເຮັດໃຫ້ *ອາລີ ມຸດດິນ* ບັນລຸຄວາມສຳເລັດ ໃນການສ້າງສັນຕິພາບ ເປັນການຊົ່ວຄາວ, ແຕ່ມັນກໍຊຸກໃຫ້ *ສະເປນ* ເຂົ້າມາຫຍຸ້ງກ່ຽວກັບກິດຈະການພາຍໃນ ຂອງອົງ*ສຸລະຕານ*. ເກືອບວ່າ ໃນທັນທີທັນໃດນັ້ນໂລດ *ອາລີມຸດດິນ* ໄດ້ຮຽກຮ້ອງຂໍກຳລັງ *ສະເປນ* ມາປາບປາມຝ່າຍຂະບົດ. *ອາລີມຸດດິນ* ເປັນຄົນພິເສດຄົນນຶ່ງ ມີຄວາມສົນໃຈໃນສາສະຫນາ*ຄຣິຕ* ຫລືໃນສິ່ງທີ່ເຂົ້າສາມາດຮຽກຫາໄດ້ ຈາກຊາວ*ຄຣິຕ*, ເຂົ້າເຊື້ອເຊີນນັກບວດ *ນິກາຍເຢຊູອິດ* ໄປຍັງນະ

ຄອນຫລວງ ຄືເມືອງ *ໂຈໂລ* (Jolo). ການເຮັດແນວນີ້ ກໍ່ໃຫ້ເກີດການຕໍ່ຕ້ານຂຶ້ນ ພາຍໃນຊຸມຊົນ *ອິສລາມ* ຈົນວ່າ *ອາລີມຸດດິນ* ຈຳຕ້ອງໃຫ້ນັກບວດ *ນິກາຍເຍຊູອິດ* ເຫລົ່ານັ້ນ ພັກເຊົາຢູ່ແຕ່ພາຍໃນ ພຣະຣາຊະວັງຂອງພຣະອົງ. ບໍ່ດົນ *ອາລີມຸດດິນ* ກໍ່ກົນອົງຊາຍ ຊື່ *ບັນຕິລານ* (Bantilan) ເຊິ່ງໃນເວລານັ້ນ ເປັນຜູ່ສຳເລັດຣາຊະການ ບັງຄັບໃຫ້ອອກຈາກອຳນາດ ແລະ ຕໍ່ມາບໍ່ດົນ ເພິ່ນຜູ່ນີ້ ກໍປະກາດຕົນຂຶ້ນເປັນ *ສຸລະຕານ ມູຮຳມັດ ມູ ອິສຊຸດິນ* (Sultan Muhammad Mu'izzudin). ສ່ວນ *ອາລີມຸດດິນ* ເຊິ່ງບັດນີ້ ຕົກຈາກຕຳແໜ່ງແລ້ວ ໄດ້ໜີໄປຢູ່ *ມະນິລາ* ຂໍຮ້ອງໃຫ້ *ສະເປນ* ແຕ່ງຕັ້ງຕົນກັບຄືນສູ່ຕຳແໜ່ງໃຫມ່ອີກ. ໃນປີ 1749, ຈະເປັນຍ້ອນ ຄວາມສັດທາ ຫລື ເພື່ອຜົນປະໂຫຍດແນວໃດແນວໜຶ່ງກໍ່ບໍ່ແຈ້ງ *ອາລີມຸດດິນ* ໄດ້ເຂົ້າສາສະໜາ*ຄຣິຕ* ຮັບນາມມະຍົດເປັນ *ດອນ ເຟີນັນໂດ ທີ 1* ຊຶ່ວ່າ *ເຣ ຄຣິຕຕຍໂນ ດິ ໂຈໂລ* (Don Fernando I, Rey Christiano de Jolo) ທ້າມກາງ ການຂັດຄ້ານຂອງ ປະທານຝ່າຍສົງ ຄື *ພຣະສົງຄະຣາ*ດ, ໃນຂະນະທີ່ຊາວ*ສະເປນ* ໃນ *ກຸງມະນິລາ* ສະເຫລີມສະຫລອງກັບຣອດສີ່ມື້ນັ້ນ ທາງດອນ *ຊູລູ* ຊ້ຳຕອບໂຕ້ຄືນ ດ້ວຍການກະກຽມສົງຄາມຂຶ້ນທົ່ວທຸກແຫ່ງ. ໃນປີ 1970 ຊາວ *ສະເປນ* ພາ*ອາລີມຸດດິນ* ໄປຍັງ *ຊຳບວງກາ* ອັນເປັນບ່ອນທີ່ພວກ*ສະເປນ* ກະກຽມ ໄວ້ເພື່ອບັງຄັບ *ບັນຕິລານ* (Bantilan) ໃຫ້ຍອມຮັບເອົາ ຜູ່ເປັນອ້າຍກັບຄືນ. ແຕ່ໃນທີ່ສຸດ ພວກ*ສະເປນ* ກໍພົບວ່າ *ອາລີມຸດດິນ* ໄດ້ຕິດຕໍ່ກັບພວກຫົວໜ້າ*ໂມໂຣ* ຕ່າງໆ ດັ່ງນັ້ນ ຈຶ່ງປະກາດວ່າ ເຂົາທໍລະຍົດ ແລ້ວນຳເອົາໂຕ *ອາລີມຸດດິນ* ໄປ *ມະນິລາ* ໃນຖານະນັກໂທດ ແລ້ວປະກາດສົງຄາມອັນຍືດເຍື້ອ ໃນລະຍະຕໍ່ມາ.

ເມື່ອ *ອາຣັບເດຍ* ມາຮອດ ເຂົາໄດ້ພະຍາຍາມເຈລະຈາ ຫາທາງຍຸຕິການນອງເລືອດ. ກອງທັບ *ສະເປນ* ຂາດກຳລັງ ເພື່ອຜາບແພ້ *ບັນຕິລານ*, ດັ່ງນັ້ນ *ອາຣັບເດຍ* ຈຶ່ງຕົກລົງເຈລະຈາສະຫງົບເສິກໃນກອງປະຊຸມທີ່ *ໂຈໂລ*. ການເຈລະຈາກ່ຽວກັບບັນຫາການປ່ອຍຊາວ*ຄຣິຕ* ທີ່ຖືກຈັບໃນເວລາກວາດລ້າງ ຢູ່ *ໂມໂຣ* (Moro) ລົ້ມແຫລວ, ຍ້ອນ *ບັນຕິລານ* ປະກາດວ່າ ເຂົາບໍ່ມີນັກໂທດແລ້ວ, ເຂົາຂາຍນັກໂທດໄປເປັນຂ້ອຍທາດ ຢູ່ທົ່ວໂລກ*ມາເລ*. *ອາຣັບເດຍ* ຍັງໄດ້ພະຍາຍາມ ດຳເນີນການອີກຕໍ່ໄປ ໂດຍຜ່ານ *ອາລີມຸດດິນ* ຜູ່ເຂົາຈ່າຍເງິນເດືອນໃຫ້ກິນປະຈຳຢູ່ ແລະ ປະຕິບັດນຳຄືກັບເຊື້ອສາຍເຈົ້າຜູ່ນຶ່ງ. ໃນປີ 1755 ເມື່ອ *ອາລີມຸດດິນ* ຂໍແຕ່ງດອງກັບນາງສະໜົມເກົ່າຄົນນຶ່ງ ເຊິ່ງເຂົ້າເປັນຊາວ*ຄຣິຕ* ແລ້ວມາເປັນມະເຫສີທີສອງ, *ອາຣັບເດຍ* ກໍໃຊ້ອຳນາດແບບພະລະການ

ລົ້ມເລີກການຍັດຄ້ານ ຂອງ *ພຣະສົງຄະຣາດ* ແລະຈັດພິທີແຕ່ງດອງໃຫ້ *ອາລີມຸດກິນ* ຢູ່ໂຮງເຈົ້າແຂວງ. ຄວາມພະຍາຍາມ ຂອງ *ອາຣັນເດຍ* ສ້ຽງສຸດລົງຢ່າງໄວວາ ດ້ວຍການເສຍຊີວິດຢ່າງກະທັນຫັນຂອງເຂົາເອງ ແລະດ້ວຍຄວາມຫຍຸ້ງຍາກ ເຊິ່ງເກີດຂຶ້ນ ເພາະພວກ*ອັງກິດ* ແລະ *ດັດຊ* ຫັນມາສົນໃຈໃນ *ຊູລູ ບໍນຽວເໜືອ*. ສິ່ງສຳຄັນໃນນີ້ ບໍ່ແມ່ນການເສຍໄຊຂອງ *ອາຣັນເດຍ* ແຕ່ຍ້ອນວ່າ ປະເທດ*ສະເປນ*ເອງ ບໍ່ເຄີຍປະສົບຄວາມສຳເລັດຢ່າງເຕັມປ່ຽມຈັກເທື່ອ ໃນການເຮັດໃຫ້ຊາວ*ໂມໂຣ* ສະຫງົບລົງໄດ້ ຫລື ດ້ວຍການສະຖາປະນາຄວາມເປັນໃຫຍ່ ເໜືອພາກພື້ນໄດ້ ແຕ່ມັນແມ່ນຍ້ອນ ຄວາມພະຍາຍາມ ຕໍ່ສູ້ກັບສະຖານະການທັງປວງ ທີ່ພວມປ່ຽນແປງຢ່າງໄວ ແລະພວມຜ່ລາມອອກໄປກະທົບໃສ່ ແບບແຜນການດຳລົງຊີວິດ ຂອງ *ຊາວຟີລິບປິນ* ໃນທຸກດ້ານພຸ້ນ ຕ່າງຫາກ.

ຄວາມພະຍາຍາມຂອງ *ອາຣັນເດຍ* ໃນການແກ້ບັນຫາ*ໂມໂຣ* ເຮັດໃຫ້ເຂົາຂັດແຍ່ງກັບທາງສາສະນະຈັກ. ການຫວັງຜົນທາງການເມືອງ ຂອງການດຳເນີນການທາງການທູດ ເຮັດໃຫ້ເຂົາຕ້ອງຮີບຮ້ອນຕັດສິນໃຈ ເຊິ່ງເບິ່ງຄືວ່າ ເປັນການລະເມີດຄວາມຫ່ວງໃຍຂອງທາງສາສະນະຈັກ. ການສ້ຽງຊີວິດຂອງເຂົາ ບາງທີ ອາດແມ່ນຍ້ອນ ກຶກຢາເບື່ອ, ເຂົາກັບຝ່າຍພຣະ ເປັນປໍລະປັກກັນ, ຈາກນັ້ນ ມັນກໍບໍ່ມີຜົນປະໂຫຍດໃດໆຮ່ວມກັນອີກ ດັ່ງຄຳເວົ້າທີ່ແຕ່ງຂຶ້ນໄວ້ວ່າ : *"ເພື່ອຮັບໃຊ້ ພຣະຜູ້ເປັນໃຫຍ່ທັງສອງ"* ຄື *ສາສະໜາ* ແລະ *ກະສັດ*. ການແຊກແຊງໜ້າທີ່ວຽກງານ ເພື່ອຜູກມັດໂລກຜົນລະເຮືອນ ກັບໂລກແຫ່ງສາສະໜາ ໃຫ້ເຂົ້າເປັນພັນທະມິດນຶ່ງ ມີແຕ່ເຮັດໃຫ້ແຕ່ລະຝ່າຍຕ່າງກໍບໍ່ພໍໃຈ. ຕົວຢ່າງ ຄວາມບໍ່ເອົາຫົວຊາ ຕໍ່ຄວາມຮູ້ສຶກລະອຽດອ່ອນ ຂອງຊາວ*ອິນດົໂອ* ຢູ່ດອນ *ໂບໂຮນ* (Bohol) ໃນ *ບິສາຢາສ* (Bisayas) ຂອງຜູ່ມາເປັນທ່ານເຈົ້າແຂວງ ລະຫວ່າງປີ 1744 ເຖິງ 1829 ພາໃຫ້ຕ້ອງສົນລະວົນວຸ່ນວາຍ ຢູ່ນຳການປາບປາມຂະບົດ *ດາໂກຮອຍ* (Dagohoy) ຕະຫອດເວລາ ສົງຄາມທີ່ເກີດຂຶ້ນບໍ່ຂາດລະຍະແບບນີ້ ເປັນເຫດໃຫ້ທ່ານເຈົ້າແຂວງຊາວຄົນ ຕ້ອງສົນແບ່ງຊັບພະຍາກອນອັນຂາດໆເຂີນໆຢູ່ແລ້ວນີ້ ໄປສະໜັບສະໜູນຝ່າຍສາສະໜາ ເພື່ອນຳໄປປະຕິສັງຂອນ ສິ່ງເສຍຫາຍຢູ່ເທິງເກາະດອນເຫລົ່ານັ້ນ. ການທີ່ *ອາຣັນເດຍ* ມົວແຕ່ຫຍຸ້ງຢູ່ກັບບັນຫາ ເຊິ່ງນັບມື້ ນັບກົດດັນແຮງຂຶ້ນນັ້ນ ມັນບັງຄັບໃຫ້ເພີ່ນໃຫ້ບຸລິມະສິດ ຝ່າຍຂະບົດ *ດາໂກຮອຍ* ຕ່ຳເກີນໄປ, ເຖິງປານນັ້ນ ພວກນັກບວດປະຈຳທ້ອງຖິ່ນ ທີ່ *ອາຣັນເດຍ* ເພິ່ງພາຢູ່ ຍັງເບິ່ງ

ເພິ່ນຜິດພ້ຽນໄປ. ທັ້ງທ່ານເຈົ້າແຂວງ ແລະພຣະສົງປະຈຳທ້ອງຖິ່ນ ຕ່າງກໍຕ້ອງການ ເຊິ່ງກັນແລະກັນ ແຕ່ຜົນປະໂຫຍດ ທີ່ແຕກຕ່າງກັນຄົນລະທິດທາງ ໄດ້ເຮັດໃຫ້ໂຄງຮ່າງ ການຈັດຕັ້ງ ແຂງກະດ້າງຂຶ້ນ.

ໃນຂະນະທີ່ ຄວາມອ່ອນແອຂອງເຈົ້າແຂວງ ສ່ວນນຶ່ງເກີດຂຶ້ນຍ້ອນ ການເສື່ອມ ຖອຍອຳນາດ ຂອງ *ສະເປນ* ໃນທົ່ວໂລກ, ແຕ່ສ່ວນໃຫຍ່ມັນເປັນຍ້ອນ ຄວາມຈຳກັດຮັດ ແຄບໃນພື້ນທີ່ ທີ່ເຂົາດຳເນີນການຢູ່ເທິງເກາະດອນ, ດ້ວຍເຫດວ່າ ອຳນາດຕາມທິດ ສະດີຂອງເຈົ້າແຂວງນັ້ນ ມັນມີຫລາຍເກີນຄວາມສາມາດຕົວຈິງທີ່ເຂົາມີ. ການຢູ່ຢ່າງ ໂດດດ່ຽວຫ່າງໄກ ຍ້ອນພື້ນທີ່ທາງພູມສາດ ທາງພາສາ ແລະ ເຊື້ອຊາດ ໄດ້ຈຳກັດຂອບ ເຂດອຳນາດຂອງເຂົາ ໃຫ້ຕິດຢູ່ກັບຊຸມຊົນ ແລະ ພື້ນທີ່ອັນຈຳກັດ. ຄວາມບໍ່ສອດຄ່ອງ ເໝາະສົມ ຂອງລະບົບຣາຊະການຂອງເຂົາ ກັບຄວາມເຂັ້ມແຂງ ຂອງກຳລັງແຮງ ອື່ນໆ ຢູ່ໃນສັງຄົມ ໄດ້ບວກເຂົ້າກັນ ເພື່ອປ່ຽນແປງການຕັດສິນໃຈຂອງເຂົາ.

ທ່ານເຈົ້າແຂວງໃຫຍ່ ຂອງ *ສະເປນ ໃນຟີລິບປິນ* ແມ່ນຜູ້ດຽວ ທີ່ພົບວ່າ ການ ໃຊ້ອຳນາດຢ່າງເຕັມຂີດຂອງເຂົາ ຖືກກວດກາຄວບຄຸມ ດ້ວຍກຳລັງແຮງອື່ນ ໃນສັງຄົມ. ເຊັ່ນດຽວກັນ, ເຈົ້າປົກຄອງປະເທດ *ສະຫຍາມ* ແລະ *ກຳພູຊາ* ກໍພົບວ່າອຳນາດຂັ້ນ ແຂວງ ມີຄວາມເຂັ້ມແຂງພຽງພໍ ເພື່ອຕໍ່ຕ້ານກັບການບັນຊາກວດກາ ແບບເຕັມຂີດ ຂອງສູນກາງ, ຜູ່ກຳອຳນາດທາງສາສະໜາ ໃນທົ່ວພາກພື້ນ ຊົມໃຊ້ກຳລັງທາງສິນທຳ ເຊິ່ງຜູ່ນຳຫນ້ອຍຄົນ ບໍ່ສາມາດເບິ່ງຂ້າມໄດ້ ແລະ ບໍ່ມີໃຜສາມາດເຮັດຫຍັງໄດ້ ໂດຍບໍ່ອາ ໄສພວກພໍ່ຄ້າຊາວຂາຍ ຜູ່ເຮັດໃຫ້ລະບົບການເກັບພາສີດຳເນີນໄປໄດ້ ເຊິ່ງໃນນັ້ນ ເຄື່ອງ ໃຊ້ ເຄື່ອງກິນ ມັກມີຄວາມສຳຄັນເທົ່າໆກັບເງິນຕາ. ການປົກຄອງຕົນເອງ ຕາມປະເພນີ ຂອງຊຸມຊົນບ້ານທຸກແຫ່ງ ມັກເປັນໂຕກ່ອງດຶງຊັ່ງຊາກັບ ແບບຢ່າງຈາກເມືອງຫລວງ ເຊິ່ງບາງຄັ້ງ ກໍມີລັກສະນະສູງສົ່ງໂພດໄປ. ຕາບໃດທີ່ການປ່ຽນແປງທາງສັງຄົມ ແລະ ເສດຖະກິດຍັງຄົງດຳເນີນໄປ ດ້ວຍຈັງຫວະຊ້າໆແນວນີ້ ຕາບນັ້ນ ລະບົບການເມືອງ ທີ່ ອ່າວຜ່ອຍບາງ ອັນເປັນລັກສະນະນຶ່ງ ຂອງລະຍະເຄິ່ງຕົ້ນສະຕະວັດທີ 18 ນີ້, ກໍສາມາດ ຄົງຕົວຢູ່ໄດ້ຢ່າງປອດໄພ ຈາກໄພພິບັດທັ້ງປວງ.



ຈາກຊ້າຍ : ຣັອຟ, ເທເລີ, ໄວແອັຕ, ແຊນດະເລີ, ວູດໄຊດ໌, ສເມລ, ສະເຕນເບີກ
(ພາບຖ່າຍໂດຍ ດີເວ ເນລ, .5. , ອິຫາກາ, ນິວຢ໊ອກ)

ໂດຍເຫັນວ່າ ມີຄວາມຈຳເປັນຕ້ອງນຳໃຊ້ປຶ້ມຫົວນີ້ ໃນການສອນປະຫວັດສາດ ອາຊີຕາເວັນ ອອກສຽງໃຕ້ ດ້ວຍວ່າ ເນື້ອໃນປຶ້ມນີ້ ຈະພາທ່ານຜູ່ອ່ານໄປພົບເຫັນ ຂະບວນການ ປ່ຽນແປງທີ່ສ້າງສັນ ເຊິ່ງອາຊີຕາເວັນອອກສຽງໃຕ້ ໄດ້ປັບວັດທະນາທຳຂອງຕົນເອງ ເຂົ້າກັບໂລກ ແຫ່ງຄວາມປ່ຽນແປງ. ໄປຄຽງຄູ່ກັບການປ່ຽນແປງທາງເສດຖະກິດສັງຄົມ ແລະວັດທະນາທຳ ໄປສູ່ ຍຸກສະໄໝໃຫມ່ ກໍຍັງມີບັນຍາກາດ ຈາກອິດທິພົນຂອງດິນຟ້າອາກາດ ແລະສິ່ງແວດລ້ອມ, ວິທະ ຍາສາດ ແລະເທັກໂນໂລຢີ. ເນື້ອໃນຂອງປຶ້ມທີ່ດຳເນີນເລື່ອງ ໄປຕາມໂຄງຮ່າງທີ່ກ່າວມານີ້ ຊ່ອຍໃຫ້ ຜູ່ຂຽນ ໄດ້ໃຫ້ຂໍ້ສັງເກດ ກ່ຽວກັບວິວັດທະນາການຂອງລະບົບ ແລະວິເຄາະຄວາມປ່ຽນແປງ ທັງຫມົດໂດຍລວມ ຂອງຂົງເຂດນີ້.

ນັບແຕ່ປຶ້ມ ຊອກຮູ້ກ່ຽວກັບ ອາຊີຕາເວັນອອກສຽງໃຕ້ ໄດ້ຮັບການຈັດພິມຂຶ້ນຄັ້ງທຳອິດ ເປັນເວລາຫລາຍປີມາແລ້ວ ເຫດການຕ່າງໆກໍໄດ້ຜັນແປໄປ. ສົງຄາມຢູ່ຫວຽດນາມ ໄດ້ສ້ຽງສຸດລົງ, ຄວາມປ່ຽນແປງອັນສຳຄັນ ດ້ານການເມືອງ ໄດ້ເຮັດໃຫ້ບັນດາປະເທດໃນອິນໂດຈີນ ກ້າວເຂົ້າສູ່ ຊີວິດໃຫມ່. ຜ່ານມາ ຫລາຍໆປະເທດໃນຂົງເຂດນີ້ ໄດ້ພົບພໍ້ຄວາມທຸກຍາກ ຄວາມຜັນແປ ທາງ ການເມືອງ; ໄດ້ຕໍ່ສູ້ກັບຜົນສະທ້ອນ ດ້ານເສດຖະກິດ ຈາກວິກິດການພະລັງງານ ໃນຊຸມປີ 1970. ປຶ້ມເຫລັ້ມນີ້ ກໍໄດ້ຮັບການກວດແກ້ຄືນ ທຸກຂໍ້ມູນກ່ຽວກັບເຫດການສຳຄັນ.

ປຶ້ມຫົວນີ້ ຂຽນຂຶ້ນໂດຍຫລາຍຜູ່ຂຽນ ອັນເປັນເອກະລັກສະເພາະຂອງປຶ້ມລັກສະນະນີ້ ກໍຍັງຄົງຢູ່ໃນສະບັບນີ້. ຜູ່ຊ່ຽວຊານປະຫວັດສາດພະມ້າ ທ່ານ ໂຣເບີດ ເທເລີ ໄດ້ເຂົ້າມາຮ່ວມນຳ ຄະນະນັກຂຽນ ຮວມເປັນທີມຄົນ. ທ່ານ ເທເລີ ໄດ້ເປັນຜູ່ສຸມໃສ່ວຽກປັບປຸງເນື້ອໃນ ສ່ວນທີ່ ກ່າວເຖິງ ພະມ້າ ໂດຍສະເພາະ. ມີການຂຽນບົດໃຫມ່ໆຕື່ມໃສ່ ເນັ້ນເຫດການທີ່ສົດໆຮ້ອນໆ ຢູ່ໃນຂົງເຂດນີ້. ບົດອ້າງອີງ ອັນເປັນແຫລ່ງຂໍ້ມູນປະຫວັດສາດ ກໍໄດ້ຮັບການປັບປຸງ6 ເພື່ອໃຫ້ສອດຄ່ອງ ກັບການ ສຶດສອນ ແລະໃຫ້ທຶນການສຶກສາ ກ່ຽວກັບອາຊີຕາເວັນອອກສຽງໃຕ້ ຫລັງສົງຄາມໂລກຄັ້ງທີ II ທີ່ຈັດພິມ ໄດ້ກວ່າສິບປີມາແລ້ວ.

TOYOTA FOUNDATION